ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ

# ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025)

ຕຸລາ 2020

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

# ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ
# ຄັ້ງທີ IX (2021-2025)

ຕຸລາ 2020

## ສາລະບານ


ຄຳນຳ ........ IV

ຄຳຂອບໃຈ ........ V

ພາກທີ I: ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຄັ້ງທີ IX (2021-2025) ........ 1

1. ພາກສະເໜີ ........ 1

1.1 ບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020 ........ 1

1.2 ວິທີການພັດທະນາແຜນພັດທະນາການສຶກສາ ແລະ ກິລາ 2021-2025 ........ 4

2. ຜົນສຳເລັດຕົ້ນຕໍ ສຳລັບ 2016-2020 ........ 5

3. ສະພາບເງື່ອນໄຂສຳລັບການສ້າງແຜນ 2021-2025 ........ 11

3.1 ຄວາມເປັນມາ ........ 11

3.2 ຜົນກະທົບຈາກ COVID-19 ........ 15

3.3 ຈຸດປະສົງດ້ານນະໂຍບາຍທີ່ເປັນບູລິມະສິດ ສຳລັບ ແຜນ 2021-2025 ........ 17

3.4 ຄວາມສ່ຽງຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ........ 18

4. ເປົ້າໝາຍລວມສຳລັບ 2021-2025 ........ 19

5. ຜົນໄດ້ຮັບລວມຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ........ 20

6. ຄາດຄະເນຜົນໄດ້ຮັບລະດັບສູງ ........ 20

ເງື່ອນໄຂສຳຄັນເພື່ອໃຫ້ບັນລຸໄດ້ 8 ຜົນໄດ້ຮັບລະດັບສູງ ........ 21

6.1 ຜົນໄດ້ຮັບລະດັບສູງທີ 1: ........ 21

6.2 ຜົນໄດ້ຮັບລະດັບສູງທີ 2: ........ 27

6.3 ຜົນໄດ້ຮັບລະດັບສູງທີ 3: ........ 31

6.4 ຜົນໄດ້ຮັບລະດັບສູງທີ 4: ........ 37

6.5 ຜົນໄດ້ຮັບລະດັບສູງທີ 5: ........ 38

6.6 ຜົນໄດ້ຮັບລະດັບສູງທີ 6: ........ 45

6.7 ຜົນໄດ້ຮັບລະດັບສູງທີ 7: ........ 50

6.8 ຜົນໄດ້ຮັບລະດັບສູງທີ 8: ........ 53

7. ຄວາມຕ້ອງການດ້ານຊັບພະຍາກອນ ແລະ ການເງິນ ສຳລັບແຜນ 2021-2025 ........ 55

7.1. ງົບປະມານຂອງຂະແໜງການສຶກສາ ແລະ ກິລາ 2016-2020 ........ 55

7.2. ຈຸດປະສົງ ແລະ ຫຼັກການຂອງນະໂຍບາຍການໃຊ້ຈ່າຍງົບປະມານ ສຳລັບ 2021-2025 ........ 58

7.3. ແຜນຄວາມຕ້ອງການດ້ານການເງິນສຳລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ........ 64

7.4. ການວິເຄາະເຖິງແຫຼ່ງການເງິນ ແລະ ຊ່ອງຫວ່າງດ້ານການເງິນພາຍໃຕ້ສອງສົມມຸດຖານ ........ 68

7.5. ສະຫຼຸບ ........ 70

8. ການຈັດຕັ້ງປະຕິບັດ, ຂອບການຕິດຕາມກວດກາ ແລະ ປະເມີນຜົນ ........ 70

8.1. ການແບ່ງຂັ້ນໃນການບໍລິຫານ, ຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດແຜນ ........ 70

8.2. ການສ້າງແຜນການ ແລະ ແຜນງົບປະມານ ເພື່ອຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ........ 71

8.3. ຂອບການຕິດຕາມ ແລະ ປະເມີນຜົນ ສຳລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ........ 73

8.4. ການຕິດຕາມ ແລະ ປະເມີນຜົນ: ໂຄງສ້າງຂອງການສະໜັບສະໜູນ ........ 76

8.5. ການຕິດຕາມ ແລະ ປະເມີນຜົນ: ໂຄງສ້າງຂອງຜົນໄດ້ຮັບ ........ 77

ພາກທີ II: ແຜນພັດທະນາຂອງຂະແໜງການຍ່ອຍ 2021-2025 ........ 92

I. ຂະແໜງການຍ່ອຍ ການສຶກສາກ່ອນໄວຮຽນ ........ 93

II. ຂະແໜງການຍ່ອຍການປະຖົມສຶກສາ.......... 103
III. ຂະແໜງການຍ່ອຍ ມັດທະຍົມສຶກສາຕອນຕົ້ນ.......... 116
IV. ຂະແໜງການຍ່ອຍມັດທະຍົມສຶກສາຕອນປາຍ.......... 128
V. ຂະແໜງການຍ່ອຍການສຶກສານອກໂຮງຮຽນ.......... 137
VI. ຂະແໜງການຍ່ອຍການສຶກສາຄູ.......... 147
VII. ຂະແໜງການຍ່ອຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ.......... 158
VIII. ຂະແໜງການຍ່ອຍການສຶກສາຊັ້ນສູງ.......... 164
IX. ຂະແໜງການຍ່ອຍກິລາ-ກາຍຍະກຳ.......... 175
X. ຂະແໜງການຍ່ອຍ ການບໍລິຫານ ແລະ ຄຸ້ມຄອງການສຶກສາ.......... 187

## ສາລະບານຕາຕະລາງ, ຮູບພາບ ແລະ ເອກະສານຊ້ອນທ້າຍ

ຕາຕະລາງ 1: ສ່ວນແບ່ງງົບປະມານຂອງ ຂະແໜງການສຶກສາ ແລະ ກິລາ ແຕ່ປີ 2016-2020.......... 56
ຕາຕະລາງ 2: ງົບປະມານຂອງ ຂະແໜງການສຶກສາ ແລະ ກິລາ ທຽບໃສ່ ຄວາມຕ້ອງການທີ່ກຳນົດໃນແຜນພັດທະນາ ຂະແໜງການສຶກສາ ແລະ ກິລາ 2016-2020.......... 56
ຕາຕະລາງ 3: ສ່ວນແບ່ງງົບປະມານຂອງຂະແໜງການສຶກສາ ແລະ ກິລາ ຂອງແຕ່ລະພາກງົບປະມານ.......... 59
ຕາຕະລາງ 4: ບັນດາແຜນງານບູລິມະສິດ.......... 61
ຕາຕະລາງ 5: ຕົວກຳນົດທີ່ສຳຄັນໃນການຄາດຄະເນງົບປະມານ.......... 65
ຕາຕະລາງ 6: ຄາດຄະເນງົບປະມານ ພາຍໃຕ້ສົມມຸດຖານ "ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ".......... 66
ຕາຕະລາງ 7: ຄາດຄະເນງົບປະມານ ພາຍໃຕ້ສົມມຸດຖານ "ຍົກສູງຄຸນນະພາບການສຶກສາ".......... 67
ຕາຕະລາງ 8: ແຜນການເງິນພາຍໃຕ້ສົມມຸດຖານ "ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ".......... 69
ຕາຕະລາງ 9: ແຜນການເງິນພາຍໃຕ້ສົມມຸດຖານ "ຍົກສູງຄຸນນະພາບການສຶກສາ".......... 69
ຮູບທີ 1: ຮອບວຽນການວາງແຜນ ແລະ ການປະຕິບັດການປະເມີນຜົນປະຈຳປີຂອງ ESSDP 2021-2025.......... 74
ຕາຕະລາງ 10: ຕົວຊີ້ບອກຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ.......... 78
ຕາຕະລາງ 11 : ສົມທຽບຕົວຊີ້ບອກຕ່າງໆ ໃນຊັ້ນການສຶກສາກ່ອນໄວຮຽນ ແຕ່ປີ 2016 ຫາ 2020.......... 93
ຕາຕະລາງ 12: ສົມທຽບຕົວຊີ້ບອກຊັ້ນປະຖົມສຶກສາແຕ່ປີ 2016-2020.......... 103
ຕາຕະລາງ 13: ສົມທຽບປະສິດທິພາບພາຍໃນສຳລັບການສຶກສາຊັ້ນປະຖົມ.......... 104
ຕາຕະລາງ 14: ສົມທຽບຕົວຊີ້ບອກຕ່າງໆ ໃນຊັ້ນມັດທະຍົມສຶກສາຕອນຕົ້ນ ແຕ່ປີ 2016 ຫາ 2020.......... 116
ຕາຕະລາງ 15: ຄວາມຄືບໜ້າຂອງຕົວຊີ້ບອກ ທາງດ້ານປະສິດທິພາບພາຍໃນ ໃນຊັ້ນມັດທະຍົມສຶກສາຕອນຕົ້ນ.......... 117
ຕາຕະລາງ 16: ຄວາມຄືບໜ້າຂອງຕົວຊີ້ບອກຕ່າງໆໃນຊັ້ນມັດທະຍົມສຶກສາຕອນປາຍແຕ່ປີ 2016 ຫາ 2020.......... 128
ຕາຕະລາງ 17: ຄວາມຄືບໜ້າຂອງຕົວຊີ້ບອກ ທາງດ້ານປະສິດທິພາບພາຍໃນ ໃນຊັ້ນມັດທະຍົມສຶກສາຕອນປາຍ.......... 128
ຕາຕະລາງ 18: ຄວາມຄືບໜ້າຂອງຕົວຊີ້ບອກຕ່າງໆໃນການສຶກສານອກໂຮງຮຽນແຕ່ປີ 2016 ຫາ 2020.......... 137
ຕາຕະລາງ 19: ການປຽບທຽບຕົວຊີ້ວັດຂອງການສ້າງຄູ ແຕ່ປີ 2016-2020.......... 147
ຕາຕະລາງ 20: ນັກສຶກສາທີ່ຈົບຈາກສະຖາບັນສ້າງຄູ ແຕ່ປີ 2016-2020.......... 147
ຕາຕະລາງ 21: ສະພາບການເຂົ້າຮຽນ ໃນສາຍອາຊີວະສຶກສາ 2016-2020.......... 159
ຕາຕະລາງ 22: ຜູ້ທີ່ຮຽນຈົບຈາກສະຖານອາຊີວະສຶກສາ ແຕ່ປີ 2016-2019.......... 159
ຕາຕະລາງ 23: ສົມທຽບຕົວຊີ້ບອກຕ່າງໆ ໃນຂະແໜງການສຶກສາຊັ້ນສູງ ແຕ່ປີ 2016 ຫາ 2020.......... 164
ຕາຕະລາງ 24: ສົມທຽບຈຳນວນນັກສຶກສາທີ່ຮຽນຈົບໃນແຕ່ລະປີ ແຕ່ປີ 2016-2020.......... 165
ເອກະສານຊ້ອນທ້າຍທີ 1: ຕ້ອງໂສ້ຂອງຜົນໄດ້ຮັບ.......... 207
ເອກະສານຊ້ອນທ້າຍທີ 2: ຂະບວນການປຶກສາຫາລືໃນການສ້າງແຜນ. .......... 216
ເອກະສານຊ້ອນທ້າຍທີ 3: ລາຍຊື່ 40 ເມືອງບູລິມະສິດ.......... 218

ເອກະສານຊ້ອນທ້າຍທີ 4: ຮູບສະແດງການສົມທຽບບາງຕົວຊີ້ບອກຂອງ 40 ເມືອງ ........................................ 220
ເອກະສານຊ້ອນທ້າຍທີ 5: ການບໍລິຫານຄວາມສ່ຽງ ........................................................................ 222
ເອກະສານຊ້ອນທ້າຍທີ 6: ການຄາດຄະເນຈໍານວນນັກຮຽນ ແລະ ງົບປະມານທີ່ຕ້ອງການ.................................. 232
ເອກະສານຊ້ອນທ້າຍທີ 7: ສະຖິຕິນັກສຶກສາ ໄປຮຽນຕໍ່ຕ່າງປະເທດ ໃນໄລຍະ 05 ປີ (2016-2020). .................. 243

# ຄຳນຳ

ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ໄດ້ຖືກພັດທະນາຂຶ້ນໃນຊ່ວງເວລາທີ່ມີຄວາມຫຍຸ້ງຍາກ ເນື່ອງຈາກການແຜ່ລະບາດຂອງພະຍາດ COVID-19. ໂລກລະບາດດັ່ງກ່າວ ໄດ້ສ້າງຄວາມຫຍຸ້ງຍາກໃຫ້ແກ່ຂະບວນການໃນການສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຄັ້ງນີ້ ເປັນຕົ້ນແມ່ນຂະບວນການໃນການປຶກສາຫາລືກັນ ແລະ ຂອບເຂດການປຶກສາຫາລື ແລະ ສະພາບການທົດຖອຍທາງດ້ານເສດຖະກິດ ກໍ່ໄດ້ສ້າງຄວາມບໍ່ແນ່ນອນກ່ຽວກັບລະດັບການສະໜັບສະໜູນທາງດ້ານການເງິນໃຫ້ແກ່ຂະແໜງການສຶກສາ ແລະ ກິລາ ທັງຈາກລັດຖະບານ ແລະ ຄູ່ຮ່ວມພັດທະນາ. ມັນຍັງໄດ້ສ້າງຄວາມຊັກຊ້າໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ IX ແລະ ການສ້າງຂອບງົບປະມານໄລຍະກາງ. ຍ້ອນມີສິ່ງທ້າທາຍດ້ານການເງິນດັ່ງກ່າວ, ແຜນການເງິນສຳລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຈຶ່ງໄດ້ກຳນົດຢູ່ພາຍໃຕ້ສອງສົມມຸດຖານ ຄື: ສົມມຸດຖານການເງິນຂອງສຶກສາຢູ່ໃນລະດັບເທົ່າເດີມ ແລະ ສົມມຸດຖານການຍົກສູງຄຸນນະພາບການສຶກສາ ເຊິ່ງມີຄວາມຕ້ອງການດ້ານງົບປະມານໃນລະດັບສູງ. ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໄດ້ລະບຸວ່າ ຜົນໄດ້ຮັບໃດທີ່ຈະສາມາດບັນລຸໄດ້ຢ່າງເຕັມສ່ວນ ແມ່ນຕ້ອງໄດ້ຮັບງົບປະມານ ຕາມສົມມຸດຖານຍົກສູງຄຸນນະພາບການສຶກສາ.

ໃນເດືອນພະຈິກ 2019, ກອງປະຊຸມລະດັບບໍລິຫານຂອງຄະນະວິຊາການຂະແໜງການສຶກສາ ແລະ ກິລາ ໄດ້ກຳນົດບູລິມະສິດຈຳນວນໜຶ່ງ ສຳລັບໄລຍະ 2021-2025 ຊຶ່ງລວມມີ ການສຸມໃສ່ການສຶກສາຊັ້ນປະຖົມເພື່ອປັບປຸງການຮຽນ-ການສອນ; ການຂະຫຍາຍການສະໜອງການສຶກສາຊັ້ນມັດທະຍົມຕອນຕົ້ນຢ່າງມີປະສິດທິພາບ ແລະ ສອດຄ່ອງກັບຄວາມເປັນຈິງ; ກຳນົດທັກສະ ແລະ ຄວາມສາມາດຂອງພະນັກງານພາຍໃນຂະແໜງການສຶກສາ ແລະ ກິລາ; ສ້າງຄວາມເຂັ້ມແຂງໃຫ້ສຶກສາແຂວງ, ສຶກສາເມືອງ, ກຸ່ມໂຮງຮຽນ ແລະ ໂຮງຮຽນ; ແລະ ເພື່ອປັບປຸງຜົນການຮຽນຂອງນັກຮຽນໃຫ້ດີຂຶ້ນ ແລະ ຫຼຸດຜ່ອນຄວາມແຕກໂຕນກັນ, ໂດຍສະເພາະໃນ 40 ເມືອງທີ່ດ້ອຍໂອກາດທາງດານສຶກສາ, ຕາມທີ່ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດ.

ກະຊວງສຶກສາທິການ ແລະ ກິລາ ຈະປະສານສົມທົບກັນກັບຄູ່ຮ່ວມພັດທະນາ ໂດຍຜ່ານກົນໄກການຕິດຕາມຮ່ວມກັບຄະນະວິຊາການຂະແໜງການສຶກສາ ແລະ ກິລາ ແລະ ບົດລາຍງານວຽກງານຂະແໜງການປະຈຳປີຂອງກະຊວງສຶກສາທິການ ແລະ ກິລາ ໃນການຕິດຕາມ ແລະ ປະເມີນຜົນຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ. ນອກຈາກນີ້, ການປະເມີນໄລຍະກາງ ແລະ ການປະເມີນຜົນສຸດທ້າຍຂອງແຜນການຍັງຈະໄດ້ຮັບການປະຕິບັດຮ່ວມກັນກັບຄູ່ຮ່ວມພັດທະນາ.

ຂ້າພະເຈົ້າມີຄວາມເຊື່ອໝັ້ນວ່າ ເອກະສານສະບັບນີ້ຈະເປັນທິດທາງໃຫ້ແກ່ພາກສ່ວນຕ່າງໆ ແຕ່ສູນກາງຮອດທ້ອງຖິ່ນ ລວມທັງຄູ່ຮ່ວມພັດທະນາ ໃນຄວາມພະຍາຍາມ ແລະ ຮ່ວມມືກັນ ເພື່ອໃຫ້ບັນລຸໄດ້ເປົ້າໝາຍໃນການພັດທະນາຂອງລັດຖະບານ ກໍຄືໃຫ້ບັນລຸໄດ້ບັນດາຄາດໝາຍຂອງບັນດາແຜນງານ ແລະ ກິດຈະກຳທີ່ກ່ຽວຂ້ອງກັບການພັດທະນາຂະແໜງການສຶກສາ ແລະ ກິລາ ເພື່ອຮັບປະກັນໃຫ້ມີຄຸນນະພາບທີ່ດີຂຶ້ນ ໂດຍອີງໃສ່ພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະຂັ້ນ.

ວຽງຈັນ, ວັນທີ 2 ພະຈິກ 2020

**ລັດຖະມົນຕີ**

ສ.ລັດຖະມົນຕີ

ນ.ແສງເດືອນ ຫຼ້າຈັນທະບູນ

# ຄຳຂອບໃຈ

ກະຊວງສຶກສາທິການ ແລະ ກິລາ ຂໍສະແດງຄວາມຂອບໃຈຢ່າງຈິງໃຈມາຍັງທຸກພາກສ່ວນ ພາຍໃນ ກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງວຽງຈັນ, ພະນັກງານຈາກ ຫ້ອງການສຶກສາທິການ ແລະ ກິລາ ເມືອງ ແລະ ຜູ້ອຳນວຍການໂຮງຮຽນ ແລະ ຄູ່ຮ່ວມພັດທະນາທີ່ໃຫ້ການຊ່ວຍ ເຫຼືອດ້ານວິຊາການ ແລະ ຄຳຄິດເຫັນທີ່ມີຄຸນຄ່າ ແລະ ຄຳແນະນຳຕ່າງໆ ທີ່ໄດ້ສະໜອງໃຫ້ແກ່ການພັດທະນາແຜນ ພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025.

ພິເສດ ກະຊວງສຶກສາທິການ ແລະ ກິລາ ກໍຂໍສະແດງຄວາມຂອບໃຈມາຍັງສະຖານທູດອີດສະຕາລີ, ສະຫາພາບເອີຣົບ ແລະ ອົງການຢູນິເຊບປະຈຳ ສປປ ລາວ ທີ່ໄດ້ໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແລະ ການ ສະໜັບສະໜູນດ້ານການເງິນ ເພື່ອຈັດກອງປະຊຸມປຶກສາຫາລື ໃນການພັດທະນາແຜນພັດທະນາຂະແໜງການສຶກ ສາ ແລະ ກິລາ (2021-2025).

ກະຊວງສຶກສາທິການ ແລະ ກິລາ

## ພາກທີ I: ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຄັ້ງທີ IX (2021-2025)

### 1. ພາກສະເໜີ

### 1.1 ບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020

ໂດຍອີງຕາມຜົນການທົບທວນກາງສະໄໝຂອງແຜນພດທະນາຂະແໜງການສຶກສາ ແລະ ກິລາ 2016-2020, ການທົບທວນກາງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VIII, ໃນຂະແໜງການສຶກສາ ແລະ ກິລາ ໄດ້ຄົ້ນພົບບັນຫາ ແລະ ສິ່ງທ້າທາຍທີ່ສຳຄັນຫຼາຍຢ່າງ, ລວມທັງຜົນກະທົບຈາກການລະບາດຂອງພະຍາດ COVID-19 ກໍໄດ້ນຳສະເໜີໃຫ້ເຫັນໃນຂໍທີ 3.2 ລຸ່ມນີ້.

ຍ້ອນງົບປະມານສຳລັບຂະແໜງການສຶກສາມີຈຳກັດ, ດັ່ງນັ້ນ ຂະແໜງການສຶກສາ ແລະ ກິລາ ຈະປະເຊີນກັບສິ່ງທ້າທາຍໃນການສືບຕໍ່ສະໜອງງົບປະມານໃຫ້ແກ່ບັນດາກິດຈະກຳ ທີ່ໄດ້ຮັບການຊ່ວຍເຫຼືອດ້ານການເງິນຈາກຜູ້ໃຫ້ທຶນ[1] ໃນເວລາໂຄງການສິ້ນສຸດ ແລະ ມີຄວາມຈຳເປັນຕ້ອງໄດ້ຈັດບູລິມະສິດທາງດ້ານງົບປະມານຂອງຕົນ. ຜົນກະທົບຈາກການລະບາດຂອງພະຍາດ COVID-19 ຕໍ່ການເກັບລາຍຮັບຂອງລັດຖະບານໃນປີ 2020 ແລະ ອາດມີຜົນກະທົບໃນອີກສອງຫາສາມປີຂ້າງໜ້າ ແລະ ຍິ່ງຈະເຮັດໃຫ້ການຈັດສັນງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນເຂົ້າໃສ່ກິດຈະກຳຕ່າງໆ ຍິ່ງມີຄວາມຫຍຸ້ງຍາກ. ບູລິມະສິດຫຼັກໃນການພັດທະນາຂະແໜງການສຶກສາ ແລະ ກິລາ ແມ່ນເພື່ອ (i) ສັງລວມ ແລະ ເຮັດການວິໄຈຢ່າງເລິກເຊິ່ງເຖິງຂໍ້ມູນກ່ຽວກັບການສຶກສາ (ໂດຍແຍກຕາມເພດ, ເຜົ່າ ແລະ ຄວາມພິການ), ວິໄຈທີ່ແຍກຂໍ້ມູນລະອຽດກ່ຽວກັບການເຂົ້າຮຽນ, ການປະລະການຮຽນ, ການເລື່ອນຂັ້ນເລື່ອນຊັ້ນ ແລະ ຕົວຊີ້ບອກດ້ານຄຸນນະພາບ ເຊັ່ນ: ການຮູ້ໜັງສື ແລະ ການຄິດໄລ່ເລກ; (ii) ສ້າງຄວາມເຂັ້ມແຂງໃຫ້ແກ່ສາຍກ່ຽວພັນລະຫວ່າງການສຶກສາ, ການມີວຽກເຮັດງານທຳ ແລະ ດ້ານອື່ນໆທາງດ້ານເສດຖະກິດ-ສັງຄົມ ເພື່ອນຳໄປສູ່ການວາງແຜນໂດຍອີງໃສ່ຂໍ້ມູນ ແລະ ຫຼັກຖານດັ່ງກ່າວ; (iii) ປັບປຸງປະສິດທິພາບການບັນຈຸ ແລະ ການນຳໃຊ້ຄູ; ແລະ (iv) ພັດທະນາຍຸດທະສາດການຈັດສັນງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ເພື່ອໃຫ້ບູລິມະສິດໃນການແກ້ໄຂບັນດາສິ່ງທ້າທາຍຕົ້ນຕໍຕ່າງໆ ດັ່ງທີ່ໄດ້ກຳນົດໃນຂໍ້ 3.3 ຂອງເອກະສານແຜນການນີ້.

ການທົບທວນກາງສະໄໝ ຂອງແຜນພັດທະນາການສຶກສາ ແລະ ກິລາ ຄັ້ງທີ VIII ກຳນົດບາງບູລິມະສິດສະເພາະສຳລັບໄລຍະ 2018-2020 ດັ່ງນີ້:

- **<u>ເດັກທີ່ຢູ່ນອກໂຮງຮຽນ:</u>** ຂໍ້ມູນດ້ານສະຖິຕິຕ້ອງກົມກຽວກັນກັບຂໍ້ມູນອື່ນໆ ລວມທັງຂໍ້ມູນຈາກການວິໄຈເດັກນອກໂຮງຮຽນຂອງສາກົນ[2] (ປີ 2017) ແລະ ການສຳຫຼວດປະຊາກອນປີ 2015 ການສຳຫຼວດດັດຊະນີໝາຍສັງຄົມ ປີ 2017, ເພື່ອໃຫ້ໄດ້ຂໍ້ມູນທີ່ຊັດເຈນກ່ຽວກັບເດັກຢູ່ນອກໂຮງຮຽນ. ຍັງຂາດຂໍ້ມູນກ່ຽວກັບເດັກນ້ອຍພິການ ທັງຢູ່ໃນ ແລະ ນອກໂຮງຮຽນ. ສູນສະຖິຕິການສຶກສາ ແລະ ກິລາ ຄວນນຳໃຊ້ຄຳຖາມຈາກ "Washington Group Child Functioning Questions" ເພື່ອເກັບກຳຂໍ້ມູນກ່ຽວກັບເດັກພິການ.
- **<u>ຜົນການຮຽນ:</u>** ມີຄວາມຈຳເປັນຕ້ອງເພີ່ມງົບປະມານບໍລິຫານຢູ່ຂັ້ນເມືອງ ພ້ອມໆກັນກັບການຍົກລະດັບຄູສຶກສານິເທດ ເພື່ອຊ່ວຍເຫຼືອບັນດາຄູສອນ ເພື່ອແນໃສ່ປັບປຸງການສອນຂອງຄູໃຫ້ດີຂຶ້ນ.
- ມີຄວາມຈຳເປັນໃນການປະຕິບັດຍຸດທະສາດ ເພື່ອ**<u>ປັບປຸງປະສິດທິພາບການສັບຊ້ອນ ແລະ ນຳໃຊ້ຄູ</u>**, ຫຼຸດຈຳນວນຄູອາສາສະໝັກ ເພື່ອໃຫ້ສາມາດມີການສັບຊ້ອນຄູຈົບໃໝ່ທີ່ມີຄຸນນະພາບ. ບູລິມະສິດໃນການບັນຈຸ

[1] ເຊັ່ນ: ການເພີ່ມງົບປະມານໃສ່ເງິນບໍລິຫານໂຮງຮຽນ ແລະ ອາຫານໃນໂຮງຮຽນ

[2] ການວິໄຈສະພາບເດັກນ້ອຍຢູ່ນອກໂຮງຮຽນຢູ່ 9 ປະເທດໃນ ອາຊຽນ, UNESCO ປີ 2017

ລັດຖະກອນໃໝ່ ແມ່ນການບັນຈຸຄູມັດທະຍົມທີ່ມີຄວາມຊຳນານງານ ໃນວິຊາຄະນິດສາດ, ວິທະຍາສາດ ແລະ ວິຊາໄອທີ.

- **<u>ການຈັດສັນງົບປະມານທີ່ບໍ່ພຽງພໍ</u>**: ໃຫ້ແກ່ຂະແໜງການສຶກສາ ແລະ ກິລາ ໃນຊຸມປີຜ່ານມາ ມີຄວາມຈຳເປັນຕ້ອງໄດ້ປັບປຸງ ແລະ ມີຄວາມຈຳເປັນຕ້ອງໄດ້ຮັບງົບປະມານເພີ່ມຂຶ້ນ. ພ້ອມດຽວກັນນັ້ນ ຂະແໜງການສຶກສາ ແລະ ກິລາ ຕ້ອງໄດ້ຈັດລຽງບູລິມະສິດຂອງແຜນງານຕ່າງໆ ເພື່ອຮັບປະກັນວ່າຊັບ ພະຍາ ກອນທີ່ມີຈຳກັດໄດ້ຖືກນຳໃຊ້ເຂົ້າແກ້ໄຂບັນດາຄວາມຕ້ອງການທີ່ຈຳເປັນແທ້. ສັງລວມແລ້ວ ບັນດາບູລິມະສິດທີ່ຈຳເປັນແມ່ນເພື່ອ (ກ) ສ້າງຄວາມເຂັ້ມແຂງດ້ານຄວາມກ່ຽວພັນລະຫວ່າງແຜນການ ແລະ ງົບປະມານ, (ຂ) ເພີ່ມເງິນບໍລິຫານໃຫ້ແກ່ຂັ້ນແຂວງ ແລະ ຂັ້ນເມືອງ ແລະ ຈັດສັນງົບປະມານໃຫ້ເທົ່າທຽມກັນ ໂດຍເພີ່ມງົບປະມານສຳລັບວຽກງານນິເທດ ແລະ ການຕິດຕາມຂັ້ນໂຮງຮຽນ ແລະ (ຄ) ສ້າງຄວາມເຂັ້ມແຂງ ແລະ ຫັນການວາງແຜນເປັນທັນສະໄໝ, ຄວາມສາມາດການຈັດສັນງົບປະມານ ແລະ ຄວາມສາມາດທາງດ້ານການບັນຊີ ຂອງກະຊວງສຶກສາທິການ ແລະ ກິລາ. ໃນຂະນະດຽວກັນ, ປະສິດທິພາບໃນການນຳໃຊ້ຄູກໍຕ້ອງໄດ້ຮັບການປັບປຸງໃຫ້ດີຂຶ້ນ.

- **<u>ຈຳນວນ ແລະ ຄຸນນະພາບຂອງນັກຮຽນຈົບການສຶກສາຂັ້ນພື້ນຖານ</u>**: ມີຄວາມຈຳເປັນຕ້ອງໄດ້ເພີ່ມອັດຕາການເລື່ອນຊັ້ນ ແລະ ອັດຕາການຈົບຊັ້ນໃນຊັ້ນມັດທະຍົມຕົ້ນ ແລະ ມັດທະຍົມປາຍ. ຢາກປັບ ປຸງຄຸນນະພາບນັກສຶກສາ ທີ່ຮຽນຈົບການສຶກສາຫຼັງການສຶກສາຂັ້ນພື້ນຖານໃຫ້ໄດ້ດີ ແມ່ນມີຄວາມຈຳ ເປັນຕ້ອງໄດ້ປັບປຸງທັກສະ ແລະ ຄວາມຮູ້ຂັ້ນພື້ນຖານທີ່ໄດ້ຮຽນມາແຕ່ຊັ້ນປະຖົມ ແລະ ມັດທະຍົມຕົ້ນ ພ້ອມທັງປະກອບທັກສະທີ່ຈຳເປັນໃຫ້ແກ່ຊາວໜຸ່ມ ເພື່ອນຳໄປປະຕິບັດໃນວຽກງານຂອງເຂົາເຈົ້າ ໃນເງື່ອນໄຂເສດຖະກິດທີ່ມີຄວາມທັນສະໄໝ ແລະ ຫຼາກຫຼາຍ. ບັນດາຄວາມສາມາດຂັ້ນຕ່ຳສຸດ ຊຶ່ງລວມມີທັກສະ ການຮູ້ໜັງສື ແລະ ທັກສະດ້ານຄະນິດສາດ ຄວນຈະໄດ້ຖືກກຳນົດໄວ້ເປັນເງື່ອນໄຂ ເພື່ອເຂົ້າຮຽນໃນສາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ. ບັນດາຫຼັກສູດສາຍອາຊີວະສຶກສາ ຄວນເປີດໂອກາດໃຫ້ທຸກຄົນໄດ້ເຂົ້າຮ່ວມຮຽນ ແລະ ໄດ້ຮັບຜົນປະໂຫຍດຈາກຫຼັກສູດດັ່ງກ່າວ ໂດຍບໍ່ຈຳແນກເພດ, ເຜົ່າ ແລະ ຄວາມພິການ.

- **<u>ການຮູ້ໜັງສື</u>**: ຕ້ອງປັບປຸງຄຸນນະພາບຂອງການສຶກສາຊັ້ນປະຖົມສຶກສາໃຫ້ດີຂຶ້ນ ຈຶ່ງສາມາດເຮັດໃຫ້ອັດຕາການຈົບຊັ້ນມັດທະຍົມຕົ້ນເພີ່ມຂຶ້ນ. ດັ່ງນັ້ນ, ການສະໜອງຫຼັກສູດການສຶກສານອກໂຮງຮຽນທີ່ມີເປົ້າໝາຍແມ່ນມີຄວາມສຳຄັນ. ຫຼັກສູດທຽບເທົ່າສຳລັບການຮູ້ໜັງສືຂອງໄວໜຸ່ມ ແລະ ສຳລັບສືບຕໍ່ການສຶກສາ ແມ່ນຈຳເປັນຕ້ອງໄດ້ປັບປຸງໃຫ້ເຂັ້ມແຂງ ແລະ ເສີມຂະຫຍາຍໃຫ້ດີຂຶ້ນ.

- **<u>ຄວາມສອດຄ່ອງກັນ ລະຫວ່າງການສຶກສາ ກັບ ຄວາມຕ້ອງການຂອງແຜນພັດທະນາເສດ ຖະກິດ-ສັງຄົມແຫ່ງຊາດ</u>**: ການປະເມີນກາງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ VIII ໄດ້ລະບຸວ່າ ລະບົບການສຶກສາຕ້ອງຮັບປະກັນໃຫ້ເດັກພິການໄດ້ເຂົ້າເຖິງການສຶກສາໃນທຸກລະດັບ. ຊຸມຊົນ, ພໍ່ແມ່ຜູ້ປົກຄອງ ແລະ ບຸກຄະລາກອນທາງການສຶກສາ ຍັງບໍ່ຮັບຮູ້ເຖິງສິດໃນການໄດ້ຮັບການສຶກສາຂອງເດັກພິການ ແລະ ຄູສອນ ຕ້ອງໄດ້ຮັບການຝຶກອົບຮົມ ເພື່ອໃຫ້ເຂົ້າໃຈກ່ຽວກັບການສຶກສາຮຽນຮ່ວມໃຫ້ດີກວ່າເກົ່າ. ການປັບປຸງຄວາມສາມາດ ແລະ ທັກສະພື້ນຖານຂອງເດັກ ນັບແຕ່ຊັ້ນການສຶກສາ ກ່ອນໄວຮຽນ ເຖິງຊັ້ນມັດທະຍົມຕອນຕົ້ນ ແມ່ນຄວາມຈຳເປັນຫຼາຍ ເນື່ອງຈາກວ່າ ປັດຈຸບັນນີ້ ເຫັນໄດ້ວ່າທັກສາການຮຽນຮູ້ພາສາລາວ ແລະ ທັກສະດ້ານຄະນິດສາດຂອງນັກຮຽນ ແມ່ນຍັງອ່ອນຫຼາຍ ຊຶ່ງຈະມີຜົນກະທົບຕໍ່ປະສິດທິພາບໃນການສະໜອງການສຶກສາລະດັບອາຊີວະສຶກສາ ແລະ ການສຶກສາຊັ້ນສູງ. ການສຳຫຼວດຕະຫຼາດແຮງງານ ແລະ ການສຶກສາຕິດຕາມນັກຮຽນທີ່ຮຽນຈົບຢ່າງເປັນປົກກະຕິ ແມ່ນມີຄວາມຈຳເປັນ. ກະຊວງສຶກສາທິການ ແລະ ກິລາ ມີຄວາມຈຳເປັນຕ້ອງໄດ້ສ້າງແຜນພັດທະນາຊັບພະຍາກອນມະນຸດສຳລັບຂະແໜງການສຶກສາ ແລະ ກິ ລາ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແນ່ໃສ່ໃຫ້ເສດຖະກິດມີການ

ເຕີບໂຕທີ່ຍືນຍົງ ແລະ ກວມລວມ, ທຸກຄົນສາມາດຊອກວຽກເຮັດງານທຳໄດ້. ຢາກໃຫ້ມີການປະກອບ ສ່ວນຢ່າງກວ້າງຂວາງຂອງຂະແໜງອຸດສະຫະກຳ ແລະ ການບໍລິການຕໍ່ຍອດຜະລິດຕະພັນພາຍໃນຂອງປະ ເທດ ມີຄວາມຈຳເປັນຕ້ອງໃຫ້ນັກຮຽນທີ່ຮຽນຈົບຈາກໂຮງຮຽນມັດທະຍົມຕອນປາຍ, ວິທະຍາໄລ ແລະ ມະ ຫາວິທະຍາໄລມີຄຸນນະພາບທີ່ດີ.

- **ການໃຊ້ຈ່າຍຂອງຂະແໜງການສຶກສາ ແລະ ກິລາ**[3]: ຄຸນນະພາບ ແລະ ປະສິດທິພາບຂອງການໃຊ້ຈ່າຍງົບປະມານຂອງຂະແໜງການສຶກສາ ແລະ ກິລາ ມີຄວາມຈຳເປັນຕ້ອງໄດ້ຮັບການປັບປຸງໃຫ້ດີຂຶ້ນ ຊຶ່ງລວມມີ: (ກ) ປັບປຸງປະສິດທິພາບຂອງການນຳໃຊ້ຄູ; (ຂ) ສ້າງຄວາມເຂັ້ມແຂງໃນການເຊື່ອມໂຍງກັນລະ ຫວ່າງການວາງແຜນ ແລະ ການຂຶ້ນງົບປະມານ; ແລະ (ຄ) ການສ້າງຄວາມເຂັ້ມແຂງດ້ານຂອດປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນກ່ຽວກັບການເກັບກຳຂໍ້ມູນດ້ານການເງິນ. ຂໍ້ຈຳກັດທາງດ້ານການເງິນຍັງຈະມີຢູ່ຈົນເຖິງປີ 2020. ດັ່ງນັ້ນ, ຂະແໜງການສຶກສາຕ້ອງໄດ້ຕັດສິນໃຈກຳນົດວິທີການໃນການນຳໃຊ້ຊັບພະ ຍາກອນມະນຸດ ແລະ ການເງິນຂອງຕົນຢ່າງມີປະສິດທິຜົນ, ໃນຂະນະທີ່ຄວາມແຕກໂຕນກໍສາມາດຫຼຸດຜ່ອນໄດ້. ຄວາມສະເໝີພາບທາງເພດໃນກຸ່ມພະນັກງານບໍລິຫານ ກໍມີຄວາມຈຳເປັນຕ້ອງໄດ້ຮັບການປັບປຸງ ເພາະ ວ່າຈຳນວນແມ່ຍິງທີ່ມີຕຳແໜ່ງສູງມີຈຳກັດຢູ່ຂັ້ນພະແນກສຶກສາທິການ ແລະ ກິລາ ແຂວງ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ ແລະ ອຳນວຍການໂຮງຮຽນ.

- **ການເງິນສຶກສາ:** ບູລິມະສິດແມ່ນຮັກສາການສະໜອງງົບປະມານໃຫ້ພຽງພໍແກ່ບັນດາແຜນງານທີ່ກຳລັງດຳເນີນການຢູ່ ເຊັ່ນ: ເງິນບໍລິຫານໂຮງຮຽນ ແລະ ການຜະລິດປຶ້ມແບບຮຽນທົດແທນ. ກະຊວງສຶກສາທິການ ແລະ ກິລາ ມີຂໍ້ຈຳກັດໃນການປັບປ່ຽນເປົ້າໝາຍການນຳໃຊ້ງົບປະມານບໍລິຫານ. ແຕ່ຖ້າຢາກຫຼຸດຜ່ອນຄວາມແຕກໂຕນກັນໄດ້ ແມ່ນຕ້ອງປັບປຸງປະສິດທິພາບຂອງການສັບຊ້ອນ ແລະ ນຳໃຊ້ຄູ. ເຖິງຢ່າງໃດກໍຕາມ, ການຍົກຍ້າຍຄູຈາກບ່ອນໜຶ່ງໄປອີກບ່ອນໜຶ່ງມີຄວາມຫຍຸ້ງຍາກຫຼາຍ ໃນເງື່ອນໄຂຂອງປະເທດເຮົາ. ຄະນະກຳມະການຈັດສັນຄູ ແລະ ຄະນະກຳມະການແຜນການ ແລະ ການເງິນ ທັງສອງຄະນະຈະສຶກສາເບິ່ງບັນດາຂໍ້ສະເໜີແນະຈາກການທົບທວນເຄິ່ງສະໄໝແຜນພັດທະນາການສຶກສາ ແລະ ກິລາ 2016-2020 ເພື່ອກຳນົດບັນດາຍຸດທະສາດການນຳໃຊ້ຊັບພະຍາກອນມະນຸດ ແລະ ຊັບພະຍາກອນດ້ານການເງິນເພື່ອຫຼຸດຜ່ອນຄວາມແຕກໂຕນ. ອາດຈະພິຈາລະນາເບິ່ງການນຳໃຊ້ເງິນບໍລິຫານໂຮງຮຽນທີ່ແຕກຕ່າງກັນ, ການຈັດສັນງົບປະມານ ໂດຍອີງໃສ່ສູດຄິດໄລ່ເງິນບໍລິຫານໃຫ້ແກ່ເມືອງ, ແລະ /ຫຼື ເງິນຊ່ວຍເຫຼືອດ້ານບໍລິຫານໃຫ້ແກ່ເມືອງຄວນເລັ່ງໃສ່ໂຮງຮຽນດ້ອຍໂອກາດ ໂດຍຜ່ານການນຳໃຊ້ສູດຄິດໄລ່ງົບປະມານ ທີ່ໄດ້ກຳນົດເພື່ອຫຼຸດຜ່ອນຄວາມແຕກໂຕນກັນ.

- **ນະໂຍບາຍອີງໃສ່ຫຼັກຖານ**: ມີຄວາມຈຳເປັນຕ້ອງສ້າງກົນໄກເພື່ອສັງລວມ ແລະ ວິໄຈຂໍ້ມູນຢ່າງເຕັມສ່ວນກວ່າເກົ່າຈາກແຫຼ່ງຕ່າງໆກ່ຽວກັບການສຶກສາ ແລະ ການຈ້າງງານ ພ້ອມທັງສັງລວມຜົນການວິໄຈຕ່າງໆໃຫ້ແກ່ຜູ້ສ້າງນະໂຍບາຍ ພ້ອມທັງໃຫ້ພາກສ່ວນອື່ນໆທີ່ກ່ຽວຂ້ອງ ໄດ້ເຂົ້າເຖິງຜົນການວິໄຈດັ່ງກ່າວ. ຢາກເຮັດໃຫ້ທຸກໆແຂວງ ສາມາດຈັດຕັ້ງປະຕິບັດກົນໄກດັ່ງກ່າວໄດ້, ຕ້ອງມີນິຕິກຳໃນການສະໜັບສະໜູນວຽກງານດັ່ງກ່າວ. ເພື່ອຢາກຕິດຕາມການປະຕິບັດແຜນການພັດທະນາຂອງຂະແໜງການຢ່າງມີປະສິດທິຜົນ ໂດຍສະເພາະໃນລະດັບນະໂຍບາຍ ແລະ ຍຸດທະສາດ ຕ້ອງມີກົນໄກໃຫ້ລັດຖະບານ ແລະ ຄູ່ຮ່ວມພັດທະນາສາມາດປະເມີນຄວາມຄືບໜ້າຂອງແຜນ ໂດຍອີງໃສ່ຄາດໝາຍທີ່ໄດ້ຮັບການປັບປຸງຂອງ ປີ 2020. ຂອບປະເມີນຜົນການປະຕິບັດງານຂອງຂະແໜງການທີ່ມີປະສິດທິຜົນ ຕ້ອງໄດ້ກວມເອົາການຕິດຕາມ ການປະຕິບັດນະໂຍບາຍ ແລະ ຍຸດທະສາດທີ່ສູນກາງວາງອອກ ຢູ່ໃນລະດັບທ້ອງຖິ່ນ.

[3] ລາຍລະອຽດມີຢູ່ຂໍ້ທີ 7

ແຜນພັດທະນາການສຶກສາ ແລະ ກິລາ 2021-2025 ໄດ້ສ້າງຂຶ້ນໂດຍນຳໃຊ້ບັນດາຂໍ້ສະເໜີແນະເຫຼົ່ານີ້ເປັນຈຸດເລີ່ມຕົ້ນ. ເຖິງຢ່າງໃດກໍຕາມ, ສິ່ງທ້າທາຍທີ່ຈະບໍ່ສາມາດເຮັດໃຫ້ບັນລຸໄດ້ຈຸດປະສົງດ້ານນະໂຍບາຍ ແລະ 8 ຜົນໄດ້ຮັບລວມທີ່ກຳນົດໃນແຜນ ແມ່ນການສະໜອງງົບປະມານທີ່ບໍ່ພຽງພໍໃຫ້ແກ່ຂະແໜງການສຶກສາ ແລະ ກິລາ. ລະດັບງົບປະມານທີ່ໄດ້ຮັບໃນໄລຍະຜ່ານມາແມ່ນຕ່ຳຫຼາຍ ແລະ ຍ້ອນເຫດຜົນດັ່ງກ່າວ ຈຶ່ງໄດ້ສົ່ງຜົນໃຫ້ການການພັດທະນາການສຶກສາໃນຫຼາຍຂົງເຂດ ມີຄວາມທົດຖອຍ. ຍ້ອນຜົນກະທົບຈາກການລະບາດຂອງ COVID-19, ຈຶ່ງເຮັດໃຫ້ສະພາບການສຶກສາອາດຈະທົດຖອຍລົງໃນໄລຍະໃດໜຶ່ງ (ເບິ່ງພາກ 3.2). ດັ່ງນັ້ນ, ໃນຂໍ້ທີ 6 ຈຶ່ງກຳນົດບັນດາຜົນໄດ້ຮັບລະດັບກາງທີ່ຈຳເປັນ ເພື່ອບັນລຸ 8 ຜົນໄດ້ຮັບລະດັບສູງ, ຊຶ່ງມັນອາດບໍ່ສາມາດຈັດຕັ້ງປະຕິບັດໄດ້ ຖ້າຫາກສ່ວນແບ່ງງົບປະມານບໍລິຫານປົກກະຕິ ທີ່ບໍ່ແມ່ນເງິນເດືອນຂອງລັດຖະບານ ທີ່ສະໜອງໃຫ້ແກ່ຂະແໜງການສຶກສາ ແລະ ກິລາ ຍັງຮັກສາຢູ່ໃນລະດັບຕ່ຳຄືໃນປັດຈຸບັນນີ້.

## 1.2 ວິທີການພັດທະນາແຜນພັດທະນາການສຶກສາ ແລະ ກິລາ 2021-2025

ໂຄງປະກອບຂອງແຜນພັດທະນາຂະແໜການສຶກສາ ແລະ ກິລາ 2021-2025 ແມ່ນຄ້າຍຄືກັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020 ແລະ ບົນພື້ນຖານຂອງທິດສະດີຂອງການປ່ຽນແປງ ທີ່ໄດ້ກຳນົດໃນປີ 2015. ຕ່ອງໂສ້ຂອງຜົນໄດ້ຮັບຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ແມ່ນຢູ່ໃນເອກະສານຊ້ອນທ້າຍທີ 1 ຊຶ່ງໄດ້ນຳສະເໜີໃຫ້ເຫັນເຖິງພາບລວມຜົນໄດ້ຮັບໃນລະດັບສູງ, ຜົນໄດ້ຮັບລະດັບກາງ, ຍຸດທະສາດ ແລະ ກິດຈະກຳຫຼັກທີ່ຈະຈັດຕັ້ງປະຕິບັດ ເພື່ອໃຫ້ບັນລຸໄດ້ເປົ້າໝາຍລວມຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ. ຂະບວນການໃນການປຶກສາຫາລື ໃນການພັດທະນາແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍທີ 2. ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ເລັ່ງໃສ່ຫຼຸດຜ່ອນຄວາມແຕກໂຕນລະຫວ່າງເພດຍິງ ແລະ ເພດຊາຍ, ຊົນເຜົ່າ ແລະ ຜູ້ຮັ່ງ ແລະ ຜູ້ທຸກ ໂດຍສະເພາະໃນບັນດາເມືອງທີ່ດ້ອຍໂອກາດ. ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ໄດ້ກຳນົດເມືອງດ້ອຍໂອກາດ, ໂດຍແມ່ນ 40 ເມືອງດ້ອຍໂອກາດ (ເບິ່ງເອກະສານຊ້ອນທ້າຍທີ 3) ທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດໃນປັດຈຸບັນ. ລາຍຊື່ບັນດາເມືອງດັ່ງກ່າວຈະໄດ້ຮັບການທົບທວນຄືນ ແລະ ປັບປຸງໃນຂະບວນການທົບທວນເຄິ່ງສະໄໝຂອງແຜນ 5 ປີ.

ຫຼັກການທີໜຶ່ງ ທີ່ໄດ້ນຳໃຊ້ໃນການສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ແມ່ນເພື່ອຮັບປະກັນຄວາມສອດຄ່ອງລະຫວ່າງພາກທີ I (ມາດຕະການດ້ານນະໂຍບາຍ) ແລະ ພາກທີ II (ແຜນຂະແໜງການຍ່ອຍ) ໂດຍຮຽກຮ້ອງໃຫ້ແຕ່ລະຂະແໜງການຍ່ອຍ ແກ້ໄຂຈຸດປະສົງດ້ານນະໂຍບາຍຫຼັກ, ຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ ໃນແຜນຂອງແຕ່ລະຂະແໜງການຍ່ອຍ. ທັງນີ້ ກໍເພື່ອເຮັດໃຫ້ມີຄວາມສອດຄ່ອງດ້ານນະໂຍບາຍ.

ຫຼັກການທີສອງ ແມ່ນນຳໃຊ້ວິທີຈັດກອງປະຊຸມປຶກສາຫາລືໃນຫຼາຍລະດັບ ເພື່ອໃຫ້ມີຄວາມເປັນເອກະພາບທາງດ້ານຂອບນະໂຍບາຍ ທີ່ຢູ່ພາຍໃຕ້ແຜນພັດທະນາການສຶກສາ ແລະ ກິລາ 2021-2025. ແຜນການເງິນຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ຖືກສ້າງຂຶ້ນໂດຍອີງໃສ່ສອງສົມມຸດຖານ ຄື: 1) "ງົບປະມານໄດ້ຮັບຢູ່ໃນລະດັບເທົ່າເດີມ" ເຊິ່ງເປັນພື້ນຖານໃຫ້ແກ່ການຮັກສາລະດັບຄຸນນະພາບ ແລະ ການສະໜອງການບໍລິການໃນປະຈຸບັນ ໂດຍບໍ່ມີການປັບປຸງການບໍລິການໃດໆ. ຊຶ່ງມັນສະແດງເຖິງ "ເພດານງົບປະມານໃນປະຈຸບັນ" ທີ່ຂະແໜງການມີຄວາມຕ້ອງການ; ແລະ 2) ສົມມຸດຖານ "ຍົກສູງຄຸນນະພາບການສຶກສາ" ຊຶ່ງຖ້າຢາກບັນລຸໄດ້ຕາມສົມມຸດຖານດັ່ງກ່າວນີ້ ສ່ວນແບ່ງງົບປະມານທີ່ບໍ່ເງິນເດືອນຂອງຂະແໜງການສຶກສາ ແລະ ກິລາ ຕ້ອງໄດ້ຮັບເພີ່ມຂຶ້ນຢ່າງຫຼວງຫຼາຍ. ຍ້ອນວ່າການຈັດສັນງົບປະມານຕົວຈິງ ອາດຈະຕົກຢູ່ໃນລະຫວ່າງກາງຂອງສອງສົມມຸດຖານ ຂອງແຜນພັດທະນາຂະແໜການສຶກສາ ແລະ ກິລາ. ດັ່ງນັ້ນ, ນະໂຍບາຍການໃຊ້ຈ່າຍຈະເປັນທິດທາງໃນການຈັດລຳດັບຄວາມສຳຄັນຂອງການຈັດສັນງົບປະມານທີ່ໄດ້ຮັບ ໃສ່ໂຂງເຂດທີ່ໄດ້ຕົກລົງກັນ ເຊັ່ນ: ຂະແໜງ ການ

ຍ່ອຍປະຖົມສຶກສາ ແລະ ການຝຶກອົບຮົມຄູ. ຜົນກະທົບທາງດ້ານເສດຖະກິດຈາກການລະບາດຂອງພະຍາດ COVID-19 ອາດເຮັດໃຫ້ການສະໜອງງົບປະມານຕາມສົມມຸດຖານ "ຍົກສູງຄຸນນະພາບການສຶກສາ" ບໍ່ເປັນໄປໄດ້ຕາມແຜນ ໃນຊຸມປີຕົ້ນໆຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025.

## 2. ຜົນສຳເລັດຕົ້ນຕໍ ສຳລັບ 2016-2020

ຜົນສຳເລັດໄດ້ສັງລວມຈາກ 5 ຈຸດປະສົງຂອງນະໂຍບາຍ ແລະ 11 ຜົນໄດ້ຮັບລະດັບສູງມີດັ່ງນີ້:

**ຈຸດປະສົງຂອງນະໂຍບາຍທີ 1** ລະບຸໄວ້ວ່າ "ນັກຮຽນທຸກຄົນມີຄວາມຮູ້ ແລະ ຄວາມສາມາດຂັ້ນພື້ນຖານທີ່ຈຳເປັນພ້ອມທັງມີສຸຂະພາບແຂງແຮງ ເພື່ອໃຫ້ສາມາດເຂົ້າເຮັດວຽກຕາມຕະຫຼາດແຮງງານ ຫຼື ສືບຕໍ່ຮຽນໃນການສຶກສາຫຼັງຂັ້ນພື້ນຖານ".

**ຜົນສຳເລັດທີ່ສຳຄັນລວມມີ:**

- ອັດຕາການເຂົ້າຮຽນຂອງເດັກອາຍຸ 5 ປີ ເພີ່ມຂຶ້ນຈາກ 70,9% ໃນສົກຮຽນ 2015-16 ເປັນ 82,7% ໃນສົກຮຽນ 2019-2020 ຊຶ່ງສາມາດບັນລຸໄດ້ເກີນຄາດໝາຍທີ່ກຳນົດໃນແຜນພັດທະນາການສຶກສາ ແລະ ກິລາ ຄື 80% ໃນປີ 2020.
- ອັດຕາຈົບຊັ້ນປະຖົມຕາມກະແສນັກຮຽນ ໄດ້ຮັບການປັບປຸງດີຂຶ້ນ ຄືຈາກ 77,9% (ເພດຍິງ 79,1%) ໃນສົກຮຽນ 2015-16 ເປັນ 79,9% ດ້ວຍອັດຕາຈົບຊັ້ນຂອງເດັກຍິງ 82,7% ສູງກວ່າເດັກຊາຍ ໃນສົກຮຽນ 2019-2020.
- ອັດຕາການຄ້າງຫ້ອງ ປ.1 ໄດ້ຫຼຸດລົງຈາກ 11,5% ໃນສົກຮຽນ 2015-2016 ເປັນ 6,3% ໃນສົກຮຽນ 2019-2020.
- ອັດຕາເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ເພີ່ມຂຶ້ນຈາກ 82,2% ໃນສົກຮຽນ 2015-2016 ເປັນ 83,3% ຊຶ່ງບໍ່ສາມາດບັນລຸໄດ້ຕາມຄາດໝາຍທີ່ກຳນົດ 85% ໃນປີ 2020. ອັດເຂົ້າຮຽນຂອງນັກຮຽນຍິງ ບັນລຸພຽງແຕ່ (81,9%) ຊຶ່ງຍັງສືບຕໍ່ ຕໍ່າກວ່າເພດຊາຍ (84,6%)
- ອັດຕາການຈົບຊັ້ນລວມຊັ້ນມັດທະຍົມຕອນຕົ້ນ ເພີ່ມຂຶ້ນພຽງເລກນ້ອຍ ຄື ຈາກ 70,4% ໃນສົກຮຽນ 2015-2016 ເປັນ 71,6% ໃນສົກຮຽນ 2019/20, ສ່ວນດັດຊະນີຄວາມສະເໝີພາບຍິງຊາຍເພີ່ມຈາກ 0,94 ເປັນ 0,97 ໃນປີ 2019-2020.
- ໄດ້ສືບຕໍ່ສະໜອງນ້ຳສະອາດໃຊ້ໃນໂຮງຮຽນ (ໃນປີ 2020 ມີ 73% ຂອງໂຮງຮຽນປະຖົມມີນ້ຳສະອາດໃຊ້).

**ຈຸດປະສົງຂອງນະໂຍບາຍທີ 2.** ລະບຸໄວ້ວ່າ "ເພື່ອສະໜອງການສຶກສາຫຼັງຂັ້ນພື້ນຖານໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະ ແລະ ແຂ່ງຂັນກັບກຳລັງແຮງງານໃນບັນດາປະເທດອາຊີຕາເວັນອອກສ່ຽງໃຕ້ (ASEAN)".

**ຜົນສຳເລັດທີ່ສຳຄັນລວມມີ:**

- ອັດຕາເຂົ້າຮຽນລວມຂອງຊັ້ນມັດທະຍົມຕອນປາຍບັນລຸໄດ້ 54,8% ໃນສົກຮຽນ 2019-2020 ຊຶ່ງເພີ່ມຈາກ 47,8% ໃນສົກຮຽນ 2015-2016. ເຖິງຢ່າງໃດກໍດີ ມັນກໍຍັງບໍ່ສາມາດບັນລຸໄດ້ຄາດໝາຍທີ່ໄດ້ປັບປຸງໃນໄລຍະປະເມີນກາງສະໄໝ ຄື 56%.
- ການເລື່ອນຈາກ ມ.4 ໄປສູ່ອາຊີວະສຶກສາບັນລຸໄດ້ 3,8% ໃນສົກຮຽນ 2019-2020, ຊຶ່ງບໍ່ສາມາດບັນລຸໄດ້ ຄາດໝາຍ 5% ທີ່ກຳນົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ ພາຍໃນປີ 2020.

- ອັດຕາການເຂົ້າຮຽນສາຍອາຊີວະສຶກສາກໍໄດ້ເພີ່ມຂຶ້ນ ຍ້ອນມີການພັດທະນາຫຼັກສູດໃໝ່ ທີ່ສາມາດຕອບສະ ໜອງໄດ້ ແລະ ມີຄວາມສອດຄ່ອງກັບຕະຫຼາດແຮງງານ.

**ຈຸດປະສົງຂອງນະໂຍບາຍທີ 3.** ລະບຸໄວ້ວ່າ: "ບັນລຸໄດ້ຄາດໝາຍດັດຊະນີຊັບສິນມະນຸດເພື່ອໃຫ້ປະເທດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ໂດຍຫຼຸດຜ່ອນຄວາມແຕກໂຕນລະຫວ່າງຍິງ-ຊາຍ, ຄົນພິການ, ຄົນທຸກຍາກຊົນເຜົ່າ ແລະ ອື່ນໆ".

**ຜົນສຳເລັດທີ່ສຳຄັນລວມມີ:**

- ໂດຍລວມ ໃນປີ 2020, ອັດຕາການເຂົ້າຮຽນລວມຊັ້ນມັດທະຍົມບັນລຸໄດ້ 71,3%, ຊຶ່ງອັດຕາຂອງນັກຮຽນຍິງຕໍ່າກວ່າເພດຊາຍ 4%. ຄາດໝາຍນີ້ ແມ່ນບໍ່ສາມາດບັນລຸຄາດໝາຍທີ່ກຳນົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ ພາຍໃນປີ 2020 ຄື 75%.
- ໃນປີ 2015 ໄດ້ມີການວັດອັດຕາການຮູ້ໜັງສື, ອັດຕາການຮູ້ໜັງສືຂອງຊາວໜຸ່ມ (15-24 ປີ) ແມ່ນ 92,4% (90,4% ສຳລັບເພດຍິງ) ທຽບໃສ່ຄາດໝາຍ 99% ພາຍໃນປີ 2020. ສຳລັບອັດຕາການຮູ້ໜັງສືຂອງຜູ້ໃຫຍ່ (15 ປີຂຶ້ນໄປ) ແມ່ນ 84% (79% ສຳລັບເພດຍິງ) ທຽບໃສ່ຄາດໝາຍ 95% ພາຍໃນປີ 2020.

**ຈຸດປະສົງຂອງນະໂຍບາຍທີ 4** ລະບຸໄວ້ວ່າ "ຂະແໜງການມີແຜນການ, ງົບປະມານ ແລະ ມີການຕິດຕາມ ເພື່ອນຳໃຊ້ແຫຼ່ງທຶນຢ່າງມີປະສິດທິພາບ."

**ຜົນສຳເລັດທີ່ສຳຄັນລວມມີ:**

- ເຖິງວ່າຍັງບໍ່ມີຕົວເລກທີ່ເປັນທາງການ ສຳລັບຈຳນວນຄູ ແລະ ຜູ້ບໍລິຫານການສຶກສາ ທີ່ໄດ້ຮັບການຝຶກອົບຮົມໃນແຕ່ລະປີ, ແຕ່ກໍໄດ້ມີການຝຶກອົບຮົມ ແລະ ຍົກລະດັບໃຫ້ແກ່ພວກດັ່ງກ່າວເປັນຈຳນວນຫຼວງຫຼາຍໃນຫົວຂໍ້ຕ່າງໆ ພາຍໃຕ້ໂຄງການຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາກໍຄືພາຍໃຕ້ງົບປະມານຂອງລັດຖະບານ.
- ຄູຢູ່ໃນໂຮງຮຽນປະຖົມ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ໄດ້ຮັບການຝຶກອົບຮົມໃນການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ.
- ງົບປະມານຂອງຂະແໜງການສຶກສາ ແລະ ກິລາ ທີ່ໄດ້ຮັບຈາກງົບປະມານລັດ ລວມທັງງົບປະມານຊ່ວຍເຫຼືອທາງການເພື່ອການພັດທະນາ ແມ່ນ 13,1%. ໃນປີ 2020, ຖ້າບໍ່ລວມ ງົບປະມານຊ່ວຍເຫຼືອທາງການເພື່ອການພັດທະນາ ແມ່ນ 15,4% ທຽບໃສ່ຄາດໝາຍທີ່ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2020 ຕັ້ງໄວ້ແມ່ນສູງກວ່າ 17%.

**ຈຸດປະສົງຂອງນະໂຍບາຍທີ 5** ລະບຸໄວ້ວ່າ "ກິລາ ກາຍະກຳລາວ ຄ່ອຍເຊື່ອມໂຍງກັບມາດຕະຖານຂອງພາກພື້ນ ແລະ ສາກົນ".

**ຜົນສຳເລັດທີ່ສຳຄັນລວມມີ:**

- ຮອດປີ 2020, 30% ຂອງພົນລະເມືອງລາວ ໄດ້ເຂົ້າຮ່ວມໃນກິດຈະກຳ ກິລາ-ກາຍຍະກຳ ແລະ ການອອກກຳລັງກາຍເພື່ອສຸຂະພາບ.

**ຜົນໄດ້ຮັບລະດັບສູງທີ 1:** ຈຳນວນນັກຮຽນ ແຕ່ການສຶກສາກ່ອນໄວຮຽນ ຈົນຮອດ ມ.4 ເຂົ້າເຖິງການສຶກສາທີ່ມີຄຸນນະພາບທີ່ດີເພີ່ມຂຶ້ນ ໂດຍເອົາໃຈໃສ່ຜູ້ດ້ອຍໂອກາດ ພ້ອມທັງຮັບປະກັນຄວາມສະເໝີພາບຍິງ-ຊາຍ.

ການສະໜອງການສຶກສາກ່ອນໄວຮຽນ ໄດ້ມີການຂະຫຍາຍຕົວຢ່າງກວ້າງຂວາງໃນອັດຕາສ່ວນຂອງພົນລະເມືອງອາຍຸ 5 ປີ ເຂົ້າຮຽນໃນການສຶກສາກ່ອນໄວຮຽນສູງຂຶ້ນຈາກ 70,9% ໃນສົກຮຽນ 2015-2016 ເປັນ

82,7% ໃນສົກຮຽນ 2019-2020. ການຂະຫຍາຍຕົວດັ່ງກ່າວ ໄດ້ມີຂຶ້ນໃນທຸກໆແຂວງ ແລະ ມີຄວາມສະເໝີພາບກັນລະຫວ່າງຍິງ-ຊາຍ ດ້ວຍດັດຊະນີຄວາມເທົ່າທຽມທາງເພດຫຼຸດລົງລະຫວ່າງ 0,99 ແລະ 1,01 ແລະ 142 ໃນຈໍານວນ 148 ເມືອງ ມີອັດຕາເຂົ້າຮຽນຂອງເດັກນ້ອຍອາຍຸ 5 ປີ ສູງກວ່າ 60%.

ໃນຊັ້ນປະຖົມສຶກສາ ອັດຕາຈົບຊັ້ນລວມໃໝ່ ໃນຂັ້ນ ປ.5 ໃນທົ່ວປະເທດ ລະຫວ່າງສົກຮຽນ 2015-2016 ແລະ 2019-2020 ມີການປ່ຽນແປງເລັກໜ້ອຍ ຢູ່ລະຫວ່າງ 103,5% ແລະ 105,5% ແລະ ມີຄວາມສະເໝີພາບກັນລະຫວ່າງຍິງ-ຊາຍ ດ້ວຍດັດຊະນີຄວາມສະເໝີພາບຍິງຊາຍ ຢູ່ລະຫວ່າງ 0,99 ແລະ 1,00. ອັດຕາການຄ້າງຫ້ອງຫຼຸດລົງຈາກ 4,8% ໃນສົກຮຽນ 2015-2016 ເປັນ 3,1% ໃນປີ 2019-2020. ເບິ່ງແລ້ວຄືວ່າຫຼຸດລົງໜ້ອຍ ແຕ່ວ່າຖ້າສາມາດຫຼຸດລົງຫຼາຍ ຈະເຮັດໃຫ້ຫຼຸດຂະໜາດຂອງຫ້ອງຮຽນ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍຂອງຂະແໜງການລົງ. ບັນຫາທີ່ສໍາຄັນອີກ ແມ່ນຈະເຮັດໃຫ້ອາຍຸຂອງເດັກໃນເກນເຂົ້າຮຽນຊັ້ນມັດທະຍົມຕົ້ນຕໍ່າລົງ ຊຶ່ງເປັນຜົນໃຫ້ການໃຊ້ເວລາຢູ່ໂຮງຮຽນຍາວຂຶ້ນ. ຢູ່ຊັ້ນມັດທະຍົມຕົ້ນ ອັດຕາການເຂົ້າຮຽນລວມໃໝ່ ມ.4 ໄດ້ຮັບການປັບປຸງດີຂຶ້ນ ຊຶ່ງເພີ່ມຈາກ 70,4% ໃນສົກຮຽນ 2015-2016 ເປັນ 71,6% ໃນສົກຮຽນ 2019-2020 ດ້ວຍດັດຊະນີຄວາມສະເໝີພາບຍິງ-ຊາຍ ເພີ່ມຂຶ້ນຈາກ 0,94 ໃນສົກຮຽນ 2015-2016 ເປັນ 0,98 ໃນສົກຮຽນ 2019-2020. ສິ່ງທີ່ໜ້າພໍໃຈອີກອັນນຶ່ງ ຄື ອັດຕາການປະລະໃນຊັ້ນປະຖົມລະຫວ່າງ ສົກຮຽນ 2015-16 ຫາ 2019-2020 ຫຼຸດລົງເລັກນ້ອຍຈາກ 4,7% ເປັນ 4,1% ໃນສົກຮຽນ 2017-2018 ແລະ ຄ່ອຍໆເພີ່ມຂຶ້ນເປັນ 4,3% ໃນສົກຮຽນ 2019-2020. ອັດຕາການປະລະຂອງນັກຮຽນຍິງຫຼຸດຈາກ 4,5% ໃນສົກຮຽນ 2015-2016 ເປັນ 3,7% ໃນສົກຮຽນ 2019-2020. ໃນຂະນະດຽວກັນ ອັດຕາປະລະຂອງນັກຮຽນຊາຍຫຼຸດລົງພຽງແຕ່ 0,1% ຄື ຈາກ 5,0% ເປັນ 4,9%. ໂດຍລວມແລ້ວ ດັດຊະນີຄວາມສະເໝີພາບຍິງຊາຍສໍາລັບການປະລະການຮຽນໃນຊັ້ນປະຖົມ ເທົ່າກັບ 0,81 ໝາຍເຖິງນັກຮຽນຍິງປະລະ 4 ຄົນ ຕໍ່ນັກຮຽນຊາຍປະລະ 5 ຄົນ ຊຶ່ງຈະເກີດບັນຫາຕໍ່ການລອດເຫຼືອຂອງນັກຮຽນຊາຍ.

ຄຽງຄູ່ກັນນັ້ນ ເພື່ອເຮັດໃຫ້ການສຶກສາກ່ອນໄວຮຽນໄດ້ຮັບການປັບປຸງດີຂຶ້ນນັ້ນ ມີຫຼາຍໜ້າວຽກທີ່ໄດ້ຮັບຈັດຕັ້ງປະຕິບັດຄື: ໄດ້ພັດທະນາບັນດານະໂຍບາຍຕ່າງໆ, ທົບທວນຫຼັກສູດ ແລະ ສະໜອງຄູ່ມື ການຮຽນ-ການສອນ ຊຶ່ງປະກອບສ່ວນເຮັດໃຫ້ອັດຕາການເຂົ້າຮຽນ ແລະ ການຈົບຊັ້ນຂອງນັກຮຽນເພີ່ມຂຶ້ນ, ການປັບປຸງກົດໝາຍການສຶກສາເພື່ອໃຫ້ການສຶກສາຊັ້ນ ມັດທະຍົມຕົ້ນເປັນພາກບັງຄັບ, ສ້າງຕັ້ງກົມການສຶກສາກ່ອນໄວຮຽນ ແລະ ການຮັບຮອງເອົາຍຸດທະສາດ ແລະ ແຜນປະຕິບັດງານ (2016-2020) ເພື່ອສົ່ງເສີມນະໂຍບາຍການສຶກສາຮຽນຮ່ວມ.

**ຜົນໄດ້ຮັບລະດັບສູງທີ 2:** ຈໍານວນນັກຮຽນປະຖົມທີ່ມີຄວາມສາມາດເພິ່ງພາຕົນເອງໃນການອ່ານ, ການຂຽນ ແລະ ການຄໍານວນເລກເພີ່ມຂຶ້ນ.

ໄດ້ມີການນໍາໃຊ້ຫຼັກສູດໃໝ່ເປັນເທື່ອລະກ້າວ ພ້ອມທັງໄດ້ດໍາເນີນກິດຈະກໍາສະໜັບສະໜູນອື່ນໆ ໄປຄຽງຄູ່ກັນ ເຊັ່ນ: ທົບທວນ ແລະ ສະໜອງປຶ້ມແບບຮຽນ, ຄູ່ມືຄູ ແລະ ສື່ການຮຽນການສອນຕ່າງໆ ໄປຄຽງຄູ່ກັບການຝຶກອົບຮົມປະຈໍາການໃນການນໍາໃຊ້ຫຼັກສູດໃໝ່. ນອກຈາກນັ້ນ ກໍໄດ້ພັດທະນາຂອບປະເມີນຜົນການຮຽນຂອງນັກຮຽນ. ໂດຍນໍາໃຊ້ຂອບປະເມີນຜົນດັ່ງກ່າວ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໄດ້ດໍາເນີນການປະເມີນຜົນການຮຽນຂອງນັກຮຽນ ປ.3 ແລະ ມ.4 ຊຶ່ງຜົນການປະເມີນເຫັນວ່າຄວາມສາມາດໃນການຮຽນພາສາລາວ, ຄະນິດສາດ ແລະ ວິທະຍາສາດຂອງນັກຮຽນຊັ້ນມັດທະຍົມຕົ້ນ ແມ່ນຍັງຕໍ່າຫຼາຍ[4].

**ຜົນໄດ້ຮັບລະດັບສູງທີ 3:** ຈໍານວນຄູທີ່ມີວຸດທິການສຶກສາ ແລະ ຄຸນນະພາບເໝາະສົມກັບວິຊາສິດສອນ ເພີ່ມຂຶ້ນສົມຄູ່ກັບຜົນການຮຽນທີ່ດີຂອງນັກຮຽນໃນທຸກໆວິຊາຂອງຫຼັກສູດແຫ່ງຊາດ ແຕ່ຊັ້ນອະນຸບານຮອດຊັ້ນມັດທະຍົມ.

---

[4] ອີງໃສ່ບົດປະເມີນທີ່ນໍາສະເໜີໂດຍ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

ຫຼັກສູດສ້າງຄູ ກຳລັງໄດ້ຮັບການກວດແກ້ໃຫ້ສອດຄ່ອງກັບຫຼັກສູດການສຶກສາກ່ອນໄວຮຽນ, ປະຖົມ ແລະ ມັດທະຍົມຕົ້ນ, ຄຽງຄູ່ກັບການສ້າງຄວາມເຂັ້ມແຂງໃຫ້ແກ່ການລົງຝຶກຫັດຕົວຈິງຂອງນັກຮຽນຄູ. ທຸກໆຫຼັກສູດທີ່ກຳລັງປັບປຸງ ແມ່ນປະຕິບັດຕາມຫຼັກການທີ່ຖືເອົານັກຮຽນເປັນໃຈກາງ, ນຳໃຊ້ຫຼັກການສິດສອນແບບກ້າວໜ້າ ແລະ ແບບມີສ່ວນຮ່ວມ ພ້ອມທັງໄດ້ຝຶກອົບຮົມຄູສອນ ເພື່ອໃຫ້ພວກເຂົາສາມາດຮັບມືກັບນັກຮຽນທີ່ມີຄວາມຕ້ອງການທີ່ຫຼາກຫຼາຍໃນຫ້ອງຮຽນ. ຊຸດມາດຕະຖານຄູອີງໃສ່ຄວາມສາມາດສຳລັບພະນັກງານວິທະຍາໄລຄູ ທີ່ໄດ້ຖືກຮັບຮອງ ໃນປີ 2015 ໄດ້ສະໜອງພື້ນຖານໃຫ້ແກ່ການພັດທະນາລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ. ເພື່ອຊຸກຍູ້ວຽກດັ່ງກ່າວ ຂອບວຸດທິການສຶກສາແຫ່ງຊາດສຳລັບການພັດທະນາຄູ ແລະ ຂອບມາດຕະຖານການສິດສອນຂອງຄູຊັ້ນປະຖົມສຶກສາ ກໍໄດ້ຮັບການພັດທະນາຂຶ້ນໃນປີ 2019. ການຝຶກອົບຮົມສະເພາະສຳລັບຄູສອນ ເພື່ອນຳໃຊ້ຫຼັກສູດໃໝ່ຊັ້ນປະຖົມ ແລະ ຫ້ອງກຽມປະຖົມ ໄດ້ເລີ່ມຕົ້ນຈັດຕັ້ງປະຕິບັດ. ເພື່ອຍົກຄຸນນະພາບຂອງນັກຮຽນຄູທີ່ກຳລັງເຂົ້າສູ່ວິຊາຊີບ, ນັກຮຽນທຸກຄົນຕ້ອງໄດ້ຜ່ານການສອບເສັງຄັດເລືອກ.

**ຜົນໄດ້ຮັບລະດັບສູງທີ 4:** ໂຮງຮຽນທຸກແຫ່ງມີແຫຼ່ງທຶນ ແລະ ຊັບພະຍາກອນມະນຸດພຽງພໍເພື່ອປັບປຸງຜົນການຮຽນຂອງນັກຮຽນ.

ໄດ້ສະໜອງເງິນບໍລິຫານໂຮງຮຽນໃຫ້ບັນດາໂຮງຮຽນຕ່າງໆໃນທົ່ວປະເທດ ເພື່ອສະໜັບສະໜູນໃຫ້ແກ່ການວາງແຜນໃນລະດັບໂຮງຮຽນ ແລະ ຮັບປະກັນໃຫ້ມີອຸປະກອນຮັບໃຊ້ໃນຂັ້ນພື້ນຖານ. ມາດຕະຖານຄຸນນະພາບການສຶກສາ ໄດ້ຖືກນຳໃຊ້ທົ່ວໄປຢ່າງກວ້າງຂວາງ ເພື່ອຊ່ວຍເຫຼືອການວາງແຜນໃນຂັ້ນໂຮງຮຽນ ແລະ ການຈັດບູລິມະສິດ. ກະຊວງສຶກສາທິການ ແລະ ກິລາ ໄດ້ນຳໃຊ້ແຜນປະຈຳປີຂອງຂະແໜງການທີ່ມີການຄິດໄລ່ມູນຄ່າ ເພື່ອສ້າງຄວາມເຂັ້ມແຂງການເຊື່ອມໂຍງກັນ ລະຫວ່າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ, ແຜນການ ແລະ ງົບປະມານຂອງທ້ອງຖິ່ນ. ບັນດາຂັ້ນຕອນໃໝ່ສຳລັບການຈັດສັນຄູປະຖົມ ເພື່ອໃຫ້ມີລັກສະນະເທົ່າທຽມກວ່າເກົ່າໃນແຕ່ລະເມືອງ ໄດ້ຮັບການພັດທະນາ ແລະ ນຳໃຊ້ຢ່າງກວ້າງຂວາງ. ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດ 40 ເມືອງບູລິມະສິດ ໂດຍອີງໃສ່ສະພາບການພັດທະນາທາງດ້ານສັງຄົມ ແລະ ຕົວຊີ້ບອກດ້ານການສຶກສາ. ລະບົບຄຸ້ມຄອງຂໍ້ມູນກ່ຽວກັບການສະໜອງປຶ້ມແບບຮຽນໄດ້ຮັບການສ້າງຕັ້ງຂຶ້ນ, ແຕ່ວ່າຍັງຕ້ອງໄດ້ຮັບການພັດທະນາຕື່ມເພື່ອຊ່ວຍໃຫ້ເພີ່ມປະສິດທິຜົນໃນການປະຕິບັດງານ. ເພື່ອເພີ່ມປະສິດທິພາບໃນການນຳໃຊ້ຊັບພະຍາກອນຂອງລັດທີ່ມີຈຳກັດ, ກະຊວງສຶກສາທິການ ແລະ ກິລາ ໄດ້ຊຸກຍູ້ໃຫ້ຄູ່ຮ່ວມພັດທະນາ ຈັດບູລິມະສິດແຜນງານຂອງຕົນ/ການສະໜັບສະໜູນໂຄງການ ແລະ ລົງທຶນຢູ່ໃນບັນດາເມືອງດັ່ງກ່າວ.

**ຜົນໄດ້ຮັບລະດັບສູງທີ 5:** ຈຳນວນນັກຮຽນທີ່ຮຽນຈົບການສຶກສາຂັ້ນພື້ນຖານ ທີ່ມີຄວາມສາມາດຂັ້ນພື້ນຖານ ແລະ ຄວາມຮູ້ຕາມຄວາມຕ້ອງການເພື່ອສາມາດເຂົ້າເຮັດວຽກຕາມຕະຫຼາດແຮງງານ ຫຼື ເພື່ອສືບຕໍ່ຮຽນໃນການສຶກສາຫຼັງພື້ນຖານເພີ່ມຂຶ້ນ ຫຼື ກາຍເປັນຜູ້ປະກອບການ.

ໄດ້ມີການຈັດຕັ້ງປະຕິບັດບັນດາຍຸດທະສາດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020 ເພື່ອສົ່ງເສີມໃຫ້ຜູ້ຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ໄດ້ເຂົ້າຮຽນໃນສາຍອາຊີວະສຶກສາ. ຊຸກຍູ້ສົ່ງເສີມພາກເອກະຊົນໃນການລົງທຶນໃສ່ອາຊີວະສຶກສາ. ວິຊາກ່ຽວກັບຜູ້ປະກອບການ ໄດ້ຖືກບັນຈຸເຂົ້າໃນຫຼັກສູດຊັ້ນມັດທະຍົມສຶກສາຕອນປາຍ ແລະ ອາຊີວະສຶກສາ.

**ຜົນໄດ້ຮັບລະດັບສູງທີ 6:** ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ໄດ້ຮັບການປັບປຸງດີຂຶ້ນ ພ້ອມທັງຮັບປະກັນຄວາມສະເໝີພາບຍິງ-ຊາຍ.

ກະຊວງສຶກສາທິການ ແລະ ກິລາ ໄດ້ສະໜອງຫຼັກສູດການສຶກສາທຽບເທົ່າສຳລັບໄວໜຸ່ມ ເພື່ອເຮັດໃຫ້ທຸກຄົນ ໄດ້ມີການສຶກສາຢ່າງທົ່ວເຖິງ. ການຮູ້ໜັງສືຂອງຜູ້ໃຫຍ່ (ອາຍຸ 15 ປີ ຂຶ້ນໄປ) ໄດ້ເພີ່ມຂຶ້ນຈາກ 73% ໃນປີ

2005 ເປັນ 84,7% ໃນປີ 2015, ແຕ່ອັດຕາການຮູ້ໜັງສືຢູ່ໃນກຸ່ມຊົນເຜົ່າ ເຊິ່ງບໍ່ແມ່ນກຸ່ມ ລາວ-ໄຕ ແມ່ນຍັງຕໍ່າ. ອັດຕາການຮູ້ໜັງສືສໍາລັບກຸ່ມທີ່ເວົ້າພາສາລາວເປັນພາສາແມ່ ຫຼື ເປັນພາສາທ້ອງຖິ່ນ ແມ່ນ 78% ສໍາລັບເພດຊາຍ ແລະ 63% ສໍາລັບເພດຍິງ. ອັດຕາການຮູ້ໜັງສືຂອງກຸ່ມມອນ-ຂະແມ ແມ່ນ 67% ສໍາລັບເພດຊາຍ ແລະ ມີພຽງ ແຕ່ 38% ສໍາລັບເພດຍິງ. ສໍາລັບກຸ່ມຕິເບດ-ຈີນ ແມ່ນມີອັດຕາການຮູ້ໜັງສື ທີ່ຕໍ່າກວ່າທຸກກຸ່ມ ຄື 50% ສໍາລັບເພດຊາຍ ແລະ 35% ສໍາລັບເພດຍິງ. ການສໍາຫຼວດດັດຊະນີໝາຍສັງຄົມລາວ (LSIS) ໃນປີ 2017 ພົບວ່າ ໜຶ່ງສ່ວນສາມຂອງປະຊາຊົນທີ່ອາໄສຢູ່ ສປປ ລາວ ອາຍຸລະຫວ່າງ 15-30 ປີ ສາມາດອ່ານ ແລະ ຂຽນໄດ້, ຊຶ່ງສ່ວນໃຫຍ່ໄດ້ມີທັກສະເຫຼົ່ານີ້ໂດຍຜ່ານໂຮງຮຽນ. ນອກນັ້ນ, ຍັງພົບອີກວ່າອັດຕາການກຶກຮູ້ໜັງສື ກໍຫຼຸດລົງຢ່າງໄວວາໃນແຕ່ລະລຸ້ນ ເຖິງ 11% ສໍາລັບເພດຊາຍ ແລະ 17% ສໍາລັບເພດຍິງ (ກຸ່ມອາຍຸ 15 ຫາ 17 ປີ) ຊຶ່ງສອດຄ່ອງກັບຂໍ້ມູນທີ່ວ່າ ອັດຕາການເຂົ້າຮຽນແມ່ນເພີ່ມຂຶ້ນໃນທຸກລະດັບການສຶກສາ.

**ຜົນໄດ້ຮັບລະດັບສູງທີ 7:** ຄຸນນະພາບ ແລະ ຈໍານວນຜູ້ຮຽນຈົບການສຶກສາຫຼັງຂັ້ນພື້ນຖານ ທັງພາກລັດ ແລະ ເອກະຊົນ ສອດຄ່ອງກັບເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສະໄໝທີ VIII.

ໃນຊັ້ນມັດທະຍົມປາຍ ອັດຕາເຂົ້າຮຽນລວມໃໝ່ໃນຂັ້ນ ມ.7 ໄດ້ຮັບການປັບປຸງດີຂຶ້ນຢ່າງຈະແຈ້ງ ຈຶ່ງເຮັດໃຫ້ອັດຕາເຂົ້າຮຽນລວມເພີ່ມຂຶ້ນຈາກ 42,7% ໃນສົກຮຽນ 2015-2016 ເປັນ 54,8% ໃນສົກຮຽນ 2019-2020 ຄຽງຄູ່ກັບການເພີ່ມຂຶ້ນຂອງດັດຊະນີຄວາມເທົ່າທຽມທາງເພດຊຶ່ງສູງຂຶ້ນຈາກ 0,87 ໃນສົກຮຽນ 2015-16 ເປັນ 0,91 ໃນສົກຮຽນ 2019-2020. ໄດ້ນໍາໃຊ້ຫຼັກສູດໃໝ່ໃນສາຍອາຊີວະສຶກສາ ພ້ອມທັງໄດ້ມີການຝຶກອົບຮົມໃຫ້ແກ່ຄູສອນ ເພື່ອແນໃສ່ປັບ ປຸງຄຸນນະພາບຂອງການສະໜອງການສຶກສາຫຼັງຂັ້ນພື້ນຖານ ໃຫ້ສອດຄ່ອງກັບເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ. ໃນຂະນະທີ່ມີການຂະຫຍາຍຫຼັກສູດເພື່ອສະໜອງຄວາມຕ້ອງການນີ້, ກໍໄດ້ມີຄວາມພະຍາຍາມ ເພື່ອຮັບປະກັນໂອກາດການເຂົ້າເຖິງການສຶກສາຂອງເດັກຍິງ/ແມ່ຍິງ ແລະ ຜູ້ດ້ອຍໂອກາດ. ການໃຫ້ໂກຕາການສຶກສາ 20% ສໍາລັບເພດຍິງຢູ່ໃນບາງຫຼັກສູດທີ່ມີຄວາມຕ້ອງການສູງ ກວມເອົາອາຊີບ "ກໍາມະກອນ ຫຼື ອາຊີບທີ່ເຮັດວຽກຕາມໂຮງຈັກໂຮງງານ" ແລະ ແຜນງານການໃຫ້ບັດທຶນການສຶກສາ (ຊຶ່ງໄດ້ມີການຈັດສັນໄວ້ສະເພາະໃຫ້ແມ່ຍິງ) ແມ່ນກໍາລັງຢູ່ໃນການດໍາເນີນການ. ຄາດໝາຍທີ່ຈະເພີ່ມການເຂົ້າຮຽນຢູ່ໃນມະຫາວິທະຍາໄລຂອງລັດ ໄດ້ມີການຫຼຸດລົງເພື່ອສຸມໃສ່ການປັບປຸງຄຸນນະພາບຂອງການຮຽນ-ການສອນໃຫ້ຫຼາຍຂຶ້ນ ແລະ ເພື່ອສ້າງມາດຕະຖານຕໍ່າສຸດໃຫ້ສອດຄ່ອງກັບມາດຕະຖານຂອງອາຊຽນ; ໄດ້ມີການວາງແຜນການລົງທຶນ ເພື່ອສ້າງສູນແຫ່ງຄວາມເປັນເລີດດ້ານການກະເສດ, ໂລຈິສຕິກ (Logistics), ວິສະວະກໍາ, ທ່ອງທ່ຽວ ແລະ ການສຶກສາສິ່ງແວດລ້ອມ. ຄູ່ຮ່ວມພັດທະນາກໍໄດ້ໃຫ້ການສະໜັບສະໜູນທຶນການສຶກສາ ສໍາລັບໄປຮຽນຕໍ່ປະລິນຍາໂທ ແລະ ປະລິນຍາເອກທັງຢູ່ພາຍໃນ ແລະ ຕ່າງປະເທດ.

**ຜົນໄດ້ຮັບລະດັບສູງທີ 8:** ຂະແໜງການສຶກສາ ແລະ ກິລາ ມີໂຄງສ້າງ, ມີຊັບພະຍາກອນ ແລະ ມີການຕິດຕາມທີ່ເໝາະສົມ ໂດຍນໍາໃຊ້ແຜນປະຈໍາປີຂອງຂະແໜງການທີ່ມີການຄິດໄລ່ຄ່າໃຊ້ຈ່າຍ ແລະ ເຊື່ອມໂຍງກັບແຜນພັດທະນາການສຶກສາ ແລະ ກິລາ 5 ປີ (2016-2020).

ເພື່ອຕອບສະໜອງຄວາມຕ້ອງການໃນການພັດທະນາການສຶກສາ ແລະ ກິລາ ແລະ ເປົ້າໝາຍຂອງລັດຖະບານເພື່ອຫຼຸດຜ່ອນຈໍານວນພະນັກງານລັດລົງ, ກະຊວງສຶກສາທິການ ແລະ ກິລາ ໄດ້ມີການປັບປຸງໂຄງຮ່າງການຈັດຕັ້ງ ໂດຍການທົບທວນຄືນພາລະບົດບາດຂອງບັນດາກົມພາຍໃນກະຊວງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາ ເມືອງ ແລະ ບັນດາສູນຕ່າງໆ. ພາລະບົດບາດໃໝ່ນີ້ໄດ້ກໍານົດໜ້າທີ່, ຄວາມຮັບຜິດຊອບ, ຂອບເຂດສິດ, ໂຄງສ້າງ, ບຸກຄະລາກອນ ແລະ ວິທີການເຮັດວຽກ. ແຜນປະຈໍາປີຂອງຂະແໜງການທີ່ມີການຄາດຄະເນມູນຄ່າ ໄດ້ຮັບການສະເໜີນໍາໃຊ້ ເພື່ອເປັນເຄື່ອງມືໃນການວາງແຜນ ການຈັດຕັ້ງປະຕິບັດແຜນ 5 ປີ ໃຫ້ເປັນແຜນປະຈໍາປີ. ແຜນດັ່ງກ່າວນີ້ ໄດ້ສ້າງຂຶ້ນໃນຂັ້ນສູນກາງ ແລະ ທ້ອງຖິ່ນ, ຊຶ່ງໄດ້ມີ

ການທົດລອງຢູ່ຂັ້ນເມືອງ. ພ້ອມນັ້ນ ໄດ້ປັບປຸງການວິເຄາະລາຍຈ່າຍ ແລະ ງົບປະມານ ເພື່ອເປັນທາງເລືອກດ້ານນະໂຍບາຍ ແລະ ວິເຄາະຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ ໂດຍອີງໃສ່ງົບປະມານຕົວຈິງ ແລະ ຂໍ້ຈຳກັດດ້ານຂີດຄວາມສາມາດ. ຄະນະກຳມະການແຜນການ ແລະ ການເງິນ ແລະ ຄະນະກຳມະການຈັດສັນຄູໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອປັບປຸງທັງດ້ານການຈັດສັນຊັບພະຍາກອນມະນຸດ ແລະ ດ້ານການເງິນຂອງຂະແໜງການ ໂດຍສະເພາະໃນຂັ້ນແຂວງ.

**ຜົນໄດ້ຮັບລະດັບສູງທີ 9:** ແຜນການເງິນສຳລັບແຜນພັດທະນາການສຶກສາ ແລະ ກິລາ ເນັ້ນໃສ່ຫຼຸດຜ່ອນຄວາມແຕກໂຕນລະຫວ່າງບົດບາດຍິງ-ຊາຍ, ຊົນເຜົ່າ, ຄວາມທຸກຍາກ ແລະ ທີ່ຕັ້ງພູມສັນຖານ.

ສະໜອງທຶນການສຶກສາໃຫ້ນັກຮຽນໃນໂຮງຮຽນຊົນເຜົ່າ ແລະ ນັກຮຽນໃນສະຖາບັນອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ໃນຈຳນວນ 40% ໂດຍສະເພາະນັກຮຽນຈາກຄອບຄົວທີ່ທຸກຍາກ. ກະຊວງສຶກສາທິການ ແລະ ກິລາ ໄດ້ຫັນເອົາການຊ່ວຍເຫຼືອທາງການເພື່ອການພັດທະນາ ລົງໃສ່ເມືອງທີ່ດ້ອຍໂອກາດເປັນສ່ວນໃຫຍ່. ການປະຕິບັດດັ່ງກ່າວແມ່ນເປັນທິດທາງທີ່ເຂັ້ມແຂງ ໃນການຫັນເອົາງົບປະມານພາກບໍລິຫານທີ່ບໍ່ແມ່ນເງິນເດືອນລົງສູ່ແຂວງ ແລະ ເມືອງ ແລະ ຜົນໄດ້ຮັບແມ່ນເຮັດໃຫ້ເມືອງ ເລີ່ມໄດ້ຮັບງົບປະມານບໍລິຫານວຽກງານຫຼາຍຂຶ້ນ ໃນ 5 ປີ ຜ່ານມາ. ເນື່ອງຈາກມີຂໍ້ຈຳກັດດ້ານງົບປະມານທີ່ກຳລັງເພີ່ມຂຶ້ນ, ກະຊວງສຶກສາທິການ ແລະ ກິລາ ກຳລັງປະຕິບັດກິດຈະກຳ ເພື່ອປັບປຸງປະສິດທິຜົນໃນການຈັດສັນ ແລະ ຄຸ້ມຄອງງົບປະມານ ຊຶ່ງກວມເອົາແຜນຈັດສັນຄູ, ປັບປຸງວິທີການປະຕິບັດການສ້າງແຜນທີ່ມີການຄິດໄລ່ມູນຄ່າໃນຂັ້ນກະຊວງ ແລະ ແຂວງ ພ້ອມທັງພັດທະນາລະບົບ (ເຊັ່ນ: ລະບົບຄຸ້ມຄອງຂໍ້ມູນດ້ານແຜນການ ແລະ ງົບປະມານ) ແລະ ວິທີການເພື່ອເຮັດໃຫ້ການຈັດສັນງົບປະມານໃນທຸກໆຂັ້ນ ຕອບສະໜອງໃຫ້ບັນດາບູລິມະສິດທີ່ເປັນລັກສະນະຍຸດທະສາດ ແລະ ເງື່ອນໄຂທ້ອງຖິ່ນ (ຂອງເມືອງ).

**ຜົນໄດ້ຮັບລະດັບສູງທີ 10: ການສ້າງນະໂຍບາຍທີ່ອີງໃສ່ຫຼັກຖານ.**

ກະຊວງສຶກສາທິການ ແລະ ກິລາ ໄດ້ກະກຽມແຜນຍຸດທະສາດ ເພື່ອຈັດຕັ້ງປະຕິບັດລະບົບຄຸ້ມຄອງຂໍ້ມູນດ້ານການສຶກສາ ແລະ ກິລາ (LESMIS), ໃນຂະນະທີ່ຄຸນນະພາບ ແລະ ຄວາມວ່ອງໄວໃນການສະໜອງຂໍ້ມູນກໍຕ້ອງໄດ້ຮັບການປັບປຸງໃຫ້ດີຂຶ້ນ. ນອກຈາກນີ້, ກໍກຳລັງພັດທະນາລະບົບຄຸ້ມຄອງຂໍ້ມູນການວາງແຜນການ ແລະ ການເງິນ (PBMIS) ເພື່ອໃຫ້ເຊື່ອມຕໍ່ກັບຖານຂໍ້ມູນບຸກຄະລາກອນ ແລະ ຖານຂໍ້ມູນເງິນເດືອນຢ່າງມີປະສິດຜົນ. ນອກຈາກນັ້ນ ຕ້ອງມີວິທີການໃນການລວມເອົາຂໍ້ມູນສຳລັບເດັກພິການເຂົ້າໃນຖານຂໍ້ມູນ (EMIS).

**ຜົນໄດ້ຮັບລະດັບສູງທີ 11:** ພົນລະເມືອງລາວທຸກຄົນມີສຸຂະພາບເຂັ້ມແຂງ, ມີນັກກິລາສະໝັກຫຼິ້ນ ແລະ ນັກກິລາອາຊີບທີ່ມີຄຸນນະພາບ ເຊື່ອມໂຍງກັບນັກກິລາ-ກາຍຍະກຳ ຂອງພາກພື້ນ ແລະ ສາກົນ ແລະ ຮູ້ຮັກສາສິລະປະວັດທະນະທຳຂອງຊາດ.

ປະຊາຊົນທຸກເພດທຸກໄວ ໄດ້ເຂົ້າຮ່ວມໃນກິດຈະກຳການອອກກຳລັງກາຍເພື່ອສຸຂະພາບ ຊຶ່ງບັນລຸໄດ້ 30% ເມື່ອທຽບໃສ່ປະຊາກອນຂອງປະເທດ; ໄດ້ສຳເລັດການສ້າງຕັ້ງໂຮງຮຽນພອນສະຫວັນດ້ານກິລາ ແລະ ສະຖາບັນການກິລາ-ກາຍຍະກຳ ໂດຍມີຈຸດປະສົງເພື່ອຜະລິດນັກກິລາລຸ້ນຕໍ່ໄປ ແລະ ບຸກຄະລາກອນກິລາໃນລະດັບຊາດ ແລະ ລະດັບວິຊາຊີບ.

ສປປ ລາວ ໄດ້ສົ່ງນັກກິລາ ທີມຊາດ ຈຳນວນ 957 ເທື່ອຄົນ ເຂົ້າຮ່ວມການແຂ່ງຂັນໃນລະດັບອະນຸພາກພື້ນ ພາກພື້ນ ແລະ ສາກົນ ຕາມການເຊີນ. ນັກກິລາ ລາວ ໄດ້ເຂົ້າຮ່ວມການແຂ່ງຂັນໂອແລມປິກເປັນຄັ້ງທຳອິດ ໃນປີ 2016 ທີ່ປະເທດບຣາຊິນ, ເຂົ້າຮ່ວມການແຂ່ງຂັນກິລາ ໂອແລັມປິກ ຄົນພິການ ຄັ້ງທີ 11 ທີ່ປະເທດບຣາຊິນ ໃນປີ

2017 ແລະ ເຂົ້າຮ່ວມການແຂ່ງຂັນກິລາ ຊີເກມຄັ້ງທີ 29, ທີ່ຈັດຂຶ້ນທີ່ປະເທດມາເລເຊຍໃນປີ 2017, ຍາດໄດ້ 2 ຫຼຽນຄຳ, 3 ຫຼານເງິນ ແລະ 21 ຫຼຽນທອງແດງ.

ເຂົ້າຮ່ວມການແຂ່ງຂັນກິລາ ຄົນພິການ (Para-Games) ຄັ້ງທີ 9 ທີ່ປະເທດມາເລເຊຍ ໃນປີ 2017 ຍາດມາໄດ້ 4 ຫຼຽນເງິນ ແລະ 4 ຫຼຽນທອງແດງ; ເຂົ້າຮ່ວມການແຂ່ງຂັນກິລາ ຄົນພິການອາຊີ (Asian Para Games) ຄັ້ງທີ 12 ທີ່ປະເທດອິນໂດເນເຊຍຈັດຂຶ້ນໃນປີ 2018 ໄດ້ຮັບຫຼຽນຄຳປະຫວັດສາດອັນດັບ 1 ຄັ້ງທຳອິດ ຈາກການແຂ່ງຂັນຍົກນໍ້າໜັກຊາຍ; ເຂົ້າຮ່ວມຊີເກມຄັ້ງທີ 29 ທີ່ປະເທດມາເລເຊຍ, ການແຂ່ງຂັນກິລາ ເອຊຽນເກມ ຄັ້ງທີ 18 ທີ່ປະເທດອິນໂດເນເຊຍຈັດຂຶ້ນ ໃນປີ 2018 ສາມາດຍາດໄດ້ 3 ຫຼຽນເງິນ ແລະ 2 ຫຼຽນທອງແດງ, ເປັນອັນດັບທີ 31 ຂອງ 45 ປະເທດ; ໄດ້ເຂົ້າຮ່ວມງານມະຫາກຳກິລາ ນັກຮຽນ ທັງໝົດ 4 ຄັ້ງ, ຍາດໄດ້ໄດ້ 2 ຫຼຽນເງິນ ແລະ 14 ຫຼຽນທອງແດງ.

ນັກກິລາລາວໄດ້ເປັນຊະນະເລີດຂອງໂລກໃນການແຂ່ງຂັນກະຕໍ້ທວາຍ (ປະເພດຄູ່ຍິງ ແລະ ຄູ່ຊາຍ 2 ລາຍການ); Vovinam (ຊາຍດ່ຽວ ແລະ ປະເພດ 4 ຄົນ) ແລະ ໄດ້ອັນດັບ 2 ຂອງໂລກ ໃນການແຂ່ງຂັນເປຕັງ (ປະເພດຍິງ 3 ຄົນ).

ກົມກິລາ ລະດັບສູງ, ກົມກິລາມວນຊົນ, ກົມພະລະ ແລະ ສີລະປະສຶກສາ ໂດຍການປະສານງານກັບຄະນະກຳມະການໂອລິມປິກແຫ່ງຊາດ ແລະ ສະຫະພັນກິລາ ແຫ່ງຊາດ ໄດ້ຈັດການແຂ່ງຂັນກິລາ-ກາຍຍະກຳ ແລະ ການແຂ່ງຂັນກິລາ ໃນວັນສຳຄັນຕ່າງໆຂອງຊາດ; ໄດ້ຈັດ ແລະ ເປັນເຈົ້າພາບຈັດການແຂ່ງຂັນກິລາ ໃນລະດັບຊາດ ແລະ ສາກົນ, ໄດ້ຈັດງານມະຫະກຳກິລາ ນັກຮຽນທົ່ວປະເທດ ຄັ້ງທີ 6 ທີ່ແຂວງບໍລິຄຳໄຊ ໃນປີ 2017 ເຊິ່ງປະກອບມີ 10 ປະເພດກິລາ.

## 3. ສະພາບເງື່ອນໄຂສຳລັບການສ້າງແຜນ 2021-2025

### 3.1 ຄວາມເປັນມາ

ການປະເມີນເຄິ່ງສະໄໝຂອງແຜນພັດທະນາການສຶກສາ ແລະ ກິລາ 2016-2020 ໄດ້ດຳເນີນໃນທ້າຍປີ 2018, ຊຶ່ງບົດລາຍງາງສະໄໝດັ່ງກ່າວ ໄດ້ກຳນົດ 5 ເນື້ອໃນ ແລະ ຂົງເຂດທີ່ພົບເຫັນໃນຜົນຂອງການສຶກສາວິໄຈດັ່ງນີ້:

1) ເຖິງວ່າການພັດທະນາການສຶກສາໄດ້ມີຜົນສຳເລັດຢ່າງຫຼວງຫຼາຍ, ແຕ່ເຫັນວ່າການພັດທະນາ ຍັງມີຄວາມແຕກໂຕນກັນລະຫວ່າງຕົວເມືອງ ແລະ ຊົນນະບົດ, ລະຫວ່າງເມືອງທຸກ ແລະ ເມືອງບໍ່ທຸກ ແລະ ລະຫວ່າງປະຊາກອນໃນກຸ່ມພາສາທີ່ແຕກຕ່າງກັນ. ດັ່ງນັ້ນ, ຈະຈັດສັນຊັບພະຍາກອນມະນຸດ ແລະ ການເງິນແນວໃດເພື່ອຫຼຸດຜ່ອນຄວາມແຕກໂຕນ, ລວມທັງການປັບປຸງສູດໃນການຈັດສັນງົບປະມານບໍລິຫານຢູ່ໃນທຸກລະດັບ?
2) ຜົນການຮຽນຕໍ່າຢູ່ໃນລະດັບປະຖົມສຶກສາ ຊຶ່ງມັນຈະມີຜົນກະທົບຕໍ່ການສຶກສາໃນຊັ້ນຕໍ່ໆໄປ ລວມທັງສາຍອາຊີວະສຶກສາ. ດັ່ງນັ້ນ, ຕ້ອງສຶກສາວ່າ ມີປັດໄຈອັນໃດແນ່ທີ່ໄດ້ເຮັດໃຫ້ມີຜົນການຮຽນຂອງນັກຮຽນຕໍ່າ?
3) ການຈັດສັນ ແລະ ການນຳໃຊ້ຄູຍັງບໍ່ມີປະສິດທິພາບ. ດັ່ງນັ້ນ ຕ້ອງສ້າງຍຸດທະສາດໄລຍະຍາວໃນການຄຸ້ມຄອງ ແລະ ນຳໃຊ້ຄູຄືແນວໃດ?
4) ອັດຕາການເລື່ອນຊັ້ນຈາກປະຖົມໄປສູ່ມັດທະຍົມຕອນຕົ້ນຕໍ່າ ແລະ ອັດຕາການປະລະຢູ່ໃນຂັ້ນຕົ້ນຂອງມັດທະຍົມຕອນຕົ້ນເພີ່ມຂຶ້ນ. ດັ່ງນັ້ນ, ຕ້ອງສຶກສາເຖິງສາຍເຫດທີ່ພາໃຫ້ເກີດບັນຫາດັ່ງກ່າວ.
5) ການມີສ່ວນຮ່ວມຂອງພາກເອກະຊົນ ໃນການກໍ່ສ້າງສີມືແຮງງານຍັງບໍ່ກວ້າງຂວາງ. ການນຳໃຊ້ແຫຼ່ງຂໍ້ມູນທີ່ມີຢູ່ໃນປັດຈຸບັນ ເພື່ອປະເມີນແນວໂນ້ມຄວາມຕ້ອງການຂອງຕະຫຼາດແຮງງານໃນແຕ່ລະໄລຍະຍັງບໍ່ທົ່ວເຖິງ. ຍັງມີຂໍ້ມູນຫຍັງອີກ ທີ່ຍັງຂາດຫາຍ?

ຫົວຂໍ້ສຳຄັນ 5 ຢ່າງ ທີ່ໄດ້ກຳນົດໃນການທົບທວນກາງສະໄໝ ໄດ້ຖືກນຳໃຊ້ເພື່ອກຳນົດຈຸດປະສົງໃນເບື້ອງຕົ້ນຂອງແຜນພັດທະນາຂອງຂະແໜງການສຶກສາ ແລະ ກິລາ ແລະ ການກຳນົດສິ່ງທ້າທາຍຫຼັກ ແລ້ວກ້າວໄປສູ່ການກຳນົດຄຳຖາມ ແລະ ກິດຈະກຳຕົ້ນຕໍ ທີ່ໄດ້ຜ່ານການປຶກສາຫາລືກັນ ໃນຂະບວນການຈັດກອງປະຊຸມປຶກສາຫາລືທັງໃນຂັ້ນສູນກາງ ແລະ ແຂວງ. ຜົນການປຶກສາຫາລື ມີລາຍລະອຽດດັ່ງນີ້:

1. *ເຖິງວ່າການພັດທະນາການສຶກສາໄດ້ມີຜົນສຳເລັດຢ່າງຫຼວງຫຼາຍ, ແຕ່ເຫັນວ່າການພັດ ທະນາຍັງມີຄວາມແຕກໂຕນກັນລະຫວ່າງຕົວເມືອງ ແລະ ຊົນນະບົດ, ລະຫວ່າງເມືອງທຸກ ແລະ ເມືອງບໍ່ທຸກ ແລະ ລະຫວ່າງປະຊາກອນໃນກຸ່ມພາສາທີ່ແຕກຕ່າງກັນ. ດັ່ງນັ້ນ, ຈະຈັດສັນຊັບພະຍາກອນມະນຸດ ແລະ ການເງິນແນວໃດເພື່ອຫຼຸດຜ່ອນຄວາມແຕກໂຕນ, ລວມທັງການປ່ຽນແປງສູດໃນການຈັດສັນງົບປະມານການບໍລິຫານຢູ່ໃນທຸກລະດັບ.*

- ໂຮງຮຽນໃນ 40 ເມືອງບູລິມະສິດຢູ່ໃນສະພາບທຸກຍາກ, ຂາດແຄນອາຫານ ແລະ ຢູ່ຫ່າງໄກສອກຫຼີກ. ໂຮງຮຽນເຫຼົ່ານັ້ນຍັງຂາດຄູສອນ ແລະ ຈະຕ້ອງອາໄສຄູສອນຫ້ອງຄວບ, ຄູອາສາສະໝັກ ຫຼື ຄູສອນບໍ່ຖືກກັບວິຊາທີ່ຮຽນມາ.
- ຕ້ອງການເງິນອຸດໜູນເພີ່ມ ເພື່ອເປັນສິ່ງຈູງໃຈໃຫ້ແກ່ຄູທີ່ໄປສອນຢູ່ໂຮງຮຽນເຫຼົ່ານີ້ ຄຽງຄູ່ກັບການບຳລຸງຍົກລະດັບ ເພື່ອສາມາດສິດສອນໄດ້ ເຊັ່ນ ການສອນຫ້ອງຄວບ.
- ການສະໜອງອາຫານໃນໂຮງຮຽນໃນບັນດາເມືອງດ້ອຍໂອກາດດັ່ງກ່າວມີຄວາມຈຳເປັນ.
- ສູດຄິດໄລ່ການສະໜອງເງິນບໍລິຫານໂຮງຮຽນ ບໍ່ໄດ້ກວມເອົາຄ່າໃຊ້ຈ່າຍທີ່ສູງສຳລັບໂຮງຮຽນນ້ອຍ.
- ເງິນບໍລິຫານທີ່ມີຈຳນວນຈຳກັດໃນຂັ້ນເມືອງ ເຮັດໃຫ້ມີຄວາມຫຍຸ້ງຍາກໃນການຊ່ວຍເຫຼືອໂຮງຮຽນຂະໜາດນ້ອຍໃນເຂດຫ່າງໄກສອກຫຼີກ ຊຶ່ງມັກເກີດມີຄ່າໃຊ້ຈ່າຍສູງ ແລະ ໃຊ້ເວລາເດີນທາງໄກ ເວລາມາຮັບເງິນບໍລິຫານໂຮງຮຽນ. ດັ່ງນັ້ນ, ຄວນເພີ່ມງົບປະມານ ແລະ ໃຫ້ບູລິມະສິດ ແກ່ໂຮງຮຽນດ້ອຍໂອກາດ.

2. *ຜົນການຮຽນຕໍ່າຢູ່ໃນລະດັບປະຖົມສຶກສາ ຊຶ່ງມັນຈະມີຜົນກະທົບຕໍ່ການສຶກສາໃນຊັ້ນຕໍ່ໆໄປ. ດັ່ງນັ້ນ ຕ້ອງສຶກສາວ່າມີປັດໄຈອັນໃດ ທີ່ໄດ້ເຮັດໃຫ້ມີຜົນການຮຽນຂອງນັກຮຽນຕໍ່າ?*

- ຄວາມຮູ້ດ້ານວິຊາການ ແລະ ທັກສະດ້ານວິຊາຄູຂອງຄູທີ່ຍັງຕໍ່າ ຈະເຮັດໃຫ້ຜົນການຮຽນຂອງນັກຮຽນຕໍ່າ. ຜົນຂອງການປະເມີນການຮຽນຂອງນັກຮຽນ ມ.4 ໃນປີ 2019 ໄດ້ຢັ້ງຢືນໃຫ້ເຫັນຢ່າງຊັດເຈນວ່າ ຜົນການຮຽນໃນວິຊາພາສາລາວ, ຄະນິດສາດ ແລະ ວິທະຍາສາດຂອງນັກຮຽນແມ່ນຕໍ່າ.
- ຫຼັກສູດມີຫຼາຍວິຊາຮຽນ ແລະ ຄູສຸມໃສ່ແຕ່ສິດສອນໃຫ້ສຳເລັດຕາມຫຼັກສູດທີ່ແອອັດດັ່ງກ່າວ ແທນທີ່ຈະກວດກາເບິ່ງນັກຮຽນຂອງຕົນວ່າເຂົ້າໃຈເນື້ອໃນທີ່ສິດສອນຫຼືບໍ່.
- ການສອນບຳລຸງເພື່ອຊ່ວຍນັກຮຽນທີ່ຮຽນອ່ອນ ແມ່ນຍັງບໍ່ທັນສາມາດປະຕິບັດໄດ້.
- ຄູສອນຂາດການຊ່ວຍເຫຼືອດ້ານຫຼັກວິຊາຄູ, ຄູນິເທດສຸມໃສ່ແຕ່ກວດກາການແຕ່ງບົດສອນ ແລະ ວຽກບໍລິຫານອື່ນໆ ຫຼາຍກວ່າການຮ່ວມໂມງສອນ ເພື່ອກວດກາເບິ່ງຜົນການສິດສອນຂອງຄູ. ຄູສຶກສານິເທດຍັງຕ້ອງການ ການຝຶກອົບຮົມເພີ່ມເຕີມກ່ຽວກັບວິທີການສັງເກດ ແລະ ສະໜັບສະໜູນຄູສອນ ໃນການສອນນັກຮຽນທີ່ມີຄວາມຕ້ອງການທີ່ແຕກຕ່າງກັນໃນຫ້ອງຮຽນ.
- ຂາດເຂີນປຶ້ມຕຳລາຮຽນ ແລະ ການຈັດພິມປຶ້ມແບບຮຽນເພື່ອທົດແທນອັນທີ່ເສຍຫາຍ ຍັງບໍ່ເປັນປົກກະຕິຍ້ອນງົບປະມານມີຈຳກັດ ແລະ ອັດຕາການສູນເສຍຂອງປຶ້ມກໍສູງ ຍ້ອນການນຳໃຊ້ຫຼາຍເກີນໄປ, ສະພາບອາກາດ ແລະ ຂາດການເກັບຮັກສາທີ່ເໝາະສົມ.

3. *ການຈັດສັນ ແລະ ການນຳໃຊ້ຄູ ຍັງບໍ່ມີປະສິດທິພາບ. ດັ່ງນັ້ນ ຕ້ອງສ້າງຍຸດທະສາດໄລຍະຍາວໃນການຄຸ້ມຄອງ ແລະ ນຳໃຊ້ຄູ.*

- ການສັບຊ້ອນຄູຄືນໃໝ່ພາຍໃນກຸ່ມໂຮງຮຽນມີຄວາມສາມາດເປັນໄປໄດ້. ການຍົກຍ້າຍຄູພາຍໃນເມືອງກໍສາມາດເປັນໄປໄດ້ເຊັ່ນກັນ ແຕ່ມີຄວາມທ້າທາຍກວ່າ[5]. ເຖິງຢ່າງໃດກໍຕາມ ມັນເປັນໄປໄດ້ຍາກທີ່ຈະຍ້າຍຄູຈາກເມືອງໜຶ່ງໄປອີກເມືອງໜຶ່ງ ເພາະວ່າຕ້ອງມີຄ່າໃຊ້ຈ່າຍສູງ ຍ້ອນຕ້ອງໄດ້ຍ້າຍທັງໝົດຄອບຄົວ ແລະ ສ້າງເຮືອນໃໝ່ ຈຶ່ງຈຳເປັນຕ້ອງການຄວາມຊ່ວຍເຫຼືອດ້ານການເງິນ.
- ມີຫຼາຍເມືອງທີ່ຍັງຂາດເຂີນຄູ, ດັ່ງນັ້ນ ຕ້ອງໃຫ້ບູລິມະສິດໃນການຮັບບັນຈຸຄູໃໝ່ ລວມທັງສັບຊ້ອນຄູທີ່ເຫຼືອຈາກເມືອງອື່ນໆມາໃຫ້ເມືອງດັ່ງກ່າວ. ໃນຂະນະດຽວກັນ ຍັງມີຫຼາຍເມືອງທີ່ມີຄູເຫຼືອ ແລະ ບໍ່ຄວນໄດ້ຮັບບັນຈຸຄູໃໝ່.
- ຂັ້ນຕອນໃນການຈັດສັນຄູຄວນມີການຕິດຕາມເປັນຢ່າງດີ ແລະ ຄວນດຳເນີນການຢ່າງເຂັ້ມງວດ.
- ໂດຍລວມແລ້ວ ມີຄວາມຈຳເປັນໃຫ້ມີການປັບປຸງຍຸດທະສາດ ໃນການສັບຊ້ອນຄູ ແລະ ການສັບຊ້ອນຄູຄືນໃໝ່ໃນໄລຍະຍາວ ພ້ອມກັບການທົບທວນຄືນ ຄວາມເປັນໄປໄດ້ໃນການໂຮມໂຮງຮຽນທີ່ມີຈຳນວນນັກຮຽນໜ້ອຍເຂົ້າກັນ[6].
- ຂັ້ນຕອນ ແລະ ຫຼັກການໃນການສັບຊ້ອນຄູທີ່ມີໃນປັດຈຸບັນອາດຕ້ອງໄດ້ຮັບການປັບປຸງຄືນໃໝ່ຍ້ອນວ່າຕົວເລກລັດຖະກອນສຶກສາ ທີ່ຈະໄດ້ຮັບແມ່ນມີໜ້ອຍກວ່າຕົວເລກການສູນເສຍ.

4. ***ອັດຕາການເລື່ອນຊັ້ນຈາກປະຖົມໄປສູ່ມັດທະຍົມຕອນຕົ້ນຕໍ່າ. ອັດຕາການປະລະຢູ່ຊັ້ນມັດທະຍົມຕອນຕົ້ນຈຶ່ງເພີ່ມຂຶ້ນ. ດັ່ງນັ້ນ ຕ້ອງສຶກສາເຖິງສາຍເຫດທີ່ພາໃຫ້ເກີດບັນຫາດັ່ງກ່າວ.***

- ນັກຮຽນບໍ່ເຫັນຄຸນຄ່າຂອງການສຶກສາຊັ້ນມັດທະຍົມຕອນຕົ້ນ. ພວກເຂົາເຈົ້າເຫັນນັກຮຽນລຸ້ນເອື້ອຍ, ລຸ້ນອ້າຍ ແລະ ພີ່ນ້ອງທີ່ຮຽນຈົບມັດທະຍົມຕອນຕົ້ນ ແຕ່ໃນທີ່ສຸດ ກໍກັບໄປເຮັດວຽກນຳຄອບຄົວ.
- ການທີ່ບໍ່ມີບ່ອນຮອງຮັບໃນການເຮັດວຽກ ຫຼື ບໍ່ມີວຽກທີ່ໄດ້ຮັບຄ່າແຮງງານສູງ ແມ່ນເປັນສິ່ງທີ່ເຮັດໃຫ້ຂາດສິ່ງຈູງໃຈສຳລັບຜູ້ຮຽນ.
- ນັກຮຽນທີ່ເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນທີ່ມີຄວາມຮູ້ພື້ນຖານຕໍ່າ ແມ່ນນຳໄປສູ່ການປະລະການຮຽນສູງ.
- ໄລຍະການເດີນທາງໄປໂຮງຮຽນ ເປັນສິ່ງກີດຂວາງແກ່ນັກຮຽນບາງຄົນ (ໂດຍສະເພາະນັກຮຽນຍິງ) ແລະ ຄ່າໃຊ້ຈ່າຍເພື່ອຊື້ເຄື່ອງແບບນັກຮຽນ ກໍເປັນສິ່ງໜຶ່ງທີ່ເປັນສິ່ງກີດຂວາງໃຫ້ນັກຮຽນທີ່ມາຈາກຄອບຄົວທຸກຍາກບໍ່ໄປເຂົ້າໂຮງຮຽນ.

5. ***ການມີສ່ວນຮ່ວມຂອງພາກເອກະຊົນ ແລະ ການນຳໃຊ້ແຫຼ່ງຂໍ້ມູນທີ່ມີຢູ່ໃນປັດຈຸບັນ ເພື່ອປະເມີນແນວໂນ້ມຄວາມຕ້ອງການຂອງຕະຫຼາດແຮງງານໃນແຕ່ລະໄລຍະ. ຍັງມີຂໍ້ມູນໃດທີ່ຍັງຂາດຫາຍໄປ?***

- ການປຶກສາຫາລືຮ່ວມກັນ ໄດ້ຊີ້ໃຫ້ເຫັນວ່າ ມີຄວາມຈຳເປັນຕ້ອງມີການເຮັດວຽກຮ່ວມກັນຢ່າງປົກກະຕິ ລະຫວ່າງ ກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້ ລວມທັງຕົວແທນຈາກພາກເອກະຊົນ ແລະ ສະພາການຄ້າ.
- ແຜນພັດທະນາການສຶກສາ ແລະ ກິລາ 2021-2025 ຈະຊ່ວຍສ້າງໜ່ວຍງານວິຊາການຮ່ວມກັນ (ກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້, ພາກເອກະຊົນ ແລະ ຄູ່ຮ່ວມພັດທະນາ) ພາຍໃຕ້ໜ່ວຍງານວິຊາການ ການສຶກສາຫຼັງຂັ້ນພື້ນຖານ (ໜ່ວຍງານທີ 3) ເພື່ອກຳນົດຄືນ ຄວາມສອດຄ່ອງທາງດ້ານພາລະບົດບາດ

---

[5] ຕ້ອງມີຄ່າໃຊ້ຈ່າຍຕ່າງໆ ຖ້າຍ້າຍຄູຈາກບ້ານໜຶ່ງໄປອີກບ້ານໜຶ່ງ

[6] ຕ້ອງມີການທົບທວນປະສິດທິພາບໃນການກຳນົດທີ່ຕັ້ງຂອງໂຮງຮຽນ ແລະ ແນວຄວາມຄິດທີ່ວ່າທຸກບ້ານຕ້ອງມີໂຮງຮຽນຂອງຕົນ ເພື່ອປັບປຸງປະສິດທິພາບ

ແລະ ຄວາມຮັບຜິດຊອບໃນການສະໜອງອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ບົນພື້ນຖານກົດໝາຍອາຊີວະສຶກສາ ສະບັບປັບປຸງ.

ກອງປະຊຸມລະດັບຜູ້ບໍລິຫານຂອງໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ ໄດ້ນໍາໃຊ້ຂໍ້ມູນຈາກກອງປະຊຸມປຶກສາຫາ ລືຂັ້ນທ້ອງຖິ່ນ ແລະ ບັນດານະໂຍບາຍທີ່ເປັນບູລິມະສິດ ກໍໄດ້ຍົກຂຶ້ນໃນກອງປະຊຸມປຶກສາຫາລືດັ່ງກ່າວ, ຊຶ່ງສາມາດສັງລວມໄດ້ດັ່ງນີ້:

### *ການສຶກສາກ່ອນໄວຮຽນ*

ໃນປັດຈຸບັນນີ້ ຄຸນນະພາບການສຶກສາກ່ອນໄວຮຽນຍັງບໍ່ທັນພຽງພໍເທື່ອ ຈຶ່ງມີຄວາມຈໍາເປັນຕ້ອງພັດທະນາມາດຕະຖານການສອນ ແລະ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ສໍາລັບການສຶກສາກ່ອນໄວຮຽນ ເພື່ອປັບປຸງຄຸນນະພາບ ໄປພ້ອມໆກັບຄູສຶກສານິເທດສໍາລັບການສຶກສາກ່ອນໄວຮຽນໃນແຕ່ລະເມືອງ. ການຂະຫຍາຍຕາໜ່າງການສຶກສາກ່ອນໄວຮຽນແຫ່ງໃໝ່ ຕ້ອງຢູ່ໃນຮູບແບບທີ່ມີຄ່າໃຊ້ຈ່າຍຕໍ່າ.

### *ປະຖົມສຶກສາ*

ຫຼັກສູດຂອງຊັ້ນປະຖົມສຶກສາຂັ້ນຕົ້ນ (ປ.1 ແລະ ປ.2) ມີຫຼາຍວິຊາຮຽນ ແລະ ບໍ່ມີການສອນບໍາລຸງເພື່ອຊ່ວຍເຫຼືອນັກຮຽນອ່ອນ. ຄູສອນສຸມໃສ່ແຕ່ໃຫ້ສໍາເລັດການສິດສອນຫຼັກສູດ ແທນທີ່ຈະກວດກາເບິ່ງຄວາມເຂົ້າໃຈຂອງນັກຮຽນຕໍ່ເນື້ອໃນທີ່ສິດສອນຂອງຕົນເປັນບູລິມະສິດ, ທັງນີ້ກໍຍ້ອນວ່າຄູສຶກສານິເທດ ແມ່ນໄດ້ກວດກາການແຕ່ງບົດສອນເປັນຫຼັກ. ເປັນທີ່ຮັບຮູ້ກັນວ່າ ການກວດກາແຜນການສອນແມ່ນວຽກທີ່ສໍາຄັນ, ໃນຂະນະທີ່ການປ່ຽນແປງວິທີການສິດສອນ ເພື່ອຕອບສະໜອງຄວາມຕ້ອງການດ້ານການຮຽນຂອງນັກຮຽນ ຄູສອນຕ້ອງມີທັກສະທາງວິຊາການທີ່ແນ່ນອນ ເຊິ່ງປະຈຸບັນທັງຄູສຶກສານິເທດ ແລະ ຄູສອນຍັງບໍ່ໄດ້ຮັບການຝຶກອົບຮົມ. ຄູສອນຫ້ອງຄວບຂາດການຊ່ວຍເຫຼືອດ້ານຫຼັກວິຊາຄູ. ການພິມປຶ້ມແບບຮຽນທົດແທນບໍ່ພຽງພໍ ແລະ ບໍ່ປົກກະຕິຕາມຄວາມຕ້ອງການ.

ການສ້າງຕັ້ງກຸ່ມໂຮງຮຽນ: ຕ້ອງມີຂອບນິຕິກໍາທີ່ຄົບຖ້ວນ ເພື່ອຮັບປະກັນຜົນສໍາເລັດ. ສູດການຄິດໄລ່ເງິນບໍລິຫານໂຮງຮຽນ ແລະ ຄູ່ມືແນະນໍາ ຄວນໄດ້ຮັບການທົບທວນ ໂດຍສະເພາະສໍາລັບໂຮງຮຽນຂະໜາດນ້ອຍ ແລະ ໂຮງຮຽນທີ່ຢູ່ເຂດຫ່າງໄກສອກຫຼີກ. ການວິເຄາະເຖິງຜົນປະໂຫຍດດ້ານຄ່າໃຊ້ຈ່າຍ ສໍາລັບຍຸດທະສາດການສະໜັບສະໜູນການເຂົ້າຮຽນ ແລະ ການສືບຕໍ່ຮຽນໃນໂຮງຮຽນ (ເຊັ່ນ: ການສະໜອງອາຫານໃນໂຮງຮຽນ ແລະ ການສະໜອງທຶນການສຶກສາ) ສໍາລັບນັກຮຽນທີ່ທຸກຍາກ, ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ ແມ່ນມີຄວາມຈໍາເປັນ ເພື່ອຮັບປະກັນວ່າ ການເຂົ້າຮຽນ ແລະ ການເລື່ອນຂັ້ນ, ເລື່ອນຊັ້ນຂອງນັກຮຽນ ໄດ້ຮັບການສະໜັບສະໜູນຕາມຈຸດປະສົງ.

### *ມັດທະຍົມຕອນຕົ້ນ*

ຄຸນນະພາບຂອງນັກຮຽນທີ່ຈົບປະຖົມສຶກສາ ບໍ່ທັນພຽງພໍທີ່ຈະສືບຕໍ່ເຂົ້າຮຽນໃນຊັ້ນມັດທະຍົມ, ພ້ອມນັ້ນຄວາມຮູ້ດ້ານວິຊາສະເພາະ ແລະ ທັກສະດ້ານວິຊາຄູຂອງຄູມັດທະຍົມ ແມ່ນຍັງບໍ່ພຽງພໍທີ່ຈະສອນຫຼັກສູດ ທີ່ມີຫຼາຍວິຊາຮຽນເກີນໄປ. ຄວາມຕ້ອງການຄູສອນ ທີ່ເປັນຊ່ຽວຊານສໍາລັບທຸກໆວິຊາຮຽນ ແມ່ນບໍ່ສາມາດສະໜອງໃຫ້ໄດ້ຍ້ອນມີຄ່າໃຊ້ຈ່າຍສູງ. ນັກຮຽນປະລະຍ້ອນມີຫຼາຍສາຍເຫດ ເຊັ່ນ: ຄວາມທຸກຍາກ, ບ້ານຢູ່ຫ່າງໄກຈາກໂຮງຮຽນ, ຫຼັກສູດຍາກເກີນໄປ, ຊຶ່ງພວກເຂົາບໍ່ມີເວລາກະກຽມພຽງພໍ ແລະ ນັກຮຽນກໍເຂົ້າໃຈວ່າເວລາຮຽນຈົບ ກໍບໍ່ມີວຽກເຮັດທີ່ດີ. ຖ້າຕ້ອງການເພີ່ມຈໍານວນນັກຮຽນເຂົ້າຮຽນໃຫ້ຫຼາຍຂຶ້ນ, ຕ້ອງຮັບປະກັນໃຫ້ນັກຮຽນມີຄຸນນະພາບຂັ້ນພື້ນຖານ.

*ມັດທະຍົມຕອນປາຍ*

ເຂດບໍລິການນັກຮຽນຂອງໂຮງຮຽນຕ່າງໆກວ້າງເກີນໄປ ແລະ ບັນດາໂຮງຮຽນມັດທະຍົມຕົ້ນ ຄວນຈະຍົກລະດັບໃຫ້ເປັນມັດທະຍົມສົມບູນ. ເດັກນ້ອຍຢູ່ເຂດຫ່າງໄກສອກຫຼີກ ມີໂອກາດເຂົ້າຮຽນໜ້ອຍກວ່າເດັກນ້ອຍຢູ່ເຂດໃນເມືອງ 5 ເທົ່າ. ວິທີການປະເມີນປະປັດຈຸບັນ ຕ້ອງໄດ້ຮັບການປັບປຸງໂດຍຜ່ານບັນດາວິທີການທີ່ຫຼາກຫຼາຍ. ມີຄວາມຕ້ອງການຄູນິເທດທີ່ຊໍານານງານໃນລາຍວິຊາ ເພື່ອຊ່ວຍເຫຼືອບັນດາຄູສອນ. ຕ້ອງໄດ້ສ້າງຍຸດທະສາດ ເພື່ອແກ້ໄຂການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນປາຍ. ຕ້ອງການໃຫ້ມີຫຼັກສູດສາມັນວິຊາຊີບໂດຍໃຫ້ບູລິມະສິດໂຮງຮຽນກິນນອນຊົນເຜົ່າ.

*ການສຶກສານອກໂຮງຮຽນ*

ວິທີການປະຕິບັດໃນປັດຈຸບັນສໍາລັບການສຶກສານອກໂຮງຮຽນ ມີລັກສະນະທິດສະດີຫຼາຍໂພດ, ຕ້ອງສ້າງຫຼັດສູກວິຊາຊີບຂັ້ນພື້ນຖານ ທີ່ເນັ້ນການຝຶກປະຕິບັດຕົວຈິງໃຫ້ຫຼາຍ ພ້ອມທັງຕ້ອງປ້ອນຂໍ້ມູນຕ່າງໆທີ່ກ່ຽວຂ້ອງເຂົ້າໃນລະບົບຄຸ້ມຄອງຂໍ້ມູນຂ່າວສານການສຶກສາ (EMIS). ຕ້ອງສ້າງຄວາມເຂັ້ມແຂງໃຫ້ເນື້ອໃນຫຼັກສູດຂອງການສຶກສານອກໂຮງຮຽນ ໃຫ້ທຽບເທົ່າກັບການສຶກສາໃນໂຮງຮຽນ. ຕ້ອງສະໜອງອຸປະກອນ ແລະ ເພີ່ມງົບປະມານບໍລິຫານໃຫ້ແກ່ສູນສຶກສາຊຸມຊົນ, ພ້ອມທັງສ້າງສູນການຮຽນຮູ້ຊຸມຊົນໃຫ້ຫຼາຍຂຶ້ນ. ຄະນະກໍາມະການ ການຮຽນຮູ້ຕະຫຼອດຊີວິດຕ້ອງໄດ້ຮັບການສ້າງຕັ້ງຂຶ້ນທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ເພື່ອເຮັດໃຫ້ການສຶກສານອກໂຮງຮຽນ ແລະ ໃນໂຮງຮຽນມີການເຊື່ອມໂຍງກັນຢ່າງເຂັ້ມແຂງ.

*ຂະແໜງການຍ່ອຍບໍລິຫານ ແລະ ຄຸ້ມຄອງ*

ການຈັດສັນຄູ ແລະ ການສັບຊ້ອນຄູຄືນໃໝ່ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ ໂດຍນໍາໃຊ້ຂອບນິຕິກໍາທີ່ມີຢ່າງເຂັ້ມງວດ. ການສັບຊ້ອນຄູຄືນໃໝ່ ສາມາດເປັນໄປໄດ້ໃນລະດັບກຸ່ມໂຮງຮຽນເທົ່ານັ້ນ, ແຕ່ຖ້າຢາກສັບຊ້ອນຄູໄປສອນຢູ່ໂຮງຮຽນອື່ນພາຍໃນເມືອງດຽວກັນ ທີ່ຢູ່ຫ່າງໄກຈາກບ່ອນສິດສອນເກົ່າຂອງຄູແມ່ນມີຄວາມທ້າທາຍ ແລະ ອາດເປັນໄປໄດ້ຍາກ.

ປຶ້ມແບບຮຽນຍັງຂາດເຂີນ ແລະ ລະບົບແຈກຢາຍຍັງຂາດປະສິດທິຜົນ. ລະບົບຄຸ້ມຄອງຂໍ້ມູນປຶ້ມແບບຮຽນຍັງບໍ່ທັນປະຕິບັດໄດ້ດີ. ດັ່ງນັ້ນ, ຄວນນໍາໃຊ້ຂໍ້ມູນຈາກສູນສະຖິຕິການສຶກສາ ແລະ ກິລາ, ແຕ່ຂໍ້ມູນຂອງສູນສະຖິຕິການສຶກສາ ແລະ ກິລາຕ້ອງທັນກັບເວລາ ແລະ ຂັ້ນຕອນການພິມທົດແທນ ຕ້ອງສາມາດຊົດເຊີຍຈໍານວນປຶ້ມທີ່ສູນເສຍ.

ການຈັດສັນງົບປະມານໃຫ້ໂຮງຮຽນ ແລະ ຫ້ອງການສຶກສາທິການ ແລະ ກິລາ ເມືອງ ຕ້ອງໄດ້ຮັບການທົບທວນຄືນໃໝ່ ແລະ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງເຂົາເຈົ້າ ເພື່ອຫຼຸດຜ່ອນຄວາມແຕກໂຕນໃນການໃຫ້ບໍລິການດ້ານການສຶກສາ.

ທັກສະ ແລະ ຄວາມສາມາດຂອງພະນັກງານ ບໍ່ສອດຄ່ອງກັບຈັງຫວະຂອງການປ່ຽນແປງພາຍໃນຂະແໜງການສຶກສາ ແລະ ກິລາ. ດັ່ງນັ້ນ, ຈຶ່ງມີຄວາມຈໍາເປັນຕ້ອງສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານວິຊາການໃນທຸກລະດັບ ເພື່ອໃຫ້ເຂົາເຈົ້າສາມາດຈັດຕັ້ງປະຕິບັດບັນດານະໂຍບາຍຕ່າງໆທີ່ວາງອອກຢ່າງມີປະສິດທິຜົນ.

## 3.2 ຜົນກະທົບຈາກ COVID-19

ບົດລາຍງານທີ່ພິມອອກເມື່ອບໍ່ດົນມານີ້[7] ໄດ້ອະທິບາຍເຖິງຜົນກະທົບທີ່ອາດຈະເກີດຂຶ້ນຈາກການລະບາດຂອງພະຍາດ COVID-19 ຕໍ່ເສດຖະກິດຂອງປະເທດເຮົາ ດ້ວຍສອງສົມມຸດຖານ ຊຶ່ງຂຶ້ນກັບວ່າ (i) ໄລຍະເວລາ

[7] Lao Economic Monitor, May 2020. World Bank

ແລະ ຄວາມຮ້າຍແຮງຂອງການລະບາດ ແລະ ການປິດປະເທດຂອງລາວເຮົາ; (ii) ຂະໜາດ ແລະ ປະສິດທິຜົນຂອງນະໂຍບາຍບັນເທົາທຸກດ້ານເສດຖະກິດ; ແລະ (iii) ຄວາມຮ້າຍແຮງ ແລະ ໄລຍະເວລາຂອງການປິດປະເທດຂອງແຕ່ລະປະເທດໃນໂລກ. ໃນສະຖານະການທີ່ອາດບໍ່ຮ້າຍແຮງ, ເສດຖະກິດລາວເຮົາຄາດວ່າຈະຂະຫຍາຍຕົວໃນອັດຕາ 1% ໃນປີ 2020, ແຕ່ຖ້າສະຖານະການຮ້າຍແຮງໄປກວ່າເກົ່າ, ການຂະຫຍາຍຕົວຂອງເສດຖະກິດຂອງລາວອາດຕິດລົບ 1,8%. ບໍ່ວ່າໃນກໍລະນີໃດກໍ່ຕາມ, ນີ້ຈະເປັນ "ອັດຕາການເຕີບໂຕທີ່ຊ້າທີ່ສຸດນັບຕັ້ງແຕ່ປີ 1990". ບົດລາຍງານດັ່ງກ່າວຍັງໃຫ້ຂໍ້ສັງເກດວ່າ COVID-19 ຈະຊ່ວຍເພີ່ມຄວາມສ່ຽງດ້ານໂຄງສ້າງທີ່ຍາວນານ ຂອງ ສປປ ລາວ ຕື່ມອີກ, ແມ່ນແຕ່ກ່ອນການເກີດໂລກລະບາດ: ປະເທດລາວເຮົາກໍມີສະພາບເສດຖະກິດມະຫາພາກທີ່ອ່ອນແອ, ສິ່ງຜົນໃຫ້ມີຂໍ້ຈຳກັດດ້ານງົບປະມານ ແລະ ເງິນຕາຕ່າງປະເທດ. ບົດລາຍງານຍັງໄດ້ກ່າວເຖິງຄວາມບໍ່ແນ່ນອນ ແລະ ບໍ່ຕໍ່ເນື່ອງຂອງຕະຫຼາດແຮງງານ.

ຜົນກະທົບຂອງພະຍາດໂຄວິດຕໍ່ກັບການເງິນຂອງລັດ ຄາດວ່າຈະມີຫຼາຍພໍສົມຄວນ, ລາຍຮັບພາຍໃນຫຼຸດລົງຈາກ 14 ຫາ 10 ເປີເຊັນຂອງ GDP ໃນປີ 2020 ແລະ ຈະຄ່ອຍໆຟື້ນຕົວເປັນ 12,5 ສ່ວນຮ້ອຍໃນປີ 2021 ແລະ 2022. ການຂາດດຸນສູງ ຈະເຮັດໃຫ້ໜີ້ສາທາລະນະສູງ ເຖິງລະດັບສ່ຽງສູງ ແລະ ການຊໍາລະໜີ້ສິນ ຄາດວ່າຈະບັນລຸ 55% ຂອງລາຍໄດ້ພາຍໃນໂດຍສະເລ່ຍ. ສະນັ້ນ, ມັນຈຶ່ງໄປກວມເອົາພື້ນທີ່ງົບປະມານທີ່ມີຢູ່. ການໃຊ້ຈ່າຍຂອງລັດຈະຫຼຸດລົງຈາກ 20,2 ສ່ວນຮ້ອຍຂອງ GDP ໃນປີ 2019 ມາເປັນສະເລ່ຍ 18,9 ສ່ວນຮ້ອຍໃນໄລຍະປີ 2020-2022, ສະນັ້ນ ຈຶ່ງເຮັດໃຫ້ສະພາບງົບປະມານມີຄວາມຈາກັດຢ່າງໜັກໜ່ວງ.

ບົດລາຍງານຄາດຄະເນວ່າ ຜົນກະທົບຈາກໂລກລະບາດ ອາດຈະເຮັດໃຫ້ປະຊາຊົນ 214.000 ຄົນ ຕົກຢູ່ໃນຄວາມທຸກຍາກ. ອີງຕາມຂໍ້ມູນຈາກທະນາຄານໂລກ[8], ຄວາມທຸກຍາກໃນ ສປປ ລາວ ຫຼຸດລົງຈາກ 33,5% ມາເປັນ 23,2% ໃນທົດສະວັດທີ່ຜ່ານມາ ເຮັດໃຫ້ປະຊາກອນປະມານຫ້າແສນຄົນ ຫຼຸດພົ້ນອອກຈາກຄວາມທຸກຍາກ. ເຖິງຢ່າງໃດກໍ່ຕາມ, ປະຊາຊົນສ່ວນໃຫຍ່ທີ່ຫຼຸດພົ້ນອອກຈາກຄວາມທຸກຍາກແມ່ນຍັງຢູ່ໃກ້ ຫຼື ຕົກເຂົ້າສູ່ລະດັບຄວາມທຸກຍາກອີກ - ປະມານເຄິ່ງໜຶ່ງຂອງຄົນທຸກຍາກໃນປີ 2013, ຊຶ່ງໃນປີ 2008 ພວກດັ່ງກ່າວແມ່ນບໍ່ໄດ້ທຸກຍາກ. ປະມານ 80% ຂອງປະຊາກອນໃນປີ 2013 ມີລາຍໄດ້ຕໍ່າກວ່າ 2,5 ໂດລາຕໍ່ມື້ ແລະ ມີໂອກາດເຖິງ 10% ທີ່ຈະກັບສູ່ຄວາມທຸກຍາກ. ຜົນຂອງສໍາຫຼວດດັດຊະນີໝາຍສັງຄົມລາວ (LSIS 2017)[9] ຊີ້ໃຫ້ເຫັນວ່າ ຄວາມທຸກຍາກແມ່ນປັດໄຈປະກອບສ່ວນທີ່ສໍາຄັນ ທີ່ເຮັດໃຫ້ນັກຮຽນບໍ່ສາມາດຮຽນຈົບການສຶກສາໃນລະດັບໃດໜຶ່ງ ແລະ ຖືກລະບຸວ່າ ເປັນປັດໄຈຫຼັກທີ່ເຮັດໃຫ້ເກີດຄວາມບໍ່ສະເໝີພາບ.

ມີຕົວບົ່ງບອກ[10]ຢູ່ແລ້ວວ່າ ການແຜ່ລະບາດຂອງພະຍາດໂຄວິດ ສົ່ງຜົນກະທົບທາງລົບຕໍ່ໂພຊະນາການ. ການສໍາຫຼວດຜົນກະທົບຂອງ COVID-19 ທີ່ຜ່ານມາ ກ່ຽວກັບຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ກະສິກໍາ, ດໍາເນີນໂດຍອົງການອາຫານໂລກ ແລະ ອົງການອາຫານ ແລະ ການກະເສດ, ຊີ້ໃຫ້ເຫັນວ່າປະມານ 1/3 ຂອງຜູ້ຕອບຄໍາຖາມ ຮູ້ສຶກເຖິງການປ່ຽນແປງທີ່ບໍ່ດີກ່ຽວກັບການບໍລິໂພກອາຫານ. ຜູ້ທີ່ຖືກສໍາຫຼວດສ່ວນໃຫຍ່ກ່າວວ່າ ພວກເຂົາບໍ່ສາມາດບໍລິໂພກຄົບທຸກໝູ່ອາຫານໄດ້ ຍ້ອນການເພີ່ມລາຄາ ແລະ ການຫຼຸດລົງຂອງຊີ້ນໃນຕະຫຼາດ. ການພັດທະນາລະບົບພູມຕ້ານທານທີ່ແຂງແຮງໃນເດັກ ໂດຍການບໍລິໂພກອາຫານທີ່ມີໂພຊະນາການທີ່ດີ ແມ່ນມີຄວາມສໍາຄັນຫຼາຍເພື່ອເປັນການປ້ອງກັນຄວາມສ່ຽງດ້ານສຸຂະພາບ.

ອົງການອາຫານໂລກ ແລະ ອົງການ UNICEF ກໍາລັງເຕືອນກ່ຽວກັບການລະບາດ ຂອງຄວາມອຶດຢາກທີ່ງຽບສະຫງົບ ເຊິ່ງອາດຈະເຮັດໃຫ້ປະຊາກອນຂອງໂລກອີກ 130 ລ້ານຄົນ ເຂົ້າໄປໃນຄວາມອຶດຫິວຢ່າງຮຸນແຮງ

---

[8] https://www.worldbank.org/en/country/lao/publication/drivers-of-poverty-in-lao-pdr

[9] COUNTRY REPORT Lao People's Democratic Republic Lao Social Indicator Survey II 2017 MICSLao Statistics Bureau. 2018. And *Lao Social Indicator Survey II 2017, Survey Findings Report*. Vientiane, Lao PDR: Lao Statistics Bureau and UNICEF.

[10] ຂໍ້ມູນຈາກໜັງສືພິມ Vientiane Times ວັນທີ 17 ເດືອນ ມິຖຸນາ 2020

ຍ້ອນຜົນກະທົບຈາກ Covid-19. ບັນດາຄອບຄົວທີ່ມີຄວາມທຸກຍາກຢູ່ແລ້ວ ຫຼື ກຳລັງຕົກຢູ່ໃນຄວາມທຸກຍາກ ແລະ ມີຄວາມຂາດແຄນທາງດ້ານໂພຊະນາການ, ແມ່ນຢູ່ໃນອັນດັບທຳອິດຂອງອັນຕະລາຍນີ້. ຢູ່ ສປປ ລາວ, ຫຼາຍກວ່າເຄິ່ງໜຶ່ງຂອງເດັກນ້ອຍອາຍຸຕ່ຳກວ່າ 6 ເດືອນ ບໍ່ໄດ້ຮັບການລ້ຽງລູກດ້ວຍນົມແມ່ ແລະ ຫຼາຍກວ່າ 2/3 ຂອງເດັກນ້ອຍອາຍຸຕ່ຳກວ່າສອງປີ ແມ່ນບໍ່ໄດ້ຕາມມາດຕະຖານຕ່ຳສຸດດ້ານອາຫານ ໃນແງ່ຂອງຄວາມຖີ່, ດ້ານຄຸນນະພາບ ແລະ ຄວາມຫຼາກຫຼາຍ.

ດັ່ງນັ້ນ, ຜົນກະທົບທາງລົບຂອງການແຜ່ລະບາດຂອງພະຍາດໂຄວິດ ຕໍ່ຂະແໜງການສຶກສາ ແລະ ກິລາ ຈະມາຈາກຄວາມອາດສາມາດໃນການສະໜອງຊັບພະຍາກອນທາງການເງິນໃຫ້ແກ່ຂະແໜງການສຶກສາ ແລະ ກິລາຂອງລັດຖະບານ ແລະ ມາຈາກຄອບຄົວທຸກຍາກທີ່ບໍ່ສົ່ງລູກຫຼານຂອງພວກເຂົາໄປໂຮງຮຽນ ເນື່ອງຈາກເຂົາເຈົ້າມີໂອກາດໄປຊອກວຽກເຮັດງານທຳຕາມສວນຢາງ, ສວນກ້ວຍ ແລະ ໂຮງຈັກໂຮງງານ ລວມທັງໄປຊອກຫາເຄື່ອງປ່າຂອງດົງ.

### 3.3 ຈຸດປະສົງດ້ານນະໂຍບາຍທີ່ເປັນບູລິມສິດ ສຳລັບ ແຜນ 2021-2025

ຈຸດປະສົງລວມຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແມ່ນແນໃສ່ພັດທະນາລະບົບການສຶກສາ ເພື່ອສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສົນທຳປະຕິວັດ ແລະ ມີຄ່ານິຍົມທີ່ຖືກຕ້ອງ, ມີນ້ຳໃຈຮັກປະເທດຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈທີ່ດີ , ມີຄວາມສາມັກຄີພາຍໃນຊາດ, ມີຄວາມຮັກຕໍ່ການຮຽນຮູ້ຕະຫຼອດຊີວິດ, ມີຄ່ານິຍົມຕໍ່ປະເພນີອັນດີງາມຂອງຊາດ, ຮັກຄວາມກ້າວໜ້າ ແລະ ມີວິທະຍາສາດ ເພື່ອໃຫ້ກາຍເປັນກຳລັງແຮງງານທີ່ມີຄຸນນະພາບ, ສອດຄ່ອງ ແລະ ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດທີ່ຍືນຍົງ, ມີຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ.

ກອງປະຊຸມລະດັບສູງຂອງໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ ຕົກລົງເຫັນດີຮັບຮອງເອົາຈຸດປະສົງດ້ານນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ດັ່ງນີ້:

- ເພື່ອປັບປຸງຄວາມຮູ້ທາງດ້ານເນື້ອໃນຂອງບົດສອນ ແລະ ທັກສະດ້ານການສິດສອນຂອງຄູສອນຊັ້ນປະຖົມສຶກສາ ໂດຍໃຫ້ບູລິມະສິດໃນການຈັດສັນງົບປະມານໃສ່ຂະແໜງການຍ່ອຍປະຖົມສຶກສາ;
- ເພື່ອຂະຫຍາຍການສຶກສາຊັ້ນມັດທະຍົມຕອນຕົ້ນຢ່າງປະຢັດ, ມີປະສິດທິພາບ ແລະ ສອດຄ່ອງກັບຕົວຈິງ , ແຕ່ຜົນປະໂຫຍດທີ່ໄດ້ຮັບຈາກການເຂົ້າເຖິງການສຶກສາຊັ້ນມັດທະຍົມຕອນຕົ້ນຈະບໍ່ເກີດຂຶ້ນ ຖ້າຫາກຜົນການຮຽນ ກໍຄືທັກສະການອ່ານອອກຂຽນໄດ້ ແລະ ທັກສະການຄິດໄລ່ເລກຂອງນັກຮຽນ ຜູ້ທີ່ຈົບຊັ້ນປະຖົມ ບໍ່ໄດ້ຮັບການປັບປຸງດີຂຶ້ນ. (ການຂະຫຍານການສຶກສາກ່ອນໄວຮຽນ ກໍມີຜົນເຮັດໃຫ້ຄຸນນະພາບຂອງຜູ້ຮຽນຈົບຊັ້ນປະຖົມດີຂຶ້ນ).
- ເພື່ອສ້າງຄວາມກົມກ່ຽວກັນລະຫວ່າງທັກສະ ແລະ ຄວາມສາມາດຂອງພະນັກງານ ພາຍໃນກະຊວງສຶກສາທິການ ແລະ ກິລາ ເພື່ອໃຫ້ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງວຽກງານໃນປັດຈຸບັນ ແລະ ອານາຄົດ. (ເຮັດວຽກຫຼາຍຂຶ້ນໂດຍໃຊ້ຈຳນວນຄົນເທົ່າເດີມ ໂດຍຜ່ານການປັບປຸງລະບົບການຄຸ້ມຄອງຊັບພະຍາກອນມະນຸດ).
- ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະແນກສຶກສາທິການ ແລະ ກິລາ ແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ກຸ່ມໂຮງຮຽນ ແລະ ໂຮງຮຽນ ເພື່ອປັບປຸງປະສິດທິພາບ, ປະສິດທິຜົນ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າ ໂດຍຜ່ານການສ້າງຄວາມກົມກຽວກັນລະຫວ່າງໜ້າທີ່, ພາລະບົດບາດ ແລະ ຄວາມຮັບຜິດ ຊອບ; ການກຳນົດຕຳແໜ່ງງານ ແລະ ວິຊາສະເພາະໃຫ້ມີຄວາມຊັດເຈນ; ການສ້າງລະບົບສະໜອງ ແລະ ຈັດສັນຊັບພະຍາກອນມະນຸດ ແລະ ຊັບພະຍາກອນການເງິນ ທີ່ອີງໃສ່ຄວາມຕ້ອງການຕົວຈິງ.

ນອກນັ້ນ ຍັງມີຈຸດປະສົງດ້ານນະໂຍບາຍຈຳນວນໜຶ່ງທີ່ກຳລັງສືບຕໍ່ຈັດຕັ້ງປະຕິບັດຢູ່ໃນປັດຈຸບັນ ເຊັ່ນ:

- ເພື່ອຫຼຸດຜ່ອນຄວາມແຕກໂຕນທາງດ້ານຜົນການຮຽນຂອງນັກຮຽນ ໂດຍຜ່ານການຄຸ້ມຄອງຊັບພະຍາກອນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອເລັ່ງໃສ່ປັບປຸງການບໍລິການດ້ານການສຶກສາ ໂດຍສະເພາະໃນ 40 ເມືອງດ້ອຍໂອກາດ ຕາມທີ່ກະຊວງສຶກສາທິການ ແລະ ກິລາໄດ້ກຳນົດໄວ້.
- ສະໜອງການສຶກສາຫຼັງການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ ເພື່ອປະກອບສ່ວນເຂົ້າ ແລະ ສະໜັບສະໜູນບັນດາບູລິມະສິດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX.
- ເພື່ອເສີມຂະຫຍາຍວຽກງານກິລາ-ກາຍຍະກຳຂອງລາວ ໃຫ້ກ້າວສູ່ມາດຕະຖານພາກພື້ນ ແລະ ສາກົນ.

ບູລິມະສິດເຫຼົ່ານີ້ແມ່ນສອດຄ່ອງກັບຜົນໄດ້ຮັບລວມ ແລະ ວຽກງານຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX. ການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ໄດ້ຖືກເລື່ອນອອກໄປຍ້ອນຜົນກະທົບຈາກການລະບາດຂອງພະຍາດ COVID-19. ພາຍໃຕ້ຜົນໄດ້ຮັບທີ 2 (ການພັດທະນາຊັບສິນມະນຸດ) ຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX, ຜົນໄດ້ຮັບບູລິມະສິດແມ່ນເພື່ອບັນລຸ "ການສຶກສາທີ່ມີຄຸນນະພາບສຳລັບການກຽມພ້ອມຂອງການປະຕິວັດອຸດສາຫະກຳຍຸກ 4.0, ທັກສະດ້ານແຮງງານ ແລະ ທັກສະທາງດ້ານວິຊາການ ລວມທັງການມີສ່ວນຮ່ວມຂອງແມ່ຍິງ. ຊຶ່ງເປັນສ່ວນໜຶ່ງຂອງການກະກຽມກອງປະຊຸມໂຕະ ມົນປະຈຳປີ 2020 ສຳລັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX, ກະຊວງແຜນການ ແລະ ການລົງທຶນໄດ້ຮຽກຮ້ອງໃຫ້ຂະແໜງການສຶກສາ ແລະ ກິລາ ກຳນົດ "ຢ່າງໜ້ອຍສາມມາດຕະການທີ່ລະອຽດອ່ອນກ່ຽວກັບເພດເພື່ອເລັ່ງໃສ່ເປົ້າໝາຍການພັດທະນາແບບຍືນຍົງ ກ່ຽວກັບຄຸນນະພາບຂອງການສຶກສາ ແລະ ເປີເຊັນຂອງນັກຮຽນໃນຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນ ທີ່ບັນລຸໄດ້ມາດຕະຖານຂັ້ນຕໍ່າ ດ້ານທັກສະການອ່ານ ແລະ ຄະ ນິດ-ສາດ". ກະຊວງແຜນການ ແລະ ການລົງທຶນ ຍັງໄດ້ໃຫ້ຮູ້ເຖິງຄວາມສຳຄັນຂອງການຝຶກອົບຮົມວິຊາຊີບ ເພື່ອຮັບ-ປະກັນໃຫ້ ສປປ ລາວ ສາມາດເກັບກ່ຽວຜົນປະໂຫຍດຂອງຊາວໜຸ່ມ ທີ່ມີຄວາມສາມາດບົ່ມຊ້ອນ ແລະ ສາມາດແປການລົງທຶນນີ້ ໃຫ້ເປັນກຳລັງແຮງງານທີ່ມີທັກສະ ແລະ ມີປະສິດທິພາບສູງ. ກະຊວງແຜນການ ແລະ ການລົງທຶນຍັງໄດ້ກຳນົດຄວາມຈຳເປັນໃນການລົງທຶນເຂົ້າໃນການຝຶກອົບຮົມຄູປະຖົມໃຫ້ຫຼາຍກວ່າເກົ່າ; ເພີ່ມທະວີການພັດທະນາເດັກ ແລະ ການກຽມຄວາມຂອງເດັກກ່ອນເຂົ້າໂຮງຮຽນ, ຫຼຸດຜ່ອນອັດຕາການປະລະການຮຽນ, ໂດຍສະເພາະໃນກຸ່ມເດັກຍິງ ແລະ ຮັບປະກັນຄຸນນະພາບ ແລະ ປະສິດທິພາບດ້ານການສຶກສາ; ເພີ່ມທະວີການລົງທຶນ ແລະ ການຮ່ວມມືກັບພາກເອກະຊົນໃນວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ແລະ ວິທີການແບບກວມລວມ ແລະມີລັກສະນະທີ່ເປັນຍຸດທະສາດ ແມ່ນມີຄວາມຈຳເປັນ ໃນການພັດທະນາວິຊາຊີບດ້ານການສຶກສາ.

### 3.4 ຄວາມສ່ຽງຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025

ຄວາມສ່ຽງທີ່ສຳຄັນຕໍ່ການບັນລຸຈຸດປະສົງດ້ານນະໂຍບາຍ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ແມ່ນການຂາດແຄນຊັບພະຍາກອນການເງິນ ດັ່ງທີ່ເຄີຍເປັນໃນລະຫວ່າງປີ 2016-2020. ໃນຊຸມປີທີ່ຜ່ານມາ, ຕົວຊີ້ບອກຈຳນວນໜຶ່ງໄດ້ສະແດງໃຫ້ເຫັນການທົດຖອຍເມື່ອທຽບກັບຊຸມປີກ່ອນໜ້ານີ້ (ເບິ່ງເອກະສານຊ້ອນທ້າຍທີ 4). ການລະບາດຂອງ COVID-19 ໄດ້ເຮັດໃຫ້ລັດຖະບານມີຄວາມຫຍຸ້ງຍາກທີ່ຈະເພີ່ມການສະໜັບສະໜູນງົບປະມານໃຫ້ແກ່ຂະແໜງການສຶກສາ ແລະ ກິລາ ໃນອະນາຄົດ ແລະ ຄອບຄົວທີ່ທຸກຍາກກໍມີຄວາມຫຍຸ້ງຍາກທີ່ຈະສົ່ງລູກພວກເຂົາເຂົ້າໂຮງຮຽນ. ຍ້ອນຄວາມບໍ່ແນ່ນອນກ່ຽວກັບໄລຍະເວລາຂອງຜົນກະທົບເຫຼົ່ານີ້, ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ຈຶ່ງໄດ້ສະເໜີແຜນການເງິນ ຢູ່ສອງສົມມຸດຖານຄື: "ງົບປະມານທີ່ໄດ້ຮັບຍັງຢູ່ໃນລະດັບເທົ່າເດີມ" ແລະ ສົມມຸດຖານງົບປະມານ "ຍົກສູງຄຸນນະພາບຂອງການສຶກສາ". ສົມມຸດຖານທີສອງ ຈະຕ້ອງການງົບປະມານສະໜັບສະໜູນເພີ່ມເຕີມຈາກລັດຖະບານ ແລະ ຄູ່ຮ່ວມພັດທະນາ, ໃນຂະນະທີ່ສົມມຸດຖານທີໜຶ່ງ ໄດ້ຖືກອອກແບບເພື່ອປົກປ້ອງການລົງທຶນ ແລະ ຜົນສຳເລັດທີ່ຍາດໄດ້

ໃນໄລຍະຜ່ານມາ. ໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ ຈະຕ້ອງໄດ້ເຮັດວຽກຫຼາຍກວ່າເກົ່າ ເພື່ອຮັບປະກັນວ່າ ງົບປະມານການຊ່ວຍເຫຼືອຈາກພາຍນອກ ສອດຄ່ອງກັບບູລິມະສິດຂອງກະຊວງສຶກສາທິການ ແລະ ກິລາ. ລາຍລະອຽດຂອງຄວາມສ່ຽງຕ່າງໆ ໄດ້ກຳນົດຢູ່ໃນເອກະສານຊ້ອນທ້າຍທີ 5.

## 4. ເປົ້າໝາຍລວມສຳລັບ 2021-2025

***"ພາຍໃນປີ 2025 ຂະແໜງການສຶກສາ ແລະ ກິລາ ຢູ່ ສປປລາວ ມີໂຄງສ້າງ ແລະ ມີຊັບພະຍາກອນທີ່ເໝາະສົມເພື່ອເຮັດໃຫ້ພົນລະເມືອງລາວທຸກຄົນ ເຂົ້າເຖິງການສຶກ ສາ ແລະ ກິລາ-ກາຍຍະກຳ ທີ່ມີຄຸນນະພາບ ເພື່ອໃຫ້ປະເທດຊາດໄດ້ຮັບຜົນປະໂຫຍດຈາກການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ແລະ ຊຸກຍູ້ເພື່ອບັນລຸການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ທີ 4"***

ຕະຫຼອດໄລຍະ 5 ປີ ຜ່ານມາ ດ້ວຍການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ ເຮັດໃຫ້ເສດຖະກິດ ສປປ ລາວ ໄດ້ມີການເຕີບໃຫຍ່ຢ່າງໄວ ເຖິງແມ່ນວ່າໃນໄລຍະມໍ່ໆມານີ້ ການເກັບລາຍຮັບເຕີບໂຕຊ້າ ແລະ ການໃຊ້ໜີ້ມີສູງ ຊຶ່ງເປັນອຸປະສັກການຂະຫຍາຍຕົວທາງດ້ານການເງິນ ລວມທັງການສະໜອງງົບປະມານໃຫ້ແກ່ຂະແໜງການສຶກສາ ແລະ ກິລາ. ເຖິງຈະມີຂໍ້ຈຳກັດເຫຼົ່ານີ້ກໍຕາມ, ການເຂົ້າຮຽນ ແລະ ການເລື່ອນຊັ້ນ, ເລື່ອນຊັ້ນຂອງນັກຮຽນ ກໍຍັງສືບຕໍ່ໄດ້ຮັບການປັບປຸງໃຫ້ດີຂຶ້ນຢ່າງຊັດເຈນ. ການທົບທວນເຄິ່ງສະໄໝແຜນພັດທະນາການສຶກສາ ແລະ ກິລາ 2016-2020 ໄດ້ສະຫຼຸບໃຫ້ເຫັນວ່າ ຄວາມແຕກໂຕນດ້ານການເຂົ້າເຖິງການສຶກສາຍັງສືບຕໍ່ຄົງຕົວຢູ່ ແລະ ຄຸນນະພາບຂອງການສຶກສາ ຈະຕ້ອງໄດ້ຮັບການປັບປຸງໃຫ້ດີຂຶ້ນ ໂດຍສະເພາະເພື່ອຮັບປະກັນໃຫ້ທັກສະການຮູ້ໜັງສື ແລະ ການຄິດໄລ່ເລກຂອງນັກຮຽນທີ່ຮຽນຈົບຊັ້ນປະຖົມໄດ້ຮັບການປັບປຸງໃຫ້ດີຂຶ້ນ. ການສະຫຼຸບດັ່ງກ່າວ ຍັງໄດ້ຮັບການຢືນຢັນຕື່ມຈາກກອງປະຊຸມປຶກສາຫາລື ເພື່ອກະກຽມການສ້າງແຜນພັດທະນາການສຶກສາ ແລະ ກິລາ 2021-2025.

ດັ່ງນັ້ນ, ຊ່ວງໄລຍະ 2021-2025 ຈະເນັ້ນໃສ່ການຫຼຸດຜ່ອນຄວາມແຕກໂຕນ ແລະ ປັບປຸງຜົນການຮຽນໃນຊັ້ນປະຖົມສຶກສາໃຫ້ດີຂຶ້ນ. ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດເອົາ 40 ເມືອງທີ່ດ້ອຍໂອກາດທີ່ສຸດທາງດ້ານການສຶກສາຂອງປະເທດ ຊຶ່ງເປັນບ່ອນທີ່ມີຜົນໄດ້ຮັບດ້ານການສຶກສາຕໍ່າທີ່ສຸດ. ບັນດາເມືອງເຫຼົ່ານີ້ ຍັງທຸກຍາກຫຼາຍ ຊຶ່ງປະກອບດ້ວຍຄອບຄົວທີ່ຂາດດ້ານສະບຽງອາຫານ. ບູລິມະສິດຂອງແຜນພັດທະນາການສຶກສາ ແລະ ກິລາ 2021-2025 ແມ່ນເພື່ອຫຼຸດຜ່ອນຊ່ອງຫວ່າງດ້ານການສຶກສາ ລະຫວ່າງບັນດາ 40 ເມືອງເຫຼົ່ານີ້ ແລະ ບັນດາເມືອງຕ່າງໆໃນທົ່ວປະເທດ. ຂໍ້ຈຳກັດໃນການເຂົ້າເຖິງການສຶກສາກ່ອນໄວຮຽນ ແລະ ຜົນການຮຽນຕໍ່າໃນຊັ້ນປະຖົມສຶກສາ ຈະມີຜົນກະທົບຕໍ່ການສຶກສາໃນຊັ້ນມັດທະຍົມ ແລະ ຫຼັງຊັ້ນມັດທະຍົມສຶກສາ. ການສຶກສາຊັ້ນມັດທະຍົມຕອນຕົ້ນ ເປັນການສຶກສາພາກບັງຄັບ ແຕ່ຜົນປະໂຫຍດທີ່ໄດ້ຮັບຂອງການເຂົ້າຮຽນໃນຊັ້ນມັດທະຍົມຕອນຕົ້ນ ຈະເກີດຂຶ້ນໄດ້ກໍຕໍ່ເມື່ອນັກຮຽນທີ່ຈົບຊັ້ນປະຖົມມີທັກສະການຮູ້ໜັງສື ແລະ ການຄິດໄລເລກພຽງພໍ ແລະ ມີຄວາມຍືນຍົງ ເພື່ອປະກອບສ່ວນເຂົ້າ ແລະ ໄດ້ຮັບຜົນປະໂຫຍດຈາກການພັດທະນາເສດຖະກິດ-ສັງຄົມຂອງປະເທດ ເພື່ອຊ່ວຍໃຫ້ ສປປ ລາວ ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2025. ນອກຈາກການປັບປຸງຄຸນນະພາບຂອງຄູຊັ້ນປະຖົມແລ້ວ, ການເຂົ້າຮຽນໃນການສຶກສາກ່ອນໄວຮຽນໃນຮູບແບບຕ່າງໆ ຈະຊ່ວຍໃຫ້ນັກຮຽນສາມາດຮຽນອ່ານ ແລະ ຂຽນພາສາລາວໄດ້ດີຂຶ້ນ ໂດຍສະເພາະເດັກທີ່ບໍ່ມີພາສາລາວເປັນພາສາແມ່. ການລະບາດຂອງໂຣກລະບາດ COVID-19 ໄດ້ກີດຂວາງການເປີດໂຮງຮຽນ ແລະ ການເຂົ້າໂຮງຮຽນຂອງນັກຮຽນ ໄດ້ສະແດງໃຫ້ເຫັນເຖິງຄວາມຈຳເປັນໃນການພັດທະນາ ແລະ ຂະຫຍາຍກົນໄກການສະໜັບສະໜູນນັກຮຽນ ແລະ ຄູສອນ ໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກທີ່ບໍ່ສາມາດເຂົ້າເຖິງການຮຽນຮູ້ທາງອິນເຕີເນັດ.

ການຄາດຄະເນຂໍ້ຈຳກັດດ້ານການເງິນທີ່ຄາດຄະເນໄວ້ຮອດປີ 2025 ແມ່ນມີຜົນກະທົບທີ່ຮ້າຍແຮງກວ່າເກົ່າ ທາງດ້ານເສດຖະກິດ ຍ້ອນການລະບາດຂອງ COVID-19, ເຮັດໃຫ້ມີຄວາມຈຳເປັນຈະຕ້ອງໄດ້ກຳນົດບູລິມະສິດ ດ້ານການເງິນໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025. ໃນເວລາດຽວກັນ, ໜ່ວຍງານວິຊາ ການຂະແໜງການສຶກສາ ແລະ ກິລາ ຈະທົບທວນແຜນການເງິນຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ເປັນແຕ່ລະປີ ແລະ ດັດແປງບູລິມະສິດເຫຼົ່ານີ້ຕາມຄວາມເໝາະສົມ.

## 5. ຜົນໄດ້ຮັບລວມຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025

ປະຊາຊົນລາວທຸກຄົນມີຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະ ແລະ ຄວາມຮູ້ທົ່ວໄປທີ່ເໝາະສົມ ເພື່ອພັດທະນາຕົນເອງ, ເພື່ອປະກອບສ່ວນເຂົ້າ ແລະ ຮັບຜົນປະໂຫຍດຈາກການພັດທະນາເສດຖະກິດ-ສັງຄົມຂອງ ປະເທດຊາດ ເພື່ອໃຫ້ປະເທດຊາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2025.

ຄາດໝາຍທີ່ຕິດພັນກັບການສຶກສາຂອງດັດຊະນີຊັບສິນຂອງມະນຸດ (ອັດຕາເຂົ້າຮຽນລວມຊັ້ນມັດທະຍົມ ແລະ ອັດຕາການຮູ້ໜັງສືຂອງຜູ້ໃຫຍ່) ຕ້ອງການໃຫ້ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາຂອງປະ ເທດ ແມ່ນສາມາດບັນລຸໄດ້. ເຖິງຢ່າງໃດກໍຕາມ, ເປົ້າໝາຍຫຼັກທີ່ຕ້ອງໄດ້ເນັ້ນໃສ່ສຳລັບແຜນພັດທະນາການສຶກສາ ແລະ ກິລາ 2021-2025 ແມ່ນປັບປຸງຄຸນນະພາບດ້ານວິຊາການ ໂດຍຜ່ານການປັບປຸງຄຸນນະພາບການສອນຂອງຄູ ໂດຍສະເພາະໃນຊັ້ນປະຖົມສຶກສາ.

## 6. ຄາດຄະເນຜົນໄດ້ຮັບລະດັບສູງ

ພາກທີ I ຂອງແຜນພັດທະນາການສຶກສາ ແລະ ກິລາ ໄດ້ກຳນົດເອົາ 8 ຜົນໄດ້ຮັບລະດັບສູງຕົ້ນຕໍ ທີ່ຈະບັນລຸ ໃນປີ 2025 ພ້ອມດ້ວຍຜົນໄດ້ຮັບລະດັບກາງ ແລະ ຄາດໝາຍທີ່ກ່ຽວຂ້ອງສຳລັບປີ 2025. ຕົວຊີ້ບອກຫຼັກ ສຳລັບ ແຕ່ລະຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ ແມ່ນໄດ້ກຳນົດຢູ່ຂໍ້ທີ 8 (ຂອບການຕິດຕາມ ແລະ ປະເມີນ ຜົນ). ບັນດານະໂຍບາຍທີ່ຈະຕ້ອງປະຕິບັດເພື່ອໃຫ້ບັນລະຄາດໝາຍຕ່າງໆ ກໍໄດ້ກຳນົດຢ່າງຈະແຈ້ງ. ພາກທີ II ຂອງ ແຜນ 5 ປີ ໄດ້ນຳສະເໜີແຜນລະອຽດຂອງແຕ່ລະຂະແໜງຍ່ອຍ ຊຶ່ງໄດ້ກຳນົດຍຸດທະສາດ, ຄາດໝາຍ ທີ່ແຍກຕາມ ເພດຍິງ ແລະ ຊາຍ ແລະ ວຽກຈຸດສຸມທີ່ຕິດພັນກັບຜົນໄດ້ຮັບລະດັບກາງດຽວກັນ ທີ່ລະບຸໄວ້ໃນພາກທີ I. ມີ 4 ຜົນ ໄດ້ຮັບລະດັບສູງທີ່ຖືກກຳນົດຂຶ້ນມາ ເພື່ອປັບປຸງຜົນການຮຽນຂອງນັກຮຽນ, ຊຶ່ງລວມມີ: ປັບປຸງຫຼັກສູດການຮຽນ ການສອນ, ປັບປຸງການວັດຜົນການຮຽນຂອງນັກຮຽນ, ການຍົກສູງຂີດຄວາມສາມາດຂອງຄູ ແລະ ຜູ້ອຳນວຍ ການ, ການປະເມີນຜົນການສອນຂອງຄູ ແລະ ການສ້າງມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ. ຜົນໄດ້ຮັບ ຈາກການປະເມີນຜົນການຮຽນຂອງນັກຮຽນ ປ.3 (ASLO 3) ໃນປີ 2017 ແລະ ການປະເມີນຜົນການຮຽນ ຂອງ ນັກຮຽນ ມ.4 ໃນປີ 2019 ໄດ້ສະແດງໃຫ້ເຫັນວ່າ ຜົນການຮຽນຂອງນັກຮຽນແມ່ນຍັງຕ່ຳ ແລະ ຜົນການສຶກສາເຖິງ ຄວາມເປັນເອກກະລາດຂອງໂຮງຮຽນ (achool autonomy study) ໃນປີ 2016 ກໍໄດ້ສະແດງໃຫ້ເຫັນວ່າ ຄວາມ ຮູ້ທາງດ້ານເນື້ອໃນການສອນ ແລະ ທັກສະດ້ານວິຊາຄູຂອງຄູປະຖົມແມ່ນຍັງຕ່ຳ. ເຖິງແມ່ນວ່າບໍ່ໄດ້ມີການຄົ້ນຄວ້າ ເພື່ອເປັນພື້ນຖານໃນການກຳນົດບາງຍຸດທະສາດ, ການສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແມ່ນໄດ້ ອີງໃສ່ຜົນການປຶກສາຫາລືກັບທ້ອງຖິ່ນ, ລວມທັງຜູ້ອຳນວຍການໂຮງຮຽນ ຊຶ່ງເປັນຜູ້ທີ່ມີຄວາມຮູ້ ແລະ ເຂົ້າໃຈດີວ່າ ຈະເຮັດແນວໃດຖ້າຢາກປັບປຸງຜົນການຮຽນຂອງນັກຮຽນ.

**ເງື່ອນໄຂສຳຄັນເພື່ອໃຫ້ບັນລຸໄດ້ 8 ຜົນໄດ້ຮັບລະດັບສູງ**

ເພື່ອໃຫ້ແຕ່ລະຜົນໄດ້ຮັບລະດັບສູງ 8 ຜົນໄດ້ຮັບທີ່ໄດ້ກຳນົດໄວ້ມີຜົນສຳເລັດ, ພາກທີ II: ແຜນຂອງບັນດາຂະແໜງການຍ່ອຍຕ່າງໆ ໄດ້ກຳນົດບັນດາຍຸດທະສາດ ແລະ ວຽກຈຸດສຸມທີ່ຈຳເປັນ ເພື່ອໄປສະໜັບສະໜູນແກ່ເປົ້າໝາຍລວມຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2012-2025. ເຖິງຢ່າງໃດກໍຕາມ, ອາດເປັນໄປໄດ້ຍາກ ທີ່ຈະສາມາດຈັດຕັ້ງປະຕິບັດໄດ້ທັງໝົດບັນດາກິດຈະກຳທີ່ໄດ້ກຳນົດໄວ້ ຖ້າຫາກສ່ວນແບ່ງງົບປະມານຂອງລັດຖະບານໃຫ້ການສຶກສາຍັງຢູ່ໃນລະດັບເກົ່າຄືກັນກັບໄລຍະແຜນປີ 2016-20. ງົບປະມານການຊ່ວຍເຫຼືອທາງການເພື່ອການພັດທະນາ ຄາດຄະເນວ່າຈະບໍ່ເພີ່ມຂຶ້ນໄລຍະແຕ່ນີ້ຮອດປີ 2025. ດັ່ງນັ້ນ, ຖ້າຕ້ອງການຢາກບັນລຸໄດ້ບັນດາ 8 ຜົນໄດ້ຮັບລະດັບສູງນີ້ ຈຶ່ງມີຄວາມຈຳເປັນຕ້ອງເພີ່ມສ່ວນແບ່ງງົບປະມານບໍລິຫານປົກກະຕິທີ່ບໍ່ແມ່ນເງິນເດືອນຂອງລັດຖະບານ ໃຫ້ຂະແໜງການສຶກສາ ແລະ ກິລາ ໃຫ້ຫຼາຍຂຶ້ນ. ດ້ວຍເຫດຜົນນີ້, ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຈຶ່ງໄດ້ປະກອບມີຂໍ້ໜຶ່ງ (ຄື ຂໍ້ 7.1.2) ທີ່ໄດ້ກຳນົດນະໂຍບາຍການໃຊ້ຈ່າຍ ແລະ ສະເໜີສອງສົມມຸດຖານທີ່ເປັນໄປໄດ້ ສຳລັບແຜນການເງິນຄື: ສົມມຸດຖານທີ່ການເງິນຍັງຢູ່ໃນລະດັບເດີມ ແລະ ສົມມຸດຖານທີ່ມີການຍົກສູງປັບຄຸນນະພາບການສຶກສາ. ໄດ້ມີໝາຍເຫດ ຕໍ່ກັບບາງຜົນໄດ້ຮັບລະດັບກາງວ່າ: ຖ້າຢາກບັນລຸຜົນໄດ້ຮັບດັ່ງກ່າວ, ການສະໜອງງົບປະມານໃນອານາຄົດ ຕ້ອງສອດຄ່ອງກັບສົມມຸດຖານທີ່ມີການຍົກສູງປັບປຸງຄຸນນະພາບການສຶກສາ. ອີງຕາມບູລິມະສິດທີ່ໄດ້ຮັບຮອງແລ້ວ ໃນຂໍ້ 3.3. ທັງໝົດນີ້ ບໍ່ໄດ້ໃຊ້ກັບຜົນໄດ້ຮັບລະດັບກາງໃດໆ ທີ່ກ່ຽວຂ້ອງກັບການສຶກສາຊັ້ນປະຖົມ.

## 6.1 ຜົນໄດ້ຮັບລະດັບສູງທີ 1:

**ຈຳນວນນັກຮຽນທີ່ຈົບຈາກ ອະນຸບານຈົນຮອດມັດທະຍົມຕອນປາຍ ລວມທັງການສຶກສານອກໂຮງຮຽນເພີ່ມຂຶ້ນພ້ອມທັງມີຜົນໄດ້ຮັບດ້ານການຮຽນຮູ້ທີ່ດີຂຶ້ນ, ໂດຍສະເພາະແມ່ນການຮູ້ໜັງສື ແລະ ທັກສະການຄິດໄລ່ເລກ, ທັກສະສັດຕະວັດທີ 21[11] ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ.**

### 6.1.1 ຫຼັກການ ແລະ ເຫດຜົນ

ການທົບທວນເຄິ່ງສະໄໝແຜນພັດທະນາການສຶກສາ ແລະ ກິລາ 2016-2020 ໄດ້ພົບວ່າ ຄວາມແຕກໂຕນຍັງມີຢູ່ໃນການເຂົ້າຮຽນ ແລະ ຜົນຂອງການຮຽນ ໂດຍອີງໃສ່ຂໍ້ມູນດ້ານເພດ, ຊົນເຜົ່າ, ຄວາມພິການ, ທີ່ຕັ້ງ ແລະ ອື່ນໆ. ດັ່ງນັ້ນ, ຕ້ອງໄດ້ເອົາໃຈໃສ່ຕື່ມ ຕໍ່ບັນດາກຸ່ມດ້ອຍໂອກາດດັ່ງກ່າວນີ້ ເພື່ອປັບປຸງລະດັບການເຂົ້າຮຽນ ແລະ ຜົນຂອງການຮຽນ. ການທົບທວນເຄິ່ງສະໄໝຍັງໄດ້ບັນທຶກໄວ້ວ່າ ນັກຮຽນຊົນເຜົ່າທີ່ຕ້ອງການຜ່ານການສຶກສາກ່ອນໄວຮຽນຫຼາຍທີ່ສຸດນັ້ນ ມີໂອກາດນ້ອຍທີ່ສຸດໃນການເຂົ້າຮຽນໃນຫຼັກສູດການສຶກສາກ່ອນໄວຮຽນ ແລະ ໃນຂະນະດຽວກັນ ອັດຕາການຈົບຊັ້ນປະຖົມໄດ້ຮັບການປັບປຸງດີຂຶ້ນ, ອັດຕາການເລື່ອນຊັ້ນເຂົ້າຮຽນຊັ້ນມັດທະຍົມຕົ້ນຫຼຸດລົງ ແລະ ອັດຕາການປະລະເພີ່ມຂຶ້ນ. ຄຳຄິດເຫັນຈາກກອງປະຊຸມປຶກສາຫາລືຂັ້ນແຂວງ (ສກຂ, ສກມ, ຜູ້ອຳນວຍການໂຮງຮຽນ ແລະ ນັກຮຽນ) ຊີ້ໃຫ້ເຫັນວ່າ ນັກຮຽນຂາດຄວາມສົນໃຈຕໍ່ການເຂົ້າຮຽນຊັ້ນມັດທະຍົມເພີ່ມຂຶ້ນ ຍ້ອນຮູ້ວ່າຈະບໍ່ມີໂອກາດໄດ້ເຮັດວຽກເວລາຮຽນຈົບ. ນັກຮຽນທີ່ເປັນລຸ້ນເອື້ອຍລຸ້ນອ້າຍ ຫຼື ພີ່ນ້ອງທີ່ຮຽນຈົບຊັ້ນມັດທະຍົມຕົ້ນກໍກັບໄປເຮັດວຽກນຳຄອບຄົວພໍ່ແມ່ ຊຶ່ງສະແດງໃຫ້ເຫັນວ່າການເຂົ້າຮຽນມັດທະຍົມຕົ້ນແມ່ນຂາດສິ່ງຈູງໃຈ. ອີງຕາມຂໍ້ມູນສະຖິຕິສົກຮຽນ 2018-2019 ໃຫ້ຮູ້ວ່າ ໃນຈຳນວນນັກຮຽນທີ່ເຂົ້າຮຽນ ຊັ້ນ ປ.1 ມີ 83% ລອດເຫຼືອຮອດຂັ້ນ ປ.5, 51% ລອດເຫຼືອຮອດປີສຸດທ້າຍຂອງມັດທະຍົມຕົ້ນ ແລະ 33% ລອດເຫຼືອຮອດ

---

[11] ທັກສະການແກ້ໄຂບັນຫາ, ການຮ່ວມມື ແລະ ການສື່ສານ, ຄວາມຄິດສ້າງສັນ ແລະ ນະວັດຕະກຳ, ສື່ມວນຊົນຂໍ້ມູນຂ່າວສານ ແລະ ການຮູ້ເຕັກໂນໂລຍີ, ການຮູ້ໄອຊີທີ, ຄວາມສາມາດທາງດ້ານສັງຄົມ ແລະ ວັດທະນະທຳນານາຊາດ, ຄວາມຮັບຜິດຊອບສ່ວນບຸກຄົນ, ລະບຽບຕົນເອງ ແລະ ການລິເລີ່ມ, ທັກສະດ້ານສະຕິປັນຍາ.

ປີສຸດທ້າຍຂອງຊັ້ນມັດທະຍົມປາຍ. ນັກຮຽນຍິງຮຽນດີກວ່ານັກຮຽນຊາຍໃນທຸກໆຊັ້ນຮຽນ. ເມື່ອຄິດໄລ່ແລ້ວກໍຈະເທົ່າກັບການລົງທຶນ 25 ປີ ຕໍ່ກັບນັກຮຽນຜູ້ໜຶ່ງທີ່ຮຽນຈົບຊັ້ນມັດທະຍົມຕອນປາຍ, ຊຶ່ງມັນສະແດງເຖິງຄວາມບໍ່ມີປະສິດທິພາບຂອງລະບົບການສຶກສາ. ນີ້ແມ່ນຄວາມຈຳເປັນອັນຮີບດ່ວນ ທີ່ຕ້ອງປັບປຸງປະສິດທິພາບພາຍໃນຂອງລະບົບການຮຽນ-ການສອນໃນໂຮງຮຽນ ໃນເງື່ອນໄຂທີ່ມີຂາດເຂີນທາງດ້ານການເງິນ.

ການທົບທວນກາງສະໄໝໄດ້ສະແດງໃຫ້ເຫັນວ່າ ຜົນການຮຽນວິຊາພາສາລາວ ແລະ ຄະນິດສາດຕ່ຳ ໂດຍອີງໃສ່ຜົນການປະເມີນຜົນການຮຽນຂອງນັກຮຽນ ປ.3 ໃນປີ 2017, ມ.4 ໃນປີ 2019 ແລະ ການສຶກສາຂອງທະນາຄານໂລກໃນປີ 2016 ກໍໄດ້ພົບວ່າ ຄູປະຖົມມີຄວາມຮູ້ພຽງແຕ່ປະມານເຄິ່ງໜຶ່ງຂອງເນື້ອໃນບົດຮຽນທີ່ພວກເຂົາສອນ. ເພື່ອປັບປຸງຜົນການຮຽນ, ປັດຈຸບັນນີ້ ກຳລັງນຳໃຊ້ຫຼັກສູດໃໝ່ ສຳລັບຫ້ອງກຽມປະຖົມ 1 ປີ, ຫຼັກສູດຊັ້ນປະຖົມສຶກສາ ແລະ ມັດທະຍົມສຶກສາ ແລະ ຄູອາຈານກໍ່ໄດ້ຮັບການຝຶກອົບຮົມໃນການຈັດຕັ້ງປະຕິບັດ. ມີຄຳເຫັນຈາກກອງປະຊຸມປຶກສາຫາລືໃນລະດັບທ້ອງຖິ່ນວ່າ ຫຼັກສູດການຮຽນໃນຊັ້ນປະຖົມຂັ້ນຕົ້ນ (ປ.1 ແລະ ປ.2) ແມ່ນມີຫຼາຍວິຊາໂພດ, ດັ່ງນັ້ນ ຖ້າຢາກປັບປຸງຜົນການຮຽນຂອງນັກຮຽນໃຫ້ດີຂຶ້ນ ຕ້ອງໄດ້ເອົາໃຈໃສ່ ແລະ ເພີ່ມເວລາໃນການສິດສອນພາສາລາວ ແລະ ຄະນິດສາດໃຫ້ຫຼາຍຂຶ້ນ.

ກະຊວງສຶກສາທິການ ແລະ ກິລາ ໄດ້ຮັບຮູ້ວ່າ ຄ່າໃຊ້ຈ່າຍໃນການນຳໃຊ້ຫຼັກສູດໃໝ່ແມ່ນສູງກວ່າ ຄ່າໃຊ້ຈ່າຍໃນການພັດທະນາຫຼັກສູດຕົວຈິງ. ການສະໜອງປຶ້ມຕຳລາຮຽນ, ອຸປະກອນຮັບໃຊ້ການຮຽນ-ການສອນ ແລະ ຄູ່ມືຄູໃໝ່ ເຮັດໃຫ້ກະຊວງສຶກສາທິການ ແລະ ກິລາ ຕ້ອງໄດ້ມີຄ່າໃຊ້ຈ່າຍຢ່າງຫຼວງຫຼາຍ. ເຊັ່ນດຽວກັນ, ຄ່າໃຊ້ຈ່າຍສຳລັບການຝຶກອົບຮົມຄູໃນການນຳໃຊ້ຫຼັກສູດໃໝ່ ແລະ ວິທີການສິດສອນໃໝ່ ແລະ ການບໍລິຫານການປ່ຽນແປງທີ່ຈຳເປັນເພື່ອຊ່ວຍໃຫ້ພວກເຂົາຍອມຮັບວິທີການໃໝ່, ທັງໝົດນີ້ ເຮັດໃຫ້ກະຊວງສຶກສາທິການ ແລະ ກິລາ ຕ້ອງຮັບພາລະຄ່າໃຊ້ຈ່າຍຢ່າງມະຫາສານ.

ວິທີການສິດສອນແບບໃໝ່ ໄດ້ຖືກນຳໃຊ້ເພື່ອຊ່ວຍນັກຮຽນຜູ້ທີ່ໃຊ້ພາສາລາວເປັນພາສາທີສອງ. ການປະເມີນຜົນການຮຽນຂອງນັກຮຽນ ມ.4 ໃນປີ 2019 ໄດ້ສະແດງໃຫ້ເຫັນວ່າ ຜົນການຮຽນພາສາລາວ, ຄະນິດສາດ ແລະ ວິທະຍາສາດຕ່ຳ ຊຶ່ງສະແດງໃຫ້ເຫັນເຖິງຜົນກະທົບສະສົມ ຈາກຄຸນນະພາບຂອງການສຶກສາຊັ້ນປະຖົມທີ່ຕ່ຳ. ປັດຈຸບັນນີ້ ໃນທົ່ວຊັ້ນປະຖົມສຶກສາ, ມີ 27% ຂອງຫ້ອງຮຽນ ແມ່ນມີການສອນຫ້ອງຄວບ ຊຶ່ງມັນເປັນສິ່ງທ້າທາຍເພີ່ມເຕີມໃຫ້ແກ່ຄູສອນ ແລະ ນັກຮຽນ. ເພື່ອຮັບປະກັນ ແລະ ໃຊ້ປະໂຫຍດຈາກການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ, ຜູ້ທີ່ຈົບການສຶກສາຊັ້ນມັດທະຍົມ ມີຄວາມຈຳເປັນຕ້ອງມີຄວາມສາມາດດ້ານການຮູ້ໜັງສື ແລະ ການຄິດໄລ່ເລກທີ່ຈຳເປັນ ເພື່ອໃຫ້ສາມາດຮັບມືກັບທັກສະສັດຕະວັດທີ 21. ທັງໝົດນີ້ ຈະຮຽກຮ້ອງໃຫ້ມີການປັບປຸງວິທີການສະໜອງ ການສຶກສາຊັ້ນມັດທະຍົມຕອນຕົ້ນພາກບັງຄັບ ໂດຍໃຫ້ມີການກຳນົດນະໂຍບາຍ ແລະ ຍຸດທະສາດ ທີ່ຈະຊ່ວຍເພີ່ມປະສິດທິຜົນດ້ານຄ່າໃຊ້ຈ່າຍ ແລະ ປະສິດທິພາບຂອງການສະໜອງການສຶກສາ. ພ້ອມດຽວກັນນີ້ ກໍຮຽກຮ້ອງໃຫ້ມີການປັບປຸງການລົງທຶນໃສ່ວຽກງານດັ່ງກ່າວ ເພື່ອປັບປຸງຜົນການຮຽນໃນທົ່ວປະເທດ, ໂດຍສະເພາະໃນເມືອງທີ່ດ້ອຍໂອກາດ.

### 6.1.2 ພາກສ່ວນຮັບຜິດຊອບ

ຜົນສຳເລັດໃນການຈັດຕັ້ງປະຕິບັດຜົນໄດ້ຮັບລະດັບສູງ ທີ່ມີລັກສະນະດ້ານຍຸດທະສາດນີ້ ແມ່ນຄວາມຮັບຜິດຊອບຮ່ວມກັນຂອງກົມການສຶກສາກ່ອນໄວຮຽນ, ກົມສາມັນສຶກສາ, ກົມສ້າງຄູ, ກົມການສຶກສານອກໂຮງຮຽນ ສູນການສຶກສາຮຽນຮ່ວມ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສູນຄົ້ນຄວ້າ ແລະ ປະເມີນຜົນ) ແລະ ສູນປະກັນຄຸນນະພາບການສຶກສາ.

### 6.1.3 ຜົນໄດ້ຮັບລະດັບກາງ ແລະ ນະໂຍບາຍ.

**ຜົນໄດ້ຮັບລະດັບກາງທີ 1.1: ຫຼັກສູດສະບັບປັບປຸງ ໄດ້ຮັບການຈັດຕັ້ງປະຕິບັດໃນທຸກຊັ້ນຮຽນ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ຄະນະກຳມະການຮັບຮອງຫຼັກສູດ ຈະຮັບຮອງສື່ການຮຽນໃໝ່ທັງໝົດ (ປຶ້ມແບບຮຽນ, ຄູ່ມືຄູ, ອຸປະກອນຮັບໃຊ້ການຮຽນ-ການສອນຕ່າງໆ) ລວມທັງຄວາມສອດຄ່ອງກັບການສຶກສາຮຽນຮ່ວມ ແລະ ບົດບາດຍິງ-ຊາຍ ກ່ອນຈະຈັດພິມ, ແຈກຢາຍ ແລະ ນຳໃຊ້ໃນຫຼັກສູດໃໝ່;
- ປະເມີນປະສິດທິຜົນຂອງວິທີການຕ່າງໆ ໃນການປັບປຸງຫຼັກສູດພາສາລາວສຳລັບຊັ້ນປະຖົມຂັ້ນຕົ້ນ, ໂດຍສະເພາະສຳລັບນັກຮຽນທີ່ບໍ່ເວົ້າພາສາລາວເປັນພາສາແມ່ ເພື່ອນຳສະເໜີໃຫ້ລັດຖະມົນຕີອະນຸມັດວິທີການທີ່ເປັນເອກະພາບ ເພື່ອສອນພາສາລາວໃນຫ້ອງກຽມປະຖົມ ແລະ ຊັ້ນປະຖົມຂັ້ນຕົ້ນ ມີຄວາມເຂັ້ມແຂງ;
- ທົບທວນຈຳນວນວິຊາຮຽນ ແລະ ຊົ່ວໂມງຮຽນຂອງແຕ່ລະວິຊາ ໃນຊັ້ນປະຖົມປີທີ 1 ແລະ ປີທີ 2;
- ກວດກາເບິ່ງຄວາມສອດຄ່ອງລະຫວ່າງຫຼັກສູດໃນປີສຸດທ້າຍຂອງຊັ້ນປະຖົມ ແລະ ປີທຳອິດຂອງຊັ້ນມັດທະ ຍົມສຶກສາ ແລະ ຮັບປະກັນຄວາມສອດຄ່ອງລະຫວ່າງຫຼັກສູດຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນ. ບັນດາຄູ່ຮ່ວມພັດທະນາຕ່າງໆທີ່ກຳລັງເຮັດວຽກຮ່ວມກັບສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໃນການປັບປຸງຫຼັກສູດລະດັບຕ່າງໆ ຈະປະສານງານກັນ ເພື່ອຮັບປະກັນຄວາມຕໍ່ເນື່ອງລະຫວ່າງຫຼັກສູດຊັ້ນປະຖົມ ແລະ ມັດທະຍົມສຶກສາ;
- ການສະເໜີປ່ຽນແປງຫຼັກສູດບາງວິຊາໃນຊັ້ນມັດທະຍົມຕອນຕົ້ນ ກໍ່ຈະອີງໃສ່ຫຼັກສູດໃໝ່ ປ.5 ສຳລັບວິຊາດຽວກັນ;
- ກະຊວງສຶກສາທິການ ແລະ ກິລາ ຈະຕ້ອງມີການວິເຄາະເຖິງຜົນປະໂຫຍດດ້ານຄ່າໃຊ້ຈ່າຍທີ່ສົມບູນແບບກ່ຽວກັບຜົນກະທົບໂດຍກົງຕໍ່ຜົນການຮຽນຂອງນັກຮຽນ ເມື່ອສົມທຽບກັບຄ່າໃຊ້ຈ່າຍດ້ານການເງິນ ແລະ ການນຳໃຊ້ຄົນ ໃນການຈັດຕັ້ງປະຕິບັດຫຼັກສູດໃໝ່ ກ່ອນທີ່ຈະພິຈາລະນາປັບປຸງຫຼັກສູດໃໝ່ ນອກຈາກທີ່ມີໃນແຜນປະຈຸບັນນີ້. ຜົນຂອງການວິເຄາະຜົນປະໂຫຍດດ້ານຄ່າໃຊ້ຈ່າຍດັ່ງກ່າວ ຕ້ອງນຳສະເໜີຕໍ່ກະຊວງການເງິນ ເພື່ອແນໃສ່ຮັບປະກັນໃຫ້ໄດ້ຊັບພະຍາກອນການເງິນທີ່ຈຳເປັນເພີ່ມເຕີມ.

**ຜົນໄດ້ຮັບລະດັບກາງທີ 1.2: ຜົນການຮຽນຂອງນັກຮຽນ ປ.3, ປ.5, ມ.4 ແລະ ມ.6 ໄດ້ຮັບການປັບປຸງດີຂຶ້ນ.**

ຢາກບັນລຸໄດ້ຜົນໄດ້ຮັລະດັບກາງດັ່ງກ່າວ ຄວາມຕ້ອງການງົບປະມານທີ່ສອດຄ່ອງກັບສົມມຸດຖານດ້ານການເງິນ "ຍົກສູງຄຸນນະພາການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອຈາກພາຍນອກ ຕ້ອງສຸມໃສ່ຜົນໄດ້ຮັບລະດັບກາງນີ້ເປັນພິເສດ.

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ປຶ້ມຄູ່ມືຄູຈະຕ້ອງໄດ້ຮັບການປັບປຸງໃໝ່ ເພື່ອໃຫ້ປະກອບມີວິທີການປະເມີນແບບງ່າຍດາຍ ແລະ ພາກປະຕິບັດທີ່ຄູສາມາດນຳໃຊ້ໃນຫ້ອງຮຽນ ລວມທັງສຳລັບເດັກພິການ ແລະ ເດັກທີ່ໃຊ້ພາສາລາວເປັນພາສາທີສອງຂອງເຂົາເຈົ້າ. ພັດທະນາ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານທີ່ມີມູນຄ່າໃຊ້ຈ່າຍ ເພື່ອຝຶກອົບຮົມຄູໃຫ້ນຳໃຊ້ເຕັກນິກການປະເມີນດັ່ງກ່າວ.
- ແຜນງົບປະມານ ແລະ ແຜນປະຕິບັດງານ ເພື່ອດຳເນີນ ການປະເມີນຜົນການຮຽນຮູ້ຂອງນັກຮຽນ ໃນຂັ້ນ ປ.3, ປ.5, ມ.4 ແລະ ມ.6 ຈະຖືກພັດທະນາ ແລະ ຈັດຕັ້ງປະຕິບັດ.
- ມາດຕະຖານຕ່ຳສຸດສຳລັບການສອບເສັງ ມ.4 ໄດ້ຮັບການພັດທະນາຂຶ້ນ ລວມທັງໃຫ້ມີຄວາມຍືດຢຸ່ນສຳລັບນັກຮຽນທີ່ມີຄວາມຕ້ອງການພິເສດ.
- ລະບົບການສອບເສັງຢູ່ຂັ້ນ ປ.5 ຕ້ອງໄດ້ຮັບການປັບປຸງໃຫ້ເຂັ້ມແຂງ ເພື່ອໃຫ້ຂະບວນການສອບເສັງເປັນລະບົບ ແລະ ເປັນມາດຕະຖານ ທີ່ສາມາດຈັດຕັ້ງປະຕິບັດ ແລະ ນຳໃຊ້ເພື່ອສົມທຽບຜົນການຮຽນຂອງນັກ

ຮຽນໃນທົ່ວເມືອງ. ຖ້າປະສົບຜົນສໍາເລັດ, ຜົນຂອງການສອບເສັງດັ່ງກ່າວອາດສາມາດນໍາໃຊ້ເພື່ອປ່ຽນແທນການສອບເສັງລະດັບຊາດທີ່ມີຄ່າໃຊ້ຈ່າຍແພງທີ່ນໍາໃຊ້ຢູ່ໃນປັດຈຸບັນ.

**ຜົນໄດ້ຮັບລະດັບກາງທີ 1.3: ອັດຕາການເຂົ້າຮຽນໃໝ່ ແລະ ອັດຕາການເລື່ອນຂັ້ນໃນທຸກລະດັບເພີ່ມຂຶ້ນ ແນໃສ່ເຮັດໃຫ້ອັດຕາການຈົບຊັ້ນເພີ່ມຂຶ້ນ.**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ຄະນະກໍາມະການຈັດສັນຄູ ແລະ ຄະນະກໍາມະການແຜນການ ແລະ ການເງິນ ເຮັດໜ້າທີ່ອັນສໍາຄັນໃນການກໍານົດບູລິມະສິດ ເພື່ອຂະຫຍາຍຫ້ອງກຽມປະຖົມ 1 ປີ (ຫຼື ຂະຫຍາຍການສຶກສາກ່ອນໄວຮຽນຮູບແບບ ອື່ນໆ) ແທນການຂະຫຍາຍໂຮງຮຽນອະນຸບານ. ຊຶ່ງລວມທັງການໃຫ້ຂໍ້ແນະນໍາແກ່ຂັ້ນແຂວງກ່ຽວກັບວິທີການຈັດບູລິມະສິດການຂະຫຍາຍຫຼັກສູດດັ່ງກ່າວ ໃຫ້ກັບບັນດາ 40 ເມືອງບູລິມະສິດທີ່ດ້ອຍໂອກາດ. ການດໍາເນີນວຽກດັ່ງກ່າວຮຽກຮ້ອງໃຫ້ປັບປຸງດ້ານນິຕິກໍາ ເພື່ອສ້າງຄວາມເຂັ້ມແຂງໃຫ້ບັນດາຄະນະກໍາມະການເຫຼົ່ານີ້ ໂດຍສະເພາະໃນລະດັບທ້ອງຖິ່ນ.
- ສົ່ງເສີມວິທີການທີ່ມີຫົວຄິດປະດິດສ້າງໃນການສະໜອງການສຶກສາກ່ອນໄວຮຽນ ພ້ອມດ້ວຍການວິເຄາະຜົນປະໂຫຍດດ້ານຄ່າໃຊ້ຈ່າຍຂອງວິທີການດັ່ງກ່າວ ເພື່ອເຮັດໃຫ້ມີຄວາມຍືນຍົງດ້ານການເງິນ.
- ທົບທວນວິທີການຂະຫຍາຍໂອກາດເຂົ້າຮຽນໃນຊັ້ນມັດທະຍົມຕົ້ນ ລວມທັງໂຄງສ້າງ 5+4+3. ການທົບທວນດັ່ງກ່າວນີ້ ຈະກໍານົດໃຫ້ມີຂໍ້ສະເໜີໃຫ້ແກ່ລັດຖະມົນຕີ ແລະ ໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ ກ່ຽວກັບປ່ຽນແປງທີ່ຕ້ອງການ ເພື່ອເພີ່ມການເຂົ້າຮຽນຂອງນັກຮຽນໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ. ອີງຕາມຜົນຂອງການທົບທວນດັ່ງກ່າວ, ນິຕິກໍາທີ່ຈໍາເປັນອາດຈະໄດ້ຮັບການພັດທະນາຂຶ້ນມາ ເພື່ອສ້າງໂຄງປະກອບການສຶກສາຊັ້ນປະຖົມ ແລະ ມັດທະຍົມ ພ້ອມທັງກໍານົດວິທີການສະໜອງການສຶກສາຊັ້ນມັດທະຍົມຕົ້ນ ໂດຍສະເພາະໃນບັນດາໂຮງຮຽນນ້ອຍໃນເຂດຊົນນະບົດ.
- ຄະນະກໍາມະການແຫ່ງຊາດເພື່ອການຮຽນຮູ້ຕະຫຼອດຊີວິດ ຈະໄດ້ຮັບການສ້າງຕັ້ງຂຶ້ນໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ເພື່ອເຮັດໜ້າທີ່ໃນການເຊື່ອມໂຍງກັນລະຫວ່າງການສຶກສາໃນໂຮງຮຽນ ແລະ ການສຶກສານອກໂຮງຮຽນ. ພາລະບົດບາດສໍາລັບຄະນະກໍາມະການນີ້ຈະຖືກພັດທະນາຂຶ້ນມາ ພ້ອມທັງໄດ້ຮັບອະນຸມັດເພື່ອຈັດຕັ້ງປະຕິບັດ.
- ດໍາລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດ ຈະໄດ້ຮັບການຈັດຕັ້ງປະຕິບັດ ໂດຍໃຫ້ກວມເອົາການສຶກສາກ່ອນໄວຮຽນ, ປະຖົມສຶກສາ ຈົນຮອດການສຶກສາຊັ້ນສູງ, ການສຶກສານອກໂຮງຮຽນ ແລະ ການຮຽນຮູ້ຕາມອັດທະຍາໄສ. ມາດຕະຖານດ້ານຄຸນນະພາບຈະຖືກພັດທະນາຂຶ້ນ ເພື່ອຮັບຮູ້ທຸກຮູບແບບຂອງການຮຽນເພື່ອອອກໃບຢັ້ງຢືນໃຫ້ ພ້ອມດ້ວຍການທົບທວນລະບົບການຮັບຮອງທີ່ມີຢູ່ແລ້ວ ເພື່ອຮັບຮູ້ການຮຽນທີ່ໄດ້ຮັບຈາກແຫຼ່ງຕ່າງໆ, ລວມທັງປະສົບການການຮຽນຮູ້ຕາມອັດທະນາໄສຂອງຜູ້ຮຽນ, ໂດຍອີງໃສ່ຂອບຄຸນວຸດທິຂອງສາກົນ ແລະ ພາກພື້ນ.
- ປະຕິບັດຕາມຂໍ້ຕົກລົງໃຫ້ກະຊວງສຶກສາທິການ ແລະ ກິລາ ທີ່ຈະຮັບຜິດຊອບໂຄງການອາຫານໃນໂຮງຮຽນທີ່ສະໜັບສະໜູນໂດຍອົງການອາຫານໂລກ, ນະໂຍບາຍເພື່ອຈັດຕັ້ງປະຕິບັດແຜນງານອາຫານ ແລະ ໂພຊະນາການໃນໂຮງຮຽນໃນແຕ່ລະຂັ້ນ ໂດຍຮັບປະກັນຄວາມຍືນຍົງທາງດ້ານການເງິນ ຕ້ອງໄດ້ຮັບການພັດທະນາ, ພ້ອມທັງສຶກສາເຖິງປະສິດທິຜົນທາງດ້ານຄ່າໃຊ້ຈ່າຍ ຂອງແຜນງານອາຫານໃນໂຮງຮຽນ. ນະໂຍບາຍດັ່ງກ່າວ ຕ້ອງແນໃສ່ນັກຮຽນທີ່ດ້ອຍໂອກາດ, ອາໄສຢູ່ໃນເຂດທີ່ຂາດເຂີນອາຫານ ແລະ ພິຈາລະນາເຖິງຜົນການຄົ້ນຄວ້າຕ່າງໆ ທີ່ອົງການອາຫານໂລກໄດ້ສຶກສາຜ່ານມາ ໃນຫົວຂໍ້ຄວາມບໍ່ປອດໄພດ້ານອາຫານຢູ່ພື້ນທີ່ ທີ່ອົງການອາຫານໂລກຈັດຕັ້ງປະຕິບັດແຜນງານອາຫານໃນໂຮງຮຽນ. ໜຶ່ງໃນການຄົ້ນຄວ້າທີ່ດໍາ

ເນີນໂດຍອີງການອາຫານໂລກ ແມ່ນແຜນງານອາຫານໃນໂຮງຮຽນມີການກວມລວມຫຼາຍໜ້ອຍຊໍ່າໃດ ແລະ ການສຶກສາຄົ້ນຄວ້າດັ່ງກ່າວພົບວ່າພວກເຂົາຕ້ອງໄດ້ເຮັດຫຼາຍຢ່າງ ເພື່ອຮັບປະກັນວ່າເດັກພິການທີ່ດ້ອຍໂອກາດສ່ວນໃຫຍ່ໃຫ້ໄດ້ເຂົ້າເຖິງແຜນງານອາຫານໃນໂຮງຮຽນ. ຕ້ອງດຳເນີນການປະເມີນປຽບທຽບກ່ຽວກັບຜົນກະທົບທີ່ກ່ຽວຂ້ອງກັບການສືບຕໍ່ເຂົ້າຮຽນຂອງນັກຮຽນ ລະຫວ່າງການສະໜອງອາຫານໃຫ້ນັກຮຽນເມື່ອທຽບກັບການໃຫ້ເງິນສົດ ຫຼື ການສະໜອງຊັບພະຍາກອນອື່ນໆໃຫ້ນັກຮຽນ.

- ຄວາມສຳຄັນຂອງແຜນງານນ້ຳສະອາດ ແລະ ສຸຂະອະນາໄມ ຕໍ່ການສືບຕໍ່ຮຽນຂອງນັກຮຽນໃນໂຮງຮຽນໄດ້ຖືກຮັບຮູ້ ແລະ ນຳໃຊ້ຂອບມາດຕະຖານຄຸນນະພາບຂັ້ນພື້ນຖານ. ຫ້ອງການສຶກສາທິການ ແລະ ກິລາເມືອງ ຕ້ອງຮັບຜິດຊອບໃນການລະດົມຊັບພະຍາກອນຈາກແຂວງ, ເມືອງ ແລະ ຊຸມຊົນ ເພື່ອຮັບປະກັນວ່າໂຮງຮຽນທຸກແຫ່ງຕ້ອງມີນ້ຳສະອາດໃຊ້ ແລະ ມີຫ້ອງນ້ຳທີ່ແຍກ ຍິງ-ຊາຍ ພ້ອມທັງເຂົ້າໃຈກ່ຽວກັບການປົກປັກຮັກສາໃຫ້ສາມາດນຳໃຊ້ໄດ້ຕະຫຼອດ. ແບບສອບຖາມຂອງສູນສະຖິຕິການສຶກສາ ຕ້ອງໄດ້ຮັບການປັບປຸງ ເພື່ອໃຫ້ກວມເອົາຂໍ້ມູນທີ່ຈຳເປັນສຳລັບນ້ຳສະອາດ ແລະ ສຸກຂະອານາໄມ. ການແຜ່ລະບາດຂອງ COVID-19 ໄດ້ຊີ້ໃຫ້ເຫັນເຖິງຄວາມສຳຄັນ ທີ່ໂຮງຮຽນທຸກແຫ່ງຕ້ອງມີນ້ຳສະອາດໃຊ້ ແລະ ການສົ່ງເສີມການອະນາໄມທີ່ຖືກຕ້ອງເປັນມາດຕະການປ້ອງກັນ ແລະ ຄວບຄຸມທີ່ສຳຄັນ.
- ແຕ່ງຕັ້ງໜ່ວຍງານວິຊາການຮ່ວມລະຫວ່າງກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສາທາລະນະສຸກ ແລະ ຄູ່ຮ່ວມພັດທະນາ ເພື່ອເຮັດໜ້າທີ່ໃນການກວດກາ, ກຳນົດ ແລະ ສະໜອງການບໍລິການສຳລັບເດັກພິການ.
- ການກຽມຄວາມພ້ອມຕໍ່ເຫດສຸກເສີນ ແລະ ການປັບຕົວຕໍ່ຄວາມສ່ຽງດ້ານໄພພິບັດໃນຂະແໜງການສຶກສາ ແລະ ກິລາ ເພື່ອໃຫ້ລົບກວນການຮຽນໜ້ອຍທີ່ສຸດ ຕ້ອງໄດ້ຮັບການທົບທວນ ແລະ ປັບປຸງໃຫ້ເຂັ້ມແຂງໂດຍຜ່ານການຄົ້ນຄວ້າເພີ່ມເຕີມຂອງສະຖາບັນການສຶກສາຊັ້ນສູງ. ເພື່ອໃຫ້ຂໍ້ມູນການກຽມພ້ອມທີ່ດີ ກະຊວງສຶກສາທິການ ແລະ ກິລາ ຈະກະກຽມແຜນການແກ້ໄຂໄພພິບັດໃນຂະແໜງການສຶກສາ ແລະ ກິລາລວມທັງພັດທະນາ GIS ເພື່ອຕິດຕາມ ແລະ ວາງແຜນການກຽມພ້ອມຕອບໂຕ້ສຸກເສີນ ແລະ ໃຫ້ເຊື່ອມໂຍງກັບ LESMIS.
- ນະໂຍບາຍການເລື່ອນຂັ້ນແບບຕໍ່ເນື່ອງ ຈະໄດ້ຮັບການທົບທວນເພື່ອສ້າງຄວາມເຂັ້ມແຂງການຈັດຕັ້ງປະຕິບັດການບຳລຸງເພີ່ມ ທັງໃນໄລຍະການຮຽນ ຫຼື ໄລຍະພັກພາກຮຽນ ໃຫ້ນັກຮຽນທີ່ມີຜົນການຮຽນຕ່ຳ ເພື່ອເລື່ອນຂັ້ນປົກກະຕິ.
- ຄູຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບທັກສະການສິດສອນຂັ້ນພື້ນຖານ ກ່ຽວກັບວິທີການນຳໃຊ້ວິທີການປະເມີນນັກຮຽນໃນຫ້ອງຮຽນ ດັ່ງທີ່ໄດ້ລະບຸໄວ້ໃນຄູ່ມືຄູປະຖົມສະບັບປັບປຸງໃໝ່ ເພື່ອກຳນົດຄວາມຕ້ອງການ ແລະ ໃຫ້ການຊ່ວຍເຫຼືອນັກຮຽນອ່ອນ.
- ພັດທະນານະໂຍບາຍ ເພື່ອຮັບຮອງເອົານັກຮຽນທີ່ຖືພາ ແລະ ເກີດລູກແລ້ວ ໃຫ້ກັບເຂົ້າມາສືບຕໍ່ຮຽນໃນລະບົບປົກກະຕິ.
- ສຶກສາຄວາມເປັນໄປໄດ້ກ່ຽວກັບໂຄງການການສະໜອງນະໂຍບາຍການໃຫ້ທຶນກູ້ຢືມ ເພື່ອປັບປຸງອັດຕາການລອດເຫຼືອໃນຊັ້ນມັດທະຍົມຕອນປາຍ ໂດຍຜ່ານການຮ່ວມມືລະຫວ່າງລັດ-ເອກະຊົນ.
- ສົ່ງເສີມການຮຽນຮູ້ດ້ານດິຈິຕອນ ເປັນທາງເລືອກໜຶ່ງໃນການຮຽນທາງໄກ, ໂດຍສະເພາະໃນເວລາທີ່ປິດໂຮງຮຽນ ເມື່ອມີເຫດສຸກເສີນ ເພື່ອຫຼຸດຜ່ອນການລົບກວນໃນການຮຽນ.

**ຜົນໄດ້ຮັບລະດັບກາງທີ 1.4: ສົ່ງເສີມການຂະຫຍາຍຫ້ອງຝຶກອົບຮົມວິຊາຊີບ ເພື່ອພັດທະນາທັກສະໃຫ້ແກ່ນັກຮຽນທີ່ຈະຮຽນຈົບຊັ້ນມັດທະຍົມຕອນປາຍ.**

ຢາກບັນລຸໄດ້ຜົນໄດ້ຮັບລະດັບກາງນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານການເງິນ "ຍົກສູງຄຸນນະພາບການສຶກສາ" ແລະ /ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບລະດັບກາງນີ້ໂດຍສະເພາະ.

ໄດ້ມີການທົດລອງຫຼັກສູດສາມັນວິຊາຊີບຄື ສາມັນ (60%) ແລະ ວິຊາຊີບ (40%) ໃນຊັ້ນມັດທະຍົມຕອນປາຍ ຢູ່ໂຮງຮຽນກິນນອນຊົນເຜົ່າ 3 ແຫ່ງຂອງ 3 ແຂວງ ດ້ວຍຜົນສຳເລັດທີ່ໜ້າເພິ່ງພໍໃຈ. ວິຊາຊີບໄດ້ຈັດຕັ້ງສິດສອນໃນສະຖາບັນອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ດ້ວຍຫຼັກສູດທີ່ຕ່າງຈາກອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ໂດຍນຳໃຊ້ຄູຊັ້ນມັດທະຍົມຕອນປາຍ ທີ່ໄດ້ຮັບການຝຶກອົບຮົມແລ້ວໃນການສິດສອນ. ມີໂຮງຮຽນກິນນອນຊົນເຜົ່າອີກ 8 ແຫ່ງໃນ 8 ແຂວງ ສະແດງເຈດຈຳນົງໃນການຈັດຕັ້ງປະຕິບັດຫຼັກສູດປະສົມ ມັດທະຍົມຕອນປາຍ ແບບດຽວກັນນີ້ຕື່ມອີກ.

## ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ

- ປະເມີນຄວາມເຊື່ອມໂຍງລະຫວ່າງການສຶກສາວິຊາຊີບໃນຊັ້ນມັດທະຍົມຕອນປາຍ ແລະ ຫຼັກສູດອາຊີວະສຶກສາທີ່ມີຢູ່ໃນປັດຈຸບັນ ເພື່ອກຳນົດຄວາມຕ້ອງການໃນການແຍກຫຼັກສູດວິຊາຊີບອອກຕ່າງຫາກ ໃນລະດັບມັດທະຍົມຕອນປາຍ.
- ອີງໃສ່ຜົນຂອງການປະເມີນຂ້າງເທິງ, ອອກດຳລັດລັດຖະມົນຕີກ່ຽວກັບພາລະບົດບາດ ແລະ ຄວາມຮັບຜິດຊອບຂອງກົມສາມັນສຶກສາ, ກົມອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ແລະ ໂຮງຮຽນກິນນອນຊົນເຜົ່າ ເພື່ອຂະຫຍາຍຫຼັກສູດການສິດສອນຫ້ອງສາມັນວິຊາຊີບໃຫ້ໄດ້ໃນ 11 ແຂວງ ຊຶ່ງລວມທັງການນຳໃຊ້ສິ່ງອຳນວຍຄວາມສະດວກຂອງບັນດາສະຖາບັນອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບສຳລັບນັກຮຽນໃນໂຮງຮຽນກິນນອນຊົນເຜົ່າ ພ້ອມທັງຝຶກອົບຮົມຄູສາມັນ ໃຫ້ມີທັກສະການສິດສອນວິຊາຊີບໂດຍອາຈານສອນອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ.

## ຜົນໄດ້ຮັບລະດັບກາງທີ 1.5: ຫຼຸດຜ່ອນຄວາມແຕກໂຕນທາງດ້ານຊັບພະຍາກອນລະຫວ່າງເຂດທີ່ດ້ອຍໂອກາດ ແລະ ເຂດທີ່ມີໂອກາດດີກວ່າໂດຍຜ່ານການສ້າງຕັ້ງກຸ່ມໂຮງຮຽນ

ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດເອົາ 40 ເມືອງບູລິມະສິດທີ່ມີຜົນການຮຽນຕ່ຳກວ່າຄ່າສະເລ່ຍໃນທົ່ວປະເທດຕາມຕົວຊີ້ບອກທີ່ໄດ້ເລືອກເຟັ້ນແລ້ວ. ການທົບທວນເຄິ່ງສະໄໝ ຂອງແຜນພັດທະນາການສຶກສາ ແລະ ກິລາ 2016-2020 ໄດ້ກຳນົດຄວາມຕ້ອງການອັນຮີບດ່ວນ ເພື່ອຫຼຸດຜ່ອນຄວາມແຕກໂຕນໃນຜົນການຮຽນ ແຕ່ຕ້ອງໄດ້ຈັດສັນເພີ່ມດ້ານຊັບພະຍາກອນມະນຸດ ແລະ ງົບປະມານໃຫ້ແກ່ 40 ເມືອງ ຖ້າມີຄວາມຈຳເປັນຕ້ອງໄດ້ຫຼຸດຜ່ອນຄວາມແຕກໂຕນດັ່ງກ່າວ.

## ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ

- ອອກດຳລັດຂອງລັດຖະມົນຕີ ເພື່ອສ້າງຕັ້ງກຸ່ມໂຮງຮຽນໃນ 40 ເມືອງບູລິມະສິດ, ກຳນົດບຸກຄະລາກອນ ແລະ ງົບປະມານເພີ່ມສຳລັບກຸ່ມໂຮງຮຽນເຫຼົ່ານີ້ ພ້ອມທັງນຳໃຊ້ໄອຊີທີ ເພື່ອຫຼຸດຜ່ອນຄວາມແຕກໂຕນ. ກ່ອນທີ່ຈະອອກດຳລັດສະບັບນີ້, ກົມສາມັນສຶກສາ ແລະ ກົມສ້າງຄູ ຈະຕ້ອງກຳນົດວິທີການທີ່ມີປະສິດທິຜົນທາງຄ່າໃຊ້ຈ່າຍໃນການສ້າງຕັ້ງ ແລະ ນຳໃຊ້ກຸ່ມໂຮງຮຽນ.
- ຄະນະກຳມະການຈັດສັນຄູ ຈະສ້າງແຜນເພື່ອຮັບປະກັນໃຫ້ມີໂກຕາຕຳແໜ່ງລັດຖະກອນ ເພື່ອຈັດສັນໃຫ້ແກ່ 40 ເມືອງດັ່ງກ່າວ ແລະ ຄະນະກຳມະການແຜນການ ແລະ ການເງິນ ຮັບປະກັນໃຫ້ມີງົບປະມານບໍລິຫານເພື່ອຈັດສັນໃຫ້ແກ່ເມືອງດັ່ງກ່າວເຊັ່ນກັນ. ຊຶ່ງມັນຮຽກຮ້ອງໃຫ້ມີນິຕິກຳທີ່ເຂັ້ມແຂງ ສຳລັບທັງສອງຄະນະກຳມະການດັ່ງກ່າວ ໃນການຈັດສັນຊັບພະຍາກອນໃຫ້ແກ່ທ້ອງຖິ່ນ.
- ແຜນງານ "ສົ່ງເສີມການຮູ້ໜັງສື ແລະ ຄະນິດສາດ" ຈະຖືກຈັດຕັ້ງປະຕິບັດໃນ 40 ເມືອງບູລິມະສິດ.

- ທົບທວນສູດສໍາລັບການຈັດສັນງົບປະມານບໍລິຫານໃຫ້ເມືອງ ແລະ ການຈັດສັນງົບປະມານບໍລິຫານໂຮງຮຽນ ເພື່ອພິຈາລະນາຈັດສັນສ່ວນແບ່ງງົບປະມານບໍລິຫານ ແລະ ເງິນບໍລິຫານໂຮງຮຽນໃຫ້ໂຮງຮຽນໃຫ້ແກ່ເມືອງເຫຼົ່ານີ້.

### 6.2 ຜົນໄດ້ຮັບລະດັບສູງທີ 2:

**ຈຳນວນຄູ ແລະ ຜູ້ອຳນວຍການໂຮງຮຽນທີ່ມີຄວາມຮູ້ຄວາມສາມາດ ສອດຄ່ອງກັບມາດຕະຖານການສິດສອນທີ່ໄດ້ກຳນົດເພີ່ມຂຶ້ນ ເພື່ອເປັນບ່ອນອີງໃນການພັດທະນາວິຊາຊີບຂອງພວກເຂົາ ເຈົ້າ ພ້ອມທັງມີການປະເມີນການປະຕິບັດວຽກງານຢ່າງເປັນປົກກະຕິ.**

#### 6.2.1 ຫຼັກການ ແລະ ເຫດຜົນ

ຄູສອນຊັ້ນປະຖົມສຶກສາແມ່ນອ່ອນຂ້າງອ່ອນ ທັງຄວາມຮູ້ດ້ານເນື້ອໃນການສອນ ແລະ ທັກສະການສິດສອນຂອງຄູ. ໄດ້ມີການປະເມີນຜົນຂອງການຮຽນຂອງນັກຮຽນ ປ.4 ແລະ ຄູສອນ ປ.4. ການສຶກສາຄັ້ງນີ້[12] ໂດຍໄດ້ປະເມີນລະດັບຄວາມສາມາດຂອງຄູຊຶ່ງເຫັນວ່າຕ່ຳຫຼາຍ. ຄະແນນສະເລ່ຍຂອງຄູສອນ ປ.4 ແມ່ນ 49% ສໍາລັບວິຊາຄະນິດ ສາດ ແລະ 52% ສໍາລັບວິຊາພາສາລາວ, ເຊິ່ງສະແດງໃຫ້ເຫັນວ່າ ຄູມີຄວາມຮູ້ພຽງແຕ່ປະມານເຄິ່ງໜຶ່ງຂອງເນື້ອໃນທີ່ພວກເຂົາສອນ. ຄະແນນຂອງຄູກ່ຽວກັບການທົດສອບຄວາມຮູ້ວິຊາຄູຍິ່ງຕ່ຳກວ່າ, ໂດຍມີຄະແນນສະເລ່ຍ 27% ຖ້າບໍ່ມີການປັບປຸງການປະຕິບັດໜ້າທີ່ ຫຼື ການສິດສອນຂອງຄູ, ຜົນການຮຽນຂອງນັກຮຽນກໍຈະບໍ່ໄດ້ຮັບການປັບ ປຸງດີຂຶ້ນ.

ວຽກງານປະກັນຄຸນນະພາບແມ່ນມີຄວາມເຂັ້ມແຂງຂຶ້ນຕື່ມ ໂດຍໄດ້ມີການພັດທະນາມາດຕະຖານການສິດສອນ ແລະ ການປະເມີນຜົນການສິດສອນຂອງຄູ ໂດຍອີງໃສ່ມາດຕະຖານທີ່ສ້າງຂຶ້ນມານີ້. ໃນຂະນະດຽວກັນ, ສິ່ງສໍາຄັນແມ່ນຜູ້ອໍານວຍການໂຮງຮຽນ ຕ້ອງເຂົ້າໃຈພາລະບົດບາດຂອງຕົນ ແລະ ສາມາດຊ່ວຍຄູໄດ້. ຄູຝຶກຫຼັກ ແລະ ທີມງານຄູຝຶກຂັ້ນແຂວງກຳລັງໄດ້ຮັບການສ້າງຕັ້ງຂຶ້ນ ພ້ອມທັງໄດ້ຮັບການສ້າງຄວາມເຂັ້ມແຂງຂຶ້ນຕື່ມ ເພື່ອດຳເນີນການຝຶກຄູປະຈຳການ ແລະ ວາງແຜນເພື່ອສ້າງບັນດາວິທະຍາໄລຄູໃຫ້ເປັນສູນກາງໃນການກໍ່ສ້າງຄູ, ຝຶກອົບຮົມຄູປະຈຳການ ແລະ ຄູນິເທດ. ແຂວງໃດທີ່ມີມະຫາວິທະຍາໄລ/ຄະນະສຶກສາສາດ ແລະ ສະຖາບັນສ້າງຄູຕັ້ງຢູ່ນຳກັນ, ຄວນຈະມີການປັບປຸງພາລະບົດບາດ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າ ໂດຍການລວມຕົວເຂົ້າກັນ. ຫຼັກສູດສ້າງຄູກໍາລັງໄດ້ຮັບການທົບທວນໃຫ້ສອດຄ່ອງກັບຫຼັກສູດໃນໂຮງຮຽນ. ໃນຂະນະທີ່ຫຼັກສູດຊັ້ນປະຖົມໃໝ່ກຳລັງໄດ້ຮັບການພັດທະນາ ຈຶ່ງຈຳເປັນຕ້ອງຮັບປະກັນໃຫ້ຫຼັກສູດໃໝ່ຂອງປີສຸດທ້າຍຊັ້ນປະຖົມ ສອດຄ່ອງກັບຫຼັກສູດ ມ. 1 ທີ່ມີຢູ່ແລ້ວ.

ແຜນພັດທະນາການສຶກສາ ແລະ ກິລາ 2021-2025 ໄດ້ສົ່ງເສີມໃຫ້ສ້າງ ແລະ ຈັດຕັ້ງປະຕິບັດວິທີການທີ່ມີລັກສະນະຍຸດທະຍາດ ແລະ ກວມລວມດ້ານການພັດທະນາອາຊີບດ້ານການສຶກສາ. ວິທີການທີ່ມີລັກສະນະຍຸດທະສາດດັ່ງກ່າວ ຄວນກວມເອົາໄປຄົບວົງວຽນຂອງອາຊີບທັງໝົດ ຊຶ່ງລວມມີ ຄວາມດຶງດູດໃນອາຊີບຄູ, ຄວາມຮູ້ເບື້ອງຕົ້ນດ້ານສຶກສາ, ການສືບຕໍ່ຢູ່ໃນອາຊີບຄູ, ຄວາມກ້າວໜ້າດ້ານອາຊີບ ແລະ ການພັດທະນາອາຊີບແບບຕໍ່ເນື່ອງ ລວມທັງການຮ່ວມມືຊ່ວຍເຫຼືອຂອງຄູ່ຮ່ວມງານ. ຕ້ອງສຸມໃສ່ຊຸກຍູ້ຊ່ວຍເຫຼືອການພັດທະນາອາຊີບທີ່ມີລັກສະນະຕໍ່ເນື່ອງຂອງຄູ ແລະ ຜູ້ອຳນວຍການໃນຂັ້ນໂຮງຮຽນ ແລະ ທ້ອງຖິ່ນ. ບັນດາຄູນິເທດມີພາລະບົດບາດສໍາຄັນໃນວຽກງານດັ່ງກ່າວ. ດັ່ງນັ້ນ, ຈຶ່ງຮຽກຮ້ອງໃຫ້ລົງທຶນຢ່າງຫຼວງຫຼາຍ ແລະ ມີລັກສະນະຍືນຍົງ ໃສ່ການພັດທະນາຄວາມສາມາດຂອງເຂົາເຈົ້າ, ໂດຍສະເພາະແມ່ນຂີດຄວາມສາມາດ ໃນການຊ່ວຍຄູສອນຫ້ອງຄວບ, ສອນຫ້ອງ ປ.1 ແລະ ປ. 2 ທີ່ມີນັກຮຽນທີ່ບໍ່ເວົ້າພາສາລາວເປັນພາສາແມ່ ແລະ ຊ່ວຍຄູມັດທະຍົມຜູ້ທີ່ຍັງອ່ອນໃນວິຊາທີ່ເຂົາເຈົ້າສອນ. ວຽກ

[12] World Bank 2016. Lao PDR School autonomy and accountability

ນີ້ ຕ້ອງການການລົງທຶນຢ່າງຫຼວງຫຼາຍ ແລະ ມີລັກສະນະຍືນຍົງໃນການພັດທະນາຄວາມສາມາດຂອງຄູ ແລະ ຜູ້ອຳນວຍການໂຮງຮຽນໃນຂັ້ນໂຮງຮຽນ ແລະ ທ້ອງຖິ່ນໂດຍເພີ່ມງົບປະມານບໍລິຫານປົກກະຕິທີ່ບໍ່ແມ່ນເງິນເດືອນ.

### 6.2.2 ພາກສ່ວນຮັບຜິດຊອບ

ຜົນສຳເລັດໃນການຈັດຕັ້ງປະຕິບັດຜົນໄດ້ຮັບດ້ານຍຸດທະສາດນີ້ ແມ່ນເປັນຄວາມຮັບຜິດຊອບຮ່ວມກັນຂອງກົມສ້າງຄູ, ກົມສາມັນສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ສະຖາບັນພັດທະນາຜູ້ບໍລິຫານການສຶກສາ, ກົມຈັດຕັ້ງ ແລະ ພະນັກງານ ແລະ ສູນປະກັນຄຸນນະພາບການສຶກສາ.

### 6.2.3 ຜົນໄດ້ຮັບລະດັບກາງ ແລະ ນະໂຍບາຍ.

**ຜົນໄດ້ຮັບລະດັບກາງທີ 2.1: ຄູສອນມີຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດຫຼັກສູດໃໝ່ ໂດຍຜ່ານການຊ່ວຍເຫຼືອຈາກວິຊາການກຸ່ມໂຮງຮຽນ ແລະ ຄູສຶກສານິເທດ.**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ກະຊວງສຶກສາທິການ ແລະ ກິລາ ຈະທົບທວນລະບົບການສະໜັບສະໜູນຄູທີ່ມີໃນປະຈຸບັນ ເພື່ອຮອງຮັບກັບການສ້າງຕັ້ງກຸ່ມໂຮງຮຽນ ເປັນການສະໜັບສະໜູນເພີ່ມເຕີມ ລວມທັງປັບປຸງພາລະບົດບາດຄວາມຮັບຜິດຊອບລະຫວ່າງກຸ່ມໂຮງຮຽນ, ສຶກສາເມືອງ ແລະ ຄູສຶກສານິເທດ (ພາຍໃນ ແລະ ພາຍນອກ).
- ລະບົບການສະໜັບສະໜູນຄູ ອາດປະກອບມີການແນະນຳ, ການສະໜັບສະໜູນຈາກເພື່ອນຮ່ວມງານ ແລະ ກຸ່ມນັກວິຊາການ ເພື່ອເປັນກົນໄກເພີ່ມເຕີມຈາກການຈັດກອງປະຊຸມຝຶກອົບຮົມ ແລະ ການສະໜັບສະໜູນຈາກຄູສຶກສານິເທດ.
- ການຝຶກອົບຮົມຄູປະຖົມຈະສຸມໃສ່ການຝຶກອົບຮົມໃນການຈັດຕັ້ງປະຕິບັດຫຼັກສູດໃໝ່ ຈົນຮອດສົກຮຽນ 2023-2024, ລວມທັງການຝຶກອົບຮົມການສອນຫ້ອງຄວບ ແລະ ການຊ່ວຍເຫຼືອນັກຮຽນທີ່ມີຄວາມຕ້ອງການພິເສດ.
- ການຝຶກອົບຮົມດ້ານຄູສອນໃນລະດັບການສຶກສາກ່ອນໄວຮຽນ ແລະ ມັດທະຍົມສຶກສາ ຈະເນັ້ນໃສ່ແກ້ໄຂບັນດາຄວາມຕ້ອງການທີ່ໄດ້ກຳນົດໄວ້ໃນການປະເມີນຜົນການປະຕິບັດໜ້າທີ່ຂອງຄູ.
- ການຝຶກອົບຮົມຄູສຳລັບຊັ້ນມັດທະຍົມສຶກສາ, ບູລິມະສິດແມ່ນການສ້າງຂີດຄວາມສາມາດດ້ານເນື້ອໃນຂອງວິຊາວິທະຍາສາດທຳມະຊາດ, ພາສາລາວ ແລະ ພາສາອັງກິດ. ແຜນການອົບຮົມບູລິມະສິດຈະເປັນພື້ນຖານໃຫ້ແກ່ແຜນພັດທະນາວິຊາຊີບແບບຕໍ່ເນື່ອງໃນໄລຍະຍາວ
- ຄວາມຕ້ອງການດ້ານການຝຶກອົບຮົມ ທີ່ໄດ້ກຳນົດພາຍໃນແຜນການຝຶກອົບຮົມທີ່ເປັນບູລິມະສິດ ຈະຕ້ອງໄດ້ຮັບການຮັບຮອງຈາກຄະນະວິຊາການຂະແໜງການສຶກສາ ແລະ ກິລາ ລະດັບຜູ້ບໍລິຫານ ເພື່ອຮັບປະກັນວ່າບັນດາຄູ່ຮ່ວມພັດທະນາ ແລະ ລັດຖະບານ ນຳໃຊ້ງົບປະມານການຝຶກອົບຮົມຂອງພວກເຂົາ ເພື່ອແກ້ໄຂຄວາມຕ້ອງການ ການຝຶກອົບຮົມທີ່ໄດ້ກຳນົດໄວ້.

**ຜົນໄດ້ຮັບລະດັບກາງທີ 2.2: ຫຼັກສູດສ້າງຄູ ແລະ ຫຼັກສູດຝຶກອົບຮົມຄູຊັ້ນອະນຸບານ, ປະຖົມ ແລະ ມັດທະຍົມ ໄດ້ຮັບການປັບປຸງ ແລະ ຈັດຕັ້ງປະຕິບັດ ເພື່ອໃຫ້ສອດຄ່ອງກັບຫຼັກສູດການຮຽນ-ການສອນໃໝ່ໃນໂຮງຮຽນ ແລະ ມາດຕະຖານການສິດສອນ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ທົບທວນຂອບນິຕິກຳສຳລັບວິທະຍາໄລຄູ ເພື່ອສະໜັບສະໜູນບັນດາຫຼັກສູດໃໝ່ສ້າງຄູ ແລະ ຫຼັກສູດຝຶກອົບ ຮົມຄູປະຈຳການ ພ້ອມທັງສະໜັບສະໜູນໃຫ້ແກ່ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃນເງື່ອນໄຂຄວາມສາມາດທີ່ມີຂອງຄູໃນປັດຈຸບັນ, ຄວາມຕ້ອງການສຳລັບການສອນຫ້ອງຄວບ, ການນຳໃຊ້ການຮຽນແບບຕັ້ງໜ້າ, ການເຮັດໜ້າທີ່ຄູຝຶກ ແລະ ການຮັບເອົາຄຳຄິດຄຳເຫັນ. ຂອບນິຕິກຳດັ່ງກ່າວ ຈະກຳນົດວິທີການທີ່ເປັນລະບົບໜຶ່ງດຽວ ຕໍ່ຄວາມຮັບຜິດຊອບສຳລັບການພັດທະນາອາຊີບຄູ.
- ໃນເວລາທີ່ຫຼັກສູດໃໝ່ຊັ້ນມັດທະຍົມກຳລັງໄດ້ຮັບການພັດທະນາ ແລະ ກຳລັງພິຈາລະນາວິທີການທີ່ເໝາະສົມໃນການສະໜອງການສຶກສາຊັ້ນມັດທະຍົມຕົ້ນໃນບັນດາໂຮງຮຽນຂະໜາດນ້ອຍ, ດັ່ງນັ້ນ ຂອບນິຕິກຳທີ່ມີຢູ່ສຳລັບວິທະຍາໄລຄູ ຈະຕ້ອງໄດ້ຮັບການທົບທວນ. ການຮ່ວມມືທີ່ມີລັກສະນະຍຸດທະສາດກັບບັນດາວິທະຍາໄລຄູ ຫຼື ສະຖາບັນສ້າງຄູໃນຕ່າງປະເທດຈະຕ້ອງໄດ້ສືບຕໍ່ດຳເນີນການຕໍ່ໄປ.
- ບັນດາຂັ້ນຕອນເພື່ອຮັບຮອງຫຼັກສູດສ້າງຄູຈະໄດ້ຮັບການທົບທວນ ແລະ ປັບປຸງ ເພື່ອຮັບປະກັນການເຊື່ອມຈອດກັນລະຫວ່າງລະດັບຕ່າງໆຂອງການສຶກສາ ໂດຍສະເພາະເພື່ອແກ້ໄຂຄວາມຕ້ອງການຄູຊັ້ນມັດທະຍົມທຸກຄົນ ໃຫ້ສາມາດສິດສອນໄດ້ທັງຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ ແລະ ສາມາດສອນໄດ້ຫຼາຍກວ່າ 1 ວິຊາ.
- ຈະຕ້ອງມີນະໂຍບາຍກ່ຽວກັບການຝຶກອົບຮົມໂດຍອີງໃສ່ໂຮງຮຽນເປັນຫຼັກ ໄປພ້ອມໆກັນກັບຄວາມຕ້ອງການທາງດ້ານວິທີການຝຶກອົບຮົມຄູປະຈຳການ

**ຜົນໄດ້ຮັບລະດັບກາງທີ 2.3: ລະບົບການປະເມີນຜົນການປະຕິບັດໜ້າທີ່ຂອງຄູ ພ້ອມດ້ວຍເຄື່ອງມືການປະເມີນຜົນໄດ້ຮັບການປັບປຸງ, ໂດຍຕິດພັນກັບມາດຕະຖານການສິດສອນ, ພ້ອມທັງໄດ້ຮັບການຈັດຕັ້ງປະຕິບັດ ເພື່ອກຳນົດຄວາມຕ້ອງການທີ່ເປັນບູລິມະສິດ ໃນການຝຶກອົບຮົມຄູ ສຳລັບລະດັບການສຶກສາກ່ອນໄວຮຽນ, ປະຖົມ ແລະ ມັດທະຍົມສຶກສາ.**

ຖ້າຢາກບັນລຸໄດ້ຜົນໄດ້ຮັບລະດັບກາງກາງນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສະຖານະພາບການເງິນ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບລະດັບກາງນີ້ໂດຍສະເພາະ.

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ພັດທະນາມາດຕະຖານການສິດສອນສຳລັບເດັກກ່ອນໄວຮຽນ ແລະ ມັດທະຍົມສຶກສາ, ຊຶ່ງມາດຕະຖານການສິດສອນດັ່ງກ່າວນັ້ນ ຕ້ອງສາມາດນຳໃຊ້ເພື່ອເປັນພື້ນຖານໃນການປະເມີນຜົນການປະຕິບັດໜ້າທີ່ຂອງຄູທຸກລະດັບ.
- ພັດທະນາຂອບການຈັດຕັ້ງປະຕິບັດມາດຕະຖານການສິດສອນ ໂດຍມີການກຳນົດພາລະບົດບາດຂອງຄູ, ຜູ້ ອຳນວຍການ, ສຶກສາເມືອງ, ສຶກສາແຂວງ ແລະ ກະຊວງ/ກົມສ້າງຄູ. ພ້ອມກັນນັ້ນ ຕ້ອງມີຄຳແນະນຳໃນການນຳໃຊ້ ພ້ອມທັງສ້າງຂີດຄວາມສາມາດໃຫ້ແກ່ຜູ້ອຳນວຍການໂຮງຮຽນ ແລະ ພະນັກງານຫ້ອງການສຶກສາທິການ ແລະ ກິລາ ເມືອງ.
- ຫຼັງຈາກການພັດທະນາ ແລະ ການທົດລອງນຳໃຊ້ເຄື່ອງມືປະເມີນຜົນການປະຕິບັດໜ້າທີ່ຂອງຄູໃນລະດັບຕ່າງໆແລ້ວ (ການສຶກສາກ່ອນໄວຮຽນ, ປະຖົມ ແລະ ມັດທະຍົມ) ຈະຕ້ອງໄດ້ຮັບຮອງ ແລະ ເຜີຍແຜ່ໃຫ້ທຸກພາກສ່ວນຮັບຮູ້.
- ເນື່ອງຈາກວ່າຈຳນວນຄູອາຈານມີຈຳນວນຫຼວງຫຼາຍ, ດັ່ງນັ້ນ ຈະຕ້ອງມີວິທີການແບ່ງຂັ້ນຄຸ້ມຄອງໃນການປະເມີນຜົນການເຮັດວຽກຂອງຄູ, ລວມທັງກົນໄກການຮັບປະກັນຄຸນນະພາບ ແລະ ລະບົບການຄຸ້ມຄອງຂໍ້ມູນຂ່າວສານທີ່ປອດໄພ ແລະ ຄົບຖ້ວນ

- ພັດທະນາຂອບນະໂຍບາຍສຳລັບການປະເມີນຜົນການເຮັດວຽກຂອງຄູ ເພື່ອກຳນົດບົດບາດ ແລະ ຄວາມຮັບຜິດຊອບຂອງຜູ້ປະເມີນໃນແຕ່ລະລະດັບ ລວມທັງໜ້າທີ່ຂອງໜ່ວຍງານຕ່າງໆ ພາຍໃນຫ້ອງການສຶກສາທິການ ແລະ ກິລາ ເມືອງ.
- ມີຄວາມຈຳເປັນຕ້ອງໄດ້ສ້າງຂອບນະໂຍບາຍ ທີ່ກຳນົດວິທີການຄວາມຈຳເປັນດ້ານການຝຶກອົບຮົມທີ່ເປັນບູລິມະສິດໂດຍອີງໃສ່ຜົນການວິເຄາະການປະເມີນຜົນການປະຕິບັດໜ້າທີ່ຂອງຄູ, ລວມທັງພາລະບົດບາດ ແລະ ຄວາມຮັບຜິດຊອບຂອງທຸກລະດັບພາຍໃຕ້ການຕິດຕາມກວດກາຂອງຂັ້ນສູນກາງ ເພື່ອຮັບປະກັນວ່າຄວາມຕ້ອງການໃນການຝຶກອົບຮົມ ແມ່ນອີງໃສ່ຜົນການປະເມີນຜົນການປະຕິບັດໜ້າທີ່ຂອງຄູ.

**ຜົນໄດ້ຮັບລະດັບກາງທີ 2.4: ສະຖາບັນສ້າງຄູໄດ້ຖືກຍົກລະດັບໃຫ້ເປັນສູນກາງໃນການພັດທະນາວິຊາຊີບຄູສອນທັງກ່ອນ ແລະ ຫຼັງປະຈຳການ (ແຕ່ອະນຸບານຮອດຊັ້ນມັດທະ ຍົມສຶກສາ) ພ້ອມທັງເປັນສູນກາງໃນການຝຶກອົບຮົມຄູສຶກສານິເທດ.**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ຕ້ອງການໃຫ້ນະໂຍບາຍກ່ຽວກັບຄູທີ່ຄົບຖ້ວນ ໂດຍສັງລວມເອົາບັນດາດຳລັດ ແລະ ຄຳແນະນຳຕ່າງໆທີ່ກ່ຽວຂ້ອງກັບການສ້າງຄູ. ນະໂຍບາຍທີ່ສົມບູນແບບນີ້ຈະອະທິບາຍເຖິງພາລະບົດບາດ ແລະ ຄວາມຮັບຜິດຊອບໃໝ່ຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງກັບການສ້າງຄູທີ່ສະຖາບັນສ້າງຄູ ແລະ ສູນພັດທະນາຄູຂອງແຂວງເປັນຜູ້ດຳເນີນການ: ການກໍ່ສ້າງຄູ; ຝຶກອົບຮົມຄູປະຈຳການ (ພາຍໃນກຸ່ມໂຮງຮຽນ, ພາຍໃນເມືອງ ແລະ ອື່ນໆ) ແລະ ການຝຶກອົບຮົມຄູນິເທດ ຢູ່ພາຍໃນໂຮງຮຽນ ແລະ ອື່ນໆ. ດຳເນີນການສຶກສາກ່ຽວກັບຄ່າໃຊ້ຈ່າຍທີ່ມີປະສິດທິຜົນຂອງການສະໜັບສະໜູນຂອງຄູນິເທດ.
- ນະໂຍບາຍສະບັບປັບປຸງນີ້ ຍັງຈະກຳນົດຄວາມຕ້ອງການຂອງພະນັກງານ ແລະ ຄູສອນໃນສະຖາບັນສ້າງຄູ ເພື່ອໃຫ້ສາມາດປະຕິບັດບັນດາພາລະໜ້າທີ່ໃໝ່ນີ້ໄດ້ ພ້ອມທັງກຳນົດຄຸນວຸດທີຕໍ່າສຸດຂອງຄູສອນ ແລະ ກຳນົດເງື່ອນໄຂສຳລັບພະນັກງານຜູ້ຊ່ວຍຝຶກອົບຮົມ ເຊັ່ນ: ຄູຝຶກທີ່ມີຢູ່ ແລະ ທີມງານຝຶກອົບຮົມຂັ້ນແຂວງ.
- ນະໂຍບາຍດຽວກັນນີ້ ຍັງຈະແນະນຳວິທີການເພື່ອຮ່ວມຕົວເຂົ້າກັນ ລະຫວ່າງສະຖາບັນສ້າງຄູ ແລະ ຄະນະສຶກສາສາດຂອງມະຫາວິທະຍາໄລ ສຳລັບແຂວງທີ່ມີທັງສອງສະຖາບັນນີ້ຕັ້ງຢູ່ ເພື່ອສ້າງຄວາມເຂັ້ມແຂງຮ່ວມກັນ.
- ກົມສ້າງຄູຈະສ້າງແຜນການທີ່ມີຄ່າໃຊ້ຈ່າຍທີ່ສົມບູນແບບເພື່ອຈັດຕັ້ງປະຕິບັດພາລະໜ້າທີ່ຂອງພວກເຂົາ, ລວມທັງແຜນງານການຝຶກອົບຮົມຄູປະຈຳການ.
- ກຳນົດມາດຕະຖານຂັ້ນຕໍ່າສຳລັບຜູ້ທີ່ຈະເຂົ້າຮຽນໃນສະຖາບັນສ້າງຄູຕ່າງໆ, ລວມທັງຕ້ອງມີຄວາມຍືດຍຸ່ນເພື່ອໃຫ້ຜູ້ສະໝັກສາມາດສອບເສັງເຂົ້າຮຽນຄືນໄດ້.
- ມາດຕະຖານການສິດສອນສຳລັບອາຈານສອນຢູ່ສະຖາບັນສ້າງຄູ ແລະ ຄະນະສຶກສາສາດຈະໄດ້ຮັບການພັດທະນາ ແລະ ນຳໃຊ້ເປັນປະຈຳ ເພື່ອປະເມີນຄຸນນະພາບຂອງການສິດສອນໃນທຸກໆສະຖາບັນສ້າງຄູ ແລະ ຄະນະສຶກສາສາດຂອງບັນດາມະຫາວິທະຍາໄລ.
- ພັດທະນານິຕິກຳກ່ຽວກັບການເລື່ອນຕຳແໜ່ງ ແລະ ການເພີ່ມເງິນເດືອນຂຶ້ນ ໂດຍອີງໃສ່ຄວາມເພິ່ງພໍໃຈໃນການປະຕິບັດໜ້າທີ່ຂອງຄູ ເພື່ອເປັນການສະໜັບສະໜູນໃຫ້ສະຖາບັນສ້າງຄູ ເປັນສູນກາງໃນການພັດທະນາວິຊາຊີບຄູ.
- ພາລະບົດບາດຂອງໂຮງຮຽນສາທິດທີ່ຂຶ້ນກັບສະຖາບັນສ້າງຄູ ຈະຕ້ອງໄດ້ຮັບການຂະຫຍາຍຂຶ້ນຕື່ມ ເພື່ອທົດລອງຮູບແບບການສອນ ແລະ ການຮຽນທີ່ມີຫົວຄິດປະດິດສ້າງ.
- ດຳເນີນການປະເມີນຄຸນນະພາບ ແລະ ຄວາມສອດຄ່ອງຂອງການລົງຝຶກຫັດຂອງນັກຮຽນຄູ.

- ການພັດທະນາຫຼັກສູດໃໝ່ສໍາລັບສະຖາບັນສ້າງຄູ ຈະຕ້ອງປະກອບມີຄວາມຮູ້ກ່ຽວກັບການສຶກສານອກໂຮງຮຽນ ເພື່ອໃຫ້ຄູທີ່ຈະຈົບອອກໄປສອນໃນອານາຄົດ ໃຫ້ສາມາດປັບປຸງການເຊື່ອມໂຍງລະຫວ່າງການສຶກສາໃນລະບົບ ແລະ ການສຶກສານອກໂຮງຮຽນ.

**ຜົນໄດ້ຮັບລະດັບກາງທີ 2.5: ຂີດຄວາມສາມາດຂອງຜູ້ອໍານວຍການໂຮງຮຽນມີຄວາມເຂັ້ມແຂງຂຶ້ນ ເພື່ອໃຫ້ສາມາດປັບປຸງການຈັດຕັ້ງການຮຽນ-ການສອນໃນໂຮງຮຽນຂອງເຂົາເຈົ້າ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ການພັດທະນາມາດຕະຖານດ້ານວິຊາຊີບ, ຕິດພັນກັບ 7 ໜ້າວຽກຫຼັກຂອງຜູ້ອໍານວຍການໂຮງຮຽນ ຈະຕ້ອງໄດ້ປັບປຸງ ເພື່ອໃຫ້ມັນກວມເອົາວຽກງານການບໍລິຫານທີ່ອີງໃສ່ໂຮງຮຽນເປັນຫຼັກ, ການສ້າງແຜນພັດທະນາໂຮງຮຽນ, ມາດຕະຖານຄຸນນະພາບການສຶກສາຂັ້ນພື້ນຖານ, ການຮັບປະກັນຄຸນນະພາບຂອງການສິດສອນ ແລະ ການສະໜອງຫາອາຫານໃນໂຮງຮຽນ ສໍາລັບຜູ້ອໍານວຍການໂຮງຮຽນ. ມາດຕະຖານດ້ານວິຊາຊີບຈະໄດ້ຮັບການພັດທະນາ ແລະ ນໍາໃຊ້ເປັນພື້ນຖານໃນການປະເມີນຜົນການປະຕິບັດໜ້າທີ່ຂອງຜູ້ອໍານວຍການໃນທຸກລະດັບ ແລະ ໃນທຸກວຽກງານຫຼັກ.
- ຂອບການຈັດຕັ້ງປະຕິບັດມາດຕະຖານວິຊາຊີບຂອງຜູ້ອໍານວຍການໂຮງຮຽນ ຈະຕ້ອງໄດ້ພັດທະນາ ໂດຍໃຫ້ມີການກໍານົດບົດບາດຂອງຜູ້ອໍານວຍການ, ສຶກສາເມືອງ, ສຶກສາແຂວງ ແລະ ກະຊວງ/ສະຖາບັນພັດທະນາການບໍລິຫານການສຶກສາ ແລະ ກົມຈັດຕັ້ງ ແລະ ພະນັກງານ.
- ຄໍາແນະນໍາສໍາລັບການນໍາໃຊ້ຂອບການປະຕິບັດງານດັ່ງກ່າວ ຕ້ອງໄດ້ຮັບການພັດທະນາຂຶ້ນມາ ຄຽງຄູ່ກັບການສ້າງຂີດຄວາມສາມາດໃຫ້ແກ່ຜູ້ອໍານວຍການໂຮງຮຽນ ແລະ ພະນັກງານຂອງສຶກສາເມືອງ

### 6.3 ຜົນໄດ້ຮັບລະດັບສູງທີ 3:

**ໂຮງຮຽນທຸກແຫ່ງມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດພຽງພໍ ເພື່ອໃຫ້ສາມາດເຮັດວຽກໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ພ້ອມທັງຂີດຄວາມສາມາດໃນການຄຸ້ມຄອງໂຮງຮຽນມີຄວາມເຂັ້ມແຂງເພື່ອຊ່ວຍປັບປຸງໃຫ້ຜົນການຮຽນຂອງນັກຮຽນດີຂຶ້ນ.**

#### 6.3.1 ຫຼັກການ ແລະ ເຫດຜົນ

ບົດລາຍງານການປະເມີນກາງສະໄໝ ໄດ້ສະແດງໃຫ້ເຫັນເຖິງຄວາມບໍ່ສົມດຸນລະຫວ່າງ ງົບປະມານເງິນເດືອນ ແລະ ງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ຊຶ່ງມີຄວາມຈໍາເປັນຕ້ອງໄດ້ເອົາໃຈໃສ່ສະໜອງເງິນບໍລິຫານທີ່ບໍ່ແມ່ນເງິນເດືອນເຂົ້າໃສ່ ເພື່ອຈັດຕັ້ງປະຕິບັດບັນດາຍຸດທະສາດທີ່ ກໍານົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ. ມັນສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ຂະແໜງການສຶກສາ ແລະ ກິລາ ແມ່ນໄດ້ຮັບງົບປະມານໜ້ອຍຫຼາຍໃນໄລຍະແຕ່ປີ 2016-2020. ການທົບທວນກາງສະໄໝຍັງຊີ້ໃຫ້ເຫັນວ່າ, ຖ້າຫາກໄດ້ຮັບງົບປະມານບໍລິຫານ ແລະ ງົບປະມານລົງທຶນເພີ່ມຂຶ້ນ ແມ່ນມີໂອກາດສູງທີ່ຈະບັນລຸຈຸດປະສົງຂອງແຜນ ແລະ ສາມາດປັບປຸງຄຸນນະພາບການສຶກສາ, ພ້ອມດຽວກັນນັ້ນ ກໍຄວນປັບປຸງປະສິດທິພາບໃນການຄຸ້ມຄອງງົບປະມານ ແລະ ການນໍາໃຊ້ຊັບພະຍາກອນທີ່ມີຈໍາກັດ. ເນື່ອງຈາກວ່າງົບປະມານເງິນເດືອນ ແມ່ນບໍ່ສາມາດເຄື່ອນຍ້າຍໄດ້, ສິ່ງທີ່ສາມາດເຮັດໄດ້ ຄືການຈັດສັນງົບປະມານທີ່ບໍ່ແມ່ນເງິນເດືອນ ແລະ ງົບປະມານການລົງທຶນ, ຊຶ່ງໃນຕົວຈິງ ງົບປະມານດັ່ງກ່າວນີ້ ຂະແໜງການສຶກສາ ແມ່ນໄດ້ຮັບໜ້ອຍຫຼາຍ.

ບົດລາຍງານການປະເມີນການສະໄໝ ຍັງໄດ້ສະແດງໃຫ້ເຫັນເຖິງຜົນຂອງການສໍາຫຼວດຄູທີ່ກົມຈັດຕັ້ງ ແລະ ພະນັກງານ ທີ່ໄດ້ຢັ້ງຢືນເຖິງປະສິດທິພາບໃນການນໍາໃຊ້ຄູ ທີ່ເຮັດໃຫ້ມີຈໍານວນຄູເຫຼືອຢູ່ໃນຫຼາຍທ້ອງຖິ່ນ, ໃນຂະນະທີ່ຢູ່ໃນຫຼາຍທ້ອງຖິ່ນ ມີຄູບໍ່ພໍ ພ້ອມກັນນັ້ນ ກໍຍັງມີຄູອາສາສະໝັກຫຼາຍຢູ່ໃນລະບົບ.

ບົດລາຍງານການປະເມີນການສະໄໝໄດ້ແນະນໍາໃຫ້ມີການວິເຄາະຢ່າງລະອຽດ ກ່ຽວກັບຜົນກະທົບຂອງການສະໜອງເງິນບໍລິຫານໂຮງຮຽນ ໃນການປັບປຸງຄຸນນະພາບ ແລະ ຜົນການຮຽນຂອງນັກຮຽນ (ຜົນສໍາເລັດດ້ານການຮຽນຮູ້, ການຈົບຊັ້ນ, ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ, ການເຂົ້າຮຽນຂອງເດັກທີ່ດ້ອຍໂອກາດ ແລະ ອື່ນໆ) ເພື່ອໃຫ້ເປັນທິດທາງສໍາລັບຜູ້ກໍານົດນະໂຍບາຍ ໃນທົບທວນການສະໜອງທຶນດັ່ງກ່າວ ລວມທັງເພື່ອປັບປຸງຜົນຕອບແທນຂອງການສະໜອງເງິນບໍລິຫານໂຮງຮຽນ.

ຜ່ານມາ, ການວາງແຜນຂອງຂະແໜງການ, ການຈັດສັນຊັບພະຍາກອນ, ການຕິດຕາມ ແລະ ປະເມີນຜົນໄດ້ສຸມໃສ່ສະພາບລວມໃນລະດັບຊາດ. ສິ່ງດັ່ງກ່າວນີ້ໄດ້ສ້າງພື້ນຖານອັນສໍາຄັນໃຫ້ແກ່ການຄຸ້ມຄອງ ແລະ ການປະເມີນຜົນຂອງຂະແໜງການ, ແຕ່ວ່າສ່ວນຫຼາຍແລ້ວ ມັນບໍ່ໄດ້ສຸມໃສ່ເພື່ອແກ້ໄຂບັນຫາຄວາມແຕກໂຕນກັນໃນການສະໜອງການສຶກສາ ແລະ ບໍ່ໄດ້ແກ້ໄຂບາງຈຸດອ່ອນໃນຂັ້ນຕອນ ແລະ ວິທີການ ເພື່ອເຮັດແນວໃດ ໃຫ້ການບໍລິການຢູ່ລະດັບໂຮງຮຽນມີຄຸນນະພາບ ແລະ ມີຄວາມເທົ່າທຽມກັນ ເທົ່າທີ່ຈະເປັນໄປໄດ້.

ໃນໄລຍະຂອງແຜນ 5 ປີ ທີ່ຜ່ານມາ, ໄດ້ມີການສຸມໃສ່ການປະຕິບັດໜ້າທີ່ໃນລະດັບແຂວງ ແລະ ເມືອງເຊິ່ງມັນໄດ້ຊ່ວຍໃຫ້ເຫັນເຖິງ ລະດັບຄວາມແຕກໂຕນທີ່ເກີດຂຶ້ນພາຍໃນລະບົບການສຶກສາ. ຄຽງຄູ່ກັນນັ້ນ ກະຊວງສຶກສາທິການ ແລະ ກິລາ ໄດ້ມີການປະຕິຮູບສອງຢ່າງທີ່ສໍາຄັນ ກ່ຽວກັບການຄຸ້ມຄອງທີ່ເນັ້ນໃສ່ໂຮງຮຽນເປັນຫຼັກ ຄື ມາດຕະຖານຄຸນນະພາບການສຶກສາ ເພື່ອສະໜັບສະໜູນການວາງແຜນພັດທະນາໂຮງຮຽນທີ່ມີປະສິດທິຜົນຫຼາຍຂຶ້ນ ແລະ ມາດຕະຖານຂັ້ນພື້ນຖານ ຂອງຄຸນນະພາບການສຶກສາ ທີ່ສະແດງເຖິງມາດຕະຖານຕໍ່າສຸດທີ່ໂຮງຮຽນຕ້ອງມີ ເພື່ອໃຫ້ສາມາດດໍາເນີນວຽກງານໃນລະດັບພື້ນຖານ. ເມື່ອລວມເອົາການປະຕິຮູບສອງຢ່າງນີ້ເຂົ້າກັນ ໃນອີກ 5 ປີຕໍ່ໜ້າ ກໍຈະເຮັດໃຫ້ມີລະບົບເພື່ອຮັບປະກັນວ່າໂຮງຮຽນທຸກແຫ່ງມີຊັບພະຍາກອນຂັ້ນພື້ນຖານ ແລະ ຄວາມສາມາດທີ່ຈໍາເປັນ ເພື່ອສະໜອງການບໍລິການດ້ານການສຶກສາທີ່ມີຄຸນນະພາບ ແລະ ສາມາດສະໜັບສະໜູນການຈັດບູລິມະສິດ ຂອງການນໍາໃຊ້ຊັບພະຍາກອນທີ່ມີໜ້ອຍ ແລະ ຮັບປະກັນໃຫ້ການສະໜອງການບໍລິການການສຶກສາທີ່ມີຄວາມເທົ່າທຽມກັນ.

ບັນດາຂົງເຂດຫຼັກທີ່ຈະຕ້ອງເອົາໃຈໃສ່ປະກອບມີ: ຮັບປະກັນໃຫ້ສູດໃນການຈັດສັນຄູ ແມ່ນສາມາດຈັດຕັ້ງປະຕິບັດໄດ້ ໃນສະພາບທີ່ໂກຕາພະນັກງານໃນທົ່ວປະເທດມີຈໍາກັດ ແລະ ມີນິຕິກໍາສະໜັບສະໜູນ ລວມທັງຂັ້ນຕອນການຈັດສັນທີ່ມີປະສິດທິຜົນ ເພື່ອຮັບປະກັນໃຫ້ການຈັດສັນຄູມີຄວາມເທົ່າທຽມກັນຫຼາຍຂຶ້ນ ໃນລະດັບໃດໜຶ່ງ; ການທົບທວນຄືນສູດການຄິດໄລ່ເງິນບໍລິຫານໂຮງຮຽນ ເພື່ອຮັບປະກັນວ່າໂຮງຮຽນມີເງິນພຽງພໍໃນການບໍລິຫານວຽກງານທີ່ຈໍາເປັນຂອງເຂົາເຈົ້າ ໂດຍອີງໃສ່ຄວາມຕ້ອງການ ແລະ ສະພາບຄວາມເປັນຈິງຂອງແຕ່ລະໂຮງຮຽນ; ການສະໜອງປຶ້ມແບບຮຽນ ແລະ ຄູ່ມືຄູ ແລະ ຂັ້ນຕອນການສະໜອງປຶ້ມເພື່ອທົດແທນ ແລະ ລະບົບການຄຸ້ມຄອງປຶ້ມ ຈະຖືກທົບທວນເພື່ອຮັບປະກັນ ໃຫ້ມີຂັ້ນຕອນທີ່ມີປະສິດທິພາບ ແລະ ມີປະສິດທິຜົນຫຼາຍຂຶ້ນ ເພື່ອຮັບປະກັນໃຫ້ພຽງພໍກັບຄວາມຕ້ອງການຂອງແຕ່ລະໂຮງຮຽນ.

ການຖືເອົາໂຮງຮຽນ ແລະ ການບໍລິການໃນລະດັບໂຮງຮຽນເປັນວຽກທີ່ສໍາຄັນໃນອັນດັບຕົ້ນໆ ຂອງການຄຸ້ມຄອງ ແລະ ວາງແຜນການສຶກສາ ມັນຈໍາເປັນຕ້ອງສ້າງຄວາມເຂັ້ມແຂງດ້ານສະຖາບັນ ແລະ ການປັບປຸງລະບົບການຄຸ້ມຄອງ ແລະ ບໍລິຫານ, ໂດຍສະເພາະແມ່ນ:

ມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ (FQS) ທີ່ໄດ້ຮັບການພັດທະນາຂຶ້ນສໍາລັບຊັ້ນປະຖົມສຶກສາ ຊຶ່ງມັນຈະເຊື່ອມສານເຂົ້າໃນລະບົບການບໍລິຫານ ແລະ ຄຸ້ມຄອງໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ເພື່ອເປັນບ່ອນອີງໃນການຈັດສັນຊັບພະຍາກອນ, ໂດຍສຸມໃສ່ບູລິມະສິດເພື່ອຮັບປະກັນວ່າ ທຸກໆໂຮງຮຽນໄດ້ມີຊັບພະ

ຍາກອນທີ່ຕ້ອງພຽງພໍໃນລະດັບໃດໜຶ່ງ. ລະບົບຖານຂໍ້ມູນຂ່າວສານການສຶກສາ ຈະຕ້ອງໄດ້ພັດທະນາຂຶ້ນມາ ເພື່ອສະໜັບສະໜູນການປະຕິຮູບດ້ານການຄຸ້ມຄອງນີ້. ການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ, ການຝຶກອົບຮົມຜູ້ອຳນວຍການໂຮງຮຽນ ແລະ ການສ້າງຄວາມເຂັ້ມແຂງຂອງການມີສ່ວນຮ່ວມຂອງຄະນະພັດທະນາການສຶກສາຂັ້ນບ້ານ ກໍ່ຈະຊ່ວຍໃນການເສີມສ້າງຄວາມສາມາດໃນການວາງແຜນ ແລະ ການລາຍງານ ແລະ ລະບົບຄວາມຮັບຜິດຊອບໃນລະດັບໂຮງຮຽນ.

ຂອບມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ ແລະ ລະບົບທີ່ຈະສະໜັບສະໜູນການນຳໃຊ້ເປັນເຄື່ອງມືການຈັດບູລິມະສິດດ້ານຊັບພະຍາກອນ ກໍ່ຈະຖືກພັດທະນາຂຶ້ນມາສຳລັບຊັ້ນການສຶກສາກ່ອນໄວຮຽນ ແລະ ມັດທະຍົມສຶກສາ ແລະ ກໍຈະພັດທະນາຂຶ້ນໄປເລື້ອຍໆ ໃນລັກສະນະຄ້າຍຄືກັນກັບມາດຕະຖານຂອງຊັ້ນປະຖົມສຶກສາ. ບັນດາຂໍ້ມູນພື້ນຖານ, ຕົວຊີ້ບອກ ແລະ ຄາດໝາຍ ທີ່ສະທ້ອນໃຫ້ເຫັນເຖິງການສຸມຊັບພະຍາກອນໃສ່ໃນລະດັບໂຮງຮຽນ ເຊັ່ນວ່າ ອັດຕາສ່ວນຂອງໂຮງຮຽນປະຖົມທີ່ມີການຈັດສັນຄູສອດຄ່ອງກັບນິຕິກຳ ກໍຈະຖືກພັດທະນາຂຶ້ນມາ ແລະ ນຳສະເໜີໃນແຜນ 5 ປີ ເພື່ອສັງລວມໃຫ້ເປັນຄາດໝາຍລະດັບຊາດ. ເພື່ອຮັບປະກັນໃຫ້ບັນດາແຂວງ ແລະ ເມືອງ ສາມາດສະໜັບສະໜູນ ການຈັດຕັ້ງປະຕິບັດວຽກງານນີ້ຢ່າງມີປະສິດທິຜົນ, ການຈັດສັນງົບປະມານບໍລິຫານໃຫ້ແກ່ເມືອງ ຈະໄດ້ຮັບການທົບທວນ ແລະ ປັບປຸງ ເພື່ອສະທ້ອນໃຫ້ເຫັນເຖິງຂອບເຂດຄວາມຮັບຜິດຊອບຂອງແຕ່ລະເມືອງ ໂດຍອີງໃສ່ຈຳນວນໂຮງຮຽນທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບພວກເຂົາ.

### 6.3.2 ພາກສ່ວນຮັບຜິດຊອບ

ການບັນລຸຜົນສຳເລັດຂອງຜົນໄດ້ຮັບດ້ານຍຸດທະສາດນີ້ ແມ່ນເປັນຄວາມຮັບຜິດຊອບຮ່ວມກັນຂອງກົມຈັດຕັ້ງ ແລະ ພະນັກງານ, ກົມການເງິນ, ກົມແຜນການ, ກົມການສຶກສາກ່ອນໄວຮຽນ, ກົມສາມັນສຶກສາ, ກົມສ້າງຄູ, ສູນປະກັນຄຸນນະພາບການສຶກສາ, ກົມກວດກາ ແລະ ສູນການສຶກສາຮຽນຮ່ວມ.

### 6.3.3 ຜົນໄດ້ຮັບລະດັບກາງ ແລະ ນະໂຍບາຍ

**ຜົນໄດ້ຮັບລະດັບກາງທີ 3.1: ມາດຕະຖານຂັ້ນພື້ນຖານຂອງຄຸນນະພາບສຳລັບການສຶກສາກ່ອນໄວຮຽນ ແລະ ມັດທະຍົມສຶກສາ ໄດ້ຮັບການພັດທະນາ, ທົດລອງ ແລະ ຈັດຕັ້ງປະຕິບັດ ພາຍໃຕ້ຂອບທີ່ກຳນົດມາດຕະຖານຂັ້ນພື້ນຖານຂອງທຸກຊັ້ນການສຶກສາຢູ່ໃນລະດັບໂຮງຮຽນ ແລະ ເປັນພື້ນ ຖານໃຫ້ແກ່ການປະເມີນຕົນເອງ ແລະ ການວາງແຜນພັດທະນາໂຮງຮຽນ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ກະຊວງສຶກສາທິການ ແລະ ກິລາ ຮັບຮອງເອົາມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາສຳລັບການສຶກສາກ່ອນໄວຮຽນ ແລະ ມັດທະຍົມສຶກສາ ພ້ອມທັງນຳໃຊ້ເຂົ້າໃນການປະເມີນຕົນເອງ ແລະ ສ້າງແຜນພັດທະນາໂຮງຮຽນ;
- ນິຕິກຳ ແລະ ຄູ່ມືແນະນຳການນຳໃຊ້ ສຳລັບຂັ້ນໂຮງຮຽນ, ຂັ້ນເມືອງ ແລະ ຂັ້ນແຂວງ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ ຕ້ອງໄດ້ຮັບການພັດທະນາພ້ອມທັງຮັບຮອງ ແລະ ເຜີຍແຜ່ໃຫ້ທົ່ວເຖິງ.

**ຜົນໄດ້ຮັບລະດັບກາງທີ 3.2: ມີຂະບວນການປະເມີນຕົນເອງ ແລະ ການວາງແຜນພັດທະນາໂຮງຮຽນແບບຍືນຍົງ (ທີ່ນຳໃຊ້ FQS) ເພື່ອເປັນບ່ອນອີງໃນການວາງແຜນຂັ້ນເມືອງ ແລະ ການກຳນົດເປົ້າໝາຍການສະໜັບສະໜູນລວມທັງການຈັດສັນຄູ ແລະ ອຸປະກອນການຮຽນ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສຶກສາແຂວງ, ສຶກສາເມືອງ ແລະ ພະນັກງານໃນຂັ້ນດັ່ງກ່າວ ຈະໄດ້ຮັບການປັບປຸງ ເພື່ອໃຫ້ບົດບາດຂອງພວກເຂົາ ກວມເອົາການສະໜັບສະໜູນລະບົບການລາຍງານຜົນການຈັດຕັ້ງປະຕິບັດ ມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ ແລະ ລະບົບການຈັດລຽງບູລິມະສິດໃນການຈັດສັນຊັບພະຍາກອນ.
- ພາຍໃຕ້ການຊີ້ນໍາຂອງຄະນະກໍາມະການແຜນການ ແລະ ການເງິນ ຈະຕ້ອງໄດ້ພັດທະນາຂັ້ນຕອນ ແລະ ຂໍ້ແນະນໍາໃນການສະໜັບສະໜູນສໍາລັບຂັ້ນສູນກາງ, ຂັ້ນແຂວງ ແລະ ເມືອງ ໃນການຈັດສັນຊັບພະຍາກອນໃຫ້ແກ່ໂຮງຮຽນທີ່ບໍ່ສາມາດບັນລຸໄດ້ ມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການການສຶກສາ ໄດ້ຢ່າງມີປະສິດທິຜົນ ພ້ອມທັງເຜີຍແຜ່ນິຕິກໍານີ້ໃຫ້ທົ່ວເຖິງ.
- ການທົບທວນກາງສະໄໝ ອາດຈະມີການປະເມີນຄວາມຈໍາເປັນໃນການດັດປັບສູດຄິດໄລ່ ແລະ ຈັດສັນງົບປະມານບໍລິຫານໃຫ້ແກ່ເມືອງ ແລະ ແຂວງ ເພື່ອສະທ້ອນເຖິງບົດບາດຂອງພວກເຂົາໃນການສະໜັບສະໜູນໂຮງຮຽນເພື່ອໃຫ້ບັນລຸໄດ້ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ.
- ຖານຂໍ້ມູນ LESMIS ຈະຕ້ອງພັດທະນາ ເພື່ອໃຫ້ສາມາດສັງລວມເອົາບັນດາຜົນໄດ້ຮັບຈາກບົດລາຍງານກ່ຽວກັບມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ. ບັນດາຂໍ້ມູນພື້ນຖານ, ຕົວຊີ້ບອກ ແລະ ຄາດໝາຍທີ່ສະທ້ອນໃຫ້ເຫັນເຖິງຊັບພະຍາກອນໃນລະດັບໂຮງຮຽນ ຈະໄດ້ຮັບການພັດທະນາ ແລະ ນໍາໃຊ້ໃນໄລຍະ 5 ປີ ເພື່ອເປັນຂໍ້ມູນເພີ່ມເຕີມກັບຄາດໝາຍລວມລະດັບຊາດ.
- ອອກຂໍ້ຕົກລົງຂອງລັດຖະມົນຕີ ກ່ຽວກັບການແຕ່ງຕັ້ງອົງການຈັດຕັ້ງໃດໜຶ່ງ ຮັບຜິດຊອບໃນການຕິດຕາມກວດກາ ວຽກງານການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ, ພ້ອມດຽວກັນນັ້ນ ພາລະບົດບາດຂອງບັນດາກົມທີ່ກ່ຽວຂ້ອງ ຕ້ອງໄດ້ຮັບການປັບປຸງ ເພື່ອໃຫ້ມັນສອດຄ່ອງກັນ.
- ອົງການທີ່ໄດ້ມອບໝາຍໃຫ້ຮັບຜິດຊອບວຽກງານ ການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ ຈະຕ້ອງສ້າງນະ ໂຍບາຍໃນການຄຸ້ມຄອງໂຮງຮຽນ ເຊິ່ງຈະກໍານົດພາລະບົດບາດ ແລະ ຄວາມຮັບຜິດຊອບໃນລະດັບໂຮງ ຮຽນ ແລະ ບົດບາດໃນການສະໜັບສະໜູນຂອງສຶກສາແຂວງ ແລະ ສຶກສາເມືອງ; ພ້ອມທັງພັດທະນາວິທີການໄລຍະຍາວ ເພື່ອຮັບປະກັນໃຫ້ບັນດາຫຼັກການທັງໝົດທີ່ມີ ແມ່ນມີຄວາມສາມາດນໍາໄປຈັດຕັ້ງປະຕິ ບັດໄດ້.

**ຜົນໄດ້ຮັບລະດັບກາງທີ 3.3: ເງິນບໍລິຫານໂຮງຮຽນ (ສູດຄິດໄລ່ ແລະ ລາຍຈ່າຍທີ່ມີສິດໃຊ້) ສອດ ຄ່ອງກັບຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ໃຫ້ເຊື່ອມໂຍງກັບມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ**

ຖ້າຢາກບັນລຸໄດ້ຜົນໄດ້ຮັບລະດັບກາງກາງນີ້ (ເພີ່ມມູນຄ່າຫຼືວໜ່ວຍເງິນບໍລິຫານໂຮງຮຽນ) ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສະຖານະພາບການເງິນ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບລະດັບກາງນີ້ໂດຍສະເພາະ.

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ຄະນະກໍາມະການແຜນການ ແລະ ການເງິນຕ້ອງທົບທວນນະໂຍບາຍການສະໜອງເງິນບໍລິຫານໂຮງຮຽນ, ສູດການຄິດໄລ່ ແລະ ບັນດາລາຍການທີ່ອະນຸຍາດໃຫ້ໃຊ້ຈ່າຍ ເພື່ອໃຫ້ສອດຄ່ອງກັບບູລິມະສິດດ້ານນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ຊຶ່ງລວມທັງສິ່ງທີ່ໄດ້ກໍານົດໄວ້ໃນ

ຂໍ້ 3.3 ຂ້າງເທິງ. ການທົບທວນນີ້ ຍັງຈະໄດ້ພິຈາລະນາບັນຫາຄວາມເທົ່າທຽມກັນສຳລັບວິທີການສະໜອງເງິນບໍລິຫານໂຮງຮຽນ.

- ຄະນະກຳມະການແຜນການ ແລະ ການເງິນ ຈະໃຫ້ຄຳແນະນຳສຳລັບການປັບປຸງສູດຄິດໄລ່ເງິນບໍລິຫານໂຮງຮຽນ ທີ່ສະທ້ອນໃຫ້ເຫັນເຖິງຄ່າໃຊ້ຈ່າຍທີ່ສູງຕໍ່ຫົວໜ່ວຍນັກຮຽນໃນໂຮງຮຽນນ້ອຍ ແລະ ໃນເຂດທີ່ດ້ອຍໂອກາດ.
- ຄະນະກຳມະການແຜນການ ແລະ ການເງິນ ກວດກາລາຍລະອຽດບັນຊີທະນາຄານຂອງຜູ້ທີ່ໄດ້ຮັບເງິນບໍລິຫານໂຮງຮຽນ. ກະຊວງສຶກສາທິການ ແລະ ກິລາ ແລະ ກະຊວງການເງິນ ຈະຕ້ອງໄດ້ປຶກສາຫາລືກ່ຽວກັບວິທີການ ເພື່ອປັບປຸງຄວາມວ່ອງໄວຂອງການຈັດສົ່ງເງິນບໍລິຫານໂຮງຮຽນ ແລະ ປະສິດທິຜົນຂອງການສະໜອງເງິນບໍລິຫານໂຮງຮຽນ ສຳລັບໂຮງຮຽນນ້ອຍ ແລະ/ຫຼື ຫ່າງໄກສອກຫຼີກ.

**ຜົນໄດ້ຮັບລະດັບກາງທີ 3.4: ການຈັດສັນຄູສອດຄ່ອງຕາມຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ໃຫ້ເຊື່ອມໂຍງກັບມາດຕະຖານຂັ້ນພື້ນ ຖານຄຸນນະພາບການສຶກສາ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ທົບທວນຄືນການຈັດສັນທີ່ຕັ້ງຂອງໂຮງຮຽນລັດ, ໂດຍສະເພາະແມ່ນໂຮງຮຽນປະຖົມ ເພື່ອກຳນົດຜົນປະໂຫຍດທີ່ຈະໄດ້ຮັບຈາກການຈັດສັນຄູ ໂດຍຜ່ານການລວມເອົາໂຮງຮຽນນ້ອຍ ເຂົ້າກັບໂຮງຮຽນອື່ນທີ່ຕັ້ງຢູ່ໃກ້ກັນ.
- ຂອບນິຕິກຳໄດ້ຮັບການພັດທະນາໂດຍຄະນະກຳມະການຈັດສັນຄູ ເພື່ອສະໜັບສະໜູນແກ່ການຈັດຕັ້ງປະຕິບັດຂໍ້ແນະນຳໃໝ່ໃນການຈັດສັນຄູ.
- ຄະນະກຳມະການຈັດສັນຄູຈະຊີ້ນຳການພັດທະນາແຜນການຈັດຕັ້ງປະຕິບັດການຈັດສັນຄູ 10 ປີ ເພື່ອຫຼຸດຜ່ອນຄວາມແຕກໂຕນ, ລວມທັງການຈັດສັນການສອນຫ້ອງຄວບ ໂດຍອາດມີການທົບທວນໃນໄລຍະກາງສະໄໝ. ແຜນການນີ້ ຈະປະກອບມີແຜນການຄວາມຕ້ອງການຂອງຄູ, ການຝຶກອົບຮົມຄູໃນແຕ່ລະຊັ້ນແຕ່ລະສາຍ ພ້ອມທັງແຜນພັດທະນາບຸກຄະລາກອນດ້ານການສຶກສາ ແລະ ກິລາ ແມ່ນສອດຄ່ອງກັບຄວາມຕ້ອງການຕົວຈິງໃນແຕ່ລະໄລຍະ.
- ຄະນະກຳມະການຈັດສັນຄູ ສຶກສາຄວາມເປັນໄປໄດ້ກ່ຽວກັບການຍົກຍ້າຍຄູ ໂດຍສະໜອງສິ່ງຈູງໃຈໃຫ້ ແລະ ໃຫ້ຄຳແນະນຳແກ່ຄະນະກຳມະການແຜນການ ແລະ ການເງິນ ແລະ ລັດຖະມົນຕີ.
- ຄະນະກຳມະການຈັດສັນຄູຈະນຳໃຊ້ຖານຂໍ້ມູນ (PMIS) ເພື່ອຕິດຕາມການຈັດສັນຄູ.
- ຄະນະກຳມະການຈັດສັນຄູຕິດຕາມ ແລະ ຊີ້ນຳການພັດທະນາ ແລະ ການອະນຸມັດນຳໃຊ້ຄຳແນະນຳຕ່າງໆ (ແລະ ປື້ມຄູ່ມື) ເພື່ອໃຫ້ຄຳແນະນຳແກ່ສຶກສາເມືອງໃນການຈັດຕັ້ງປະຕິບັດແຜນການຈັດສັນຄູໃໝ່ ທີ່ໃຫ້ບູລິມະສິດແກ່ເມືອງທີ່ຍັງຂາດເຂີນຄູ ແລະ ຈຳກັດຈຳນວນຄູໃໝ່ສຳລັບເມືອງທີ່ມີຄູເຫຼືອ. ລະບົບການຕິດຕາມຄວາມສອດຄ່ອງໃນການຈັດສັນຄູໃໝ່ຈະຕ້ອງໄດ້ຖືກພັດທະນາ ແລະ ຮັບຮອງ.
- ໃນການທົບທວນໃນໄລຍະກາງ, ຄະນະກຳມະການຈັດສັນຄູຈະທົບທວນຄືນສູດການຈັດສັນຄູ ເພື່ອປະເມີນຄວາມເປັນໄປໄດ້ ເນື່ອງຈາກຜົນກະທົບທີ່ບໍ່ແນ່ນອນໃນປະຈຸບັນກ່ຽວກັບຈຳນວນພະນັກງານ ອັນເນື່ອງມາຈາກວິກິດການ Covid-19.
- ໃຫ້ມີການພັດທະນາ ແລະ ທົດລອງນຳໃຊ້ ລະບົບໂທລະສັບ (Application) ເພື່ອຕິດຕາມການຂາດສອນຂອງຄູ ເພື່ອໃຫ້ເປັນສ່ວນໜຶ່ງຂອງການສ້າງຄວາມເຂັ້ມແຂງແກ່ລະບົບ (LESMIS).

**ຜົນໄດ້ຮັບລະດັບກາງທີ 3.5: ການຈັດສັນປຶ້ມແບບຮຽນ, ຄູ່ມືຄູ ແລະ ອຸປະກອນການຮຽນ ສອດ ຄ່ອງຕາມຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ໃຫ້ເຊື່ອມໂຍງກັບມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ພາຍໃຕ້ການຊີ້ນຳຂອງຄະນະກຳມະການແຜນການ ແລະ ການເງິນ, ງົບປະມານການສຳລັບການພິມປຶ້ມຕຳລາຮຽນເພື່ອທົດແທນ ຈະໄດ້ຮັບການທົບທວນ ແລະ ປັບປຸງຄືນໃໝ່ ເພື່ອຮັບປະກັນການສະໜອງມີຄວາມຍືນຍົງໃນໄລຍະຍາວ ໂດຍອີງໃສ່ອັດຕາການສູນເສຍປຶ້ມຕຳລາຮຽນໃນປະຈຸບັນ.
- ອອກຄຳແນະນຳ ແລະ ລະບຽບການໃນການຄຸ້ມຄອງປຶ້ມແບບຮຽນ ແລະ ການແຈກຈ່າຍປຶ້ມໃນລະດັບເມືອງ ເພື່ອປັບປຸງປະສິດທິພາບ ແລະ ຫຼຸດຄວາມແຕກໂຕນ, ລວມທັງຄຳແນະນຳໃນການເກັບມ້ຽນປຶ້ມແບບ ຮຽນທີ່ປອດໄພໃນລະດັບໂຮງຮຽນ ແລະ ເມືອງ ເພື່ອຫຼຸດຜ່ອນຄວາມສ່ຽງຈາກຄວາມເສຍຫາຍ[13], ແລະ ການເບິ່ງແຍງປຶ້ມແບບຮຽນຂອງນັກຮຽນ.
- ພາຍໃຕ້ການຊີ້ນຳຂອງ ຄະນະກຳມະການແຜນການ ແລະ ການເງິນ, ທົບທວນຄືນວິທີການທີ່ມີປະສິດທິຜົນ ແລະ ງ່າຍດາຍທີ່ສຸດ ໃນການສະໜອງປຶ້ມຕຳລາຮຽນໃຫ້ເໝາະສົມກັບໂຮງຮຽນ. ນີ້ຈະປະກອບມີການທົບທວນຖານຂໍ້ມູນຄຸ້ມຄອງປຶ້ມ (TMIS) ທີ່ມີຢູ່ໃນປະຈຸບັນ ພ້ອມທັງໃຫ້ຄຳແນະນຳສຳລັບການປັບປຸງ ແລະ ການທົບທວນປຽບທຽບຄວາມເປັນໄປໄດ້ໃນການນຳໃຊ້ຂໍ້ມູນຈາກ EMIS, ໃນຂະນະດຽວກັນ ກໍກຳນົດອັດຕາການສູນເສຍປຶ້ມ ເພື່ອຊົດເຊີຍຄວາມລ້າຊ້າທີ່ເກີດຂຶ້ນໃນການສັງລວມຂໍ້ມູນສະຖິຕິນັກ ຮຽນປະຈຳປີຂອງໂຮງຮຽນ.

**ຜົນໄດ້ຮັບລະດັບກາງທີ 3.6: ທຸກໂຮງຮຽນຕ້ອງໄດ້ຮັບການສະໜັບສະໜູນເພື່ອໃຫ້ມີສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມໃນລະດັບພື້ນຖານ**

ຖ້າຢາກບັນລຸໄດ້ຜົນໄດ້ຮັບໄລຍະກາງກາງນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສະຖານະພາບການເງິນ "ຍົກສູງຄຸນນະພາບການສຶກສາ" ແລະ /ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບໄລຍະກາງນີ້ໂດຍສະເພາະ.

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ພາຍໃຕ້ການຊີ້ນຳຂອງຄະນະກຳມະການແຜນການ ແລະ ການເງິນ, ຈະຕ້ອງໄດ້ພັດທະນານິຕິກຳກ່ຽວກັບຂັ້ນຕອນ ແລະ ແນວທາງໃນການສະໜັບສະໜູນບັນດາກົມ, ສຶກສາແຂວງ, ສຶກສາເມືອງ ແລະ ໂຮງຮຽນ ໃນການຈັດສັນຊັບພະຍາກອນໃຫ້ແກ່ໂຮງຮຽນ ຢ່າງມີປະສິດທິຜົນຫຼາຍຂຶ້ນ. ເພື່ອເຮັດໃຫ້ພວກເຂົາສາມາດສະໜອງຫ້ອງນໍ້າ ແລະ ບ່ອນລ້າງມື ເພື່ອໃຫ້ຕອບສະໜອງໄດ້ກັບມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ.
- ກະຊວງສຶກສາທິການ ແລະ ກິລາ ຈະທົບທວນຄືນ ຄວາມເປັນໄປໄດ້ໃນການຮັບຮອງເອົາວິທີການຂອງແຜນງານນໍ້າສະອາດ (WASH) ໃນຂອບເຂດທົ່ວປະເທດ ເພື່ອແນໃສ່ຮັບປະກັນວ່າທຸກໆໂຮງຮຽນບັນລຸໄດ້ຢ່າງໜ້ອຍ ລະດັບ 1 ດາວ.
- ເພື່ອຮັບປະກັນການຈັດຕັ້ງປະຕິບັດ ແຜນງານນໍ້າສະອາດນີ້ໃຫ້ມີຄວາມຍືນຍົງໃນໄລຍະຍາວ, ຈະຕ້ອງມີຂໍ້ຕົກ ລົງຂອງລັດຖະມົນຕີ ເພື່ອແຕ່ງຕັ້ງອົງການຈັດຕັ້ງໃດໜຶ່ງຮັບຜິດຊອບໃນການຊີ້ນຳແຜນງານດັ່ງກ່າວ. ຈາກນັ້ນ ພາລະບົດບາດຂອງພາກສ່ວນດັ່ງກ່າວ ຕ້ອງໄດ້ຮັບການປັບປຸງໃໝ່.

---

[13] ການເສຍຫາຍ ແລະ ການສູນເສຍສ່ວນໃຫຍ່ເກີດຈາກນໍ້າຖ້ວມໃນຍາມລະດູຝົນ

## 6.4 ຜົນໄດ້ຮັບລະດັບສູງທີ 4:

**ອັດຕາການຮູ້ໜັງສືໃນກຸ່ມໄວໜຸ່ມ ແລະ ຜູ້ໃຫຍ່ເພີ່ມຂຶ້ນ ພ້ອມທັງຫຼຸດຜ່ອນຄວາມແຕກໂຕນກັນ ລະຫວ່າງເພດ, ເຜົ່າ, ຖານະດ້ານເສດຖະກິດ ແລະ ທີ່ຕັ້ງພູມສັນຖານ.**

### 6.4.1. ຫຼັກການ ແລະ ເຫດຜົນ

ບົດລາຍງານການປະເມີນກາງສະໄໝ ໄດ້ສະແດງໃຫ້ຮູ້ວ່າການຮູ້ໜັງສືຂອງແມ່ຍິງຍັງຕໍ່າກວ່າຜູ້ຊາຍ, ໂດຍສະເພາະໃນກຸ່ມພາສາທີ່ບໍ່ແມ່ນ ກຸ່ມລາວ-ໄຕ ແລະ ຜົນການປະເມີນຜົນການຮຽນຂອງນັກຮຽນ ປ.3 (ASLO 3) ໄດ້ສະແດງໃຫ້ເຫັນວ່າ ຜົນການຮຽນຂອງນັກຮຽນແມ່ນຕໍ່າຫຼາຍ ແລະ ຍັງບໍ່ຮູ້ວ່າມີເດັກນ້ອຍຈັກຄົນທີ່ອອກໂຮງຮຽນໄປ ແຕ່ຍັງສາມາດອ່ານອອກຂຽນໄດ້ຢູ່.

ບົດລາຍງານການປະເມີນກາງສະໄໝໄດ້ໃຫ້ຂໍ້ແນະນໍາວ່າ ການສະໜອງແຜນງານການສຶກສານອກໂຮງຮຽນຄວນສຸມໃສ່ເຂດທີ່ອັດຕາການຮູ້ໜັງສືຍັງຕໍ່າ, ໂດຍສະເພາະບ່ອນທີ່ມີເພດຍິງຊົນເຜົ່າຫຼາຍ; ນອກຈາກນັ້ນ ຄວນມີການທົດສອບຄືນສໍາລັບຜູ້ທີ່ປະລະການຮຽນໃນຊັ້ນປະຖົມ ເພື່ອໃຫ້ຮູ້ວ່າພວກເຂົາຍັງມີທັກສະການຮູ້ໜັງສືຢູ່ຫຼືບໍ່ ແລະ ຜົນໄດ້ຮັບຈະຖືກນໍາໃຊ້ເປັນພື້ນຖານສໍາລັບການຕັດສິນໃຈເພີ່ມເຕີມໃນລະດັບທ້ອງຖິ່ນ ແລະ ລະດັບສູນກາງຕາມຄວາມເໝາະສົມ.

ດັດຊະນີຊັບສິນມະນຸດ ທີ່ນໍາໃຊ້ເພື່ອກໍານົດການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ມີອັດຕາການຮູ້ໜັງສືຂອງຜູ້ໃຫຍ່ແມ່ນໜຶ່ງໃນບັນດາຕົວຊີ້ບອກ ແຕ່ສິ່ງສໍາຄັນອີກອັນໜຶ່ງ ແມ່ນການຕິດຕາມອັດຕາການຮູ້ໜັງສືຂອງໄວໜຸ່ມ ຍ້ອນວ່າຈໍານວນນັກຮຽນທີ່ປະລະການຮຽນຢູ່ຊັ້ນປະຖົມ ແລະ ຊັ້ນມັດທະຍົມຕົ້ນ ແມ່ນມີຫຼາຍ ແລະ ຜົນການຮຽນຂອງພວກດັ່ງກ່າວນີ້ກໍຕໍ່າ[14]. ການຕິດຕາມດັ່ງກ່າວ ແມ່ນມີຄວາມຈໍາເປັນເພື່ອຮັບປະກັນວ່າ ນັກຮຽນທີ່ອອກຈາກໂຮງຮຽນປະຖົມຈະບໍ່ກຶກໜັງສືຄືນ ແລະ ຜົນຂອງການຕິດຕາມຄວນຈະບັນຈຸໄວ້ໃນຖານຂໍ້ມູນຂອງສູນສະຖິຕິການສຶກສາ ແລະ ກິລາ. ຫຼັກສູດການຮູ້ໜັງສື ບໍ່ໄດ້ເອົາວິທີການຮຽນຮູ້ຕະຫຼອດຊີວິດເຂົ້ານໍາ ແລະ ຄູສອນກ່ຽວກັບການຮຽນຮູ້ຕະຫຼອດຊີວິດ ກໍບໍ່ໄດ້ຮັບການຝຶກອົບຮົມລວມທັງວິທີການໃໝ່ໆ ເພື່ອສະໜອງຫຼັກສູດການຮູ້ໜັງສື.

### 6.4.2. ພາກສ່ວນຮັບຜິດຊອບ

ການບັນລຸຜົນສໍາເລັດຂອງຜົນໄດ້ຮັບດ້ານຍຸດທະສາດນີ້ ແມ່ນຄວາມຮັບຜິດຊອບຮ່ວມກັນຂອງກົມການສຶກສານອກໂຮງຮຽນ, ກົມສາມັນສຶກສາ, ສູນປະກັນຄຸນນະພາບການສຶກສາ, ສູນການສຶກສາຮຽນຮ່ວມ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

### 6.4.3. ຜົນໄດ້ຮັບລະດັບກາງ ແລະ ນະໂຍບາຍ

**ຜົນໄດ້ຮັບລະດັບກາງທີ 4.1: ອັດຕາການຮູ້ໜັງສືສໍາລັບໄວໜຸ່ມ ແລະ ຜູ້ໃຫຍ່ເພີ່ມຂຶ້ນ ແລະ ຄວາມແຕກໂຕນໃນການຮູ້ໜັງສືສໍາລັບເພດ, ເຜົ່າ, ຖານະດ້ານເສດຖະກິດ ແລະ ທີ່ຕັ້ງພູມສັນຖານຫຼຸດ ຜ່ອນລົງ.**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

[14] LSIS II ພົບວ່າ "60 ເປີເຊັນຂອງຊາວໜຸ່ມທີ່ເຂົ້າໂຮງຮຽນປະຖົມ ບໍ່ມີທັກສະໃນການອ່ານປະໂຫຍກທີ່ງ່າຍດາຍ, ຊຶ່ງເປັນບັນຫາຫຼາຍ ແລະ ຮຽກຮ້ອງໃຫ້ມີການຕິດຕາມ ແລະ ສະໜັບສະໜູນນັກຮຽນ ແລະ ຄູອາຈານໃຫ້ໃກ້ຊິດຕື່ມ ເພື່ອຮັບປະກັນຄຸນນະພາບການຮຽນ-ການສອນ."

- ສ້າງແຜນປະຕິບັດງານສໍາລັບຫຼັກສູດການຮຽນຮູ້ໜັງສື ທີ່ໃຫ້ບູລິມະສິດຜູ້ທີ່ມີອາຍຸ 15-40 ປີ ໂດຍອີງໃສ່ຂໍ້ແນະນໍາຈາກຜົນການສໍາຫຼວດປະຊາກອນສໍາລັບປີ 2015 ແລະ 2020 ແລະ ການສໍາຫຼວດດັດຊະນີໝາຍສັງຄົມລາວ ໃນປີ 2017.
- ແຜນປະຕິບັດງານດັ່ງກ່າວນີ້ຈະໃຫ້ບູລິມະສິດໃນການປັບປຸງການຮູ້ໜັງສືໃນ 40 ເມືອງບູລິມະສິດ ແລະ ເພດຍິງ ແລະ ປະຊາກອນທີ່ເປັນຊົນເຜົ່າ ລວມທັງຄົນພິການທີ່ມີອັດຕາການຮູ້ໜັງສືຕໍ່າ.

**ຜົນໄດ້ຮັບລະດັບກາງທີ 4.2: ລົງຕິດຕາມຫຼັກສູດການຮຽນ-ການສອນ ລຶບລ້າງຄວາມບໍ່ຮູ້ໜັງສືຂອງການສຶກສານອກໂຮງຮຽນ ໂດຍການສຸ່ມເອົາກຸ່ມຕົວຢ່າງ ເພື່ອປະເມີນຜົນກະທົບກ່ຽວກັບການຮູ້ໜັງສືຂອງໄວໜຸ່ມ.**

ຖ້າຢາກບັນລຸໄດ້ຜົນໄດ້ຮັບລະດັບກາງກາງນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສະຖານະພາບການເງິນ “ຍົກສູງຄຸນນະພາບການສຶກສາ” ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບລະດັບກາງນີ້ໂດຍສະເພາະ.

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສູນຄົ້ນຄວ້າ ແລະ ປະເມີນການສຶກສາ) ໂດຍຮ່ວມກັບສູນການສຶກສານອກໂຮງຮຽນ ອີງຕາມພາລະບົດບາດ ຕ້ອງໄດ້ພັດທະນາ ແລະ ຈັດຕັ້ງປະຕິບັດຍຸດທະສາດການປະເມີນການຮູ້ໜັງສືແບບສຸ່ມຕົວຢ່າງ.

**ຜົນໄດ້ຮັບລະດັບກາງທີ 4.3: ການບໍລິການດ້ານການສຶກສານອກໂຮງຮຽນ ແລະ ໂຄງປະກອບຂອງການສຶກສານອກໂຮງຮຽນ ຕ້ອງປະກອບສ່ວນໃຫ້ອັດຕາການຮູ້ໜັງສືຂອງໄວໜຸ່ມ ແລະ ຜູ້ໃຫຍ່ເພີ່ມຂຶ້ນ ແລະ ພ້ອມທັງສົ່ງເສີມສູນການສຶກສານອກໂຮງຮຽນ ແລະ ສູນການຮຽນຮູ້ຊຸມຊົນ ຢູ່ຂັ້ນເມືອງ ແລະ ຂັ້ນບ້ານ.**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ການເຂົ້າຮຽນໃນຫຼັກສູດການຮຽນຮູ້ໜັງສືຂອງການສຶກສານອກໂຮງຮຽນ ແມ່ນໃຫ້ບູລິມະສິດແກ່ເປົ້າໝາຍທີ່ມີອາຍຸ ແຕ່ 15-40 ປີ ໂດຍເນັ້ນໃສ່ 40 ເມືອງບູລິມະສິດ.

## 6.5 ຜົນໄດ້ຮັບລະດັບສູງທີ 5:

**ຄຸນນະພາບ ແລະ ຈໍານວນນັກຮຽນທີ່ຈົບຈາກການສຶກສາຂັ້ນພື້ນຖານ ແລະ ຜູ້ທີ່ຈົບການສຶກສາຫຼັງຂັ້ນພື້ນຖານທີ່ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ ສອດຄ່ອງກັບຄວາມຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX ແລະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ**

### 6.5.1 ຫຼັກການ ແລະ ເຫດຜົນ

ການທົບທວນເຄິ່ງສະໄໝ 2016-2020 ໄດ້ພົບວ່າກະຊວງສຶກສາທິການ ແລະ ກິລາ ຈະຕ້ອງສືບຕໍ່ການໃຫ້ບູລິມະສິດໃນການແກ້ໄຂບັນຫາຫຼັກ ທີ່ກະທົບຕໍ່ຄວາມສອດຄ່ອງ ແລະ ຜົນໄດ້ຮັບຂອງການສຶກສາຫຼັງຂັ້ນພື້ນຖານພາຍໃນປີ 2025 ລວມທັງຄວາມຮູ້ ແລະ ທັກສະ ທີ່ຍັງບໍ່ທັນພຽງພໍ ທີ່ນັກຮຽນທີ່ຈົບຈາກຊັ້ນມັດທະຍົມຕອນປາຍໄດ້ຮັບ ເພື່ອສະໜັບສະໜູນໃຫ້ແກ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX. ທັກສະທີ່ໄດ້ຮັບ ແລະ ຜົນຂອງການຮຽນ ໂດຍສະເພາະການຮູ້ໜັງສື ແລະ ການຄິດໄລ່ເລກ ຂອງການສຶກສາຂັ້ນພື້ນຖານບໍ່ພຽງພໍກັບຄວາມຕ້ອງການໃນປັດຈຸບັນຂອງຕະຫຼາດແຮງງານ.

ເພື່ອປັບປຸງຄວາມສອດຄ່ອງ ກັບຄວາມຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ບົດລາຍງານການປະເມີນກາງສະໄໝ ໄດ້ສັງເກດວ່າມັນບໍ່ພຽງແຕ່ຈະປັບປຸງຄຸນນະພາບຂອງການສຶກສາຊັ້ນມັດທະຍົມ

ຕອນປາຍ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງເທົ່ານັ້ນ; ແຕ່ມັນມີຄວາມຈຳເປັນຕ້ອງປັບປຸງທັກສະຂັ້ນພື້ນຖານຂອງເດັກນ້ອຍ ເລີ່ມແຕ່ການສຶກສາກ່ອນໄວຮຽນຈົນຮອດມັດທະຍົມຕອນຕົ້ນ ພ້ອມທັງໃຫ້ການສະໜັບສະໜູນທີ່ຈຳເປັນສຳລັບຄົນພິການ. ແຕ່ເນື່ອງຈາກຂາດຂໍ້ມູນການສຳຫຼວດຕະຫຼາດແຮງງານທີ່ເປັນປົກກະຕິ ແລະ ການສຶກສາການຕິດຕາມນັກຮຽນທີ່ຮຽນຈົບອອກໄປ ຈຶ່ງເຮັດໃຫ້ການສ້າງສີມືແຮງງານ ບໍ່ມີຄວາມສອດຄ່ອງກັບຄວາມຕ້ອງການຕົວຈິງ. ຂີດຄວາມສາມາດຂອງພາກເອກະຊົນຍັງຈຳກັດ ໃນການກຳນົດຄວາມຕ້ອງການແຮງງານ, ທັງໃນປັດຈຸບັນ ແລະ ອານາຄົດ. ເພື່ອຢາກກຳນົດປະລິມານຂອງກຳລັງແຮງງານ ທີ່ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ກະຊວງສຶກສາທິການ ແລະ ກິລາ ຕ້ອງມີແຜນພັດທະນາຊັບພະຍາກອນມະນຸດໂດຍລວມສຳລັບຂະແໜງການສຶກສາ ແລະ ກິລາ. ຢາກໃຫ້ຂະແໜງອຸດສາຫະກຳ ແລະ ການບໍລິການ ມີການປະກອບສ່ວນຕໍ່ຍອດຜະລິດຕະພັນພາຍໃນ ຫຼື GDP, ຍັງຮຽກຮ້ອງໃຫ້ມີການປັບປຸງຄຸນນະພາບຂອງນັກຮຽນທີ່ຈົບຈາກມັດທະຍົມຕອນປາຍ, ວິທະຍາໄລ ແລະ ມະຫາວິທະຍາໄລ.

ການວິໄຈຂອງຕະຫຼາດແຮງງານໃນປີ 2018[15] ໄດ້ສະແດງໃຫ້ເຫັນວ່າ ການຂາດເຂີນແຮງານທີ່ມີຄຸນນະພາບແມ່ນໜຶ່ງໃນຂໍ້ຂາດຕົກບົກພ່ອງຫຼັກ ຕໍ່ການພັດທະນາຂະແໜງເອກະຊົນໃນ ສປປ ລາວ. ຄວາມຂາດເຂີນດັ່ງກ່າວ ຕິດພັນຢ່າງເປັນພື້ນຖານກັບການຂາດເຂີນທັງແຮງງານທີ່ມີທັກສະ ແລະ ບໍ່ມີທັກສະ ຊຶ່ງສ່ວນໜຶ່ງແມ່ນຍ້ອນລະດັບການສຶກສາທີ່ສະໜອງໃຫ້ໂດຍບັນດາສະຖາບັນ ແລະ ໂຮງຮຽນຂອງລັດຍັງຕໍ່າ; ພ້ອມນັ້ນ, ບັນຫາທີ່ຕິດພັນກັບການຂ້າມຜ່ານຈາກເສດຖະກິດກະສິກຳໄປສູ່ເສດຖະກິດອຸດສະຫະກຳ. ການຂາດແຄນເຫຼົ່ານີ້ ສ່ວນໃຫຍ່ແມ່ນກ່ຽວຂ້ອງກັບການຂາດແຄນແຮງງານທີ່ມີສີມື ແລະ ຍິ່ງໄປກວ່ານັ້ນ ຂາດທັງແຮງງານທີ່ບໍ່ມີສີມື. ການຈ້າງງານໃນ ສປປ ລາວ ມີຫຼາຍ ໃນຂະແໜງກະສິກຳ, ຊຶ່ງມີສູງເຖິງ 2,3 ລ້ານຄົນ ທີ່ເຮັດວຽກໃນຂະແໜງກະສິກຳ, ມີ 920.000 ຄົນ ເຮັດວຽກກໍ່ສ້າງ ແລະ ການບໍລິການ, 248.000 ຄົນ ເຮັດວຽກໃນຂະແໜງອຸດສາຫະກຳ ແລະ 22.000 ຄົນ ເຮັດວຽກໃນຂະແໜງພະລັງງານ ແລະ ບໍ່ແຮ່ ໃນປີ 2013. ປະຊາກອນໃນເກນອາຍຸເຮັດວຽກແມ່ນ 4,4 ລ້ານຄົນ ແລະ ຄາດວ່າຈະມີປະຊາກອນເພີ່ມເຕີມປະມານ 96.000 ຄົນ ທີ່ຈະເຖິງເກນອາຍຸເຮັດວຽກໃນແຕ່ລະປີໃນທົດສະວັດຂ້າງໜ້າ. ຂະແໜງການກະສິກຳ ແລະ ອຸດສະຫະກຳ ໄດ້ປະກອບສ່ວນ 3,7% ຂອງການເຕີບໂຕຜະລິດຕະພັນພາຍໃນລວມ ທີ່ມີການເຕີບໂຕ 6,5% ໃນປີ 2018, ແຕ່ຍັງມີການຂາດເຂີນນັກວິຊາການ ທີ່ໄດ້ຮັບການຝຶກອົບຮົມໃນສອງຂະແໜງການດັ່ງກ່າວ. ມີໂຮງຮຽນຫຼາຍແຫ່ງ ແລະ ຄູຈຳນວນຫຼາຍ ທີ່ພົບຄວາມຫຍຸ້ງຍາກໃນການສິດສອນຫຼັກສູດໃໝ່ ໃນຊັ້ນມັດທະຍົມຕອນປາຍໃຫ້ມີປະສິດທິຜົນ ແລະ ຍັງຂາດການຝຶກອົບຮົມ, ຫ້ອງທົດລອງ/ອຸປະກອນ ແລະ ອຸປະກອນການຮຽນ-ການສອນເພື່ອສິດສອນທັກສະວິຊາວິທະຍາສາດທຳມະຊາດ[16]. ບັນ ຫາດັ່ງກ່າວ ຈະສົ່ງຜົນກະທົບຕໍ່ຕະຫຼາດແຮງງານໃນຖານະທີ່ ມັດທະຍົມຕອນປາຍແມ່ນສ່ວນປະກອບທີ່ໃຫຍ່ລຳດັບສອງ (ທີ່ຮອງຈາກ ມັດທະຍົມຕົ້ນ) ທີ່ຈະເຂົ້າສູ່ຂະແໜງອຸດສະຫະກຳ ແລະ ການບໍລິການ. ມັນຍັງສົ່ງຜົນສະທ້ອນຕໍ່ການສຶກສາຊັ້ນສູງ ແລະ ອາຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບ. ໃນຂະນະທີ່ 75% ຂອງຈຳນວນນັກຮຽນທີ່ຈົບມະຫາວິທະຍາໄລແມ່ນມີວຽກເຮັດງານທຳ[17], ຈຳນວນນັກສຶກສາທີ່ຈົບໃນສາຍວິທະຍາສາດທຳມະຊາດຈະບໍ່ພຽງພໍ. ຄຸນນະພາບຂອງວິທະຍາໄລເອກະຊົນຍັງຂາດເງື່ອນໄຂທີ່ວ່າເຂົາເຈົ້າບໍ່ໄດ້ຮັບອະນຸຍາດໃນການສະໜອງຫຼັກສູດລະດັບປະລິນຍາຕີ ແລະ ຫຼັກສູດທີ່ສູງກວ່ານັ້ນ ຈົນກວ່າເຂົາຈະມີສິ່ງອຳນວຍຄວາມສະດວກ ແລະ ອາຈານສອນທີ່ມີຄຸນນະພາບພຽງພໍ.

ບົດລາຍງານກາງສະໄໝໄດ້ສະແດງໃຫ້ເຫັນເຖິງສິ່ງທ້າທາຍທີ່ສຳຄັນ ນັ້ນກໍຄືຈະເຮັດແນວໃດ ເພື່ອຮັບປະກັນວ່າຄູສອນໃນສະຖານອາຊີວະສຶກສາໄດ້ຮັບການຝຶກອົບຮົມຢ່າງເຕັມສ່ວນ ເພື່ອໃຫ້ສາມາດສິດສອນຫຼັກສູດໃໝ່ ແລະ ເຂົ້າໃຈວິທີການນຳໃຊ້ອຸປະກອນ ແລະ ຊັບພະຍາກອນໃໝ່. ດັ່ງນັ້ນ, ກົມອາຊີວະສຶກສາຈະຕ້ອງໄດ້ມີການ

---

[15] Labour Market Analysis - Lao PDR Literature review and qualitative insights, GIZ, February 2018

[16] "ວິທະຍາສາດທຳມະຊາດ ໝາຍເຖິງ ວິຊາທີ່ກ່ຽວຂ້ອງກັບ ວິທະຍາສາດ, ເທັກໂນໂລຊີ, ວະສາວະກຳ ແລະ ຄະນິດສາດ (STEM)

[17] ນັກສຶກສາທີ່ຮຽນຈົບບາງຄົນກໍ່ເຮັດທຸລະກິດຄອບຄົວ, ສ້າງຕັ້ງທຸລະກິດຂອງຕົນເອງ ຫຼື ບໍ່ມີວຽກເຮັດ

ຈັດການທີ່ດີໃນການຝຶກອົບຮົມ ແລະ ຍົກລະດັບໃຫ້ຄູສອນ ເພື່ອຮັບປະກັນວ່າຄຸນນະພາບຂອງການສິດສອນແມ່ນສອດຄ່ອງກັບມາດຕະຖານການສຶກສາຂອງຊາດ, ຂອງພາກພື້ນ ແລະ ຂອງສາກົນ, ໂດຍໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມມືສາກົນ. ສິ່ງທ້າທາຍອີກຢ່າງໜຶ່ງຄື ການປະເມີນເຖິງປະສິດທິພາບໃນການຈ້າງງານຂອງນັກຮຽນທີ່ຮຽນຈົບອອກໄປ ພ້ອມທັງປະເມີນເຖິງຄວາມເພິ່ງພໍໃຈຂອງຜູ້ໃຊ້ແຮງງານ ເພື່ອນໍາໄປເປັນພື້ນຖານໃນການຕັດສິນໃຈໃນອານາຄົດ. ຕ້ອງໄດ້ພັດທະນາຄໍາແນະນໍາໃຫ້ແກ່ສະຖານອາຊີວະສຶກສາຕ່າງໆ ກ່ຽວກັບວິທີການດໍາເນີນການສຶກສາຕິດຕາມນັກຮຽນທີ່ມີປະສິດທິຜົນ ເພື່ອໃຫ້ສາມາດນໍາເອົາຜົນການສຶກສາຕິດຕາມ ໄປນໍາໃຊ້ໃນການກໍານົດນະໂຍບາຍ. ຜ່ານມາ ຍັງມີສິ່ງທ້າທາຍໃນການຊອກຫາສະຖານທີ່ຝຶກງານທີ່ເໝາະສົມສໍາລັບນັກຮຽນ ເພື່ອຝຶກເອົາປະສົບການຕົວຈິງ ເຊິ່ງເປັນສ່ວນໜຶ່ງຂອງຫຼັກສູດການສຶກສາຂອງພວກເຂົາ. ສະຖານອາຊີວະສຶກສາ ຄວນສ້າງເຄືອຂ່າຍກັບບັນດາຜູ້ປະກອບການຢູ່ແຕ່ລະທ້ອງຖິ່ນ ເພື່ອສະໜັບສະໜູນການຝຶກງານຂອງນັກຮຽນ.

ບົດລາຍງານກາງສະໄໝ ຍັງໄດ້ຊີ້ໃຫ້ເຫັນວ່າຍັງມີຄວາມຕ້ອງການ ສໍາລັບນັກຮຽນທີ່ຮຽນຈົບໃນສາຍວິທະຍາສາດ, ເຕັກໂນໂລຢີ, ວິສະວະກໍາສາດ ແລະ ຄະນິດສາດ ທີ່ມີຄຸນນະພາບສູງ ເພື່ອພັດທະນາເສດຖະກິດຂອງຊາດໃນອະນາຄົດໃຫ້ດີຂຶ້ນ.

### 6.5.2 ພາກສ່ວນຮັບຜິດຊອບ

ຜົນສໍາເລັດຂອງຜົນໄດ້ຮັບດ້ານຍຸດທະສາດນີ້ ແມ່ນຄວາມຮັບຜິດຊອບຮ່ວມກັນ ຂອງກົມອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ, ກົມການສຶກສາຊັ້ນສູງ, ກົມການສຶກສານອກໂຮງຮຽນ, ວິທະຍາໄລຄູ ແລະ ສະຖາບັນອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ, ສູນປະກັນຄຸນນະພາບການສຶກສາ, ກົມກິດຈະການນັກສຶກສາ ແລະ ຫ້ອງການພັດທະນາຊັບພະຍາກອນມະນຸດ. ບົດບາດຂອງສະພາທີ່ປຶກສາອາຊີວະສຶກສາແຫ່ງຊາດ ໃນການພົວພັນກັບພາກເອກະຊົນ, ການສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມເຮັດວຽກການຄ້າ, ການຮັກສາຄວາມສອດຄ່ອງຂອງການພັດທະນາຫຼັກສູດ ແລະ ການຄຸ້ມຄອງກອງທຶນຝຶກອົບຮົມວິຊາຊີບກໍ່ແມ່ນສິ່ງທີ່ສໍາຄັນເຊັ່ນກັນ.

### 6.5.3 ຜົນໄດ້ຮັບລະດັບກາງ ແລະ ນະໂຍບາຍ

**ຜົນໄດ້ຮັບລະດັບກາງທີ 5.1: ຄຸນນະພາບຂອງການຮຽນ-ການສອນ ໃນຊັ້ນມັດທະຍົມສຶກສາຕອນປາຍ ໄດ້ຮັບການປັບປຸງດີຂຶ້ນ ເພື່ອສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ການສຶກສາຊັ້ນສູງ ລວມທັງໂຮງຮຽນຕົວແບບ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ສ້າງ ແລະ ຈັດຕັ້ງປະຕິບັດແຜນຝຶກອົບຮົມຄູຊັ້ນມັດທະຍົມ ເພື່ອຍົກລະດັບຄວາມຮູ້ດ້ານເນື້ອໃນຂອງວິຊາສອນ ຊຶ່ງຄູເຫຼົ່ານັ້ນ ສ່ວນໃຫຍ່ແມ່ນສອນຢູ່ຊັ້ນມັດທະຍົມຕອນຕົ້ນ ທັງນີ້ກໍເພື່ອຊ່ວຍໃຫ້ເຂົາເຈົ້າສາມາດສອນໃນຊັ້ນມັດທະຍົມຕອນປາຍໄດ້. ແຜນດັ່ງກ່າວນີ້ຈະກໍານົດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງກົມສາມັນສຶກສາ, ພະແນກສຶກສາທິການ ແລະ ກິລາ ແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ກຸ່ມໂຮງຮຽນ, ວິທະຍາໄລຄູ, ຜູ້ອໍານວຍການໂຮງຮຽນມັດທະຍົມ, ຄູນິເທດຊັ້ນມັດທະຍົມ ແລະ ຄະນະສຶກສາສາດຂອງມະຫາວິທະຍາໄລ.
- ມີຂໍ້ຕົກລົງຂອງລັດຖະມົນຕີກ່ຽວກັບການສ້າງຕັ້ງໂຮງຮຽນຕົວແບບ, ຊຶ່ງໃນຂໍ້ຕົກລົງດັ່ງກ່າວ ຕ້ອງກໍານົດສິ່ງອໍານວຍຄວາມສະດວກທີ່ຈໍາເປັນ, ຂີດຄວາມສາມາດຂອງບັນດາຄູ-ອາຈານ ແລະ ພະນັກງານພ້ອມທັງການບໍລິຫານ, ຄຸ້ມຄອງ ແລະ ພາລະໜ້າທີ່ຂອງໂຮງຮຽນໂຮງຮຽນຕົວແບບ.
- ສູນຂໍ້ມູນເຕັກໂນໂລຊີ (ໄອຊີທີ) ຂອງແຂວງ ຈະຕ້ອງຮວມຕົວເຂົ້າກັບໂຮງຮຽນທີ່ສູນຕັ້ງຢູ່ເພື່ອສ້າງໃຫ້ເປັນໂຮງຮຽນຕົວແບບ.

- ອອກຂໍ້ຕົກລົງກ່ຽວກັບການພັດທະນາ ແລະ ນໍາໃຊ້ສື່ການຮຽນການສອນ ອອນລາຍ.

**ຜົນໄດ້ຮັບລະດັບກາງທີ 5.2: ຈໍານວນ ແລະ ຄຸນນະພາບຂອງນັກຮຽນທີ່ຈົບຈາກສະຖາບັນສ້າງຄູ ແລະ ຄະນະສຶກສາສາດ ໃນສາຍວິຊາວິທະຍາສາດທໍາມະຊາດໄດ້ຮັບການປັບປຸງດີຂຶ້ນ ແນໃສ່ເພື່ອປັບປຸງການຮຽນ-ການສອນວິທະຍາສາດທໍາມະຊາດໃນຊັ້ນມັດທະຍົມ.**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ໃຫ້ບູລິມະສິດເຂົ້າຮຽນໃນວິທະຍາໄລຄູ ແລະ ຄະນະສຶກສາສາດ ແກ່ຜູ້ເຂົ້າຮຽນທີ່ສະໝັກເປັນຄູໃນສາຍວິທະຍາສາດທໍາມະຊາດ ລະຫວ່າງເພດຍິງ ແລະ ເພດຊາຍໃຫ້ມີຄວາມສະເໝີພາບກັນ.
- ໃຫ້ໂອກາດສໍາລັບນັກຮຽນຄູສາຍວິທະຍາສາດທໍາມະຊາດ ໄດ້ປັບປຸງຄວາມຮູ້ຂອງເຂົາເຈົ້າ ໃນເວລາເຂົ້າຮຽນໃນສະຖາບັນສ້າງຄູ
- ຫຼັກສູດວິຊາວິທະຍາສາດທໍາມະຊາດ ຢູ່ຊັ້ນມັດທະຍົມຕອນປາຍ ຈະໄດ້ຮັບການທົບທວນ ແລະ ປະເມີນຄວາມເປັນໄປໄດ້ໃນການແຍກຫຼັກສູດອອກເປັນ 2 ສາຍ ຄື: ສາຍວິຊາວິທະຍາສາດທໍາມະຊາດ ແລະ ສາຍວິຊາວິທະຍາສາດສັງຄົມ.
- ທຶນການສຶກສາສໍາລັບນັກຮຽນຄູ ທີ່ສະໜອງໂດຍກະຊວງສຶກສາທິການ ແລະ ກິລາ ແລະ ຄູ່ຮ່ວມພັດທະນາ ໃຫ້ບູລິມະສິດແກ່ນັກຮຽນໄປຮຽນສາຍວິທະຍາສາດທໍາມະຊາດ ແລະ ນັກຮຽນຈາກ 40 ເມືອງດ້ອຍໂອກາດ ໂດຍເອົາໃຈໃສ່ເຖິງຄວາມແຕກໂຕນກັນລະຫວ່າງເພດ ແລະ ເຜົ່າ.

**ຜົນໄດ້ຮັບລະດັບກາງ ທີ 5.3: ຈໍານວນນັກຮຽນທີ່ຮຽນຈົບຫຼັກສູດກະສິກໍາ, ການບໍລິການ ແລະ ອຸດສະຫະກໍາ ຢູ່ສາຍອາຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບ ເພີ່ມຂຶ້ນ ໂດຍຜ່ານການປັບປຸງສິ່ງອໍານວຍຄວາມສະດວກ, ຄູສອນ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ**

ຖ້າຢາກບັນລຸໄດ້ຜົນໄດ້ຮັບລະດັບກາງກາງນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສະຖານະພາບການເງິນ “ ຍົກສູງຄຸນນະພາບ” ແລະ / ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບລະດັບກາງນີ້ໂດຍສະເພາະ.

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ມາດຕະຖານຄຸນວຸດທິສໍາລັບຫຼັກສູດສາຍກະສິກໍາ ແລະ ອຸດສະຫະກໍາຈະໄດ້ຮັບການພັດທະນາ, ຮັບຮອງ.
- ສູດຄິດໄລ່ງົບປະມານສໍາລັບອາຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບ ໃຫ້ລວມເອົາທຶນເພີ່ມເຕີມສໍາລັບນັກຮຽນສາຍກະສິກໍາ ແລະ ອຸດສະຫະກໍາ, ແຕ່ຖ້າບໍ່ສາມາດເພີ່ມທຶນຂຶ້ນໄດ້ ຕ້ອງໃຫ້ບູລິມະສິດແກ່ນັກຮຽນທີ່ຈະໄປຮຽນໃນວິຊາທີ່ກ່ຽວຂ້ອງກັບສາຍກະສິກໍາ.
- ກະຊວງສຶກສາທິການ ແລະ ກິລາ ຈະຕ້ອງປະສານຢ່າງເປັນທາງການໄປຫາ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງກະສິກໍາ ແລະ ປ່າໄມ້ ເພື່ອເຈລະຈາກ່ຽວກັບການຈັດຫຼັກສູດການຝຶກອົບຮົມສໍາລັບວິຊາທີ່ກ່ຽວຂ້ອງກັບກະສິກໍາ ແລະ ອຸດສະຫະກໍາ ໃຫ້ແກ່ເປົ້າໝາຍທີ່ຢາກຮຽນໃນແຕ່ລະຂະແໜງການດັ່ງກ່າວໃນຕະຫຼອດ 5 ປີ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ.
- ກະຊວງສຶກສາທິການ ແລະ ກິລາ ປຶກສາຫາລືກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງກະສິກໍາ ແລະ ປ່າໄມ້ ກ່ຽວກັບຄວາມເປັນໄປໄດ້ໃນການນໍາໃຊ້ສິ່ງອໍານວຍຄວາມສະດວກ ແລະ ອຸປະກອນການສິດສອນຮ່ວມກັນ ເພື່ອໃຫ້ສາມາດຮອງຮັບກັບແຜນການຂະຫຍາຍຫຼັກສູດອາຊີວະສຶກສາ ໃນສາຍກະສິກໍາ, ບໍລິການ ແລະ ອຸດສາຫະກໍາ. (ຜົນໄດ້ຮັບລະດັບກາງທີ 2)
- ສ້າງຕັ້ງໂຮງຮຽນເຕັກນິກວິຊາຊີບທີ່ແຂວງໄຊສົມບູນ.

**ຜົນໄດ້ຮັບລະດັບກາງ ທີ 5.4: ຫຼັກສູດການຮຽນໃນສາຍອາຊີວະສຶກສາ ໄດ້ຮັບການປັບປຸງເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການ ທີ່ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX.**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ຂອບວຸດທິການສຶກສາແຫ່ງຊາດ ໄດ້ຮັບການຮັບຮອງຈາກຜູ້ມີສ່ວນຮ່ວມທັງໝົດ.
- ອະນຸມັດລະບົບການແນະນຳວິຊາຊີບ ແລະ ການໃຫ້ຄຳປຶກສາ ດ້ານວິຊາຊີບ.
- ປັບປຸງກົນໄກໃນການສ້າງຄວາມເຂັ້ມແຂງແກ່ການຮ່ວມມືກັບພາກເອກະຊົນ
- ຮັບຮອງວິທີການຝຶກອົບຮົມແບບຄວບຄູ່ ໂດຍສົມທົບກັບສະພາການຄ້າ;

**ຜົນໄດ້ຮັບລະດັບກາງ ທີ 5.5: ຄຸນນະພາບຂອງຫຼັກສູດອາຊີວະສຶກສາໄດ້ຮັບການປັບປຸງໃຫ້ດີຂຶ້ນ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ມາດຕະຖານອາຊີບສຳລັບຫຼັກສູດໃໝ່ ຂອງອາຊີວະສຶກສາຕ້ອງໄດ້ຖືກຮັບຮອງ.
- ທົບທວນປະສິດທິຜົນຂອງຫຼັກສູດຝຶກອົບຮົມລະດັບ 1 ແລະ 2 (C.1 ແລະ C.2).
- ກຳນົດໃຫ້ການຈັດຕັ້ງປະຕິບັດຫຼັກສູດ C.1 ແລະ C.2 ເປັນຫຼັກສູດເທົ່າທຽມກັບລະດັບມັດທະຍົມຕອນຕົ້ນ, ພ້ອມທັງນຳໃຊ້ລະບົບບັດໃຫ້ທຶນການສຶກສາ.

**ຜົນໄດ້ຮັບລະດັບກາງ ທີ 5.6: ຄຸນນະພາບຂອງຄູສອນໃນສະຖາບັນອາຊີວະສຶກສາໄດ້ຮັບການປັບປຸງດີຂຶ້ນ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ຮັບຮອງມາດຕະຖານການສອນ ສຳລັບຄູອາຊີວະສຶກສາ.
- ອອກດຳລັດຂອງຂອງລັດຖະມົນຕີກ່ຽວກັບຕຳແໜ່ງວິຊາການຄູອາຊີວະສຶກສາ, ປະເພດ ແລະ ນະໂຍບາຍແຮງຈູງໃຈສຳລັບຄູອາຊີວະສຶກສາ.
- ສະຖາບັນພັດທະນາອາຊີວະສຶກສາ ຕ້ອງສ້າງແຜນດຳເນີນງານ ພ້ອມແຜນການເງິນ 5 ປີ.

**ຜົນໄດ້ຮັບລະດັບກາງ ທີ 5.7: ສ້າງຄວາມເຂັ້ມແຂງດ້ານການຮ່ວມມືສຳລັບວຽກງານອາ ຊີວະສຶກສາ ໃນລະດັບຊາດ ແລະ ລະດັບທ້ອງຖິ່ນກັບອົງການຈັດຕັ້ງຂອງລັດ, ເອກະຊົນ ແລະ ອົງການຈັດຕັ້ງສາກົນ.**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ປຶກສາຫາລື ແລະ ເຈລະຈາໃນລະດັບສູງຮ່ວມກັນ (ກະຊວງການສຶກສາທິການ ແລະ ກິລາ, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ) ເພື່ອໃຫ້ມີຂໍ້ຕົກລົງສຳລັບການສ້າງຕັ້ງຄະນະວິຊາການຮ່ວມ ລະຫວ່າງ ກະຊວງການສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງອຸດສາຫະກຳ ແລະ ການຄ້າ, ຄູ່ຮ່ວມພັດທະນາ ແລະ ອົງກອນເອກະຊົນ ພາຍໃຕ້ຄະນະປະສານງານທີ 3 (Focal Group 3) ເພື່ອເຮັດໜ້າທີ່ສຶກສາ ແລະ ຕອບສະໜອງຂໍ້ມູນກ່ຽວກັບການປ່ຽນແປງຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ສ້າງໂອກາດເພື່ອໃຫ້ໄດ້ມີວຽກເຮັດງານທຳຫຼາຍຂຶ້ນ.
- ພັດທະນານະໂຍບາຍທີ່ກ່ຽວຂ້ອງ ໂດຍອີງໃສ່ຜົນການສົນທະນາ ແລະ ຂໍ້ສະເໜີແນະຈາກທີມງານວິຊາການ.

- ພັດທະນາຂອບການຮ່ວມມືລະຫວ່າງສະຖານອາຊີວະສຶກສາ ແລະ ຫົວໜ່ວຍທຸລະກິດຂອງພາກເອກະຊົນ.

**ຜົນໄດ້ຮັບລະດັບກາງ ທີ 5.8: ລະບົບການບໍລິຫານ ແລະ ຄຸ້ມຄອງອາຊີວະສຶກສາ ມີຄວາມເຂັ້ມແຂງ**

ຖ້າຢາກບັນລຸໄດ້ຜົນໄດ້ຮັບລະດັບກາງກາງນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສະຖານະພາບການເງິນ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບລະດັບກາງນີ້ໂດຍສະເພາະ.

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ປັບປຸງ ແລະ ຮັບຮອງເອົາບັນດາລະບຽບການຂອງອາຊີວະສຶກສາ.
- ພັດທະນາບັນດານິຕິກຳລຸ່ມກົດໝາຍ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດກົດໝາຍອາຊີວະສຶກສາ.
- ປັບປຸງ ແລະ ຮັບຮອງ ລະບົບການຮັບປະກັນຄຸນນະພາບສຳລັບສະຖາບັນອາຊີວະສຶກສາ ໂດຍໄດ້ຮັບການສະໜັບສະໜູນຈາກ ສູນປະກັນຄຸນນະພາບການສຶກສາ.
- ຮັບຮອງເອົາຂອບການຈັດຕັ້ງປະຕິບັດກອງທຶນພັດທະນາອາຊີວະສຶກສາ ແລະ ການສະໜອງທຶນໃຫ້ແກ່ຂະແໜງການຍ່ອຍອາຊີວະສຶກສາ.

**ຜົນໄດ້ຮັບລະດັບກາງ ທີ 5.9: ຂອບວຸດທິການສຶກສາແຫ່ງຊາດ ໄດ້ກວມເອົາວຸດທິການສຶກສາໃນການສຶກສານອກໂຮງຮຽນ ແລະ ອາຊີວະສຶກສາ ພ້ອມທັງສອດຄ່ອງກັບຂອບວຸດທິຂອງອາຊຽນ.**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ອອກຄຳແນະນຳຂອງລັດຖະມົນຕີ ກ່ຽວກັບການຮ່ວມມືກັນລະຫວ່າງກົມອາຊີວະສຶກສາ ແລະ ກົມການສຶກສານອກໂຮງຮຽນ ເພື່ອລວມເອົາຫຼັກສູດການຮຽນ-ການສອນຂອງການສຶກສານອກໂຮງຮຽນ ເຂົ້າໃນຂອບວຸດທິການສຶກສາແຫ່ງຊາດຂອງອາຊີວະສຶກສາ.
- ກວດກາຄວາມສົມດູນລະຫວ່າງພາກທິດສະດີ ແລະ ພາກປະຕິບັດຕົວຈິງ ຂອງຫຼັກສູດການສຶກສານອກໂຮງຮຽນ ແລະ ຫຼັກສູດອາຊີວະສຶກສາ.
- ບັນດານິຕິກຳຈະຕ້ອງຖືກຮ່າງຂຶ້ນ ເພື່ອເປັນບ່ອນອີງໃນການລວມເອົາການສຶກສານອກໂຮງຮຽນເຂົ້າໃນຂອບວຸດທິການສຶກສາແຫ່ງຊາດ.

**ຜົນໄດ້ຮັບລະດັບກາງທີ 5.10: ການຮຽນ-ການສອນຢູ່ລະດັບມະຫາວິທະຍາໄລ ແລະ ການຄົ້ນ ຄວ້າວິທະຍາສາດໃນໂຮງເຂດບູລິມະສິດຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX, ລວມທັງສາຍວິທະຍາສາດທຳມະຊາດ, ວິສາວະກຳ ແລະ ເທັກໂນໂລຊີ ໄດ້ຮັບການປັບປຸງໃຫ້ເຂັ້ມແຂງຂຶ້ນ.**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ສຶກສາຄວາມເປັນໄປໄດ້ໃນການສ້າງສະຖາບັນເທັກໂນໂລຊີ ລວມທັງສ້າງສູນປັນຍາປະດິດ. ການສຶກສາຄັ້ງນີ້ຈະຕ້ອງກຳນົດການຈັດສັນພະນັກງານ ແລະ ຄວາມຕ້ອງການງົບປະມານບໍລິຫານທີ່ຈະເກີດຂຶ້ນ ແລະ ແຜນ ການປະຕິບັດເພື່ອຂະຫຍາຍໃນໄລຍະ 5 ປີຂອງແຜນການຂອງຂະແໜງການ.
- ສ້າງຂອບໜ້າວຽກ (ToR) ເພື່ອເຮັດການປະເມີນແບບເອກະລາດ ການປະຕິບັດງານຂອງສູນແຫ່ງຄວາມເປັນເລີດທັງ 4 ແຫ່ງ. ໜ້າວຽກເຫຼົ່ານີ້ ຈະສຸມໃສ່ການກຳນົດຂະບວນການ ເພື່ອສ້າງຄວາມເຂັ້ມແຂງໃຫ້ 4 ສູນດັ່ງກ່າວ, ໂດຍສະເພາະ ເພື່ອປັບປຸງການເຊື່ອມໂຍງເຂົ້າກັບບູລິມະສິດຂອງແຜນພັດທະນາເສດຖະກິດສັງ ຄົມແຫ່ງຊາດ ຄັ້ງທີ IX.

- ກົມການສຶກສາຊັ້ນສູງ ແລະ ກົມກິດຈະການນັກສຶກສາ ເຮັດວຽກຮ່ວມກັນເພື່ອພັດທະນານະໂຍບາຍ/ນິຕິກຳ ກ່ຽວກັບການຈັດສັນທຶນການສຶກສາ ເພື່ອເປັນການສະໜັບສະໜູນນັກຮຽນທີ່ລົງທະບຽນເຂົ້າຮຽນໃນຫຼັກສູດທີ່ເປັນບູລິມະສິດຂອງລັດຖະບານ ແລະ ທຶນການສຶກສາສຳລັບນັກຮຽນທີ່ດ້ອຍໂອກາດ. ນະໂຍບາຍດັ່ງກ່າວ ຈະຖືກນຳໄປປຶກສາຫາລືໃນກອງປະຊຸມໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ ເພື່ອໃຫ້ໄດ້ຮັບການຮັບຮອງໂດຍຄູ່ຮ່ວມພັດທະນາ ເພື່ອຮັບປະກັນໃຫ້ແຜນການສະໜອງທຶນການສຶກສາຂອງພວກເຂົາ ສອດຄ່ອງກັບບູລິມະສິດຂອງລັດຖະບານ.
- ມະຫາວິທະຍາໄລແຫ່ງຊາດ ຈະນຳພາການພັດທະນາ ແລະ ການນຳໃຊ້ເວບໄຊທ໌ການສຶກສາຊັ້ນສູງ ເພື່ອສົ່ງເສີມການຄົ້ນຄວ້າວິທະຍາສາດຂອງອາຈານສອນໃນມະຫາວິທະຍາໄລ ແລະ ນັກສຶກສາລະດັບປະລິນຍາໂທ ແລະ ປະລິນຍາເອກ.
- ອອກຄຳແນະນຳຂອງລັດຖະມົນຕີກ່ຽວກັບການໃຫ້ບູລິມະສິດໃນການສ້າງພື້ນຖານໂຄງລ່າງ ແລະ ສື່ການສອນ ໃນສາຍວິທະສາດທຳມະຊາດໃນສະຖາບັນສ້າງຄູ ແລະ ມະຫາວິທະຍາໄລ ເພື່ອເປັນທິດທາງໃນການໃຫ້ບູລິມະສິດດ້ານງົບປະມານ.
- ມີຂໍ້ຕົກລົງຮ່ວມກັບຜູ້ໃຫ້ທຶນທີ່ກ່ຽວຂ້ອງ ໃນການຍົກລະດັບຄະນະວິສະວະກຳສາດ ເພື່ອໃຫ້ບູລິມະສິດແກ່ນັກສຶກສາທີ່ເຂົ້າມາຮຽນ ແລະ ສືບຕໍ່ຮຽນໃນສາຍວິທະຍາສາດທຳມະຊາດ, ໂດຍຕ້ອງມີຂໍ້ແນະນຳຂອງລັດຖະມົນຕີ ກ່ຽວກັບການກຳນົດບູລິມະສິດນີ້.
- ນະໂຍບາຍໃນການສະໜອງທຶນການສຶກສາຕ້ອງໄດ້ຮັບການປັບປຸງ ເພື່ອໃຫ້ບູລິມະສິດແກ່ຜູ້ທີ່ເຂົ້າຮຽນສາຍວິທະຍາສາດ.
- ຄະນະວິຊາການຮ່ວມ ພາຍໃຕ້ຄະນະປະສານງານການສຶກສາຫຼັງຂັ້ນພື້ນຖານ (ເບິ່ງຜົນໄດ້ຮັບລະດັບກາງ 5.7) ຈະອອກຄຳແນະນຳໃຫ້ແກ່ມະຫາວິທະຍາໄລ ແລະ ສະຖາບັນອາຊີວະສຶກສາກ່ຽວກັບວິທີ ແລະ ເວລາ ທີ່ຈະດຳເນີນການສຶກສາຕິດຕາມນັກຮຽນທີ່ຮຽນຈົບ ທີ່ມີປະສິດທິຜົນ ແລະ ນຳໃຊ້ຜົນການສຶກສາຕິດຕາມດັ່ງກ່າວ ເປັນພື້ນຖານສຳລັບການຕັດສິນໃຈໃນອະນາຄົດ ກ່ຽວກັບພັດທະນາຫຼັກສູດການຮຽນ-ການສອນ. ຄະນະວິຊາການຂະແໜງການສຶກສາ ແລະ ກິລາ ຈະຕ້ອງເປັນຜູ້ຮັບຮອງຄຳແນະນຳນີ້.

**ຜົນໄດ້ຮັບລະດັບກາງ ທີ 5.11: ມະຫາວິທະຍາໄລ ແລະ ໜ່ວຍງານປະກັນຄຸນນະພາບ ຕ້ອງໄດ້ມີການປະເມີນຕົນເອງປະຈຳປີ ພ້ອມທັງມີການປະເມີນພາຍນອກ ທຸກ ໆ 5 ປີ.**

ຖ້າຢາກບັນລຸໄດ້ຜົນໄດ້ຮັບລະດັບກາງກາງນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສະຖານະພາບການເງິນ "ຍົກສູງຄຸນນະພາບ" ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບລະດັບກາງນີ້ໂດຍສະເພາະ.

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ໜ່ວຍງານປະກັນຄຸນນະພາບ ຂອງມະຫາວິທະຍາໄລແຫ່ງຊາດ ໂດຍຮ່ວມກັບສູນປະກັນຄຸນນະພາບສະໜັບສະໜູນມະຫາວິທະຍາໄລອື່ນໆ ໃນການພັດທະນາ ແລະ ຈັດຕັ້ງປະຕິບັດການປະເມີນຕົນເອງປະຈຳປີໃຫ້ໄດ້ຮັບຜົນດີທີ່ສຸດ.
- ອອກຄຳແນະນຳຂອງລັດຖະມົນຕີ ເພື່ອໃຫ້ທຸກມະຫາວິທະຍາໄລຂອງລັດ ຕ້ອງດຳເນີນການປະເມີນຕົນເອງ ພ້ອມທັງສົ່ງບົດລາຍງານໃຫ້ແກ່ຄະນະນຳກະຊວງ ແລະ ລາຍງານຕໍ່ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈຳປີ.
- ພັດທະນາ ແລະ ຮັບຮອງ ຂອບການປະເມີນຜົນການສິດສອນສຳລັບອາຈານສອນການສຶກສາຊັ້ນສູງໃນລະດັບຕ່າງໆຂອງຄຸນວຸດທິ ແລະ ປະສົບການ.

- ອອກຄຳແນະນຳຂອງລັດຖະມົນຕີ ເພື່ອໃຫ້ທຸກສະຖາບັນການສຶກສາຊັ້ນສູງ ໄດ້ດຳເນີນການປະເມີນຜົນການສິດສອນຂອງອາຈານສອນ ໂດຍອີງໃສ່ຂອບການປະເມີນດັ່ງກ່າວຢ່າງເປັນປະຈຳ.
- ມີບົດແນະນຳ ແລະ ນິຕິກຳ ໃນການຄຸ້ມຄອງຕຳແໜ່ງວິຊາການຂອງອາຈານສອນ ຢູ່ສະຖາບັນການສຶກສາຊັ້ນສູງ.

**ຜົນໄດ້ຮັບລະດັບກາງ ທີ 5.12: ມີນິຕິກຳກ່ຽວກັບວິທີການຄິດໄລ່ການສະໜອງທຶນ ໃຫ້ແກ່ນັກສຶກສາທີ່ສຶກສາຢູ່ມະຫາວິທະຍາໄລທີ່ຢູ່ຕ່າງແຂວງໂດຍອີງໃສ່ຜົນການຮຽນ.**

**ນະໂຍບາຍທີ່ຈະຕ້ອງປະຕິບັດ**

- ຂໍອະນຸມັດນຳທ່ານລັດຖະມົນຕີ ເພື່ອພັດທະນາຂອບນະໂຍບາຍ ແລະ ຮູບແບບໃນການຄິດໄລ່ທຶນການສຶກສາໃຫ້ແກ່ນັກສຶກສາທີ່ສຶກສາຢູ່ມະຫາວິທະຍາໄລທີ່ຢູ່ຕ່າງແຂວງ ໂດຍອີງໃສ່ຜົນການຮຽນຂອງເຂົາເຈົ້າ (ມູນຄ່າຫຼືໜ່ວຍສະເໜີພາບຕໍ່ນັກຮຽນ, ອີງໃສ່ສາຂາວິຊາຮຽນ, ອີງໃສ່ຄວາມດ້ອຍໂອກາດ,...). ຂອບນະໂຍບາຍນີ້ ຕ້ອງໄດ້ໃຫ້ຂໍ້ແນະນຳ ແລະ ຂໍ້ສະເໜີແນະ ເພື່ອໃຫ້ລັດຖະມົນຕີຕັດສິນໃຈ.

## 6.6 ຜົນໄດ້ຮັບລະດັບສູງທີ 6:

**ຂະແໜງການສຶກສາໄດ້ມີການຈັດຕັ້ງ, ການຄຸ້ມຄອງ, ການຈັດສັນຊັບພະຍາກອນ, ການຕິດຕາມ ແລະ ການປະເມີນຜົນຢູ່ແຕ່ລະຂັ້ນຢ່າງເໝາະສົມ ເພື່ອປັບປຸງການປະຕິບັດໜ້າທີ່ຂອງຂະແໜງການຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ.**

### 6.6.1 ຫຼັກການ ແລະ ເຫດຜົນ

ກະຊວງສຶກສາທິການ ແລະ ກິລາ ສືບຕໍ່ໃຫ້ບູລິມະສິດຄວາມຈຳເປັນໃນການແກ້ໄຂບັນຫາການວາງແຜນ, ການຂຶ້ນງົບປະມານ ແລະ ການຕິດຕາມ ການປະຕິບັດວຽກງານໃນຂະແໜງການສຶກສາ ແລະ ກິລາ ຮອດປີ 2025, ຄາດວ່າຂໍ້ຫຍຸ້ງຍາກດ້ານການເງິນຈະຍັງສືບຕໍ່ຢູ່ຢ່າງໜ້ອຍຈົນເຖິງປີ 2025, ອັນເນື່ອງມາຈາກເສດຖະກິດໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດ COVID-19. ດັ່ງນັ້ນ ຂະແໜງການສຶກສາ ແລະ ກິລາ ຕ້ອງກຳນົດວິທີການນຳໃຊ້ຊັບພະຍາກອນມະນຸດ ແລະ ການເງິນຢ່າງມີປະສິດທິພາບ. ການປັບປຸງປະສິດທິພາບສາມາດປະຕິບັດໄດ້ດ້ວຍການທົບທວນກົງຈັກການຈັດຕັ້ງໃນທຸກລະດັບ ເພື່ອໃຫ້ເຫັນໄດ້ຂອບເຂດວຽກທີ່ຍັງຂາດປະສິດທິພາບ. ການຄຸ້ມຄອງທີ່ຖືເອົາໂຮງຮຽນເປັນຫຼັກ ໄດ້ນຳໃຊ້ຢູ່ຊັ້ນປະຖົມ ດ້ວຍການສະໜັບສະໜູນຈາກໂຄງການ GPE II. ເຖິງຢ່າງໃດກໍຕາມ ເພື່ອໃຫ້ມີຄວາມຍືນຍົງ ມີຄວາມຈຳເປັນໃນການເອົາວຽກດັ່ງກ່າວເຂົ້າໃນການຈັດຕັ້ງໃນທຸກຂັ້ນ ໂດຍສຸມໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງຫ້ອງການສຶກສາທິການ ແລະ ກິລາເມືອງ ກ່ຽວກັບການຄຸ້ມຄອງທີ່ເອົາໂຮງຮຽນເປັນຫຼັກ ເປັນວຽກປົກອ້ອມໃນທຸກໆໜ່ວຍງານພາຍໃນເມືອງ. ປັດຈຸບັນ ມີຄວາມບໍ່ສົມດູນກັນລະຫວ່າງການຈັດສັນງົບປະມານທີ່ເປັນເງິນເດືອນ ແລະ ງົບປະມານທີ່ບໍ່ເປັນເງິນເດືອນ, ຊຶ່ງມີປະມານ 92% ຂອງງົບປະມານຂອງທ້ອງຖິ່ນແມ່ນເປັນງົບປະມານເງິນເດືອນ ແລະ ເງິນອຸດໜູນຕ່າງໆ. ດັ່ງນັ້ນ ຈິ່ງມີຄວາມຈຳເປັນເພື່ອປັບປຸງຄຸນນະພາບ ແລະ ປະສິດທິພາບໃນການໃຊ້ຈ່າຍງົບປະມານສຳລັບການສຶກສາ. ການປັບປຸງປະສິດທິພາບໃນການຈັດສັນງົບປະມານພາຍໃນແກ່ຂະແໜງການສຶກສາ ແລະ ກິລາ, ໂດຍຜ່ານການພັດທະນາຂອບບູລິມະສິດດ້ານງົບປະມານທີ່ຈະນຳໃຊ້ໃນເວລາສ້າງແຜນ ແລະ ປັບປຸງແຜນງົບປະມານຂອງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ: ບ່ອນໃດທີ່ຄວນຈັດສັນງົບປະມານໃຫ້ເພີ່ມເຕີມ ເພື່ອໄປປັບປຸງຄຸນນະພາບຂອງການສຶກສາໃຫ້ສູງຂຶ້ນ (ຂອບບູລິມະສິດ) ເຮັດແນວໃດ ເພື່ອຮັບປະກັນການແບ່ງປັນຊັບພະຍາກອນໃຫ້ເທົ່າທຽມກັນ ໃນແຕ່ລະແຂວງ ແລະ ແຕ່ລະເມືອງ, ເພື່ອຫຼຸດຜ່ອນຄວາມແຕກຕ່າງພາຍໃນບູລິມະສິດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໂດຍສະເພາະຂະແໜງຍ່ອຍປະຖົມສຶກສາ.

ຄວາມພະຍາຍາມດັ່ງກ່າວ ລວມມີ: 1) ປັບປຸງປະສິດທິພາບຂອງການນໍາໃຊ້ຄູ; 2) ສ້າງຄວາມເຂັ້ມແຂງດ້ານຄວາມສອດຄ່ອງລະຫວ່າງການວາງແຜນ ແລະ ການຈັດສັນງົບປະມານ ໂດຍຜ່ານການປະຕິບັດວຽກງານຢ່າງເຕັມສ່ວນຂອງຄະນະກໍາມະການແຜນການ ແລະ ການເງິນ (ໂດຍມີການສະເໜີ ແລະ ປຶກສາຫາລືກ່ຽວກັບແຜນປະຈໍາປີທີ່ມີການຄາດຄະເນມູນຄ່າ ແລະ ຮ່າງງົບປະມານປະຈໍາປີ); 3) ປັບປຸງການເກັບກໍາຂໍ້ມູນດ້ານການເງິນເພື່ອເສີມຂະຫຍາຍຄວາມຮັບຜິດຊອບ ແລະ ການວິໄຈ; 4) ສ້າງຄວາມເຂັ້ມແຂງເພີ່ມໃຫ້ແກ່ພະນັກງານຄຸ້ມຄອງ ໂດຍສະເພາະຢູ່ຂັ້ນແຂວງ ແລະ 5) ສ້າງຄວາມເຂັ້ມແຂງຂອງຄຸນນະພາບຂອງຂໍ້ມູນ, ການຄຸ້ມຄອງ ແລະ ການນໍາໃຊ້ເຂົ້າໃນຂັ້ນຕອນການວາງແຜນ, ການຕິດຕາມກວດກາ ແລະ ການສ້າງແຜນງົບປະມານ ໂດຍຜ່ານການສັງລວມເອົາບັນດາຖານຂໍ້ມູນຕ່າງໆ ເຂົ້າກັນກັບ LESMIS.

ຕ້ອງການ ການປະສານສົມທົບຢ່າງແໜ້ນແຟ້ນກັບບັນດາຄູ່ຮ່ວມພັດທະນາ ໃນເວລາອອກແບບໂຄງການຊ່ວຍເຫຼືອໃໝ່ ເພື່ອຮັບປະກັນໃຫ້ງົບປະມານການຊ່ວຍເຫຼືອມີຄວາມເໝາະສົມ ແລະ ສອດຄ່ອງກັບບູລິມະສິດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ແລະ ບໍ່ກໍ່ໃຫ້ເກີດມີການໃຊ້ຈ່າຍເງິນບໍລິຫານທີ່ບໍ່ມີຄວາມຍືນຍົງ.

### 6.6.2 ພາກສ່ວນຮັບຜິດຊອບ

ຜົນສໍາເລັດຂອງຜົນໄດ້ຮັບດ້ານຍຸດທະສາດນີ້ແມ່ນຄວາມຮັບຜິດຊອບຮ່ວມກັນຂອງກົມການເງິນ, ກົມຈັດຕັ້ງ ແລະ ພະນັກງານ, ກົມກວດກາ, ກົມແຜນການ, ສະຖາບັນພັດທະນາການບໍລິຫານການສຶກສາ.

### 6.6.3 ຜົນໄດ້ຮັບລະດັບກາງ ແລະ ນະໂຍບາຍ

**ຜົນໄດ້ຮັບລະດັບກາງທີ 6.1: ກົງຈັກການຈັດຕັ້ງຂອງກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ໄດ້ຮັບການປັບປຸງໃຫ້ດີຂຶ້ນ ເພື່ອອໍານວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ຍຸດທະສາດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ລວມທັງການບັນຈຸວຽກງານການບໍລິຫານ ທີ່ອີງໃສ່ໂຮງຮຽນເປັນຫຼັກເຂົ້າໃນກົງຈັກການຈັດຕັ້ງ ແລະ ພາລະບົດບາດຂອງ ຄພສບ ໃນລະດັບໂຮງຮຽນ.**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ພັດທະນາ ແລະ ຮັບຮອງ ຂອບນະໂຍບາຍການຈັດສັນພະນັກງານ ເພື່ອຮັບປະກັນປະສິດທິຜົນ, ຄວາມສົມບູນ ແລະ ຄວາມຄົບຖ້ວນໃນທຸກລະດັບ.
- ຂອບນະໂຍບາຍດັ່ງກ່າວໂດຍພິຈາລະນາເຖິງ "ກຸ່ມໂຮງຮຽນ" ເພື່ອສະໜັບສະໜູນການໃຫ້ບໍລິການທີ່ດີຂຶ້ນ ແລະ ອີງໃສ່ຄວາມແອອັດຂອງວຽກ ແລະ ຄວາມຮັບຜິດຊອບທີ່ແຕກຕ່າງກັນ, ລວມທັງຄວາມແຕກຕ່າງຂອງປະຊາກອນໃນທົ່ວແຂວງ ແລະ ເມືອງ ແລະ ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິຜົນດ້ານຄ່າໃຊ້ຈ່າຍ.
- ມີດໍາລັດວ່າດ້ວຍການມອບໝາຍວຽກງານການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ ໃຫ້ແກ່ອົງກອນໃດໜຶ່ງ, ໂດຍກໍານົດພາລະບົດບາດ ແລະ ຄວາມຮັບຜິດຊອບກ່ຽວກັບວຽກງານດັ່ງກ່າວໃນທຸກລະດັບ, ລວມທັງເປັນຄວາມຮັບຜິດຊອບຂອງ ຄພສບ. ດໍາລັດສະບັບນີ້ ຈະອະທິບາຍຢ່າງຈະແຈ້ງກ່ຽວກັບບົດບາດ ແລະ ຄວາມຮັບຜິດຊອບຂອງ ຄພສບ ໃນການຄຸ້ມຄອງເງິນບໍລິຫານໂຮງຮຽນ ແລະ ການສ້າງແຜນພັດທະນາໂຮງຮຽນ, ລວມທັງການຮັບຮູ້ທາງດ້ານນິຕິກໍາ ກ່ຽວກັບ ຄພສບ ແມ່ນເປັນຫົວໜ່ວຍໜຶ່ງພາຍໃນຂະແໜງການສຶກສາ ແລະ ກິລາ.

- ດຳລັດດັ່ງກ່າວ ຍັງຈະກຳນົດການເຊື່ອມໂຍງທີ່ສຳຄັນລະຫວ່າງ ມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ ເພື່ອເປັນເຄື່ອງມືໃນການອ້າງອີງ ແລະ ໃຫ້ບູລິມະສິດແກ່ແຜນພັດທະນາໂຮງຮຽນ ແລະ ເງິນບໍລິຫານໂຮງຮຽນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນດັ່ງກ່າວ. ດຳລັດດັ່ງກ່າວຍັງຈະໄດ້ເວົ້າເຖິງວິທີການບໍລິຫານທີ່ອີງໃສ່ໂຮງຮຽນເປັນຫຼັກ ຈະເປັນບ່ອນອີງໃນການວາງແຜນ ແລະ ການຄຸ້ມຄອງທີ່ອີງໃສ່ເມືອງເປັນຫຼັກ.
- ມີຂອບນິຕິກຳທີ່ຮັບຮູ້ກ່ຽວກັບລັກສະນະທີ່ກ່ຽວຂ້ອງກັບຫຼາຍວຽກ ຂອງການບໍລິຫານທີ່ອີງໃສ່ໂຮງຮຽນເປັນຫຼັກ, ໂດຍສະເພາະໃນຂັ້ນເມືອງຈະຕ້ອງມີຂອບນິຕິກຳດັ່ງກ່າວນີ້ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດດຳລັດດັ່ງກ່າວ.
- ການທົບທວນພາລະບົດບາດຂອງສູນການສຶກສາຮຽນຮ່ວມ ເພື່ອກຳນົດວິທີການໃນການສຸມໃສ່ການຈັດຕັ້ງປະຕິບັດນະໂຍບາຍການສຶກສາຮຽນຮ່ວມໃຫ້ດີຂຶ້ນ, ລວມທັງການປະສານງານກັບກະຊວງສາທາລະນະສຸກ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**ຜົນໄດ້ຮັບລະດັບກາງທີ 6.2: ແຜນຍຸດທະສາດການພັດທະນາຄູ ແລະ ບຸກຄະລາກອນຂອງຂະແໜງການສຶກສາ ແລະ ກິລາ ໄດ້ຖືກຈັດຕັ້ງປະຕິບັດ, ລວມທັງພະນັກງານຂອງສຶກສາແຂວງ ແລະ ສຶກສາເມືອງ ໄດ້ຮັບການຈັດສັນຕາມຄວາມຕ້ອງການ ແລະ ໄດ້ຮັບການສະໜອງການສ້າງຄວາມສາມາດທີ່ເໝາະສົມ ແລະ ພຽງພໍໃນການປະຕິບັດພາລະບົດບາດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນໜ້າວຽກ ແລະ ຕຳແໜ່ງງານ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ສະຖາບັນພັດທະນາການບໍລິຫານການສຶກສາ (ສພບ) ຈະສ້າງແຜນດຳເນີນງານທີ່ປະກອບຄວາມຕ້ອງການດ້ານງົບປະມານ ເພື່ອຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດ, ເພື່ອໃຫ້ຄະນະປະສານງານການຄຸ້ມຄອງການສຶກສາ ແລະ ກິລາ (FG 4) ໄດ້ທົບທວນ, ອະນຸມັດ, ເຜີຍແຜ່ ແລະ ນຳໃຊ້ເພື່ອເປັນບ່ອນອີງໃຫ້ຄະນະກຳມະການຈັດສັນຄູ ແລະ ໂຄງການສ້າງຂີດຄວາມສາມາດໃຫ້ພະນັກງານ ຂອງທົ່ວຂະແໜງການສຶກສາ ແລະ ກິລາ ຂອງ ສພບ, ກົມສ້າງຄູ, ສູນພັດທະນາຄູ ແລະ ບັນດາສະຖາບັນສ້າງຄູ.
- ຈະຕ້ອງມີຂອບນິຕິກຳໃນການກຳນົດໃຫ້ສຶກສາເມືອງ ແລະ ສຶກສາແຂວງ ໃນການນຳໃຊ້ຍຸດທະສາດພັດທະນາຊັບພະຍາກອນມະນຸດ ເພື່ອເປັນພື້ນຖານໃນການສ້າງຂີດຄວາມສາມາດ ຂອງພະນັກງານຂອງເຂົາເຈົ້າ.
- ສະຖາບັນພັດທະນາການບໍລິຫານການສຶກສາ (ສພບ) ຈະຕ້ອງສ້າງປຶ້ມຄູ່ມືການຮຽນດ້ວຍຕົນເອງ ແລະ ແບບຝຶກອົບຮົມທີ່ສາມາດນຳໃຊ້ໂດຍພະນັກງານ ຂອງສຶກສາເມືອງ ເພື່ອໃຫ້ເປັນສ່ວນໜຶ່ງຂອງກອງປະຊຸມປະຈຳເດືອນຂອງພວກເຂົາກັບຜູ້ອຳນວຍການໂຮງຮຽນ[18].
- ມີຄຳແນະນຳຂອງລັດຖະມົນຕີ ເພື່ອຮັບປະກັນການຈັດສັນເວລາໃນກອງປະຊຸມຮ່ວມກັບຜູ້ອຳນວຍການໂຮງຮຽນປະຈຳເດືອນຂອງເມືອງ ສຳລັບການສ້າງຂີດຄວາມສາມາດຂອງຜູ້ອຳນວຍການ.
- ມີຖານຂໍ້ມູນເພື່ອເກັບກຳຂໍ້ມູນກ່ຽວກັບການຝຶກອົບຮົມຂອງຜູ້ບໍລິຫານການສຶກສາໃນຫົວຂໍ້ຕ່າງໆ ໂດຍສົມທົບກັບການພັດທະນາຖານຂໍ້ມູນ LESMIS.

[18] ໂມດູນຫຼັກຄວນສອດຄ່ອງກັບຂະບວນການສ້າງແຜນພັດທະນາໂຮງຮຽນ, ໂດຍນຳໃຊ້ FQS ແລະ ເຊື່ອມໂຍງກັບແຜນການພັດທະນາເມືອງ, ການຕິດຕາມ ແລະ ການກຳນົດຄາດໝາຍ

- ພາລະບົດບາດຂອງເມືອງ ແລະ ແຂວງ ຕ້ອງໄດ້ຮັບການປັບປຸງ ແລະ ຄຳແນະນຳໃນການຈັດສັນພະນັກງານໃຫ້ສຶກສາແຂວງ ແລະ ສຶກສາເມືອງ ໂດຍອີງໃສ່ຄວາມຕ້ອງການຕົວຈິງ ແລະ ໜ້າວຽກຕົວຈິງ ຈະຕ້ອງໄດ້ພັດທະນາ ແລະ ຮັບຮອງໃຫ້ມີການນຳໃຊ້.
- ສະຖາບັນພັດທະນາການບໍລິຫານການສຶກສາ ພັດທະນາແຜນດຳເນີນງານສຳລັບການສ້າງຂີດຄວາມສາມາດໃຫ້ແກ່ພະນັກງານຂອງສຶກສາແຂວງ, ສຶກສາເມືອງ ແລະ ກຸ່ມໂຮງຮຽນ ໂດຍອີງໃສ່ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດຂອງກະຊວງສຶກສາທິການ ແລະ ກິລາ, ລວມທັງການຄຸ້ມຄອງ ທີ່ອີງໃສ່ໂຮງຮຽນເປັນຫຼັກ ແລະ ແຜນພັດທະນາໂຮງຮຽນ, ລວມທັງຂໍ້ສະເໜີແນະ ເພື່ອເຮັດໃຫ້ການຈັດສັນງົບປະມານຂອງລັດຖະບານເຂົ້າໃສ່ກິດຈະກຳດັ່ງກ່າວໃຫ້ມີຄວາມຍືນຍົງ ແທນທີ່ຈະເພິ່ງພາອາໄສແຕ່ແຫຼ່ງການເງິນຈາກພາຍນອກ.

**ຜົນໄດ້ຮັບລະດັບກາງທີ 6.3: ບັນດາຄະນະກຳມະການປະຕິບັດງານ (ຄະນະກຳມະການຈັດສັນຄູ ແລະ ຄະນະກຳມະການແຜນການ ແລະ ການເງິນ) ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ມີຄວາມເຂັ້ມແຂງໂດຍນຳໃຊ້ຂໍ້ມູນອ້າງອີງຈາກ ແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ (ACSEP). ຜົນການປະເມີນຜົນການຮຽນຂອງນັກຮຽນ ແລະ ຂໍ້ມູນຈາກ LESMIS (ລວມທັງ PMIS, FMIS & EMIS) ໄດ້ຖືກນຳໃຊ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ຍຸດທະສາດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ.**

ຖ້າຢາກບັນລຸໄດ້ຜົນໄດ້ຮັບລະດັບກາງກາງນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສະຖານະພາບການເງິນ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບລະດັບກາງນີ້ໂດຍສະເພາະ.

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ຂໍ້ກຳນົດ ແລະ ຄວາມຮັບຜິດຊອບຂອງຄະນະກຳມະການຈັດສັນຄູ ຕ້ອງໄດ້ທົບທວນ ແລະ ປັບປຸງ ເພື່ອໃຫ້ມີໜ້າທີ່ໃນການກຳນະໂຍບາຍ ແລະ ຂໍ້ແນະນຳເພື່ອຍົກສູງປະສິດທິພາບ ແລະ ປະສິດທິຜົນຂອງການຈັດສັນຄູເພື່ອລາຍງານການນຳຂອງກະຊວງ.
- ສະເໜີສ້າງຕັ້ງຄະນະກຳມະການຈັດສັນຄູຂັ້ນທ້ອງຖິ່ນ ຊຶ່ງຈະຕ້ອງໄດ້ຮັບການທົບທວນຈາກຄະນະກຳມະການຂັ້ນສູນກາງເພື່ອຂໍອະນຸມັດຈາກລັດຖະມົນຕີ.
- ການກຳນົດເວລາ ແລະ ໜ້າວຽກ ຂອງຄະນະກຳມະການແຜນການ ແລະ ການເງິນ ຈະໄດ້ຮັບການທົບທວນ, ສ້າງຄວາມເຂັ້ມແຂງ ແລະ ເຮັດໃຫ້ສອດຄ່ອງກັນ ເພື່ອຮັບປະກັນໜ້າທີ່ການປະສານງານລະຫວ່າງຂັ້ນຕອນການວາງແຜນ ແລະ ການຂຶ້ນແຜນງົບປະມານໃຫ້ມີປະສິດທິຜົນ ແລະ ທັນເວລາ.
- ການສະເໜີສ້າງຕັ້ງຄະນະກຳມະການແຜນການ ແລະ ການເງິນຂັ້ນທ້ອງຖິ່ນ ຕ້ອງໄດ້ຮັບການທົບທວນຈາກຄະນະກຳມະການຂັ້ນສູນກາງ ເພື່ອຂໍອະນຸມັດຈາກລັດຖະມົນຕີ.
- ອອກດຳລັດເພື່ອກຳນົດໃຫ້ ຄະນະກຳມະການແຜນການ ແລະ ການເງິນ ຊຶ່ງສາມາດກວດກາບົດລາຍງານການເງິນປະຈຳປີຂອງແຕ່ລະເມືອງ ເພື່ອໃຫ້ສາມາດລາຍງານແກ່ລັດຖະມົນຕີຊາບ ກ່ຽວກັບຄວາມສອດຄ່ອງຂອງການຈັດສັນງົບປະມານບໍລິຫານໃຫ້ເມືອງ ໂດຍອີງໃສ່ຄູ່ມືໃນການຈັດສັນງົບປະມານບໍລິຫານໃຫ້ເມືອງ ທີ່ຮັບຮອງໂດຍລັດຖະມົນຕີ.
- ອອກດຳລັດເພື່ອກຳນົດໃຫ້ແຕ່ລະແຂວງ ສົ່ງແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ ໃຫ້ຄະນະກຳມະການແຜນການ ແລະ ການເງິນ ເພື່ອໃຫ້ຄະນະດັ່ງກ່າວ ໄດ້ຢັ້ງຢືນ/ກວດກາ ໂດຍນຳໃຊ້ຂໍ້ມູນຈາກຖານຂໍ້ມູນຄຸ້ມຄອງແຜນການ ແລະ ການເງິນ ( PBMIS) ທີ່ສາມາດສ້າງແຜນງົບປະມານໃຫ້ທັນເວລາ ແລະ ລາຍງານການ

ປະຕິບັດງົບປະມານໃຫ້ທັນເວລາ ເພື່ອໃຫ້ ຄະນະກຳມະການແຜນການ ແລະ ການເງິນ ໄດ້ທົບທວນ ແລະ ສົນທະນາກ່ຽວກັບບູລິມະສິດຂອງງົບປະມານ.

- ມີຂອບນິຕິກຳ ເພື່ອຊ່ວຍໃຫ້ຄະນະກຳມະການແຜນການ ແລະ ການເງິນ ສາມາດກວດກາ ແລະ ລາຍງານ ຄວາມສອດຄ່ອງຂອງແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍຂັ້ນແຂວງ ກັບບູລິມະສິດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ແລະ ການຈັດຕັ້ງປະຕິບັດແຜນດັ່ງກ່າວ.
- ອອກຂໍ້ແນະນຳຂອງລັດຖະມົນຕີ ເພື່ອໃຫ້ສູນສະຖິຕິການສຶກສາ ແລະ ກິລາ ໄດ້ແຍກຕົວຊີ້ບອກຂອງການຈັດຕັ້ງປະຕິບັດການສຶກສາປະຈຳປີ ໃນເຂດທີ່ດ້ອຍໂອກາດ (40 ເມືອງ) ແລະ ເມືອງທີ່ບໍ່ດ້ອຍໂອກາດ ພ້ອມທັງລາຍງານກ່ຽວກັບແນວໂນ້ມໃນການຫຼຸດຜ່ອນຄວາມແຕກໂຕນກັນ.
- ສູນສະຖິຕິຂອງກະຊວງສຶກສາທິການ ແລະ ກິລາ ສະໜອງໂຄງຮ່າງບົດລາຍງານຂໍ້ມູນດ້ານການສຶກສາໂດຍແຍກຕາມເພດ ແລະ ເຜົ່າ[19] ໃຫ້ແຕ່ລະແຂວງ ເພື່ອສາມາດລາຍງານກ່ຽວກັບຄວາມຄືບໜ້າ ໃນການຫຼຸດຜ່ອນຄວາມແຕກໂຕນກັນ.
- ໂຄງການ/ຂໍ້ລິເລີ່ມ ໃນການສ້າງແຜນພັດທະນາລະບົບຂໍ້ມູນຂ່າວສານດ້ານການສຶກສາ ແລະ ກິລາ (LESMIS) 2018-2022 ຈະຕ້ອງໄດ້ປັບປຸງເພື່ອໃຫ້ TEMIS, TVETMIS ແລະ LUMS ເປັນອົງປະກອບຂອງ LESMIS. ແຜນ LESMIS ສະບັບປັບປຸງຈະຕ້ອງຖືກຮັບຮອງ ແລະ ຈັດຕັ້ງປະຕິບັດ.
- ກະຊວງສຶກສາທິການ ແລະ ກິລາ ກຳນົດ ແລະ ໃຫ້ບູລິມະສິດຫົວຂໍ້ໃນການຄົ້ນຄວ້າ ແລະ ວິໄຈໃນຕໍ່ໜ້າ, ໂດຍປະສານງານກັບຄູ່ຮ່ວມພັດທະນາ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນານະໂຍບາຍ ອີງຕາມຫຼັກຖານ ທີ່ກຳລັງດຳເນີນຢູ່ໃນປັດຈຸບັນ.
- ພັດທະນາແຜນປະຕິບັດງານທີ່ປະກອບມີຄ່າໃຊ້ຈ່າຍຕ່າງໆ ເພື່ອສ້າງຄວາມອາດສາມາດຂອງພະນັກງານຂອງສູນວິໄຈ ແລະ ປະເມີນການສຶກສາ ແລະ ເພື່ອສ້າງເຄືອຂ່າຍການຄົ້ນຄວ້າ ແລະ ປະເມີນຜົນການສຶກສາ.
- ສ້າງນິຕິກຳ ແລະ ກຳນົດພາລະບົດບາດຂອງຄະນະກຳມະການ ຈັນຍາທຳການຄົ້ນຄວ້າວິໄຈ
- ຍຸດທະສາດໃໝ່ສຳລັບ LESMIS ຈະຕ້ອງປະກອບມີຂໍ້ມູນການຮູ້ໜັງສື ໂດຍແຍກຕາມເພດ, ລະດັບຄວາມທຸກຍາກ, ເຜົ່າ, ຄວາມພິການ ແລະ ທີ່ຕັ້ງພູມສັນຖານ ເພື່ອໃຫ້ຂໍ້ມູນດັ່ງກ່າວ ບັນຈຸເຂົ້າໃນຂະບວນການຂອງການເກັບກຳຂໍ້ມູນ ແລະ ການລາຍງານ ຂອງສູນສະຖິຕິການສຶກສາ ແລະ ກິລາ ຂອງກະຊວງສຶກສາທິການ ແລະ ກິລາ.

**ຜົນໄດ້ຮັບລະດັບກາງທີ 6.4: ຂອບຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ 2021-2025 ໄດ້ຮັບການຈັດຕັ້ງປະຕິບັດໃນແຕ່ລະປີ.**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ບົດລາຍງານການຈັດຕັ້ງປະຕິບັດຂອບການຕິດຕາມ ແລະ ປະເມີນຜົນຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຕ້ອງໄດ້ນຳສະເໜີ ຕໍ່ກອງປະຊຸມໜ່ວຍງານວິຊາການຂອງແໜງການສຶກສາ ແລະ ກອງປະຊຸມຜູ້ບໍລິຫານການສຶກສາປະຈຳປີ.
- ໃຊ້ຂໍ້ມູນຈາກ LESMIS ແລະ ບົດລາຍງານຈາກ PBMIS ເພື່ອເປັນບ່ອນອີງໃຫ້ແກ່ການລາຍງານວຽກງານຕິດຕາມ ແລະ ປະເມີນຜົນ.

[19] ເພດ, ກຸ່ມພາສາ ລວມທັງຂໍ້ມູນກ່ຽວກັບເດັກພິການ

- ທົບທວນຄືນວິທີການນໍາໃຊ້ຂໍ້ມູນພົນລະເມືອງຈາກຖານຂໍ້ມູນ EMIS ກັບຂໍ້ມູນການຄາດຄະເນປະຊາກອນຂອງສູນສະຖິຕິແຫ່ງຊາດ ແລະ ຂໍ້ມູນການສໍາຫຼວດອື່ນໆເຊັ່ນ: ການສໍາຫຼວດດັດຊະນີໝາຍສັງຄົມລາວ (LSIS).

**ຜົນໄດ້ຮັບລະດັບກາງທີ 6.5: ການກະກຽມຕອບໂຕ້ສຸກເສີນ ແລະ ການຮັບມືກັບໄພພິບັດ ຂອງລະ ບົບການສຶກສາ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ສ້າງແຜນການແກ້ໄຂເຫດການສຸກເສີນຂອງຂະແໜງການສຶກສາ ແລະ ກິລາ ພ້ອມຈັດຕັ້ງປະຕິບັດ ລວມທັງແຜນຮັບມືກັບການປ່ຽນແປງຂອງດິນຟ້າອາກາດ.
- ສັງລວມເອົາບັນດາທິດທາງໃນການກະກຽມ ຕອບໂຕ້ສຸກເສີນພາຍໃນກະຊວງສຶກສາທິການ ແລະ ກິລາ, ສຶກສາແຂວງ, ສຶກສາເມືອງ ແລະ ໂຮງຮຽນເພື່ອຝຶກອົບຮົມໃຫ້ຄູສອນ ແລະ ຄູນິເທດ ໂດຍການຮ່ວມມືກັບກຸ່ມໂຮງຮຽນ
- ນໍາໃຊ້ເຄື່ອງມືທາງອອນລາຍ (online) ເພື່ອຕິດຕາມການຕອບໂຕ້ສຸກເສີນ ໂດຍບັນຈຸເຂົ້າໃນຖານຂໍ້ມູນ LESMIS.

## 6.7 ຜົນໄດ້ຮັບລະດັບສູງທີ 7:

**ຄວາມແຕກໂຕນກັນຫຼຸດຜ່ອນລົງ ໂດຍຜ່ານແຜນການເງິນທີ່ສະໜັບສະໜູນຄາດໝາຍຜົນໄດ້ຮັບ ທີ່ກໍານົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ ພ້ອມທັງພິຈາລະນາເຖິງຄວາມສາມາດໃນການຈັດຕັ້ງປະຕິບັດ ແລະ ຄວາມອາດສາມາດທາງດ້ານການເງິນທີ່ຈໍາກັດ.**

### 6.7.1. ຫຼັກການ ແລະ ເຫດຜົນ

ບົດລາຍງານການທົບທວນກາງສະໄໝຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020 ສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ຂະແໜງການສຶກສາ ແລະ ກິລາ ແມ່ນໄດ້ຮັບງົບປະມານບໍ່ພຽງພໍກັບຄວາມຕ້ອງການ ໃນໄລຍະແຕ່ 2016-2018. ບົດລາຍງານການທົບທວນດັ່ງກ່າວຍັງຊີ້ໃຫ້ເຫັນວ່າ, ຖ້າຂະແໜງການສຶກສາ ແລະ ກິລາ ໄດ້ຮັບງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ແລະ ງົບປະມານລົງທຶນເພີ່ມຂຶ້ນ, ແມ່ນຈະສາມາດບັນລຸໄດ້ບັນດາຈຸດປະສົງຕ່າງໆຂອງແຜນພັດທະນາ ແລະ ສາມາດຍົກສູງຄຸນນະພາບຂອງການສຶກສາໃຫ້ດີຂຶ້ນ, ໃນຂະນະດຽວກັນກໍຄວນປັບປຸງປະສິດທິພາບໃນການຄຸ້ມຄອງ ແລະ ການນໍາໃຊ້ຊັບພະຍາກອນທີ່ມີຈໍາກັດ.

ບົດລາຍງານການທົບທວນກາງສະໄໝຍັງໄດ້ໃຫ້ຂໍ້ແນະນໍາວ່າ ກະຊວງສຶກສາທິການ ແລະ ກິລາ ຕ້ອງກະກຽມຄໍາອະທິບາຍທີ່ຊັດເຈນ ກ່ຽວກັບຄວາມຕ້ອງການງົບປະມານຂອງຂະແໜງການສຶກສາ ແລະ ກິລາ ເພື່ອສະເໜີຕໍ່ກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ ໃນເວລາເຈລະຈາຂໍງົບປະມານ ເພື່ອໃຫ້ພາກສ່ວນດັ່ງກ່າວເຫັນໄດ້ເຖິງ ການເຊື່ອມໂຍງກັນລະຫວ່າງງົບປະມານທີ່ຕ້ອງການ ກັບບັນດານະໂຍບາຍ ແລະ ຄາດໝາຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ. ຄໍາອະທິບາຍດັ່ງກ່າວ ຕ້ອງໄດ້ໃຫ້ຄະນະກໍາມະການແຜນການ ແລະ ການເງິນ ເປັນຜູ້ຮັບຮອງເອົາຢ່າງເປັນທາງການ. ຕົວຢ່າງ ງົບປະມານທີ່ສະເໜີ ໃຫ້ກວມເອົາການເພີ່ມຂຶ້ນຂອງງົບປະມານພາກ 63 ຂອງເມືອງ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິຫານຂັ້ນເມືອງ ແລະ ການຈັດຕັ້ງປະຕິບັດແຜນງານການສະໜັບສະໜູນຂອງຄູສຶກສານິເທດ ຫຼື ຄວາມຕ້ອງການງົບປະມານການລົງທຶນພິເສດ ເພື່ອສ້ອມແປງໂຮງ ຮຽນທີ່ໄດ້ຮັບຜົນກະທົບຈາກໄພນໍ້າຖ້ວມ.

ຍ້ອນຂໍ້ຫຍຸ້ງຍາກທາງດ້ານການເງິນໃນຊ່ວງໄລຍະ 2016-2020, ດັ່ງນັ້ນ ງົບປະມານສໍາລັບການຝຶກອົບຮົມຄູປະຈໍາການ ແລະ ການຊ່ວຍເຫຼືອດ້ານຫຼັກວິຊາຄູແກ່ຄູໃນໂຮງຮຽນທີ່ມີຜົນການຮຽນຕໍ່າຈຶ່ງໄດ້ຫຼຸດລົງ ແລະ

ຂາດງົບປະມານ ເພື່ອສະໜັບສະໜູນແກ່ການສອນສຳລັບຫ້ອງຮຽນຮ່ວມ. ງົບປະມານການສຶກສາສ່ວນໃຫຍ່ແມ່ນພາກເງິນເດືອນ ແລະ ຄ່າແຮງງານ, ໃນຂະນະທີ່ງົບປະມານທີ່ບໍ່ແມ່ນເງິນເດືອນກວມ 12% ຂອງງົບປະມານທັງໝົດຂອງຂະແໜງການ; ສ່ວນຢູ່ຂັ້ນແຂວງມີພຽງ 8% ເທົ່ານັ້ນ.

ຍ້ອນຜົນຈາກຂໍ້ຈຳກັດທາງດ້ານງົບປະມານຂອງຂະແໜງການໃນຫຼາຍປີຜ່ານມາ, ຈຶ່ງໃຫ້ບູລິມະສິດແກ່ການຮັກສາແຜນງານທີ່ມີຢູ່ ເຊັ່ນ: ເງິນບໍລິຫານໂຮງຮຽນ ແລະ ການພິມປຶ້ມແບບຮຽນທົດແທນ. ລັດຖະບານ ກໍຄືກະຊວງສຶກສາທິການ ແລະ ກິລາ ຕ້ອງກຳນົດບູລິມະສິດທີ່ຊັດເຈນ ໃນການໃຊ້ຈ່າຍງົບປະມານບໍລິຫານປົກກະຕິ ຖ້າຢາກຈັດຕັ້ງປະຕິບັດບັນດາແຜນງານຫຼັກ ເພື່ອສະໜັບສະໜູນໃຫ້ແກ່ການປັບປຸງຄຸນນະພາບການສຶກສາ ເຊັ່ນ: ການຝຶກອົບຮົມຄູປະຈຳການ, ການລົງຊຸກຍູ້ການຮຽນ-ການສອນຂອງຄູນິເທດ, ສະໜອງສື່ການຮຽນ, ອຸປະກອນ, ເງິນເບ້ຍລ້ຽງ, ການລົງທຶນໃສ່ພື້ນຖານໂຄງລ່າງດ້ານນ້ຳສະອາດ ແລະ ສຸຂະອະນາໄມ. ບັນດາຄູ່ຮ່ວມພັດທະນາ ມີບົດບາດສຳຄັນໃນການສ້າງຄວາມສອດຄ່ອງ ແກ່ການປະຕິບັດໂຄງການຊ່ວຍເຫຼືອ ກັບບູລິມະສິດແຫ່ງຊາດທີ່ໄດ້ສັງລວມໄວ້ໃນຂໍ້ ທີ 3.3 ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ແລະ ເລັ່ງເປົ້າໝາຍໃສ່ 40 ເມືອງບູລິມະສິດ ທີ່ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດ (ເບິ່ງເອກະສານຊ້ອນທ້າຍທີ 3). ທຸກໆໂຄງການໃໝ່ທີ່ສະເໜີການສະໜັບສະໜູນໂດຍຄູ່ຮ່ວມພັດທະນາ ຄວນກຳນົດຢ່າງຈະແຈ້ງ ກ່ຽວກັບຄວາມຮັບຜິດຊອບໃນການສະໜອງງົບປະມານບໍລິຫານ ໃນໄລຍະດຳເນີນໂຄງການ ແລະ ໃນອະນາຄົດ ຫຼັງໂຄງການສິ້ນສຸດ.

ການຈັດສັນງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ເຂົ້າໃສ່ວຽກງານສຶກສາ ແມ່ນມີຄວາມແຕກຕ່າງກັນໃນແຕ່ລະແຂວງ ແລະ ເມືອງ ໂດຍບໍ່ໄດ້ຄຳນຶງເຖິງລະດັບຂອງການໃຫ້ບໍລິການ ຫຼື ຄວາມແຕກໂຕນໃນການເຂົ້າຮຽນ. ກະຊວງສຶກສາທິການ ແລະ ກິລາ ບໍ່ສາມາດນຳໃຊ້ເງິນຈາກຮ່ອງເງິນເດືອນ ເຂົ້າໃນກິດຈະກຳອື່ນໆໄດ້ ແລະສິ່ງທີ່ສາມາດເຮັດໄດ້ເພື່ອຫຼຸດຜ່ອນຄວາມແຕກໂຕນກັນ ກໍຄືການປັບປຸງປະສິດທິພາບໃນການສັບຊ້ອນຄູ. ເຖິງຢ່າງໃດກໍຕາມ, ການຍົກຍ້າຍຄູຈາກບ່ອນນຶ່ງໄປອີກບ່ອນນຶ່ງ ແມ່ນມີຄວາມຫຍຸ້ງຍາກຫຼາຍ ໂດຍສະເພາະຈາກເມືອງໜຶ່ງໄປອີກເມືອງໜຶ່ງ ແລະ ການໂອນຍົກຍ້າຍເງິນເດືອນກໍມີຄວາມຫຍຸ້ງຍາກ.

ຍຸດທະສາດນຶ່ງອີກ ໃນການໃຊ້ແຜນການເງິນ ເພື່ອຫຼຸດຜ່ອນຄວາມແຕກໂຕນກັນ ແມ່ນທົບທວນສູດການຄິດໄລ່ງົບປະມານສຳລັບເງິນບໍລິຫານໂຮງຮຽນ ແລະ ສະໜອງເງິນຊ່ວຍເຫຼືອໃຫ້ທ້ອງຖິ່ນ/ເມືອງ ທີ່ການພັດທະນາການສຶກສາຍັງຕ່ຳ. ທັງຄະນະກຳມະການຈັດສັນຄູ ແລະ ຄະນະກຳມະການແຜນການ ແລະ ການເງິນ ຈະຄົ້ນຄວ້າເບິ່ງຂໍ້ສະເໜີແນະ ຈາກໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ ທີ່ໄດ້ປະເມີນກ່ຽວກັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020 ແລະ ບົດລາຍງານການທົບທວນກາງສະໄໝ ເພື່ອກຳນົດຍຸດທະສາດສຳລັບການນຳໃຊ້ຊັບພະຍາກອນ (ຊັບພະຍາກອນມະນຸດ/ການເງິນ) ເພື່ອຫຼຸດຜ່ອນຄວາມແຕກໂຕນ ໂດຍຜ່ານການສ້າງຄວາມເຂັ້ມແຂງດ້ານການຊ່ວຍເຫຼືອແກ່ພາກສ່ວນທີ່ຍັງອ່ອນ. ອາດພິຈາລະນາໃຫ້ນຳໃຊ້ເງິນບໍລິຫານໂຮງ ຮຽນທີ່ແຕກຕ່າງກັນ ແລະ/ຫຼື ສູດຈັດສັນງົບປະມານບໍລິຫານໃຫ້ແກ່ບັນດາເມືອງ ໂດຍອີງຕາມຈຳນວນໂຮງຮຽນທີ່ດ້ອຍໂອກາດ. ມີຄວາມຈຳເປັນຕ້ອງປັບປຸງປະສິດທິຜົນໃນການນຳໃຊ້ເງິນບໍລິຫານໂຮງຮຽນ ໂດຍຮັບປະກັນໃຫ້ ການໂອນເງິນ ເຖິງໂຮງຮຽນຖືກຕ້ອງຕາມເວລາທີ່ກຳນົດ.

ເຖິງຢ່າງໃດກໍຕາມ, ສິ່ງທ້າທາຍທີ່ກະທົບຕໍ່ການຫຼຸດຜ່ອນຄວາມແຕກໂຕນ ແມ່ນສ່ວນແບ່ງງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ແມ່ນຕ່ຳຫຼາຍ ໂດຍສະເພາະໃນຂັ້ນເມືອງ, ຊຶ່ງປັດຈະບັນ ບັນດາເມືອງໄດ້ຮັບສ່ວນແບ່ງງົບປະມານດັ່ງກ່າວແມ່ນຕ່ຳຫຼາຍ. ຖ້າຢາກຫຼຸດຜ່ອນຄວາມແຕກໂຕນກັນຢູ່ຂັ້ນເມືອງ, ການເພີ່ມການຈັດສັນງົບປະມານບໍລິຫານໃຫ້ແກ່ເມືອງແມ່ນຖືເປັນບູລິມະສິດ. ຢາກໄດ້ແນວນັ້ນ ມັນຮຽກຮ້ອງໃຫ້ມີການເພີ່ມງົບປະມານບໍລິ ຫານປົກກະຕິທີ່ບໍ່ແມ່ນເງິນເດືອນຂອງທົ່ວ ຂະແໜງການສຶກສາ ແລະ ກິລາ ໃຫ້ຫຼາຍຂຶ້ນ.

ຈຳນວນພະນັກງານເພດຍິງທີ່ມີຕຳແໜ່ງສູງຍັງມີໜ້ອຍໃນຂັ້ນພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ຜູ້ອຳນວຍການໂຮງຮຽນ. ດັ່ງນັ້ນ, ມີຄວາມຈຳເປັນຕ້ອງໄດ້ປັບປຸງຄວາມສະເໝີພາບຍິງ-ຊາຍໃນກຸ່ມພະນັກງານຄຸ້ມຄອງລະດັບສູງດັ່ງກ່າວ.

### 6.7.2. ພາກສ່ວນຮັບຜິດຊອບ

ຜົນສຳເລັດຂອງຜົນໄດ້ຮັບທີ່ເປັນຍຸດທະສາດນີ້ ແມ່ນຄວາມຮັບຜິດຊອບຮ່ວມມືກັນລະຫວ່າງກົມແຜນການ, ການການເງິນ, ຄະນະກຳມະການແຜນການ ແລະ ການເງິນ, ຄະນະກຳມະການຈັດສັນຄູ, ແຂວງ ແລະ ຄູ່ຮ່ວມພັດທະນາ.

### 6.7.3. ຜົນໄດ້ຮັບລະດັບກາງ ແລະ ນະໂຍບາຍ

**ຜົນໄດ້ຮັບລະດັບກາງທີ 7.1: ແຜນງົບປະມານຂອງແຜນພັດທະນາຂະແໜງການສຶກສາ ແລະ ກິ ລາ ໄດ້ລວມເອົາຍຸດທະສາດການໃຊ້ຈ່າຍງົບປະມານທີ່ມີຄວາມຊັດເຈນ ເພື່ອເປັນທິດທາງໃນການພັດທະນາແຜນງົບປະມານປະຈຳປີຂອງສູນກາງ ແລະ ທ້ອງຖິ່ນ ແລະ ຂະບວນການທົບທວນງົບປະມານ ສະທ້ອນໃຫ້ເຫັນຄວາມຈຳເປັນໃນການຫຼຸດຜ່ອນຄວາມແຕກໂຕນ ແລະ ປັບປຸງຜົນການຮຽນຂອງນັກຮຽນ.**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ຄະນະກຳມະການແຜນການ ແລະ ການເງິນ ທົບທວນຄືນ ແລະ ກຳນົດຍຸດທະສາດການເງິນທີ່ມີເປົ້າໝາຍ, ທົບທວນນິຕິກຳທີ່ມີຢູ່ ແລະ ກົນໄກການຈ່າຍເງິນ ແລະ ການລາຍງານ ແລະ ການໃຊ້ຈ່າຍທີ່ຈຳເປັນ ທີ່ອາດຈະຫຼຸດຜ່ອນຄວາມແຕກຕ່າງຂອງຜົນການສຶກສາ.
- ອີງໃສ່ຜົນການທົບທວນຂອງຄະນະກຳມະການແຜນການ ແລະ ການເງິນ, ນະໂຍບາຍການໃຊ້ຈ່າຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໄດ້ຖືກປັບປຸງຄືນ ໃນເວລາການທົບທວນໃນໄລຍະກາງ ເພື່ອຮັບປະກັນວ່າບູລິມະສິດດ້ານການໃຊ້ຈ່າຍຍັງສືບຕໍ່ແກ້ໄຂຄວາມແຕກໂຕນກັນ.
- ແຜນງົບປະມານປະຈຳປີຂອງຂະແໜງການຍ່ອຍ ຈະປະສົມປະສານເປັນບູລິມະສິດທີ່ມີຜົນກະທົບທີ່ສູງ ແລະ ການກຳນົດກິດຈະກຳທີ່ມີປະສິດທິຜົນທີ່ມີຄ່າໃຊ້ຈ່າຍຫຼາຍກວ່າ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແລະ ແຜນປະຈຳປີທີ່ມີການຄິດໄລ່ມູນຄ່າ.
- ຄະນະກຳມະການແຜນການ ແລະ ການເງິນ ຕ້ອງເຮັດໜ້າທີ່ໃນການທົບທວນແຜນງົບປະມານປະຈຳປີຂອງຂະແໜງຍ່ອຍ ເພື່ອຮັບປະກັນຄວາມສອດຄ່ອງກັບບູລິມະສິດຂອງ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ.
- ການປະເມີນກາງສະໄໝຂອງແຜນພັດທະນາການສຶກສາ ແລະ ກິລາ ຈະຕ້ອງກວມເອົາການປັບປຸງແຜນການເງິນ 5 ປີ ແລະ ແຜນການການເງິນປະຈຳປີ ໂດຍແມ່ນກົມການເງິນເປັນຜູ້ຮັບຜິດຊອບ ໂດຍມີການຮ່ວມມື ແລະ ຊີ້ນຳທາງຍຸດທະສາດຈາກກົມແຜນການ ແລະ ການຊີ້ນຳຂອງຄະນະກຳມະການແຜນການ ແລະ ການເງິນ.
- ຄະນະປະສານງານດ້ານການບໍລິຫານ ແລະ ຄຸ້ມຄອງ (Focal group 4) ໃຫ້ຂໍ້ແນະນຳແກ່ໜ່ວຍງານວິຊາການຂະແໜງການສຶກສາກ່ຽວກັບວິທີການທີ່ດີກວ່າ ໃນການຈັດລຳດັບຄວາມສຳຄັນຂອງກິດຈະກຳທີ່ມີປະສິດທິຜົນດ້ານຄ່າໃຊ້ຈ່າຍ ໂດຍໃຫ້ບູລິມະສິດແກ່ເມືອງທີ່ດ້ອຍໂອກາດ.

**ຜົນໄດ້ຮັບລະດັບກາງທີ 7.2: ໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ ທົບທວນ ແລະ ຮັບຮອງແຜນງົບປະມານກາງສະໄໝຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ.**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ແຜນວຽກຂອງໜ່ວຍງານວິຊາການຂະແໜງການສຶກສາ ຈະຕ້ອງປະກອບມີການທົບທວນ ແລະ ການຮັບຮອງເອົາຄວາມສອດຄ່ອງຂອງແຜນງົບປະມານປະຈຳປີ ກັບແຜນການການເງິນຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແລະ ຂໍ້ສະເໜີແນະໃນການປັບປຸງແຜນການເງິນໄລຍະກາງ.

**ຜົນໄດ້ຮັບລະດັບກາງທີ 7.3: ການຄາດຄະເນການສະໜັບສະໜູນດ້ານການເງິນຂອງຄູ່ຮ່ວມພັດທະນາ ສອດຄ່ອງກັບເປົ້າໝາຍບູລິມະສິດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແລະ ແຜນການຊ່ວຍເຫຼືອໃໝ່ ຕ້ອງຮັບປະກັນວ່າກະຊວງສຶກສາທິການ ແລະ ກິລາ ຈະສາມາດສືບຕໍ່ຈັດຕັ້ງປະຕິບັດໄດ້ຢ່າງຍືນຍົງ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ພາລະບົດບາດ ແລະ ໜ້າທີ່ຂອງໜ່ວຍງານວິຊາການຂະແໜງການສຶກສາ ໄດ້ຖືກປັບປຸງເພື່ອຮັບປະກັນວ່າທຸກໆໂຄງການໃໝ່ຂອງຄູ່ຮ່ວມພັດທະນາ ຕ້ອງກຳນົດໃຫ້ເຫັນຢ່າງຈະແຈ້ງກ່ຽວກັບເງິນບໍລິຫານທີ່ອາດເກີດຂຶ້ນຈາກການລົງທຶນ ແລະ ໂຄງການການພັດທະນາຕ່າງໆ ແລະ ຈະຕ້ອງສຸມໃສ່ໂຄງການທີ່ຖືກກຳນົດວ່າເປັນບູລິມະສິດຫຼັກຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແລະ ສະໜັບສະໜູນ ເມືອງທີ່ດ້ອຍໂອກາດ ທີ່ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດ ຫຼື ອາດປົກຄຸມທົ່ວປະເທດ.
- ບັນດາຄູ່ຮ່ວມພັດທະນາ ຕ້ອງໄດ້ສະໜອງ ແລະ ລາຍງານຂໍ້ມູນຮອບດ້ານຂອງໂຄງການໃນແຕ່ລະປີ ໃຫ້ພະແນກຄຸ້ມຄອງໂຄງການຂອງກົມແຜນການ ເພື່ອໃຫ້ສາມາດສັງລວມເຂົ້າໃນຖານຂໍ້ມູນການຊ່ວຍເຫຼືອທາງການ ເພື່ອການພັດທະນາ (ODA Database).

**ຜົນໄດ້ຮັບລະດັບກາງທີ 7.4: ໄດ້ການລະດົມຊັບພະຍາກອນຢ່າງກວ້າງຂວາງ ໂດຍຜ່ານການຮ່ວມມືຈາກສາກົນລວມທັງຈາກອົງການ ການກຸສົນອື່ນໆ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ກົມພົວພັນການຕ່າງປະເທດ ເຮັດໜ້າທີ່ໃນການລະດົມທຶນຈາກອົງການຈັດຕັ້ງສາກົນຕ່າງໆ ລວມທັງອົງການການກຸສົນອື່ນໆ.
- ສ້າງນິຕິກຳເພື່ອສົ່ງເສີມ ແລະ ຄຸ້ມຄອງອົງການຈັດຕັ້ງສາກົນ ແລະ ອົງກອນເອກະຊົນ ທີ່ລົງທຶນໃສ່ການພັດທະນາການສຶກສາທີ່ມີຄຸນນະພາບ.

## 6.8 ຜົນໄດ້ຮັບລະດັບສູງທີ 8:

**ພົນລະເມືອງລາວມີສຸຂະພາບແຂງແຮງດ້ານຮ່າງກາຍ ແລະ ຈິດໃຈ, ບຸກຄະລາກອນການກິລາ, ນັກກິລາສະໝັກຫຼິ້ນ ແລະ ນັກກິລາອາຊີບ ໄດ້ມາດຕະຖານຄຸນນະພາບດ້ານກິລາ-ກາຍຍະກຳ ປະ ກອບສ່ວນເຂົ້າໃນການເຊີດຊູຖານະບົດບາດຂອງຊາດຢູ່ໃນເອທີສາກົນ ສ້າງຄວາມພາກພູມໃຈໃຫ້ປະຊາຊົນລາວ**

### 6.8.1. ຫຼັກການ ແລະ ເຫດຜົນ

ເຖິງແມ່ນວ່າວຽກງານກິລາມວນຊົນມີການຂະຫຍາຍຕົວຢ່າງກວ້າງຂວາງ, ແຕ່ການຂະຫຍາຍຕົວຍັງບໍ່ທັນໄດ້ເຂົ້າເຖິງຊຸມຊົນ ແລະ ເຂດທ້ອງຖິ່ນ. ໂຄງປະກອບການຈັດຕັ້ງຍັງບໍ່ທັນເຂັ້ມແຂງ; ການພັດທະນາມາດຕະຖານຄຸນນະພາບຍັງບໍ່ສຳເລັດເທື່ອ; ມີຈຳນວນພະນັກງານ ແລະ ນັກວິຊາການທີ່ມີຄຸນນະພາບຍັງບໍ່ພຽງພໍ; ພື້ນຖານໂຄງລ່າງ ແລະ ອຸປະກອນບໍ່ຕອບສະໜອງກັບຄວາມຕ້ອງການຂອງກິດຈະກຳຂອງກິລາ ມວນຊົນ.

ການພັດທະນາ ແລະ ປັບປຸງນັກ ກິລາ, ຄູຝຶກ ແລະ ກຳມະການຕັດສິນມີຄວາມຕ້ອງການຫຼາຍຂຶ້ນຕື່ມເພື່ອໃຫ້ສອດຄ່ອງກັບມາດຕະຖານພາກພື້ນ. ສິ່ງອຳນວຍຄວາມສະດວກດ້ານກິລາ ໃນທຸກລະດັບຕ້ອງການໃຫ້ມີການຄຸ້ມຄອງ ແລະ ບູລະນະຮັກສາ. ການລົງທຶນເພື່ອພັດທະນາກິລາ ໃນຂັ້ນສູນກາງ ແລະ ທ້ອງຖິ່ນມີຂໍ້ຈຳກັດ.

### 6.8.2. ພາກສ່ວນຮັບຜິດຊອບ

ຜົນສຳເລັດຂອງຜົນໄດ້ຮັບທີ່ເປັນຍຸດທະສາດນີ້ ແມ່ນຄວາມຮັບຜິດຊອບຮ່ວມມືກັນລະຫວ່າງກົມກິລາ ລະດັບສູງ, ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ແລະ ສະຫະພັນກິລາແຫ່ງຊາດຕ່າງໆ.

### 6.8.3. ຜົນໄດ້ຮັບລະດັບກາງ ແລະ ນະໂຍບາຍ

**ຜົນໄດ້ຮັບລະດັບກາງທີ 8.1: ໜ່ວຍສະໂມສອນກິລາ-ກາຍຍະກຳ ຂັ້ນບ້ານ, ສະໂມສອນກິລາ-ກາຍຍະກຳຂັ້ນເມືອງ, ສະໂມສອນກິລາ-ກາຍຍະກຳ ຂັ້ນແຂວງ-ນະຄອນຫຼວງ, ການມີສ່ວນຮ່ວມຂອງມວນຊົນ, ສັງຄົມ ໃນຂະບວນການເຄື່ອນໄຫວກິລາ-ກາຍຍະກຳ ເພີ່ມຂຶ້ນ ໃນຂັ້ນແຂວງ-ນະຄອນ ຫຼວງ, ເມືອງ, ບ້ານ ແລະ ສຳນັກງານ-ອົງການ, ບໍລິສັດໂຮງຈັກ-ໂຮງງານ ແລະ ການຈັດຕັ້ງຕ່າງໆ ທັງພາກລັດ-ເອກະຊົນ ແລະ ການພັດທະນາກິລາຄົນພິການໃຫ້ມີປະລິມານເພີ່ມຂຶ້ນ, ມີຄຸນນະ ພາບທຽບເທົ່າກັບສາກົນ.**

ຖ້າຢາກບັນລຸໄດ້ຜົນໄດ້ຮັບລະດັບກາງກາງນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານການເງິນ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບລະດັບກາງນີ້ໂດຍສະເພາະ.

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ຕ້ອງສ້າງນິຕິກຳຕ່າງໆທີ່ກ່ຽວຂ້ອງໃຫ້ຮັດກຸມ ເພື່ອການຂະຫຍາຍວຽກງານກິລາມວນຊົນໃຫ້ກວ້າງຂວາງ.
- ມີມາດຕະຖານສຳລັບພື້ນຖານໂຄງລ່າງ, ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກດ້ານກິລາ.

**ຜົນໄດ້ຮັບລະດັບກາງທີ 8.2: ການຮຽນ-ການສອນ ພະລະ ແລະ ສິລະປະສຶກສາ ໄດ້ຮັບການຈັດຕັ້ງປະຕິບັດຢ່າງກວ້າງຂວາງຂຶ້ນ, ຈຳນວນບຸກຄະລາກອນນັກວິຊາການດ້ານພະລະສຶກສາເພີ່ມຂຶ້ນ, ມີຈຳນວນນັກຮຽນທີ່ເຂົ້າຮ່ວມການແຂ່ງຂັນກິລາພາຍໃນປະເທດ, ພາກພື້ນ ແລະ ສາກົນຫຼາຍຂຶ້ນ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ທຸກງສະຖານການສຶກສາໃຫ້ໄດ້ມີການຈັດການຮຽນ-ການສອນວິຊາພະລະສຶກສາ ລວມທັງມີການເຄື່ອນໄຫວກິລາ-ກາຍະກຳຢ່າງເປັນປະຈຳ
- ຈັດການແຂ່ງຂັນກິລານັກຮຽນປະຈຳປີ ແລະ ເຂົ້າຮ່ວມການແຂ່ງຂັນ ແລະ ເປັນເຈົ້າພາບຈັດການແຂ່ງຂັນກິລານັກຮຽນອາຊຽນ.

**ຜົນໄດ້ຮັບລະດັບກາງທີ 8.3: ນັກກິລາທີ່ມີພອນສະຫວັນ, ນັກກິລາທີມຊາດ ແລະ ນັກກິລາອາຊີບມີຄວາມສາມາດທຽບເທົ່າລະດັບມາດຕະຖານຂອງອານຸພາກພື້ນ, ພາກພື້ນ ແລະ ສາກົນ.**

ຖ້າຢາກບັນລຸໄດ້ຜົນໄດ້ຮັບລະດັບກາງກາງນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສະຖານະພາບການເງິນ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບລະດັບກາງນີ້ໂດຍສະເພາະ.

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ສ້າງແຜນຍຸດທະສາດການພັດທະນານັກກິລາແບບຍືນຍົງ ພາຍໃຕ້ສະພາບທີ່ງົບປະມານມີຈຳກັດ, ລວມທັງສ້າງຄວາມເຂັ້ມແຂງໃຫ້ລະບົບການບໍລິຫານ ແລະ ຄຸ້ມຄອງກິລາລະດັບສູງ. ມີການກຳນົດແຜນການແຂ່ງຂັນທີ່ລະອຽດ.
- ສ້າງຕັ້ງສະຖາບັນການສຶກສາດ້ານ ກິລາ, (ທີ່ມີໂຄງລ່າງພື້ນຖານ ແລະ ອຸປະກອນ) ທີ່ຈະດຳເນີນການສອນວິທະຍາສາດກິລາ ແລະ ເຮັດການຄົ້ນຄວ້າ.

**ຜົນໄດ້ຮັບລະດັບກາງທີ 8.4: ຜູ້ບໍລິຫານ, ຄູຝຶກ, ກຳມະການຕັດສິນ ແລະ ນັກວິທະຍາສາດການກິລາ ມີຄວາມຮູ້ຄວາມສາມາດທຽບເທົ່າມາດຕະຖານສາກົນ.**

ຖ້າຢາກບັນລຸໄດ້ຜົນໄດ້ຮັບລະດັບກາງກາງນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສະຖານະພາບການເງິນ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບລະດັບກາງນີ້ໂດຍສະເພາະ.

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ພັດທະນາພື້ນຖານໂຄງລ່າງດ້ານກິລາ-ກາຍະກຳ, ສະໜາມຝຶກຊ້ອມ, ອຸປະກອນການແຂ່ງຂັນ ແລະ ສະໂມສອນກິລາ-ກາຍະກຳໃນສະຖາບັນການສຶກສາຕ່າງໆ.

**ຜົນໄດ້ຮັບລະດັບກາງທີ 8.5: ການບໍລິຫານຄຸ້ມຄອງວຽກງານກິລາ-ກາຍະກຳແຕ່ສູງກາງຮອດທ້ອງ ຖິ່ນມີຄວາມເຂັ້ມແຂງ**

**ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ**

- ພັດທະນານິຕິກຳກ່ຽວກັບການຄຸ້ມຄອງວຽກງານກິລາ-ກາຍະກຳ ລວມທັງການປັບປຸງລະບົບການຄຸ້ມຄອງວຽກງານກິລາ.

## 7. ຄວາມຕ້ອງການດ້ານຊັບພະຍາກອນ ແລະ ການເງິນສຳລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025

### 7.1. ງົບປະມານຂອງຂະແໜງການສຶກສາ ແລະ ກິລາ 2016-2020

ນັບຕັ້ງແຕ່ປີ 2016 ຂະແໜງການສຶກສາ ແລະ ກິລາ ໄດ້ປະເຊີນກັບສິ່ງທ້າທາຍດ້ານງົບປະມານຢ່າງໜັກໜ່ວງ ຍ້ອນວ່າລັດຖະບານໄດ້ໃຫ້ຄວາມສຳຄັນໃນການເພີ່ມງົບປະມານບໍລິຫານ (ເງິນເດືອນ ແລະ ເງິນບໍລິຫານປົກະຕິ) ແລະ ການເພີ່ມການລົງທຶນໃນໂຄງການກໍ່ສ້າງພື້ນຖານໂຄງລ່າງໃຫຍ່ (ທາງລົດໄຟ ແລະ ການກໍ່ສ້າງເສັ້ນທາງ). ການຄາດຄະເນການເພີ່ມງົບປະມານໃຫ້ແກ່ຂະແໜງການສຶກສາ ແລະ ກິລາ ຍັງບໍ່ທັນເປັນຮູບປະທຳເທື່ອ. ງົບປະມານຂອງຂະແໜງການສຶກສາ ແລະ ກິລາ ແມ່ນໜ້ອຍໃນປີ 2017 ທຽບໃສ່ປີ 2016 ແລະ ແຜນງົບປະມານແຫ່ງລັດສຳລັບປີ 2019 ເຫັນວ່າງົບປະມານຂະແໜງການສຶກສາ ແລະ ກິລາ ຫຼຸດລົງຫຼາຍສົມຄວນ ທຽບໃສ່ແຜນງົບປະມານແຫ່ງລັດປະຈຳປີ 2018. ກົດໝາຍການສຶກສາໄດ້ກຳນົດວ່າ "ຂະແໜງການສຶກສາ ແລະ ກິລາ ຄວນໄດ້ຮັບງົບປະມານໃນແຕ່ລະປີ ບໍ່ໃຫ້ຕ່ຳກວ່າ 18% ຂອງງົບປະມານລັດຖະບານ". ແທ້ຈິງແລ້ວ, ດັ່ງທີ່ເຫັນໃນຕາຕະລາງຂ້າງລຸ່ມນີ້, ສ່ວນແບ່ງຂອງຂະແໜງການສຶກສາ ແລະ ກິລາ ແມ່ນຍັງຕ່ຳກວ່າທີ່ກຳນົດ, ຊຶ່ງໄດ້ຫຼຸດຈາກ 14,2% ໃນປີ 2018 ເປັນ 13,3% ໃນປີ 2020 ທຽບໃສ່ລາຍຈ່າຍຂັ້ນຕົ້ນຂອງລັດຖະບານ[20].

[20] ລາຍຈ່າຍຂັ້ນຕົ້ນ = ງົບປະມານທັງໝົດ ລົບໃຫ້ລາຍຈ່າຍໜີ້ສິນ ແລະ ຄັງສຳຮອງ

**ຕາຕະລາງ 1: ສ່ວນແບ່ງງົບປະມານຂອງ ຂະແໜງການສຶກສາ ແລະ ກິລາ ແຕ່ປີ 2016-2020**

| *(ລ້ານກີບ)* | 2015/16 (ຕົວຈິງ) | 2017 (ຕົວຈິງ) | 2018 (ແຜນ) | 2019 (ແຜນ) | 2020 (ແຜນ) |
|---|---|---|---|---|---|
| ງົບປະມານລັດຖະບານ (ລາຍຈ່າຍຂັ້ນຕົ້ນ) | 28.980.352 | 28.465.896 | 29.552.412 | 29.467.150 | 31.535.000 |
| ງົບປະມານຂອງ ຂະແໜງການສຶກສາ ແລະ ກິລາ | 3.846.563 | 3.793.775 | 4.187.995 | 4.038.132 | 4.144.761 |
| ສ່ວນແບ່ງງົບປະມານຂອງສຶກສາ | 13,3% | 13,3% | 14,2% | 13,7% | 13,1% |

*ແຫຼ່ງຂໍ້ມູນ: ບົດລາຍງານການໃຊ້ຈ່າຍງົບປະມານສຳລັບສົກ 2015/2016 ແລະ ປີ 2017; ແຜນງົບປະມານແຫ່ງລັດປີ 2018, 2019 ແລະ 2020*

ຂໍ້ຈຳກັດດ້ານງົບປະມານເຫຼົ່ານີ້ ໄດ້ສົ່ງຜົນກະທົບຫຼາຍພໍສົມຄວນຕໍ່ ການຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແລະ ການພັດທະນາການສຶກສາ ແລະ ກິລາ ໂດຍລວມ. ແທ້ຈິງແລ້ວ, ການສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020 ແມ່ນອີງໃສ່ການຄາດຄະເນງົບປະມານທີ່ກະຊວງໂດຍກະຊວງການເງິນໃນໄລຍະປີ 2016-2020. ສ່ວນແບ່ງງົບປະມານຂອງສຶກສາໄດ້ກຳນົດເອົາ 17% ຂອງລາຍຈ່າຍພາຍໃນຂອງລັດຖະບານ, ບວກລວມກັບງົບປະມານຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ທີ່ຄາດຄະເນວ່າຈະໄດ້ຮັບ. ດັ່ງທີ່ເຫັນໄດ້ໃນຕາຕະລາງຂ້າງລຸ່ມນີ້, ງົບປະມານຂອງ ຂະແໜງການສຶກສາ ແລະ ກິລາ ທີ່ໄດ້ຮັບແມ່ນຫຼຸດຈາກທີ່ໄດ້ຄາດຄະເນໃນແຜນ 5 ປີ 2016-2020, ສະນັ້ນ ຈຶ່ງເຮັດໃຫ້ມີຊ່ອງຫວ່າງທາງດ້ານການເງິນເປັນຈຳນວນຫຼວງຫຼາຍ.

**ຕາຕະລາງ 2: ງົບປະມານຂອງຂະແໜງການສຶກສາ ແລະ ກິລາ ທຽບໃສ່ຄວາມຕ້ອງການທີ່ກຳນົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020**

| *(ລ້ານກີບ)* | 2015-2016 (ຕົວຈິງ) | 2017 (ຕົວຈິງ) | 2018 (ງົບປະມານ) | 2019 (ງົບປະມານ) | 2020 (ງົບປະມານ) |
|---|---|---|---|---|---|
| ຄວາມຕ້ອງການດ້ານງົບປະມານຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ (ຕົ້ນສະບັບ) | 4.416.806 | 4.898.126 | 4.969.860 | 5.322.760 | 5.517.092 |
| ຄວາມຕ້ອງການດ້ານງົບປະມານຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ (ສະບັບປັບປຸງກາງສະໄໝ) | | | | 4.253.079 | 4.523.169 |
| ງົບປະມານທີ່ຂະແໜງການສຶກສາ ແລະ ກິລາ ໄດ້ຮັບອະນຸມັດ | 3.846.563 | 3.793.775 | 4.187.995 | 4.038.132 | 4.144.761 |
| ສ່ວນແຕກຕ່າງລະຫວ່າງຄວາມຕ້ອງການ ແລະ ງົບປະມານທີ່ໄດ້ຮັບຕົວຈິງ | -570.243 | -1.104.351 | -781.865 | -214.947 | -378.408 |

ໃນໄລຍະແຕ່ປີ 2016-2020 ໄດ້ມີຊ່ອງຫວ່າງທາງດ້ານການເງິນຢ່າງຫຼວງຫຼາຍ ຊຶ່ງເຮັດໃຫ້ມີຄວາມຈຳເປັນຕ້ອງຫຼຸດ ຫຼື ເລື່ອນແຜນກິດຈະກຳຈຳນວນໜຶ່ງ ທີ່ກຳນົດໃນແຜນພັດທທະນາຂະແໜງການສຶກສາ ແລະ ກິລາ 2016-2020. ຊຶ່ງແຜນງານເຫຼົ່ານີ້ ແມ່ນກຸນແຈສຳຄັນໃນການປັບປຸງຄຸນນະພາບຂອງການບໍລິການດ້ານການສຶກສາ ເຊັ່ນ:

- ບັນດາໂຄງການຝຶກອົບຮົມຄູປະຈໍາການ: ແຜນພັດທະນາການສຶກສາ ແລະ ກິລາ ໄດ້ວາງເປົ້າໝາຍໃຫ້ຄູໄດ້ຮັບການຝຶກອົບຮົມເປັນເວລາ 10 ວັນໃນທຸກໆ 5 ປີ. ແຜນງານດັ່ງກ່າວໄດ້ຖືກຍົກເລີກເກືອບທັງໝົດ ຍ້ອນບໍ່ມີງົບປະມານ;
- ເງິນບໍລິຫານໂຮງຮຽນສໍາລັບໂຮງຮຽນປະຖົມ ແລະ ມັດທະຍົມ ບໍ່ສາມາດເພີ່ມຂຶ້ນໄດ້ຕາມແຜນທີ່ກໍານົດໄວ້, ບັນລຸໄດ້ພຽງແຕ່ 70.000 ກີບ ໃນປີ 2020, ແທນທີ່ຈະໄດ້ຕາມແຜນທີ່ວາງໄວ້ໃນເບື້ອງຕົ້ນຄື 100.000 ກີບ.
- ບໍ່ສາມາດເພີ່ມງົບປະມານບໍລິຫານໃຫ້ແກ່ສຶກສາເມືອງ, ສະນັ້ນ ຈຶ່ງເປັນຂໍ້ຈໍາກັດໃນການໃຫ້ບໍລິການຊ່ວຍເຫຼືອໂຮງຮຽນໄດ້ຢ່າງເຕັມທີ່ ເຊັ່ນວ່າ: ການຊ່ວຍເຫຼືອຂອງຄູນິເທດ, ໂດຍສະເພາະແມ່ນໂຮງຮຽນທີ່ຫ່າງໄກສອກຫຼີກ ແລະ ໂຮງຮຽນທີ່ມີຄວາມຕ້ອງການດ້ານການຊ່ວຍເຫຼືອ;
- ການຍົກລະດັບໂຮງຮຽນໃຫ້ໄດ້ຕາມມາດຕະຖານດ້ານສຸຂະອະນາໄມ: ງົບປະມານການລົງທຶນມີຈໍາກັດ ດັ່ງນັ້ນ ຈຶ່ງເຮັດໃຫ້ອັດຕາສ່ວນຂອງໂຮງຮຽນປະຖົມທີ່ມີນໍ້າໃຊ້ຕະຫຼອດປີ ຢູ່ໃນລະດັບ 64% ລະຫວ່າງປີ 2015 ຫາປີ 2018, ຊຶ່ງຕົວເລກດັ່ງກ່າວນີ້ ແມ່ນຕໍ່າລົງຕື່ມຫຼັງຈາກໄດ້ຮັບຜົນກະທົບຈາກໄພພິບັດນໍ້າຖ້ວມໃນປີ 2018 ແລະ 2019, ຊຶ່ງມີໂຮງຮຽນຈໍານວນບໍ່ໜ້ອຍໄດ້ຮັບຜົນກະທົບຈາກໄພພິບັດດັ່ງກ່າວ.

ຜົນການປະເມີນກາງສະໄໝຂອງແຜນ 5 ປີ ໃນ ປີ 2018 ໄດ້ສະແດງໃຫ້ເຫັນວ່າ ຂໍ້ຈໍາກັດດ້ານງົບປະມານເຫຼົ່ານີ້ ມີຜົນກະທົບຕໍ່ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໂດຍລວມດັ່ງນີ້:

- ການສໍາຫຼວດດັດຊະນີໝາຍສັງຄົມລາວ ໃນປີ 2017 ສະແດງໃຫ້ເຫັນວ່າ ໃນຂະນະທີ່ລະບົບການສຶກສາມີການຂະຫຍາຍຕົວ ແລະ ເຮັດໃຫ້ຄວາມບໍ່ສະເໝີພາບຫຼຸດລົງ, ແຕ່ມັນຍັງມີຄວາມແຕກໂຕນກັນໃນການເຂົ້າເຖິງ, ການລອດເຫຼືອ ແລະ ຜົນໄດ້ຮັບຂອງການຮຽນ.
- ການປະເມີນຜົນການຮຽນຂອງນັກຮຽນ ປ.3 ໃນປີ 2017 ສະແດງໃຫ້ເຫັນວ່າ ມີພຽງ 1/3 ຂອງນັກຮຽນ ປ.3 ທີ່ໄດ້ມາດຕະຖານການຮູ້ໜັງສືເພື່ອຂຶ້ນຮຽນຕໍ່ ປ.4 ແລະ ຕໍ່າກວ່າ 20% ຂອງນັກຮຽນທີ່ສາມາດບັນລຸໄດ້ມາດຕະຖານດ້ານຄະນິດສາດ. ການປະເມີນຜົນການຮຽນຂອງນັກຮຽນ ມ.4 ໃນປີ 2019 ກໍໄດ້ຄົ້ນພົບວ່າຜົນການຮຽນຂອງນັກຮຽນແມ່ນຕໍ່າເຊັ່ນດຽວກັນ[21]. ການປະເມີນກາງສະໄໝ ໄດ້ລະບຸຢ່າງຈະແຈ້ງວ່າ ການຂາດການຝຶກອົບຮົມຄູປະຈໍາການ ແລະ ການບໍລິການສະໜັບສະໜູນຂອງຄູນິເທດ ເປັນສອງເຫດ ຜົນທີ່ເຮັດໃຫ້ຜົນການສຶກສາບໍ່ດີ, ລວມທັງການນໍາໃຊ້ຄູບໍ່ມີປະສິດທິພາບ.
- ອັດຕາການຈົບຊັ້ນມັດທະຍົມ ແລະ ການເຂົ້າໂຮງຮຽນໃນສາຍອາຊີວະສຶກສາແມ່ນຕໍ່າ. ຂາດຄູອາຈານທີ່ມີຄຸນວຸດທິສໍາລັບບາງວິຊາໃນຊັ້ນມັດທະຍົມ. ຕ້ອງເອົາໃຈໃສ່ຕື່ມີ ເພື່ອສະໜັບສະໜູນນັກສຶກສາຈາກກຸ່ມທີ່ດ້ອຍໂອກາດ (ກຸ່ມຊົນເຜົ່າ, ກຸ່ມຈາກຄອບຄົວທຸກຍາກ, ກຸ່ມທີ່ມາຈາກເຂດຫ່າງໄກສອກຫຼີກ) ໂດຍຜ່ານການສະໜັບສະໜູນດ້ານການເງິນ. ຕ້ອງມີທຶນເພີ່ມເຕີມສໍາລັບການຝຶກອົບຮົມຄູ ແລະ ການສະໜອງສິ່ງຈູງໃຈສໍາລັບຄູ.

ໃນໄລຍະການທົບທວນກາງສະໄໝຂອງແຜນ 5 ປີ 2016-2020 ໃນປີ 2018, ແຜນການເງິນ ໄດ້ຖືກປັບປຸງສໍາລັບໄລຍະປີ 2019 ແລະ 2020. ໂດຍຄໍານຶງເຖິງຂໍ້ຈໍາກັດດ້ານງົບປະມານ[22], ບັນດາແຜນລາຍຈ່າຍຂອງແຜນພັດທະນາການສຶກສາ ແລະ ກິລາ ສ່ວນຫຼາຍ ຕ້ອງໄດ້ຮັບການດັດແກ້ລົງມາ. ດັ່ງທີ່ເຫັນໄດ້ໃນຕາຕະລາງຂ້າງເທິງ, ຂໍ້

---

[21] ພາສາລາວ: 90% ຂອງນັກຮຽນປະຕິບັດໃນລະດັບພື້ນຖານ ຫຼື ຕໍ່າກວ່າ; 49% ສໍາລັບວິຊາວິທະຍາສາດ ແລະ ວິຊາຄະນິດສາດ ແມ່ນ 90% ຕໍ່າກວ່າລະດັບພື້ນຖານ.

[22] ອີງໃສ່ການຄາດຄະເນການເງິນມະຫາພາກຂອງກະຊວງການເງິນ ສະບັບປັບປຸງ ເດືອນ ພະຈິກ 2017

ກຳນົດດ້ານການເງິນຂອງແຜນ 5 ປີ ສະບັບປັບປຸງ ສຳລັບປີ 2019 ແລະ 2020 ແມ່ນຕ່ຳກວ່າແຜນເດີມ. ຍິ່ງໄປກວ່ານັ້ນ, ສຸດທ້າຍງົບປະມານ ຂະແໜງການສຶກສາ ແລະ ກິລາ ທີ່ໄດ້ຮັບການອະນຸມັດໃນປີ 2019 ແລະ 2020 ແມ່ນຍັງບໍ່ພຽງພໍ ເຖິງແມ່ນວ່າໄດ້ມີການດັດປັບລົງແລ້ວ. ເຖິງຢ່າງໃດກໍ່ຕາມ, ບັນດາຄາດໝາຍໃນການຈັດ ຕັ້ງປະຕິ ບັດ ແລະ ແຜນງານບູລິມະສິດຕ່າງໆທີ່ກຳນົດໃນແຜນ 2016-2020 ແມ່ນຖືກຮັກສາໄວ້ຄືເກົ່າ. ຊຶ່ງມັນເຮັດໃຫ້ບໍ່ມີຄວາມສອດຄ່ອງກັນ ລະຫວ່າງຄາດໝາຍການປະຕິບັດງານຂອງຂະແໜງການ ແລະ ຊັບພະຍາກອນທີ່ຕ້ອງການເພື່ອບັນລຸຄາດໝາຍດັ່ງກ່າວ. ໃນການປະເມີນຜົນການປະຕິບັດງານຂອງຂະແໜງການ ແມ່ນໄດ້ສົມທຽບ ໃສ່ລະດັບຊັບພະຍາກອນທີ່ມີ ໂດຍບໍ່ຄຳນຶງເຖິງການຫົດຖອຍໃນການພັດທະນາການສຶກສາໃນອານາຄົດ ຍ້ອນງົບປະມານທີ່ມີຈຳກັດ. ເພື່ອຫຼີກລ້ຽງສະພາບການດັ່ງກ່າວນີ້ ໃນແຜນ 2021-2025 ຈຶ່ງໄດ້ກຳນົດຂອບນະໂຍບາຍການໃຊ້ຈ່າຍທີ່ຈະແຈ້ງ ໂດຍໄດ້ຈັດລຽງບູລິມະສິດຂອງບັນດາແຜນງານຕ່າງໆ ແລະ ໄດ້ສະເໜີແຜນງົບປະມານໃນສົມມຸດຖານ "ງົບປະມານໄດ້ຮັບຢູ່ໃນລະດັບເທົ່າເດີມ".

### 7.2. ຈຸດປະສົງ ແລະ ຫຼັກການຂອງນະໂຍບາຍການໃຊ້ຈ່າຍງົບປະມານ ສຳລັບ 2021-2025

ພາກນີ້ໄດ້ນຳສະເໜີນະໂຍບາຍການໃຊ້ຈ່າຍຂອງຂະແໜງການສຶກສາ ແລະ ກິລາ ສຳລັບໄລຍະແຕ່ປີ 2021-2025, ເຊິ່ງຈະຖືກປັບປຸງໃນໄລຍະການທົບທວນກາງສະໄໝ, ຊຶ່ງແນໃສ່:

- ຮັບປະກັນສ່ວນແບ່ງງົບປະມານຂອງລັດຖະບານໃຫ້ແກ່ ຂະແໜງການສຶກສາ ແລະ ກິລາ ຢ່າງເໝາະສົມ, ໃນເງື່ອນໄຂທີ່ວຽກງານສຶກສາ ແມ່ນບູລິມະສິດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ມີຂໍ້ຈຳກັດດ້ານງົບປະມານ, ເພື່ອຮັບປະກັນຄວາມຍືນຍົງຂອງການຂະຫຍາຍລະບົບການສຶກສາ.
- ປັບປຸງປະສິດທິພາບຂອງການຈັດສັນງົບປະມານພາຍໃນ ຂະແໜງການສຶກສາ ແລະ ກິລາ, ໂດຍມີການພັດທະນາຂອບການຈັດສັນງົບປະມານເພື່ອນຳໃຊ້ໃນໄລຍະການສ້າງ ແລະ ປັບປຸງງົບປະມານຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ: ຖ້າມີງົບປະມານເພີ່ມເຕີມ ຄວນຈັດສັນໃສ່ບ່ອນໃດເພື່ອປັບປຸງຄຸນນະພາບການສຶກສາໃຫ້ໄດ້ຫຼາຍ (ຂອບບູລິມະສິດ); ເຮັດແນວໃດເພື່ອຮັບປະກັນການແບ່ງປັນຊັບພະຍາກອນໃຫ້ມີຄວາມເທົ່າທຽມກັນໃນແຕ່ລະແຂວງ ແລະ ເມືອງ ເພື່ອຫຼຸດຜ່ອນຄວາມແຕກໂຕນກັນ.

ການສົນທະນາ ແລະ ການຄົ້ນຄວ້າຢ່າງເປັນລະບົບ ແມ່ນມີຄວາມຈຳເປັນເພື່ອກຳນົດທາງເລືອກ ທີ່ເກີດຂຶ້ນຈາກຄຳຖາມເຫຼົ່ານີ້ ແລະ ຜູ້ບໍລິຫານການສຶກສາ ຮຽກຮ້ອງໃຫ້ມີກົນໄກຕ່າງໆ ເພື່ອໃຫ້ພວກເຂົາສາມາດນຳເອົາຜົນການຄົ້ນພົບເຫຼົ່ານີ້ເຂົ້າໃນນະໂຍບາຍດ້ານງົບປະມານ. ເພື່ອໃຫ້ເກີດຜົນດັ່ງກ່າວ, ກະຊວງສຶກສາທິການ ແລະ ກິລາ ໄດ້ສ້າງຕັ້ງຄະນະກຳມະການແຜນການ ແລະ ການເງິນ ຢ່າງເປັນທາງການໃນເດືອນເມສາ ປີ 2017, ເຊິ່ງເປັນສ່ວນໜຶ່ງຂອງການສ້າງໂຄງປະກອບຂອງກະຊວງສຶກສາທິການ ແລະ ກິລາ. ກະຊວງສຶກສາທິການ ແລະ ກິລາ ມີຈຸດປະສົງໃນການສົ່ງເສີມໃຫ້ຄະນະກຳມະການແຜນການ ແລະ ການເງິນ ໃຫ້ມີການເຄື່ອນໄຫວຢ່າງເຕັມສ່ວນ ແລະ ຮັບຜິດຊອບໃນການຮັບປະກັນການວາງແຜນ ແລະ ງົບປະມານດ້ານຍຸດທະສາດ ແລະ ມີປະສິດທິພາບ, ສະໜັບສະໜູນໂດຍການນຳໃຊ້ລະບົບຂໍ້ມູນຂ່າວສານການວາງແຜນ ແລະ ການຄຸ້ມຄອງງົບປະມານ (PBMIS) ໃນລະດັບສູນກາງ, ແຂວງ ແລະ ເມືອງ. PBMIS ຈະເປັນເຄື່ອງມືທີ່ກວມເອົາທັງໂມດູນການສ້າງແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ (ACSEP) ທີ່ຊ່ວຍໃຫ້ການຄາດຄະເນການເຂົ້າຮຽນ ແລະ ຄາດຄະເນຄ່າໃຊ້ຈ່າຍຂອງນະໂຍບາຍ ແລະ ໂຄງການໃຊ້ຈ່າຍທີ່ກ່ຽວຂ້ອງ.

#### 7.2.1. ຮັບປະກັນໃຫ້ສ່ວນແບ່ງງົບປະມານຂອງສຶກສາມີຄວາມເໝາະສົມ ເພື່ອຄວາມຍືນຍົງໃນການປັບປຸງລະບົບການສຶກສາ

ການຮັບປະກັນການແບ່ງປັນງົບປະມານແຫ່ງລັດຢ່າງເໝາະສົມ ຕິດພັນກັບຂະບວນການຈັດສັນຊັບພະຍາກອນແຫ່ງຊາດໃຫ້ແກ່ຂະແໜງການຕ່າງໆ. ຂະບວນການດັ່ງກ່າວ ໄດ້ອີງໃສ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ເຊິ່ງໄດ້ກຳນົດບູລິມະສິດຂອງປະເທດໃນໄລຍະເວລາ 5 ປີ. ເຖິງຢ່າງໃດກໍ່ຕາມ, ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ບໍ່ໄດ້ຊີ້ບອກຢ່າງຊັດເຈນກ່ຽວກັບບູລິມະສິດໃນການຈັດສັນຕົວເລກງົບປະມານ. ດັ່ງນັ້ນ, ກະຊວງການເງິນ (ຜູ້ທີ່ຮັບຜິດຊອບງົບປະມານບໍລິຫານ) ແລະ ກະຊວງແຜນການ ແລະ ການລົງທຶນ (ຜູ້ຮັບຜິດຊອບງົບປະມານການລົງທຶນ), ເຊິ່ງຮັບຜິດຊອບໃນການຈັດສັນຊັບພະຍາກອນໃຫ້ແຕ່ລະຂະແໜງການ, ແມ່ນມີຄວາມທ້າທາຍໃນການຈັດສັນງົບປະມານດັ່ງກ່າວ ພາຍໃຕ້ຂໍ້ຈຳກັດດ້ານງົບປະມານທີ່ມີຢູ່. ໝາຍຄວາມວ່າ ໃນສະພາບທີ່ງົບປະມານຈຳກັດ, ຖ້າມີການເພີ່ມງົບປະມານບໍລິຫານຂຶ້ນ, ແນ່ນອນ ງົບປະມານລົງທຶນຕ້ອງຫຼຸດລົງ. ສຳລັບຂະແໜງການສຶກສາ ແລະ ກິລາ, ມາດຕາທີ 57 ຂອງກົດໝາຍວ່າດ້ວຍການສຶກສາ ໄດ້ລະບຸວ່າ ລັດຖະບານຕ້ອງພິຈາລະນາຂະແໜງການສຶກສາ ແລະ ກິລາ "ເປັນບູລິມະສິດອັນດັບໜຶ່ງ" ແລະ ເພີ່ມສ່ວນແບ່ງຂອງງົບປະມານແຫ່ງລັດໃຫ້ເປັນ "18 ສ່ວນຮ້ອຍຂຶ້ນໄປ". ດັ່ງທີ່ສະແດງໃຫ້ເຫັນຂ້າງເທິງ, ຄາດໝາຍດັ່ງກ່າວບໍ່ສາມາດບັນລຸໄດ້ ແລະ ງົບປະມານຂອງຂະແໜງສຶກສາ ແລະ ກິລາ ໄດ້ຂາດດຸນເປັນເວລາຫຼາຍປີ ຊຶ່ງຢູ່ລະຫວ່າງ 13%-14% ທຽບໃສ່ລາຍຈ່າຍຂອງລັດ.

ປັດຈຸບັນ ກະຊວງການເງິນກຳລັງພັດທະນາຂອບງົບປະມານໄລຍະກາງ ໂດຍມີການກຳນົດເພດານງົບປະມານສຳລັບຂະແໜງການສຳລັບປີຕໍ່ໄປ ແລະ ກະຊວງສຶກສາທິການ ແລະ ກິລາ ກໍຈະໄດ້ເຂົ້າຮ່ວມໃນການລິເລີ່ມນີ້ໃນຖານະເປັນກະຊວງທົດລອງ. ການກຳນົດເພດານງົບປະມານໃຫ້ຂະແໜງການ ແລະ ການປັບປຸງຮູບແບບການສ້າງແຜນເພື່ອສະເໜີຂໍງົບປະມານ ເປັນໂອກາດໃນການກວດກາຄືນການຈັດສັນງົບປະມານ ໃຫ້ແກ່ຂະແໜງການຕ່າງໆໃນປັດຈຸບັນ, ລວມທັງຂະແໜງການສຶກສາ ແລະ ກິລາ ລວມທັງຄວາມເໝາະສົມໃນການຈັດສັນງົບປະມານ. ດັ່ງທີ່ເຫັນໄດ້ໃນຕາຕະລາງຂ້າງລຸ່ມນີ້ ຂະແໜງການສຶກສາ ແລະ ກິລາ ໄດ້ຮັບສ່ວນແບ່ງງົບປະມານບໍລິຫານ 14,6% ທຽບໃສ່ງົບປະມານບໍລິຫານປົກກະຕິທັງໝົດຂອງລັດຖະບານ ແລະ ພຽງແຕ່ 5,1% ຂອງງົບປະມານການລົງທຶນ (ລວມທັງ ODA). ເຖິງຢ່າງໃດກໍ່ຕາມ, ມັນມີຄວາມແຕກຕ່າງກັນລະຫວ່າງພາກລາຍຈ່າຍຕ່າງໆພາຍໃນງົບປະມານບໍລິຫານ. ຍົກຕົວຢ່າງ, ຂະແໜງການສຶກສາ ແລະ ກິລາ ໄດ້ຮັບສ່ວນແບ່ງ 22,9% ຂອງລາຍຈ່າຍພາກເງິນເດືອນ (ພາກ 60) ຂອງງົບປະມານປີ 2020, ຍ້ອນວ່າຂະແໜງການສຶກສາ ແລະ ກິລາ ແມ່ນຂະແໜງການທີ່ໃຫຍ່ ແລະ ມີບຸກຄະລາກອນຫຼາຍທີ່ສຸດ, ແຕ່ງົບປະມານພາກ 63 (ກິດຈະກຳທາງວິຊາການ) ກວມພຽງແຕ່ປະມານ 7,3% ຂອງລາຍຈ່າຍພາກດຽວກັນຂອງລັດຖະບານ, ເຊິ່ງເປັນພາກທີ່ມີຄວາມຕ້ອງການຫຼາຍທີ່ສຸດເພື່ອປັບປຸງຄຸນນະພາບຂອງການສຶກສາ ເພາະມັນປະກອບມີການສະໜອງປຶ້ມແບບຮຽນ, ການຝຶກອົບຮົມຄູປະຈຳການ ແລະ ການສະໜັບສະໜູນຄູອາຈານ ແລະ ອື່ນໆ.

**ຕາຕະລາງ 3: ສ່ວນແບ່ງງົບປະມານຂອງຂະແໜງການສຶກສາ ແລະ ກິລາ ຂອງແຕ່ລະພາກງົບປະມານ**

| | 2016 (ຕົວຈິງ) | 2017 (ຕົວຈິງ) | 2018 (ງົບປະມານ) | 2019 (ງົບປະມານ) | 2020 (ງົບປະມານ) |
|---|---|---|---|---|---|
| ສ່ວນແບງງົບປະມານຂອງສຶກສາ (ລາຍຈ່າຍຂັ້ນຕົ້ນ) | 13,3% | 13,3% | 14,2% | 13,7% | 13,1% |
| ສ່ວນແບງງົບປະມານບໍລິຫານຂອງສຶກສາ | 14,2% | 17,4% | 16,8% | 15,7% | 14,6% |
| ສ່ວນແບງງົບປະມານບໍລິຫານທີ່ເປັນເງິນເດືອນຂອງສຶກສາ (ພາກ 60 ແລະ 61) | 24,3% | 23,3% | 22,8% | 22,3% | 21,9% |
| ສ່ວນແບງງົບປະມານເງິນເດືອນຂອງສຶກສາ (ພາກ 60) | 25,4% | 24,1% | 24,0% | 23,2% | 22,9% |
| ສ່ວນແບງງົບປະມານເງິນອຸດໜູນຂອງສຶກສາ (ພາກ 61) | 17,2% | 17,6% | 16,3% | 17,0% | 16,9% |

| | | | | | |
|---|---|---|---|---|---|
| ສ່ວນແບ່ງງົບປະມານບໍລິຫານຂອງສຶກສາປົກກະຕິ (ພາກ 62) | 12,6% | 12,5% | 11,8% | 12,0% | 11,5% |
| ສ່ວນແບ່ງງົບປະມານເງິນດັດສົມ-ສົ່ງເສີມຂອງສຶກສາ (ພາກ 63) | 9,8% | 11,7% | 139% | 8,1% | 7,3% |
| ສ່ວນແບ່ງງົບປະມານເງິນຊື້ໃໝ່ຂອງສຶກສາ (ພາກ 66) | 5,1% | 22% | 0,0% | 13,9% | 12,9% |
| ສ່ວນແບ່ງງົບປະມານລົງທຶນຂອງສຶກສາ (ພາກ 67) | 9,1% | 5,5% | 6,3% | 5,2% | 5,1% |
| ສ່ວນແບ່ງງົບປະມານລົງທຶນຂອງຕ່າງປະເທດ | 9,4% | 5,7% | 6,4% | 6,7% | 6,7% |
| ສ່ວນແບ່ງງົບປະມານລົງທຶນພາຍໃນ | 8,4% | 5,1% | 6,1% | 3,1% | 2,4% |

ດັ່ງນັ້ນ, ງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ແລະ ເງິນລົງທຶນ ທີ່ຂະແໜງການສຶກສາ ແລະ ກິລາໄດ້ຮັບແມ່ນໜ້ອຍທີ່ສຸດ ໂດຍສະເພາະແມ່ນ ຖ້າທຽບໃສ່ຂອບເຂດການບໍລິການ ແລະ ການດຳເນີນງານ (ແມ່ນຂະແໜງການບໍລິການສາທາລະນະທີ່ໃຫຍ່ທີ່ສຸດ ແລະ ມີຢູ່ທົ່ວປະເທດ) ແລະ ຈຳນວນຊັບພະຍາກອນພື້ນຖານໂຄງລ່າງຕ່າງໆ (ມີຈຳນວນອາຄານບໍລິຫານ ແລະ ໂຮງຮຽນຫຼາຍພັນຫຼັງທີ່ຕ້ອງໄດ້ບໍລຸງຮັກສາ ແລະ ສ້ອມແປງ). ການແກ້ໄຂບັນຫາຊ່ອງຫວ່າງທີ່ສຳຄັນເຫຼົ່ານີ້ ຈະໄດ້ຮັບການປຶກສາຫາລືກັບກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ ໃນເວລາຄົ້ນຄວ້າເພດານງົບປະມານໃຫ້ຂະແໜງການ ແລະ ການປຶກສາຫາລືກ່ຽວກັບການຈັດສັນງົບປະມານປະຈຳປີ ເພື່ອຮັບປະກັນໃຫ້ ສປປ ລາວ ບັນລຸ SDG-4 ການເຂົ້າເຖິງການສຶກສາທີ່ມີຄຸນນະພາບ. ມັນເປັນສິ່ງຈຳເປັນທີ່ຂະແໜງການສຶກສາ ແລະ ກິລາ ຕ້ອງໄດ້ຮັບເງິນບໍລິຫານທີ່ບໍ່ແມ່ນເງິນເດືອນ ແລະ ງົບປະມານການລົງທຶນເພີ່ມຂຶ້ນເພື່ອໃຊ້ຈ່າຍເຂົ້າໃນແຜນງານທີ່ຈຳເປັນເພື່ອບັນລຸເປົ້າໝາຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແລະເປົ້າໝາຍການພັດທະນາແບບຍືນຍົງທີ 4 (SDG4).

ສຸດທ້າຍ, ມັນບໍ່ສາມາດປະຕິເສດໄດ້ວ່າ ຂະແໜງການສຶກສາ ແລະ ກິລາ ໄດ້ມີຄວາມພະຍາຍາມຢ່າງຫຼວງຫຼາຍ ແຕ່ປີ 2016-2020 ເພື່ອຮັບມືກັບການຂະຫຍາຍຕົວຂອງການບໍລິການຂອງຕົນຢ່າງຕໍ່ເນື່ອງ, ໂດຍສະເພາະໃນການສຶກສາກ່ອນໄວຮຽນ ແລະ ຊັ້ນມັດທະຍົມສຶກສາ, ໃນຂະນະທີ່ເຫັນວ່າງົບປະມານຫຼຸດລົງ. ເນື່ອງຈາກວ່າລັດຖະບານໄດ້ກຳນົດໃຫ້ ການສຶກສາຊັ້ນມັດທະຍົມຕອນຕົ້ນເປັນການສຶກສາພາກບັງຄັບ, ແນ່ນອນ ຈຳນວນນັກຮຽນຄາດວ່າຈະເພີ່ມຂຶ້ນຕື່ມ. ດັ່ງນັ້ນ, ຈຳນວນຄູສອນຈຳເປັນຕ້ອງມີຈຳນວນເພີ່ມເຕີມ. ເຖິງຢ່າງໃດກໍ່ຕາມ, ຍ້ອນມີການ ຈຳກັດຈຳນວນລັດຖະກອນຂອງລັດຖະບານ, ດັ່ງນັ້ນ ຄວນເລັ່ງໃສ່ປັບປຸງປະສິດທິພາບຂອງການນຳໃຊ້ຄູທີ່ມີຢູ່. ດັ່ງທີ່ສາມາດເຫັນໄດ້ໃນພາກຕໍ່ໄປນີ້, ຈະຮຽກຮ້ອງໃຫ້ມີການເງິນເພີ່ມຂຶ້ນເລື້ອຍໆໃນພາກ 63, ເພື່ອຍົກລະດັບຄວາມສາມາດ.

### 7.2.2. ການປັບປຸງປະສິດທິພາບໃນການຈັດສັນງົບປະມານ

ມັນເປັນສິ່ງສຳຄັນທີ່ຈະຕ້ອງພິຈາລະນາເຖິງຈຸດປະສົງດັ່ງກ່າວນີ້ ໃນສະພາບທີ່ມີການປະຕິຮູບການຄຸ້ມຄອງການເງິນພາກລັດ, ໂດຍສະເພາະໃນໄລຍະທີ່ມີການກະກຽມ ແລະ ເຈລະຈາງົບປະມານປະຈຳປີກັບກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ. ສົມມຸດວ່າ ງົບປະມານຂອງ ຂະແໜງການສຶກສາ ແລະ ກິລາ ຈະເພີ່ມຂຶ້ນ ໂດຍສະເພາະງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ, ຄຳຖາມທີ່ສຳຄັນກໍຄື: ງົບປະມານທີ່ໄດ້ຮັບເພີ່ມເຕີມນີ້ຈະໄປຈັດສັນໃສ່ຫຍັງ ເພື່ອໃຫ້ບັນລຸໄດ້ການປັບປຸງຄຸນນະພາບການສຶກສາໃຫ້ໄດ້ຫຼາຍທີ່ສຸດ? ຄຳຖາມສຳຄັນອີກອັນໜຶ່ງຄື: ເຮັດແນວໃດເພື່ອຮັບປະກັນການແບ່ງປັນຊັບພະຍາກອນໃຫ້ມີຄວາມຍຸດຕິທຳ/ເທົ່າທຽມກັນ ໃນທົ່ວແຂວງ ແລະ ເມືອງ ເພື່ອຫຼຸດຜ່ອນຄວາມແຕກໂຕນກັນ?

ງົບປະມານເພີ່ມເຕີມທີ່ມີ ຈະຕ້ອງຈັດສັນໃຫ້ໃສ່ບູລິມະສິດສຳລັບກິດຈະກຳທີ່ມີປະສິດທິຜົນສູງ ທີ່ມີຜົນກະທົບຕໍ່ຜົນການຮຽນຮູ້ ແລະ ການຫຼຸດຜ່ອນຄວາມແຕກໂຕນກັນ, ອີງຕາມບູລິມະສິດທີ່ລະບຸໄວ້ໃນຂໍ້ 3.3.

ການກຳນົດ ແລະ ຈັດລຳດັບຄວາມສຳຄັນຂອງແຜນງານທີ່ມີປະສິດທິຜົນດ້ານຄ່າໃຊ້ຈ່າຍ ທີ່ມີຜົນກະທົບສູງຕໍ່ຜົນການຮຽນຂອງນັກຮຽນ ແລະ ຫຼຸດຜ່ອນຄວາມໂຕນກັນ ຈະຕ້ອງໄດ້ກຳນົດຕັ້ງແຕ່ຂັ້ນຕອນການວາງແຜນ (ແຜນ 5 ປີ ແລະ ແຜນປະຈຳປີ), ໂດຍອີງໃສ່ເປົ້າໝາຍນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແລະ ມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ ທີ່ໃຊ້ເປັນຕົວກຳນົດການວາງແຜນ. ຈາກນັ້ນ ຈະຕ້ອງບັນຈຸເຂົ້າໃນແຜນງົບປະມານປະຈຳປີ, ໂດຍຂຶ້ນກັບຄວາມສາມາດທາງດ້ານການເງິນ.

ໃນຕາຕະລາງຕໍ່ໄປນີ້, ແຜນງານການໃຊ້ຈ່າຍບູລິມະສິດຖືກຈັດອັນດັບຕາມບູລິມະສິດ, ໂດຍອີງໃສ່ສາມມາດຖານທີ່ສຳຄັນ:

- ເງື່ອນໄຂທີ 1: ປັບປຸງປະສິດທິພາບ ຫຼື ປະສິດທິຜົນຂອງການນຳໃຊ້ຊັບພະຍາກອນທີ່ມີຢູ່ (ຕົວຢ່າງ ປັບປຸງຄຸນນະພາບຂອງຄູສຶກສານິເທດ ແລະ ການຄຸ້ມຄອງພະນັກງານທີ່ມີ) ດັ່ງທີ່ສະແດງໃຫ້ເຫັນ ໃນຜົນການສຶກສາ ປະສິດທິຜົນດ້ານຄ່າໃຊ້ຈ່າຍ.
- ເງື່ອນໄຂທີ 2: ຂະແໜງການຍ່ອຍບູລິມະສິດ: ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ໄດ້ກຳນົດໃຫ້ບູລິມະສິດໃນການຍົກສູງຄຸນນະພາບການສຶກສາຊັ້ນປະຖົມ
- ເງື່ອນໄຂທີ 3: ຫຼຸດຜ່ອນຄວາມແຕກໂຕນກັນ (ສຸມໃສ່ກຸ່ມຄົນທີ່ດ້ອຍໂອກາດ)

ງົບປະມານເພີ່ມເຕີມທີ່ມີ ຄວນຈັດສັນໃສ່ບັນດາແຜນງານທີ່ເປັນບູລິມະສິດດັ່ງນີ້:

**ຕາຕະລາງ 4: ບັນດາແຜນງານບູລິມະສິດ**

| ແຜນງານການໃຊ້ຈ່າຍ | ປັບປຸງ ປະສິດທິພາບ/ ປະສິດທິຜົນ ການນຳໃຊ້ ງົບປະມານທີ່ມີ | ຂະແໜງ ການຍ່ອຍ ທີ່ເປັນບູ ລິມະສິດ | ຫຼຸດຜ່ອນ ຄວາມແຕກ ໂຕນ/ເນັ້ນໃສ່ ກຸ່ມຄົນທີ່ດ້ອຍ ໂອກາດ | ບູລິມະສິດ (1 ເຖິງ 4) | ມູນຄ່າ (ປະຈຳປີ: ລ້ານ ກີບ) |
|---|---|---|---|---|---|
| ຮັບປະກັນໃຫ້ຜູ້ອຳນວຍການໂຮງຮຽນປະຖົມສຶກສາ ແລະ ຄູສອນ ໄດ້ຮັບການຝຶກອົບຮົມຢ່າງໜ້ອຍສຸດ (20%, ການຝຶກອົບຮົມໄລຍະ 5 ວັນ). ການຝຶກອົບຮົມການນຳໃຊ້ຫຼັກສູດໃໝ່ ອາດຫຼາຍກວ່າ 3 ວັນ | ສູງຫຼາຍ | ແມ່ນ | ສູງ | 1 | 7.581 (ພາກ 63) |
| ຮັບປະກັນໃຫ້ຄູທຸກຄົນ ໄດ້ຮັບການຝຶກອົບຮົມການນຳໃຊ້ຫຼັກສູດໃໝ່ (ປ.3 ໃນປີ 2021, ປ.4 ໃນປີ 2022 ແລະ ປ.5 ໃນປີ 2023) | ສູງຫຼາຍ | ແມ່ນ | ສູງ | 1 | 47.551 (ພາກ 67, ເລີ່ມແຕ່ປີ 2021-2023) |
| ຮັບປະກັນການລົງຕິດຕາມ ຊຸກຍູ້ຂອງຄູສຶກສານິເທດຊັ້ນປະຖົມສຶກສາ ໃຫ້ກວມຢ່າງໜ້ອຍ (ສະເລ່ຍ 4 ວັນຕໍ່ໂຮງຮຽນໃນແຕ່ລະປີ: ອາດໃຊ້ໜ້ອຍວັນສຳລັບໂຮງຮຽນທີ່ປະຕິບັດໄດ້ດີ ແລະ ຫຼາຍວັນຕື່ມ ສຳລັບໂຮງຮຽນທີ່ດ້ອຍໂອກາດ) | ສູງຫຼາຍ | ແມ່ນ | ສູງ | 1 | 8.518 (ພາກ 63) |

| | | | | | |
|---|---|---|---|---|---|
| ເພີ່ມຈຳນວນຜູ້ທີ່ໄດ້ຮັບຜົນປະໂຫຍດ ຈາກທຶນການສຶກສາຂັ້ນປະຖົມ ສຳລັບນັກຮຽນທີ່ດ້ອຍໂອກາດ (ຈາກປະຈຸບັນ 1.000 ຄົນ ເປັນ 5.000 ຄົນໃນປີ 2025) | ສູງ | ແມ່ນ | ສູງຫຼາຍ | 1 | 4.050 (ພາກ 61) |
| ເພີ່ມຈຳນວນຜູ້ທີ່ໄດ້ຮັບຜົນປະໂຫຍດ ຈາກທຶນການສຶກສາໃນຊັ້ນມັດທະຍົມຕອນຕົ້ນ ສຳລັບນັກຮຽນທີ່ດ້ອຍໂອກາດ | ສູງ | ບໍ່ແມ່ນ | ສູງຫຼາຍ | 2 | 5.130 (ພາກ 61) |
| ສະໜອງປຶ້ມຕຳລາຮຽນຊັ້ນປະຖົມ ສຳລັບນັກຮຽນທຸກຄົນ (ທົດແທນເພື່ອຮັບປະກັນອັດຕາສ່ວນ 1: 1) | ສູງ | ແມ່ນ | ສູງ | 2 | 18.796 (ພາກ 63) |
| ສະໜອງອາຫານໃຫ້ນັກຮຽນ (ຊັ້ນການສຶກສາກ່ອນໄວຮຽນ ແລະ ຊັ້ນປະຖົມ, ໂດຍສະເລ່ຍຂອງຜູ້ໄດ້ຮັບຜົນປະໂຫຍດ 76.000 ຄົນຕໍ່ປີ) ທີ່ຈະສະໜັບສະໜູນໂດຍງົບປະມານລັດຖະບານ | ປານກາງ | ແມ່ນ | ສູງ | 3 | 10.625 (ພາກ 61) |
| ເພີ່ມມູນຄ່າຫົວໜ່ວຍເງິນບໍລິຫານໂຮງຮຽນຊັ້ນປະຖົມ (ຈາກປັດຈຸບັນ 70.000 ກີບ ຂຶ້ນເປັນ 100.000 ກີບຕໍ່ຄົນໃນປີ 2023) | ສູງ | ແມ່ນ | ປານກາງ | 3 | 17.310 (ພາກ 62) |
| ສະໜອງປຶ້ມຕຳລາຮຽນມັດທະຍົມ ສຳລັບນັກຮຽນທຸກຄົນ (ທົດແທນເພື່ອຮັບປະກັນອັດຕາສ່ວນ 1:1) | ສູງ | ບໍ່ແມ່ນ | ສູງ | 3 | 8.437 (ພາກ 63) |
| ຍົກລະດັບມາດຕະຖານ ສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ WASH standard 1) ຢູ່ໂຮງຮຽນອະນຸບານ ແລະ ປະຖົມສຶກສາ | ປານກາງ | ແມ່ນ | ປານກາງ | 3 | 18.552 (ພາກ 67) |
| ຍົກລະດັບມາດຕະຖານ ສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ WASH standard 1) ຢູ່ໂຮງຮຽນມັດທະຍົມ | ປານກາງ | ບໍ່ແມ່ນ | ປານກາງ | 4 | 1.528 (ພາກ 67) |
| ລົງທຶນໃສ່ການສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ ໃນໂຮງຮຽນມັດທະຍົມ ແລະ ສະຖາບັນອາຊີວະສຶກສາ | ສູງ | ບໍ່ແມ່ນ | ປານກາງ | 4 | 105.680 (ພາກ 67) |
| ການກໍ່ສ້າງຫ້ອງຮຽນໃໝ່ (ອະນຸບານ, ປະຖົມ, ມັດທະຍົມ ແລະ ອາຊີວະສຶກສາ) | ປານກາງ | ແມ່ນ | ສູງ | 4 | 119.710 (ພາກ 67) |

ໝາຍເຫດ: ບັນດາກິດຈະກໍາ ແລະ ການຈັດລໍາດັບຄວາມສໍາຄັນທີ່ລວມຢູ່ໃນບັນຊີດັ່ງກ່າວນີ້ ອາດຈະຕ້ອງມີການທົບທວນຄືນ, ໂດຍສະເພາະກ່ຽວກັບຜົນຂອງການວິເຄາະປະສິດທິພາບດ້ານຄ່າໃຊ້ຈ່າຍຂອງແຜນງານຕ່າງໆ ທີ່ກະຊວງສຶກສາທິການ ແລະ ກິລາ ຄາດວ່າຈະດໍາເນີນການ ໃນໄລຍະການທົບທວນກາງສະໄໝ.

ຮັບປະກັນການແບ່ງປັນຊັບພະຍາກອນໃຫ້ເທົ່າທຽມກັນໃນແຕ່ລະແຂວງ, ແຕ່ລະເມືອງ ແລະ ໂຮງຮຽນ, ເພື່ອຫຼຸດຜ່ອນຄວາມແຕກໂຕນກັນ

ການຈັດສັນງົບປະມານໃຫ້ແກ່ ຂະແໜງການສຶກສາ ແລະ ກິລາ ຢ່າງເໝາະສົມ ແມ່ນສິ່ງທີ່ຈໍາເປັນ, ໃນຂະນະທີ່ປະສິດທິພາບໃນການຈັດສັນງົບປະມານພາຍໃນຂະແໜງການສຶກສາ ແລະ ກິລາເອງ ກໍມີຄວາມສໍາຄັນເໝືອນກັນ.

### ການຈັດສັນງົບປະມານໃຫ້ແຂວງ

ຜ່ານມາ ການຈັດສັນງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນໃຫ້ແກ່ພະແນກສຶກສາທິການ ແລະ ກິລາ ແຂວງ ສ່ວນໃຫຍ່ແມ່ນຈັດສັນແບບເພີ່ມຂຶ້ນໃນແຕ່ລະປີ, ຊຶ່ງເຮັດໃຫ້ຄວາມແຕກໂຕນຍິ່ງຫ່າງກັນອອກໄປ ຊຶ່ງເຮັດໃຫ້ມີຫຼາຍແຂວງປະສົບບັນຫາການຂາດເຂີນງົບປະມານ. ກະຊວງສຶກສາທິການ ແລະ ກິລາ ຈະສືບຕໍ່ເຮັດວຽກກັບກະຊວງການເງິນ ເພື່ອຮັບປະກັນວ່າ ງົບປະມານທີ່ໄດ້ຈັດສັນໃຫ້ແກ່ສຶກສາແຂວງ ແມ່ນມີຄວາມເທົ່າທຽມ/ຍຸດຕິທໍາຕື່ມ ເພື່ອແນໃສ່ຫຼຸດຜ່ອນຄວາມແຕກຕ່າງລະຫວ່າງບັນດາແຂວງ. ແທ້ຈິງແລ້ວ, ການຈັດສັນງົບປະມານໃຫ້ແຕ່ລະແຂວງ ຕ້ອງອີງໃສ່ຕົວຊີ້ວັດຈຸດປະສົງທີ່ສະທ້ອນໃຫ້ເຫັນເຖິງລະດັບການບໍລິການທີ່ໄດ້ສະໜອງ ແລະ ຄວາມແຕກໂຕນກັນ ເຊັ່ນ (ຄວາມທຸກຍາກ, ຄວາມຫ່າງໄກສອກຫຼີກ, ຈໍານວນໂຮງຮຽນ ແລະ ນັກຮຽນ ແລະ ອື່ນໆ). ມັນຍັງມີຄວາມສໍາຄັນທີ່ຈະສືບຕໍ່ສົ່ງເສີມບົດບາດທາງຍຸດທະສາດຂອງສຶກສາ ຕໍ່ອົງການປົກຄອງຂັ້ນທ້ອງຖິ່ນ, ເຊິ່ງເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດງົບປະມານ.

### ການຈັດສັນງົບປະມານໃຫ້ ຫ້ອງການສຶກສາທິການ ແລະ ກິລາ ເມືອງ

ບົດບາດຂອງ ຫ້ອງການສຶກສາທິການ ແລະ ກິລາ ເມືອງ ແມ່ນຈຸດໃຈກາງຂອງຍຸດທະສາດ ເພື່ອຍົກສູງຄຸນນະພາບຂອງການບໍລິການດ້ານການສຶກສາໃນລະດັບທ້ອງຖິ່ນ, ແຕ່ວ່າ ຫ້ອງການສຶກສາທິການ ແລະ ກິລາ ເມືອງ ແມ່ນໄດ້ຮັບງົບປະມານບໍລິຫານໜ້ອຍທີ່ສຸດ. ໃນປີ 2019 ທັງໝົດ 148 ເມືອງ ໄດ້ຮັບງົບປະມານພາກ 63 ກວມພຽງແຕ່ປະມານ 7% ຂອງງົບປະມານພາກດຽວກັນຂອງ ຂະແໜງການສຶກສາ ແລະ ກິລາ ຫຼື ສະເລ່ຍປະມານ 11 ຕື້ກີບຕໍ່ປີ (ປະມານ 1,2 ລ້ານໂດລາສະຫະລັດ) ຊຶ່ງສະເລ່ຍເມືອງໜຶ່ງໄດ້ຮັບເງິນປະມານ ປະມານ 8.000 ໂດລາສະຫະລັດ. ການໃຊ້ຈ່າຍງົບປະມານພາກ 63 ຢູ່ຂັ້ນເມືອງ ແມ່ນເພື່ອປັບປຸງຄຸນນະພາບການສຶກສາ. ງົບປະມານສ່ວນນີ້ ແມ່ນງົບປະມານທີ່ຫ້ອງການສຶກສາທິການ ແລະ ກິລາ ເມືອງ ນໍາໃຊ້ເຂົ້າໃນບັນດາກິດຈະກໍາເພື່ອໄປສະໜັບສະໜູນໂຮງຮຽນ, ໂດຍສະເພາະການລົງຊ່ວຍເຫຼືອ ແລະ ຕິດຕາມຂອງຄູນິເທດ, ການຈັດຕັ້ງການສອບເສັງຈົບຊັ້ນ ປ.5 ແລະ ຊັ້ນ ມ.4, ຝຶກອົບຮົມຄູປະຈໍາການ ແລະ ອື່ນໆ. ຖ້າຢາກຍົກສູງຄຸນນະພາບການສຶກສາ, ການເພີ່ມການຈັດສັນງົບປະມານດັ່ງກ່າວໃຫ້ແກ່ເມືອງ ແມ່ນເປັນບູລິມະສິດ. ນີ້ອາດຈະຮຽກຮ້ອງໃຫ້ມີການເພີ່ມງົບປະມານພາກດັ່ງກ່າວຂຶ້ນໃນຂະແໜງການສຶກສາ ແລະ ກິລາ ໃຫ້ໄດ້ຈໍານວນ ປະມານ 20 ຕື້ ກີບ (ປະມານ 2,2 ລ້ານ ໂດລາ), ຍ້ອນວ່າງົບປະມານທີ່ໄດ້ຮັບຈາກສູນກາງ ແລະ ແຂວງໃນປັດຈຸບັນ ແມ່ນມີໜ້ອຍຫຼາຍ.

ຍິ່ງໄປກວ່ານັ້ນ, ການຈັດສັນງົບປະມານໃຫ້ບັນດາເມືອງ ສະແດງໃຫ້ເຫັນຄວາມແຕກຕ່າງກັນຫຼາຍ ໃນແຕ່ລະແຂວງ, ລວມທັງພາຍໃນແຂວງດຽວກັນ. ກະຊວງສຶກສາທິການ ແລະ ກິລາ ໄດ້ເລີ່ມຕົ້ນແກ້ໄຂບັນຫານີ້ ໃນປີ 2018 ໂດຍການພັດທະນາ ແລະ ເຜີຍແຜ່ຄູ່ມືແນະນໍາໃນການຈັດສັນງົບປະມານລິຫານໃຫ້ແກ່ເມືອງ ເພື່ອຊ່ວຍໃຫ້ສຶກສາແຂວງ ຈັດສັນງົບປະມານບໍລິຫານໃຫ້ເມືອງໃຫ້ມີຄວາມເທົ່າທຽມ ໂດຍອີງຕາມສູດຄິດໄລ່ທີ່ມີຈຸດປະສົງເພື່ອຫຼຸດຜ່ອນຄວາມແຕກໂຕນກັນ. ຕົວຊີ້ບອກສູດຄິດໄລ່ ໄດ້ຖືກທົບທວນ ແລະ ປັບປຸງໃໝ່ໃນເດືອນພະຈິກ 2019 ແລະ ມີຄວາມຍືດຍຸ່ນຫຼາຍຂຶ້ນ ເພື່ອຮັບປະກັນໃຫ້ແຂວງ ຈັດສັນງົບປະມານໃຫ້ເມືອງທີ່ດ້ອຍໂອກາດຫຼາຍຂຶ້ນ.

**ການຈັດສັນງົບປະມານໃຫ້ໂຮງຮຽນ**

ເງິນບໍລິຫານໂຮງຮຽນ (ສູດຄິດໄລ່ ແລະ ການໃຊ້ຈ່າຍທີ່ເໝາະສົມ) ຄວນຕອບສະໜອງຕໍ່ຄວາມຕ້ອງການໃນລະດັບໂຮງຮຽນເພື່ອຫຼຸດຜ່ອນຄວາມແຕກໂຕນກັນ ແລະ ເຊື່ອມໂຍງກັບມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ ຂອງການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ. ກະຊວງສຶກສາທິການ ແລະ ກິລາ ມີຈຸດປະສົງຈະປັບປຸງສູດການຄິດໄລ່ເງິນບໍລິຫານໂຮງຮຽນຄືນໃໝ່ ແລະ ປັບປຸງຂໍ້ແນະນຳທີ່ກ່ຽວຂ້ອງ.

## 7.3. ແຜນຄວາມຕ້ອງການດ້ານການເງິນສຳລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025

ການຄາດຄະເນງົບປະມານສຳລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໄດ້ຄິດໄລ່ພາຍໃຕ້ສອງສົມມຸດຖານຄື: ສົມມຸດຖານ “ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ” ແລະ ສົມມຸດຖານ “ຍົກສູງຄຸນນະພາບການສຶກສາ”. ການຄາດຄະເນການເຂົ້າຮຽນ ແລະ ຄາດຄະເນດ້ານງົບປະມານສຳລັບແຕ່ລະຂະແໜງການຍ່ອຍ ໄດ້ສະແດງໃຫ້ເຫັນໃນເອກະສານຄັດຕິດທີ 6.

ສົມມຸດຖານ “ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ” ແມ່ນຮູບແບບການກຳນົດງົບປະມານລວມໃນໄລຍະກາງທີ່ຈຳເປັນ ເພື່ອໃຫ້ ຂະແໜງການສຶກສາ ແລະ ກິລາ ໄດ້ສືບຕໍ່ຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ກິດຈະກຳຕ່າງໆ ທີ່ມີໃນປັດຈຸບັນ **ໂດຍບໍ່ໄດ້ເນັ້ນໃສ່ການປັບປຸງຄຸນນະພາບ ແລະ ການເຂົ້າເຖິງການສຶກສາ ແລະ ໃນຂະນະດຽວກັນກໍຮັກສາໄວ້ບໍ່ໃຫ້ການສຶກສາເສື່ອມໂຊມລົງ.** ການຄາດເນງົບປະມານພາຍໃຕ້ສົມ ມຸດຖານນີ້ ໄດ້ສ້າງຂຶ້ນໂດຍ ນຳໃຊ້ສະພາບການຈັດສັນພະນັກງານລັດຖະກອນທີ່ມີໃນປັດຈຸບັນ ແລະ ຄາດຄະເນການເພີ່ມຂຶ້ນຂອງເງິນເດືອນເລັກນ້ອຍ, ງົບປະມານບໍລິຫານປົກກະຕິຢູ່ໃນລະດັບດຽວກັບໃນປະຈຸບັນ, ນຳໃຊ້ນະ ໂຍບາຍການສະໜອງປຶ້ມຕຳລາຮຽນ ແລະ ອັດຕາການສູນເສຍທີ່ມີໃນປັດຈຸບັນ, ການຝຶກອົບຮົມຄູປະຈຳການແມ່ນໜ້ອຍທີ່ສຸດ (ເພື່ອໃຫ້ເຂົາສາມາດສືບຕໍ່ສອນໄດ້, ແຕ່ບໍ່ໄດ້ເນັ້ນໃສ່ການປັບປຸງທັກສະການສອນ) ແລະ ບໍ່ມີແຜນງານໃໝ່ເພີ່ມເຕີມ. ສິ່ງທ້າທາຍໜຶ່ງທີ່ປະເຊີນໜ້າຢູ່ກໍຄື ມີຕົວຊີ້ບອກບາງຕົວ, ເຊັ່ນ: ການປະລະການຮຽນໃນຊັ້ນມັດ ທະຍົມແມ່ນເພີ່ມຂຶ້ນທຸກປີ. ບາງເທື່ອອາດແມ່ນຍ້ອນບໍ່ສາມາດປະຕິບັດໄດ້ຕາມນະໂຍບາຍທີ່ກຳນົດ ເຊັ່ນ: ການສະໜອງປຶ້ມຕຳ ລາຮຽນ ແລະ ສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ. ເພື່ອແກ້ໄຂບັນຫາດັ່ງກ່າວນີ້, ຢູ່ໃນການຄາດຄະເນງົບປະມານແບບ “ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ” ແມ່ນອີງໃສ່ເພື່ອໃຫ້ບັນລຸໄດ້ນະໂຍບາຍທີ່ມີໃນປະຈຸບັນ.

ສະຫຼຸບລວມແລ້ວ, ໃນແຜນງົບປະມານແບບ “ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ” ແມ່ນມີຈຸດປະສົງເພື່ອສະໜອງຂໍ້ມູນພື້ນຖານໄລຍະກາງ ເພື່ອໃຫ້ສາມດປະເມີນການຈັດຕັ້ງປະຕິບັດວຽກງານການພັດທະນາການສຶກສາໄດ້, ເນື່ອງຈາກວ່າ ຕົວຊີ້ບອກບາງຕົວ ຄາດວ່າຈະບໍ່ປ່ຽນແປງພາຍໃຕ້ການສະໜອງງົບປະມານແບບນີ້.

ສົມມຸດຖານທີສອງ ແມ່ນການຄາດຄະເນງົບປະມານແບບ “ຍົກສູງຄຸນນະພາບການສຶກສາ”. ການຄາດຄະເນແບບນີ້ ແມ່ນອີງໃສ່ການຈັດຕັ້ງປະຕິບັດບັນດາຄາດໝາຍ ແລະ ແຜນງານຕ່າງໆຂອງແຜນພັດທະນາການສຶກສາ ແລະ ກິລາ ຢ່າງເຕັມຮູບບແບບ ເພື່ອແນໃສ່ປັບປຸງຜົນໄດ້ຮັບດ້ານການສຶກສາ ແລະ ຮັບປະກັນການລົງທຶນທີ່ເໝາະສົມໃນອະນາຄົດຂອງປະເທດ ແລະ ໃຫ້ສອດຄ່ອງກັບຄຳໝັ້ນສັນຍາຂອງເປົ້າໝາຍການພັດທະນາແບບຍືນຍົງ SDG-4. ຄາດໝາຍຂອງການຈັດຕັ້ງປະຕິບັດແຜນ 2021-2025 ແມ່ນອີງໃສ່ການຄາດຄະເນງົບປະມານໃນຮູບແບບນີ້.

ການຈັດສັນງົບປະມານໃຫ້ແກ່ ຂະແໜງການສຶກສາ ແລະ ກິລາ ທີ່ຢູ່ເໜືອລະດັບຂອງສົມມຸດຖານ “ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ” ຈະຖືກຈັດສັນໃຫ້ສອດຄ່ອງກັບນະໂຍບາຍການໃຊ້ຈ່າຍຂອງຂະແໜງການ. ຄາດວ່າງົບປະມານທີ່ໄດ້ຮັບເພີ່ມເຕີມນີ້ ຈະຊ່ວຍໃຫ້ການປັບປຸງການບໍລິການດ້ານການສຶກສາ ແລະ ການປັບປຸງຕົວຊີ້ວັດຂອງຂະແໜງການ ໃຫ້ສູງຂຶ້ນຈາກລະດັບປະຈຸບັນ ແລະ ບັນລຸໄດ້ຄາດໝາຍທີ່ກຳນົດໃນສົມມຸດຖານ “ຍົກສູງຄຸນນະພາບການສຶກສາ”. ວິທີການນີ້ ຈະເປັນພື້ນຖານທີ່ເຂັ້ມແຂງ ແລະ ມີຄວາມໝາຍຫຼາຍຂຶ້ນ ສຳລັບການປະເມີນຜົນການປະ ຕິບັດງານຂອງຂະແໜງການທີ່ກ່ຽວຂ້ອງກັບລະດັບຂອງການສະໜອງຊັບພະຍາກອນ.

ແຕ່ຕ້ອງເຂົ້າໃຈວ່າ ວິກິດການຂອງໂລກໃນປະຈຸບັນ ອາດຈະເຮັດໃຫ້ລາຍໄດ້ຂອງລັດຖະບານຫຼຸດລົງ ແລະ ດ້ວຍເຫດນັ້ນ ຈຶ່ງອາດເຮັດໃຫ້ງົບປະມານຂອງ ຂະແໜງການສຶກສາ ແລະ ກິລາ ຫຼຸດລົງ ຊຶ່ງອາດຈະໄດ້ຮັບຕ່ຳກວ່າລະດັບທີ່ໄດ້ຄາດຄະເນໃນຮູບແບບ "ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ". ພາຍໃຕ້ເງື່ອນໄຂດັ່ງກ່າວ, ນະໂຍບາຍການໃຊ້ຈ່າຍຂອງຂະແໜງການ ຈະສະໜອງຂອບໃນການກຳນົດບູລິມະສິດວ່າ ງົບປະມານທີ່ຕັດຮອນລົງນີ້ ຈະໄປຕັດຮອນກິດຈະກຳໃດ. ຜົນກະທົບຕໍ່ການປະຕິບັດວຽກງານຂອງຂະແໜງການ, ໂດຍສະເພາະຕົວຊີ້ບອກທີ່ຄາດວ່າຈະຫຼຸດລົງຈາກລະດັບປັດຈຸບັນ ຈະຕ້ອງມີການປະເມີນລາຍລະອຽດ ໂດຍອີງໃສ່ສະພາບງົບປະມານທັງສອງສົມມຸດຖານນີ້, ຊຶ່ງຢ່າງໜ້ອຍກໍເປັນຈຸດເລີ່ມຕົ້ນສຳລັບການປະເມີນນີ້.

ສົມມຸດຖານ "ໄດ້ຮັບງົບປະມານຢູ່ໃນລະ ດັບເທົ່າເດີມ" ແລະ "ຍົກສູງຄຸນນະພາບການສຶກສາ" ໄດ້ສະແດງໃຫ້ເຫັນສອງຈຸດ ໃນເສັ້ນສະແດງທີ່ເຊື່ອມຕໍ່ລະຫວ່າງລະດັບການປະຕິບັດວຽກງານ ແລະ ລະດັບການສະໜອງງົບປະມານ. ເຫັນໄດ້ຊັດເຈນວ່າ ຄວາມສຳພັນລະຫວ່າງ ລະດັບການສະໜອງງົບປະມານ ແລະ ການປະຕິບັດວຽກງານບໍ່ໄດ້ງ່າຍດາຍ ດັ່ງທີ່ສະແດງຢູ່ໃນເສັ້ນສະແດງນີ້, ແຕ່ວ່າຮູບບພາບນີ້ຢ່າງໜ້ອຍກໍ່ອາດຈະໃຫ້ເຂົ້າໃຈບາງຢ່າງກ່ຽວກັບຄວາມສຳພັນລະຫວ່າງການຈັດສັນງົບປະມານ ແລະ ການປະຕິບັດວຽກງານຂອງຂະແໜງການ.

ແຕ່ວ່າໃນຄວາມເປັນຈິງ ງົບປະມານລວມຂອງຂະແໜງການ ອາດບໍ່ແມ່ນອັນຕັດສິນຊີ້ຂາດວ່າ ການສຶກສາຈະປັບປຸງດີຂຶ້ນ ຫຼື ອ່ອນແອລົງ, ແຕ່ງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ເຊັ່ນ ງົບປະມານພາກ 63 (ສິ່ງເສີມວິຊາການ) ທີ່ເປັນອັນຕັດສິນ. ດັ່ງນັ້ນ, ມັນອາດຈະເປັນປະໂຫຍດຫຼາຍກວ່າ ທີ່ອີງໃສ່ງົບປະມານຮ່ວງນີ້ ເພື່ອປະເມີນເຖິງສາຍກ່ຽວພັນລະຫວ່າງງົບປະມານ ແລະ ການພັດທະນາຂອງຂະແໜງການ.

**ຕາຕະລາງ 5: ຕົວກຳນົດທີ່ສຳຄັນໃນການຄາດຄະເນງົບປະມານ**

| ລາຍການສຳລັບຄ່າໃຊ້ຈ່າຍ | ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ | ປັບປຸງຄຸນນະພາບຂອງການສຶກສາ |
|---|---|---|
| ເງິນບໍລິຫານໂຮງຮຽນ | ບໍ່ເພີ່ມມູນຄ່າຫົວໜ່ວຍເງິນບໍລິຫານໂຮງຮຽນຕໍ່ນັກຮຽນ ທຽບກັບງົບປະມານປີ 2020 | ເພີ່ມຂຶ້ນ 10.000 ກີບຕໍ່ປີ ສຳລັບມູນຄ່າຫົວໜ່ວຍຕໍ່ນັກຮຽນ, ຈົນຮອດ 100.000 ກີບ ໃນທຸກຊັ້ນການສຶກສາ ແຕ່ອະນຸບານຮອດມັດທະຍົມສຶກສາ |
| ປຶ້ມແບບຮຽນ | ອັດຕານັກຮຽນຕໍ່ປຶ້ມຊັ້ນປະຖົມສຶກສາ 1:1 + ການຈັດພິມເພື່ອແຮໄວ້ ໃນປີ 2021 ສຳລັບອັດຕານັກຮຽນຕໍ່ປຶ້ມຂອງຊັ້ນມັດທະຍົມຕອນຕົ້ນ ແມ່ນຮັກສາໄວ້ຄືໃນປີ 2020 | ອັດຕານັກຮຽນຕໍ່ປຶ້ມຊັ້ນປະຖົມສຶກສາ 1:1 + ການຈັດພິມເພື່ອແຮໄວ້ ໃນປີ 2021 ສຳລັບອັດຕານັກຮຽນຕໍ່ປຶ້ມຂອງຊັ້ນມັດທະຍົມຕອນຕົ້ນ ໃຫ້ບັນລຸ 1:1 ໃນປີ 2025 |
| ການຝຶກອົບຮົມຄູປະຈຳການ (ລະບົບປົກກະຕິ) | ຮຽກຮ້ອງ 20% ຂອງຄູສອນໃນທຸກຊັ້ນຮຽນຕ້ອງໄດ້ຮັບການຝຶກອົບຮົມເປັນເວລາ 5 ວັນໃນທຸກໆປີ ໂດຍຕອບສະໜອງກັບການປະເມີນຜົນການສອນຂອງຄູ (ງົບປະມານຢູ່ພາຍໃຕ້ຄວາມຮັບຜິດຊອບຂອງ ກົມສ້າງຄູ) | ຮຽກຮ້ອງ 20% ຂອງຄູສອນໃນທຸກຊັ້ນຮຽນ ໄດ້ຝຶກອົບຮົມ 10 ວັນ. |
| ການຝຶກອົບຮົມຄູ ໃນການນຳໃຊ້ຫຼັກສູດໃໝ່ ແຕ່ປີ 2021-2023 | ຄູສອນ ປ.3 - ປ.5 ທັງໝົດ ຕ້ອງໄດ້ຮັບການຝຶກອົບຮົມ 7 ວັນ ແຕ່ປີ 2021-2023. | ຄືກັນ |
| ອັດຕາສ່ວນນັກຮຽນຕໍ່ຄູ | ຮັກສາຈຳນວນຄູໄວ້ເທົ່າເດີມ: ອະນຸບານ = 23.3; ຊັ້ນປະຖົມສຶກສາ = 23.6; | ຄືກັນ |

| | | |
|---|---|---|
| | ມັດທະຍົມສຶກສາຕອນຕົ້ນ = 19.5; ມັດທະຍົມສຶກສາຕອນປາຍ = 20.5) | |
| ການໃຫ້ບໍລິການຂອງຄູສຶກສານິເທດ | ການໄປຕິດຕາມຊຸກຍູ້ຂອງຄູສຶກສານິເທດ ສະເລ່ຍ 4 ວັນຕໍ່ໂຮງຮຽນ ໃນແຕ່ລະປີ (ໃນທຸກຊັ້ນຮຽນແຕ່ອະນຸບານຮອດມັດທະຍົມ) | ການໄປຕິດຕາມຊຸກຍູ້ຂອງຄູສຶກສານິເທດ ສະເລ່ຍ 6 ວັນຕໍ່ໂຮງຮຽນ ໃນແຕ່ລະປີ (ໃນທຸກຊັ້ນຮຽນແຕ່ອະນຸບານຮອດມັດທະຍົມ) |
| ອັດຕາສ່ວນນັກຮຽນຕໍ່ຫ້ອງ | ຮັກສາໄວ້ເທົ່າເດີມກັບຂໍ້ມູນປີຖານ (ອະນຸບານ= 22; ປະຖົມ = 20; ມັດທະຍົມຕົ້ນ = 23; ມັດທະຍົມຕອນປາຍ = 20) | ຄືກັນ |
| ທຶນການສຶກສາສໍາລັບນັກຮຽນທຸກຍາກໃນຊັ້ນປະຖົມ ແລະ ມັດທະຍົມ | ເພີ່ມຈໍານວນນັກຮຽນທີ່ໄດ້ຮັບທຶນການສຶກສາ: ນັກຮຽນປະຖົມ 1.000 ຄົນໃນປີ 2021, ນັກສຶກສາຊັ້ນມັດທະຍົມ 2.000 ຄົນໃນປີ 2021 ເພີ່ມເປັນ 5.000 ຄົນສໍາລັບຊັ້ນປະຖົມ ແລະ 4.000 ຄົນ ສໍາລັບຊັ້ນມັດທະຍົມຕົ້ນ ໃນປີ 2025 | ຄືກັນ |
| ການສະໜອງນໍ້າສະອາດ ແລະ ສຸຂະອະນາໄມ | ຮັກສາຢູ່ໃນລະດັບທີ່ມີຢູ່ ໃນປີ 2020, ພຽງແຕ່ຈັດງົບປະມານໃສ່ເພື່ອສ້ອມແປງເລັກນ້ອຍ | 100% ຂອງໂຮງຮຽນມີນໍ້າສະອາດໃຊ້ພາຍໃນປີ 2025 |
| ການສ້ອມແປງພື້ນຖານໂຄງລ່າງຕ່າງໆ | 2% ຂອງຈໍານວນໂຮງຮຽນ/ຫ້ອງຮຽນຕ້ອງໄດ້ຮັບການສ້ອມແປງ | ຄືກັນ |
| ການກໍ່ສ້າງໂຮງຮຽນເພື່ອທົດແທນບ່ອນທີ່ເປ່ເພ | 1% ຂອງໂຮງຮຽນຕ້ອງໄດ້ຮັບການກໍ່ສ້າງທົດແທນ | ຄືກັນ |
| ກໍ່ສ້າງຫໍພັກນັກຮຽນ (ມັດທະຍົມຕົ້ນ ແລະ ປາຍ) | 1 ແຫ່ງ ຕໍ່ແຂວງ ຕໍ່ປີ | 2 ແຫ່ງ ຕໍ່ແຂວງຕໍ່ປີ |
| ກໍ່ສ້າງຫ້ອງທົດລອງ (ມັດທະຍົມຕົ້ນ ແລະ ປາຍ) | 1 ແຫ່ງ ຕໍ່ແຂວງ ຕໍ່ປີ | 2 ແຫ່ງ ຕໍ່ແຂວງຕໍ່ປີ |

### 7.3.1 ຄາດຄະເນງົບປະມານ ພາຍໃຕ້ສົມມຸດຖານ "ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ"

ສົມມຸດຖານ "ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ" ໄດ້ສະແດງໃຫ້ເຫັນເຖິງການເພີ່ມຂຶ້ນແບບຊ້າໆ ແລະ ເລັກນ້ອຍ ຂອງງົບປະມານທັງໝົດຂອງ ຂະແໜງການສຶກສາ ແລະ ກິລາ ໃນໄລຍະ 5 ປີ ຂອງແຜນພັດທະນາການສຶກສາ ແລະ ກິລາ.

**ຕາຕະລາງ 6: ຄາດຄະເນງົບປະມານ ພາຍໃຕ້ສົມມຸດຖານ "ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ"**

| | 2020 (ແຜນ) | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|---|
| **ລວມ** | **4.144.761** | **4.275.245** | **4.323.027** | **4.369.580** | **4.572.124** | **4.675.478** |
| ພາກ 60 (ເງິນເດືອນ) | 2.630.739 | 2.645.180 | 2.683.766 | 2.741.829 | 2.814.282 | 2.882.117 |
| ພາກ 61 (ເງິນອຸດໜູນ) | 362.798 | 364.350 | 368.488 | 374.459 | 380.468 | 386.690 |
| ພາກ 62 (ເງິນບໍລິຫານປົກກະຕິ) | 333.033 | 336.244 | 337.599 | 341.913 | 346.371 | 350.353 |
| ພາກ 63 (ເງິນດັດສົມ-ສິ່ງເສີມ) | 154.481 | 206.423 | 223.690 | 196.007 | 267.191 | 225.996 |

| | | | | | | |
|---|---|---|---|---|---|---|
| ພາກ 66 (ເງິນຊື້ໃໝ່) | 3.859 | 16.580 | 16.580 | 16.580 | 16.580 | 17.880 |
| ພາກ 67 (ເງິນລົງທຶນ) | 659.849 | 706.468 | 692.904 | 698.792 | 747.232 | 812.442 |

ດັ່ງທີ່ເຫັນໃນຕາຕະລາງຂ້າງເທິງ, ການເພີ່ມຂຶ້ນຂອງງົບປະມານທີ່ສັງເກດເຫັນຫຼາຍທີ່ສຸດແມ່ນຢູ່ພາກສາລະບານງົບປະມານຕ່າງໆດັ່ງນີ້:

- ພາກທີ 61: ສ່ວນໃຫຍ່ແມ່ນງົບປະມານສຳລັບອາຫານໃນໂຮງຮຽນ ແລະ ທຶນການສຶກສາສຳລັບນັກຮຽນທຸກຍາກ.
- ພາກທີ 63: ສ່ວນໃຫຍ່ແມ່ນງົບປະມານການຝຶກອົບຮົມຄູປະຈຳການ ແລະ ພິມປຶ້ມຕຳລາຮຽນເພື່ອທົດແທນ,
- ພາກທີ 66: ສຳລັບການສະໜອງອຸປະກອນໃນໂຮງຮຽນມັດທະຍົມ
- ພາກທີ 67: ໂຄງການລົງທຶນຕ່າງໆ ເຊັ່ນ: (i) ການສ້າງຫ້ອງຮຽນ ແລະ ການສ້ອມແປງໂຮງຮຽນ, ການສະໜອງສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມໃນໂຮງຮຽນ, ຫໍພັກນັກຮຽນ ແລະ ຫ້ອງທົດລອງ, ແລະ (ii) ໂຄງການສະເພາະ ເຊັ່ນ: ການຝຶກອົບຮົມຄູໃນການນຳໃຊ້ຫຼັກສູດໃໝ່, ໂດຍປົກກະຕິແມ່ນໄດ້ຮັບທຶນຈາກຄູ່ຮ່ວມພັດທະນາ[23].

### 7.3.2 ຄາດຄະເນງົບປະມານ ພາຍໃຕ້ສົມມຸດຖານ "ຍົກສູງຄຸນນະພາບການສຶກສາ".

ສົມມຸດຖານ "ຍົກສູງຄຸນນະພາບການສຶກສາ" ສະແດງໃຫ້ເຫັນການເພີ່ມຂຶ້ນຂອງງົບປະມານຂອງຂະແໜງການສຶກສາ ແລະ ກິລາ ໃນແຕ່ລະປີຫຼາຍກວ່າໃນສົມມຸດຖານ "ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ"

**ຕາຕະລາງ 7: ຄາດຄະເນງົບປະມານ ພາຍໃຕ້ສົມມຸດຖານ "ຍົກສູງຄຸນນະພາບການສຶກສາ"**

| | 2020 (ແຜນ) | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|---|
| **ລວມ** | **4.144.761** | **4.431.256** | **4.475.848** | **4.548.864** | **4.745.520** | **4.852.174** |
| ພາກ 60 (ເງິນເດືອນ) | 2.630.739 | 2.645.180 | 2.683.766 | 2.741.829 | 2.814.282 | 2.882.117 |
| ພາກ 61 (ເງິນອຸດໜູນ) | 362.798 | 364.350 | 368.488 | 374.459 | 380.468 | 386.690 |
| ພາກ 62 (ເງິນບໍລິຫານປົກກະຕິ) | 333.033 | 351.188 | 367.600 | 387.411 | 394.658 | 401.732 |
| ພາກ 63 (ເງິນດັດສົມ-ສິ່ງເສີມ) | 154.481 | 234.852 | 253.092 | 226.708 | 295.064 | 254.787 |
| ພາກ 66 (ເງິນຊື້ໃໝ່) | 3.859 | 16.580 | 16.580 | 16.580 | 16.580 | 17.880 |
| ພາກ 67 (ເງິນລົງທຶນ) | 659.849 | 819.106 | 786.322 | 801.879 | 844.468 | 908.968 |

ດັ່ງທີ່ເຫັນໄດ້ໃນຕາຕະລາງຂ້າງເທິງ, ຄວາມແຕກຕ່າງກັບ ສົມມຸດຖານ "ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ" ຫຼັກໆແມ່ນຄວາມຕ້ອງການດັ່ງນີ້:

- ພາກ 62: ເພີ່ມມູນຄ່າຫົວໜ່ວຍເງິນບໍລິຫານໂຮງຮຽນ
- ພາກ 63: ເພີ່ມຈຳນວນວັນຝຶກອົບຮົມຄູປະຈຳການເປັນ 10 ໃນແຕ່ລະຄັ້ງ (ໃນຮູບແບບ "ໄດ້ຮັບງົບປະ ມານຢູ່ໃນລະດັບເທົ່າເດີມ" ແມ່ນກຳນົດເອົາ 5 ວັນ)

---

[23] ງົບປະມານ ODA ຢູ່ ສປປ ລາວ ແມ່ນຈັດເຂົ້າໃນງົບປະມານລົງທຶນ, ພາກ 67, ເຖິງແມ່ນວ່າງົບປະມານຈະໃຊ້ຈ່າຍເຂົ້າໃນກິດຈະກຳທີ່ກ່ຽວຂ້ອງກັບງົບປະມານບໍລິຫານກໍຕາມ.

- ພາກ 66: ການຈັດຊື້ອຸປະກອນສໍາລັບໂຮງຮຽນມັດທະຍົມ
- ພາກ 67: ຍ້ອນກໍານົດຄາດໝາຍໃນການສະໜອງ ສິ່ງອໍານວຍຄວາມດວກດ້ານສຸຂະອະນາໄມ ໃນໂຮງ ຮຽນ (100% ຂອງໂຮງຮຽນຕ້ອງໄດ້ມາດຕະຖານດ້ານສຸຂະອະນາໄມ) ແລະ ການກໍ່ສ້າງໂຮງຮຽນເພື່ອທົດແທນ ບ່ອນເປ່ເພ.

### 7.4. ການວິເຄາະເຖິງແຫຼ່ງການເງິນ ແລະ ຊ່ອງຫວ່າງດ້ານການເງິນພາຍໃຕ້ສອງສົມມຸດຖານ

ວິກິດການດ້ານເສດຖະກິດທີ່ເກີດຂຶ້ນໃນທົ່ວໂລກ ແລະ ສປປ ລາວ ຫຼັງຈາກການລະບາດຂອງ Covid-19 ໃນຕົ້ນປີ 2020 ຄາດວ່າຈະສົ່ງຜົນກະທົບຢ່າງຫຼວງຫຼາຍຕໍ່ການເກັບລາຍຮັບພາຍໃນ ແລະ ການລະດົມທຶນຈາກພາຍນອກກໍອາດຈະຝືດເຄືອງເຊັ່ນດຽວກັນ. ການໃຊ້ຈ່າຍຂອງລັດໂດຍລວມ ແລະ ໂດຍສະເພາະການໃຊ້ໃນຂະແໜງການສຶກສາຈະໄດ້ຮັບຜົນກະທົບແນວໃດນັ້ນ ແມ່ນບໍ່ຈະແຈ້ງເທື່ອໃນເວລາສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ. ສະນັ້ນ, ແຜນການເງິນຈະໄດ້ຮັບການປັບປຸງເປັນແຕ່ລະປີໃນໄລຍະປີ 2021-2025, ເພື່ອສະ ທ້ອນໃຫ້ເຫັນເຖິງການດັດສົມການເງິນມະຫາພາກ ແລະ ຂໍ້ຈໍາກັດດ້ານງົບປະມານຕົວຈິງ.

ເນື່ອງຈາກວ່າ ຫຼັງຈາກວິກິດການ Covid, ການຄາດຄະເນງົບປະມານຂອງລັດຍັງບໍ່ທັນມີເທື່ອ, ໃນຕອນນີ້ຍັງບໍ່ສາມາດຄາດຄະເນຂໍ້ຈໍາກັດດ້ານງົບປະມານຂອງຂະແໜງການສຶກສາ ເປັນອັດຕາສ່ວນຮ້ອຍ ໂດຍທຽບໃສ່ງົບປະມານທັງໝົດຂອງລັດຖະບານ, ດັ່ງທີ່ເຄີຍເຮັດຜ່ານມາ. ສະນັ້ນ, ສົມມຸດຖານທີ່ນໍາໃຊ້ເພື່ອຄາດຄະເນງົບປະມານຂອງສຶກສາສໍາ ລັບໄລຍະປີ 2021-2025 ມີດັ່ງນີ້:

- ງົບປະມານຂອງ ຂະແໜງການສຶກສາ ແລະ ກິລາ ໃນປີ 2021 (ບໍ່ລວມ ODA) ແມ່ນຢູ່ໃນລະດັບດຽວກັນກັບງົບປະມານຂອງສຶກສາທີ່ໄດ້ຮັບການອະນຸມັດໃນປີ 2020;
- ງົບປະມານຂອງສຶກສາ (ບໍ່ລວມ ODA) ເພີ່ມຂຶ້ນ 2% ຕໍ່ປີ ແຕ່ປີ 2022 ຫາປີ 2025;
- ການຄາດຄະເນ ODA ຂອງກະຊວງສຶກສາທິການ ແລະ ກິລາ ແມ່ນອີງໃສ່ຄໍາໝັ້ນສັນຍາຂອງ ຄູ່ຮ່ວມພັດທະນາ ແລະ ຂໍ້ມູນການໃຫ້ການຊ່ວຍເຫຼືອຜ່ານມາ.

ເມື່ອມີຄວາມຊັດເຈນກ່ຽວກັບການຈັດສັນງົບປະມານແລ້ວ ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ພັດທະນາສໍາເລັດແລ້ວ, ແຜນປະຈໍາປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ ຈະຖືກນໍາໄປຜັນຂະຫຍາຍຢູ່ໃນລະດັບເມືອງ, ລະດັບແຂວງ, ແລະ ສູນກາງ. ແຜນປະຈໍາປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ ຈະໄດ້ສົ່ງໃຫ້ກອງເລຂາຂອງໜ່ວຍງານວິຊາການຂະແໜງການສຶກສາ (ESWG) ແລະ ກອງທຶນສາກົນເພື່ອການສຶກສາ (GPE).

ໃນຕໍ່ໜ້າ ກະຊວງສຶກສາທິການ ແລະ ກິລາ ຈະສືບຕໍ່ໂຄສະນາ ແລະ ຮຽກຮ້ອງໃຫ້ມີການສະໜອງງົບປະມານໃຫ້ຂະແໜງການສຶກສາ ແລະ ກິລາ ໃນລະດັບທີ່ຈະຊ່ວຍໃຫ້ແຜນການນີ້ ຖືກຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ແລະ ສະໜັບສະໜູນການພັດທະນາໃນ ສປປ ລາວ ໃນອະນາຄົດ. ສືບຕໍ່ການສົນທະນາກັບ ESWG ແລະ ບັນດາກະຊວງທີ່ສໍາຄັນ ເພື່ອໃຫ້ໄດ້ຮັບເງິນບໍລິຫານທີ່ບໍ່ແມ່ນເງິນເດືອນເພີ່ມຂຶ້ນຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດແຜນການນີ້.

#### 7.4.1. ແຜນການເງິນ ພາຍໃຕ້ສົມມຸດຖານ “ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ”

ງົບປະມານການສຶກສາທີ່ຄາດຄະເນໄວ້ (ງົບປະມານພາຍໃນ ແລະ ODA) ຈະບໍ່ພຽງພໍເພື່ອຕອບສະໜອງຄວາມຕ້ອງການພາຍໃຕ້ ສົມມຸດຖານ “ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ”. ໃນຄວາມເປັນຈິງ, ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນວ່າຈະມີຊ່ອງຫວ່າງທາງດ້ານການເງິນທີ່ເພີ່ມຂຶ້ນໃນແຕ່ລະປີ, ສະສົມເຖິງ 485 ຕື້ກີບ (ຫຼື ປະມານ 54 ລ້ານໂດລາສະຫະລັດ) ຕະຫຼອດໄລຍະ 2021-2025.

**ຕາຕະລາງ 8: ແຜນການເງິນພາຍໃຕ້ສົມມຸດຖານ "ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ"**

*ຫົວໜ່ວຍ: (ລ້ານ ກີບ)*

| | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ງົບປະມານຂອງຂະແໜງການສຶກສາ (ບໍ່ລວມ ODA) | 3.599.576 | 3.671.568 | 3.744.999 | 3.819.899 | 3.896.297 |
| ODA | 673.718 | 584.155 | 580.000 | 580.000 | 580.000 |
| ງົບປະມານທັງໝົດຂອງຂະແໜງການສຶກສາ(ຄາດຄະເນ) | 4.273.294 | 4.255.722 | 4.324.999 | 4.399.899 | 4.476.297 |
| ຄວາມຕ້ອງການງົບປະມານ ຕາມແຜນ (ຮັກສາຄວາມໝັ້ນຄົງຂອງລະບົບ) | 4.275.245 | 4.323.027 | 4.369.580 | 4.572.124 | 4.675.478 |
| ຊ່ອງຫວ່າງ/ສ່ວນເກີນຂອງງົບປະມານ | -1.951 | -67.305 | -44.581 | -172.225 | -199.181 |
| ຊ່ອງຫວ່າງງົບປະມານ (ສະສົມ) | -1.951 | -69.256 | -113.836 | -286.061 | -485.242 |

ຊ່ອງຫວ່າງດ້ານການເງິນ ອາດກວມເອົາອັນໜຶ່ງ ຫຼື ທັງສອງນີ້:

- ການເພີ່ມຂຶ້ນຂອງງົບປະມານຂອງ ຂະແໜງການສຶກສາ ແລະ ກິລາ ປະມານ 2,8% ຕໍ່ປີ ໂດຍເລີ່ມຈາກປີ 2021, ແທນທີ່ຈະເປັນ 2% ໂດຍເລີ່ມແຕ່ປີ 2022 ໃນສົມມຸດຖານ "ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ", ຈຶ່ງຈະພຽງພໍທີ່ຈະໄປອັດຊ່ອງຫວ່າງດັ່ງກ່າວ;
- ການເພີ່ມຂຶ້ນຂອງ ODA.

### 7.4.2. ແຜນການເງິນ ພາຍໃຕ້ສົມມຸດຖານ "ຍົກສູງຄຸນນະພາບການສຶກສາ"

ການເງິນໃນສົມມຸດຖານ "ຍົກສູງປັບປຸງຄຸນນະພາບການສຶກສາ" ຈະຕ້ອງມີຊັບພະຍາກອນຫຼາຍ. ພາຍໃຕ້ການສົມມຸດຖານດ້ານງົບປະມານດຽວກັນກັບຂ້າງເທິງ (ຕົວຢ່າງ: ງົບປະມານພາຍໃນເພີ່ມຂຶ້ນ 2% ຕໍ່ປີ ເລີ່ມແຕ່ປີ 2022), ຕາຕະລາງຂ້າງລຸ່ມນີ້ ສະແດງໃຫ້ເຫັນວ່າ ຊ່ອງຫວ່າງການສະສົມດ້ານການເງິນ ສໍາລັບໄລຍະເວລາ 5 ປີຈະບັນລຸ 1.323 ຕື້ກີບ (ຫລືປະມານ 147 ລ້ານໂດລາສະຫະລັດ).

**ຕາຕະລາງ 9: ແຜນການເງິນພາຍໃຕ້ສົມມຸດຖານ "ຍົກສູງຄຸນນະພາບການສຶກສາ"**

*ຫົວໜ່ວຍ: (ລ້ານ ກີບ)*

| | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ງົບປະມານຂອງຂະແໜງການສຶກສາ (ບໍ່ລວມ ODA) | 3.599.576 | 3.671.568 | 3.744.999 | 3.819.899 | 3.896.297 |
| ODA | 673.718 | 584.155 | 580.000 | 580.000 | 580.000 |
| ງົບປະມານທັງໝົດຂອງຂະແໜງການສຶກສາ (ຄາດຄະເນ) | 4.273.294 | 4.255.722 | 4.324.999 | 4.399.899 | 4.476.297 |
| ຄວາມຕ້ອງການງົບປະມານ ຕາມແຜນ (ຮັກສາຄວາມໝັ້ນຄົງຂອງລະບົບ) | 4.431.256 | 4.475.848 | 4.548.864 | 4.745.520 | 4.852.174 |
| ຊ່ອງຫວ່າງ/ສ່ວນເກີນຂອງງົບປະມານ | -157.962 | -220.126 | -223.865 | -345.621 | -375.877 |
| ຊ່ອງຫວ່າງງົບປະມານ (ສະສົມ) | -157.962 | -378.088 | -601.953 | -947.574 | -1.323.451 |

ເພື່ອອັດຊ່ອງຫວ່າງການເງິນ ຈໍາເປັນຕ້ອງໄດ້ຮັບງົບປະມານເພີ່ມຂຶ້ນ.

### 7.5. ສະຫຼຸບ

ວິກິດການຈາກ Covid-19 ແລະ ວິກິດການດ້ານເສດຖະກິດອື່ນໆ ໄດ້ສ້າງຄວາມບໍ່ແນ່ນອນກ່ຽວກັບການເງິນໃນອະນາຄົດ ທີ່ຈະຈັດສັນໃຫ້ແກ່ ຂະແໜງການສຶກສາ ແລະ ກິລາ, ບໍ່ວ່າຈະເປັນງົບປະມານພາຍໃນ ກໍຄືງົບປະມານການຊ່ວຍເຫຼືອຈາກພາຍນອກ. ໜ່ວຍງານວິຊາການ ຂະແໜງການສຶກສາ ແລະ ກິລາ ໄດ້ຕົກລົງທີ່ຈະປັບປຸງແຜນການການເງິນຂອງແຜນພັດທະນາການສຶກສາ ແລະ ກິລາ ໃນແຕ່ລະປີ, ເລີ່ມແຕ່ປີ 2021. ສິ່ງນີ້ຈະຊ່ວຍໃຫ້ກະຊວງສຶກສາທິການ ແລະ ກິລາ ສະທ້ອນໃຫ້ເຫັນຜົນກະທົບຂອງສະພາບເສດຖະກິດທີ່ມີການປ່ຽນແປງຕໍ່ງົບປະມານຂອງ ຂະແໜງການສຶກສາ ແລະ ກິລາ.

ໃນສອງສົມມຸດຖານຂອງງົບປະມານ ທີ່ນໍາສະເໜີຢູ່ຂ້າງເທິງ, ສົມມຸດຖານ "ໄດ້ຮັບງົບປະມານຢູ່ໃນລະດັບເທົ່າເດີມ", ແມ່ນມີຄວາມເປັນໄປໄດ້ສູງ. ມັນສະແດງໃຫ້ເຫັນເຖິງວ່າ ການຮັກສາການໃຫ້ບໍລິການດ້ານການສຶກສາແບບປົກກະຕິ, ແຕ່ກໍມີຄວາມຕ້ອງການງົບປະມານການສຶກສາທີ່ເພີ່ມຂຶ້ນ, ຊຶ່ງເຫັນວ່າ ຖ້າຢາກໃຫ້ງົບປະມານຂອງສຶກສາເພີ່ມຂຶ້ນ, ສ່ວນແບ່ງງົບປະມານຂອງສຶກສາ ເມື່ອທຽບໃສ່ລາຍຈ່າຍລັດຖະບານ ກໍຕ້ອງເພີ່ມຂຶ້ນເຊັ່ນດຽວກັນ. ເຖິງຢ່າງໃດກໍ່ຕາມ, ພາຍໃຕ້ສົມມຸດຖານນີ້ ຮັບດ້ານການສຶກສາແມ່ນເກືອບຈະບໍ່ມີການປັບປຸງຜົນໄດ້ເລີຍ.

ການເງິນໃນສົມມຸດຖານ "ຍົກສູງຄຸນນະພາບການສຶກສາ" ໃນທາງກົງກັນຂ້າມ, ຈະຊ່ວຍໃຫ້ບັນດາຄາດໝາຍ ແລະ ແຜນງານຕ່າງໆຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໄດ້ຮັບການຈັດຕັ້ງປະຕິບັດ ເພື່ອປັບປຸງຜົນໄດ້ຮັບດ້ານການສຶກສາ ແລະ ຮັບປະກັນການລົງທຶນທີ່ເໝາະສົມໃນອະນາຄົດຂອງປະເທດ ແລະ ສອດຄ່ອງກັບເປົ້າໝາຍການພັດທະນາແບບຍືນຍົງ (SDG-4). ການເງິນໃນສົມມຸດຖານທີສອງນີ້ ແມ່ນລວມຢູ່ໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ, ເນື່ອງຈາກວ່າຍັງບໍ່ທັນຮູ້ເທື່ອວ່າ ວິກິດການດ້ານເສດຖະກິດໂລກຈະຟື້ນຕົວໄວ ຫຼື ຊ້າສໍ່າໃດ. ບາງເທື່ອ, ບາງສ່ວນຂອງການເງິນໃນສົມມຸດຖານ "ຍົກສູງຄຸນນະພາບການສຶກສາ" ຈະສາມາດຈັດຕັ້ງປະຕິບັດໄດ້ກ່ອນປີ 2025.

## 8. ການຈັດຕັ້ງປະຕິບັດ, ຂອບການຕິດຕາມກວດກາ ແລະ ປະເມີນຜົນ

### 8.1. ການແບ່ງຂັ້ນໃນການບໍລິຫານ, ຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດແຜນ

ເນື່ອງຈາກວ່າແຜນພັດທະນາຂະແໜງການສຶກສາ ແລະ ກິລາ (2021-2025) ເປັນແຜນຂອງທົ່ວຂະແໜງການສຶກສາ ແລະ ກິລາ, ດັ່ງນັ້ນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນດັ່ງກ່າວມີປະສິດທິພາບ, ປະສິດທິຜົນ ແລະ ບັນລຸໄດ້ຕາມຄາດໝາຍທີ່ກໍານົດ, ທຸກພາກສ່ວນລວມທັງອົງການຈັດຕັ້ງພາກລັດ, ເອກະຊົນ ແລະ ຄູ່ຮ່ວມພັດທະນາຕ້ອງຮ່ວມມືກັນນໍາເອົາບັນດານະໂຍບາຍ ແລະ ຍຸດທະສາດໄປຜັນຂະຫຍາຍເປັນແຜນປະຕິບັດຕົວຈິງໃນແຕ່ລະປີ. ກະຊວງສຶກສາທິການ ແລະ ກິລາ ໄດ້ກໍານົດກົນໄກການຈັດຕັ້ງປະຕິບັດໂດຍອີງໃສ່ນະໂຍບາຍ 3 ສ້າງຂອງລັດຖະບານ ກໍ່ຄືນະໂຍບາຍໃນການແບ່ງຂັ້ນຄຸ້ມຄອງຂອງກະຊວງສຶກສາທິການ ແລະ ກິລາ ພ້ອມທັງອີງໃສ່ໂຄງສ້າງຂອງອົງກອນ ແລະ ກົນໄກການປະສານງານທີ່ມີຢູ່ໃນປັດຈຸບັນ ດັ່ງມີລາຍລະອຽດລຸ່ມນີ້:

1) **ກະຊວງສຶກສາທິການ ແລະ ກິລາ :** ຄະນະກໍາມະການແຜນການ ແລະ ການເງິນ ເປັນເຈົ້າການໃນການໃຫ້ທິດຊີ້ນໍາ ໃຫ້ແກ່ພາກສ່ວນຕ່າງໆເພື່ອນໍາເອົາແຜນດັ່ງກ່າວໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ. ກົມກວດກາເຮັດໜ້າທີ່ໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແຜນດັ່ງກ່າວຮ່ວມກັບກົມແຜນ ການ, ພ້ອມທັງລາຍງານຜົນການຕິດຕາມ ແລະ ປະເມີນຜົນດັ່ງກ່າວ ໃຫ້ແກ່ກອງປະຊຸມຜູ້ບໍລິຫານການສຶກສາໃນແຕ່ລະປີ.

2) **ໜ່ວຍງານວິຊາການຂະແໜງການສຶກສາ (ESWG)** ມີໜ້າທີ່ປະສານງານກັບຄູ່ຮ່ວມພັດທະນາເພື່ອພິຈາລະນາການເຊື່ອມສານນະໂຍບາຍຕ່າງໆທີ່ໄດ້ກໍານົດໄວ້ໃນ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ເຂົ້າໃນແຜນການຊ່ວຍເຫຼືອທາງການເພື່ອການພັດທະນາ ໃຫ້ແກ່ກະຊວງສຶກສາທິການ

ແລະ ກິລາ, ໂດຍສະເພາະແມ່ນແຜນການຊ່ວຍເຫຼືອແກ່ກົມວິຊາການຕ່າງໆ. ໜ່ວຍງານວິຊາການຂະແໜງການສຶກສາ ຈະຕ້ອງໄດ້ກຳນົດຫົວຂໍ້ຫຼັກໆທີ່ຈະຕ້ອງຕິດຕາມຮ່ວມກັນ, ປຶກສາຫາລືກ່ຽວກັບຜົນຂອງການຕິດຕາມດັ່ງກ່າວ ແລະ ໃຫ້ຂໍ້ສະເໜີແນະນຳ ເພື່ອປັບປຸງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025. ໜ່ວຍງານວິຊາການຂະແໜງການສຶກສາ ຍັງຈະຕ້ອງເປັນເຈົ້າການໃນການປະເມີນໄລຍະກາງຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025.

3) **ຄະນະປະສານງານດ້ານວິຊາການ (Focal Group):** ຄະນະປະສານງານຫຼ້ານີ້ຍັງຄົງເປີດໃຫ້ມີການປັບປຸງຕື່ມ, ແຕ່ປະຈຸບັນປະກອບມີຄະນະປະສານງານດ້ານວິຊາການ ການສຶກສາກ່ອນໄວຮຽນ; ຄະນະປະ ສານງານດ້ານວິຊາການສາມັນສຶກສາ; ຄະນະປະສານງານດ້ານວິຊາການການສຶກສາຫຼັງມັດທະຍົມສຶກສາ, ຄະ ນະປະສານງານດ້ານວິຊາການ ການບໍລິຫານ ແລະ ຄຸ້ມຄອງ, ຄະນະປະສານງານດ້ານວິຊາການ ດ້ານການຄົ້ນຄວ້າວິໄຈ ແລະ ຄະນະປະສານງານດ້ານວິຊາການກິລາ-ກາຍຍະກຳ. ຄະນະປະສານງານດັ່ງກ່າວ ມີຄວາມຮັບຜິດຊອບຫຼັກໃນການປະສານງານກັບບັນດາກົມຕ່າງໆ, ຫ້ອງການ, ສູນ ແລະ ສະຖາບັນການສຶກສາຕ່າງໆພາຍໃຕ້ກະຊວງສຶກສາທິການ ແລະ ກິລາ ເພື່ອຕິດຕາມຄວາມຄືບໜ້າ, ສິ່ງທ້າທາຍ ແລະ ບັນຫາຕ່າງໆໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ໃຫ້ຄຳແນະນຳ ແລະ ແນະນຳວິທີການເພື່ອແກ້ໄຂສິ່ງທ້າທາຍ ແລະບັນຫາທີ່ອາດເປັນສິ່ງກີດຂວາງການຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນການໄດ້.

4) **ບັນດາກົມວິຊາການຕ່າງໆ** ມີໜ້າທີ່ຊີ້ນຳບັນດາແຂວງ ແລະ ສະຖາບັນການສຶກສາທີ່ຂຶ້ນກັບ ເພື່ອໃຫ້ບັນລຸໄດ້ບັນດານະໂຍບາຍ ແລະ ຍຸດທະສາດທີ່ໄດ້ກຳນົດໄວ້ໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ໂດຍຜ່ານການສ້າງແຜນປະຕິບັດງານປະຈຳປີ ທີ່ສອດຄ່ອງກັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ.

5) **ພະແນກສຶກສາທິການແລະ ກິລາ ແຂວງ:** ມີໜ້າທີ່ຮັບຜິດຊອບໃນການພັດທະນາແຜນການປະຈຳປີ ແລະແຜນການ 5 ປີຂອງຕົນເອງ ໂດຍອີງໃສ່ນະໂຍບາຍ ແລະ ຍຸດທະສາດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025. ແຜນການເຫຼົ່ານີ້ຕ້ອງສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງ ຄົມຂອງແຂວງ.

6) **ຫ້ອງການສຶກສາທິການ ແລະ ກິລາ ເມືອງ:** ປະຕິບັດຕາມແຜນພັດທະນາການສຶກສາ ຂອງ ພະແນກສຶກສາທິການ ແລະ ກິລາ ແຂວງ ໃນການສ້າງແຜນປະຕິບັດງານປະຈຳປີຂອງຕົນ. ນອກຈາກນັ້ນ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ ຕ້ອງໄດ້ເຜີຍແຜ່ນະໂຍບາຍ ແລະ ຍຸດທະສາດຂອງ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຕໍ່ຜູ້ອຳນວຍການໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ສະໜັບສະໜູນພວກເຂົາໃນການສ້າງແຜນພັດທະນາໂຮງຮຽນຂອງຕົນ ໃຫ້ສອດຄ່ອງກັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025.

## 8.2. ການສ້າງແຜນການ ແລະ ແຜນງົບປະມານ ເພື່ອຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ

ກະຊວງສຶກສາທິການ ແລະ ກິລາ ໄດ້ດຳເນີນງານເພື່ອກ້າວໄປສູ່ການເຊື່ອມໂຍງເອົາການວາງແຜນໄລຍະກາງ ແລະ ແຜນປະຈຳປີ ໃຫ້ສອດຄ່ອງກັບຂະບວນການວາງແຜນງົບປະມານ ໂດຍຜ່ານການສ້າງແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ, ຊຶ່ງເປັນໂມດູນໜຶ່ງຂອງຖານຂໍ້ມູນຄຸ້ມຄອງແຜນການ ແລະ ງົບປະມານ (PBMIS) ທີ່ມີຂະບວນການວາງແຜນທີ່ເປັນລະບົບ. ຈຸດປະສົງກໍ່ແມ່ນເພື່ອແນໃສ່ເຮັດໃຫ້ການສ້າງແຜນງົບປະມານປະຈຳປີ ສອດຄ່ອງກັບນະໂຍບາຍຂອງຂະແໜງການ ໂດຍປັບປຸງການປະສານງານລະຫວ່າງພາກສ່ວນແຜນການ ແລະ ການເງິນ ໃນຂັ້ນສູນກາງ ແລະ ຂັ້ນແຂວງໃຫ້ດີຂຶ້ນກວ່າເກົ່າ. ຄະນະກຳມະການແຜນການ ແລະ ການເງິນໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອເຮັດໜ້າທີ່ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ການເຊື່ອມໂຍງກັນລະຫວ່າງແຜນການ ແລະ ງົບປະມານ.

ແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ, ຊຶ່ງເປັນໂມດູນໜຶ່ງຂອງ (PBMIS) ໄດ້ຖືກນຳໃຊ້ເພື່ອຄິດໄລ່ມູນຄ່າໃຊ້ຈ່າຍສຳລັບການຈັດຕັ້ງປະຕິບັດນະໂຍບາຍຂອງຂະແໜງການ ໂດຍອີງໃສ່ຜົນຜະລິດ ແລະ ຜົນໄດ້ຮັບ ທີ່ກຳນົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ. ແຜນດັ່ງກ່າວ ໄດ້ຄາດຄະເນຜົນກະທົບດ້ານການເງິນ ທຽບກັບຂໍ້ຈຳກັດຂອງງົບປະມານໃນຊຸມປີຕໍ່ໜ້າ ແລະ ແຜນນີ້ຍັງຊ່ວຍປະເມີນຊ່ອງວ່າງການເງິນເພື່ອຈັດຕັ້ງປະຕິບັດ ຈຸດປະສົງດ້ານນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ.

ຂະບວນການນີ້ ມັນແມ່ນເຄື່ອງມືທີ່ນຳມາໃຊ້ເພື່ອສ້າງຄວາມເຂົ້າໃຈເຖິງ 'ຂໍ້ຈຳກັດດ້ານງົບປະມານ' ເພື່ອການວາງແຜນ ແລະ ຂັ້ນງົບປະມານຂະແໜງການສຶກສາ. ໃນທາງປະຕິບັດແລ້ວ, ຈຸດປະສົງຂອງເຄື່ອງມືນີ້ ແມ່ນເພື່ອຮັບໃຊ້ໃນການສົນທະນາກ່ຽວກັບການຈັດສັນງົບປະມານໃຫ້ແກ່ແຂວງ ແລະ ກົມກ່ຽວຂ້ອງ ຂອງກະຊວງສຶກສາທິການ ແລະ ກິລາ ເຊິ່ງເຄື່ອງມືດັ່ງກ່າວຈະກາຍມາເປັນພື້ນຖານໃຫ້ແກ່ຂະບວນການຂັ້ນງົບປະມານຂອງປີຕໍ່ໄປ.

**ຂະບວນການສ້າງແຜນການ ແລະ ແຜນງົບປະມານ ໂດຍລວມແບ່ງອອກເປັນ 6 ຂັ້ນຕອນດັ່ງນີ້:**

**<u>ຂັ້ນຕອນທີ 1:</u>** ໃນເດືອນມັງກອນ, ກົມແຜນການຂອງກະຊວງສຶກສາທິການ ແລະ ກິລາ ອອກຄຳແນະນຳໃຫ້ບັນດາພະແນກສຶກສາທິການ ແລະ ກິລາ ແຂວງ, ບັນດາກົມ ແລະ ມະຫາວິທະຍາໄລແຫ່ງຊາດ ກ່ຽວກັບການກະກຽມແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍສຳລັບປີຕໍ່ໄປ. ບັນດາພະແນກສຶກສາທິການ ແລະ ກິລາແຂວງ ອອກຄຳແນະນຳທີ່ຄ້າຍຄືກັນໃຫ້ແກ່ສຶກສາເມືອງ. ຈາກນັ້ນ ບັນດາເມືອງ, ແຂວງ ແລະ ບັນດາກົມຂັ້ນສູນກາງ ລວມທັງມະຫາວິທະຍາໄລແຫ່ງຊາດໃຊ້ໂມດູນ ACSEP ຂອງ PBMIS ເພື່ອກຳນົດຄາດໝາຍໃນການວາງແຜນສຳລັບປີຕໍ່ໄປພ້ອມທັງສ້າງແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍຂອງເຂົາເຈົ້າ. ເວລາສຳລັບການສົ່ງຮ່າງເອກະສານ ແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ ໃຫ້ກົມແຜນການ ແມ່ນໃນກາງເດືອນກຸມພາ.

**<u>ຂັ້ນຕອນທີ 2:</u>** ຕັ້ງແຕ່ກາງເດືອນກຸມພາເຖິງກາງເດືອນມີນາ, ກົມແຜນການ ກວດກາເບິ່ງແຜນ ແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍເບື້ອງຕົ້ນຂອງແຕ່ລະແຂວງ ແລະ ພາກສ່ວນສູນກາງ. ຊຶ່ງຖ້າມີຄວາມຈຳເປັນຕ້ອງມີການຊີ້ແຈງ, ກົມແຜນການຈະປະສານຫາແຕ່ລະພາກສ່ວນ ເພື່ອປັບປຸງແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ.

**<u>ຂັ້ນຕອນທີ 3:</u>** ໃນອາທິດທີ 3 ຂອງເດືອນມີນາ, ກົມແຜນການ ຈັດກອງປະຊຸມຮ່ວມກັບບັນດາແຂວງ, ບັນ ດາກົມ ແລະ ມະຫາວິທຍາໄລແຫ່ງຊາດ ເພື່ອປຶກສາຫາລືກ່ຽວກັບຄາດໝາຍຂອງແຜນ ແລະ ຄວາມຕ້ອງການດ້ານງົບປະມານຂອງແຕ່ລະພາກສ່ວນ. ແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ ແມ່ນຈະຖືກເຮັດໃຫ້ສຳເລັດໃນກອງປະຊຸມດັ່ງກ່າວນີ້.

**<u>ຂັ້ນຕອນທີ 4:</u>** ກົມແຜນການສັງລວມ ແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ ແລະ ປັບປຸງແຜນການເງິນຂອງຂະແໜງການ ເພື່ອສົ່ງໃຫ້ຄະນະກຳມະການແຜນການ ແລະ ການເງິນ ຂອງກະຊວງສຶກສາທິການ ແລະ ກິລາ ໃນທ້າຍເດືອນເມສາ ຊຶ່ງເປັນເວລາດຽວກັບການກະກຽມງົບປະມານປະຈຳປີ.

**<u>ຂັ້ນຕອນທີ 5:</u>** ໃນເດືອນພຶດສະພາ, ກະຊວງການເງິນ ອອກຄຳແນະນຳກ່ຽວກັບການກະກຽມງົບປະມານປະຈຳປີໃຫ້ແຕ່ລະຂະແໜງການ. ກະຊວງສຶກສາທິການ ແລະ ກິລາ, ສຶກສາແຂວງ (ແລະ ສຶກສາເມືອງ) ແລະມະຫາວິທະຍາໄລແຫ່ງຊາດກະກຽມແຜນງົບປະມານຂອງຕົນ. ຈາກນັ້ນ ກົມການເງິນສັງລວມງົບປະມານຂອງທົ່ວຂະແໜງການສຶກສາ ແລະ ກິລາ ເພື່ອນຳສະເໜີຕໍ່ຄະນະກຳມະການແຜນການ ແລະ ການເງິນ ເພື່ອສະເໜີຕໍ່ການນຳກະຊວງ.

**<u>ຂັ້ນຕອນທີ 6:</u>** ກະຊວງການເງິນໄດ້ລວບລວມງົບປະມານຂອງລັດ ແລະ ຍື່ນສະເໜີຕໍ່ສະພາແຫ່ງຊາດ ເພື່ອຮັບຮອງເອົາເພດານລວມໃນເດືອນກໍລະກົດ.

**ຂັ້ນຕອນທີ 7:** ໃນເດືອນກໍລະກົດຫາເດືອນສິງຫາ, ກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາ ແຂວງ ແລະ ມະຫາວິທະຍາໄລແຫ່ງຊາດ ດັດປັບງົບປະມານຂອງຕົນໃຫ້ແທດເໝາະກັບເພດານທີ່ກະຊວງການເງິນສະເໜີ.

**ຂັ້ນຕອນທີ 8:** ກະຊວງການເງິນໄດ້ລວບລວມງົບປະມານ ແລະ ຍື່ນຕໍ່ລັດຖະບານໃນເດືອນກັນຍາ ແລະ ຍື່ນຕໍ່ສະພາແຫ່ງຊາດໃນເດືອນພະຈິກ. ງົບປະມານໄດ້ຮັບການອະນຸມັດຢ່າງເປັນທາງການໃນເດືອນທັນວາ. ກະຊວງສຶກສາທິການ ແລະ ກິລາ ສັງລວມງົບປະມານຂອງຕົນ.

### 8.3. ຂອບການຕິດຕາມ ແລະ ປະເມີນຜົນ ສໍາລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025

ຂອບການຕິດຕາມ ແລະ ປະເມີນຜົນ ສໍາລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ມີໂຄງສ້າງທາງດ້ານຜົນໄດ້ຮັບເປັນແຕ່ລະລະດັບ ເຊິ່ງຈະຊ່ວຍໃນການຕິດຕາມ ແລະ ກວດກາປົກກະຕິ, ລວມທັງການປະເມີນຜົນໄລຍະກາງ ແລະ ໄລຍະສຸດທ້າຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025. ການພັດທະນາຂອບປະເມີນຜົນດັ່ງກ່າວ ແມ່ນອີງໃສ່ຜົນການຄົ້ນພົບ ແລະ ຂໍ້ສະເໜີແນະຂອງນັກປະເມີນເອກະລາດຂອງກອງທຶນສາກົນເພື່ອການສຶກສາ (GPE) ໃນການປະເມີນ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020, ການປະເມີນກາງສະໄໝ ແລະ ບົດຮຽນທີ່ຖອດຖອນໄດ້ໃນຊຸມປີສຸດທ້າຍຂອງການປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020. ຂອບປະເມີນດັ່ງກ່າວ ຍັງໄດ້ພະຍາຍາມສະໜອງໂຄງສ້າງຜົນໄດ້ຮັບທີ່ເປັນເອກະພາບ ລະຫວ່າງນະໂຍບາຍທີ່ຈະຕ້ອງປະຕິບັດ ທີ່ກໍານົດໃນພາກທີ I ຂອງແຜນ ແລະ ແຜນຂອງ 10 ຂະແໜງການຍ່ອຍ (ພາກທີ II ຂອງ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ) ສາມາດເຮັດໄດ້ຢ່າງງ່າຍດາຍ ແລະ ມີເຫດຜົນ ແລະ ໄດ້ກໍານົດບູລິມະສິດເພື່ອໃຫ້ເກີດປະໂຫຍດສູງສຸດຈາກແຫຼ່ງຂໍ້ມູນທີ່ມີຢູ່ແລ້ວ ໃນການກໍານົດໂຄງສ້າງ ແລະ ຂະບວນການໃນການຕິດຕາມກວດກາ, ການຄຸ້ມຄອງ ແລະ ການວາງແຜນ. ໃນພາກນີ້ ຈະອະທິບາຍວິທີການປັບປຸງໂຄງສ້າງ ແລະ ຂະບວນການຕ່າງໆ ເພື່ອປັບປຸງການຕິດຕາມກວດກາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຄາດໝາຍ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025.

#### 8.3.1. ການຕິດຕາມ ແລະ ປະເມີນຜົນກະທົບຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ.

ການທົບທວນໄລຍະກາງ ແລະ ການປະເມີນສຸດທ້າຍ: ການທົບທວນໄລຍະກາງຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ຈະຖືກດໍາເນີນໃນປີ 2023, ເພື່ອປະເມີນເຖິງຄວາມຄືບໜ້າໃນການຈັດຕັ້ງປະຕິບັດຄາດໝາຍ, ຖ້າຈໍາເປັນອາດມີການປັບປຸງຄາດໝາຍ ແລະ ປັບປຸງຍຸດທະສາດທີ່ມີຄວາມຈໍາເປັນ. ການທົບທວນຄັ້ງສຸດທ້າຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ຈະຖືກດໍາເນີນ ໃນປີ 2025 ເພື່ອກວດກາ ແລະ ປະເມີນຜົນກະທົບໂດຍລວມຂອງແຜນການ ແລະ ທົບທວນເບິ່ງວ່າ ແຜນງານດັ່ງກ່າວໄດ້ປະກອບສ່ວນແນວໃດໃຫ້ແກ່ຜົນໄດ້ຮັບ ແລະ ເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ປີ 2021-2025. ການທົບທວນຄັ້ງສຸດທ້າຍຍັງຈະຖືກນໍາໃຊ້ເພື່ອເປັນທິດທາງໃນການພັດທະນາ ແລະ ຖອດຖອນບົດຮຽນສໍາລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2026-2030. ການປະເມີນຜົນຈະໄດ້ຮັບການຊີ້ນໍາ ແລະ ປະສານງານໂດຍຜູ້ບໍລິຫານລະດັບສູງຂອງກະຊວງສຶກສາທິການ ແລະ ກິລາ ແລະ ໜ່ວຍງານວິຊາການຂະແໜງການສຶກສາ.

#### 8.3.2. ການຕິດຕາມ ແລະ ປະເມີນ ຜົນການຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ

ການຕິດຕາມ ແລະ ປະເມີນຜົນເປັນປົກກະຕິ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຈະອີງໃສ່ຂະບວນການ ແລະ ໂຄງສ້າງທີ່ມີຢູ່ແລ້ວ ເຊັ່ນ: ໜ່ວຍງານວິຊາການຂະແໜງການສຶກສາ (ລວມທັງຄະນະວິຊາການປະສານງານ ແລະ ທີມງານດ້ານວິຊາການສະເພາະ) ແລະ ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈໍາ

ປີ, ໂດຍຈະມີການດຳເນີນກິດຈະກຳ ແລະ ເຜີຍແຜ່ເອກະສານທີ່ສຳຄັນ ເພື່ອເຮັດໃຫ້ຜົນຂອງການຕິດຕາມ ແລະ ປະເມີນຜົນ ມີຜົນກະທົບສູງຕໍ່ກັບການວາງແຜນ ແລະ ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ.

ບົດລາຍງານຫຼັກຂອງການຕິດຕາມ ແລະ ປະເມີນຜົນ ແມ່ນບົດລາຍງານການປະຕິບັດງານຂອງຂະແໜງການປະຈຳປີ ເຊິ່ງຈະປະຕິບັດຕາມໂຄງສ້າງຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແລະ ຈະລາຍງານຕາມໂຄງສ້າງຜົນໄດ້ຮັບຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ. ເພື່ອເຮັດໃຫ້ບົດລາຍງານການປະຕິບັດງານຂອງຂະແໜງການນີ້ມີຄວາມສົມບູນຕື່ມ ຈະມີບົດລາຍງານສະເພາະ ຫຼື ບົດລາຍງານທີ່ມີເນື້ອໃນລະອຽດຈຳນວນໜຶ່ງ ທີ່ສອດຄ່ອງກັບບູລິມະສິດຕົ້ນຕໍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025. ຍົກຕົວຢ່າງ, ບົດລາຍງານປະຈຳປີຂອງຄະນະກຳມະການຈັດສັນຄູ ແລະ ຄະນະກຳມະການແຜນການ ແລະ ການເງິນ ແລະ ບົດລາຍງານການທົບທວນຮ່ວມຂອງຂະແໜງການ (Joint Sector Review Missions. (JSRM))[24]

ວົງຈອນການຕິດຕາມ ແລະ ປະເມີນຜົນການປະຕິບັດງານປະຈຳປີ ແລະ ການເຊື່ອມໂຍງເຂົ້າໃນການວາງແຜນ ແລະ ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແຕ່ລະໄຕມາດ ແມ່ນເຫັນໄດ້ໃນຮູບຂ້າງລຸ່ມນີ້.

**ຮູບທີ 1: ຮອບວຽນການວາງແຜນ ແລະ ການປະຕິບັດການປະເມີນຜົນປະຈຳປີ ສຳລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025**




24 ຄາດວ່າຈະມີງົບປະມານການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາເພື່ອສະໜັບສະໜູນກິດຈະກຳນີ້.

## ໄຕມາດທີ 1: ໄລຍະການເຮັດລາຍງານ

ພະແນກສຶກສາທິການ ແລະ ກິລາ ແຂວງ, ບັນດາກົມຂັ້ນສູນກາງຈະສ້າງບົດລາຍງານຜົນງານປະຈໍາປີ ໂດຍອີງໃສ່ແຜນການທີ່ໄດ້ລະບຸໄວ້ໃນບາດກ້າວທີ 4 ຂ້າງເທິງ ແລະ ສອດຄ່ອງກັບໂຄງສ້າງຜົນໄດ້ຮັບຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ. ກົມກວດກາ, ຜ່ານເຄືອຂ່າຍຕິດຕາມ ແລະ ປະເມີນຜົນຂອງຕົນ, ຈະໃຫ້ການສະໜັບສະໜູນແກ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ເພື່ອພັດທະນາ ແລະ ລາຍງານຕໍ່ກັບຂອບຜົນໄດ້ຮັບ 5 ປີ ທີ່ສອດຄ່ອງກັບແຜນການຂອງຕົນເອງ ແລະ ໂຄງສ້າງຜົນໄດ້ຮັບລວມຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ. ກົມແຜນການຈະສັງລວມບົດລາຍງານເຫຼົ່ານີ້ ເຂົ້າເປັນບົດລາຍງານປະຈໍາປີຂອງຂະແໜງການສຶກສາ ແລະ ກິລາ. ບົດລາຍງານປະຈໍາປີນີ້ ອາດຈະປະກອບໄປດ້ວຍຂໍ້ມູນຈາກບົດວິໄຈຕ່າງໆ ແລະ ບົດລາຍງານສະເພາະດ້ານ ເຊັ່ນ: ບົດລາຍງານຂອງຄະນະກໍາມະການຈັດສັນຄູ ແລະ ບົດລາຍງານການປະເມີນຮ່ວມ (JSRM). ບົດລາຍງານປະຈໍາປີຂອງຂະແໜງການສຶກສາ ແລະ ກິລາ ຈະປະຕິບັດຕາມໂຄງສ້າງຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຄື: ການຈັດຕັ້ງປະຕິບັດນະໂຍບາຍພາຍໃຕ້ຜົນໄດ້ຮັບລະດັບກາງ, ພາຍໃຕ້ 8 ຜົນໄດ້ຮັບລະດັບສູງ, ພາຍໃຕ້ເປົ້າໝາຍທີ່ກໍານົດ. ຜົນການປະຕິບັດ ແລະ ຄວາມຄືບໜ້າພາຍໃນປີທຽບໃສ່ຕົວຊີ້ວັດ ແລະ ຄາດໝາຍ ທີ່ໄດ້ຕົກລົງກັນໃນລະດັບເປົ້າໝາຍ[25], ຜົນໄດ້ຮັບລະດັບສູງ[26] ແລະ ລະດັບຜົນໄດ້ຮັບລະດັບກາງ ຈະຖືກນໍາສະເໜີ ແລະ ສົນທະນາ ໂດຍສະເພາະບັນຫາທີ່ກ່ຽວຂ້ອງກັບການປະຕິບັດນະໂຍບາຍ, ກິດຈະກໍາ ແລະ ການໃຊ້ຈ່າຍ[27]. ບົດລາຍງານນີ້ ຈະສະທ້ອນໃຫ້ເຫັນເຖິງສິ່ງທ້າທາຍຂອງການຈັດຕັ້ງປະຕິບັດປະຈໍາປີ ແລະ ຈະສະເໜີວິທີການແກ້ໄຂ/ການປ່ຽນແປງສໍາລັບປີຕໍ່ໆໄປ, ອີງຕາມບົດລາຍງານຂອງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ. ບົດລາຍງານດັ່ງກ່າວຈະນໍາໃຊ້ລະບົບການລາຍງານແບບກໍານົດສັນຍາລັກສີ ຄືໄຟສັນຍານຈະລາຈອນ (Traffic light) ເພື່ອສື່ສານສະພາບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ທຽບໃສ່ຄາດໝາຍ, ຜົນໄດ້ຮັບລະດັບສູງ ແລະ ຄາດໝາຍຂອງຜົນໄດ້ຮັບລະດັບກາງ ແລະ ເຮັດໃຫ້ພາກສ່ວນກ່ຽວຂ້ອງ ສາມາດເນັ້ນໃສ່ ແລະ ລົງເລິກປະເດັນບັນຫາທີ່ຕ້ອງການໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025.

## ໄຕມາດທີ 2: ໄລຍະການທົບທວນທີ່ມີລັກສະນະຍຸດທະສາດ

ໂດຍໄດ້ຮັບການລາຍງານຈາກບົດລາຍງານປະຈໍາປີ, ກົມແຜນການກະກຽມຮ່າງຄາດໝາຍລະດັບຊາດ ແລະ ຄາດໝາຍສໍາລັບແຕ່ລະແຂວງໃນປີຕໍ່ໄປ ໂດຍຄໍານຶງເຖິງງົບປະມານທີ່ຄາດວ່າຈະໄດ້ຮັບ (ຂັ້ນຕອນ 1 ຂ້າງເທິງ). ບົດລາຍງານປະຈໍາປີລວມທັງຮ່າງແຜນປະຈໍາປີ ຈະຖືກນໍາໄປຜ່ານກອງປະຊຸມພາຍໃນກັບຂະແໜງການຍ່ອຍຕ່າງໆ, ຄະນະປະສານງານຂອງໜ່ວຍງານວິຊາການຕ່າງໆ ລວມທັງກອງປະຊຸມໜ່ວຍງານວິຊາການຂະແໜງການສຶກສາ ກ່ອນຈະໄປນໍາສະເໜີຢູ່ທີ່ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈໍາປີ. ບັນດາຄໍາຄິດເຫັນ ແລະ ຂໍ້ແນະນໍາຕ່າງໆຈະໄປນໍາສະເໜີ ແລະ ສົນທະນາໃນກອງປະຊຸມຜູ້ບໍລິຫານການສຶກສາປະຈໍາປີ. ກອງປະຊຸມປະຈໍາປີຈະປຶກສາຫາລືກ່ຽວກັບຜົນການຈັດຕັ້ງປະຕິບັດແຜນ ທີ່ໄດ້ລະບຸໃນບົດລາຍງານປະຈໍາປີ ແລະ ຄໍາແນະນໍາຈາກກອງປະຊຸມໜ່ວຍງານວິຊາການຂະແໜງການສຶກສາ ແລະ ນໍາໃຊ້ເປັນພື້ນຖານຫຼັກຖານໃນການກໍານົດເປັນມະຕິຂອງກອງປະຊຸມຢ່າງເປັນທາງການ ແລະ ເພື່ອປັບປ່ຽນບັນດາຂົງເຂດບູລິມະສິດ ຫຼື ຍຸດທະສາດ. ບົດລາຍງານປະຈໍາປີຂອງຂະແໜງການສຶກສາ ແລະ ກິລາ ແລະ ຜົນການປຶກສາຫາລືຕ່າງໆ ຈະເປັນບ່ອນອີງໃນການກໍານົດຄາດໝາຍ

---

[25] ແຜນພັດທະນາຂະແໜງການສຶກສາ ແລະ ກິລາ, ຂໍ້ທີ 3

[26] ແຜນພັດທະນາຂະແໜງການສຶກສາ ແລະ ກິລາ, ຂໍ້ທີ 6.1-6.8

[27] ນີ້ຈະສະແດງໃຫ້ເຫັນເຖິງການປ່ຽນແປງຂອງໂຄງສ້າງບົດລາຍງານປະຈໍາປີ (ASPR) ຈາກການອະທິບາຍໂດຍໃຊ້ສະຖິຕິຂອງແຕ່ລະຂະແໜງການຍ່ອຍ ໄປສູ່ເນື້ອໃນທີ່ວິເຄາະເຖິງນະໂຍບາຍຫຼາຍຂຶ້ນ. ບົດລາຍງານຈາກ TAC ແລະ JSRM ກໍ່ຈະປະຕິບັດຕາມການປ່ຽນແປງນີ້.

ແລະ ແຜນຄວາມຕ້ອງການດ້ານງົບປະມານຂອງທົ່ວຂະແໜງການ, ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ. ກອງປະຊຸມປະຈຳປີ ອາດຈະກຳນົດຂົງເຂດວຽກງານທີ່ເປັນຈຸດສຸມເພື່ອດຳເນີນການທົບທວນຮ່ວມ.

### ໄຕມາດທີ 3: ໄລຍະການດຳເນີນການການທົບທວນຮ່ວມ (JSRM)

ໃນໄລຍະການຈັດຕັ້ງປະຕິບັດ ການຕິດຕາມກວດກາລະດັບຊາດ ໃນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຈະສຸມໃສ່ການດຳເນີນການທົບທວນຮ່ວມ ເຊິ່ງແມ່ນກົມກວດກາເປັນເຈົ້າການໃນການຈັດຕັ້ງປະຕິບັດ. ອີງຕາມຜົນໄດ້ຮັບຂອງກອງປະຊຸມປະຈຳປີ ແລະ ການປຶກສາຫາລືຂອງໜ່ວຍງານວິຊາການຂະແໜງການສຶກສາ ກ່ຽວກັບເນື້ອໃນຂອງບົດລາຍງານປະຈຳປີຂອງຂະແໜງການສຶກສາ ແລະ ກິລາ, ໜ່ວຍງານວິຊາການຂະແໜງການສຶກສາ ຈະເລືອກເອົາຫົວຂໍ້ໃດໜຶ່ງສຳລັບການທົບທວນຮ່ວມ ເພື່ອຕິດຕາມກວດກາ ແລະ ລົງເລິກຫາສາເຫດພື້ນຖານທີ່ກໍ່ໃຫ້ເກີດສິ່ງທ້າທາຍ ແລະ /ຫຼື ປະເມີນລະດັບການຈັດຕັ້ງປະ ຕິບັດແຜນງານ ຫຼື ການປັບປ່ຽນນະໂຍບາຍທີ່ລະບຸໄວ້ໃນແຜນປະຈຳປີ. ຂອບເຂດຂອງການທົບທວນຮ່ວມ ອາດຈະປະກອບມີຫົວຂໍ້ທີ່ກ່ຽວ ຂ້ອງກັບການເງິນ. ການຕິດຕາມປະເມີນຮ່ວມ ຈະດຳເນີນໃນໄຕມາດທີ 3 ແລະ ຜົນການຄົ້ນພົບຂອງການປະເມີນຈະຖືກລວມເຂົ້າໃນບົດລາຍງານທີ່ຈະນຳສະເໜີ ແລະ ປຶກສາຫາລືໃນກອງປະຊຸມໜ່ວຍງານວິຊາການຂະແໜງ ການສຶກສາ. ຜົນການຄົ້ນພົບທີ່ສຳຄັນ ແລະ ຄຳເຫັນຂອງໜ່ວຍງານວິຊາການຂະແໜງການສຶກສາ ຈະຖືກເຜີຍແຜ່ໃຫ້ພາກສ່ວນທີ່ກ່ຽວຂ້ອງໃຫ້ທັນເວລາ ເພື່ອແຈ້ງໃຫ້ທັງພາກສ່ວນສູນກາງ ແລະ ທ້ອງຖິ່ນ ໄດ້ມີການທົບທວນ ແລະ ປະກອບເຂົ້າໃນບົດລາຍງານປະຈຳປີຂອງເຂົາເຈົ້າ. ບົດລາຍງານການທົບທວນຮ່ວມ ແລະ ຜົນການຄົ້ນພົບໃນບົດລາຍງານດັ່ງກ່າວ ຍັງຈະຖືກລວມເຂົ້າໃນບົດລາຍງານປະຈຳປີຂອງຂະແໜງການສຶກສາ ແລະ ກິລາ ເພື່ອໃຫ້ເຊື່ອມຕໍ່ກັບກອງປະຊຸມປະຈຳປີໃນປີຕໍ່ໄປ. ໂດຍຮັບຮູ້ເຖິງສິ່ງທ້າທາຍຕ່າງໆໃນການດຳເນີນການທົບທວນຮ່ວມທີ່ຜ່ານມາ, ການສະເໜີການທົບທວນຮ່ວມໃນອານາຄົດ ແມ່ນສອດຄ່ອງກັບກອງປະຊຸມປະຈຳປີ ແລະ ມີຈຸດປະສົງເພື່ອເປັນບ່ອນອີງໂດຍກົງ ແລະ ປະກອບສ່ວນໂດຍກົງ ຕໍ່ຂະບວນການກອງປະຊຸມທົບທວນປະຈຳປີຂອງຂະແໜງການ ແລະ ການພັດທະນາແຜນການປະຈຳປີຂອງສູນກາງ ແລະ ທ້ອງຖິ່ນ.

### ໄຕມາດທີ 4: ໄລຍະການສ້າງແຜນ

ໂດຍອີງໃສ່ຜົນໄດ້ຮັບຂອງກອງປະຊຸມປະຈຳປີ, ການຄົ້ນພົບຂອງການທົບທວນຮ່ວມ ແລະ ການປະຊຸມປຶກສາຫາລືຕ່າງໆ (ຂັ້ນຕອນ 2 ເຖິງ 4 ຂ້າງເທິງ), ບັນດາພາກສ່ວນຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນ ຈະສ້າງແຜນປະຈຳປີຂອງຕົນສຳລັບປີຕໍ່ໄປ. ສ່ວນທີ່ສຳຄັນຂອງຂະບວນການວາງແຜນນີ້ ກໍຄືການທົບທວນ ແລະ ປຶກສາຫາລືພາຍໃນ. ການທົບທວນ ແລະ ປຶກສາຫາລືນີ້ ແມ່ນຈະໄດ້ອີງໃສ່ການຕິດຕາມ, ກວດກາການຈັດຕັ້ງປະຕິບັດແຜນການຂອງປີປະຈຸບັນ ແລະ ຜົນທີ່ໄດ້ຮັບຂອງການຈັດຕັ້ງປະຕິບັດແຜນ. ຂະບວນການທົບທວນນີ້ ຍັງຈະນຳເອົາໄປປະກອບໃສ່ບົດລາຍງານປະຈຳປີຂອງຂະແໜງການສຶກສາ ແລະ ກິລາ ທີ່ຈະຕ້ອງໃຫ້ສຳເລັດໃນໄຕມາດທີ 1.

## 8.4. ໂຄງສ້າງຂອງການສະໜັບສະໜູນການຕິດຕາມ ແລະ ປະເມີນຜົນ

ໂຄງສ້າງຜົນໄດ້ຮັບໃນພາກຕໍ່ໄປນີ້ ໄດ້ກຳນົດຕົວຊີ້ບອກ ແລະ ແຫຼ່ງຂໍ້ມູນທີ່ກ່ຽວຂ້ອງ, ໃນລະດັບເປົ້າໝາຍ, ຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ. ພິເສດ ໂຄງສ້າງນີ້ ໄດ້ໃຫ້ບູລິມະສິດໃນການປັບປຸງ ແລະ ເພີ່ມປະສິດທິພາບການນຳໃຊ້ໂຄງສ້າງ ແລະ ລະບົບທີ່ມີຢູ່ແລ້ວເຊັ່ນ: EMIS ແລະ PBMIS ແລະ ຕົວຊີ້ບອກຂອງເປົ້າໝາຍການພັດທະນາແບບຍືນຍົງຈຳນວນໜຶ່ງ ເພື່ອໃຫ້ມັນສອດຄ່ອງກັບການລາຍງານກ່ຽວກັບ ຄວາມຄືບໜ້າໃນການຈັດຕັ້ງປະ ຕິບັດ SDG-4. ລະບົບ ແລະ ຂະບວນການຕິດຕາມພາຍໃນຢູ່ຂັ້ນແຂວງ ແລະ ຂັ້ນຂະແໜງການຍ່ອຍ ແມ່ນແຫຼ່ງຂໍ້ມູນທີ່ສຳຄັນ ໂດຍສະເພາະໃນການຕິດຕາມກວດກາກິດຈະກຳ, ການປະຕິບັດນະໂຍບາຍ ແລະ ຜົນໄດ້ຮັບໃນລະດັບກາງ. ນອກຈາກນີ້, ເຄືອຂ່າຍຕິດຕາມ ແລະ ປະເມີນຜົນທີ່ມີຢູ່ແລ້ວໃນລະດັບສູນກາງ ແລະ ແຂວງ ຈະມີ

ບົດບາດສຳຄັນໃນການສ້າງບົດລາຍງານປະຈຳປີຂອງຂະແໜງການຍ່ອຍ ກໍຄືບົດລາຍງານຂອງແຂວງທີ່ມີຄຸນນະພາບສູງ ເຊິ່ງສາມາດລວບລວມເຂົ້າໃນເນື້ອໃນຂອງບົດລາຍງານທີ່ສົມບູນແບບ.

### 8.5. ໂຄງສ້າງຂອງຜົນໄດ້ຮັບຂອງການຕິດຕາມ ແລະ ປະເມີນຜົນ

ໂຄງສ້າງຜົນໄດ້ຮັບຂອງການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນ ແມ່ນໄປຕາມໂຄງສ້າງຂອງ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ຄື: ມີ 1 ເປົ້າໝາຍ; 8 ຜົນໄດ້ຮັບໃນລະດັບສູງ; ຊຶ່ງແຕ່ລະຜົນໄດ້ຮັບລະດັບສູງ ກໍປະກອບມີຜົນໄດ້ຮັບລະດັບກາງທີ່ກ່ຽວຂ້ອງ. ຕົວຊີ້ວັດຂອງມັນໄດ້ຖືກຄັດເລືອກເພື່ອສະໜອງວິທີການທາງດ້ານວິຊາການ, ຮອບດ້ານ ແລະ ມີຈຸດປະສົງເພື່ອຕິດຕາມຄວາມຄືບໜ້າຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ໃນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ. ໃນບາງກໍລະນີຜົນໄດ້ຮັບລະດັບກາງທີ່ກ່ຽວຂ້ອງກັນ ໄດ້ຖືກຈັດເປັນກຸ່ມພາຍໃຕ້ຕົວຊີ້ບອກອັນດຽວ

**ຕາຕະລາງ 10: ຕົວຊີ້ບອກຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ**

(ເນື່ອງຈາກການລະບາດຂອງ COVID-19 ແລະ ຍັງບໍ່ທັນມີ ຂອບການເງິນໄລຍະກາງຈາກກະຊວງການເງິນ, ສະນັ້ນ ຈຶ່ງມີຄວາມບໍ່ແນ່ນອນກ່ຽວກັບງົບປະມານສຳລັບຂະແໜງການສຶກສາ ແລະ ກິລາ. ສະນັ້ນ, ຄາດໝາຍທີ່ກຳນົດນີ້ ເປັນພຽງການຄາດຄະເນເທົ່ານັ້ນ, ແລະ ຈະມີການປັບປຸງໃໝ່ ຫຼັງຈາກມີຂອບການເງິນໄລຍະກາງ)

| ຜົນໄດ້ຮັບ | ຕົວຊີ້ບອກ | ຂໍ້ມູນປີຖານ | ຄາດໝາຍ | ແຫຼ່ງຂໍ້ມູນ | ປພຍ |
|---|---|---|---|---|---|
| ເປົ້າໝາຍ: *"ພາຍໃນປີ 2025 ຂະແໜງການສຶກສາ ແລະ ກິລາ ຢູ່ ສປປລາວ ມີໂຄງສ້າງ ແລະ ມີຊັບພະຍາກອນທີ່ເໝາະສົມເພື່ອເຮັດໃຫ້ພົນລະເມືອງລາວທຸກຄົນ ເຂົ້າເຖິງການສຶກສາ ແລະ ກິລາ-ກາຍຍະກຳ ທີ່ມີຄຸນນະພາບ ເພື່ອໃຫ້ປະເທດຊາດໄດ້ຮັບຜົນປະໂຫຍດຈາກການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ແລະ ຊຸກຍູ້ເພື່ອບັນລຸການຈັດຕັ້ງປະຕິບັດເປົ້າໝາຍທີ 4 ການພັດທະນາແບບຍືນຍົງ.''* | 1. ອັດຕາຈົບຊັ້ນລວມຊັ້ນມັດທະຍົມຕອນຕົ້ນ (ມ.4)<br>- ຊາຍ<br>- ຍິງ<br>➢ ຈຳນວນັກຮຽນທີ່ເຂົ້າຮຽນໃນຂັ້ນ ມ.4<br>- ຊາຍ<br>- ຍິງ | - ຊາຍ 72,7%<br>- ຍິງ: 70,5%<br>- ຊາຍ: 46.603<br>- ຍິງ: 43.767 | - ຊາຍ 75%<br>- ຍິງ: 73%<br>- ຊາຍ: 39.814<br>- ຍິງ: 39.490 | EMIS | SDG4 |
| | 2. ເປີເຊັນຂອງນັກຮຽນ ປ.3 ທີ່ບັນລຸມາດຕະຖານຜົນການຮຽນ<br>- ວິຊາພາສາລາວ:<br>- ວິຊາຄະນິດສາດ:<br>3. ເປີເຊັນຂອງນັກຮຽນ ມ.4 ທີ່ບັນລຸມາດຕະຖານຜົນການຮຽນ<br>- ວິຊາພາສາລາວ:<br>- ວິຊາຄະນິດສາດ: | ປ.3<br>- ພາສາລາວ: 34%<br>- ຄະນິດສາດ: 18%<br>ມ.4<br>- ວິຊາພາສາລາວ: 28%<br>- ວິຊາຄະນິດສາດ: 8% | ປ.3<br>- ພາສາລາວ: 50%<br>- ຄະນິດສາດ: 30%<br>ມ.4<br>- ວິຊາພາສາລາວ: 40%<br>- ຄະນິດສາດ: 20% | ສວສ | |
| ຜົນໄດ້ຮັບລະດັບສູງທີ 1: ຈຳນວນນັກຮຽນທີ່ຈົບຈາກ ອະນຸບານຈົນຮອດ ມັດທະຍົມຕອນປາຍ ລວມທັງການສຶກສານອກໂຮງຮຽນ ເພີ່ມຂຶ້ນ ພ້ອມທັງມີຜົນໄດ້ຮັບດ້ານການຮຽນຮູ້ທີ່ດີຂຶ້ນ, ໂດຍສະ- | 4. ເປີເຊັນນັກຮຽນເຂົ້າຮຽນໃໝ່ ປ.1 ທີ່ຜ່ານ ການສຶກສາກ່ອນໄວຮຽນ<br>- ທົ່ວປະເທດ<br>- 40 ເມືອງ | - ທົ່ວປະເທດ: 9,8%<br>- 40 ເມືອງ: 58,7% | - ທົ່ວປະເທດ: 75%<br>- 40 ເມືອງ: 63,9% | EMIS | 4.1 |

| ຜົນໄດ້ຮັບ | ຕົວຊີ້ບອກ | ຂໍ້ມູນປີຖານ | ຄາດໝາຍ | ແຫຼ່ງຂໍ້ມູນ | ປພຍ |
|---|---|---|---|---|---|
| ເພາະແມ່ນການຮູ້ໜັງສື ແລະ ທັກສະ ການຄິດໄລ່ເລກ, ທັກສະຕະວັດທີ 21 ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ | - ເມືອງບໍ່ທຸກ<br>➢ ຈຳນວນເດັກອາຍຸ 5 ປີ ທີ່ໄດ້ຜ່ານ ການສຶກສາກ່ອນໄວຮຽນ<br>5. ອັດຕາຈົບຊັ້ນລວມຊັ້ນປະຖົມສຶກສາ<br>- ທົ່ວປະເທດ<br>- 40 ເມືອງ<br>- ເມືອບໍ່ທຸກ<br>➢ ຈຳນວນນັກຮຽນເລື່ອນຂຶ້ນ ປ.5<br>- ລວມ<br>- ຊາຍ<br>- ຍິງ<br>6. ອັດຕາເລື່ອນຈາກ ປ.5 ຫາ ມ.4<br>- ທົ່ວປະເທດ<br>- 40 ເມືອງ<br>- ເມືອງບໍ່ທຸກ | - ເມືອງບໍ່ທຸກ : 76,1%<br>109.684 ຄົນ<br>- ທົ່ວປະເທດ:100,4%<br>- 40 ເມືອງ: 75%<br>- ເມືອບໍ່ທຸກ 85,7%<br>- ລວມ: 136.644<br>- ຊາຍ: 66.685<br>- ຍິງ: 69.959<br>- ທົ່ວປະເທດ: 87,9%<br>- 40 ເມືອງ: 79,3%<br>- ເມືອງບໍ່ທຸກ: 89,7% | - ເມືອບໍ່ທຸກ 81,3%<br>122.621 ຄົນ.<br>- ທົ່ວປະເທດ: 100%<br>- 40 ເມືອງ: 100%<br>- ເມືອງບໍ່ທຸກ: 100%<br>- ລວມ: 144.819<br>- ຊາຍ: 71.686<br>- ຍິງ : 73.133<br>- ທົ່ວປະເທດ: 95%<br>- 40 ເມືອງ: 86,4%<br>- ເມືອງບໍ່ທຸກ:96,8% | | |
| | 7. ດັດຊະນີຄວາມສະເໝີພາບຍິງ-ຊາຍ<br>i) ການເຂົ້າຮຽນຂອງເດັກ ປ.1 ທີ່ຜ່ານການສຶກສາກ່ອນໄວຮຽນ<br>ii) ອັດຕາຈົບຊັ້ນລວມ ປະຖົມ;<br>iii) ອັດຕາຈົບຊັ້ນລວມ ມ.ຕົ້ນ;<br>iv) ອັດຕາເລື່ອນຊັ້ນຈາກ ປ.5 ຫາ ມ.ຕົ້ນ | - 1,02<br>- 1,00<br>- 0,95<br>- 0,97 | - 1,00<br>- 1,00<br>- 1,00<br>- 1,00 | EMIS | 4.5 |
| ຜົນໄດ້ຮັບລະດັບກາງ ທີ 1: ຫຼັກສູດສະບັບປັບປຸງໄດ້ຮັບການຈັດຕັ້ງປະຕິບັດໃນທຸກຊັ້ນຮຽນ | 8. ໂຮງຮຽນທີ່ອຸປະກອນການຮຽນ ສອດຄ່ອງກັບຫຼັກສູດໃໝ່ ໂດຍອີງໃສ່ສັດສ່ວນນັກຮຽນຕໍ່ປຶ້ມ ທີ່ໄດ້ຮັບຮອງ | ປ.1 ແລະ ປ.2 | ທຸກຊັ້ນຮຽນແຕ່ປ.1-ປ.5 ຂອງໂຮງຮຽນປະຖົມ ມີຄົບ | EMIS<br>ສວສ | |

| ຜົນໄດ້ຮັບ | ຕົວຊີ້ບອກ | ຂໍ້ມູນປີຖານ | ຄາດໝາຍ | ແຫຼ່ງຂໍ້ມູນ | ປພຍ |
|---|---|---|---|---|---|
| | | | | | |
| ຜົນໄດ້ຮັບລະດັບກາງ 2: ຜົນການຮຽນຂອງນັກຮຽນຕ້ອງໄດ້ຮັບການປະເມີນເປັນປະຈຳ ແລະ ຜົນການປະເມີນໄດ້ຖືກນຳໃຊ້ເພື່ອເປັນບ່ອນອີງໃນການປັບປຸງຜົນການຮຽນຂອງນັກຮຽນ | 9. ມີການປະເມີນຜົນການຮຽຮຂອງນັກຮຽນຢ່າງເປັນປະຈຳ | ASLO ປ.3 ປີ 2017<br>ASLO ປ.5 ປີ 2020<br>ASLO ມ.4 ປີ 2019 | ASLO ປ.3 ປີ 2023<br>ASLO ປ.5 ປີ 2025<br>ASLO ມ.4 ປີ 2024 | ສວສ | 4.1 |
| ຜົນໄດ້ຮັບລະດັບກາງ 3: ອັດຕາການເຂົ້າຮຽນໃໝ່ ແລະ ອັດຕາການເລື່ອນຊັ້ນໃນທຸກລະດັບເພີ່ມຂຶ້ນແນໃສ່ເຮັດໃຫ້ອັດຕາການຈົບຊັ້ນເພີ່ມຂຶ້ນ. | 10. ອັດຕາເຂົ້າຮຽນຂອງເດັກ 5 ປີ (ແຍກລະດັບຊາດ ແລະ 40 ເມືອງ)<br>11. ອັດຕາເຂົ້າຮຽນໃໝ່ສຸດທິປະຖົມ<br>- ສະເລ່ຍທົ່ວປະເທດ<br>- ສະເລ່ຍ 40 ເມືອງ<br>- ສະເລ່ຍ ເມືອງບໍ່ທຸກ<br>12. ອັດຕາປະລະຊັ້ນປະຖົມ<br>- ສະເລ່ຍທົ່ວປະເທດ<br>- ສະເລ່ຍ 40 ເມືອງ<br>- ສະເລ່ຍ ເມືອງບໍ່ທຸກ | - ທົ່ວປະເທດ: 26%<br>- 40 ເມືອງ: 29%<br><br>- ທົ່ວປະເທດ: 98,5%<br>- 40 ເມືອງ: 95,5%<br>- ເມືອງບໍ່ທຸກ 98,8%<br><br>- ທົ່ວປະເທດ: 4,3%<br>- 40 ເມືອງ: 7,1%<br>- ເມືອງບໍ່ທຸກ : 3,4% | - ທົ່ວປະເທດ: 35%<br>- 40 ເມືອງ: 40%<br><br>- ທົ່ວປະເທດ: 98,9%<br>- 40 ເມືອງ: 95,9%<br>- ເມືອງບໍ່ທຸກ 92,2%<br><br>- ທົ່ວປະເທດ: 2,1%<br>- 40 ເມືອງ: 3,4%<br>- ເມືອງບໍ່ທຸກ: 1,6% | EMIS | 4.1 |
| ຜົນໄດ້ຮັບລະດັບກາງ 4: ສົ່ງເສີມການຂະຫຍາຍຫ້ອງຝຶກອົບຮົມອາຊີວະ ເພື່ອພັດທະນາທັກສະໃຫ້ແກ່ນັກຮຽນຈົບຊັ້ນ ມັດທະຍົມຕອນປາຍ | 13. ຈຳນວນໂຮງຮຽນຊົນເຜົ່າທີ່ສອນສາມັນວິຊາຊີບ | 8 ແຫ່ງ | 11 ແຫ່ງ | ກົມສາມັນສຶກສາ | 4.3 |
| ຜົນໄດ້ຮັບລະດັບກາງ 5: ຫຼຸດຜ່ອນຄວາມແຕກໂຕນທາງດ້ານຊັບພະຍາກອນ ລະຫວ່າງ ເຂດທີ່ດ້ອຍໂອກາດ ແລະ ເຂດທີ່ມີໂອກາດດີກວ່າ ໂດຍຜ່ານການສ້າງຕັ້ງກຸ່ມໂຮງຮຽນ | 14. ເປີເຊັນຂອງໂຮງຮຽນປະຖົມທີ່ມີການຈັດສັນຄູສອດຄ່ອງຫຼາຍກວ່າ 80% ທຽບໃສ່ ຫຼັກການໃນການຈັດສັນຄູ<br>- ທົ່ວປະເທດ<br>- 40 ເມືອງ | - ທົ່ວປະເທດ: 66,7%<br>- 40 ເມືອງ: 47,7% | - ທົ່ວປະເທດ: 75%<br>- 40 ເມືອງ: 69,5% | EMIS | 4.5 |

| ຜົນໄດ້ຮັບ | ຕົວຊີ້ບອກ | ຂໍ້ມູນປີຖານ | ຄາດໝາຍ | ແຫຼ່ງຂໍ້ມູນ | ປພຍ |
|---|---|---|---|---|---|
| | - ເມືອງບໍ່ທຸກ | - ເມືອງບໍ່ທຸກ: 74,6% | - ເມືອງບໍ່ທຸກ: 83,6% | | |
| ຜົນໄດ້ຮັບລະດັບສູງທີ 2: ຈຳນວນຄູ ແລະ ຜູ້ອຳນວຍການໂຮງຮຽນ ທີ່ມີຄວາມຮູ້ຄວາມສາມາດສອດຄ່ອງກັບມາດຕະຖານການສິດສອນ ທີ່ໄດ້ກຳນົດຜ່ານມາ ເພີ່ມຂຶ້ນ ຊຶ່ງສາມາດບອກເຖິງການພັດທະນາວິຊາຊີບ ໂດຍຜ່ານການປະເມີນການປະຕິບັດວຽກງານຢ່າງເປັນປົກກະຕິ. | 15. ເປີເຊັນຂອງຄູປະຈຳການທີ່ໄດ້ມາດຕະຖານ (ທຽບໃສ່ມາດຕະຖານ)<br>- ຊັ້ນອະນຸບານ<br>- ຊັ້ນປະຖົມ<br>- ຊັ້ນມັດທະຍົມ | - ບໍ່ມີຂໍ້ມູນ<br>- ບໍ່ມີຂໍ້ມູນ<br>- ບໍ່ມີຂໍ້ມູນ | - >80%<br>- >80%<br>- >80% | ກົມສ້າງຄູ | 4.c |
| ຜົນໄດ້ຮັບລະດັບກາງທີ 1: ຄູສອນມີຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດຫຼັກສູດໃໝ່ ໂດຍຜ່ານການຊ່ວຍເຫຼືອຈາກວິຊາການກຸ່ມໂຮງຮຽນ ແລະ ຄູສຶກສານິເທດ | 16. ເປີເຊັນຄູປະຈຳການ ທີ່ໄດ້ຮັບການຝຶກອົບຮົມແຕ່ລະປີ<br>- ຊັ້ນອະນຸບານ<br>- ຊັ້ນປະຖົມ<br>- ຊັ້ນມັດທະຍົມ | - 20%<br>- 20%<br>- 20% | - 20%<br>- 20%<br>- 20% | ກົມສ້າງຄູ | |
| ຜົນໄດ້ຮັບລະດັບກາງ 2: ຫຼັກສູດສ້າງຄູໄດ້ຮັບການທົບທວນຄືນ ເພື່ອໃຫ້ສອດຄ່ອງກັບຫຼັກສູດການຮຽນ-ການສອນໃໝ່ໃນໂຮງຮຽນ | 17. ຊັ້ນການສຶກສາທີ່ມີຫຼັກສູດສ້າງຄູສອດຄ່ອງກັບຫຼັກສູດໃນໂຮງຮຽນ | ປະຖົມ | - ກ່ອນໄວຮຽນ<br>- ປະຖົມ<br>- ມັດທະຍົມ | ກົມສ້າງຄູ | |
| ຜົນຮັບໄລຍະກາງ 3: ລະບົບການປະເມີນຜົນການປະຕິບັດໜ້າທີ່ຂອງຄູ ພ້ອມດ້ວຍເຄື່ອງມືການປະເມີນຜົນໄດ້ຮັບການປັບປຸງ, ໂດຍຕິດພັນກັບມາດຕະຖານການສິດສອນ, ພ້ອມທັງໄດ້ຮັບການຈັດຕັ້ງປະຕິບັດ ເພື່ອກຳນົດຄວາມຕ້ອງການທີ່ເປັນບູລິມະສິດ ໃນການຝຶກອົບຮົມຄູ ສຳລັບລະດັບການສຶກສາກ່ອນໄວຮຽນ, ປະຖົມ ແລະ ມັດທະຍົມສຶກສາ. | 18. ຊັ້ນການສຶກສາທີ່ມີມາດຖານສຳລັບຄູສອນ ແລະ ເຄື່ອງມືໃນການປະເມີນຄູ | ປະຖົມ | - ກ່ອນໄວຮຽນ<br>- ປະຖົມ<br>- ມັດທະຍົມ | ກົມສ້າງຄູ | |

| ຜົນໄດ້ຮັບ | ຕົວຊີ້ບອກ | ຂໍ້ມູນປີຖານ | ຄາດໝາຍ | ແຫຼ່ງຂໍ້ມູນ | ປພຍ |
|---|---|---|---|---|---|
| ຜົນຮັບໄລຍະກາງທີ 4: ສະຖາບັນສ້າງຄູ ໄດ້ຖືກຍົກລະດັບໃຫ້ເປັນສູນກາງໃນການກໍ່ສ້າງຄູສອນ, ຝຶກອົບຮົມຄູປະຈຳການ ໃນທຸກລະດັບ ແຕ່ອະນຸບານຮອດຊັ້ນມັດທະຍົມສຶກສາ ພ້ອມທັງເປັນສູນກາງໃນການຝຶກອົບຮົມຄູສຶກສານິເທດ. | 19. ຈຳນວນສະຖາບັນສ້າງຄູ ທີ່ສາດມາດສະໜອງການກໍ່ສ້າງ ແລະ ຝຶກອົບຮົມຄູປະຈຳການ ໃນທຸກລະດັບ | ຍັງບໍ່ມີ | ທັງໝົດ 8 ສະຖາບັນ | ກົມສ້າງຄູ | |
| ຜົນໄດ້ຮັບລະດັບກາງທີ 5: ຂີດຄວາມສາມາດຂອງຜູ້ອຳນວຍການໂຮງຮຽນ ມີຄວາມເຂັ້ມແຂງຂຶ້ນ ເພື່ອໃຫ້ສາມາດປັບປຸງການຈັດຕັ້ງ ການຮຽນ-ການສອນໃນໂຮງຮຽນຂອງເຂົາເຈົ້າ | 20. ຊັ້ນການສຶກສາທີ່ມີມາດຖານ ແລະ ເຄື່ອງມື ສຳລັບປະເມີນຜູ້ອຳນວຍການໂຮງຮຽນ | ບໍ່ມີ | - ກ່ອນໄວຮຽນ<br>- ປະຖົມ<br>- ມັດທະຍົມ | ກົມສ້າງຄູ, ກົມສາມັນ ກົມຈັດຕັ້ງ ແລະ ພະນັກງານ | |
| ຜົນໄດ້ຮັບລະດັບສູງທີ 3: ໂຮງຮຽນທຸກແຫ່ງ ມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະ ນຸດພຽງພໍ ເພື່ອໃຫ້ສາມາດເຮັດວຽກໄດ້ຢ່າງມີປະສິດທິຜົນ, ພ້ອມທັງຂີດຄວາມສາມາດໃນການຄຸ້ມຄອງ ເພື່ອຊ່ວຍປັບປຸງໃຫ້ຜົນການຮຽນຂອງນັກຮຽນດີຂຶ້ນ. | | | | | |
| ຜົນຮັບໄລຍະກາງທີ 1: ມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການການສຶກສາ ສຳລັບການສຶກສາກ່ອນໄວຮຽນ ແລະ ມັດທະຍົມສຶກສາ ໄດ້ຮັບການພັດທະນາ, ທົດລອງ ແລະ ຈັດຕັ້ງປະຕິບັດພາຍໃຕ້ຂອບ ທີ່ກຳນົດມາດຕະຖານຂັ້ນພື້ນຖານຂອງທຸກຊັ້ນການສຶກສາຢູ່ໃນລະດັບໂຮງຮຽນ | 21. ຊັ້ນການສຶກສາ ທີ່ມີມາດຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ ແລະ ນິຕິກຳທີ່ກ່ຽວຂ້ອງ | ປະຖົມ | - ກ່ອນໄວຮຽນ<br>- ປະຖົມ<br>- ມັດທະຍົມ | ສູນປະກັນຄຸນນະພາບການສຶກສາ | |

| ຜົນໄດ້ຮັບ | ຕົວຊີ້ບອກ | ຂໍ້ມູນປີຖານ | ຄາດໝາຍ | ແຫຼ່ງຂໍ້ມູນ | ປພຍ |
|---|---|---|---|---|---|
| ຜົນໄດ້ຮັບລະດັບກາງທີ 2: ມີຂະບວນການປະເມີນຕົນເອງ ແລະ ການວາງແຜນພັດທະນາໂຮງຮຽນແບບຍືນຍົງ (ທີ່ນຳໃຊ້ FQS) ເພື່ອເປັນບ່ອນອີງໃນການວາງແຜນຂັ້ນເມືອງ ແລະ ການກຳນົດເປົ້າໝາຍການສະໜັບສະໜູນ ລວມທັງການຈັດສັນຄູ ແລະ ອຸປະກອນການຮຽນ | 22. ມີນະໂຍບາຍ ການບໍລິຫານທີ່ອີງໃສ່ໂຮງຮຽນເປັນຫຼັກ ທີ່ໄດ້ກຳນົດພາລະບົດບາດຂອງໂຮງຮຽນ, ເມືອງ, ແຂວງ ແລະ ສູນກາງ ລວມທັງວິທີການຈັດຕັ້ງປະຕິບັດໃນໄລຍະຍາວ. | ຍັງບໍ່ມີ | 2022 | ກົມຈັດຕັ້ງ ແລະ ພະນັກງານ | |
| ຜົນໄດ້ຮັບລະດັບກາງ 3: ເງິນບໍລິຫານໂຮງຮຽນ (ສູດຄິດໄລ່ ແລະ ລາຍຈ່າຍທີ່ມີສິດໃຊ້) ສອດຄ່ອງກັບຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ໃຫ້ເຊື່ອມໂຍງກັບມາດຕະຖານຄຸນນະພາບຂັ້ນພື້ນຖານ (FQS) | 23. ສູດການຄິດໄລ່ ເງິນບໍລິຫານໂຮງຮຽນ ແລະ ຄູ່ມືໃນການຈັດຕັ້ງປະຕິບັດໄດ້ຮັບການທົບທວນ ແລະ ປັບປຸງ | ຍັງໃຊ້ສະບັບເດີມ | 2022 | ຄະນະກຳມະການ ແຜນການ ແລະ ການເງິນ | |
| ຜົນໄດ້ຮັບລະດັບກາງ 4: ການຈັດສັນຄູ ສອດຄ່ອງຕາມຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ໃຫ້ເຊື່ອມໂຍງກັບມາດຕະຖານຄຸນນະພາບຂັ້ນພື້ນຖານ (FQS) | 24. ເປີເຊັນຂອງໂຮງຮຽນປະຖົມ ທີ່ມີການຈັດສັນຄູ ສອດຄ່ອງຫຼາຍກວ່າ 80% ທຽບໃສ່ ຫຼັກການໃນການຈັດສັນຄູ | 66,7% | 75% | EMIS | |
| ຜົນໄດ້ຮັບລະດັບກາງ 5: ການຈັດສັນປຶ້ມແບບຮຽນ, ຄູ່ມືຄູ ແລະ ອຸປະກອນການຮຽນ ສອດຄ່ອງຕາມຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ໃຫ້ເຊື່ອມໂຍງກັບມາດຕະຖານຄຸນນະພາບຂັ້ນພື້ນຖານ (FQS) | 25. ເປີເຊັນຂອງໂຮງຮຽນທີ່ມີການຈັດສັນປຶ້ມແບບຮຽນ ສອດຄ່ອງກັບນະໂຍບາຍໃນການຈັດສັນປຶ້ມ ສູງກວ່າ 80% | ປ.1 ແລະ ປ.2 | ທຸກຂັ້ນຮຽນ ແຕ່ ປ.1-ປ.5 | EMIS | |
| ຜົນໄດ້ຮັບລະດັບກາງທີ 6: ທຸກໂຮງຮຽນຕ້ອງໄດ້ຮັບການສະໜັບສະໜູນ ເພື່ອໃຫ້ມີສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມໃນລະດັບພື້ນຖານ | 26. ເປີເຊັນຂອງໂຮງຮຽນທີ່ມີສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ<br>- ກ່ອນໄວຮຽນ<br>- ປະຖົມ | - 77%<br>- 76% | - 80%<br>- 80% | EMIS | 4.a |

| ຜົນໄດ້ຮັບ | ຕົວຊີ້ບອກ | ຂໍ້ມູນປີຖານ | ຄາດໝາຍ | ແຫຼ່ງຂໍ້ມູນ | ປພຍ |
|---|---|---|---|---|---|
| | - ມັດທະຍົມ | - 88% | - 90% | | |
| ຜົນໄດ້ຮັບລະດັບສູງທີ 4: ອັດຕາການຮູ້ໜັງສືໃນກຸ່ມຜູ້ໃຫຍ່ ແລະ ໄວໜຸ່ມເພີ່ມຂຶ້ນ ພ້ອມທັງຫຼຸດຜ່ອນຄວາມແຕກໂຕນກັນ ລະຫວ່າງເພດ, ເຜົ່າ, ຖານະດ້ານເສດ ຖະກິດ ແລະ ທີ່ຕັ້ງພູມສັນຖານ. | 27. ອັດຕາການຮູ້ໜັງສືຂອງປະຊາກອນ 15-24 ປີ<br>- ຊາຍ<br>- ຍິງ | - 84,6%<br>- 76,5% | - 94,0%<br>- 88,0% | ການສໍາຫຼວດພົນລະເມືອງ | 4.6 |
| ຜົນໄດ້ຮັບລະດັບກາງ 1: ອັດຕາເຂົ້າຮຽນໃໝ່ ແລະ ອັດຕາເລື່ອນຂັ້ນເພີ່ມຂຶ້ນ ໃນແຕ່ລະຊັ້ນສໍາລັບການສຶກສານອກໂຮງຮຽນ | 28. ຈໍານວນຜູ້ທີ່ຮຽນຈົບຈາກ ການສຶກສາທຽບເທົ່າຂອງລະບົບການສຶກສານອກໂຮງຮຽນ | 276.000 ຄົນ | 226.000 ຄົນ | ກົມການສຶກສານອກໂຮງຮຽນ | 4.6 |
| ຜົນໄດ້ຮັບລະດັບກາງ 2: ມີການລິງຕິດຕາມການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ຂອງການສຶກສານອກໂຮງຮຽນ ໂດຍສຸມເອົາກຸ່ມຕົວຢ່າງເພື່ອປະເມີນຜົນກະທົບໄລຍະຍາວກ່ຽວກັບການຮູ້ໜັງສືຂອງໄວໜຸ່ມ.<br>ຜົນໄດ້ຮັບລະດັບກາງ 3: ການບໍລິການ ການສຶກສານອກໂຮງຮຽນ ແລະ ໂຄງປະກອບຂອງການສຶກສານອກໂຮງຮຽນ ຕ້ອງປະກອບສ່ວນໃຫ້ອັດຕາການຮູ້ໜັງສືຂອງໄວໜຸ່ມ ແລະ ຜູ້ໃຫຍ່ເພີ່ມຂຶ້ນ ແລະ ພ້ອມທັງ ສົ່ງເສີມສູນການສຶກສານອກໂຮງຮຽນ ແລະ ສູນການຮຽນຮູ້ຊຸມຊົນ ຢູ່ຂັ້ນເມືອງ ແລະ ຂັ້ນບ້ານ. | 29. ມີການປະເມີນຜົນຂອງການຈັດຕັ້ງປະຕິບັດຫຼັກສູດ ການລຶບລ້າງຄວາມບໍ່ຮູ້ໜັງສື ແລະ ຍົກລະດັບການຮູ້ໜັງສື | ຍັງບໍ່ມີ | 2 ຄັ້ງ | ສວສ ແລະ ສູນການສຶກສານອກໂຮງຮຽນ | |
| ຜົນໄດ້ຮັບລະດັບສູງທີ 5: ຄຸນນະພາບ ແລະ ຈໍານວນນັກຮຽນທີ່ອອກຈາກລະບົບ ກ່ອນຈົບການສຶກສາຂັ້ນພື້ນຖານ ແລະ ຜູ້ທີ່ຈົບການສຶກສາຫຼັງຂັ້ນພື້ນຖານທີ່ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ | 30. ຈໍານວນນັກຮຽນທີ່ເຂົ້າຮຽນໃນຂັ້ນ ມ. 7<br>31. ຈໍານວນນັກຮຽນທັງໝົດທີ່ເຂົ້າຮຽນໃນ:<br>- ອາຊີວະສຶກສາ | - 65.462<br>- 52.252 | - 62.332<br>- 80.000 | EMIS/ກົມສາມັນສຶກສາ ກົມອາຊີວະສຶກສາ ແລະ | 4.3<br>4.4 |

| ຜົນໄດ້ຮັບ | ຕົວຊີ້ບອກ | ຂໍ້ມູນປີຖານ | ຄາດໝາຍ | ແຫຼ່ງຂໍ້ມູນ | ປພຍ |
|---|---|---|---|---|---|
| ຕ່າງປະເທດ ສອດຄ່ອງກັບຄວາມຕ້ອງການ ຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX ແລະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ | - ການສຶກສາຊັ້ນສູງ | - 36.144 | - 59.000 | ກົມການສຶກສາຊັ້ນສູງ | |
| ຜົນໄດ້ຮັບລະດັບກາງທີ 1: ຄຸນນະພາບຂອງການຮຽນ-ການສອນໃນຊັ້ນມັດທະຍົມສຶກສາຕອນປາຍ ໄດ້ຮັບການປັບປຸງ ເພື່ອສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ການສຶກສາຊັ້ນສູງ | 32. ຈຳນວນໂຮງຮຽນມັດທະຍົມປາຍ/ສົມບູນ ທີ່ໄດ້ຕາມມາດຕະຖານຂອງໂຮງຮຽນຕົວແບບ | 0 | 18 | ກົມສາມັນສຶກສາ | |
| ຜົນໄດ້ຮັບລະດັບກາງ 2: ຈຳນວນ ແລະ ຄຸນນະພາບຂອງນັກຮຽນທີ່ຈົບຈາກສະຖາບັນສ້າງຄູ ສາຍວິຊາວິທະຍາສາດທຳມະຊາດ ໄດ້ຮັບການປັບປຸງດີຂຶ້ນ ແນໃສ່ ເພື່ອປັບປຸງການຮຽນ-ການສອນວິທະຍາສາດທຳມະຊາດໃນຊັ້ນມັດທະຍົມ | 33. ຈຳນວນສະຖາບັນສ້າງຄູທີ່ມີສິ່ງອຳນວຍຄວາມສະດວກດ້ານວິທະຍາສາດທຳມະຊາດທີ່ເໝາະສົມ | 0 | 8 | ກົມສ້າງຄູ | |
| ຜົນໄດ້ຮັບລະດັບກາງ 3: ຈຳນວນນັກຮຽນທີ່ຮຽນຈົບຫຼັກສູດກະສິກຳ, ການບໍລິການ ແລະ ອຸດສະຫະກຳ ຢູ່ສາຍອາຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບເພີ່ມຂຶ້ນ ດ້ວຍຜົນການຮຽນທີ່ດີຂຶ້ນສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ | 34. ຈຳນວນນັກສຶກສາ ທີ່ຈົບອອກຈາກ ສະຖາບັນອາຊີວະສຶກສາໃນແຕ່ລະປີ | ຫຼາຍກວ່າ 15.000 ຄົນ | ຫຼາຍກວ່າ 20.000 ຄົນ | ກົມອາຊີວະສຶກສາ | |
| ຜົນໄດ້ຮັບລະດັບກາງ ທີ 4: ຫຼັກສູດການຮຽນໃນສາຍອາຊີວະສຶກສາ ໄດ້ຮັບການປັບປຸງເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການ ທີ່ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX | | | | | |

| ຜົນໄດ້ຮັບ | ຕົວຊີ້ບອກ | ຂໍ້ມູນປີຖານ | ຄາດໝາຍ | ແຫຼ່ງຂໍ້ມູນ | ປພຍ |
|---|---|---|---|---|---|
| ຜົນໄດ້ນຮັບໄລຍະກາງ ທີ 5: ຄຸນນະພາບຂອງຫຼັກສູດອາຊີວະສຶກສາໄດ້ຮັບການປັບປຸງ | | | | | |
| ຜົນໄດ້ນຮັບໄລຍະກາງທີ 6: ຄຸນນະພາບຂອງຄູສອນໃນສະຖາບັນອາຊີວະສຶກສາໄດ້ຮັບການປັບປຸງດີຂຶ້ນ | | | | | |
| ຜົນໄດ້ຮັບລະດັບກາງທີ 7: ສ້າງຄວາມເຂັ້ມແຂງດ້ານການຮ່ວມມືສຳລັບວຽກງານອາຊີວະສຶກສາ ໃນລະ ດັບຊາດ ແລະ ລະດັບທ້ອງຖິ່ນກັບອົງການຈັດຕັ້ງຂອງລັດ,ເອກະຊົນ ແລະ ອົງການຈັດຕັ້ງສາກົນ. | | | | | |
| ຜົນໄດ້ຮັບລະດັບກາງທີ 8: ລະບົບການບໍລິຫານ ແລະ ຄຸ້ມຄອງອາຊີວະສຶກສາ ມີຄວາມເຂັ້ມແຂງ | | | | | |
| ຜົນໄດ້ຮັບລະດັບກາງທີ 9: ຂອບວຸດທິການສຶກສາແຫ່ງຊາດ ໄດ້ກວມເອົາວຸດທິການສຶກສາໃນການສຶກສານອກໂຮງຮຽນ ແລະ ອາຊີວະສຶກສາ ພ້ອມທັງສອດຄ່ອງກັບຂອບວຸດທິຂອງ ອາຊຽນ. | 35. ຂອບວຸດທິການຝຶກອົບຮົມວິຊາຊີບໃນໂຮງຮຽນ ແລະ ນອກໂຮງຮຽນ ມີການເຊື່ອມໂຍງກັນຢ່າງເປັນທາງການ | ຍັງບໍ່ມີ | ສຳເລັດ | ກົມອາຊີວະສຶກສາ ແລະ ກົມການສຶກສານອກໂຮງຮຽນ | |
| ຜົນໄດ້ຮັບລະດັບກາງ ທີ 10: ການຮຽນ-ການສອນຢູ່ລະດັບມະຫາວິທະຍາໄລ ແລະ ການຄົ້ນຄວ້າວິທະຍາສາດໃນໂຊງເຂດບູລິມະສິດຂອງແຜນ 9, ລວມທັງສາຍວິທະຍາສາດທຳມະຊາດ, ວິສາວະກຳ ແລະ ເທັກໂນໂລຊີ ໄດ້ຮັບການປັບປຸງໃຫ້ເຂັ້ມແຂງຂຶ້ນ. | 36. ຈຳນວນນັກສຶກສາສາຍວິທະຍາສາດທຳມະຊາດ, ວິສາວະກຳ ແລະ ເທັກໂນໂລຊີ ທີ່ຈົບອອກຈາກ ມະຫາວິທະຍາໄລ | ຫຼາຍກວ່າ 2.000 ຄົນ | ຫຼາຍກວ່າ 4.000 ຄົນ | ກົມການສຶກສາຊັ້ນສູງ | |

| ຜົນໄດ້ຮັບ | ຕົວຊີ້ບອກ | ຂໍ້ມູນປີຖານ | ຄາດໝາຍ | ແຫຼ່ງຂໍ້ມູນ | ປພຍ |
|---|---|---|---|---|---|
| ຜົນໄດ້ຮັບໄລຍະການທີ 11: ມະຫາວິທະຍາໄລ ແລະ ໜ່ວຍງານປະກັນຄຸນນະພາບ ຕ້ອງໄດ້ມີການປະເມີນຕົນເອງປະຈຳປີ ພ້ອມທັງມີການປະເມີນພາຍນອກ ທຸກ ໆ 5 ປີ. | 37. ຈຳນວນສະຖາບັນການສຶກສາຊັ້ນສູງ ທີ່ໄດ້ຕາມມາດຕະຖານປະກັນຄຸນນະພາບ | ມີແຕ່ ມຊ | ທັງ 4 ມະຫາວິທະຍາໄລ | ກົມການສຶກສາຊັ້ນສູງ | |
| ຜົນໄດ້ຮັບລະດັບສູງທີ 6: ຂະແໜງການສຶກສາໄດ້ມີການຈັດຕັ້ງ, ການຄຸ້ມຄອງ, ການຈັດສັນຊັບພະຍາກອນ, ການຕິດຕາມ ແລະ ການປະເມີນຜົນ ຢູ່ແຕ່ລະຂັ້ນຢ່າງເໝາະສົມ ເພື່ອປັບປຸງການປະຕິບັດໜ້າທີ່ຂອງຂະແໜງການຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ | | | | | |
| ຜົນໄດ້ຮັບລະດັບກາງ 1: ໂຄງຮ່າງການຈັດຕັ້ງຂອງກະຊວງສຶກສາທິການ ແລະ ກິລາ ໃນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ຮັບການປັບປຸງໃຫ້ດີຂຶ້ນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດ ບັນດານະໂຍບາຍ ແລະ ຍຸດທະສາດ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ລວມທັງການບັນຈຸ ວຽກງານການບໍລິຫານທີ່ອີງໃສ່ໂຮງຮຽນເປັນຫຼັກເຂົ້າໃນໂຄງຮ່າງການຈັດຕັ້ງ | 38. ກົງຈັກການຈັດຕັ້ງ ແຕ່ສູນກາງ ຮອດທ້ອງຖິ່ນໄດ້ຮັບການປັບປຸງ ພ້ອມທັງມີການປັບປຸງພາລະບົດບາດໃຫ້ສອດຄ່ອງກວ່າເກົ່າ | ກຳລັງດຳເນີນການ | ສຳເລັດ | ກົມຈັດຕັ້ງ ແລະ ພະນັກງານ | |
| ຜົນໄດ້ຮັບລະດັບກາງທີ 2: ຍຸດທະສາດການພັດທະນາຊັບພະຍາກອນມະນຸດ ຂອງຂະແໜງການສຶກສາໄດ້ຮັບການຈັດຕັ້ງປະຕິບັດ, ລວມທັງການຈັດສັນບຸກຄະລາກອນຂອງຫ້ອງການສຶກສາ ແລະ ກິລາເມືອງ ແລະ ພະແນກສຶກສາ ແລະ ກິລາ ແຂວງ ແມ່ນອີງຕາມຄວາມຕ້ອງການ ແລະ ສ້າງຄວາມເຂັ້ມແຂງ | 39. ຈຳນວນຂອງຜູ້ບໍລິຫານການສຶກສາ ທີ່ໄດ້ຮັບການຝຶກອົບຮົມ ແລະ ຍົກລະດັບດ້ານການບໍລິຫານ ແລະ ຄຸ້ມຄອງການສຶກສາ | ບໍ່ມີຂໍ້ມູນ | 20% ໃນແຕ່ລະປີ | | |

| ຜົນໄດ້ຮັບ | ຕົວຊີ້ບອກ | ຂໍ້ມູນປີຖານ | ຄາດໝາຍ | ແຫຼ່ງຂໍ້ມູນ | ປພຍ |
|---|---|---|---|---|---|
| ທີ່ເໝາະສົມ ແລະ ພຽງພໍໃນການປະຕິບັດພາລະບົດບາດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນໜ້າວຽກ ແລະ ຕຳແໜ່ງງານ | | | | | |
| ຜົນໄດ້ຮັບລະດັບກາງທີ 3: ບັນດາຄະນະກຳມະການປະຕິບັດງານ (ຄະນະກຳມະການຈັດສັນຄູ ແລະ ຄະ ນະກຳມະການແຜນການ ແລະ ການເງິນ) ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ມີຄວາມເຂັ້ມແຂງໂດຍ ນຳໃຊ້ຂໍ້ມູນອ້າງອີງຈາກ ແຜນງົບປະມານປະຈຳປີ (ASCEP). ຜົນການການປະເມີນຜົນການຮຽນຂອງນັກຮຽນ ແລະ ຂໍ້ມູນຈາກ EMIS ໄດ້ຖືກນຳໃຊ້ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ຍຸດທະສາດຂອງ ESSDP | 40. ຄະນະກຳມະການແຜນການ ແລະ ການເງິນ ແລະ ຄະນະກຳມະການຈັດສັນຄູທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ຮັບການສ້າງຕັ້ງຂຶ້ນ ແລະ ຈັດຕັ້ງປະຕິບັດຕາມພາລະບົດບາດຢ່າງເປັນຮູບປະທຳ | ມີແຕ່ຂັ້ນສູນກາງ | ທັງສູນກາງ ແລະ ທ້ອງຖິ່ນ | ຄະນະກຳມະການແຜນການ ແລະ ການເງິນ | |
| ຜົນໄດ້ຮັບລະດັບກາງ 4: ຂອບຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ 2021-2025 ໄດ້ຮັບການຈັດຕັ້ງປະຕິບັດໃນແຕ່ລະປີ | 41. ຜົນລາຍງານ ການຕິດຕາມປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາ ຂະແໜງການສຶກສາ ແລະ ກິລາ ໄດ້ສະເໜີຢູ່ກອງປະຊຸມປະຈຳປີແຕ່ລະປີ | ປີລະຄັ້ງ | ປີລະຄັ້ງ | ກົມກວດກາ | |
| ຜົນໄດ້ຮັບລະດັບສູງທີ 7: ຄວາມແຕກໂຕນຫຼຸດລົງ ໂດຍຜ່ານແຜນການເງິນ ທີ່ສະໜັບສະໜູນຄາດໝາຍຜົນໄດ້ຮັບທີ່ກຳນົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ ພ້ອມທັງພິຈາລະນາເຖິງຄວາມສາມາດໃນການຈັດຕັ້ງປະຕິບັດ ແລະ ຄວາມອາດສາມາດທາງດ້ານການເງິນທີ່ຈຳກັດ | 42. ແຕ່ລະເມືອງ ໄດ້ຮັບການຈັດສັນງົບປະມານບໍລິຫານ ສອດຄ່ອງກັບຄູ່ມືການຈັດສັນງົບປະມານບໍລິຫານ | 15 ເມືອງ | 148 ເມືອງ | ກົມການເງິນ ແລະ ຄະນະກຳມະການແຜນການ ແລະ ການເງິນ | |

| ຜົນໄດ້ຮັບ | ຕົວຊີ້ບອກ | ຂໍ້ມູນປີຖານ | ຄາດໝາຍ | ແຫຼ່ງຂໍ້ມູນ | ປພຍ |
|---|---|---|---|---|---|
| ຜົນໄດ້ຮັບລະດັບກາງ 1: ແຜນງົບປະມານຂອງ ESSDP ໄດ້ລວມເອົາ ຍຸດທະສາດການໃຊ້ຈ່າຍງົບປະມານທີ່ມີຄວາມຊັດເຈນ ທີ່ໃຫ້ທິດທາງໃນການພັດທະນາແຜນງົບປະມານປະຈຳປີຂອງສູນກາງ ແລະ ທ້ອງຖິ່ນ ແລະ ຂະບວນການທົບທວນງົບປະມານ ແລະ ສະທ້ອນໃຫ້ເຫັນຄວາມຈຳເປັນໃນການຫຼຸດຜ່ອນຄວາມແຕກໂຕນ ແລະ ປັບປຸງຜົນການຮຽນຂອງນັກຮຽນ. | 43. ການຈັດສັນງົບປະມານບໍລິຫານ ສອດຄ່ອງກັບຂອບນະໂຍບາຍການເງິນ | ບໍ່ມີຂໍ້ມູນ | ສອດຄ່ອງ 50% | ຄະນະກຳມະການ ແຜນການ ແລະ ການເງິນ | |
| ຜົນໄດ້ຮັບລະດັບກາງ 2: ໜ່ວຍງານວິຊາການຂະແໜງການສຶກສາ ທົບທວນ ແລະ ຮັບຮອງແຜນງົບປະມານກາງສະໄໝຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ. | 44. ແຜນງົບປະມານ ໄດ້ຮັບການທົວທວນ ແລະ ຮັບຮອງຢູ່ກອງປະຊຸມ ESWG | ບໍ່ມີໃນພາລະບົດບາດ | ປີລະຄັ້ງ | ກົມແຜນການ ແລະ ກົມການເງິນ | |
| ຜົນໄດ້ຮັບລະດັບກາງ 3: ການຄາດຄະເນການສະໜັບສະໜູນດ້ານການເງິນ ຂອງຄູ່ຮ່ວມພັດທະນາ ສອດຄ່ອງກັບເປົ້າໝາຍບູລິມະສິດ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແລະ ແຜນການຊ່ວຍເຫຼືອໃໝ່ ຕ້ອງຮັບປະກັນວ່າ ກະຊວງສຶກສາທິການ ແລະ ກິລາ ຈະສາມາດສືບຕໍ່ຈັດຕັ້ງປະຕິບັດໄດ້ ເພື່ອຄວາມຍືນຍົງ | 45. ງົບປະມານຊ່ວຍເຫຼືອ ຂອງຄູ່ຮ່ວມພັດທະນາ ສອດຄ່ອງກັບບູລິມະສິດ ຂອງແຜນພັດທະນາ ຂະແໜງການສຶກສາ ແລະ ກິລາ | 100% | 100% | ກົມແຜນການ ແລະ ກົມການເງິນ | |
| ຜົນໄດ້ຮັບລະດັບສູງທີ 8: ພົນລະເມືອງລາວມີສຸຂະພາບແຂງ ແຮງດ້ານຮ່າງກາຍ ແລະ ຈິດໃຈ, ບຸກຄະລາກອນການກິລາ, ນັກກິລາ ສະໝັກຫຼິ້ນ ແລະ ນັກກິລາ ອາຊີບ ໄດ້ມາດຕະຖານຄຸນນະພາບດ້ານກິລາ-ກາຍ ຍະກຳ ປະກອບສ່ວນເຂົ້າໃນການເຊີດຊູ | 46. ຈຳນວນມວນຊົນ ເຂົ້າຮ່ວມການອອກກຳລັງກາຍ ແລະ ຫຼິ້ນກິລາ-ກາຍຍະກຳ ທຽບໃສ່ ຈຳນວນປະຊາກອນທັງໝົດເພີ່ມຂຶ້ນ; ຈຳນວນບຸກຄະລາກອນການກິລາ ແລະ ນັກກິລາທຸກລະດັບ ໄດ້ມາດ | 30% | ໃຫ້ເພີ່ມຂຶ້ນ 20% ທຽບໃສ່ປີຖານ | ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ | |

| ຜົນໄດ້ຮັບ | ຕົວຊີ້ບອກ | ຂໍ້ມູນປີຖານ | ຄາດໝາຍ | ແຫຼ່ງຂໍ້ມູນ | ປພຍ |
|---|---|---|---|---|---|
| ຖານະບົດ ບາດຂອງຊາດຢູ່ໃນເວທີສາກົນ ສ້າງຄວາມພາກພູມໃຈໃຫ້ປະຊາຊົນລາວ | ຕະຖານຂອງອານຸພາກພື້ນ, ພາກພື້ນ ແລະ ສາກົນ | | | | |
| ຜົນໄດ້ຮັບລະດັບກາງທີ 1: ໜ່ວຍສະໂມສອນກິລາ-ກາຍຍະກຳ ຂັ້ນບ້ານ, ສະໂມສອນກິລາ-ກາຍຍະກຳ ຂັ້ນເມືອງ, ສະໂມສອນກິລາ-ກາຍຍະກຳ ຂັ້ນແຂວງ ນະຄອນຫຼວງ, ການມີສ່ວນຮ່ວມຂອງມວນຊົນ, ສັງຄົມໃນຂະບວນການເຄື່ອນໄຫວກິລາ-ກາຍຍະກຳ ເພີ່ມຂຶ້ນ ໃນຂັ້ນແຂວງ-ນະຄອນຫຼວງ, ເມືອງ, ບ້ານ ແລະ ສຳນັກງານ ອົງການ ບໍລິສັດ, ໂຮງຈັກໂຮງງານ ແລະ ການຈັດຕັ້ງຕ່າງໆ ທັງພາກລັດ-ເອກະຊົນ ແລະ ການພັດທະນາກິລາ ຄົນພິການໃຫ້ມີປະລິມານເພີ່ມຂຶ້ນ, ມີຄຸນນະພາບ ທຽບເທົ່າກັບສາກົນ. | 47. ຈຳນວນ ເມືອງ ມີອົງການຈັດຕັ້ງກິລາ-ກາຍຍະກຳທາງສັງຄົມ, ພື້ນຖານໂຄງລ່າງ , ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ດ້ານການອອກກຳລັງກາຍ ແລະ ການຫຼິ້ນກິລາ-ກາຍຍະກຳທີ່ພຽງພໍ, ໄດ້ມາດຕະຖານ<br>48. ຈຳນວນຜູ້ບໍລິຫານ, ວິຊາການ, ກຳມະການຕັດສິນ, ຄູຝຶກ, ນັກກິລາ ໄດ້ຮັບການຍົກລະ ດັບທາງດ້ານປະລິມານ ແລະ ຄຸນນະພາບ | ບໍ່ມີຂໍ້ມູນ<br>ບໍ່ມີຂໍ້ມູນ | ເບິ່ງຄາດໝາຍລະອຽດໃນແຜນຂະແໜງການຍ່ອຍກິລາ-ກາຍຍະກຳ<br>ເບິ່ງຄາດໝາຍລະອຽດໃນແຜນຂະແໜງການຍ່ອຍກິລາ-ກາຍຍະກຳ | ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ | |
| ຜົນໄດ້ຮັບລະດັບກາງທີ 2: ການຮຽນ-ການສອນພະລະສຶກສາ-ກິລາ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງກວ້າງຂວາງຂຶ້ນ, ຈຳນວນບຸກຄະລາກອນນັກວິຊາການດ້ານພະລະສຶກສາເພີ່ມຂຶ້ນ, ມີຈຳນວນນັກຮຽນທີ່ເຂົ້າຮ່ວມການແຂ່ງຂັນກິລາ ພາຍໃນປະເທດ, ພາກພື້ນ ແລະ ສາກົນຫຼາຍຂຶ້ນ | 49. ຈຳນວນ ໂຮງຮຽນທີ່ໄດ້ຈັດຕັ້ງການຮຽນ-ການສອນວິຊາພະລະສຶກສາ ແລະ ສິລະປະສຶກສາ ຢ່າງກວ້າງຂວາງ; ຈຳນວນນັກ ຮຽນ-ນັກສຶກສາ ທີ່ໄດ້ເຄື່ອນໄຫວຫຼິ້ນກິລາ-ກາຍຍະກຳ ໃນໂຮງຮຽນ; ຄູພະລະ ແລະ ສິລະປະສຶກສາ ທີ່ໄດ້ຖືກບັນຈຸ; ຈຳນວນນັກ ຮຽນທີ່ໄດ້ເຂົ້າຮ່ວມການແຂ່ງຂັນ ພາຍໃນ ແລະ ຕ່າງປະເທດ; ຈຳນວນໂຮງຮຽນ ທີ່ໄດ້ຈັດຕັ້ງການຮຽນການສອນ-ສຶກສາ ວິຊາປ້ອງກັນຕົວ ແລະ ວິຊາສຶກສາປ້ອງກັນຊາດ- | ບໍ່ມີຂໍ້ມູນ | ເບິ່ງຄາດໝາຍລະອຽດໃນແຜນຂະແໜງການຍ່ອຍກິລາ-ກາຍຍະກຳ | ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ | |

| ຜົນໄດ້ຮັບ | ຕົວຊີ້ບອກ | ຂໍ້ມູນປີຖານ | ຄາດໝາຍ | ແຫຼ່ງຂໍ້ມູນ | ປພຍ |
|---|---|---|---|---|---|
| | ປ້ອງກັນຄວາມສະຫງົບ; ຈຳນວນໂຮງຮຽນທີ່ໄດ້ປະກາດ ແລະ ຮັບຮອງເປັນໂຮງຮຽນປອດຢາເສບຕິດ. | | | | |
| ຜົນໄດ້ຮັບລະດັບກາງທີ 3: ນັກກິລາ ທີ່ມີພອນສະຫວັນ, ນັກກິລາ ທີມຊາດ ແລະ ນັກກິລາ ອາຊີບ ມີສັກກະຍະພາບ ທຽບເທົ່າລະດັບມາດຕະຖານຂອງອານຸພາກພື້ນ, ພາກພື້ນ ແລະ ສາກົນ | 50. ຈຳນວນ ນັກກິລາ ພອນສະຫວັນ, ນັກກິລາທີມຊາດ ແລະ ນັກກິລາອາຊີບ ຍາດໄດ້ຫຼຽນ/ລາງວັນ ໃນການແຂ່ງຂັນກິລາລະດັບອານຸພາກພື້ນ, ພາກພື້ນ ແລະ ສາກົນ | ບໍ່ມີຂໍ້ມູນ | ເບິ່ງຄາດໝາຍລະອຽດໃນແຜນຂະແໜງການຍ່ອຍກິລາ-ກາຍະກຳ | ກົມກິລາລະດັບສູງ | |
| ຜົນໄດ້ຮັບລະດັບກາງທີ 4: ຜູ້ບໍລິຫານ, ຄູຝຶກ ກຳມະການຕັດສິນ ແລະ ນັກວິທະຍາສາດການກິລາມີຄວາມຮູ້ຄວາມສາມາດ ທຽບເທົ່າມາດຕະຖານສາກົນ | 51. ຈຳນວນຜູ້ບໍລິຫານ ແລະ ພະນັກງານວິຊາການກິລາ ທັງສູນກາງ ແລະ ທ້ອງ ຖິ່ນໄດ້ຮັບການຝຶກອົບຮົມ ແລະ ຍົກລະດັບ | ບໍ່ມີຂໍ້ມູນ | ເບິ່ງຄາດໝາຍລະອຽດໃນແຜນຂະແໜງການຍ່ອຍກິລາ-ກາຍະກຳ | ກົມກິລາລະດັບສູງ | |
| ຜົນໄດ້ຮັບລະດັບກາງທີ 5: ການບໍລິຫານຄຸ້ມຄອງວຽກງານກິລາ-ກາຍະກຳ ແຕ່ສູງກາງຮອດທ້ອງຖິ່ນມີຄວາມເຂັ້ມແຂງ | 52. ຈຳນວນ ນິຕິກຳທີ່ໃຊ້ໃນການບໍລິການຄຸ້ມຄອງ ວຽກງານກິລາລະດັບສູງ<br>53. ຈຳນວນອີງການຄຸ້ມຄອງ ວຽກງານກິລາລະດັບສູງ ໄດ້ມາດຕະຖານກ່ຽວກັບມາດຕະຖານບໍລິຫານກິລາ | ບໍ່ມີຂໍ້ມູນ<br>ບໍ່ມີຂໍ້ມູນ | 8 ສະບັບ<br>10 ອົງກອນ | ກົມກິລາລະດັບສູງ | |

## ພາກທີ II: ແຜນພັດທະນາຂອງຂະແໜງການຍ່ອຍ 2021-2025

# ພາກສະເໜີ

ແຜນການເງິນຂອງ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໄດ້ຖືກພັດທະນາຂຶ້ນເປັນສອງສົມມຸດຖານ ຄື: ສົມມຸດຖານ "ງົບປະມານໄດ້ຮັບຢູ່ໃນລະດັບເທົ່າເດີມ" ເຊິ່ງເປັນພື້ນຖານໃຫ້ແກ່ການຮັກສາລະດັບຄຸນນະພາບ ແລະ ການໃຫ້ບໍລິການໃນປະຈຸບັນ ໂດຍບໍ່ເນັ້ນໃສ່ການປັບປຸງການປະຕິບັດວຽກງານຂອງຂະແໜງການ. ມັນໄດ້ສະແດງໃຫ້ເຫັນເຖິງ "ເພດານດ້ານງົບປະມານ" ທີ່ຂະແໜງການສຶກສາຕ້ອງການ ແລະ ສົມມຸດຖານ "ຍົກສູງຄຸນນະພາບການສຶກສາ", ຊຶ່ງຖ້າຢາກບັນລຸໄດ້ຕາມສົມມຸດຖານນີ້ ສ່ວນແບ່ງງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນຂອງຂະແໜງການສຶກສາຕ້ອງເພີ່ມຂຶ້ນ ທຽບໃສ່ລາຍຈ່າຍໃນຮ່ວງດຽວກັນຂອງລັດຖະບານ. ແຕ່ວ່າການຈັດສັນງົບປະມານຕົວຈິງອາດຈະຕົກຢູ່ໃນລະຫວ່າງຂອງສອງສົມມຸດຖານ. ດັ່ງນັ້ນ, ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຈຶ່ງໄດ້ກຳນົດນະໂຍບາຍໃນການໃຊ້ຈ່າຍງົບປະມານ ເພື່ອເປັນທິດທາງໃນການກຳນົດບູລິມະສິດ ໃນການຈັດສັນງົບປະມານເຂົ້າໃສ່ບັນດາໂຄງເຂດທີ່ເປັນບູລິມະສິດ ເຊັ່ນ: ຂະແໜງການຍ່ອຍປະຖົມສຶກສາ ແລະ ການຝຶກອົບຮົມຄູສອນ ແລະ ຜູ້ບໍລິຫານການສຶກສາ. ຜົນກະທົບທາງດ້ານເສດຖະກິດຂອງການລະບາດຂອງພະຍາດ COVID-19 ເຮັດໃຫ້ງົບປະມານໃນສົມມຸດຖານ "ຍົກສູງຄຸນນະພາບການສຶກສາ" ອາດບໍ່ເປັນໄປໄດ້ໃນຊຸມປີຕົ້ນໆຂອງແຜນ 2021-2025. ເຖິງຢ່າງ ໃດກໍ່ຕາມ, ມັນມີຄວາມຈຳເປັນທີ່ຈະຕ້ອງຮັກສາສະພາບການລົງທຶນເຂົ້າໃນວຽກງານສຶກສາ, ຖ້າບໍ່ດັ່ງນັ້ນ ຈະສູນເສຍຜົນປະໂຫຍດດ້ານການສຶກສາທີ່ໄດ້ຮັບ ໃນໄລຍະສອງສາມປີທີ່ຜ່ານມາ.

ດັ່ງນັ້ນ, ພາຍໃຕ້ບາງຜົນໄດ້ຮັບລະດັບກາງ ຈຶ່ງໄດ້ມີໝາຍເຫດທີ່ກຳນົດວ່າ ຜົນໄດ້ຮັບລະດັບກາງຈະບັນລຸໄດ້ກໍຕໍ່ເມື່ອງົບປະມານທີ່ສະໜອງໃຫ້ ສອດຄ່ອງກັບການຄາດຄະເນງົບປະມານໃນສົມມຸດຖານ "ຍົກສູງຄຸນນະພາບການສຶກສາ".

# I. ຂະແໜງການຍ່ອຍ ການສຶກສາກ່ອນໄວຮຽນ

## 1. ຄວາມເປັນມາ

### 1.1. ຜົນສຳເລັດ

ພາກທີ 1 ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 (ຂໍ້ທີ 2 ແລະ 3) ໄດ້ສະໜອງລາຍລະອຽດຂອງຜົນສຳເລັດ ຂອງການພັດທະນາການສຶກສາກ່ອນໄວຮຽນ. ຊຶ່ງວຽກງານການສຶກສາກ່ອນໄວຮຽນ ແມ່ນເປັນວຽກໜຶ່ງທີ່ສຳຄັນໃນການສົ່ງເສີມພັດທະນາການຂອງເດັກ ທາງດ້ານຮ່າງກາຍ, ສະຕິປັນຍາ, ອາລົມ, ຈິດ ໃຈ ແລະ ສັງຄົມ. ພ້ອມທັງເປັນການກຽມຄວາມພ້ອມໃຫ້ແກ່ເດັກ ກ່ອນເຂົ້າຮຽນປະຖົມສຶກສາ ປີທີ 1. ພ້ອມດຽວກັນນັ້ນ ການສຶກສາກ່ອນໄວຮຽນ ຍັງມີອັດຕາຜົນຕອບແທນທີ່ສູງກວ່າຂະແໜງການຍ່ອຍອື່ນໆ, ແຕ່ວ່າ ຂະແໜງ ການຍ່ອຍການສຶກສາກ່ອນໄວຮຽນ ຊໍ້າພັດໄດ້ຮັບສ່ວນແບ່ງງົບປະມານຈາກລັດຖະບານໜ້ອຍກວ່າ ເມື່ອທຽບໃສ່ຂະແໜງການຍ່ອຍປະຖົມ, ມັດທະຍົມ ແລະ ການສຶກສາຫຼັງຂັ້ນພື້ນຖານ[28].

ໄລຍະ 5 ປີຜ່ານມາ ການສຶກສາສຳລັບເດັກກ່ອນໄວຮຽນ ຢູ່ ສປປ ລາວ ໄດ້ມີການຂະຫຍາຍຕົວຢ່າງກວ້າງຂວາງ ທັງດ້ານປະລິມານ ແລະ ຄຸນນະພາບ ເຊັ່ນ: ໄດ້ກໍ່ສ້າງໂຄງລ່າງພື້ນຖານ, ສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ, ສະໜອງຄູ, ປຶ້ມແບບຮຽນ ແລະ ສື່ການຮຽນ-ການສອນ, ເຄື່ອງຫຼິ້ນທັງໃນ ແລະ ນອກຫ້ອງຮຽນ, ໄດ້ມີການພັດທະນານະໂຍບາຍແຫ່ງຊາດວ່າດ້ວຍການສຶກສາກ່ອນໄວຮຽນ, ຍຸດທະສາດການສຶກສາກ່ອນໄວຮຽນ ແລະ ນິຕິກຳທີ່ກ່ຽວຂ້ອງກັບການຄຸ້ມຄອງສະຖານການສຶກສາກ່ອນໄວຮຽນ ທັງພາກລັດ ແລະ ເອກະຊົນ. ນອກຈາກນັ້ນ, ກໍຍັງໄດ້ເອົາໃຈໃສ່ພັດທະນາແຜນການລ້ຽງດູ ແລະ ສຶກສາອົບຮົມເດັກອາຍຸ 3-36 ເດືອນ, ຫຼັກສູດ, ແຜນຈັດປະສົບການຊັ້ນອະນຸບານ, ຄູ່ມືຝຶກອົບຮົມຄູຝຶກ ແລະ ເຄື່ອງມືຕິດຕາມຄູສຶກສານິເທດການສຶກສາກ່ອນໄວຮຽນ, ຄູ່ມືແນະນຳການຈັດຕັ້ງປະຕິບັດຕຳແໜ່ງວິຊາການຄູ, ຄູ່ມືການກຽມຄວາມພ້ອມດ້ານການອ່ານຂອງເດັກອາຍຸ 5 ປີ. ນອກຈາກນັ້ນ ຍັງໄດ້ພັດທະນາມາດຕະຖານຄຸນນະພາບການສຶກສາຊັ້ນອະນຸບານສຶກສາ, ມາດຕະຖານດ້ານນໍ້າ ແລະ ສຸຂະອະນາໄມ ໃນສະຖານການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ, ສ້າງຖານຂໍ້ມູນການປະເມີນວຽກງານນໍ້າ ແລະ ສຸຂະອະນາໄມໂດຍນຳໃຊ້ຮູບແບບ 3 ດາວ, ມາດຕະຖານໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານຕົວແບບ. ພ້ອມດຽວກັນນັ້ນ ຍັງໄດ້ສົ່ງເສີມໃຫ້ເດັກໃນເຂດຫ່າງໄກສອກຫຼີກ ໄດ້ເຂົ້າມາກຽມຄວາມພ້ອມໃນຮູບແບບຕ່າງໆ. ຕາຕະ ລາງຂ້າງລຸ່ມໄດ້ສະແດງໃຫ້ເຫັນເຖິງຄວາມຄືບໜ້າຂອງການພັດທະນາການສຶກສາກ່ອນໄວຮຽນ.

**ຕາຕະລາງ 11 : ສົມທຽບຕົວຊີ້ບອກຕ່າງໆ ໃນຊັ້ນການສຶກສາກ່ອນໄວຮຽນ ແຕ່ປີ 2016 ຫາ 2020**

| ຕົວຊີ້ບອກ | | 2015-16 | 2016-17 | 2017-18 | 2018-19 | 2019-20 |
|---|---|---|---|---|---|---|
| ຈຳນວນໂຮງຮຽນທັງໝົດ | | 2.807 | 3.056 | 3.211 | 3.432 | 3.496 |
| ຈຳນວນນັກຮຽນທັງໝົດ ທັງພາກລັດ ແລະ ເອກະຊົນ | ຍິງ | 92.947 | 99.539 | 106.789 | 111.997 | 121.842 |
| | ຊາຍ | 93.674 | 100.908 | 108.352 | 113.179 | 124.007 |
| ຈຳນວນພະນັກງານ ແລະ ຄູສອນ (ພາກລັດ) | ຍິງ | 8.648 | 9.355 | 9.933 | 10.302 | 9.991 |
| | ຊາຍ | 116 | 109 | 99 | 111 | 105 |
| ອັດຕາເຂົ້າຮຽນຂອງເດັກ 3-4 ປີ (%) | ຍິງ | 37,7 | 41,8 | 45.2 | 48.2 | 50 |
| | ຊາຍ | 36,9 | 41,0 | 44,7 | 47,5 | 49,7 |
| | ຍິງ | 49,2 | 52,8 | 56,26 | 59,1 | 61,3 |

[28] https://www.unicef.org/education/early-childhood-education

| | | | | | | |
|---|---|---|---|---|---|---|
| ອັດຕາເຂົ້າຮຽນຂອງເດັກ 3-5 ປີ(%) | ຊາຍ | 48,9 | 52,5 | 56,12 | 58,8 | 61,3 |
| | | | | | | |
| ອັດຕາເຂົ້າຮຽນຂອງເດັກ 5 ປີ (%) | ຍິງ | 70,7 | 74,2 | 77,0 | 79,5 | 82,5 |
| | ຊາຍ | 71,0 | 74,6 | 77,2 | 79,4 | 82,8 |
| | GPI | 1,00 | 0,99 | 1,00 | 1,00 | 1,00 |
| ອັດຕາເຂົ້າຮຽນຂອງເດັກ 5 ປີ ຢູ່ 40 ເມືອງ (%) | ຍິງ | 55,6 | 60,1 | 62,6 | 68,0 | 76,5 |
| | ຊາຍ | 56,0 | 60,1 | 61,8 | 65,9 | 76,6 |
| | GPI | 0,99 | 1,00 | 1,01 | 1,03 | 1,00 |
| ເປີເຊັນນັກຮຽນເຂົ້າໃໝ່ ປ. 1 ທີ່ຜ່ານ ອະນຸບານ ຫຼື ຫ້ອງກຽມ (%) | ຍິງ | 57.0 | 62.4 | 65.5 | 66.4 | 70.6 |
| | ຊາຍ | 55.4 | 61.0 | 63.7 | 65.1 | 69.0 |
| | GPI | 1.03 | 1.02 | 1.03 | 1.02 | 1.02 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

### 1.2. ສິ່ງທ້າທາຍ

ແຜນພັດທະນາການສຶກສາ ແລະ ກິລາ ພາກທີ 1 (ຂໍ້ 3) ໄດ້ລະບຸລະອຽດກ່ຽວກັບສິ່ງທ້າທາຍສຳລັບການສຶກສາກ່ອນໄວຮຽນ. ວຽກງານການສຶກສາກ່ອນໄວຮຽນກໍຍັງມີສິ່ງທ້າທາຍຫຼາຍປະການ ເປັນຕົ້ນແມ່ນຜູ້ບໍລິຫານສະຖານການສຶກສາກ່ອນໄວຮຽນ ບໍ່ໄດ້ຮັບການຝຶກອົບຮົມທາງດ້ານການບໍລິຫານຄຸ້ມຄອງໂຮງຮຽນ, ຄູສອນບໍ່ໄດ້ຮັບການຝຶກອົບຮົມການນຳໃຊ້ຫຼັກສູດໃໝ່. ເຖິງວ່າຈະມີຜົນສຳເລັດຫຼາຍຢ່າງ, ແຕ່ກໍຍັງບໍ່ສາມາດບັນລຸໄດ້ຄວາມຕ້ອງການໃນການຂະຫຍາຍການສຶກສາກ່ອນໄວຮຽນ ໂດຍສະເພາະແມ່ນກຸ່ມເປົ້າໝາຍທີ່ດ້ອຍໂອກາດ. ຍັງມີຄວາມແຕກໂຕນກັນໃນແຕ່ລະພື້ນທີ່ ເຊັ່ນ: ຢູ່ນະຄອນຫຼວງວຽງຈັນ ນັກຮຽນປະຖົມທີ່ໄດ້ຜ່ານການກຽມຄວາມພ້ອມໃນການສຶກສາກ່ອນໄວຮຽນກວມ 91%, ໃນຂະນະທີ່ ຢູ່ແຂວງສາລະວັນ ມີພຽງແຕ່ 57% ເທົ່ານັ້ນ. ພື້ນຖານໂຄງລ່າງຂອງສະຖານການສຶກສາກ່ອນໄວຮຽນ ຈຳນວນໜຶ່ງບໍ່ໄດ້ມາດຕະຖານ: ເປ່ເພ, ຊຸດໂຊມ ແລະ ບໍ່ມີຄວາມປອດໄພສຳລັບເດັກ ຕະຫຼອດເຖິງສິ່ງອຳນວຍຄວາມສະດວກ ທາງດ້ານສຸຂະອະນາໄມ ເຊັ່ນ: ວິດຖ່າຍ, ອ່າງ/ຮາງລ້າງມື ແລະ ລະບົບນ້ຳໃຊ້ໃນສະຖານການສຶກສາກ່ອນໄວຮຽນ.

ໃນປັດຈຸບັນນີ້ ຄຸນນະພາບການສຶກສາກ່ອນໄວຮຽນຍັງບໍ່ທັນພຽງພໍເທື່ອ ຈຶ່ງມີຄວາມຈຳເປັນຕ້ອງພັດທະນາມາດຕະຖານການສອນ ແລະ ມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາກ່ອນໄວຮຽນ ເພື່ອປັບປຸງຄຸນນະພາບ ໄປພ້ອມໆກັບຊ່ຽວຊານດ້ານນິເທດການສຶກສາສຳລັບການສຶກສາກ່ອນໄວຮຽນໃນແຕ່ລະເມືອງ. (ຂໍ້ມູນຈາກພາກທີ 1)

ເຖິງແມ່ນວ່າ ອັດຕາການເຂົ້າຮຽນຊັ້ນການສຶກສາກ່ອນໄວຮຽນເພີ່ມຂຶ້ນ ໂດຍທຽບໃສ່ສົກຮຽນຜ່ານມາ, ແຕ່ຄູສອນຍັງບໍ່ທັນພຽງພໍຕາມເກນທີ່ໄດ້ກຳນົດ, ໂຮງຮຽນອະນຸບານຫຼາຍແຫ່ງບໍ່ມີເຄື່ອງຫຼິ້ນສຳລັບເດັກ ແລະ ຍັງຂາດອຸປະກອນການຮຽນ-ການສອນ. ດັ່ງນັ້ນ, ຄວນບັນຈຸຄູສອນຊັ້ນຮຽນດັ່ງກ່າວ ໃຫ້ໄດ້ຕາມສັດສ່ວນທີ່ເໝາະສົມ, ຊຸກຍູ້-ສົ່ງເສີມການສຶກສາພາກເອກະຊົນໃຫ້ຫຼາຍຂຶ້ນ, ສະໜອງເຄື່ອງຫຼິ້ນທີ່ຈຳເປັນສຳລັບເດັກ ແລະ ຂະຫຍາຍການຈັດຕັ້ງປະຕິບັດກຸ່ມຮຽນຜ່ານການຫຼິ້ນ ແລະ ຂະຫຍາຍຫ້ອງກຽມປະຖົມເພີ່ມເຕີມຢູ່ເຂດທີ່ມີເງື່ອນໄຂ.

## 2. ບູລິມະສິດສຳລັບປີ 2021-2025

### 2.1. ຈຸດປະສົງ

1. ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ກຸ່ມໂຮງຮຽນ ແລະ ໂຮງຮຽນ ເພື່ອປັບປຸງຄຸນນະພາບ, ປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຮັບຜິດຊອບຂອງເຂົາເຈົ້າ ໂດຍຜ່ານການສ້າງຄວາມສອດຄ່ອງຄືນໃໝ່ໃນໜ້າທີ່, ພາລະບົດບາດ

ແລະ ຄວາມຮັບຜິດຊອບ; ກຳນົດໜ້າວຽກ ແລະ ຕຳແໜ່ງງານໃຫ້ຊັດເຈນ; ສ້າງລະບົບການຈັດສັນຊັບພະຍາກອນມະນຸດ ແລະ ການເງິນໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງ.

2. ເພື່ອເສີມຂະຫຍາຍຜົນການຮຽນຮູ້ ແລະ ຫຼຸດຜ່ອນຄວາມແຕກໂຕນ ໂດຍຜ່ານການຄຸ້ມຄອງຊັບພະຍາກອນຢ່າງມີປະສິດທິພາບ ແລະ ປະສິດທິຜົນ ໂດຍເລັ່ງໃສ່ການປັບປຸງຜົນການຮຽນໃຫ້ດີຂຶ້ນໂດຍສະເພາະໃນ 40 ເມືອງບູລິມະສິດທີ່ດ້ອຍໂອກາດຕາມທີ່ ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດ;
3. ເພື່ອໃຫ້ເດັກໄດ້ຮັບການເບິ່ງແຍງລ້ຽງດູ, ມີສຸຂະພາບ ແລະ ໂພຊະນາການທີ່ດີ ແລະ ພັດທະນາການຕາມກຸ່ມອາຍຸ ພ້ອມທັງມີທັກສະພາສາລາວ, ຄວາມປະພຶດ, ຄຸນສົມບັດ ແລະ ຄວາມພ້ອມເພື່ອເຂົ້າຮຽນ ປ. 1.
4. ເພື່ອສ້າງ ແລະ ປັບປຸງພື້ນຖານໂຄງລ່າງຂອງສະຖານການສຶກສາກ່ອນໄວຮຽນ, ພ້ອມທັງສະໜອງສື່/ອຸປະກອນການຮຽນ-ການສອນ ແລະ ເຄື່ອງຫຼິ້ນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການສຶກສາກ່ອນໄວຮຽນ.

### 2.2. ຄາດໝາຍ

ຂໍ້ມູນປີຖານ ແລະ ຄາດໝາຍ ສຳລັບຕົວຊີ້ບອກທີ່ສຳຄັນໄດ້ກຳນົດໃນພາກທີ I, ຂໍ້ 8.5 (ຕາຕະລາງຕິດຕາມ ແລະ ປະເມີນຜົນ). ຕົວຊີ້ບອກຫຼັກ ແລະ ຄາດໝາຍ 2025 ສຳລັບຂະແໜງຍ່ອຍນີ້ ແມ່ນ:

1) ອັດຕາເຂົ້າຮຽນຂອງເດັກອາຍຸ 3 - 5 ປີ ໃຫ້ບັນລຸ 67%;
2) ອັດຕາເຂົ້າຮຽນຂອງນັກຮຽນ 5 ປີ ໃຫ້ບັນລຸ 86%;
3) ດັດຊະນີຄວາມສະເໝີພາບຍິງ-ຊາຍ ໃນການເຂົ້າຮຽນຂອງນັກຮຽນ 5 ປີ ລະຫວ່າງ 0,97 ແລະ 1,03;
4) ອັດຕາເຂົ້າຮຽນຂອງນັກຮຽນ 5 ປີໃນ 40 ເມືອງ ໃຫ້ບັນລຸ 83%;
5) ດັດຊະນີຄວາມສະເໝີພາບຍິງ-ຊາຍ ໃນການເຂົ້າຮຽນຂອງນັກຮຽນ 5 ປີ ໃນ 40 ເມືອງ: ລະຫວ່າງ 0,97 ແລະ 1,03;
6) ຈຳນວນເມືອງທີ່ມີອັດຕາເຂົ້າຮຽນ ຂອງນັກຮຽນ 5 ປີ ສູງກວ່າ 60% ບັນລຸໄດ້ 145 ເມືອງ;
7) ເປີເຊັນນັກຮຽນເຂົ້າໃໝ່ ປ.1 ທີ່ຜ່ານ ອະນຸບານ 3 ຫຼື ຫ້ອງກຽມປະຖົມ ຫຼື ກຸ່ມຮຽນຜ່ານການຫຼິ້ນ ໃຫ້ບັນລຸ 75%;
8) ຈຳນວນເມືອງດ້ອຍໂອກາດ (40 ເມືອງ) ທີ່ມີເປີເຊັນນັກຮຽນເຂົ້າໃໝ່ ປ.1 ທີ່ຜ່ານອະນຸບານ 3, ຫ້ອງກຽມປະຖົມ ຫຼື ກຸ່ມຮຽນຜ່ານການຫຼິ້ນ ເທົ່າກັບ ຫຼື ຫຼາຍກວ່າ 50% ໃຫ້ໄດ້ 26 ເມືອງ;
9) 20% ຂອງຈຳນວນຄູສອນປະຈຳການຊັ້ນອະນຸບານສຶກສາ ໄດ້ຮັບການຝຶກອົບຮົມ ກ່ຽວກັບການຈັດການຮຽນ-ການສອນ.

### 2.3. ຜົນໄດ້ຮັບລະດັບສູງ

**<u>ໝາຍເຫດ:</u>** ສຳລັບແຕ່ລະຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງນັ້ນ ແມ່ນໄດ້ມີຕົວເລກອ້າງອີງໃນວົງເລັບຫຼັງຈາກຜົນໄດ້ຮັບນັ້ນໆ ທີ່ຢູ່ໃນພາກທີ 1 ຂອງແຜນ. ທັງນີ້ ກໍເພື່ອໃຫ້ຜູ້ອ່ານສາມາດນຳໃຊ້ແຜນຂອງຂະແໜງການຍ່ອຍເປັນແຜນສະເພາະ, ແຕ່ອາດອ້າງອີງໄປເຖິງນະໂຍບາຍຕ່າງໆທີ່ກ່ຽວຂ້ອງ ທີ່ຢູ່ໃນພາກທີ 1. ແຜນຂອງຂະແໜງການຍ່ອຍ ອາດບໍ່ຈຳເປັນຕ້ອງມີທຸກຜົນໄດ້ຮັບລະດັບກາງ. ບາງສຳນວນຂອງຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງອາດມີການປັບປ່ຽນ ເພື່ອໃຫ້ສອດຄ່ອງກັບຂະແໜງການຍ່ອຍນັ້ນໆ.

### 2.3.1. ຈຳນວນນັກຮຽນທີ່ຮຽນຈົບຈາກຊັ້ນການສຶກສາກ່ອນໄວຮຽນ ທີ່ມີຄວາມພ້ອມດ້ານການຮຽນ ໂດຍສະເພາະທັກສະການຮຽນຮູ້ດ້ານພາສາ ແລະ ທັກສະການຄິດໄລ່ເລກພື້ນຖານເພີ່ມຂຶ້ນ ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຮັບປະກັນຄວາມສະເໝີພາບລະ ຫວ່າງຍິງ-ຊາຍ. (ພາກທີ I - ຜົນໄດ້ຮັບລະດັບສູງທີ 1)

➢ **ຫຼັກການ ແລະ ເຫດຜົນ**

ລາຍລະອຽດຂອງຫຼັກການ ແລະ ເຫດຜົນ ແລະ ສິ່ງທ້າທາຍສຳລັບການສຶກສາກ່ອນໄວຮຽນ ແມ່ນໄດ້ລະບຸຢູ່ໃນພາກ I ຂອງ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ. ບາງຈຸດສຳຄັນເພີ່ມເຕີມແມ່ນດັ່ງຕໍ່ໄປນີ້:

- ເຖິງວ່າໃນໄລຍະຜ່ານມາ ການເຂົ້າຮຽນຂອງເດັກຈາກຄົວເຮືອນທີ່ຢູ່ລະດັບ 20% ເສັ້ນຄວາມທຸກຍາກ ໄດ້ມີການເພີ່ມຂຶ້ນກໍ່ຕາມ, ແຕ່ການເຂົ້າຮຽນຂອງເດັກສ່ວນໃຫຍ່ໃນຊັ້ນອະນຸບານ ແລະ ຫ້ອງກຽມປະຖົມ ຍັງແມ່ນມາຈາກຕົວເມືອງ ແລະ ເຂດຊົນນະບົດ ທີ່ມີເສັ້ນທາງເຂົ້າເຖິງສະດວກ. ຂໍ້ມູນຈາກການສຳຫຼວດຂອງດັດຊະນີໝາຍສັງຄົມລາວ (LSIS-II)[29] ສະແດງໃຫ້ເຫັນວ່າ ເດັກນ້ອຍທີ່ທຸກຍາກ ແລະ ຢູ່ຊົນນະບົດ ມີໂອກາດເຂົ້າຮຽນໃນການສຶກສາກ່ອນໄວຮຽນໜ້ອຍກວ່າ ເນື່ອງຈາກວ່າພໍ່ແມ່ຂອງເຂົາເຈົ້າມີການສຶກສາຕໍ່າ ຫຼື ພໍ່ແມ່ເປັນຊົນເຜົ່າທີ່ບໍ່ແມ່ນຊົນເຜົ່າລາວ-ໄຕ.
- ການສຶກສາກ່ອນໄວຮຽນໃນ ສປປ ລາວ ຖືເປັນວຽກທີ່ຂ້ອນຂ້າງໃໝ່ ແລະ ສ່ວນໃຫຍ່ຍັງມີຮູບແບບການສິດສອນທີ່ສອດຄ່ອງກັບເດັກນ້ອຍໃນອາຍຸເຂົ້າຮຽນຊັ້ນປະຖົມ ຫຼາຍກວ່າວິທີການສອນທີ່ເໝາະສົມກັບເດັກຕາມແຕ່ລະໄວອາຍຸ, ຄວາມສາມາດ ແລະ ຄວາມບອບບາງທາງດ້ານອາລົມຈິດຂອງເດັກນ້ອຍ.
- ໂດຍພິຈາລະນາເຖິງການເຂົ້າຮຽນຕໍ່າ ແລະ ອັດຕາການປະລະການຮຽນສູງໃນການສຶກສາຊັ້ນປະຖົມ, ການລົງທຶນໃສ່ການສຶກສາກ່ອນໄວຮຽນ ແມ່ນການລົງທຶນທີ່ສຳຄັນສຳລັບການພັດທະນາເດັກ, ເພື່ອເຮັດໃຫ້ພວກເຂົາມີຄວາມກຽມພ້ອມກ່ອນເຂົ້າຮຽນຊັ້ນປະຖົມສຶກສາ ແລະ ການສະໜອງການສຶກສາກ່ອນໄວຮຽນໃຫ້ກວ້າງຂວາງຂຶ້ນ ຈະເຮັດໃຫ້ມີຄວາມສະເໝີພາບ ແລະ ເທົ່າທຽມຫຼາຍກວ່າເກົ່າ ໃນການກຽມພ້ອມຂອງເດັກ ກ່ອນເຂົ້າໂຮງຮຽນຊັ້ນປະຖົມສຶກສາ.

**ຜົນໄດ້ຮັບລະດັບກາງທີ 1: ການເຂົ້າເຖິງການສຶກສາກ່ອນໄວຮຽນທີ່ມີຄຸນນະພາບເພີ່ມຂຶ້ນ (ພາກທີ I , ຜົນໄດ້ຮັບລະດັບສູງທີ 1, ຜົນໄດ້ຮັບລະດັບກາງທີ 1.2 ແລະ 1.3)**

**ຍຸດທະສາດທີ 1:** ໃຫ້ບູລິມະສິດ ແລະ ຂະຫຍາຍແຜນງານການກຽມຄວາມພ້ອມ 1 ປີ ກ່ອນເຂົ້າຮຽນຊັ້ນປະຖົມສຶກສາ ເພື່ອແນໃສ່ການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດການເຂົ້າເຖິງການສຶກສາໃນເຂດຫ່າງໄກສອກຫຼີກໃຫ້ຫຼາຍຂຶ້ນ.

**ວຽກຈຸດສຸມ:**

- ຂະຫຍາຍຫ້ອງກຽມປະຖົມ ແລະ ກຸ່ມຮຽນຜ່ານການຫຼິ້ນໃຫ້ພຽງພໍ;
- ສະໜອງ ແລະ ສັບຊ້ອນຄູສອນໃຫ້ເໝາະສົມ ແລະ ພຽງພໍຕາມຄວາມຕ້ອງການ;
- ປັບປຸງ ແລະ ພັດທະນາເອກະສານກ່ຽວກັບຫ້ອງກຽມປະຖົມ ແລະ ກຸ່ມຮຽນຜ່ານການຫຼິ້ນ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ວິຊາການ ແລະ ຜູ້ບໍລິຫານການສຶກສາທຸກລະດັບ ກ່ຽວກັບວຽກງານການຈັດຕັ້ງປະຕິບັດຫ້ອງກຽມ ແລະ ກຸ່ມຮຽນຜ່ານການຫຼິ້ນ;
- ສະໜອງສື່ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ ແລະ ເຄື່ອງຫຼິ້ນສຳລັບເດັກ;

---

29 https://www.unicef.org/laos/reports/country-report-lao-pdr-social-indicator-survey-ii-2017-mics

- ສະໜັບສະໜູນກິດຈະກຳເຊື່ອມສານການອົບຮົມລ້ຽງດູເດັກໃນການສຶກສາກ່ອນໄວຮຽນ ເພື່ອສົ່ງເສີມການພັດທະນາເດັກແບບຮອບດ້ານ ແລະ ເພີ່ມການມີສ່ວນຮ່ວມຂອງພໍ່ແມ່/ຜູ້ປົກຄອງເດັກ;
- ຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອ ກ່ຽວກັບວຽກງານການຈັດຕັ້ງປະຕິບັດຫ້ອງກຽມ ແລະ ກຸ່ມຮຽນຜ່ານການຫຼິ້ນ.

**<u>ຍຸດທະສາດທີ 2:</u>** ຂະຫຍາຍຂອບເຂດການທົດລອງນຳໃຊ້ນະວັດຕະກຳການສອນໃໝ່ໆ ສຳລັບເດັກ 3-5 ປີ ເຊັ່ນ: ການສອນຄວບອາຍຸ (ອາດມີການສຶກສາວິໄຈເພີ່ມເຕີມ)

**<u>ວຽກຈຸດສຸມ:</u>**

- ວິເຄາະຄວາມເປັນໄປໄດ້ ໃນການຂະຫຍາຍການທົດລອງນຳໃຊ້ນະວັດຕະກຳໃໝ່ໃນການສິດສອນ ເປັນຕົ້ນແມ່ນກຸ່ມພັດທະນາເດັກໃນຊຸມຊົນ, ຫ້ອງສອນຄວບອາຍຸ, ຫຼັກສູດກຽມຄວາມພ້ອມໃນການອ່ານ, ຫຼັກສູດກຽມຄວາມພ້ອມໄລຍະພັກແລ້ງ (10 ອາທິດ) ແລະ ອື່ນໆ;
- ພັດທະນາຄູ່ມືຈັດຕັ້ງປະຕິບັດກ່ຽວກັບກຸ່ມພັດທະນາເດັກໃນຊຸມຊົນ, ຫ້ອງສອນຄວບອາຍຸ, ຫຼັກສູດກຽມຄວາມພ້ອມໃນການອ່ານ, ຫຼັກສູດກຽມຄວາມພ້ອມໃນໄລຍະພັກແລ້ງ (10 ອາທິດ);
- ຈັດຕັ້ງປະຕິບັດກຸ່ມພັດທະນາເດັກໃນຊຸມຊົນ, ຫ້ອງສອນຄວບອາຍຸ, ຫຼັກສູດກຽມຄວາມພ້ອມໃນການອ່ານ, ຫຼັກສູດກຽມຄວາມພ້ອມໃນໄລຍະພັກແລ້ງ (10 ອາທິດ);
- ສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ ແລະ ເຄື່ອງຫຼິ້ນສຳລັບເດັກ;
- ຕິດຕາມ, ຊຸກຍູ້, ຊ່ວຍເຫຼືອ ແລະ ປະເມີນຜົນການຈັດຕັ້ງປະຕິບັດ.

**<u>ຍຸດທະສາດທີ 3:</u>** ພັດທະນາຍຸດທະສາດ (ດ້ານຊັບພະຍາກອນມະນຸດ ແລະ ການເງິນ) ແລະ ແຜນດຳເນີນງານການສະໜອງອາຫານໃນຊັ້ນການສຶກສາກ່ອນໄວຮຽນທີ່ມີປະສິດທິຜົນ ແລະ ມີຄວາມຍືນຍົງ.

ຖ້າຢາກມີຜົນສຳເລັດອັນເຕັມສ່ວນຂອງຍຸດທະສາດນີ້ ຈະຕ້ອງມີການສະໜອງງົບປະມານທີ່ສອດຄ່ອງກັບສິມ ມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ສະເພາະຍຸດທະສາດນີ້.

**<u>ວຽກຈຸດສຸມ:</u>**

- ພັດທະນາຍຸດທະສາດ ແລະ ແຜນດຳເນີນງານວຽກງານອາຫານໃນສະຖານການສຶກສາກ່ອນໄວຮຽນ;
- ສ້າງແຜນຄິດໄລ່ມູນຄ່າຫົວໜ່ວຍລາຄາອາຫານໃນສະຖານການສຶກສາກ່ອນໄວຮຽນ;
- ເຜີຍແຜ່ ບັນດານິຕິກຳທີ່ກ່ຽວຂ້ອງກັບ ວຽກງານອາຫານໃນສະຖານການສຶກສາກ່ອນໄວຮຽນ;
- ສ້າງຄວາມເຂັ້ມແຂງໃຫ້ສະຖານການສຶກສາກ່ອນໄວຮຽນ, ພໍ່ແມ່ຜູ້ປົກຄອງເດັກ ແລະ ຊຸມຊົນ ກ່ຽວກັບການຈັດຕັ້ງປະຕິບັດ ການສະໜອງອາຫານກາງເວັນໃຫ້ເດັກ ໃນເຂດຫ່າງໄກສອກຫຼີກ;
- ຈັດຕັ້ງປະຕິບັດແຜນງານອາຫານໃນສະຖານການສຶກສາກ່ອນໄວຮຽນ ໃນເຂດຫ່າງໄກສອກຫຼີກ ໂດຍສະເພາະ 40 ເມືອງເປົ້າໝາຍຂອງໂຄງການປັບປຸງຄຸນນະພາບການສຶກສາເຂດຫ່າງໄກສອກຫຼີກ;
- ສະໜອງອາຫານ ແລະ ອຸປະກອນຮັບໃຊ້ທີ່ກ່ຽວຂ້ອງ;
- ຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອ ການຈັດຕັ້ງປະຕິບັດວຽກງານອາຫານໃນໂຮງຮຽນ;

**<u>ຍຸດທະສາດທີ 4</u>:** ຂະຫຍາຍແຜນງານສົ່ງເສີມສຸຂະອະນາໄມ ແລະ ໂພຊະນາການ ໃນສະຖານການສຶກສາກ່ອນໄວຮຽນ ແລະ ສະໜອງສິ່ງອຳນວຍຄວາມສະດວກທາງດ້ານສຸຂະອະນາໄມໃຫ້ແກ່ເດັກກ່ອນໄວຮຽນ ໂດຍສະເພາະແມ່ນເດັກຍິງ.

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຍຸດທະສາດນີ້ໄດ້ຢ່າງເຕັມສ່ວນ, ແມ່ນມີຄວາມຕ້ອງການດ້ານງົບປະມານ ດັ່ງທີ່ກໍານົດຢູ່ໃນ ສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍ ເຫຼືອ ຈາກຕ່າງປະເທດ ຕ້ອງສຸມໃສ່ການຈັດຕັ້ງປະຕິບັດຍຸດທະສາດນີ້. ພ້ອມດຽວກັນນັ້ນ ຕ້ອງໄດ້ມີການປະສານງານກັນ ກັບ ຂະແໜງສາທາລະນະສຸກ ລວມທັງອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ.

**ວຽກຈຸດສຸມ:**

- ສ້າງຄວາມເຂັ້ມແຂງໃຫ້ວິຊາການແຕ່ລະຂັ້ນ ກ່ຽວກັບວຽກງານສົ່ງເສີມສຸຂະພາບດີ, ວຽກງານນໍ້າ ແລະ ສຸຂະ ອະນາໄມ;
- ພັດທະນາຄູ່ມືແນະນໍາການກິນອາຫານ, ເຄື່ອງດື່ມທີ່ປອດໄພ ແລະ ຖືກຫຼັກໂພຊະນາການ;
- ພັດທະນາຄູ່ມືຄວາມປອດໄພດ້ານສຸຂະພາບໃນໂຮງຮຽນ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ຂັ້ນແຂວງ, ຂັ້ນເມືອງ ກ່ຽວກັບວຽກງານສົ່ງເສີມສຸຂະພາບດີ, ວຽກງານນໍ້າ ແລະ ສຸຂະອະນາໄມ;
- ສະໜອງສິ່ງອໍານວຍຄວາມສະດວກດ້ານສຸຂາພິບານ ແລະ ສຸຂະອະນາໄມ;
- ຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອວຽກອື່ນໆເພື່ອສະໜັບສະໜູນ.

**ຍຸດທະສາດທີ 5:** ສົ່ງເສີມບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການ ພັດທະນາວຽກງານການສຶກສາກ່ອນໄວຮຽນ;

**ວຽກຈຸດສຸມ**

- ປັບປຸງ ແລະ ພັດທະນາບັນດານິຕິກໍາທີ່ກ່ຽວຂ້ອງ ໃນການລົງທຶນຂອງພາກເອກະຊົນເຂົ້າໃນການພັດທະນາ ການສຶກສາກ່ອນໄວຮຽນ;
- ໂຄສະນາ ແລະ ເຜີຍແຜ່ ວຽກງານການສຶກສາກ່ອນໄວຮຽນດ້ວຍຫຼາຍຮູບແບບ;
- ສ້າງຄວາມເຂັ້ມແຂງແກ່ການຄຸ້ມຄອງສະຖານການສຶກສາກ່ອນໄວຮຽນ ທັງພາກລັດ ແລະ ເອກະຊົນ;
- ສ້າງຖານຂໍ້ມູນ ເພື່ອຕິດຕາມ, ກວດກາ ແລະ ຊ່ວຍເຫຼືອ ທາງດ້ານວິຊາການໃຫ້ແກ່ຜູ້ປະກອບການ;
- ສ້າງ ແລະ ປັບປຸງຄູ່ມືການລ້ຽງດູ ແລະ ອົບຮົມເດັກກ່ອນໄວຮຽນສໍາລັບພໍ່ແມ່/ຜູ້ປົກຄອງ;
- ເຜີຍແຜ່ຄວາມສໍາຄັນຂອງພັດທະນາການຂອງເດັກໄລຍະ 1.000 ວັນ, ການຮັກສາສຸຂະພາບ, ການລ້ຽງດູ ແລະ ອົບຮົມເດັກກ່ອນໄວຮຽນ ໃຫ້ແກ່ຜູ້ບໍລິຫານການສຶກສາ, ວິຊາການ, ຄູສອນ ແລະ ພໍ່ແມ່/ຜູ້ປົກຄອງ.

**ຜົນໄດ້ຮັບລະດັບກາງທີ 2: ຫຼຸດຜ່ອນຄວາມແຕກໂຕນ ທາງດ້ານການສະໜອງການສຶກສາກ່ອນໄວຮຽນ ລະຫວ່າງ ເຂດທີ່ດ້ອຍໂອກາດ ແລະ ເຂດທີ່ມີໂອກາດດີກວ່າ (ພາກທີ I, ຜົນໄດ້ຮັບລະດັບສູງທີ 1, ຜົນໄດ້ຮັບລະດັບກາງທີ 1.5)**

**ຍຸດທະສາດທີ 1:** ສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດ ເພື່ອຫຼຸດຜ່ອນຄວາມແຕກໂຕນ ໃນການສະໜອງ ແລະ ຈັດ ສັນຄູສອນໃຫ້ແກ່ສະຖານການສຶກສາກ່ອນໄວຮຽນທີ່ຢູ່ຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ.

**ວຽກຈຸດສຸມ:**

- ສ້າງຍຸດທະສາດ ແລະ ນິຕິກໍາ ເພື່ອຫຼຸດຜ່ອນຄວາມແຕກໂຕນໃນການສະໜອງ ແລະ ຈັດສັນຄູໃຫ້ແກ່ສະ ຖານການສຶກສາກ່ອນໄວຮຽນທີ່ຢູ່ຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ;
- ເຜີຍແຜ່ຍຸດທະສາດ ແລະ ນິຕິກໍາ ເພື່ອຫຼຸດຜ່ອນຄວາມແຕກໂຕນໃນການສະໜອງ ແລະ ຈັດສັນຄູໃຫ້ແກ່ ສະຖານການສຶກສາກ່ອນໄວຮຽນທີ່ຢູ່ຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ;
- ຊັບຊ້ອນຄູສອນທີ່ຈົບສາຍຄູປະຖົມສຶກສາ ມາສອນຫ້ອງກຽມປະຖົມສຶກສາ ໂດຍໄດ້ຮັບການຝຶກອົບຮົມ ວິທີການສອນຊັ້ນອະນຸບານ;

- ຕິດຕາມການຈັດຕັ້ງປະຕິບັດຍຸດທະສາດ ເພື່ອຫຼຸດຜ່ອນຄວາມແຕກໂຕນ ໃນການສະໜອງ ແລະ ຈັດສັນຄູ ໃຫ້ແກ່ໂຮງຮຽນທີ່ຢູ່ຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ.

**2.3.2. ຈໍານວນຄູ ແລະ ຜູ້ອໍານວຍການໂຮງຮຽນ ໃນສະຖານການສຶກສາກ່ອນໄວຮຽນ ທີ່ມີຄວາມຮູ້ຄວາມສາມາດ ສອດຄ່ອງກັບມາດຕະຖານການສິດສອນທີ່ໄດ້ກໍານົດຜ່ານມາ ເພີ່ມຂຶ້ນ ໂດຍໃຫ້ມີການປະເມີນຜົນການ ປະຕິບັດໜ້າທີ່ຂອງເຂົາເຈົ້າຢ່າງເປັນປົກກະຕິ (ພາກທີ I, ຜົນໄດ້ຮັບລະດັບສູງທີ 2).**

➢ **ຫຼັກການ ແລະ ເຫດຜົນ**

ລາຍລະອຽດຂອງຫຼັກການ ແລະ ເຫດຜົນ ໄດ້ກໍານົດໄວ້ໃນພາກທີ I ຂອງ ແຜນ ແລະ ສິ່ງທ້າທາຍ ກໍໄດ້ລະບຸ ໄວໃນ ຂໍ້ທີ 1 ຂ້າງເທິງນີ້.

**ຜົນໄດ້ຮັບລະດັບກາງທີ 1: ຫຼັກສູດສ້າງຄູອະນຸບານ ແລະ ຫຼັກສູດຝຶກອົບຮົມຄູປະຈໍາການ ຊັ້ນອະ ນຸບານ ໄດ້ຮັບ ການທົບທວນຄືນເພື່ອໃຫ້ສອດຄ່ອງກັບຫຼັກສູດການຮຽນ-ການສອນໃໝ່ (ພາກທີ I: ຜົນໄດ້ຮັບລະດັບສູງທີ 2, ຜົນ ໄດ້ຮັບລະດັບກາງທີ 2.2)**

**<u>ຍຸດທະສາດທີ 1:</u>** ປະສານສົມທົບຢ່າງມີປະສິດທິພາບໃນການພັດທະນາຫຼັກສູດສ້າງຄູ ແລະ ຫຼັກສູດຝຶກອົບຮົມ ຄູປະຈໍາການໃນທຸກຊັ້ນຮຽນ ເພື່ອໃຫ້ມີຄວາມສອດຄ່ອງກັນ.

**<u>ວຽກຈຸດສຸມ:</u>**

- ທົບທວນ ແລະ ປັບປຸງ ຫຼັກສູດສ້າງຄູການສຶກສາກ່ອນໄວຮຽນ ໃຫ້ສອດຄ່ອງກັບຫຼັກສູດການຮຽນ-ການສອນ ໃນຊັ້ນລ້ຽງເດັກ ແລະ ຊັ້ນອະນຸບານ;
- ຈັດຕັ້ງປະຕິບັດຫຼັກສູດສ້າງຄູການສຶກສາກ່ອນໄວຮຽນ ສະບັບປັບປຸງ ໃຫ້ມີຄວາມເຂັ້ມແຂງ;
- ຕິດຕາມ ແລະ ປະເມີນ ການຈັດຕັ້ງປະຕິບັດຫຼັກສູດສ້າງຄູສໍາລັບການສຶກສາກ່ອນໄວຮຽນ ທີ່ໄດ້ປັບປຸງ;
- ພັດທະນາຫຼັກສູດຊັ້ນລ້ຽງເດັກ;
- ຈັດຕັ້ງປະຕິບັດຫຼັກສູດຊັ້ນລ້ຽງເດັກສະບັບປັບປຸງ ໃຫ້ມີຄວາມເຂັ້ມແຂງ;
- ຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອ ການຮຽນ-ການສອນຊັ້ນລ້ຽງເດັກ.

**<u>ຍຸດທະສາດທີ 2:</u>** ປະສານສົມທົບຢ່າງມີປະສິດທິພາບ ໃນການພັດທະນາຫຼັກສູດຝຶກອົບຮົມຄູປະຈໍາການ ເພື່ອຮັບ ປະກັນຄວາມສອດຄ່ອງກິມກຽວ ແລະ ກໍານົດວິທີການໃດໜຶ່ງຢ່າງເປັນລະບົບ ທີ່ກ່ຽວກັບການພັດທະນາວິຊາຊີບຄູ.

**<u>ວຽກຈຸດສຸມ:</u>**

- ທົບທວນຫຼັກສູດຝຶກອົບຮົມຄູປະຈໍາການ ສໍາລັບການສຶກສາກ່ອນໄວຮຽນ;
- ດໍາເນີນການຝຶກອົບຮົມຄູປະຈໍາການ ໃນຊັ້ນການສຶກສາກ່ອນໄວຮຽນ;
- ຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອ ຄູປະຈໍາການ ການສຶກສາກ່ອນໄວຮຽນ.

**<u>ຍຸດທະສາດທີ 3:</u>** ພັດທະນາ ແລະ ຈັດຕັ້ງປະຕິບັດ ແຜນປະຕິບັດງານໃນການຂະຫຍາຍການຝຶກອົບຮົມກ່ຽວກັບການ ບໍລິຫານທີ່ອີງໃສ່ໂຮງຮຽນເປັນຫຼັກ ສໍາລັບການສຶກສາກ່ອນໄວຮຽນ.

**<u>ວຽກຈຸດສຸມ:</u>**

- ພັດທະນາຫຼັກສູດຝຶກອົບຮົມ ການບໍລິຫານທີ່ອີງໃສ່ໂຮງຮຽນເປັນຫຼັກ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານທຸກຂັ້ນ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ;
- ຕິດຕາມ, ຊຸກຍູ້ ແລະ ໃຫ້ການຊ່ວຍເຫຼືອແກ່ສະຖານການສຶກສາກ່ອນໄວຮຽນ.

**<u>ຍຸດທະສາດທີ 4</u>**: ສະໜອງການຝຶກອົບຮົມຄູສຶກສານິເທດໃນຊັ້ນການສຶກສາກ່ອນໄວຮຽນ ເພື່ອຫຼຸດຜ່ອນຄວາມແຕກໂຕນ ທາງດ້ານຜົນການຮຽນໃນທຸກຊັ້ນຮຽນ.

**<u>ວຽກຈຸດສຸມ:</u>**

- ສ້າງນິຕິກຳໃນການຄຸ້ມຄອງ ການນິເທດການສຶກສາກ່ອນໄວຮຽນ;
- ປັບປຸງຄູ່ມືສຳລັບຄູສຶກສານິເທດການສຶກສາກ່ອນໄວຮຽນ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ຄູຝຶກ ຄູສຶກສານິເທດການສຶກສາກ່ອນໄວຮຽນ;
- ຝຶກອົບຮົມຄູສຶກສານິເທດການສຶກສາກ່ອນໄວຮຽນ;
- ຕິດຕາມ ແລະ ປະເມີນ ການປະຕິບັດວຽກງານຂອງ ຄູສຶກສານິເທດການສຶກສາກ່ອນໄວຮຽນ.

**ຜົນໄດ້ຮັບລະດັບກາງທີ 2: ມາດຕະຖານການສອນສຳລັບການສຶກສາກ່ອນໄວຮຽນ ໄດ້ຮັບການພັດທະນາ ແລະ ຮັບຮອງ (ພາກທີ I : ຜົນໄດ້ຮັບລະດັບສູງທີ 2, ຜົນໄດ້ຮັບລະດັບກາງທີ 2.3)**

**<u>ຍຸດທະສາດທີ 1:</u>** ສ້າງມາດຕະຖານການສອນ ໃນສະຖານການສຶກສາກ່ອນໄວຮຽນ ໃຫ້ສອດຄ່ອງກັບສະພາບຂອງ ສປປ ລາວ ເຊິ່ງໃຫ້ສາມາດນຳໃຊ້ເປັນພື້ນຖານໃນການປະເມີນການປະຕິບັດງານຂອງຄູ ລວມທັງຈັນຍາບັນຂອງຄູ.

**<u>ວຽກຈຸດສຸມ:</u>**

- ສ້າງມາດຕະຖານການສອນ ໃນສະຖານການສຶກສາກ່ອນໄວຮຽນ;
- ສ້າງມາດຕະຖານການບໍລິການ ໃນສະຖານການສຶກສາກ່ອນໄວຮຽນ;
- ເຜີຍແຜ່ມາດຕະຖານການສອນ ແລະ ມາດຕະຖານການບໍລິການ ໃນການສຶກສາກ່ອນໄວຮຽນ.

**ຜົນໄດ້ຮັບລະດັບກາງທີ 3: ເຄື່ອງມືການປະເມີນການປະຕິບັດໜ້າທີ່ຂອງຄູສອນ ສຳລັບການສຶກສາ ກ່ອນໄວຮຽນ ໄດ້ຮັບການປັບປຸງ ເພື່ອໃຫ້ສອດຄ່ອງກັບມາດຕະຖານການສອນ ແລະ ນຳໃຊ້ເພື່ອເປັນຄູ່ມືໃນການພັດທະນາວິຊາຊີບຂອງຄູ (ພາກທີ I : ຜົນໄດ້ຮັບລະດັບສູງທີ 2, ຜົນໄດ້ຮັບລະດັບກາງທີ 2.3)**

**<u>ຍຸດທະສາດທີ 1:</u>** ສ້າງເຄື່ອງມືການປະເມີນການປະຕິບັດງານຂອງຄູສອນ ສຳລັບການສຶກສາກ່ອນໄວຮຽນໄດ້ຮັບການປັບປຸງ ເພື່ອໃຫ້ສອດຄ່ອງກັບມາດຕະຖານການສອນແບບໃໝ່ ແລະ ຫຼັກສູດໃໝ່ສຳລັບຫ້ອງກຽມທີ່ມີການສອນໃຫ້ແທດເໝາະກັບເດັກແຕ່ລະໄວອາຍຸ ແລະ ນຳໃຊ້ເພື່ອເປັນຄູ່ມືໃນການພັດທະນາວິຊາຊີບຂອງຄູ.

**<u>ວຽກຈຸດສຸມ</u>**:

- ສ້າງເຄື່ອງມືປະເມີນການປະຕິບັດງານຂອງຄູສອນ ໂດຍອີງຕາມມາດຕະຖານການສອນໃນຊັ້ນການສຶກສາກ່ອນໄວຮຽນ ບົນພື້ນຖານຂອງວຽກທີ່ບາງໂຄງການທີ່ສະໜັບສະໜູນໂດຍຄູ່ຮ່ວມພັດທະນາ ທີ່ກຳລັງຈັດຕັ້ງປະຕິບັດຢູ່ໃນປັດຈຸບັນ (ເຊັ່ນ: TEACH ແລະ MELE);
- ສ້າງຄວາມເຂັ້ມແຂງ ໃນການນຳໃຊ້ເຄື່ອງມືປະເມີນການປະຕິບັດໜ້າທີ່ຂອງຄູສອນ ໂດຍອີງໃສ່ມາດຕະຖານການສອນໃນຊັ້ນການສຶກສາກ່ອນໄວຮຽນ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ແຂວງ ແລະ ເມືອງ ໃນການນຳໃຊ້ເຄື່ອງມືປະເມີນວຽກງານຕຳແໜ່ງວິຊາການຄູ.

**2.3.3. ສະຖານການສຶກສາກ່ອນໄວຮຽນທຸກແຫ່ງມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດພຽງພໍ ເພື່ອໃຫ້ສາມາດເຮັດວຽກໄດ້ຢ່າງມີປະສິດທິຜົນ, ພ້ອມທັງຂີດຄວາມສາມາດໃນການຄຸ້ມຄອງໂຮງຮຽນ ແລະ ການສະໜັບສະໜູນຂອງຄະນະພັດທະນາການສຶກສາຂັ້ນບ້ານມີຄວາມເຂັ້ມແຂງຂຶ້ນ ເພື່ອໃຫ້ສອດຄ່ອງກັບມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ແລະ ຊ່ວຍໃຫ້ຜົນການຮຽນຂອງນັກຮຽນປັບປຸງດີຂຶ້ນ (ພາກທີ I: ຜົນໄດ້ຮັບລະດັບສູງທີ 3)**

➢ **ຫຼັກການ ແລະ ເຫດຜົນ**

ລາຍລະອຽດຂອງຫຼັກການ ແລະ ເຫດຜົນ ໄດ້ກຳນົດໄວ້ໃນພາກທີ I ຂອງແຜນ ແລະ ສິ່ງທ້າທາຍ ກໍໄດ້ລະບຸໄວໃນຂໍ້ທີ 1 ຂ້າງເທິງນີ້. ຈຸດສຳຄັນຂອງການສຶກສາກ່ອນໄວຮຽນແມ່ນ ການນຳໃຊ້ມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາກ່ອນໄວຮຽນ ເປັນກົນໄກຈັດລຳດັບຄວາມສຳຄັນຂອງຊັບພະຍາກອນ ແລະ ການສະໜັບສະໜູນເພື່ອປັບປຸງຄຸນນະພາບຂອງການສິດສອນ ແລະ ການຮຽນໃນສະຖານການສຶກສາກ່ອນໄວຮຽນ ເພື່ອກຽມຄວາມພ້ອມໃຫ້ເດັກນ້ອຍກ່ອນເຂົ້າໂຮງຮຽນປະຖົມ.

**ຜົນໄດ້ຮັບລະດັບກາງທີ 1: ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາໄດ້ຖືກຮັບຮອງ ແລະ ນຳໃຊ້ໃນທົ່ວປະເທດ (ພາກທີ I : ຜົນໄດ້ຮັບລະດັບສູງທີ 3, ຜົນໄດ້ຮັບລະດັບກາງທີ 3.1)**

**ຍຸດທະສາດທີ 1**: ພັດທະນາມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ສຳລັບການສຶກສາກ່ອນໄວຮຽນ
**ວຽກຈຸດສຸມ:**

- ພັດທະນາ ແລະ ຮັບຮອງນຳໃຊ້ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາກ່ອນໄວຮຽນ ໂດຍອີງໃສ່ຂອບມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາຊັ້ນປະຖົມສຶກສາ;
- ພັດທະນາເຄື່ອງມືການປະເມີນຕົນເອງ ຂອງມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາກ່ອນໄວຮຽນ ແລະ ທົດລອງໃຊ້ ໃນສະຖານການສຶກສາກ່ອນໄວຮຽນ;
- ພັດທະນາ ແລະ ຮັບຮອງນິຕິກຳ ແລະ ຄຳແນະນຳໃນການດຳເນີນງານ ສຳລັບຜູ້ໃຫ້ບໍລິການການສຶກສາ ແລະ ວິຊາການ ການສຶກສາກ່ອນໄວຮຽນ ຂອງຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ ໃນການສະໜັບສະໜູນ ແລະ ແນະນຳການນຳໃຊ້ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາກ່ອນໄວຮຽນ;
- ສ້າງແຜນການຈັດຕັ້ງປະຕິບັດ ພ້ອມແຜນການເງິນ, ການຝຶກອົບຮົມ ແລະ ການເຜີຍແຜ່ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ;
- ທົດລອງນຳໃຊ້ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາກ່ອນໄວຮຽນພ້ອມທັງປະເມີນ ແລະ ປັບປຸງ;
- ຈັດຕັ້ງປະຕິບັດມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາກ່ອນໄວຮຽນ ໃນທົ່ວປະເທດ ໂດຍອີງຕາມແຜນການຈັດຕັ້ງປະຕິບັດ, ການຝຶກອົບຮົມ ແລະ ການເຜີຍແຜ່ທີ່ໄດ້ກຳນົດ;
- ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາກ່ອນໄວຮຽນ.

**ຍຸດທະສາດທີ 2**: ສ້າງແຜນປະຕິບັດງານ ແລະ ຮັບຮອງ ການນຳໃຊ້ມາດຕະຖານຄຸນນະພາບຂັ້ນພື້ນຖານ ສຳລັບການສຶກສາກ່ອນໄວຮຽນ ຢູ່ໃນຂັ້ນເມືອງ ເພື່ອຊ່ວຍຂັ້ນເມືອງໃນການສ້າງແຜນ ແລະ ຄັດເລືອກບູລິມະສິດ ເພື່ອຫຼຸດຜ່ອນຄວາມແຕກໂຕນ.
**ວຽກຈຸດສຸມ:**

- ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານຂັ້ນເມືອງກ່ຽວກັບຂະບວນການໃນການສ້າງແຜນ ໂດຍອີງໃສ່ບູລິມະສິດ ເພື່ອໃຫ້ບັນລຸໄດ້ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ;
- ຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອເມືອງໃນການສ້າງແຜນ ແລະ ຄັດເລືອກບູລິມະສິດ ເພື່ອຫຼຸດຜ່ອນຄວາມແຕກໂຕນ.

**<u>ຍຸດທະສາດທີ 3:</u>** ສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍງານປະກັນຄຸນນະພາບ, ກວດກາ ແລະ ຕິດຕາມ-ປະເມີນຜົນ ຢູ່ຂັ້ນເມືອງ;

**<u>ວຽກຈຸດສຸມ:</u>**

- ພັດທະນາຄູ່ມືກ່ຽວກັບການກວດກາ ແລະ ຕິດຕາມ-ປະເມີນຜົນ ໂດຍອີງໃສ່ຂັ້ນຕອນຂອງການປະກັນຄຸນນະພາບ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍງານປະກັນຄຸນນະພາບ, ກວດກາ ແລະ ຕິດຕາມ-ປະເມີນຜົນ ຢູ່ຂັ້ນເມືອງ;
- ຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອໜ່ວຍງານປະກັນຄຸນນະພາບກ່ຽວກັບການກວດກາ ແລະ ຕິດຕາມ-ປະເມີນຜົນ.

**<u>ຍຸດທະສາດທີ 4</u>**: ປະເມີນເຖິງການນຳໃຊ້ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາກ່ອນໄວຮຽນ ເຂົ້າໃນການພັດທະນາການສຶກສາຂັ້ນເມືອງ ເພື່ອຫຼຸດຜ່ອນຄວາມແຕກໂຕນພາຍໃນເມືອງ.

**<u>ວຽກຈຸດສຸມ</u>**:

- ພັດທະນາຄູ່ມືແນະນຳການສ້າງແຜນ ພັດທະນາການສຶກສາຂອງຂັ້ນເມືອງ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ ຂັ້ນເມືອງ ກ່ຽວກັບການສ້າງແຜນ ພັດທະນາການສຶກສາຂອງເມືອງ;
- ຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອ ການສ້າງແຜນພັດທະນາການສຶກສາຂັ້ນເມືອງ.

# II. ຂະແໜງການຍ່ອຍການປະຖົມສຶກສາ

## 1. ພາກສະເໜີ

### 1.1 ຜົນສໍາເລັດ

ພາກ I ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 (ຂໍ້ທີ 2 ແລະ 3) ໄດ້ລະບຸລາຍລະອຽດກ່ຽວກັບຜົນສໍາເລັດຂອງວຽກງານປະຖົມສຶກສາ. ຜົນສໍາເລັດທີ່ພົ້ນເດັ່ນອື່ນໆລວມມີ ການກໍ່ສ້າງຫ້ອງຮຽນ ແລະ ສິ່ງອໍານວຍຄວາມສະດວກດ້ານສຸຂະອະນາໄມຕ່າງໆ ແລະ ແຜນງານການສະໜອງອາຫານໃນໂຮງຮຽນກໍໄດ້ສືບຕໍ່ຈັດຕັ້ງປະຕິບັດ. ຫຼັກສູດກໍາລັງປັບປຸງໃໝ່ໃນທຸກໆຂັ້ນຮຽນ ຊຶ່ງຈະສໍາເລັດພາຍໃນສົກຮຽນ 2023-2024. ມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາຊັ້ນປະຖົມໄດ້ຮັບການພັດທະນາ ແລະ ຮັບຮອງນໍາໃຊ້ຢ່າງເປັນທາງການ.

ຄວາມຕ້ອງການຂອງການສຶກສາຊັ້ນປະຖົມແມ່ນມີການຂະຫຍາຍຕົວ - ເບິ່ງຕາຕະລາງ 12 ແລະ 13.

**ຕາຕະລາງ 12: ສົມທຽບຕົວຊີ້ບອກຊັ້ນປະຖົມສຶກສາແຕ່ປີ 2016-2020**

| ຕົວຊີ້ບອກ | | 2015-16 | 2016-17 | 2017-18 | 2018-19 | 2019-20 |
|---|---|---|---|---|---|---|
| ຈໍານວນໂຮງຮຽນ (ລັດ ແລະ ເອກະຊົນ) | | 8.864 | 8.849 | 8.857 | 8.854 | 8.823 |
| ຈໍານວນຫ້ອງຮຽນ (ລັດ ແລະ ເອກະຊົນ) | | 34.229 | 34.305 | 34.120 | 33.992 | 33.226 |
| ຈໍານວນນັກຮຽນທັງໝົດ (ລັດ ແລະ ເອກະຊົນ) | ລວມ | 827.987 | 808.705 | 786.246 | 770.659 | 760.566 |
| | ຍິງ | 397.529 | 389.326 | 378.298 | 371.442 | 367.111 |
| | ຊາຍ | 430.458 | 419.379 | 407.948 | 399.217 | 393.455 |
| ຈໍານວນນັກຮຽນໃນໂຮງຮຽນລັດ | ລວມ | 784.176 | 762.738 | 737.484 | 717.853 | 704.605 |
| | ຍິງ | 376.658 | 367.314 | 355.044 | 346.369 | 340.547 |
| | ຊາຍ | 407.518 | 395.424 | 382.440 | 371.484 | 364.058 |
| ຈໍານວນພະນັກງານ ແລະ ຄູສອນ (ພາກລັດ) | | 35.682 | 35.671 | 35.405 | 34.829 | 32.214 |
| ອັດຕາເຂົ້າຮຽນໃໝ່ສຸດທິ (%) | ຍິງ | 97,8 | 97,4 | 97,6 | 97,9 | 98,4 |
| | ຊາຍ | 98,1 | 97,8 | 97,9 | 98,4 | 98,6 |
| ອັດຕາເຂົ້າຮຽນສຸດທິ (%) | ຍິງ | 98,5 | 98,6 | 98,6 | 98,8 | 98,7 |
| | ຊາຍ | 99,0 | 98,8 | 99,0 | 99,3 | 99,0 |
| ອັດຕາເຂົ້າຮຽນລວມໃໝ່ ປ.5[30] (%) | ຍິງ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | 104,3 | 103,6 | 100,3 |
| | ຊາຍ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | 104,8 | 103,4 | 100,5 |
| ດັດຊະນີຄວາມສະເໝີພາບຍິງ-ຊາຍ ອັດຕາເຂົ້າຮຽນລວມໃໝ່ ປ.5 | | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | 0,99 | 1,00 | 0,99 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

[30] ອັດຕາຈົບຊັ້ນລວມ ຄິດໄລ່ດ້ວຍການເອົາຈໍານວນນັກຮຽນທີ່ເຂົ້າຮຽນໃໝ່ ຂັ້ນ ປ.5 ທັງໝົດ ຫານໃຫ້ປະຊາກອນ ອາຍຸ 10 ປີ.

**ຕາຕະລາງ 13: ສົມທຽບປະສິດທິພາບພາຍໃນສໍາລັບການສຶກສາຊັ້ນປະຖົມ**

| ຕົວຊີ້ບອກ | | 2015-16 | 2016-17 | 2017-18 | 2018-19 | 2019-2020 |
|---|---|---|---|---|---|---|
| ອັດຕາການປະລະ ປ.1 (%) | ຍິງ | 7,0 | 6,2 | 5.1 | 5.4 | 5.3 |
| | ຊາຍ | 7,4 | 7,5 | 6.4 | 7.0 | 7.3 |
| ອັດຕາການຄ້າງຫ້ອງ ປ.1 (%) | ຍິງ | 10,4 | 8.2 | 7.8 | 7.4 | 5.2 |
| | ຊາຍ | 12,6 | 10.2 | 9.8 | 9.4 | 7.2 |
| ອັດຕາປະລະ (%) | ຍິງ | 4,5 | 4.1 | 3.8 | 3.8 | 3.7 |
| | ຊາຍ | 5,0 | 4.7 | 4.4 | 4.7 | 4.7 |
| ດັດຊະນີຄວາມສະເໝີພາບ ຍິງ-ຊາຍ ອັດຕາປະລະ | | 0,90 | 0.87 | 0.86 | 0.81 | 0.76 |
| ອັດຕາການຄ້າງຫ້ອງ(%) | ຍິງ | 4,1 | 3.4 | 3.3 | 3.1 | 2.4 |
| | ຊາຍ | 5,5 | 4.8 | 4.8 | 4.6 | 3.8 |
| ດັດຊະນີຄວາມສະເໝີພາບ ຍິງ-ຊາຍ ອັດຕາການຄ້າງຫ້ອງ | | 0,75 | 0.71 | 0.69 | 0.67 | 0.63 |
| ອັດຕາລອດເຫຼືອຕາມກະແສນັກຮຽນ (%) | ຍິງ | 79.1 | 80.8 | 82.1 | 81.9 | 82.7 |
| | ຊາຍ | 76.6 | 77.9 | 78.9 | 77.9 | 77.4 |
| ດັດຊະນີຄວາມສະເໝີພາບ ຍິງ-ຊາຍ ອັດຕາຈົບຊັ້ນຕາມກະແສນັກຮຽນ | | 1.03 | 1.04 | 1.04 | 1.05 | 1.07 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

## 1.2 ສິ່ງທ້າທາຍ

ພາກທີ I (ຂໍ້ 3) ຂອງແຜນພັດທະນາຂະແໜງການສຶກສາ 2021-2025 ໄດ້ໃຫ້ລາຍລະອຽດກ່ຽວກັບສິ່ງທ້າທາຍສໍາລັບຂະແໜງການຍ່ອຍປະຖົມສຶກສາ. ບູລິມະສິດທີ່ສໍາຄັນສໍາລັບຂະແໜງຍ່ອຍປະຖົມ ແມ່ນເພື່ອຮັບປະກັນໃຫ້ນັກຮຽນທີ່ຮຽນຈົບຊັ້ນປະຖົມທຸກຄົນ, ລວມທັງຜູ້ທີ່ບໍ່ໃຊ້ພາສາລາວເປັນພາສາແມ່ ແມ່ນໃຫ້ສາມາດອ່ານອອກຂຽນໄດ້ ແລະ ຄິດໄລ່ເລກເປັນ. ຍັງມີ "ຊ່ອງຫວ່າງທາງເພດ" ຊຶ່ງເຫັນວ່າ ເດັກຍິງຮຽນໄດ້ດີກ່ວາເດັກຊາຍ ຕາມຕົວຊີ້ວັດຫຼາຍໆຕົວ, ເຖິງແມ່ນວ່າຍັງບໍ່ມີສິ່ງອ້າງອີງທີ່ຈະແຈ້ງວ່າເປັນດ້ວຍເຫດຜົນຫຍັງ ແລະ ຕ້ອງມີການສຶກສາເພີ່ມເຕີມກ່ຽວກັບເລື່ອງນີ້. ດັ່ງນັ້ນ ຈຶ່ງເຮັດໃຫ້ດັດຊະນີຄວາມສະເໝີພາບຍິງ-ຊາຍ ສໍາລັບການເຂົ້າຮຽນຮອດ ຊັ້ນ ປ.5 ແມ່ນເທົ່າທຽມກັນ. ສິ່ງທ້າທາຍທີ່ສໍາຄັນອື່ນໆ ທີ່ເກີດຈາກຂໍ້ຈໍາກັດດ້ານງົບປະມານ ລວມມີຂໍ້ຈໍາກັດຂອງຈໍານວນຄູສຶກສານິເທດ ແລະ ພະນັກງານຂັ້ນເມືອງ ໃນການໃຫ້ຄໍາແນະນໍາແກ່ຄູສອນ ແລະ ການລົງຕິດຕາມໂຮງຮຽນ, ພ້ອມທັງການຂາດຄູສອນໃນບາງເຂດ. ໄດ້ກໍານົດຄາດໝາຍໃຫ້ໂຮງຮຽນທຸກແຫ່ງ ໄດ້ບັນລຸການຈັດສັນຄູໃຫ້ສອດຄ່ອງກັບມາດ ຕະຖານໃນການບັນຈຸຄູໃຫ້ໄດ້ 80% ທຽບໃສ່ມາດຕະຖານທີ່ກໍານົດ. ຍ້ອນຮັບຮູ້ວ່າ ມັນມີຄວາມຫຍຸ້ງຍາກໃນການຈັດສັນຄູຄືນໃໝ່, ດັ່ງນັ້ນ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາຈຶ່ງກໍານົດຄາດໝາຍຕໍ່າກ່ວາ 100%. ນອກຈາກນີ້, ການກໍານົດຄາດໝາຍທີ່ຕໍ່າກວ່າ 100% ຈະຊ່ວຍເພີ່ມບູລິມະສິດໃຫ້ກັບໂຮງຮຽນທີ່ຂາດເຂີນຄູຫຼາຍທີ່ສຸດ ແລະ ໂຮງຮຽນທີ່ນ້ອຍທີ່ສຸດ ທີ່ມີຄູຢູ່ໃນລະດັບທີ່ຕໍ່າກວ່າມາດຕະຖານທີ່ກໍານົດ.

ການຮຽກຮ້ອງໃຫ້ສ້າງອາຄານຮຽນ ແມ່ນຄວາມຕ້ອງການທົ່ວໄປທີ່ໄດ້ສະເໜີໃນກອງປະຊຸມປຶກສາຫາລືກັບບັນດາແຂວງ ແລະ ເມືອງ, ແຕ່ວ່າບໍ່ມີຫຼັກຖານທີ່ສະແດງໃຫ້ເຫັນວ່າ ມີເດັກນ້ອຍຫຼາຍປານໃດໃນແຕ່ລະບ້ານ ຫຼື ຊຸມຊົນທີ່ບໍ່ໄດ້ເຂົ້າໂຮງຮຽນ ຍ້ອນບໍ່ມີໂຮງຮຽນ.

## 2. ບູລິມະສິດ ສໍາລັບແຕ່ປີ 2021-2025

### 2.1. ຈຸດປະສົງ

1) ເພື່ອປັບປຸງຄວາມຮູ້ທາງດ້ານເນື້ອໃນຂອງວິຊາສອນ ແລະ ທັກສະການສິດສອນຂອງຄູປະຖົມ;
2) ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສຶກສາແຂວງ, ສຶກສາເມືອງ, ກຸ່ມໂຮງຮຽນ ແລະ ໂຮງຮຽນ ເພື່ອສົ່ງເສີມປະສິດທິຜົນ, ປະສິດທິພາບ ແລະ ຄວາມຮັບຜິດຊອບ ໃນການພັດທະນາການສຶກສາຊັ້ນປະຖົມສຶກສາ;
3) ເພື່ອປັບປຸງຜົນການຮຽນຂອງນັກຮຽນປະຖົມໃຫ້ດີຂຶ້ນ ແລະ ເພື່ອຫຼຸດຜ່ອນຄວາມແຕກໂຕນກັນ ໂດຍຜ່ານການຄຸ້ມຄອງຊັບພະຍາກອນທີ່ມີປະສິດທິພາບ ແລະ ປະສິດທິຜົນຕໍ່ເປົ້າໝາຍການປະຕິບັດວຽກງານການສຶກສາຊັ້ນປະຖົມໃນທົ່ວປະເທດ ໂດຍສະເພາະໃນ 40 ເມືອງດ້ອຍໂອກາດ ຕາມການກຳນົດຂອງກະຊວງສຶກສາທິການ ແລະ ກິລາ.

### 2.2. ຄາດໝາຍ

ຂໍ້ມູນປີຖານ ແລະ ຄາດໝາຍ ສໍາລັບຕົວຊີ້ບອກທີ່ສໍາຄັນໄດ້ສະໜອງໄວ້ໃນພາກທີ I, ຂໍ້ 8.5 (ຕາຕະລາງຕິດຕາມ ແລະ ປະເມີນຜົນ). ຕົວຊີ້ບອກຫຼັກ ແລະ ຄາດໝາຍ 2025 ສໍາລັບຂະແໜງຍ່ອຍປະຖົມມີດັ່ງນີ້:

1) ອັດຕາສ່ວນຮ້ອຍຂອງນັກຮຽນ ປ.5 ທີ່ບັນລຸຜົນການຮຽນຕາມມາດຕະຖານຕໍ່າສຸດ.
   - ວິຊາພາສາລາວ 50%;
   - ວິຊາຄະນິດສາດ 30%;
2) ອັດຕາເຂົ້າຮຽນໃໝ່ລວມຂັ້ນ ປ.5.
   - ລະດັບຊາດ 100%;
   - 40 ເມືອງ 100%;
3) ດັດຊະນີຄວາມສະເໝີພາບຍິງ-ຊາຍອັດຕາເຂົ້າຮຽນໃໝ່ລວມຂັ້ນ ປ.5.
   - ລະດັບຊາດ ໃຫ້ບັນລຸລະຫວ່າງ 0,97-1,03;
   - 40 ເມືອງ ໃຫ້ບັນລຸລະຫວ່າງ 0,97-1,03;
4) ອັດຕາປະລະຊັ້ນປະຖົມ.
   - ລະດັບຊາດ: 2%;
   - 40 ເມືອງ: 5%;
5) ອັດຕາລອດເຫຼືອຮອດ ປ.5.
   - ລະດັບຊາດ: 90%;
   - 40 ເມືອງ: 78%;
6) ເປີເຊັນຂອງໂຮງຮຽນປະຖົມທີ່ບັນລຸການບັນຈຸຄູ 80% ສອດຄ່ອງກັບມາດຕະຖານການບັນຈຸຄູ.
   - ລະດັບຊາດ 79,5%;
   - 40 ເມືອງ 69,5%;

### 2.3. ຜົນໄດ້ຮັບລະດັບສູງ

**<u>ໝາຍເຫດ:</u>** ສໍາລັບແຕ່ລະຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ, ຈະມີການອ້າງອີງເປັນວົງເລັບ ຫຼັງຈາກ ສໍານວນທີ່ກ່າວເຖິງພາກທີ I ຂອງແຜນ 5 ປີ. ສິ່ງນີ້ຈະເຮັດໃຫ້ຜູ້ອ່ານສາມາດນໍາໃຊ້ແຜນຂອງຂະແໜງການຍ່ອຍນີ້ ເປັນແຜນສະເພາະ ແຕ່ສາມາດອ້າງອີງເຖິງນະໂຍບາຍທີ່ກ່ຽວຂ້ອງ ດັ່ງທີ່ໄດ້ລະບຸໄວ້ໃນພາກທີ I. ແຜນຂອງ ຂະແໜງການຍ່ອຍປະຖົມ ບໍ່ຈໍາເປັນຕ້ອງແກ້ໄຂທຸກໆຜົນໄດ້ຮັບລະດັບກາງຂອງຜົນໄດ້ຮັບລະດັບສູງ. ບາງຜົນໄດ້ ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ ໄດ້ຖືກດັດແກ້ເພື່ອສະແດງໃຫ້ເຫັນຈຸດສຸມຂອງຂະແໜງຍ່ອຍ.

### 2.3.1. ຈໍານວນນັກຮຽນທີ່ຈົບຈາກການສຶກສາຊັ້ນປະຖົມສຶກສາເພີ່ມຂຶ້ນ ພ້ອມທັງມີຜົນໄດ້ຮັບດ້ານການຮຽນຮູ້ທີ່ ດີຂຶ້ນ, ໂດຍສະເພາະແມ່ນທັກສະການຮູ້ໜັງສື ແລະ ທັກສະການຄິດໄລ່ເລກ, ທັກສະສັດຕະວັດທີ 21 ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ;

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງລາຍລະອຽດຢູ່ພາກທີ I ຂອງແຜນ ສໍາລັບຫຼັກການ ແລະ ເຫດຜົນຕ່າງໆ. ປະເດັນທີ່ສໍາຄັນປະກອບມີ: (i) ການຈັດສັນເວລາເພື່ອໃຫ້ສໍາເລັດຫຼັກສູດໃນທຸກໆຂັ້ນຮຽນຍັງບໍ່ພຽງພໍ ແລະ/ຫຼື ບໍ່ສົມສ່ວນກັນ, (ii) ການຊ່ວຍ ເຫຼືອ ໂຮງຮຽນຂອງຄູສຶກສານິເທດບໍ່ມີປະສິດທິພາບພຽງພໍ, (iii) ການຈັດສັນເວລາຂອງໂຮງຮຽນໃນການບໍາລຸງນັກ ຮຽນ ທີ່ຕ້ອງການຊ່ວຍເຫຼືອບໍ່ພຽງພໍ, (iv) ຫຼັກວິຊາຄູສໍາລັບການສິດສອນພາລາລາວໃຫ້ເດັກຊົນເຜົ່າບໍ່ເໝາະສົມ, (v) ອຸປະກອນຮັບໃຊ້ການສິດສອນ ເພື່ອຊ່ວຍປັບປຸງໃຫ້ຜູ້ຮຽນທີ່ເປັນຊົນເຜົ່າໄດ້ຮຽນຮູ້ພາສາລາວຍັງຂາດ ເຂີນ ຫຼື ບໍ່ໄດ້ ນໍາໃຊ້ ແລະ (vi) ຄູທີ່ຈະສອນຊັ້ນ ປ.1 ສ່ວນໃຫຍ່ແມ່ນຄູບໍ່ມີປະສົບການ.

**ຜົນໄດ້ຮັບລະດັບກາງທີ 1: ຫຼັກສູດສະບັບປັບປຸງໄດ້ຮັບການຈັດຕັ້ງປະຕິບັດໃນທຸກຊັ້ນຮຽນ (ພາກທີ I ຜົນໄດ້ຮັບ ລະດັບສູງທີ 1, ຜົນໄດ້ຮັບລະດັບກາງທີ 1.1)**

**<u>ຍຸດທະສາດທີ 1:</u>** ທົບທວນຈໍານວນວິຊາຮຽນ ແລະ ແລະ ການຈັດສັນເວລາເຂົ້າໃນການສິດສອນວິຊາຕ່າງໆ ຂອງຂັ້ນ ປ.1 ແລະ ປ.2 ຂອງການສຶກສາຊັ້ນປະຖົມ.

**<u>ວຽກຈຸດສຸມ</u>**

- ດໍາເນີນການປະເມີນຮ່ວມປະຈໍາປີ ເພື່ອຕິດຕາມການຈັດສັນເວລາເຂົ້າໃສ່ການສອນພາສາລາວ ແລະ ຄະນິດ ສາດ ໃນຊັ້ນປະຖົມ ປີທີ 1 ແລະ 2;
- ຮັບປະກັນວ່າເວລາດໍາເນີນການປະເມີນກາງສະໄໝ ຕ້ອງໄດ້ແກ້ໄຂບັນຫາຜົນກະທົບຂອງຫຼັກສູດໃໝ່ ໃນ ປ.1 ແລະ 2 ກ່ຽວກັບຄວາມຮູ້ດ້ານພາສາລາວ ແລະ ຄະນິດສາດ;
- ໂດຍປະຕິບັດຕາມຂໍ້ແນະນໍາຂອງການປະເມີນກາງສະໄໝ, ກໍານົດຄວາມຕ້ອງການທີ່ຈະຊ່ວຍໃຫ້ມີການຈັດ ສັນເວລາໃສ່ການສິດສອນພາສາລາວ ແລະ ຄະນິດສາດ ໃນຊັ້ນປະຖົມປີທີ 1 ແລະ 2 ໂດຍອາດຈະຫຼຸດຈໍາ ນວນວິຊາຮຽນໃນຊັ້ນຮຽນດັ່ງກ່າວ.

**<u>ຍຸດທະສາດທີ 2:</u>** ປັບປຸງ ແລະ ທົບທວນຫຼັກສູດປະຖົມສຶກສາ ເພື່ອຮັບປະກັນໃຫ້ເນື້ອໃນແທດເໝາະກັບສະ ພາບຂອງປະເທດ.

**<u>ວຽກຈຸດສຸມ:</u>**

- ປັບປຸງຫຼັກສູດ ປ.3 ຫາ ປ.5 ພ້ອມທັງພັດທະນາຄູ່ມືຄູ ແລະ ປຶ້ມແບບຮຽນ;
- ສົ່ງເສີມການຈັດຕັ້ງການຮຽນ-ການສອນ ພາສາຕ່າງປະເທດໃນໂຮງຮຽນ;
- ສົ່ງເສີມ ແລະ ຊຸກຍູ້ ການຮຽນ-ການສອນວິຊາພາສາລາວແບບໃໝ່ ແລະ ໃຫ້ນັກຮຽນສາມາດອ່ານອອກ ແລະ ຂຽນໄດ້ ຖືກຕາມຫຼັກໄວຍາກອນ;

- ສົ່ງເສີມ ແລະ ຊຸກຍູ້ ການຮຽນ-ການສອນວິຊາຄະນິດສາດແບບໃໝ່ ແລະ ໃຫ້ນັກຮຽນຄິດໄລ່ເລກ 4 ປະການໄດ້ຂັ້ນພື້ນຖານ.

**<u>ຍຸດທະສາດທີ 3:</u>** ປັບປຸງເວລາຮຽນຂອງນັກຮຽນໃນຫ້ອງຮຽນ

**<u>ວຽກຈຸດສຸມ:</u>**

- ວິໄຈເຖິງເວລາຮຽນຂອງນັກຮຽນໃນແຕ່ລະຊົ່ວໂມງ ຊຶ່ງອາດໃຊ້ເວລາ 45 ນາທີ ຕໍ່ ຊົ່ວໂມງ ແທນທີ່ຈະສອນ 90 ນາທີ (ລວດດຽວ) ສໍາລັບ 2 ຊົ່ວໂມງ.

**ຜົນໄດ້ຮັບລະດັບທີ 2: ການວັດຜົນການຮຽນຂອງນັກຮຽນ ປ.3 ແລະ ປ.5 ໄດ້ຮັບການປັບປຸງ ( ພາກທີ I ຜົນໄດ້ຮັບລະດັບສູງທີ 1, ຜົນໄດ້ຮັບລະດັບກາງທີ 1.2)**

**<u>ຍຸດທະສາດທີ 1:</u>** ສ້າງຄວາມເຂັ້ມແຂງໃຫ້ລະບົບການສອບເສັງຊັ້ນປະຖົມ ປ.5.

**<u>ວຽກຈຸດສຸມ:</u>**

- ພັດທະນາມາດຕະຖານການອອກຂໍ້ສອບເສັງ ຈົບຊັ້ນ ປ.5;
- ພັດທະນາຄູ່ມືແນະນໍາໃນການອອກຂໍ້ສອບເສັງທຽບ ແລະ ຈົບຊັ້ນ ປ. 5;
- ລົງຕິດຕາມ ແລະ ປະເມີນ ການຈັດຕັ້ງປະຕິບັດ ການອອກຂໍ້ສອບເສັງທຽບ ແລະ ຈົບຊັ້ນ ປ. 5.

**<u>ຍຸດທະສາດທີ 2:</u>** ສ້າງມາດຕະຖານການປະເມີນການຮຽນຮູ້ຂອງນັກຮຽນ ປ. 3 ແລະ ປ. 5.

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຍຸດທະສາດນີ້ໄດ້ຢ່າງເຕັມສ່ວນ, ແມ່ນມີຄວາມຕ້ອງການງົບປະມານດັ່ງທີ່ກໍານົດຢູ່ໃນສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອຈາກຕ່າງປະເທດ ຕ້ອງສຸມໃສ່ການຈັດຕັ້ງປະຕິບັດຍຸດທະສາດນີ້.

**<u>ວຽກຈຸດສຸມ:</u>**

- ພັດທະນາແຜນປະຕິບັດງານ ພ້ອມແຜນງົບປະມານ ເພື່ອຮັບໃຊ້ການປະເມີນຜົນການຮຽນຂອງນັກຮຽນ ປ.3 ແລະ ປ.5.

**<u>ຍຸດທະສາດທີ 3:</u>** ສ້າງຄວາມເຂັ້ມແຂງຄວາມສາມາດຂອງຄູໃນການປະເມີນຜົນການຮຽນຂອງນັກຮຽນ ໂດຍນໍາໃຊ້ຮູບແບບການປະເມີນປະຈໍາໃນຫ້ອງຮຽນ ແລະ ການປະເມີນຜົນລວມ.

**<u>ວຽກຈຸດສຸມ:</u>**

- ປັບປຸງປຶ້ມຄູ່ມືຄູການປະເມີນ ເພື່ອປະກອບມີຍຸດທະສາດການປະເມີນແບບງ່າຍດາຍ ແລະ ປະເມີນພາກປະຕິບັດຕົວຈິງ ເຊັ່ນ: ການປະເມີນແຕ່ລະຫົວຂໍ້, ການເຮັດບົດຝຶກຫັດແຕ່ລະບົດຮຽນ ແລະ ອື່ນໆ ທີ່ຄູສາມາດນໍາໃຊ້ໃນຫ້ອງຮຽນ ເພື່ອຮັບປະກັນວ່າຄູກວດກາຜົນການຮຽນຂອງນັກຮຽນແຕ່ລະຄົນ ແລະ ບັນທຶກຜົນໄດ້ຮັບຢ່າງເປັນປະຈໍາ;
- ບັນຈຸເອົາວິທີການປະເມີນຜົນການຮຽນຮູ້ຂອງນັກຮຽນ ແລະ ເຄື່ອງມືການປະເມີນຕ່າງໆ (ປະເມີນໃນຫ້ອງຮຽນ ແລະ ປະເມີນຜົນລວມ) ເຂົ້າໃນຫຼັກສູດການສ້າງຄູ ແລະ ການຝຶກອົບຮົມຄູປະຈໍາການ ແລະ ການພັດທະນາວິຊາຊີບແບບຕໍ່ເນື່ອງຂອງຄູ;
- ໃຫ້ການສະໜັບສະໜູນຄູທາງດ້ານວິຊາການ ໃນການນໍາໃຊ້ຫຼັກສູດໃໝ່ ແລະ ນໍາໃຊ້ວິທີການສິດສອນແບບກ້າວໜ້າຢ່າງມີປະສິດທິຜົນ;
- ພັດທະນາ ແລະ ປັບປຸງ ເຄື່ອງມືໃນການປະເມີນຜົນການຮຽນຂອງນັກຮຽນ ປ.1 ຫາ ປ.5;
- ສ້າງຄວາມເຂັ້ມແຂງ ໃຫ້ແກ່ຄູປະຈໍາການ ໃນການປະເມີນຜົນການຮຽນຂອງນັກຮຽນ ປ.1 ຫາ ປ.5;

- ລົງຊຸກຍູ້, ກວດກາ ແລະ ຕິດຕາມໃນການນຳໃຊ້ຫຼັກສູດໃໝ່;
- ສ້າງຄວາມເຂັ້ມແຂງໃຫ້ແກ່ຄູນິເທດພາຍໃນ ແລະ ກຸ່ມໂຮງຮຽນ.

**ຜົນໄດ້ຮັບລະດັບກາງທີ 3: ອັດຕາເຂົ້າຮຽນໃໝ່ ແລະ ອັດຕາເລື່ອນຂັ້ນຊັ້ນປະຖົມ ໄດ້ເພີ່ມຂຶ້ນ ເພື່ອເຮັດໃຫ້ອັດຕາຈົບຊັ້ນເພີ່ມຂຶ້ນ (ພາກທີ I ຜົນໄດ້ຮັບລະດັບສູງທີ 1, ຜົນໄດ້ຮັບລະດັບກາງທີ 1.3)**

**<u>ຍຸດທະສາດທີ 1:</u>** ພັດທະນາ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດການສະໜອງອາຫານໃນໂຮງຮຽນແບບຍືນຍົງ (ແຜນຊັບພະຍາກອນມະນຸດ ແລະ ແຜນການເງິນ) ໂດຍອີງໃສ່ຍຸດທະສາດ ແລະ ແຜນປະຕິບັດງານອາຫານໃນໂຮງຮຽນ.

**<u>ວຽກຈຸດສຸມ</u>**

- ວິເຄາະຜົນໄດ້ຮັບຂອງໂຄງການສະໜອງອາຫານ / ອາຫານໃນໂຮງຮຽນໃນຜ່ານມາ ແລະ ປະຈຸບັນ, ລວມທັງປະສິດທິພາບດ້ານຄ່າໃຊ້ຈ່າຍ;
- ສ້າງຍຸດທະສາດ ແລະ ແຜນປະຕິບັດງານຮອດປີ 2025 ສຳລັບແຜນງານອາຫານໃນໂຮງຮຽນ[31] ທີ່ແນໃສ່ນັກຮຽນທີ່ດ້ອຍໂອກາດທີ່ອາໄສຢູ່ໃນເຂດທີ່ຂາດແຄນອາຫານ, ໂດຍຜ່ານວິທີການທີ່ມີຄວາມຍືນຍົງທາງດ້ານການເງິນ;
- ການສ້າງຂີດຄວາມສາມາດໃຫ້ແກ່ຊຸມຊົນ ໃນການຈັດຕັ້ງປະຕິບັດໂຄງການອາຫານໃນໂຮງຮຽນ;
- ສະໜອງອຸປະກອນປຸງແຕ່ງອາຫານ ແລະ ອາຫານ ໃຫ້ໂຮງຮຽນ ຫຼື ການສະໜັບສະໜູນດ້ານການເງິນເພື່ອຈັດຊື້ອາຫານ;
- ຕິດຕາມ, ກວດກາ ແລະ ປະເມີນຜົນ ໂດຍນຳໃຊ້ແອັບພຣິເຄເຊີນຂອງວຽກງານ ການສະໜອງອາຫານທ່ຽງ ແລະ ການສະໜອງເງິນໃນເຂດບໍລິການ.

**ຍຸດທະສາດທີ 2:** ຂະຫຍາຍແຜນງານ ບົດບາດຍິງຊາຍ, ເພດສຶກສາ, ທັກສະຊີວິດ, ໂພຊະນາການ, ການປ້ອງກັນໄພພິບັດ, ຄວາມສ່ຽງກ່ຽວກັບລະເບີດບໍ່ທັນແຕກໃຫ້ແກ່ໂຮງຮຽນປະຖົມ.

**<u>ວຽກຈຸດສຸມ</u>**

- ສ້າງ, ປັບປຸງເຄື່ອງມື ແລະ ຝຶກອົບຮົມໃຫ້ແກ່ຂັ້ນແຂວງ, ເມືອງ ແລະ ໂຮງຮຽນກ່ຽວກັບວຽກງານບົດບາດຍິງຊາຍ, ໂພຊະນາການ, ເພດສຶກສາ, ທັກສະຊີວິດ, ການປ້ອງກັນໄພພິບັດ, ຄວາມສ່ຽງຈາກລະເບີດບໍ່ທັນແຕກ.

**<u>ຍຸດທະສາດທີ 3:</u>** ປັບປຸງສະພາບແວດລ້ອມຂອງໂຮງຮຽນໃຫ້ສອດຄ່ອງກັບມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ.

**<u>ວຽກຈຸດສຸມ</u>**

- ປັບປຸງພື້ນຖານໂຄງລ່າງຂອງໂຮງຮຽນ ແລະ ສະໜອງສິ່ງອຳນວຍຄວາມສະດວກ ທີ່ຈຳເປັນສຳລັບການຮຽນການສອນ;
- ສ້າງສະພາບແວດລ້ອມທີ່ສະອາດ ແລະ ປອດໄພ ເຊັ່ນ: ການສ້າງໂຮງຮຽນສີຂຽວ, ສະອາດ ແລະ ປອດໄພສຳລັບເດັກນ້ອຍທຸກຄົນ;
- ສືບຕໍ່ສ້າງ ແລະ ປັບປຸງວິດຖ່າຍແຍກຍິງ-ຊາຍ, ຈັດຫານ້ຳດື່ມສະອາດ ແລະ ນ້ຳໃຊ້ທີ່ສະອາດໃຫ້ພຽງພໍຕະຫຼອດປີ;
- ສ້າງ ແລະ ປັບປຸງບ່ອນລ້າງມື, ຈັດກິດຈະກຳການລ້າງມື ແລະ ຖູແຂ້ວໃນໂຮງຮຽນ.

[31] ແຜນອັນດຽວທີ່ກວມເອົາທັງການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ

**<u>ຍຸດທະສາດທີ 4:</u>** ຈັດຕັ້ງປະຕິບັດນະໂຍບາຍການເລື່ອນຂັ້ນແບບຕໍ່ເນື່ອງໃຫ້ມີປະສິດທິພາບ, ລວມທັງສະໜອງການສອນບຳລຸງໃຫ້ແກ່ນັກຮຽນທີ່ຮຽນອ່ອນຢ່າງເໝາະສົມ.

**<u>ວຽກຈຸດສຸມ</u>**

- ໂດຍອີງໃສ່ຫຼັກການພັດທະນາວິຊາຊີບຄູແບບຕໍ່ເນື່ອງ, ດຳເນີນການຝຶກອົບຮົມໃຫ້ຄູສອນກ່ຽວກັບທັກສະການສິດສອນຂັ້ນພື້ນຖານ ໃນການນຳໃຊ້ວິທີການປະເມີນການຮຽນໃນຫ້ອງຮຽນທີ່ດີກວ່າ, ດັ່ງທີ່ໄດ້ລະບຸໄວ້ໃນຄູ່ມືຄູສະບັບໃໝ່ ເພື່ອກຳນົດຄວາມຕ້ອງການ ພ້ອມທັງໃຫ້ການຊ່ວຍສອນເພີ່ມ;
- ທົບທວນຕາຕະລາງການສອບເສັງນັກຮຽນໃນຊັ້ນຮຽນໃນແຕ່ລະຂັ້ນ, ລວມທັງຈຳນວນການສອບເສັງປະຈຳເດືອນ;
- ຝຶກອົບຮົມຄູ ແລະ ຜູ້ອຳນວຍການກ່ຽວກັບການປະເມີນຜົນຂອງນັກຮຽນ ແລະ ນະໂຍບາຍການເລື່ອນຂັ້ນແບບຕໍ່ເນື່ອງ;
- ໃນໄລຍະການຝຶກອົບຮົມການນຳໃຊ້ຫຼັກສູດໃໝ່ຕ້ອງມີການແນະນຳໃຫ້ຄູເຫັນວ່າ ຈະເຮັດວິທີໃດເພື່ອໃຫ້ສາມາດຮູ້ໄດ້ວ່າ ນັກຮຽນທີ່ມີຄວາມສ່ຽງທີ່ຈະຄ້າງຫ້ອງ ແລະ ອອກໂຮງຮຽນ, ພ້ອມທັງການປະເມີນຜົນການຮຽນຂອງນັກຮຽນພິການ;
- ຕິດຕາມການປະຕິບັດໜ້າທີ່ຂອງຄູ ໃນການກຳນົດນັກຮຽນທີ່ມີຄວາມສ່ຽງ;
- ສົ່ງເສີມໃຫ້ຄູຕິດຕາມ ແລະ ເອົາໃຈໃສ່ບຳລຸງພິເສດ ໃຫ້ນັກຮຽນທີ່ມີຄວາມສ່ຽງໃນການປະລະ;
- ໃຫ້ການຊ່ວຍເຫຼືອການຈັດຕັ້ງປະຕິບັດການເລື່ອນຂັ້ນແບບຕໍ່ເນື່ອງ ແລະ ການປະເມີນນັກຮຽນ;
- ໃຫ້ບັນຈຸເອົາວຽກງານການສະໜັບສະໜູນຂອງຄູຕໍ່ນັກຮຽນທີ່ຮຽນອ່ອນ ເຂົ້າໃນແບບການປະເມີນຜົນການເຮັດວຽກຂອງຄູ;
- ສົ່ງເສີມການສອບເສັງແຂ່ງຂັນນັກຮຽນເກັ່ງ;
- ສົ່ງເສີມ ແລະ ປັບປຸງ ລະບົບການປະເມີນຜົນການຮຽນຂອງນັກຮຽນປະຈຳເດືອນ;
- ກວດກາ, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດການເລື່ອນຂັ້ນແບບຕໍ່ເນື່ອງ;
- ສ້າງນິຕິກຳກ່ຽວກັບການບຳລຸງນັກຮຽນອ່ອນ;

**<u>ຍຸດທະສາດທີ 5:</u>** ສົ່ງເສີມການອ່ານຂອງນັກຮຽນ ໂດຍການສະໜອງປຶ້ມອ່ານທີ່ເໝາະສົມກັບອາຍຸ.

**<u>ວຽກຈຸດສຸມ</u>**

- ສ້າງຂະບວນການແຂ່ງຂັນໃນວັນອ່ານໜັງສືແຫ່ງຊາດ;
- ປະສານກັບຄູ່ຮ່ວມພັດທະນາ ໃນການສະໜອງປຶ້ມອ່ານເສີມສຳລັບເດັກ;
- ສ້າງມູມອ່ານໜັງສືຢູ່ບັນດາໂຮງຮຽນທີ່ມີຄວາມພ້ອມດ້ານສະຖານທີ່;
- ສະໜອງອຸປະກອນ/ສື່ການຮຽນການສອນ, ປຶ້ມນິທານ ແລະ ປຶ້ມອ່ານເສີມໃຫ້ໂຮງຮຽນປະຖົມທຸກຂັ້ນຮຽນໃນຂອບເຂດທົ່ວປະເທດ.

**ຜົນໄດ້ຮັບລະດັບກາງທີ 4 : ຫຼຸດຜ່ອນຊ່ອງຫວ່າງດ້ານການເຂົ້າຮຽນ ແລະ ຜົນການຮຽນຂອງນັກຮຽນລະຫວ່າງເຂດທີ່ມີໂອກາດ ແລະ ດ້ອຍໂອກາດ ໂດຍຜ່ານການສ້າງຕັ້ງກຸ່ມໂຮງຮຽນ (ພາກທີ I ຜົນໄດ້ຮັບລະດັບສູງທີ 1, ຜົນໄດ້ຮັບລະດັບກາງທີ 1.5)**

**<u>ຍຸດທະສາດທີ 1:</u>** ສ້າງຕັ້ງ ແລະ ສະໜອງຊັບພະຍາກອນໃຫ້ກຸ່ມໂຮງຮຽນປະຖົມໃນ 40 ເມືອງບູລິມະສິດ.

**<u>ວຽກຈຸດສຸມ</u>**

- ສ້າງຄູ່ມືແນະນຳການສ້າງຕັ້ງກຸ່ມໂຮງຮຽນ ໂດຍຖືເອົາ 40 ເມືອງທີ່ເປັນບູລິມະສິດ;

- ຝຶກອົບຮົມ ແລະ ຈັດຕັ້ງ, ເຜີຍແຜ່ ບັນດານິຕິກຳ, ຄູ່ມື ໃນການຈັດຕັ້ງປະຕິບັດ ກຸ່ມໂຮງຮຽນປະຖົມ;
- ສະໜອງສິ່ງອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດໂຮງຮຽນປະຖົມ;
- ກວດກາ, ຕິດຕາມ ແລະ ປະເມີນ ການຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວ ຂອງກຸ່ມໂຮງຮຽນປະຖົມ.

**<u>ຍຸດທະສາດທີ 2:</u>** ສະໜອງຄູ ແລະ ສິ່ງຈູງໃຈທີ່ຈຳເປັນຕ່າງໆໃຫ້ແກ່ນັກຮຽນ ແລະ ຄູສອນໃນໂຮງຮຽນປະຖົມທີ່ຢູ່ຊົນນະບົດ ແລະ ຫ່າງໄກສອກຫຼີກ.

**<u>ວຽກຈຸດສຸມ</u>**

- ໃຫ້ບູລິມະສິດໃນການຈັດຫາສິ່ງອຳນວຍຄວາມສະດວກ ເຊັ່ນ: ອຸປະກອນການຮຽນ-ການສອນ, ການກໍ່ສ້າງຫ້ອງນ້ອຍທີ່ມີວິດຖ່າຍ ແລະ ນ້ຳສະອາດຢູ່ໃນໂຮງຮຽນປະຖົມ, ໃຫ້ທຶນການສຶກສາແກ່ນັກຮຽນທີ່ຂາດເຂີນ ແລະ ຊັບພະຍາກອນອື່ນໆ;
- ປັບປຸງຫຼັກການຄຸ້ມຄອງໂຮງຮຽນໃນການກຳນົດການຂາດຮຽນຂອງນັກຮຽນ ລະຫວ່າງໃນຕົວເມືອງ ກັບຊົນນະບົດ ແລະ ຫ່າງໄກສອກຫຼີກ;
- ສະໜອງໂກຕ້າລັດຖະກອນຄູໃນເຂດຫ່າງໄກສອກຫຼີກຢ່າງພຽງພໍ.

**<u>ຍຸດທະສາດທີ 3:</u>** ພັດທະນາ ແລະ ຈັດຕັ້ງປະຕິບັດແຜນງານ "ສົ່ງເສີມການຮຽນຮູ້" ຄະນິດສາດ ແລະ ການຮູ້ໜັງສື ສຳລັບຄູນິເທດ, ຜູ້ອຳນວຍການໂຮງຮຽນ ແລະ ຄູ ໃນ 40 ເມືອງເປົ້າໝາຍ

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຍຸດທະສາດນີ້ໄດ້ຢ່າງເຕັມສ່ວນ, ແມ່ນມີຄວາມຕ້ອງການງົບປະມານດັ່ງທີ່ກຳນົດຢູ່ໃນສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອຈາກຕ່າງປະເທດ ຕ້ອງສຸມໃສ່ການຈັດຕັ້ງປະຕິບັດຍຸດທະສາດນີ້.

**<u>ວຽກຈຸດສຸມ</u>**

- ພັດທະນາຫຼັກສູດການຝຶກອົບຮົມສຳລັບ ແຜນງານ "ສົ່ງເສີມການຮຽນຮູ້" ຄະນິດສາດ ແລະ ການຮູ້ໜັງສື;
- ສ້າງ ແລະ ພັດທະນາຫຼັກສູດພິເສດ ສຳລັບນັກຮຽນພອນສະຫວັນ ດ້ານຄະນິດສາດ ແລະ ພາສາລາວ;
- ສ້າງຄວາມເຂັ້ມແຂງສະເພາະດ້ານ ສຳລັບຄູສຶກສານິເທດ ວິຊາຄະນິດສາດ ແລະ ພາສາລາວ.

### 2.3.2. ຈຳນວນຄູ ແລະ ຜູ້ອຳນວຍການໂຮງຮຽນທີ່ມີຄວາມຮູ້ຄວາມສາມາດເພີ່ມຂຶ້ນ ເພື່ອໃຫ້ສອດຄ່ອງກັບມາດຕະຖານການສິດສອນ ໂດຍໃຫ້ມີການປະເມີນຜົນການປະຕິບັດໜ້າທີ່ຂອງເຂົາເຈົ້າຢ່າງເປັນປົກກະຕິ ( ພາກທີ I ຜົນໄດ້ຮັບລະດັບສູງທີ 2)

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ສຳລັບລາຍລະອຽດຫຼັກການ ແລະ ເຫດຜົນ, ໂດຍອີງໃສ່ການສ້າງ ແລະ ການຈັດຕັ້ງປະຕິບັດວິທີການແບບກວມລວມ ແລະ ມີລັກສະນະຍຸດທະສາດ ໃນການພັດທະນາວິຊາຊີບທາງການສຶກສາ ໂດຍເນັ້ນໃສ່ການພັດທະນາວິຊາຊີບຂອງຄູ ແລະ ຜູ້ອຳນວຍການຢູ່ໂຮງຮຽນແບບຕໍ່ເນື່ອງໃນລະດັບໂຮງຮຽນ ແລະ ລະດັບທ້ອງຖິ່ນຢ່າງຕໍ່ເນື່ອງ ໂດຍຜ່ານລະບົບສຶກສານິເທດທີ່ມີຄວາມເຂັ້ມແຂງ.

**ຜົນໄດ້ຮັບລະດັບກາງທີ 1: ສ້າງຄວາມເຂັ້ມແຂງໃຫ້ແກ່ຄູອາຈານ ໃນການຈັດຕັ້ງປະຕິບັດຫຼັກສູດການຮຽນໃໝ່ ໂດຍຜ່ານການສະໜັບສະໜູນຈາກກຸ່ມໂຮງຮຽນ ແລະ ຄູສຶກສານິເທດ (ພາກທີ I ຜົນໄດ້ຮັບລະດັບສູງທີ 2. ຜົນຮັບລະດັບກາງທີ 2.1)**

**<u>ຍຸດທະສາດທີ 1:</u>** ສ້າງກຸ່ມໂຮງຮຽນເພື່ອໃຫ້ເປັນສູນກາງໃນການພັດທະນາຄູອາຊີບຢ່າງຕໍ່ເນື່ອງ ແລະ ແລກປ່ຽນບົດຮຽນ.

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຍຸດທະສາດນີ້ໄດ້ຢ່າງເຕັມສ່ວນ, ແມ່ນມີຄວາມຕ້ອງການງົບປະມານດັ່ງທີ່ກຳນົດຢູ່ໃນສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອຈາກຕ່າງປະເທດ ຕ້ອງສຸມໃສ່ການຈັດຕັ້ງປະຕິບັດຍຸດທະສາດນີ້.

**<u>ວຽກຈຸດສຸມ:</u>**

- ເຜີຍແຜ່ບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງກັບການພັດທະນາກຸ່ມໂຮງຮຽນໃຫ້ ສຶກສາເມືອງ ແລະ ໂຮງຮຽນເພື່ອໃຫ້ພວກເຂົາເຂົ້າໃຈກ່ຽວກັບຈຸດປະສົງຂອງການສ້າງຕັ້ງກຸ່ມໂຮງຮຽນ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະກຳມະການບໍລິຫານກຸ່ມໂຮງຮຽນ ເພື່ອຮັບປະກັນປະສິດທິຜົນຂອງການຈັດຕັ້ງປະຕິບັດ;
- ສະໜອງສິ່ງອຳນວຍຄວາມສະດວກໃນການຈັດຕັ້ງການເຄື່ອນໄຫວກຸ່ມ;
- ສ້າງລະບົບເກັບກຳ ແລະ ຕິດຕາມການຈັດຕັ້ງປະຕິບັດກຸ່ມໂຮງຮຽນ;

**<u>ຍຸດທະສາດທີ 2:</u>** ສ້າງແຜນງານຝຶກອົບຮົມຄູຢ່າງມີເປົ້າໝາຍ

**<u>ວຽກຈຸດສຸມ</u>**

- ປັບປຸງຄູ່ມືການຝຶກອົບຮົມການສອນຫ້ອງຄວບ ແລະ ຄູສອນຫ້ອງຮຽນຮ່ວມ;
- ຝຶກອົບຮົມການສອນຫ້ອງຄວບ ໂດຍໃຫ້ລວມເອົາທັງວິທີການການສອນຮຽນຮ່ວມ (ລວມເອົາເດັກພິການ) ໃຫ້ແກ່ຄູທີ່ສອນຫ້ອງຄວບທຸກຄົນ;
- ຝຶກອົບຮົມວິທີການປະເມີນຜົນການຮຽນຂອງນັກຮຽນໃນຫ້ອງ ລວມທັງການສອນຮຽນຮ່ວມ (ລວມມີເດັກພິການ) ໃຫ່ແກ່ຄູສອນຫ້ອງຄວບທຸກຄົນ ແລະ ຄູສອນຢູ່ 40 ເມືອງທີ່ເປັນບູລິມະສິດ;
- ຝຶກອົບຮົມວິທີການສອນພາສາລາວເປັນພາສາທີສອງໃນຊັ້ນປະຖົມຂັ້ນຕົ້ນ ລວມທັງການສອນຮຽນຮ່ວມ (ລວມທັງເດັກພິການ) ໃຫ້ແກ່ຄູສອນຢູ່ໂຮງຮຽນໃນເຂດ ທີ່ບໍ່ແມ່ນກຸ່ມພາສາລາວ-ໄຕ;
- ສ້າງເຄື່ອງມືໃນການປະເມີນຄູສອນຫ້ອງຄວບ ແລະ ຄູທີ່ສອນຫ້ອງຮຽນຮ່ວມ;
- ຊຸກຍູ້, ຕິດຕາມ ແລະ ປະເມີນ ຄູສອນຫ້ອງຄວບ ແລະ ຄູທີ່ສອນຫ້ອງຮຽນຮ່ວມ;
- ຝຶກອົບຮົມວິທີການປະເມີນໃຫ້ແກ່ຄູສອນຫ້ອງຄວບ ໃນການວັດຜົນການຮຽນຂອງນັກຮຽນຫ້ອງຄວບ ແລະ ຮຽນຮ່ວມ.

**ຜົນໄດ້ຮັບລະດັບກາງ 2: ຫຼັກສູດສ້າງຄູກ່ອນປະຈຳການ ແລະ ຄູປະຈຳການ ແມ່ນໄດ້ຖືກປັບປຸງ ແລະ ຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບຫຼັກສູດການຮຽນ ແລະ ການສອນຂອງໂຮງຮຽນສະບັບປັບປຸງໃໝ່ (ພາກທີ I ຜົນໄດ້ຮັບລະດັບສູງທີ 2, ຜົນໄດຮັບລະດັບກາງທີ 2.2)**

ການຝຶກອົບຮົມຄູ ແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງກົມສ້າງຄູ ແລະ ສະຖາບັນສ້າງຄູ. ບູລິມະສິດສຳລັບຂະແໜງການຍ່ອຍປະຖົມປະກອບມີດັ່ງນີ້:

**<u>ຍຸດທະສາດທີ 1:</u>** ເຊື່ອມໂຍງຫຼັກສູດການຝຶກອົບຮົມຄູປະຈຳການກັບຫຼັກສູດການຮຽນ-ການສອນສະບັບປັບປຸງໃໝ່ ແລະ ຍຸດທະສາດການພັດທະນາວິຊາຊີບຄູ.

**<u>ຍຸດທະສາດທີ 2:</u>** ດຳເນີນການຝຶກອົບຮົມຄູໃນລະດັບຊາດ ເພື່ອການຈັດຕັ້ງປະຕິບັດຫຼັກສູດປະຖົມສຶກສາໃໝ່.

**<u>ຍຸດທະສາດທີ 3:</u>** ຄູສຶກສານິເທດຊັ້ນປະຖົມສຶກສາ ສະໜອງການຝຶກອົບຮົມເຮັດວຽກຕົວຈິງໃຫ້ແກ່ຄູສອນ ແນໃສ່ເພື່ອຫຼຸດຜ່ອນຄວາມແຕກໂຕນທາງດ້ານຜົນການຮຽນໃນທຸກລະດັບ.

ຄວາມຮັບຜິດຊອບຕໍ່ຄູສຶກສານິເທດໄດ້ໂອນໄປຂຶ້ນກັບກົມສ້າງຄູ ແລະ ລາຍລະອຽດເພີ່ມເຕີມກ່ຽວກັບວຽກງານນິເທດສຶກສາແມ່ນລວມຢູ່ໃນແຜນຂອງຂະແໜງການຍ່ອຍສ້າງຄູ. ບູລິມະສິດຕໍ່ໄປນີ້ແມ່ນສຳລັບຄູສຶກສານິເທດ:

**<u>ວຽກຈຸດສຸມ</u>**

- ທົບທວນ ແລະ ປັບປຸງ ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບວຽກງານນິເທດສຶກສາ;
- ສ້າງຂີດຄວາມສາມາດໃຫ້ແກ່ວຽກງານນິເທດທັງພາຍໃນ ແລະ ພາຍນອກ, ທັງຢູ່ໃນໂຮງຮຽນ, ໃນກຸ່ມໂຮງຮຽນ ຫຼື ຢູ່ຫ້ອງການສຶກສາທິການ ແລະ ກິລາເມືອງ;
- ສະໜອງສິ່ງອຳນວຍຄວາມສະດວກທີ່ເໝາະສົມ ລວມທັງພາຫະນະສຳລັບການໄປຢ້ຽມຢາມໂຮງຮຽນຂອງຄູນິເທດ;
- ສະໜອງງົບປະມານທີ່ເໝາະສົມສຳລັບການໄປຕິດຕາມ ແລະ ຊຸກຍູ້ໂຮງຮຽນຂອງຄູສຶກສານິເທດ.

**<u>ຍຸດທະສາດທີ 4:</u>** ປັບປຸງການສິດສອນ ແລະ ການຮຽນໃນຫ້ອງຮຽນຄວບ ໂດຍຜ່ານການປັບປຸງທັກສະການສອນຂອງຄູ.

ຄວາມຮັບຜິດຊອບຕໍ່ການພັດທະນາວິຊາຊີບຄູແມ່ນຂຶ້ນກັບກົມສ້າງຄູ. ຍຸດທະສາດນີ້ເຊື່ອມໂຍງກັບຜົນໄດ້ຮັບລະດັບກາງ 2.1, ຍຸດທະສາດທີ 2.

**ຜົນໄດ້ຮັບລະດັບກາງທີ 3: ລະບົບການປະເມີນຜົນການປະຕິບັດໜ້າທີ່ຂອງຄູມີຄວາມເຂັ້ມແຂງ ໂດຍຜ່ານການປັບປຸງເຄື່ອງມືປະເມີນຄູ ທີ່ຕິດພັນກັບມາດຕະຖານການສິດສອນ ແລະ ຈັນຍາບັນຂອງຄູ; ແລະ ໄດ້ຮັບການຈັດຕັ້ງປະຕິບັດ ເພື່ອກຳນົດຄວາມຕ້ອງການດ້ານການບຳລຸງຄູທີ່ເປັນບູລິມະສິດສຳລັບຊັ້ນປະຖົມສຶກສາ (ພາກທີ I ຜົນໄດ້ຮັບລະດັບສູງທີ 2, ຜົນຮັບລະດັບກາງທີ 2.3)**

ກົມສ້າງງຄູຈະເປັນຜູ້ນຳພາໃຫ້ບັນລຸຜົນໄດ້ຮັບໃນໄລຍະກາງນີ້. ສະຖາບັນພັດທະນາການບໍລິຫານການສຶກສາ ຈະຮັບຜິດຊອບການຝຶກອົບຮົມດ້ານການບໍລິຫານຂອງຜູ້ອຳນວຍການໂຮງຮຽນ. ບູລິມະສິດຂອງຂະແໜງການຍ່ອຍປະຖົມ ມີດັ່ງນີ້:

**<u>ຍຸດທະສາດທີ 1</u>:** ກຳນົດໂຄງສ້າງ ແລະ ຂັ້ນຕອນການຈັດຕັ້ງປະຕິບັດລະດັບອົງກອນ ເພື່ອດຳເນີນການປະເມີນຜົນການປະຕິບັດໜ້າທີ່ຂອງຄູ ແລະ ຜູ້ອຳນວຍການໃຫ້ເປັນລະບົບ, ໂດຍຄຳນຶງເຖິງການເນັ້ນໃສ່ແຕ່ການແຕ່ງບົດສອນເປັນຫຼັກໃນໄລຍະຜ່ານມາ, ແທນທີ່ຈະສຸມໃສ່ຜົນໄດ້ຮັບດ້ານການຮຽນຮູ້ຂອງນັກຮຽນ;

**<u>ຍຸດທະສາດທີ 2:</u>** ພັດທະນາ ແລະ ຈັດຕັ້ງປະຕິບັດລະບົບການປະເມີນຄູ ແລະ ຜູ້ອຳນວຍການໂຮງຮຽນໃນທົ່ວປະເທດ, ໂດຍເນັ້ນໃສ່ 7 ໜ້າວຽກຂອງຜູ້ບໍລິຫານ;

**<u>ຍຸດທະສາດທີ 3:</u>** ສ້າງຂີດຄວາມສາມາດໃຫ້ແກ່ຜູ້ອຳນວຍການໂຮງຮຽນ ກ່ຽວກັບການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ /ມາດຕະຖານຂັ້ນພື້ນຖານຂອງຄຸນນະພາບ ເພື່ອປັບປຸງຜົນການຮຽນ-ການສອນ.

**<u>ຍຸດທະສາດທີ 4:</u>** ສ້າງຄວາມເຂັ້ມແຂງກ່ຽວກັບການບໍລິຫານຄຸ້ມຄອງໂຮງຮຽນໃຫ້ແກ່ສຶກສາເມືອງ ເພື່ອໃຫ້ສາມາດສະໜັບສະໜູນການແລກປ່ຽນບົດຮຽນຊຶ່ງກັນ ແລະ ກັນ ຂອງຜູ້ອຳນວຍການໂຮງຮຽນພາຍໃນກຸ່ມໂຮງຮຽນ ໃນເວລາປະຊຸມປະຈຳເດືອນຢູ່ສຶກສາເມືອງ.

**2.3.3. ໂຮງຮຽນທຸກແຫ່ງມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດພຽງ ພໍເພື່ອໃຫ້ສາມາດເຮັດວຽກໄດ້ຢ່າງມີປະສິດທິຜົນ, ພ້ອມທັງຂີດຄວາມສາມາດໃນການຄຸ້ມຄອງໂຮງຮຽນ ໄດ້ຮັບການປັບປຸງດີຂຶ້ນ (ພາກທີ I ຜົນໄດ້ຮັບລະດັບສູງທີ 3)**

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ສຳລັບເຫດຜົນລະອຽດ. ທຸກໆໂຮງຮຽນຕ້ອງການລະດັບພື້ນຖານຂອງຊັບພະຍາກອນ ແລະ ຄວາມສາມາດ ເພື່ອເຮັດວຽກຢ່າງມີປະສິດທິພາບ ແລະ ສະໜອງຄຸນນະພາບການສຶກສາທີ່ຍອມຮັບໄດ້, ໂດຍອີງໃສ່ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ. ຊັບພະຍາກອນຫຼັກໆຂອງການສຶກສາປະກອບມີ: ງົບປະມານບໍລິຫານ, ຄູອາຈານ, ປຶ້ມຕຳລາຮຽນ ແລະ ສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມຂັ້ນພື້ນຖານ ແມ່ນໄດ້ຖືກຈັດສັນໃຫ້ເທົ່າທຽມກັນ ແລະ ຄົບຖ້ວນເທົ່າທີ່ຈະເປັນໄປໄດ້.

**ຜົນໄດ້ຮັບລະດັບກາງທີ 1: ໄດ້ມີຂະບວນການຄຸ້ມຄອງໂຮງຮຽນ ແລະ ການປະເມີນຕົນເອງ ແລະ ການວາງແຜນພັດທະນາໂຮງຮຽນແບບຍືນຍົງ (ໂດຍນຳໃຊ້ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ) ທີ່ເປັນບ່ອນອີງໃຫ້ແກ່ການວາງແຜນຂັ້ນເມືອງ ແລະ ການກຳນົດເປົ້າໝາຍການສະໜັບສະໜູນລວມທັງການຈັດສັນຄູ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ. (ພາກທີ I ຜົນໄດ້ຮັບທີ 3 ຜົນຮັບລະດັບກາງທີ 2)**

<u>**ຍຸດທະສາດ 1:**</u> ຈັດຕັ້ງປະຕິບັດ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ສຳລັບການສຶກສາຊັ້ນປະຖົມ

<u>**ວຽກຈຸດສຸມ:**</u>

- ພັດທະນາເຄື່ອງມືການປະເມີນຕົນເອງສຳລັບ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ພ້ອມທັງທົດລອງນຳໃຊ້ສຳລັບຊັ້ນປະຖົມສຶກສາ;
- ພັດທະນາ ພ້ອມທັງຮັບຮອງນິຕິກຳ ແລະ ຄຳແນະນຳໃນການດຳເນີນງານສຳລັບໂຮງຮຽນປະຖົມ, ສຶກສາເມືອງ ແລະ ສຶກສາແຂວງ ໃນການສະໜັບສະໜູນ ແລະ ການນຳໃຊ້ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ;
- ສ້າງແຜນການຈັດຕັ້ງປະຕິບັດພ້ອມແຜນການເງິນ, ການຝຶກອົບຮົມ ແລະ ການເຜີຍແຜ່ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ຊັ້ນປະຖົມສຶກສາໃນທົ່ວປະເທດ;
- ຕິດຕາມ ແລະ ປະເມີນການນຳໃຊ້ເຄື່ອງມືປະເມີນຕົນເອງຂອງ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາສຳລັບໂຮງຮຽນປະຖົມ.

<u>**ຍຸດທະສາດທີ 2:**</u> ພັດທະນາແຜນປະຕິບັດງານສຳລັບການນຳໃຊ້ຂໍ້ມູນຈາກ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາຂອງຊັ້ນປະຖົມ ໃນລະດັບເມືອງ ພ້ອມທັງຮັບຮອງ ແລະ ນຳໃຊ້ເພື່ອສະໜັບສະໜູນບູລິມະສິດ ແລະ ຂະບວນການວາງແຜນຂອງເມືອງ ເພື່ອຫຼຸດຜ່ອນຄວາມແຕກຕ່າງ.

<u>**ວຽກຈຸດສຸມ**</u>

- ສ້າງຂີດຄວາມສາມາດໃຫ້ແກ່ສຶກສາເມືອງ ກ່ຽວກັບຂັ້ນຕອນການວາງແຜນ ໂດຍອີງໃສ່ການຈັດລຳດັບຄວາມສຳຄັນຂອງມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ.
- ຕິດຕາມ, ຊຸກຍູ້ ແລະ ສະໜັບສະໜູນເມືອງ ໃນຂະບວນການຈັດສັນບູລິມະສິດ ແລະ ວາງແຜນເພື່ອຫຼຸດຜ່ອນຄວາມແຕກຕ່າງ.

<u>**ຍຸດທະສາດທີ 3:**</u> ສະໜັບສະໜູນການຈັດຕັ້ງປະຕິບັດນະໂຍບາຍການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ.

<u>**ວຽກຈຸດສຸມ**</u>

- ສະໜັບສະໜູນການເຜີຍແຜ່ນະໂຍບາຍການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ ທີ່ຈະກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບໃນລະດັບໂຮງຮຽນ ແລະ ບົດບາດສະໜັບສະໜູນຂອງສຶກສາເມືອງ, ສຶກສາແຂວງ; ພ້ອມທັງກຳນົດວິທີການໄລຍະຍາວ ເພື່ອຮັບປະກັນຫຼັກການທັງໝົດ ແມ່ນມີຄວາມສາມາດໃນການຈັດຕັ້ງປະຕິບັດຕາມພາລະບົດບາດ ແລະ ໜ້າທີ່ຂອງພວກເຂົາ;
- ກຳນົດວິທີການທີ່ມີປະສິດທິພາບດ້ານຄ່າໃຊ້ຈ່າຍ (ຕົວຢ່າງ ຜ່ານກຸ່ມໂຮງຮຽນ) ເພື່ອສະໜັບສະໜູນການສ້າງຄວາມເຂັ້ມແຂງໃຫ້ແກ່ ຄພສບ ແລະ ຜູ້ອຳນວຍການໂຮງຮຽນ;
- ສ້າງຄວາມເຂັ້ມແຂງໃນການເກັບກຳຂໍ້ມູນໃນລະດັບໂຮງຮຽນ

**ຜົນໄດ້ຮັບລະດັບກາງທີ 2: ເງິນບໍລິຫານໂຮງຮຽນ (ສູດ ແລະ ລາຍການໃຊ້ຈ່າຍທີ່ເໝາະສົມ) ແມ່ນຕອບສະໜອງຕໍ່ຄວາມຕ້ອງການໃນລະດັບໂຮງຮຽນ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ຕິດພັນກັບ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ(ພາກທີ I ຜົນໄດ້ຮັບທີ 3, ຜົນຮັບລະດັບກາງທີ 3)**

ກົມການເງິນ ມີຄວາມຮັບຜິດຊອບຕໍ່ເງິນບໍລິຫານໂຮງຮຽນ ແລະ ຈະເຮັດວຽກຮ່ວມກັບກົມສາມັນເພື່ອທົບທວນກ່ຽວກັບການກຳນົດເງິນບໍລິຫານໂຮງຮຽນສຳລັບປະຖົມ. ບູລິມະສິດສຳລັບຂະແໜງການຍ່ອຍປະຖົມແມ່ນ:

<u>**ຍຸດທະສາດທີ 1:**</u> ຮັບປະກັນໃຫ້ເງິນບໍລິຫານໂຮງຮຽນ ແລະ ລາຍການໃຊ້ຈ່າຍສຳລັບເງິນບໍລິຫານດັ່ງກ່າວຕອບສະໜອງກັບຄວາມຕ້ອງການຂອງແຕ່ລະໂຮງຮຽນ, ຕາມທີ່ໄດ້ກຳນົດໃນມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ.

**ຜົນໄດ້ຮັບລະດັບກາງທີ 3: ການຈັດສັນຄູສອນແມ່ນຕອບສະໜອງຕໍ່ຄວາມຕ້ອງການໃນລະດັບໂຮງຮຽນ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ຕິດພັນກັບ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ. (ພາກທີ I ຜົນໄດ້ຮັບທີ 3, ຜົນຮັບລະດັບກາງທີ 4)**

ຄວາມຮັບຜິດຊອບໃນການຈັດສັນຄູແມ່ນຢູ່ພາຍໃຕ້ຄະນະກຳມະການຈັດສັນຄູ ໂດຍມີການສະໜັບສະໜູນຈາກກົມຈັດຕັ້ງ ແລະ ພະນັກງານ, ສຶກສາແຂວງ ແລະ ສຶກສາເມືອງ. ບູລິມະສິດສຳລັບຂະແໜງການຍ່ອຍປະຖົມປະກອບມີ:

<u>**ຍຸດທະສາດທີ 1:**</u> ຫຼຸດຜ່ອນຄວາມແຕກໂຕນດ້ານການສະໜອງຄູໃນໂຮງຮຽນປະຖົມ

<u>**ຍຸດທະສາດທີ 2:**</u> ຫຼຸດຜ່ອນການຂາດສອນຂອງຄູ, ລວມທັງ 1) ທົດລອງໃຊ້ໂທລະສັບມືຖືສຳລັບການລາຍງານການຂາດຂອງຄູ ໂດຍ ຄພສບ ແລະ ພໍ່ແມ່ນັກຮຽນ ຊຶ່ງເປັນສ່ວນໜຶ່ງຂອງການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບ LESMIS; 2) ໂຄສະນາເຖິງຄວາມສຳຄັນ ແລະ ບົດບາດຂອງ ຄພສບ, ຜູ້ປົກຄອງ ແລະ ອື່ນໆ ເພື່ອຫຼຸດຜ່ອນການຂາດສອນຂອງຄູ.

<u>**ຍຸດທະສາດທີ 3:**</u> ທົບທວນການສະໜອງ ແລະ ທີ່ຕັ້ງຂອງໂຮງຮຽນປະຖົມໃນແຕ່ລະເຂດ ເພື່ອປັບປຸງປະສິດທິພາບໃນການຈັດສັນຄູ ໂດຍອາດຜ່ານການຮວມຕົວກັນເຂົ້າລະຫວ່າງໂຮງຮຽນຂະໜາດນ້ອຍ ແລະ ໂຮງຮຽນທີ່ຕັ້ງຢູ່ໃກ້ກັນ.

**ຜົນໄດ້ຮັບລະດັບກາງທີ 4: ການຈັດສັນປຶ້ມແບບຮຽນ ແລະ ຄູ່ມືຄູ ແມ່ນຕອບສະໜອງຕໍ່ຄວາມຕ້ອງການໃນລະດັບໂຮງຮຽນ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ຕິດພັນກັບ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ. (ພາກທີ I ຜົນໄດ້ຮັບທີ 3, ຜົນຮັບລະດັບກາງທີ 5)**

ຄວາມຮັບຜິດຊອບໃນການຈັດສັນປື້ມຕຳລາຮຽນ ແລະ ອຸປະກອນການຮຽນ-ການສອນອື່ນໆ ແມ່ນຢູ່ພາຍໃຕ້ຄະນະກຳມະການແຜນການ ແລະ ການເງິນ ໂດຍໄດ້ຮັບການສະໜັບສະໜູນຈາກພະແນກຄຸ້ມຄອງຊັບສິນຂອງກົມການເງິນ, ສຶກສາແຂວງ ແລະ ສຶກສາເມືອງ. ບູລິມະສິດສຳລັບຂະແໜງການຍ່ອຍປະຖົມ ປະກອບມີ:

**<u>ຍຸດທະສາດທີ 1:</u>** ຫຼຸດຜ່ອນຄວາມແຕກໂຕນໃນການສະໜອງ ແລະ ຈັດສັນປື້ມແບບຮຽນ ແລະ ປື້ມຄູ່ມືຄູ ໃຫ້ແກ່ໂຮງຮຽນປະຖົມຕ່າງໆ.
**<u>ຍຸດທະສາດທີ 2:</u>** ພັດທະນາ ແລະ ຈັດຕັ້ງປະຕິບັດຍຸດທະສາດບູລິມະສິດ ເພື່ອຮັບປະກັນໃຫ້ທຸກໆໂຮງຮຽນບັນລຸໄດ້ຢ່າງໜ້ອຍ 80% ຂອງນະໂຍບາຍການແຈກຢາຍປື້ມຕຳລາຮຽນ ແລະ ປື້ມຄູ່ມືຄູ.
**<u>ຍຸດທະສາດທີ 3</u>:** ກຳນົດວິທີການທີ່ມີປະສິດທິພາບທີ່ສຸດ ໃນການຕິດຕາມກວດກາປື້ມແບບຮຽນທີ່ມີ (ໃນລະບົບ TMIS ຫຼື ພັດທະນາລະບົບ EMIS).

**ຜົນໄດ້ຮັບລະດັບກາງທີ 5: ໂຮງຮຽນທຸກແຫ່ງໄດ້ຮັບການສະໜັບສະໜູນໃຫ້ບັນລຸລະດັບຕ່ຳສຸດ (1 ດາວ ຫຼື ສູງກວ່າ) ໃນການສະໜອງສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ. (ພາກທີ 1 ຜົນໄດ້ຮັບທີ 3, ຜົນຮັບໄລຍະກາງທີ 6 ແລະ ເບິ່ງຜົນໄດ້ຮັບທີ 1, ຜົນຮັບລະດັບກາງທີ 3)**

**<u>ຍຸດທະສາດທີ 1:</u>** ຂະຫຍາຍການສະໜອງສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ ຢູ່ໂຮງຮຽນປະຖົມ (ເບິ່ງຜົນໄດ້ຮັບທີ 6.3.5)

# III. ຂະແໜງການຍ່ອຍ ມັດທະຍົມສຶກສາຕອນຕົ້ນ

## 1. ພາກສະເໜີ

### 1.1. ຜົນສຳເລັດ

ພາກ I ຂອງແຜນ 5 ປີ 2021-2025 (ຂໍ້ທີ 2 ແລະ 3) ໃຫ້ລາຍລະອຽດກ່ຽວກັບຜົນສຳເລັດຂອງຂະແໜງການຍ່ອຍມັດທະຍົມສຶກສາຕອນຕົ້ນ. ຜົນສຳເລັດອື່ນໆທີ່ສຳຄັນປະກອບມີ: ຄູໄດ້ຮັບການຝຶກອົບຮົມກ່ຽວກັບການກຳນົດ ແລະ ສະໜັບສະໜູນນັກຮຽນທີ່ພິການສາຍຕາ, ຫູ ແລະ ພິການທາງດ້ານມັນສະໝອງ. ຫຼັກສູດການຝຶກອົບຮົມຄູກ່ອນປະຈຳການສະບັບປັບປຸງໃໝ່ ໄດ້ຖືກຮັບຮອງໃນປີ 2016 ເຮັດໃຫ້ຄູໃໝ່ສາມາດສອນແຕ່ຊັ້ນ ມ.1 ຮອດ ມ.7. ສິ່ງນີ້ ໄດ້ຊ່ວຍຫຼຸດຜ່ອນການຂາດຄູ, ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ. ຫຼັກສູດໃໝ່ໄດ້ເນັ້ນໃສ່ທັກສະທີ່ຍັງອ່ອນ (ເຊັ່ນ: ທັກສະການຄົ້ນຄິດ, ການແກ້ໄຂບັນຫາ, ການສື່ສານ ແລະ ອື່ນໆ) ທີ່ຜູ້ໃຊ້ແຮງງານຕ້ອງການ.

ປື້ມຄູ່ມືຄູກ່ຽວກັບເພດສຶກສາທີ່ອີງໃສ່ຫຼັກການດ້ານວິຊາການຂອງສາກົນ ສຳລັບການສຶກສາຊັ້ນມັດທະຍົມສຶກສາຕອນຕົ້ນ ໄດ້ຮັບການພັດທະນາ ແລະ ໄດ້ຝຶກອົບຮົມໃຫ້ແກ່ຄູໃນການນຳໃຊ້ຄູ່ມືດັ່ງກ່າວ. ມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາຊັ້ນມັດທະຍົມຕອນຕົ້ນກຳລັງຖືກພັດທະນາ ແລະ ຈະສຳເລັດໃນປີ 2020. ກິດຈະກຳທີ່ສຳຄັນໃນການສ້າງຂີດຄວາມສາມາດໃນການບໍລິຫານ ແລະ ການຄຸ້ມຄອງ ແມ່ນນຳໃຊ້ລະບົບການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ ທີ່ໄດ້ນຳໃຊ້ໃນທົ່ວປະເທດ.

**ຕາຕະລາງ 14: ສົມທຽບຕົວຊີ້ບອກຕ່າງໆ ໃນຊັ້ນມັດທະຍົມສຶກສາຕອນຕົ້ນ ແຕ່ປີ 2016 ຫາ 2020**

| ຕົວຊີ້ບອກ | | 2015-16 | 2016-17 | 2017-18 | 2018-19 | 2019-2020 |
|---|---|---|---|---|---|---|
| ຈຳນວນຫ້ອງຮຽນ (ລັດ ແລະ ເອກະຊົນ) | | 12.100 | 12.428 | 12.681 | 12.903 | 13.153 |
| ຈຳນວນຄູສອນ ແລະ ພະນັກງານ (ສະເພາະພາກລັດ) | | 21.410 | 21.108 | 20.970 | 20.972 | 20.826 |
| ຈຳນວນນັກຮຽນທັງໝົດ (ລັດ ແລະ ເອກະຊົນ) | | 452.464 | 452.532 | 447.757 | 442.856 | 429.150 |
| ອັດຕາເຂົ້າຮຽນລວມ | | 82.2 | 82.9 | 83.1 | 82.8 | 83.3 |
| ອັດຕາເຂົ້າຮຽນລວມໃໝ່ ມ 4 (%) | ຍິງ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | 70.3 | 71.5 | 70.5 |
| | ຊາຍ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | 73.3 | 73.2 | 72.7 |
| ດັດຊະນີຄວາມສະເໝີພາບຍິງ-ຊາຍ ອັດຕາເຂົ້າຮຽນລວມໃໝ່ ມ 4 (%) | | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | 0.96 | 0.98 | 0.97 |
| ອັດຕາເລື່ອນຊັ້ນຂຶ້ນ ມ.1 (%) | ຍິງ | 86.6 | 85.7 | 84.3 | 84.1 | 84.5 |
| | ຊາຍ | 88.8 | 88.0 | 86.6 | 86.0 | 85.6 |
| ດັດຊະນີຄວາມສະເໝີພາບຍິງ-ຊາຍ ອັດຕາເລື່ອນຊັ້ນຂຶ້ນ ມ.1 | | 0.98 | 0.97 | 0.97 | 0.98 | 0.99 |
| ອັດຕາເລື່ອນຊັ້ນຂຶ້ນ ມ.7 (%) | | 90.4 | 89.7 | 88.0 | 87.9 | 87.9 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

**ຕາຕະລາງ 15: ຄວາມຄືບໜ້າຂອງຕົວຊີ້ບອກ ທາງດ້ານປະສິດທິພາບພາຍໃນ ໃນຊັ້ນມັດທະຍົມສຶກສາຕອນຕົ້ນ ປີ 2016-2020**

| ຕົວຊີ້ບອກ | | 2015-16 | 2016-17 | 2017-18 | 2018-19 | 2019-2020 |
|---|---|---|---|---|---|---|
| ອັດຕາປະລະ ມ.1 (%) | | 10.3 | 10.5 | 11.5 | 11.3 | 12.3 |
| ອັດຕາຄ້າງຫ້ອງ ມ.1 (%) | | 1.5 | 1.5 | 1.6 | 1.5 | 1.7 |
| ອັດຕາປະລະລວມ (%) | ຍິງ | 8.1 | 8.0 | 8.6 | 9.1 | 9.7 |
| | ຊາຍ | 8.1 | 8.5 | 9.6 | 10.0 | 10.8 |
| ດັດຊະນີຄວາມສະເໝີພາບຍິງ-ຊາຍ ອັດຕາປະລະ | | 1.00 | 0.94 | 0.90 | 0.91 | 0.90 |
| ອັດຕາຄ້າງຫ້ອງລວມ (%) | ຍິງ | 0.53 | 0.53 | 0.51 | 0.60 | 0.60 |
| | ຊາຍ | 1.58 | 1.54 | 1.60 | 1.70 | 1.69 |
| ດັດຊະນີຄວາມສະເໝີພາບຍິງ-ຊາຍ ອັດຕາຄ້າງຫ້ອງ | | 0.34 | 0.34 | 0.32 | 0.35 | 0.35 |
| ອັດຕາລອດເຫຼືອຈາກ ມ.1 ຮອດ ມ.4 (%) | | 76.6 | 74.7 | 71.9 | 71.5 | 68.9 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

### 1.2. ສິ່ງທ້າທາຍ

ພາກທີ I ຂອງແຜນ 5 ປີ 2021-2025 (ຂໍ້ທີ 2 ແລະ 3) ໃຫ້ລາຍລະອຽດກ່ຽວກັບສິ່ງທ້າທາຍສໍາລັບຊັ້ນມັດທະຍົມສຶກສາຕອນຕົ້ນ. ກົດໝາຍສະບັບໃໝ່ ໄດ້ກໍານົດການສຶກສາຊັ້ນມັດທະຍົມຕອນຕົ້ນເປັນການສຶກສາພາກບັງຄັບ, ໝາຍຄວາມວ່ານັກຮຽນຫຼາຍຄົນທີ່ກໍາລັງຈະເລື່ອນຂຶ້ນ ມ.1 ອາດຈະມີຄວາມຄາດຫວັງທີ່ແຕກຕ່າງຈາກຜູ້ທີ່ເລືອກເຂົ້າຮຽນຕໍ່ໃນຊັ້ນມັດທະຍົມຕົ້ນໃນຊຸມປີຜ່ານມາ. ການປະເມີນຜົນການຮຽນຂອງນັກຮຽນ ມ.4 ໃນປີ 2019 ໄດ້ພົບວ່າຜົນການຮຽນວິຊາພາສາລາວ, ຄະນິດສາດ ແລະ ວິທະຍາສາດຂອງນັກຮຽນແມ່ນຕໍ່າຫຼາຍ. ບໍ່ມີຄວາມແຕກໂຕນທາງເພດຄືໃນຊັ້ນປະຖົມສຶກສາ. ເຖິງຢ່າງໃດກໍ່ຕາມ, ອັດຕາການປະລະການຮຽນຂອງນັກຮຽນຊາຍແມ່ນສູງພໍສົມຄວນ ແລະ ໃນອະນາຄົດອາດຈະເຮັດໃຫ້ບໍ່ມີຄວາມສະເໝີພາບ ໃນການເຂົ້າຮຽນລວມຊັ້ນ ມ.4. ມີຄວາມຈໍາເປັນຕ້ອງໄດ້ປັບປຸງຫຼັກສູດວິຊາຊີບຂັ້ນພື້ນຖານ ເພື່ອຫຼຸດຜ່ອນການປະລະການຮຽນ ແລະ ໃຫ້ແນ່ໃຈວ່ານັກຮຽນທີ່ຈົບອອກໄປມີທັກສະ ແລະ ຄວາມຮູ້ພຽງພໍໃນການຊອກວຽກເຮັດງານທໍາທີ່ເໝາະສົມ ຫຼື ສ້າງຕັ້ງທຸລະກິດຂະໜາດນ້ອຍ ແລະ ເລີ່ມຕົ້ນທຸລະກິດຂອງຕົນເອງໄດ້.

ການເຂົ້າເຖິງວິດຖ່າຍທີ່ສະອາດ, ການໃຫ້ການປຶກສາແກ່ເດັກຍິງ ແລະ ການກະຕຸກຊຸກຍູ້ຊຸມຊົນໃຫ້ເຂົ້າໃຈເຖິງຜົນປະໂຫຍດທາງສັງຄົມຂອງການສຶກສາເດັກຍິງແມ່ນມີຄວາມຈໍາເປັນ ເພື່ອເພີ່ມການມີສ່ວນຮ່ວມຂອງແມ່ຍິງ. ບໍ່ມີລະບົບກຸ່ມໂຮງຮຽນທີ່ມີການເຄື່ອນໄຫວໃນລະດັບມັດທະຍົມຕອນຕົ້ນ ແລະ ຄູສອນຫຼາຍຄົນບໍ່ມີທັກສະ ແລະ ຄວາມຮູ້ໃນການສອນເພີ່ມໃຫ້ນັກຮຽນອ່ອນ.

## 2. ບູລິມະສິດ ສໍາລັບປີ 2021-2025

### 2.1. ຈຸດປະສົງ

1) ເພື່ອຂະຫຍາຍການສຶກສາຊັ້ນມັດທະຍົມຕອນຕົ້ນໃຫ້ມີປະສິດທິພາບ ແລະ ແທດເໝາະກັບຄວາມເປັນຈິງ. ແຕ່ຜົນປະໂຫຍດຈາກການເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນຈະບໍ່ເກີດຂຶ້ນ ຖ້າວ່າຜົນການຮຽນຂອງນັກຮຽນຈົບຊັ້ນປະຖົມ ບໍ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ ໂດຍສະເພາະທັກສະດ້ານການຮູ້ໜັງສື ແລະ ການຄິດໄລ່ເລກ.

ເນື່ອງຈາກອັດຕາການເຂົ້າຮຽນລວມໃນຊັ້ນມັດທະຍົມຕອນຕົ້ນຍັງຕໍ່າ ຢູ່ໃນໄລຍະ 2016-2020 ພາຍຫຼັງທີ່ມີການຂະຫຍາຍຕົວສູງໃນໄລຍະຕົ້ນໆຂອງຊຸມປີດັ່ງກ່າວ ແລະ ຄວາມແຕກໂຕນລະຫວ່າງເດັກຍິງ ແລະ ເດັກຊາຍບໍ່ໄດ້ຫຼຸດລົງ. ເຖິງຢ່າງໃດກໍ່ຕາມ, ດັດຊະນີຄວາມສະເໝີພາບຍິງຊາຍ ໃນການເຂົ້າໂຮງຮຽນອາດສະແດງໃຫ້ເຂົ້າໃຈຜິດ ຍ້ອນວ່າຕົວເລກນັກຮຽນຊາຍທີ່ຄ້າງຫ້ອງສູງກວ່າເພດຍິງເກືອບສາມເທົ່າ ແລະ ອັດຕາສ່ວນຂອງປະຊາກອນເພດຊາຍ ແລະ ເພດຍິງທີ່ເຂົ້າຮຽນໃນຊັ້ນ ມ.4 (ໂດຍນໍາໃຊ້ອັດຕາການເຂົ້າຮຽນລວມໃໝ່ ມ.4) ແມ່ນມີຄວາມເທົ່າທຽມ ຊຶ່ງດັດຊະນີຄວາມສະເໝີພາບຍິງຊາຍເທົ່າກັບ 0,97. ການຢູ່ແບບກະແຈກກະຈາຍຕາມທໍາມະຊາດຂອງພົນລະເມືອງໃນເຂດຊົນນະບົດ ໄດ້ສ້າງສິ່ງທ້າທາຍເພີ່ມເຕີມໃຫ້ແກ່ການສະໜອງການສຶກສາຊັ້ນມັດທະຍົມຕອນຕົ້ນ ແລະ ຜົນການຮຽນຂອງນັກຮຽນທີ່ຕໍ່າໃນຊັ້ນປະຖົມສຶກສາໄດ້ສືບຕໍ່ມາຈົນຮອດຊັ້ນມັດທະຍົມຕອນຕົ້ນ. ເພື່ອແກ້ໄຂບັນຫາດັ່ງກ່າວ ຈຶ່ງຈໍາເປັນຕ້ອງທົບທວນວິທີການສະໜອງການສຶກສາຊັ້ນມັດທະຍົມຕອນຕົ້ນທີ່ມີຢູ່ໃນປັດຈຸບັນ ເພື່ອກໍານົດວິທີການສະໜອງການສຶກສາຊັ້ນມັດທະ ຍົມຕອນຕົ້ນທີ່ມີປະສິດທິພາບ ແລະ ສາມາດສະໜອງຊັບພະຍາກອນ.

2) ເພື່ອເສີມຂະຫຍາຍຜົນການຮຽນ ແລະ ຫຼຸດຜ່ອນຄວາມແຕກໂຕນໃນການພັດທະນາການສຶກສາ ໂດຍຜ່ານການຄຸ້ມຄອງຊັບພະຍາກອນທີ່ມີປະສິດທິພາບ ແລະ ປະສິດທິຜົນ ໂດຍສະເພາະໃນ 40 ເມືອງດ້ອຍໂອກາດຕາມການກໍານົດຂອງກະຊວງສຶກສາທິການ ແລະ ກິລາ.

ບັນດາບ້ານໃນ 40 ເມືອງບູລິມະສິດເປັນບ້ານທີ່ນ້ອຍ ແລະ ກະແຈກກະຈາຍຖ້າທຽບໃສ່ເມືອງ ອື່ນໆ. ດັ່ງນັ້ນ, ການໃຫ້ບໍລິການການສຶກສາຊັ້ນມັດທະຍົມຕອນຕົ້ນ ຕ້ອງນໍາໃຊ້ວິທີທີ່ມີປະສິດທິພາບ ແລະ ປະຢັດກ່ອນຈະມີການຂະຫຍາຍການສຶກສາຊັ້ນມັດທະຍົມໄປສູ່ 40 ເມືອງບູລິມະສິດດັ່ງກ່າວ.

## 2.2. ຄາດໝາຍ

ຂໍ້ມູນປີຖານ ແລະ ຄາດໝາຍ ສໍາລັບຕົວຊີ້ບອກທີ່ສໍາຄັນໄດ້ສະໜອງໄວ້ໃນພາກ I, ຂໍ້ 8.5 (ຕາຕະລາງຕິດຕາມ ແລະ ປະເມີນຜົນ). ຕົວຊີ້ບອກຫຼັກ ແລະ ຄາດໝາຍ 2025 ສໍາລັບຂະແໜງຍ່ອຍນີ້ ແມ່ນ:

1) ເປີເຊັນຂອງນັກຮຽນ ມ.4 ທີ່ບັນລຸຜົນການຮຽນຕາມມາດຕະຖານຕໍ່າສຸດ
    - ວິຊາພາສາລາວ 40%;
    - ວິຊາຄະນິດສາດ 20%;
2) ອັດຕາເລື່ອນຊັ້ນ ຈາກ ປ.5 ຂຶ້ນ ມ.1:
    - ລະດັບຊາດ 95%;
    - 40 ເມືອງ 86%;
3) ອັດຕາເຂົ້າຮຽນລວມ ມ. ຕົ້ນ
    - ລະດັບຊາດ 87%;
    - 40 ເມືອງ 68%;

## 2.3. ຜົນໄດ້ຮັບລະດັບສູງ

<u>**ໝາຍເຫດ**</u>: ສໍາລັບແຕ່ລະຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ, ຈະມີການອ້າງອີງເປັນວົງເລັບ ຫຼັງຈາກສໍານວນທີ່ກ່າວເຖິງພາກທີ I ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025. ຊຶ່ງມັນຈະເຮັດໃຫ້ຜູ້ອ່ານສາມາດນໍາໃຊ້ແຜນຂອງຂະແໜງການຍ່ອຍ ເປັນແຜນສະເພາະ ແຕ່ສາມາດອ້າງອີງເຖິງນະໂຍບາຍທີ່ກ່ຽວຂ້ອງດັ່ງທີ່ໄດ້ລະບຸໄວ້ໃນພາກທີ I. ແຜນຂອງຂະແໜງການຍ່ອຍ ບໍ່ຈໍາເປັນຕ້ອງແກ້ໄຂທຸກໆຜົນໄດ້ຮັບລະດັບກາງຂອງຜົນໄດ້ຮັບລະດັບສູງ. ບາງຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ ໄດ້ຖືກປັບປຸງເພື່ອສະແດງໃຫ້ເຫັນຈຸດສຸມຂອງຂະແໜງຍ່ອຍນີ້.

### 2.3.1. ຈຳນວນນັກຮຽນທີ່ຈົບຈາກມັດທະຍົມຕອນຕົ້ນເພີ່ມຂຶ້ນ ລວມທັງມີຜົນໄດ້ຮັບດ້ານການຮຽນຮູ້ທີ່ດີຂຶ້ນ ໂດຍສະເພາະທັກສະສັດຕະວັດທີ 21, ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ (ພາກທີ I, ຜົນໄດ້ຮັບລະດັບສູງທີ 1)

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງລາຍລະອຽດຢູ່ພາກທີ I ສຳລັບເຫດຜົນຕ່າງໆໃນການກຳນົດຜົນໄດ້ຮັບດັ່ງກ່າວ. ສອງສິ່ງທ້າທາຍໃຫຍ່ໃນການຂະຫຍາຍມັດທະຍົມຕອນຕົ້ນ ແມ່ນການຫຼຸດລົງຂອງອັດຕາການເລື່ອນຊັ້ນຈາກປະຖົມຫາຊັ້ນມັດທະຍົມຕອນຕົ້ນ ໃນຊຸມປີຜ່ານມາ ແລະ ການເພີ່ມຂຶ້ນຂອງນັກຮຽນທີ່ປະລະການຮຽນໃນຊັ້ນມັດທະຍົມຂັ້ນຕົ້ນ.

**ຜົນໄດ້ຮັບລະດັບກາງທີ 1: ຫຼັກສູດສະບັບປັບປຸງ ໄດ້ຖືກຈັດຕັ້ງປະຕິບັດໃນທຸກໂຮງຮຽນ. (ພາກທີ I ຜົນໄດ້ຮັບລະດັບສູງທີ 1, ຜົນຮັບລະດັບກາງທີ 1.1)**

ຄວາມຮັບຜິດຊອບໃນການປັບປຸງຫຼັກສູດແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. ບູລິມະສິດສຳລັບມັດທະຍົມຕອນຕົ້ນແມ່ນ:

**<u>ຍຸດທະສາດທີ 1:</u>** ນຳໃຊ້ຫຼັກສູດໃໝ່ໃນຂອບເຂດທົ່ວປະເທດ.

**<u>ວຽກຈຸດສຸມ:</u>**

- ເຊື່ອມສານທັກສະຊີວິດ, ເພດສຶກສາ, ສຸຂະອານາໄມ ແລະ ໄພພິບັດ ເຂົ້າໃນຫຼັກສູດການຮຽນການສອນ;
- ຄະນະກຳມະການຮັບຮອງຫຼັກສູດ (CACIM) ອະນຸມັດຫຼັກສູດໃໝ່ ແລະ ສື່ການສອນ;
- ແຈກຢາຍອຸປະກອນການສິດສອນໃໝ່ ໃຫ້ທົ່ວເຖິງ;
- ຝຶກອົບຮົມໃຫ້ແກ່ຄູສອນໃນການນຳໃຊ້ຫຼັກສູດໃໝ່;
- ຕິດຕາມ ແລະ ປະເມີນ ການຈັດຕັ້ງປະຕິບັດຫຼັກສູດ.

**<u>ຍຸດທະສາດ 2:</u>** ຮັບປະກັນຄວາມຕໍ່ເນື່ອງກັນລະຫວ່າງຫຼັກສູດການຮຽນຂອງ ປ.5 ແລະ ມ.1.

**<u>ວຽກຈຸດສຸມ</u>**

- ປະສານງານຢ່າງມີປະສິດທິຜົນກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອປະເມີນຜົນຄວາມຕໍ່ເນື່ອງກັນຂອງຫຼັກສູດລະຫວ່າງ ປ.5 ແລະ ມ.1;
- ປະເມີນຄວາມສອດຄ່ອງ ແລະ ຄວາມຄືບໜ້າຂອງຫຼັກສູດ ປ.5 ແລະ ມ.1;
- ທົບທວນ ແລະ ປັບປຸງຫຼັກສູດມັດທະຍົມຕອນຕົ້ນ ແລະ ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູ;
- ພິມປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູ ຂອງຊັ້ນມັດທະຍົມຕົ້ນ;
- ດຳເນີນການຝຶກອົບຮົມກ່ຽວກັບການນຳໃຊ້ຫຼັກສູດສະບັບການປັບປຸງໃໝ່ ແລະ ປຶ້ມແບບຮຽນ ມ. ຕົ້ນ;
- ຕິດຕາມ, ກວດກາ ແລະ ປະເມີນການນຳໃຊ້ປຶ້ມຕຳລາຮຽນ ແລະ ປຶ້ມຄູ່ມືຄູ;

**<u>ຍຸດທະສາດທີ 3:</u>** ປະເມີນຜົນການຮຽນໃນຫ້ອງຮຽນຢູ່ໂຮງຮຽນມັດທະຍົມຕອນຕົ້ນໃນທົ່ວປະເທດ.

**<u>ວຽກຈຸດສຸມ</u>**

- ພັດທະນາເຄື່ອງມືປະເມີນ ຜົນການຮຽນຂອງນັກຮຽນ;
- ຝຶກອົບຮົມຄູກ່ຽວກັບການປະເມີນຜົນການຮຽນໃນຫ້ອງຮຽນ;
- ຕິດຕາມ ແລະ ປະເມີນ ຄູໃນການນຳໃຊ້ເຄື່ອງມືປະເມີນ;

**ຜົນໄດ້ຮັບລະດັບກາງທີ 2: ການປະເມີນຜົນການຮຽນຂອງນັກຮຽນ ມ.4 ໄດ້ຮັບການປັບປຸງ. (ພາກທີ I ຜົນໄດ້ຮັບລະດັບສູງທີ 1, ຜົນໄດ້ຮັບລະດັບກາງທີ 1.2)**

**<u>ຍຸດທະສາດທີ 1:</u>** ສ້າງມາດຕະຖານການປະເມີນຜົນການຮຽນຂອງນັກຮຽນ ມ.4.

ຢາກບັນລຸຜົນສໍາເລັດອັນເຕັມທີ່ຂອງຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ODA ຕ້ອງສຸມໃສ່ຍຸດທະສາດນີ້ໂດຍສະເພາະ.

**<u>ວຽກຈຸດສຸມ</u>**

- ພັດທະນາ ແລະ ຈັດຕັ້ງປະຕິບັດແຜນງົບປະມານ ແລະ ແຜນປະຕິບັດງານ ເພື່ອດໍາເນີນການປະເມີນຜົນການຮຽນຮູ້ຂອງນັກຮຽນຕາມລະດັບປົກກະຕິສໍາລັບ ມ.4;
- ການປະເມີນຜົນລະດັບຊາດສໍາລັບ ມ.4 ໃນອະນາຄົດ ແມ່ນໃຊ້ ASLO ມ.4 ປີ 2019 ເພື່ອເປັນເອກະສານອ້າງອີງ ເພື່ອຮັບປະກັນຄວາມຕໍ່ເນື່ອງ ແລະ ປຽບທຽບ;

**<u>ຍຸດທະສາດທີ 2:</u>** ສ້າງຄວາມເຂັ້ມແຂງໃຫ້ແກ່ການປະເມີນຜົນການຮຽນຮູ້ຂອງນັກຮຽນ.

**<u>ວຽກຈຸດສຸມ</u>**

- ສ້າງ ແລະ ປັບປຸງລະບົບ, ນິຕິກໍາ ແລະ ເຄື່ອງມືໃນການວັດຜົນແບບຕໍ່ເນື່ອງ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ຄູສຶກສານິເທດຂັ້ນແຂວງ, ຂັ້ນເມືອງ, ກຸ່ມໂຮງຮຽນ ແລະ ຄູໃນການວັດຜົນແບບຕໍ່ເນື່ອງ;
- ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດການເລື່ອນຂັ້ນແບບຕໍ່ເນື່ອງ ແລະ ວິເຄາະ, ວິໄຈຜົນການປະເມີນເພື່ອປັບປຸງການວັດ ແລະ ປະເມີນຜົນແບບຕໍ່ເນື່ອງ;
- ນໍາໃຊ້ຜົນການປະເມີນ ເພື່ອເປັນບ່ອນອີງໃນການປັບປຸງການຮຽນ-ການສອນ;

**<u>ຍຸດທະສາດທີ 3:</u>** ສະໜອງປຶ້ມຄູ່ມືຄູ ແນໃສ່ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການປະເມີນຜົນການຮຽນ.

**<u>ວຽກຈຸດສຸມ</u>**

- ປັບປຸງປຶ້ມຄູ່ມືຄູຄືນໃໝ່ ເພື່ອໃຫ້ປະກອບເອກະສານກ່ຽວກັບການປະເມີນແບບງ່າຍດາຍ (assessment rubrics) ທີ່ຄູສາມາດນໍາໃຊ້ໃນຫ້ອງຮຽນ;
- ພັດທະນາ ແລະ ຈັດຕັ້ງປະຕິບັດ ແຜນປະຕິບັດງານທີ່ມີຄ່າໃຊ້ຈ່າຍ ເພື່ອຝຶກອົບຮົມຄູທຸກຄົນໃນການນໍາໃຊ້ເຕັກນິກການປະເມີນທີ່ຖືກປັບປຸງໃໝ່;

**<u>ຍຸດທະສາດທີ 4:</u>** ສ້າງມາດຕະຖານໃນການສອບເສັງຈົບ ມ.4 ເພື່ອໃຫ້ສາມາດສົມທຽບຜົນຂອງການປະເມີນໄດ້

**<u>ວຽກຈຸດສຸມ</u>**

- ສ້າງມາດຕະຖານສໍາລັບການສອບເສັງຈົບ ມ.4;

**ຜົນໄດ້ຮັບລະດັບກາງທີ 3: ອັດຕາເຂົ້າຮຽນໃໝ່ ແລະ ອັດຕາເລື່ອນຂັ້ນໃນຊັ້ນມັດທະຍົມຕອນຕົ້ນເພີ່ມຂຶ້ນ ເພື່ອເຮັດໃຫ້ອັດຕາການຈົບຊັ້ນເພີ່ມຂຶ້ນ (ພາກທີ I ຜົນໄດ້ຮັບລະດັບສູງທີ 1, ຜົນຮັບລະດັບກາງທີ 1.3)**

**<u>ຍຸດທະສາດ 1:</u>** ທົບທວນວິທີການປະຈຸບັນ ໃນການຂະຫຍາຍການເຂົ້າເຖິງຊັ້ນມັດທະຍົມຕອນຕົ້ນ, ລວມທັງໂຄງປະກອບ 5+4+3 ທີ່ມີໃນປະຈຸບັນ.

**<u>ວຽກຈຸດສຸມ</u>**

- ປະສານງານຢ່າງມີປະສິດທິຜົນກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອປະເມີນ ແລະ ຕົກລົງວິທີການທີ່ມີປະສິດຕິພາບ ແລະ ປະສິດທິຜົນສູງສຸດ ໃນການຈັດຕັ້ງປະຕິບັດການສຶກສາຊັ້ນມັດທະຍົມຕອນຕົ້ນ ເພື່ອຂະຫຍາຍ

ການສຶກສາຊັ້ນມັດທະຍົມຕອນຕົ້ນທີ່ມີຄວາມຍືນຍົງທາງດ້ານການເງິນ ແລະ ກ້າວໄປເຖິງການບັນລຸການສຶກສາພາກບັງຄັບ;

- ສຶກສາຄວາມເປັນໄປໄດ້ໃນການປະຕິຮູບລະບົບການສຶກສາສາມັນ 6+3+3;

**<u>ຍຸດທະສາດທີ 2:</u>** ຂະຫຍາຍແຜນງານການສະໜອງສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ, ສິ່ງເສີມສຸຂະພາບ ແລະ ໂພຊະນາການ ໃຫ້ແກ່ໂຮງຮຽນມັດທະຍົມຕອນຕົ້ນ (ເບິ່ງຜົນໄດ້ຮັບລະດັບກາງ 6.3.5)

ຢາກມີຜົນສຳເລັດອັນເຕັມທີ່ຂອງຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ / ຫຼື ງົບປະມານ ODA ຕ້ອງສຸມໃສ່ຍຸດທະສາດນີ້.

**<u>ວຽກຈຸດສຸມ</u>**

- ສ້າງແຜນງົບປະມານສຳລັບການຂະຫຍາຍການສະໜອງສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມໃນໂຮງຮຽນມັດທະຍົມຕອນຕົ້ນທຸກແຫ່ງ;
- ສະໜອງນ້ຳ (ອ່າງເກັບນ້ຳ, ນ້ຳບາດານ, ນ້ຳສ້າງ, ນ້ຳລິນ) ທີ່ສະອາດ ໃຫ້ແກ່ໂຮງຮຽນ;
- ກວດກາ, ຕິດຕາມ ແລະ ປະເມີນ ໂຮງຮຽນຕາມມາດຕະຖານນ້ຳ ແລະ ສຸຂະອານາໄມ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ ວຽກງານສິ່ງເສີມສຸຂະພາບ ແລະ ໂພຊະນາການໃນໂຮງຮຽນ;
- ສືບຕໍ່ກໍ່ສ້າງ ແລະ ປັບປຸງ ວິດຖ່າຍ ແຍກ ຍິງ-ຊາຍ.

**<u>ຍຸດທະສາດທີ 3:</u>** ປັບປຸງສະພາບແວດລ້ອມໃນໂຮງຮຽນມັດທະຍົມຕອນຕົ້ນ ໃຫ້ສອດຄ່ອງກັບມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ.

**<u>ວຽກຈຸດສຸມ</u>**

- ສ້າງ, ປັບປຸງໂຮງຮຽນ ແລະ ຂະຫຍາຍຫ້ອງຮຽນ ໃຫ້ໄດ້ມາດຕະຖານ;
- ສ້າງ, ປັບປຸງ ແລະ ຕໍ່ເຕີມຫໍພັກນັກຮຽນ, ຫ້ອງນ້ຳ (ແຍກຫ້ອງນ້ຳຍິງ-ຊາຍ) ພ້ອມທັງສະໜອງລະບົບນ້ຳສະອາດໃຫ້ພຽງພໍ ສາມາດນຳໃຊ້ໄດ້ປົກກະຕິ ແລະ ສິ່ງອຳນວຍຄວາມສະດວກຕ່າງໆຕາມເງື່ອນໄຂຕົວຈິງ;
- ຝຶກອົບຮົມນຳໃຊ້ມາດຕະຖານຄຸນນະພາບ ກ່ຽວກັບການປັບປຸງສະພາບແວດລ້ອມພາຍໃນໂຮງຮຽນໃຫ້ສະອາດ ແລະ ປອດໄພ ໃຫ້ແກ່ຂັ້ນແຂວງ, ເມືອງ ແລະ ໂຮງຮຽນ, ລວມທັງພຶດຕິກຳທີ່ປອດໄພຂອງຊາວໜຸ່ມ ແລະ ເຍົາວະຊົນ;

**<u>ຍຸດທະສາດທີ 4:</u>** ສະໜອງສິ່ງຈູງໃຈໃຫ້ນັກຮຽນທຸກຍາກ ໃນໂຮງຮຽນຫ່າງໄກສອກຫຼີກ ເພື່ອປັບປຸງອັດຕາເຂົ້າຮຽນ.

**<u>ວຽກຈຸດສຸມ</u>**

- ສະໜອງເງິນອຸດໜູນ/ເບ້ຍລ້ຽງໃຫ້ແກ່ນັກຮຽນທຸກຍາກ, ດ້ອຍໂອກາດ;
- ຂະຫຍາຍໂຄງການສະໜອງອາຫານໄປສູ່ໂຮງຮຽນມັດທະຍົມຕອນຕົ້ນຢູ່ເຂດຫ່າງໄກສອກຫຼີກ;
- ຊຸກຍູ້ການຈັດຕັ້ງປະຕິບັດວຽກງານສິ່ງເສີມໂພຊະນາການ (ສ້າງສວນຄົວ, ປູກຝັງລ້ຽງສັດໃນໂຮງຮຽນ) ພ້ອມທັງສະໜອງການຝຶກອົບຮົມ ແລະ ຕິດຕາມການຈັດຕັ້ງປະຕິບັດ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ໂຮງຮຽນສາມັນກິນນອນຊົນເຜົ່າທີ່ມີຢູ່ໃນປັດຈຸບັນ ພ້ອມສ້າງເງື່ອນໄຂເພື່ອຂະຫຍາຍໄປສູ່ເມືອງທີ່ມີເງື່ອນໄຂ ແລະ ຄວາມພ້ອມ;

**<u>ຍຸດທະສາດທີ 5:</u>** ປັບປຸງການບໍລິການການສຶກສາຊັ້ນມັດທະຍົມຕອນຕົ້ນໃນປະຈຸບັນຢູ່ໃນທຸກໆໂຮງຮຽນ.

**<u>ວຽກຈຸດສຸມ</u>**

- ໃຫ້ການຊ່ວຍເຫຼືອດ້ານການສອນຢ່າງເປັນປົກກະຕິ ລວມທັງການຊ່ວຍເຫຼືອຂອງຄູນິເທດ;

- ນຳໃຊ້ຜົນການປະເມີນນັກຮຽນ ມ.4 ໃນປີ 2019 ເປັນບ່ອນອີງໃນການປັບປຸງການຮຽນ-ການສອນໃນຊັ້ນມັດທະຍົມຕອນຕົ້ນ;
- ສ້າງຄວາມເຂັ້ມແຂງໃນການເປັນເຈົ້າການຂອງໂຮງຮຽນ ແລະ ການຊີ້ນຳຂອງ ຄພສບ ໃນການພັດທະນາການສຶກສາ;
- ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງໂຮງຮຽນ ໃນການໃຫ້ການສະໜັບສະໜູນນັກຮຽນທີ່ຮຽນອ່ອນ ແລະ ນັກຮຽນທີ່ດ້ອຍໂອກາດ;
- ສ້າງ ແລະ ພັດທະນາກົນໄກໃນການຕິດຕາມການຮຽນຂອງນັກຮຽນ ແລະ ການສອນຂອງຄູ ແລະ ນຳໃຊ້ກົນໄກດັ່ງກ່າວ ເພື່ອປະເມີນຜົນການຮຽນຂອງນັກຮຽນ ແລະ ຜົນການສອນຂອງຄູ;
- ຈັດການສອນເພີ່ມໃຫ້ນັກຮຽນທີ່ມີຄວາມຕ້ອງການພິເສດ ແລະ ມີຜົນການຮຽນຕ່ຳ;
- ຈັດຕັ້ງປະຕິບັດແຜນການຮຽນ-ການສອນ ໃຫ້ສຳເລັດຕາມໂຄງການຫຼັກສູດທີ່ກຳນົດ ຂອງ ກະຊວງສຶກສາທິການ ແລະ ກິລາ;
- ຕິດຕາມ ແລະ ກວດກາການປະຕິບັດວຽກງານຂອງຄູທີ່ປະຈຳການ, ຄູສຶກສານິເທດ ແລະ ຄູທີ່ໄດ້ຕຳແໜ່ງຄູປະສົບການ;
- ຕິດຕາມ ແລະ ເກັບກຳຂໍ້ມູນກ່ຽວກັບຈຳນວນຄູ ແລະ ກິດຈະກຳການຮຽນ-ການສອນໃນແຕ່ລະໂຮງຮຽນ;
- ຈັດສັນຄູອີງຕາມວິຊາສິດສອນ ແລະ ຄຸນວຸດທິ ພ້ອມທັງສິດສອນໃຫ້ຄົບຕາມຫຼັກສູດທີ່ກຳນົດ;
- ດຳເນີນການຝຶກອົບຮົມການນຳໃຊ້ຫ້ອງທົດລອງວິທະຍາສາດ ແລະ ອຸປະກອນໃນຫ້ອງຝຶກງານ;
- ສົ່ງເສີມການສິດສອນ ແລະ ການຮຽນພາສາຕ່າງປະເທດ.

**<u>ຍຸດທະສາດທີ 6:</u>** ສ້າງຂອບຄຸນວຸດທິ ທີ່ເຊື່ອມໂຍງກັບຄຸນວຸດທິການສຶກສາໃນໂຮງຮຽນ ແລະ ນອກໂຮງຮຽນ.

**<u>ວຽກຈຸດສຸມ</u>**

- ທົບທວນຫຼັກສູດການການສຶກສານອກໂຮງຮຽນ ເພື່ອເຮັດໃຫ້ຂອບວຸດທິການສຶກສາທັງໃນ ແລະ ນອກໂຮງຮຽນສາມາດເຊື່ອມໂຍງກັນໄດ້.

**ຜົນໄດ້ຮັບລະດັບກາງທີ 4: ຫຼຸດຜ່ອນຄວາມແຕກໂຕນກັນດ້ານການສຶກສາ ລະຫວ່າງເຂດທີ່ດ້ອຍໂອກາດ ແລະ ບໍ່ດ້ອຍໂອກາດ ໂດຍຜ່ານການສ້າງກຸ່ມໂຮງຮຽນ. (ພາກທີ I, ຜົນໄດ້ຮັບ 1, ຜົນໄດ້ຮັບລະດັບກາງທີ 1.5)**

**<u>ຍຸດທະສາດທີ 1:</u>** ຈັດລຳດັບຄວາມສຳຄັນ ໃນການປັບປຸງການບໍລິການການສຶກສາຊັ້ນມັດທະຍົມຕອນຕົ້ນໃນເຂດທີ່ດ້ອຍໂອກາດ;

ຢາກມີຜົນສຳເລັດຢ່າງເຕັມສ່ວນໃນການຈັດຕັ້ງປະຕິບັດຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ສະເພາະຍຸດທະສາດນີ້.

**<u>ວຽກຈຸດສຸມ</u>**

- ຈັດລຳດັບຄວາມສຳຄັນຂອງການສະໜອງສິ່ງອຳນວຍຄວາມສະດວກ ເຊັ່ນ: ອຸປະກອນການຮຽນການສອນ, ການກໍ່ສ້າງຫໍພັກນ້ອຍທີ່ມີວິດຖ່າຍ ແລະ ນ້ຳສະອາດຢູ່ໃນໂຮງຮຽນປະຖົມ, ໃຫ້ທຶນການສຶກສາແກ່ນັກຮຽນທີ່ຂາດເຂີນ ແລະ ຊັບພະຍາກອນອື່ນໆ ໃນ 40 ເມືອງເປົ້າໝາຍ;
- ສ້າງ ແລະ ຂະຫຍາຍກຸ່ມໂຮງຮຽນ ຢູ່ 40 ເມືອງ ແນໃສ່ເພື່ອນຳໃຊ້ຊັບພະຍາກອນຮ່ວມກັນ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນໃນການສິດສອນ ແລະ ການຮຽນຮູ້;

- ຕິດຕາມ, ສະໜັບສະໜູນ ແລະ ໃຫ້ການຝຶກອົບຮົມກ່ຽວກັບການຄຸ້ມຄອງກຸ່ມໂຮງຮຽນ ລວມທັງການສິດສອນ ແລະ ການຮຽນຮູ້;
- ພັດທະນາ ແລະ ຜະລິດສື່ການຮຽນ-ການສອນ ພ້ອມທັງສະໜອງອຸປະກອນ ແລະ ສິ່ງອຳນວຍຄວາມສະດວກໃຫ້ກຸ່ມໂຮງຮຽນ.

**2.3.2. ຈຳນວນຄູ ແລະ ຜູ້ອຳນວຍການໂຮງຮຽນ ທີ່ມີຄວາມຮູ້ຄວາມສາມາດສອດຄ່ອງກັບມາດຕະຖານການສິດສອນທີ່ໄດ້ກຳນົດຜ່ານມາເພີ່ມຂຶ້ນ ໂດຍໃຫ້ມີການປະເມີນຜົນການປະຕິບັດໜ້າທີ່ຂອງເຂົາເຈົ້າ ຢ່າງເປັນປົກກະຕິ (ພາກທີ I, ຜົນໄດ້ຮັບລະດັບສູງທີ 2)**

- **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ສຳລັບລາຍລະອຽດຫຼັກການ ແລະ ເຫດຜົນ. ການສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແມ່ນໄດ້ນຳໃຊ້ວິທີການແບບກວມລວມ ແລະ ມີລັກສະນະຍຸດທະສາດ ໃນການພັດທະນາວິຊາຊີບທາງການສຶກສາ, ໂດຍເນັ້ນໃສ່ການພັດທະນາມາດຕະຖານການສອນ ແລະ ເຄື່ອງມືປະເມີນຜົນການສິດສອນຂອງຄູ ທີ່ເຊື່ອມໂຍງກັບມາດຕະຖານດັ່ງກ່າວ ແລະ ສ້າງຄວາມເຂັ້ມແຂງແກ່ຜູ້ອຳນວຍການໃນລະດັບໂຮງຮຽນ ໂດຍໄດ້ຮັບການສະໜັບສະໜູນຈາກຄູສຶກສານິເທດ.

**ຜົນໄດ້ຮັບລະດັບກາງທີ 1: ສ້າງຄວາມເຂັ້ມແຂງໃຫ້ແກ່ຄູສອນໃນການຈັດຕັ້ງປະຕິບັດຫຼັກສູດໃໝ່ ໂດຍຜ່ານການສະໜັບສະໜູນຈາກກຸ່ມໂຮງຮຽນ ແລະ ຄູສຶກສານິເທດ (ພາກທີ I ຜົນໄດ້ຮັບລະດັບສູງທີ 1, ຜົນໄດ້ຮັລບະດັບກາງທີ 2.1)**

<u>**ຍຸດທະສາດທີ 1:**</u> ສ້າງກຸ່ມໂຮງຮຽນໃຫ້ເປັນຈຸດສຸມໃນການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ແລະ ການແລກ ປ່ຽນບົດຮຽນ.

ຢາກມີຜົນສຳເລັດຢ່າງເຕັມສ່ວນໃນການຈັດຕັ້ງປະຕິບັດຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ສະເພາະຜົນຍຸດທະສາດນີ້.

<u>**ວຽກຈຸດສຸມ**</u>

- ເຜີຍແຜ່ບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງກັບການພັດທະນາກຸ່ມໂຮງຮຽນໃຫ້ສຶກສາເມືອງ ແລະ ໂຮງຮຽນ ເພື່ອໃຫ້ພວກເຂົາເຈົ້າ ເຂົ້າໃຈກ່ຽວກັບຈຸດປະສົງຂອງການສ້າງກຸ່ມໂຮງຮຽນ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະກຳມະການບໍລິຫານກຸ່ມໂຮງຮຽນ ເພື່ອຮັບປະກັນປະສິດທິຜົນຂອງການຈັດຕັ້ງປະຕິບັດ;
- ພັດທະນາມາດຕະຖານໂຮງຮຽນຕົວແບບ ແລະ ກຸ່ມໂຮງຮຽນ;
- ສ້າງຄວາມເຂັ້ມແຂງແກ່ວຽກງານນິເທດພາຍໃນ ແລະ ພາຍນອກ.

**ຜົນໄດ້ຮັບລະດັບກາງທີ 2: ຫຼັກສູດສ້າງຄູກ່ອນປະຈຳການ ແລະ ຫຼັກສູດຝຶກອົບຮົມຄູປະຈຳການ ໄດ້ຖືກປັບປຸງ ແລະ ຈັດຕັ້ງປະຕິບັດ ໃຫ້ສອດຄ່ອງກັບຫຼັກສູດຊັ້ນມັດທະຍົມສຶກສາສະບັບປັບປຸງໃໝ່ ແລະ ມາດຕະຖານການສິດສອນ. (ພາກທີ I ຜົນໄດ້ຮັບທີລະດັບສູງທີ 2, ຜົນຮັບລະດັບກາງທີ 2.2)**

ຄວາມຮັບຜິດຊອບຕໍ່ການພັດທະນາວິຊາຊີບຄູແມ່ນຂຶ້ນກັບກົມສ້າງຄູ. ບູລິມະສິດສຳລັບຂະແໜງມັດທະຍົມຕອນຕົ້ນມີດັ່ງນີ້:

**<u>ຍຸດທະສາດທີ 1:</u>** ເຊື່ອມໂຍງຫຼັກສູດການຝຶກອົບຮົມຄູກ່ອນປະຈໍາການ ໃຫ້ສອດຄ່ອງກັບຫຼັກສູດໃໝ່ ແລະ ຍຸດທະສາດການພັດທະນາວິຊາຊີບຄູ.

**<u>ຍຸດທະສາດທີ 2:</u>** ທົບທວນຫຼັກສູດຝຶກອົບຮົມຄູປະຈໍາການຊັ້ນມັດທະຍົມຕອນຕົ້ນ ໂດຍນໍາໃຊ້ການປະເມີນຜົນການເຮັດວຽກຂອງຄູ ແລະ ຂອບມາດຕະຖານຂອງຄູ.

**<u>ຍຸດທະສາດທີ 3:</u>** ດໍາເນີນການຝຶກອົບຮົມຄູໃນລະດັບຊາດ ເພື່ອການຈັດຕັ້ງປະຕິບັດຫຼັກສູດຊັ້ນມັດທະຍົມໃໝ່.

**<u>ຍຸດທະສາດທີ 4:</u>** ສ້າງຄວາມເຂັ້ມແຂງໃຫ້ຄູນິເທດຊັ້ນມັດທະຍົມຕອນຕົ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນຂອງຜົນການສຶກສາໃນທຸກລະດັບ.

**ຜົນໄດ້ຮັບລະດັບກາງທີ 3: ລະບົບການປະເມີນຜົນການປະຕິບັດໜ້າທີ່ຂອງຄູໄດ້ຮັບການປັບປຸງ ໂດຍໃຫ້ມີການປັບປຸງເຄື່ອງມືປະເມີນຜົນການປະຕິບັດໜ້າທີ່ຂອງຄູ ຕິດພັນກັບມາດຕະຖານການສິດສອນ ແລະ ຈັດຕັ້ງປະຕິບັດເພື່ອກໍານົດຄວາມຕ້ອງການໃນການບໍາລຸງຄູ ທີ່ເປັນບຸລິມະສິດສໍາ ລັບຊັ້ນມັດທະຍົມຕົ້ນ (ພາກທີ I ຜົນໄດ້ຮັບລະດັບສູງທີ 2, ຜົນໄດ້ຮັບລະດັບກາງທີ 2.3)**

ກົມສ້າງຄູຈະເປັນຜູ້ນໍາພາໃຫ້ບັນລຸຜົນໄດ້ຮັບໃນໄລຍະກາງນີ້. ສະຖາບັນພັດທະນາການບໍລິຫານການສຶກສາຈະຮັບຜິດຊອບການຝຶກອົບຮົມດ້ານການບໍລິຫານຂອງຜູ້ອໍານວຍການໂຮງຮຽນ. ບູລິມະສິດສໍາລັບຂະແໜງມັດທະຍົມຕອນຕົ້ນມີດັ່ງນີ້:

**<u>ຍຸດທະສາດທີ 1:</u>** ພັດທະນາມາດຕະຖານການສິດສອນສໍາລັບຊັ້ນມັດທະຍົມຕອນຕົ້ນ ເປັນພື້ນຖານໃນການປະເມີນຜົນການປະຕິບັດໜ້າທີ່ຂອງຄູ.

**<u>ວຽກຈຸດສຸມ</u>**

- ພັດທະນາມາດຕະຖານການສອນ ຊັ້ນ ມ.ຕົ້ນ;
- ທົດລອງນໍາໃຊ້ມາດຕະຖານການສອນ ຊັ້ນ ມ.ຕົ້ນ;
- ເຜີຍແຜ່ມາດຕະຖານການສອນ ໃຫ້ແກ່ຄູສອນວິຊາໃນຊັ້ນ ມ.ຕົ້ນ, ຜູ້ອໍານວຍການໂຮງຮຽນ, ຫ້ອງການສຶກສາ ແລະ ກິລາ ເມືອງ/ນະຄອນ ແລະ ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ອໍານວຍການໂຮງຮຽນ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ/ນະຄອນ ແລະ ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ ໃນການນໍາໃຊ້ມາດຕະຖານການສອນ, ການນໍາໃຊ້ເຄື່ອງຈັກໃນການກວດບົດສອບເສັງ ແລະ ຕິດຕາມ ການຈັດຕັ້ງປະຕິບັດແຜນຂະແໜງການຍ່ອຍ.

**<u>ຍຸດທະສາດທີ 2:</u>** ພັດທະນາໂຄງສ້າງ ແລະ ຂັ້ນຕອນການຈັດຕັ້ງລະບົບການປະເມີນຜົນການປະຕິບັດໜ້າທີ່ຂອງຄູ ແລະ ຜູ້ອໍານວຍການໂຮງຮຽນໃຫ້ເປັນວຽກລະດັບອົງກອນ.

**<u>ວຽກຈຸດສຸມ</u>**

- ສ້າງ ແລະ ປັບປຸງເຄື່ອງມືໃນການລົງຕິດຕາມ ແລະ ປະເມີນການປະຕິບັດໜ້າທີ່ຂອງຄູສອນ, ຄູສຶກສານິເທດ ຄູທີ່ໄດ້ຮັບຕໍາແໜ່ງດ້ານວິຊາການ;
- ສະຫຼຸບລາຍງານ ແລະ ສະເໜີຜົນການປະເມີນໃຫ້ແກ່ພາກສ່ວນກ່ຽວຂ້ອງເພື່ອປັບປຸງຄຸນນະພາບຂອງຄູ;
- ສ້າງ ແລະ ພັດທະນາກົນໄກການຕິດຕາມຜົນການຮຽນຂອງນັກຮຽນ ແລະ ການປະຕິບັດໜ້າທີ່ຂອງຄູ ເພື່ອເປັນການປະເມີນການສິດສອນຂອງຄູ ແລະ ການຮຽນຂອງນັກຮຽນ.

**<u>ຍຸດທະສາດທີ 3:</u>** ພັດທະນາ ແລະ ຈັດຕັ້ງປະຕິບັດລະບົບການປະເມີນຜົນການເຮັດວຽກຂອງຄູ ແລະ ຜູ້ອຳນວຍການໂຮງຮຽນໃນທົ່ວປະເທດ.

### 2.3.3. ໂຮງຮຽນທຸກແຫ່ງມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດພຽງພໍ ເພື່ອໃຫ້ສາມາດເຮັດວຽກໄດ້ຢ່າງມີປະສິດທິຜົນ, ພ້ອມທັງມີຂີດຄວາມສາມາດໃນການຄຸ້ມຄອງໂຮງຮຽນ (ພາກທີ 1, ຜົນໄດ້ຮັບທີ 3)

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ສຳລັບລາຍລະອຽດສຳລັບຫຼັກການ ແລະ ເຫດຜົນ. ໂຮງຮຽນມັດທະຍົມຕອນຕົ້ນທຸກແຫ່ງຕ້ອງການຊັບພະຍາກອນ ແລະ ຄວາມສາມາດຂັ້ນພື້ນຖານ ເພື່ອໃຫ້ສາມາດເຮັດວຽກໄດ້ຢ່າງມີປະສິດທິຜົນ ແລະ ສະໜອງການສຶກສາທີ່ມີຄຸນນະພາບທີ່ຍອມຮັບໄດ້, ໂດຍອີງໃສ່ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ແລະ ມາດຕະຖານດ້ານວິຊາຊີບ.

**ຜົນໄດ້ຮັບລະດັບກາງທີ 1: ໄດ້ມີການສ້າງຂະບວນການຄຸ້ມຄອງໂຮງຮຽນ ແລະ ການປະເມີນຕົນເອງ ແລະ ການວາງແຜນພັດທະນາໂຮງຮຽນທີ່ຍືນຍົງ (ໂດຍນຳໃຊ້ FQS) ເພື່ອເປັນບ່ອນອີງໃຫ້ແກ່ເມືອງໃນການວາງແຜນ ແລະ ການກຳນົດເປົ້າໝາຍການສະໜັບສະໜູນ ລວມທັງການຈັດສັນຄູ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ. (ພາກທີ I ຜົນໄດ້ຮັບລະດັບສູງທີ 3, ຜົນໄດ້ຮັບລະດັບກາງທີ 2)**

ສູນປະກັນຄຸນນະພາບການສຶກສາຈະເຮັດວຽກຮ່ວມກັບກົມສາມັນ ເພື່ອພັດທະນາມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ສຳລັບຊັ້ນມັດທະຍົມສຶກສາຕອນຕົ້ນ.

**<u>ຍຸດທະສາດ 1:</u>** ພັດທະນາມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາສຳລັບຊັ້ນມັດທະຍົມສຶກສາ.

**<u>ວຽກຈຸດສຸມ</u>**

- ໂດຍອີງໃສ່ຂອບມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາຊັ້ນປະຖົມສຶກສາ, ພັດທະນາມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ສຳລັບມັດທະຍົມສຶກສາ ພ້ອມທັງໃຫ້ໄດ້ຮັບຮອງນຳໃຊ້;
- ພັດທະນາເຄື່ອງມືການປະເມີນຕົນເອງຂອງມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ແລະ ທົດລອງໃຊ້ໃນໂຮງຮຽນມັດທະຍົມຕ່າງໆ;
- ພັດທະນາ ພ້ອມທັງຮັບຮອງນິຕິກຳ ແລະ ຄຳແນະນຳໃນການດຳເນີນງານ ສຳລັບຜູ້ໃຫ້ບໍລິການການສຶກສາຊັ້ນມັດທະຍົມ, ສຶກສາເມືອງ ແລະ ສຶກສາແຂວງ ໃນການສະໜັບສະໜູນ ແລະ ແນະນຳການນຳໃຊ້ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ;
- ສ້າງແຜນການຈັດຕັ້ງປະຕິບັດ ພ້ອມແຜນການເງິນ, ການຝຶກອົບຮົມ ແລະ ການເຜີຍແຜ່ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ຊັ້ນມັດທະຍົມ;
- ທົດລອງນຳໃຊ້ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາຊັ້ນມັດທະຍົມ ພ້ອມທັງປະເມີນ ແລະ ປັບປຸງ;
- ເຜີຍແຜ່ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ຊັ້ນມັດທະຍົມໃນທົ່ວປະເທດ ຕາມແຜນການຈັດຕັ້ງປະຕິບັດ, ການຝຶກອົບຮົມ ແລະ ການເຜີຍແຜ່ທີ່ໄດ້ກຳນົດ;
- ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ.

**<u>ຍຸດທະສາດທີ 2:</u>** ພັດທະນາແຜນປະຕິບັດງານສໍາລັບການນໍາໃຊ້ຂໍ້ມູນຈາກ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາຊັ້ນມັດທະຍົມສຶກສາຕອນຕົ້ນ ໃນລະດັບເມືອງ ເພື່ອສະໜັບສະໜູນຂະບວນການສ້າງແຜນການ ແລະ ກໍານົດບູລິມະສິດຂອງເມືອງ ແນໃສ່ເພື່ອປັບປຸງຄວາມແຕກໂຕນກັນ.

**<u>ວຽກຈຸດສຸມ</u>**

- ສ້າງຂີດຄວາມສາມາດໃຫ້ແກ່ສຶກສາເມືອງໃນຂັ້ນຕອນການວາງແຜນ ໂດຍອີງໃສ່ການຈັດລໍາດັບຄວາມສໍາຄັນເພື່ອໃຫ້ບັນລຸໄດ້ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ;
- ຕິດຕາມ, ຊຸກຍູ້ ແລະ ສະໜັບສະໜູນເມືອງ ໃນຂະບວນການຈັດສັນບູລິມະສິດ ແລະ ການວາງແຜນເພື່ອຫຼຸດຜ່ອນຄວາມແຕກໂຕນ;

**<u>ຍຸດທະສາດທີ 3:</u>** ສະໜັບສະໜູນການຈັດຕັ້ງປະຕິບັດນະໂຍບາຍການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ.

**<u>ວຽກຈຸດສຸມ</u>**

- ສະໜັບສະໜູນການເຜີຍແຜ່ນະໂຍບາຍການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ ທີ່ຈະກໍານົດພາລະບົດບາດ ແລະ ຄວາມຮັບຜິດຊອບໃນລະດັບໂຮງຮຽນ ແລະ ບົດບາດໃນການສະໜັບສະໜູນຂອງສຶກສາເມືອງ ແລະ ສຶກສາແຂວງ; ກໍານົດວິທີການໄລຍະຍາວ ເພື່ອຮັບປະກັນໃຫ້ຜູ້ອໍານວຍການໂຮງຮຽນ ມີຄວາມສາມາດໃນການຈັດຕັ້ງປະຕິບັດໜ້າທີ່ຂອງພວກເຂົາ;
- ກໍານົດວິທີການທີ່ມີປະສິດຕິພາບດ້ານຄ່າໃຊ້ຈ່າຍ (ຕົວຢ່າງ ຜ່ານກຸ່ມໂຮງຮຽນ) ເພື່ອສະໜັບສະໜູນການສ້າງຄວາມເຂັ້ມແຂງໃຫ້ແກ່ ຄພສບ ແລະ ຜູ້ອໍານວຍການໂຮງຮຽນ;
- ສ້າງຂີດຄວາມສາມາດຂອງຜູ້ອໍານວຍການໂຮງຮຽນໃນການຄຸ້ມຄອງເງິນບໍລິຫານໂຮງຮຽນ;
- ຕິດຕາມ ແລະ ກວດກາປະສິດທິພາບຂອງການໃຊ້ຈ່າຍເງິນບໍລິຫານໂຮງຮຽນ;
- ສ້າງຄວາມເຂັ້ມແຂງໃນການເກັບກໍາຂໍ້ມູນໃນລະດັບໂຮງຮຽນ.

**<u>ຍຸດທະສາດທີ 4</u>:** ພັດທະນາ ແລະ ຈັດຕັ້ງປະຕິບັດລະບົບການປະເມີນລະດັບໂຮງຮຽນແບບຍືນຍົງ ແລະ ງ່າຍ ດາຍ ສໍາລັບມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາຊັ້ນມັດທະຍົມຕອນຕົ້ນ ທີ່ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນ ແລະ ເປັນບ່ອນອີງໃຫ້ແກ່ຂັ້ນຕອນການກໍານົດບູລິມະສິດ ແລະ ການສ້າງແຜນການຂອງເມືອງ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ລວມທັງກົນໄກການຮັບປະກັນຄຸນນະພາບ.

**<u>ວຽກຈຸດສຸມ</u>**

- ພັດທະນາລະບົບການປະເມີນລະດັບໂຮງຮຽນແບບຍືນຍົງ ແລະ ແບບງ່າຍດາຍ ສໍາລັບມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ຊັ້ນມັດທະຍົມຕົ້ນ ທີ່ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນ;

**ຜົນໄດ້ຮັບລະດັບກາງທີ 2: ເງິນບໍລິຫານໂຮງຮຽນ (ສູດຄິດໄລ່ ແລະ ລາຍການໃຊ້ຈ່າຍທີ່ເໝາະສົມ) ແມ່ນຕອບສະໜອງໄດ້ກັບຄວາມຕ້ອງການໃນລະດັບໂຮງຮຽນ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ຕິດພັນກັບມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ. (ພາກທີ I ຜົນໄດ້ຮັບລະດັບສູງທີ 3, ຜົນຮັບລະດັບກາງທີ 3.3)**

ກົມການເງິນມີຄວາມຮັບຜິດຊອບຕໍ່ກັບເງິນບໍລິຫານໂຮງຮຽນ ແລະ ຈະເຮັດວຽກຮ່ວມກັບກົມສາມັນ ເພື່ອທົບທວນເບິ່ງວ່າ ຈະກໍານົດເງິນບໍລິຫານໂຮງຮຽນສໍາລັບຂະແໜງການຍ່ອຍມັດທະຍົມແນວໃດ. ບູລິມະສິດສໍາລັບຂະແໜງການຍ່ອຍມັດທະຍົມມີດັ່ງນີ້:

**<u>ຍຸດທະສາດທີ 1:</u>** ຮັບປະກັນໃຫ້ເງິນບໍລິຫານໂຮງຮຽນຕອບສະໜອງກັບຄວາມຕ້ອງການຂອງແຕ່ລະໂຮງຮຽນ;

**ຜົນໄດ້ຮັບລະດັບກາງທີ 3: ການຈັດສັນຄູສອນແມ່ນຕອບສະໜອງຕໍ່ຄວາມຕ້ອງການໃນລະດັບໂຮງຮຽນ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ຕິດພັນກັບມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ. (ພາກທີ I ຜົນໄດ້ຮັບທີ 3, ຜົນຮັບລະດັບກາງທີ 3.4)**

ຄວາມຮັບຜິດຊອບໃນການຈັດສັນຄູ ແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຄະນະກຳມະການຈັດສັນຄູ ໂດຍມີການສະໜັບສະໜູນຈາກກົມຈັດຕັ້ງ ແລະ ພະນັກງານ, ສຶກສາແຂວງ ແລະ ສຶກສາເມືອງ. ບູລິມະສິດສຳລັບຂະແໜງການຍ່ອຍມັດທະຍົມມີດັ່ງນີ້:

**<u>ຍຸດທະສາດທີ 1:</u>** ຫຼຸດຜ່ອນຄວາມແຕກຕ່າງດ້ານການສະໜອງຄູໃນໂຮງຮຽນມັດທະຍົມຕອນຕົ້ນ.

**ຜົນໄດ້ຮັບລະດັບກາງທີ 4: ການຈັດສັນປຶ້ມແບບຮຽນ ແລະ ຄູ່ມືຄູແມ່ນຕອບສະໜອງກັບຄວາມຕ້ອງການໃນລະດັບໂຮງຮຽນເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ຕິດພັນກັບມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ. (ພາກທີ I ຜົນໄດ້ຮັບລະດັບສູງທີ 3, ຜົນໄດ້ຮັບລະດັບກາງທີ 3.5)**

ຄວາມຮັບຜິດຊອບໃນການຈັດສັນປຶ້ມຕຳລາຮຽນ ແລະ ອຸປະກອນການຮຽນ - ການສອນອື່ນໆ ແມ່ນຢູ່ພາຍໃຕ້ຄະນກຳມະການແຜນການ ແລະ ການເງິນ ໂດຍໄດ້ຮັບການສະໜັບສະໜູນຈາກພະແນກຄຸ້ມຄອງຊັບສິນຂອງກົມການເງິນ, ສຶກສາແຂວງ ແລະ ສຶກສາເມືອງ. ບູລິມະສິດສຳລັບຂະແໜງການຍ່ອຍມັດທະຍົມມີດັ່ງນີ້:

**<u>ຍຸດທະສາດທີ 1:</u>** ຫຼຸດຜ່ອນຄວາມແຕກໂຕນໃນການຈັດສັນປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູ ໃຫ້ແກ່ໂຮງຮຽນມັດທະຍົມ.

**<u>ວຽກຈຸດສຸມ</u>**

- ຈັດສົ່ງປຶ້ມຄູ່ມືຄູສຳລັບວິຊາເພດສຶກສາໃຫ້ແກ່ໂຮງຮຽນມັດທະຍົມທຸກແຫ່ງ.

**ຜົນໄດ້ຮັບລະດັບກາງທີ 5: ໂຮງຮຽນທຸກແຫ່ງແມ່ນໄດ້ຮັບການສະໜັບສະໜູນເພື່ອໃຫ້ບັນລຸມາດຖານຂັ້ນຕ່ຳຂອງສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ (1 ດາວ ຫຼື ສູງກວ່າ). (ພາກທີ I ຜົນໄດ້ຮັບລະດັບສູງທີ 1, ຜົນຮັບລະດັບກາງທີ 1.3. ເບິ່ງຜົນໄດ້ຮັບລະດັບສູງທີ 3, ຜົນຮັບລະດັບກາງທີ 3.6)**

ຄວາມຮັບຜິດຊອບໃນການສະໜອງສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ ແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຄະນະກຳມະການແຜນການ ແລະ ການເງິນ ໂດຍໄດ້ຮັບການສະໜັບສະໜູນຈາກພະແນກຄຸ້ມຄອງການອອກແບບກໍ່ສ້າງ ແລະ ເຄຫະສະຖານ ຂອງກົມການເງິນ, ສຶກສາແຂວງ ແລະ ສຶກສາເມືອງ. ບູລິມະສິດສຳລັບຂະແໜງການຍ່ອຍມັດທະຍົມມີດັ່ງນີ້:

**<u>ຍຸດທະສາດທີ 1:</u>** ການຂະຫຍາຍແຜນງານການສະໜອງສິ່ງອຳນວຍຄວາມສະດວກ ດ້ານສະຂອະນາໄມໃນໂຮງຮຽນມັດທະຍົມສຶກສາຕອນຕົ້ນ (ເບິ່ງຜົນຮັບລະດັບກາງທີ 6.3.5)

# IV. ຂະແໜງການຍ່ອຍມັດທະຍົມສຶກສາຕອນປາຍ

## 1. ພາກສະເໜີ

### 1.1. ຜົນສໍາເລັດ

ພາກ I ຂອງແຜນ 5 ປີ 2021-2025 (ຂໍ້ທີ 2 ແລະ 3) ໄດ້ໃຫ້ລາຍລະອຽດກ່ຽວກັບຜົນສໍາເລັດຂອງການສຶກສາຊັ້ນມັດທະຍົມຕອນປາຍ. ຜົນສໍາເລັດທີ່ສໍາຄັນອື່ນໆລວມມີ: ການທົດລອງສະໜອງການສຶກສາສາມັນວິຊາຊີບຢູ່ໂຮງຮຽນກິນນອນຊົນເຜົ່າ; ໄດ້ສ້າງຄູສຶກສານິເທດຊັ້ນມັດທະຍົມຕອນປາຍ ຢູ່ 11 ແຂວງໃນທົ່ວປະເທດ ແລະ ໄດ້ສະໜອງອຸປະກອນຫ້ອງທົດລອງ ແລະ ການຝຶກອົບຮົມໃຫ້ແກ່ຄູສອນໂຮງຮຽນຕົວແບບຂອງແຂວງ ຈໍານວນ 18 ແຫ່ງ.

ຕາຕະລາງລຸ່ມນີ້ ສະແດງເຖິງການປ່ຽນແປງດ້ານຕົວຊີ້ບອກຂອງການສຶກສາຊັ້ນມັດທະຍົມຕອນປາຍ.

**ຕາຕະລາງ 16: ຄວາມຄືບໜ້າຂອງຕົວຊີ້ບອກຕ່າງໆໃນຊັ້ນມັດທະຍົມສຶກສາຕອນປາຍແຕ່ປີ 2016 ຫາ 2020**

| ຕົວຊີ້ບອກ | | 2015-16 | 2016-17 | 2017-18 | 2018-19 | 2019-20 |
|---|---|---|---|---|---|---|
| ຈໍານວນຫ້ອງຮຽນ (ລັດ ແລະ ເອກະຊົນ) | | 5.178 | 5.586 | 5.925 | 6.037 | 5.994 |
| ຈໍານວນຫ້ອງຮຽນລັດ | | 5.027 | 5.413 | 5.734 | 5.840 | 5.772 |
| ຈໍານວນນັກຮຽນທັງໝົດ (ລັດ ແລະ ເອກະຊົນ) | | 204.304 | 218.035 | 223.307 | 216.994 | 205.574 |
| ຈໍານວນນັກຮຽນລັດ | | 199.664 | 213.004 | 217.909 | 211.686 | 199.821 |
| ອັດຕາເລື່ອນຊັ້ນຈາກ ມ 4 ຫາ ມ 5 (%) | | 91.3 | 86.0 | 81.7 | 79.4 | 74.9 |
| ອັດຕາເຂົ້າຮຽນລວມ (%) | | 47.8 | 51,4 | 53,3 | 54,8 | 54.8 |
| ອັດຕາເຂົ້າຮຽນລວມໃໝ່ ມ.7 (%) | | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | 44,9 | 52,0 | 52,1 |
| | ຍິງ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | 43,1 | 49,4 | 49,2 |
| | ຊາຍ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | 46,6 | 54,5 | 54,9 |
| GPI ອັດຕາເຂົ້າຮຽນລວມໃໝ່ ມ.7 | | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | 0,93 | 0,90 | 0,90 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

**ຕາຕະລາງ 17: ຄວາມຄືບໜ້າຂອງຕົວຊີ້ບອກ ທາງດ້ານປະສິດທິພາບພາຍໃນ ໃນຊັ້ນມັດທະຍົມສຶກສາຕອນປາຍ ປີ 2016-2020**

| ຕົວຊີ້ບອກ | | 2015-16 | 2016-17 | 2017-18 | 2018-19 | 2019-20 |
|---|---|---|---|---|---|---|
| ອັດຕາປະລະໃນຊັ້ນ ມ.ປາຍ (%) | | 5,4 | 5,8 | 7,1 | 8,0 | 8,8 |
| | ຍິງ | 5,3 | 5,7 | 7,0 | 7,7 | 8,7 |
| | ຊາຍ | 5,6 | 5,8 | 7,1 | 8,3 | 8,8 |
| ດັດຊະນີຄວາມສະເໝີພາບຍິງ-ຊາຍ ອັດຕາປະລະໃນຊັ້ນ ມ. ປາຍ | | 0,94 | 0,98 | 0,98 | 0,93 | 0,99 |
| ອັດຕາຄ້າງຫ້ອງໃນຊັ້ນ ມ.ປາຍ (%) | | 0,7 | 0,6 | 0,7 | 0,6 | 0,6 |
| ອັດຕາລອດເຫຼືອ ແຕ່ ມ.1 ຮອດ ມ.7 (%) | | 87,5 | 86,6 | 83,1 | 81,0 | 78,7 |
| ອັດຕາຈົບຊັ້ນຕາມກະແສນັກຮຽນ (%) | | 85,2 | 84,3 | 81,0 | 78,3 | 76,1 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

### 1.2. ສິ່ງທ້າທາຍ

ລາຍລະອຽດຂອງສິ່ງທ້າທາຍ ແມ່ນໄດ້ລະບຸໄວ້ໃນພາກທີ 1 (ຂໍ້ 2 ແລະ 3). ສິ່ງທ້າທາຍຫຼັກສໍາລັບຊັ້ນມັດທະຍົມຕອນປາຍ ແມ່ນຄວາມຕ້ອງການງົບປະມານເພີ່ມເຕີມສໍາລັບກໍ່ສ້າງພື້ນຖານໂຄງລ່າງ, ການຂາດເຂີນພະນັກງານທີ່ມີຄຸນນະພາບສູງ ແລະ ຂາດຄູສອນວິຊາຄະນິດສາດ, ວິຊາວິທະຍາສາດ, ໄອທີ ແລະ ພາສາຕ່າງປະເທດ ພ້ອມທັງຂາດຫ້ອງອ່ານ/ຫ້ອງສະໝຸດ ສໍາລັບການຄົ້ນຄວ້າຂອງນັກຮຽນ ແລະ ຄູ. ຍັງມີຄວາມບໍ່ສະເໝີພາບລະຫວ່າງຍິງຊາຍ ໃນການເຂົ້າຮຽນໃນຊັ້ນ ມ.7, ນີ້ບໍ່ແມ່ນຍ້ອນການປະລະການຮຽນຂອງນັກຮຽນ ເພາະວ່າດັດຊະນີຄວາມສະເໝີ ພາບໃນການປະລະການຮຽນແມ່ນເກືອບເທົ່າທຽມກັນ ແລະ ແຕ່ແມ່ນຍ້ອນລະດັບຄວາມແຕກຕ່າງໃນການເຂົ້າຮຽນໃນຊັ້ນມັດທະຍົມຕອນປາຍ. ສ່ວນໜຶ່ງອາດແມ່ນຍ້ອນໂຮງຮຽນຢູ່ຫ່າງໄກຈາກບ້ານ ແລະ ການແຕ່ງງານໄວກ່ອນອາຍຸ.

## 2. ແຜນພັດທະນາ 2021-2025

### 2.1. ຈຸດປະສົງ

1) ເພື່ອເສີມຂະຫຍາຍຜົນການຮຽນ ແລະ ຫຼຸດຜ່ອນຄວາມແຕກໂຕນກັນໃນການພັດທະນາການສຶກສາ ໂດຍຜ່ານການຄຸ້ມຄອງຊັບພະຍາກອນ ທີ່ມີປະສິດທິພາບ ແລະ ປະສິດທິຜົນ ໂດຍເນັ້ນໃສ່ການປັບປຸງຄຸນນະພາບການສຶກສາໃນ 40 ເມືອງດ້ອຍໂອກາດຕາມການກໍານົດຂອງກະຊວງສຶກສາທິການ ແລະ ກິລາ.

   ຈະມີການທົບທວນຫຼັກສູດຊັ້ນ ມ.ປາຍ ເພື່ອສຶກສາຄວາມເປັນໄປໄດ້ ໃນການຈັດຕັ້ງປະຕິບັດຫຼັກສູດແບບຄວບຄູ່ ຄື: ຫຼັກສູດນຶ່ງແມ່ນ ສາຍວິຊາວິດທະຍາສາດທໍາມະຊາດ ແລະ ອີກຫຼັກສູດນຶ່ງແມ່ນ ສາຍວິທະຍາສາດສັງຄົມ. ດັ່ງນັ້ນ, ຈະຕ້ອງໄດ້ຮັບການພັດທະນາ ແຜນງົບປະມານເພື່ອໃຫ້ບູລິມະສິດການຂະຫຍາຍການສຶກສາຊັ້ນ ມ.ປາຍ ໃນ 40 ເມືອງບູລິມະສິດ.

2) ເພື່ອສະໜອງການສຶກສາຫຼັງການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ ເພື່ອປະກອບສ່ວນເຂົ້າ ແລະ ໃຫ້ການສະໜັບສະໜູນບູລິມະສິດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX.

   ການແຍກຫຼັກສູດ ຫຼັງການສຶກສາຂັ້ນພື້ນຖານອອກເປັນສອງສາຍ ຈະເຮັດໃຫ້ນັກຮຽນເອົາໃຈໃສ່ລົງເລິກຫຼາຍຂຶ້ນໃນການຮຽນ ທີ່ມີຈໍານວນວິຊາຮຽນໜ້ອຍລົງ ຊຶ່ງນໍາໄປສູ່ການມີຄວາມຮູ້ໃນສາຍວິຊາຫຼາຍຂຶ້ນ.

### 2.2. ຄາດໝາຍ

ຂໍ້ມູນປີຖານ ແລະ ຄາດໝາຍ ສໍາລັບຕົວຊີ້ບອກທີ່ສໍາຄັນໄດ້ສະໜອງໄວ້ໃນພາກ I, ຂໍ້ 8.5 (ຕາຕະລາງຕິດຕາມ ແລະ ປະເມີນຜົນ). ຕົວຊີ້ບອກຫຼັກ ແລະ ຄາດໝາຍ 2025 ສໍາລັບຂະແໜງຍ່ອຍນີ້ ແມ່ນ:

1) ອັດຕາເລື່ອນຊັ້ນ ຈາກ ມ.4 ຂຶ້ນ ມ.5: 78%;
2) ອັດຕາລອດເຫຼືອຂອງກະແສນັກຮຽນຊັ້ນ ມ.4 ຮອດ ມ.7 ແມ່ນ: 80%;
3) ອັດຕາເຂົ້າຮຽນລວມໃໝ່ ມ. 7: 60%;
4) ດັດຊະນີຄວາມສະເໝີພາບຍິງ-ຊາຍ ອັດຕາເຂົ້າຮຽນລວມໃໝ່ ມ.7 ບັນລຸ 0,97-1,03;
5) ຫຼັກສູດສາມັນວິຊາຊີບແບບປະສົມໄດ້ຮັບການຈັດຕັ້ງປະຕິບັດໃນໂຮງຮຽນກິນນອນຊົນເຜົ່າ 11 ແຫ່ງ;
6) ຈໍານວນເມືອງທີ່ດ້ອຍໂອກາດທີ່ມີອັດຕາເລື່ອນຊັ້ນຈາກ ມ.4 ຫາ ມ.5 ສູງກວ່າ 70% ໃຫ້ໄດ້ 30 ເມືອງ;
7) ແຕ່ລະແຂວງມີໂຮງຮຽນມັດທະຍົມຕົວແບບ 1 ແຫ່ງ.

### 2.3. ຜົນໄດ້ຮັບລະດັບສູງ

**ໝາຍເຫດ**: ສໍາລັບແຕ່ລະຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ, ຈະມີການອ້າງອີງເປັນວົງເລັບ ຫຼັງຈາກ ສໍານວນທີ່ກ່າວເຖິງພາກທີ I ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025. ຊຶ່ງຈະເຮັດໃຫ້ຜູ້ ອ່ານສາມາດ ນໍາໃຊ້ແຜນຂອງຂະແໜງການຍ່ອຍເປັນແຜນສະເພາະ ແຕ່ສາມາດອ້າງອີງເຖິງນະໂຍບາຍທີ່ກ່ຽວ ຂ້ອງ ດັ່ງທີ່ໄດ້ລະບຸໄວ້ໃນພາກທີ I. ແຜນຂອງຂະແໜງການຍ່ອຍ ບໍ່ຈໍາເປັນຕ້ອງແກ້ໄຂທຸກໆຜົນໄດ້ຮັບລະດັບກາງ ຂອງ ຜົນໄດ້ຮັບລະດັບສູງ. ບາງຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ ໄດ້ຖືກດັດແກ້ເພື່ອສະແດງໃຫ້ເຫັນຈຸດ ສຸມຂອງຂະແໜງຍ່ອຍ.

### 2.3.1. ຈໍານວນນັກຮຽນທີ່ຈົບຊັ້ນມັດທະຍົມຕອນປາຍມີຜົນໄດ້ຮັບດ້ານການຮຽນຮູ້ທີ່ດີຂຶ້ນ, ໂດຍສະເພາະທັກສະຊີວິດ, ທັກສະດ້ານໄອຊີທີ ແລະ ທັກສະດ້ານວິຊາຊີບຂັ້ນພື້ນຖານ, ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ (ພາກທີ I, ຜົນໄດ້ຮັບລະດັບສູງທີ 1)

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ສໍາລັບຫຼັກການ ແລະ ເຫດຜົນຕ່າງໆ. ຜົນໄດ້ຮັບການຮຽນຂອງນັກຮຽນມັດທະຍົມຕອນປາຍ ຍັງຕໍ່າ ແລະ ອັດຕາການຈົບຊັ້ນຕາມກະແສນັກຮຽນແມ່ນຕໍ່າກວ່າຄວາມຕ້ອງການ ທຽບໃສ່ການລົງທຶນໃສ່ນັກຮຽນ ເພື່ອໃຫ້ບັນລຸຊັ້ນມັດທະຍົມຕອນປາຍ. ຫຼັກສູດມັດທະຍົມຕອນປາຍໃນປະຈຸບັນ ຮຽກຮ້ອງໃຫ້ນັກຮຽນຕ້ອງຮຽນ ຄົບ 15 ວິຊາ. ການແຍກຫຼັກສູດຊັ້ນມັດທະຍົມຕອນປາຍອອກເປັນສອງສາຍ (ວິທະຍາສາດສັງຄົມ ແລະ ທໍາມະຊາດ) ຈະຊ່ວຍໃຫ້ນັກຮຽນມີໂອກາດໄດ້ຮຽນຫຼາຍວິຊາທີ່ຕົນມັກຫຼາຍຂຶ້ນ ແລະ ລົງເລິກໃນວິຊາດັ່ງກ່າວຫຼາຍກວ່າ ເກົ່າ.

**ຜົນໄດ້ຮັບລະດັບກາງ 1: ອັດຕາເຂົ້າຮຽນໃໝ່ ແລະ ອັດຕາເລື່ອນຊັ້ນໃນຊັ້ນມັດທະຍົມຕອນປາຍເພີ່ມຂຶ້ນ ເຮັດໃຫ້ ອັດຕາການຈົບຊັ້ນເພີ່ມຂຶ້ນ. (ພາກທີ I , ຜົນໄດ້ຮັບລະດັບສູງທີ 1 ຜົນຮັບລະດັບກາງທີ 1.3)**

ຍ້ອນອັດຕາການປະລະການຮຽນ, ນັກຮຽນຊາຍມີແນວໂນ້ມທີ່ຈະອອກໂຮງຮຽນຫຼາຍກ່ວານັກຮຽນຍິງໂດຍ ສະເພາະໃນເຂດພາກເໜືອ ຍ້ອນຢູ່ເຂດດັ່ງກ່າວມີຄວາມຕ້ອງການແຮງງານທີ່ບໍ່ມີສີມືສູງ.

**<u>ຍຸດທະສາດ 1:</u>** ສົ່ງເສີມໃຫ້ນັກຮຽນຈົບຊັ້ນ ມ.ຕົ້ນ ທີ່ມີຜົນການຮຽນດີ ສືບຕໍ່ຮຽນໃນຊັ້ນມັດທະຍົມປາຍ.

**<u>ວຽກຈຸດສຸມ</u>**

- ພັດທະນານິຕິກໍາກ່ຽວກັບການສົ່ງເສີມນັກຮຽນຈົບມັດທະຍົມຕອນຕົ້ນໄປຮຽນຕໍ່ໃນສາຍຕ່າງໆ;
- ສະໜອງຫໍພັກທີ່ປອດໄພ ແລະ ຫ້ອງນໍ້າທີ່ມີຄຸນນະພາບ, ສະໜອງສິ່ງຈູງໃຈ ແລະ ສິ່ງອໍານວຍຄວາມສະດວກ ໃຫ້ແກ່ນັກຮຽນຈາກເຂດຫ່າງໄກສອກຫຼີກ, ເດັກທຸກຍາກຂາດເຂີນ ແລະ ເດັກທີ່ດ້ອຍໂອກາດ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ສະມາຄົມພໍ່ແມ່ນັກຮຽນ ເພື່ອສົ່ງເສີມ ໃຫ້ລູກຫຼານ ສືບຕໍ່ຮຽນຈົນຈົບມັດທະຍົມຕອນປາຍ.

**<u>ຍຸດທະສາດທີ 2:</u>** ຈັດຕັ້ງປະຕິບັດບັນດານະໂຍບາຍຕ່າງໆທີ່ມີ ເພື່ອຫຼຸດອັດຕາການປະລະການຮຽນໃນຊັ້ນ ມັດທະຍົມຕອນປາຍ

**<u>ວຽກຈຸດສຸມ</u>**

- ລົບລ້າງຄ່າທໍານຽມສໍາລັບນັກຮຽນທີ່ມີແນວໂນ້ມທີ່ຈະອອກຮຽນຍ້ອນຄອບຄົວທຸກຍາກ;
- ກໍ່ສ້າງຫໍພັກ ແລະ ສະໜອງສິ່ງຈູງໃຈ ແລະ ສິ່ງອໍານວຍຄວາມສະດວກໃຫ້ແກ່ນັກຮຽນທີ່ມາຈາກເຂດຫ່າງໄກ ສອກຫຼີກ;
- ໃຫ້ທຶນການສຶກສາແກ່ນັກຮຽນມັດທະຍົມຕອນປາຍທີ່ມາຈາກຄອບຄົວທີ່ມີລາຍໄດ້ຕໍ່າ;

- ໃຫ້ການຊ່ວຍເຫຼືອນັກຮຽນທີ່ດ້ອຍໂອກາດ ແລະ ມີຜົນການຮຽນຕໍ່າ;
- ສະໜອງປຶ້ມແບບຮຽນພຽງພໍໃຫ້ນັກຮຽນ.

**<u>ຍຸດທະສາດທີ 3:</u>** ສ້າງແຜນປະຕິບັດງານ ເພື່ອໃຫ້ການຂະຫຍາຍການສຶກສາຊັ້ນມັດທະຍົມຕອນປາຍທີ່ມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ.

ຢາກມີຜົນສໍາເລັດອັນເຕັມສ່ວນສໍາລັບຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ຍຸດທະສາດນີ້ໂດຍສະເພາະ.

**<u>ວຽກຈຸດສຸມ</u>**

- ສຶກສາຄວາມເປັນໄປໄດ້ໃນການຂະຫຍາຍ ມັດທະຍົມສົມບູນ ແລະ ມັດທະຍົມຕອນປາຍ ເພື່ອຮັບປະກັນຄຸນນະພາບ ແລະ ປະສິດທິພາບໃນການບໍລິການ.

### ຜົນໄດ້ຮັບລະດັບກາງທີ 2: ຜົນການຮຽນຂອງນັກຮຽນ ມ.6 ໄດ້ຮັບການປັບປຸງດີຂຶ້ນ (ພາກທີ I ຜົນໄດ້ຮັບລະດັບສູງ 1, ຜົນຮັບລະດັບກາງທີ 1.2)

ການປະເມີນຜົນການຮຽນຮູ້ໃນປີສຸດທ້າຍຂອງມັດທະຍົມຕອນປາຍແມ່ນຊ້າເກີນໄປ ສໍາລັບການຊ່ວຍເຫຼືອແກ້ໄຂ ຍ້ອນວ່າມີນັກຮຽນຈໍານວນໜ້ອຍທີ່ສາມາດສອບເສັງຈົບ ມ.7 ໄດ້. ສະນັ້ນ, ຈຶ່ງສະເໜີໃຫ້ດໍາເນີນການປະເມີນຜົນການຮຽນຢູ່ ມ.6 ເມື່ອນັກຮຽນສ່ວນໃຫຍ່ຈະມີອາຍຸປະມານ 16 ປີ.

**<u>ຍຸດທະສາດທີ 1:</u>** ສ້າງແຜນເພື່ອຕິດຕາມຜົນການຮຽນຂອງນັກຮຽນ ມ.6.

ຢາກມີຜົນສໍາເລັດອັນເຕັມສ່ວນສໍາລັບຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ / ຫຼື ງົບປະມານ ODA ຕ້ອງສຸມໃສ່ຍຸດທະສາດນີ້ໂດຍສະເພາະ.

**<u>ວຽກຈຸດສຸມ</u>**

- ພັດທະນາເຄື່ອງມືປະເມີນຜົນສໍາລັບວິທະຍາສາດທໍາມະຊາດ, ພາສາລາວ ແລະ ຄະນິດສາດ ທີ່ເໝາະສົມສໍາລັບນັກຮຽນ ມ.6;
- ເກັບກໍາຂໍ້ມູນກ່ຽວກັບໂຮງຮຽນທີ່ປະຕິບັດໄດ້ດີ ແລະ ບໍ່ໄດ້ດີ (ຢູ່ເຂດຫ່າງໄກສອກຫຼີກ, ຊົນເຜົ່າ) ເພື່ອຕິດຕາມ ແລະ ໃຫ້ການສະໜັບສະໜູນຢ່າງໜ້ອຍປີລະຄັ້ງ;
- ຈັດຕັ້ງການສອບເສັງນັກຮຽນເກັ່ງ ແລະ ຕິດຕາມການສອບເສັງຈົບຊັ້ນມັດທະຍົມຕອນປາຍ (ມ.7) ທົ່ວປະເທດ.

### ຜົນໄດ້ຮັບລະດັບກາງທີ 3: ຄວາມແຕກໂຕນທາງດ້ານຜົນການຮຽນ ລະຫວ່າງ ເຂດທີ່ດ້ອຍໂອກາດ ແລະ ເຂດທີ່ມີໂອກາດດີກວ່າຫຼຸດຜ່ອນລົງ. (ພາກທີ I ຜົນໄດ້ຮັບລະດັບສູງທີ 1, ຜົນຮັບລະດັບກາງທີ 1.5)

**<u>ຍຸດທະສາດທີ 1:</u>** ສະໜອງທຶນການສຶກສາໃຫ້ນັກຮຽນທີ່ມາຈາກ 40 ຕົວເມືອງບູລິມະສິດ

ຢາກມີຜົນສໍາເລັດອັນເຕັມສ່ວນສໍາລັບຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ຍຸດທະສາດນີ້ໂດຍສະເພາະ.

**<u>ວຽກຈຸດສຸມ:</u>**

- ເກັບກໍາຂໍ້ມູນກ່ຽວກັບນັກຮຽນຈາກຄອບຄົວທຸກຍາກ;
- ສ້າງແຜນສໍາລັບສະໜອງທຶນການສຶກສາທີ່ເປັນບູລິມະສິດ ໃຫ້ແກ່ນັກຮຽນຈາກ 40 ເມືອງບູລິມະສິດ;
- ສະໜອງທຶນການສຶກສາໃຫ້ນັກຮຽນທີ່ມາຈາກ 40 ຕົວເມືອງບູລິມະສິດ.

**<u>ຍຸດທະສາດທີ 2</u>**: ສ້າງຄວາມເຂັ້ມແຂງວຽກງານນິເທດ.

**<u>ວຽກຈຸດສຸມ:</u>**

- ນໍາໃຊ້ກົນໄກຂອງໜ່ວຍງານວິຊາການຂະແໜງການສຶກສາ ເພື່ອສົ່ງເສີມໃຫ້ຄູ່ຮ່ວມພັດທະນາສຸມການຊ່ວຍເຫຼືອດ້ານວິຊາການ ກໍຄື ດ້ານການເງິນ ໃຫ້ແກ່ 40 ເມືອງທີ່ດ້ອຍໂອກາດ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ຄູສຶກສານິເທດຂັ້ນເມືອງ ໃຫ້ໄດ້ເຄື່ອນໄຫວຢ່າງເປັນປົກກະຕິ;
- ສ້າງແຜນຄວາມຕ້ອງການຄູສຶກສານິເທດໃຫ້ພຽງພໍ;
- ສະໜອງສິ່ງອໍານວຍຄວາມສະດວກໃນການປະຕິບັດວຽກງານນິເທດສຶກສາ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ຄູສຶກສານິເທດ ພາຍໃນກຸ່ມໂຮງຮຽນ;

**ຜົນໄດ້ຮັບລະດັບກາງທີ 4: ຂະຫຍາຍການຮຽນ-ການສອນຫ້ອງຮຽນສາມັນວິຊາຊີບ ເພື່ອພັດທະນາສີມືແຮງງານໃຫ້ແກ່ນັກຮຽນທີ່ຈະຈົບຊັ້ນມັດທະຍົມສຶກສາຕອນປາຍ. (ພາກທີ I ຜົນໄດ້ຮັບລະ ດັບສູງທີ 1, ຜົນຮັບລະດັບກາງທີ 1.4)**

ການທົດລອງການສອນສາມັນທົ່ວໄປ (60%) ແລະ ວິຊາຊີບ (40%) ໃນຊັ້ນມັດທະຍົມຕອນປາຍ ໄດ້ຖືກຈັດຕັ້ງປະຕິບັດຢູ່ໃນໂຮງຮຽນກິນນອນຊົນເຜົ່າຂອງ 3 ແຂວງ ຊຶ່ງເຫັນວ່າມີຜົນສໍາເລັດທີ່ດີ. ວິຊາຊີບແມ່ນສອນຢູ່ສະຖາບັນອາຊີວະສຶກສາ ດ້ວຍຫຼັກສູດທີ່ແຕກຕ່າງກັບຫຼັກສູດອາຊີວະສຶກສາ ແລະ ໄດ້ນໍາໃຊ້ຄູສອນມັດທະຍົມທີ່ໄດ້ຮັບການຝຶກອົບຮົມເປັນພິເສດ.

**<u>ຍຸດທະສາດທີ 1:</u>** ສະໜອງຫຼັກສູດສາມັນວິຊາຊີບຢູ່ໂຮງຮຽນກິນນອນຊົນເຜົ່າ ໂດຍນໍາໃຊ້ສິ່ງອໍານວຍຄວາມສະດວກຂອງອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບທີ່ມີຢູ່.

ຢາກມີຜົນສໍາເລັດອັນເຕັມສ່ວນສໍາລັບຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ / ຫຼື ງົບປະມານ ODA ຕ້ອງສຸມໃສ່ຍຸດທະສາດນີ້ໂດຍສະເພາະ.

**<u>ວຽກຈຸດສຸມ:</u>**

- ຂະຫຍາຍຫຼັກສູດສາມັນວິຊາຊີບຢູ່ບັນດາໂຮງຮຽນສາມັນກິນນອນຊົນເຜົ່າບ່ອນທີ່ມີເງື່ອນໄຂ ແລະ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງແຕ່ລະເຂດ;
- ພັດທະນາ ແລະ ປັບປຸງຫຼັກສູດສາມັນວິາຊີບ ຕາມຄວາມຕ້ອງການເພື່ອຂະຫຍາຍຫ້ອງຮຽນສາມັນວິຊາຊີບໃນແຕ່ລະທ້ອງຖິ່ນ ແລະ ແຂວງ;
- ຝຶກອົບຮົມໃຫ້ແກ່ຄູສອນ ຫ້ອງຮຽນສາມັນວິຊາຊີບ ແລະ ຕິດຕາມການສິດສອນຂອງຄູ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອໃຫ້ສາມາດຊຸກຍູ້ຜູ້ປະກອບການ ແລະ ບັນດາສະຖາບັນຕ່າງໆໃນການຮັບນັກຮຽນລົງຝຶກງານ;
- ຕິດຕາມ, ກວດກາ ແລະ ປະເມີນ ໂຮງຮຽນທີ່ປະຕິບັດຫຼັກສູດສາມັນວິຊາຊີບ.

**<u>ຍຸດທະສາດທີ 2:</u>** ຂະຫຍາຍການສຶກສາສາມັນວິຊາຊີບ ຊັ້ນ ມ.ປາຍ.

ຢາກມີຜົນສໍາເລັດອັນຢ່າງເຕັມສ່ວນໃນການຈັດຕັ້ງປະຕິບັດຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດ ຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານ ODA ຕ້ອງສຸມໃສ່ຍຸດທະສາດດັ່ງກ່າວນີ້.

**<u>ວຽກຈຸດສຸມ</u>**

- ສຶກສາຄວາມເປັນໄປໄດ້ໃນການຂະຫຍາຍການສຶກສາສາມັນວິຊາຊີບ ຢູ່ ໂຮງຮຽນ ມ.ປາຍ;

- ສ້າງນິຕິກຳກ່ຽວກັບການຮ່ວມມືລະຫວ່າງໂຮງຮຽນສາມັນ ແລະ ສະຖານອາຊີວະສຶກສາ ເພື່ອນຳໃຊ້ສິ່ງອຳນວຍຄວາມສະດວກອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ສຳລັບຄູສອນ ຊັ້ນ ມ.ປາຍ ໂດຍພະນັກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ;
- ຕິດຕາມຄຸນນະພາບການສະໜອງຫຼັກສູດວິຊາຊີບໃຫ້ແກ່ນັກຮຽນ ມ.ປາຍ.

**2.3.2. ຈຳນວນຄູສອນ ແລະ ຜູ້ອຳນວຍການໂຮງຮຽນທີ່ມີຄວາມຮູ້ຄວາມສາມາດເພີ່ມຂຶ້ນ ເພື່ອຕອບສະໜອງ ໄດ້ກັບມາດຕະຖານການສິດສອນ ພ້ອມທັງຖືກນຳໃຊ້ເພື່ອເປັນບ່ອນອີງໃນການພັດທະນາວິຊາຊີບຂອງພວກເຂົາ ພ້ອມດ້ວຍມີການປະເມີນຜົນຢ່າງເປັນປົກກະຕິ. (ພາກທີ I, ຜົນໄດ້ຮັບທີ 2)**

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງຢູ່ພາກທີ I ຂອງແຜນ ສຳລັບເຫດຜົນຕ່າງໆ. ຖ້າຢາກໃຫ້ມີຄວາມເປັນໄປໄດ້ໃນການປະຕິຮູບການສຶກສາຊັ້ນມັດທະຍົມຕອນປາຍເປັນສອງສາຍ, ຈະຕ້ອງມີການປັບປຸງການສ້າງຄູ, ໂດຍສະເພາະຄວາມຮູ້ດ້ານເນື້ອໃນແລະທັກສະການສິດສອນຂອງຄູສອນຊັ້ນມັດທະຍົມຕອນປາຍ.

**ຜົນໄດ້ຮັບລະດັບກາງທີ 1: ຫຼັກສູດສ້າງຄູມັດທະຍົມຕອນປາຍຖືກປັບປຸງໃຫ້ສອດຄ່ອງກັບຫຼັກສູດໃໝ່ ຂອງສາຍສາມັນ. (ພາກທີ I ຜົນໄດ້ຮັບລະດັບສູງທີ 2, ຜົນຮັບລະດັບກາງທີ 2.2)**

ກົມສ້າງຄູມີໜ້າທີ່ຮັບຜິດຊອບປັບປຸງຫຼັກສູດການຝຶກອົບຮົມຄູກ່ອນປະຈຳການ, ໂດຍສົມທົບກັບກົມສາມັນ. ບູລິມະສິດສຳລັບມັດທະຍົມຕອນປາຍປະກອບມີດັ່ງນີ້:

**<u>ຍຸດທະສາດທີ 1:</u>** ປັບປຸງຄຸນນະພາບການຮຽນ-ການສອນ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ເງື່ອນໄຂໃນການເຂົ້າຮຽນໃນການສຶກສາຊັ້ນສູງ.

**ຜົນໄດ້ຮັບລະດັບກາງທີ 2: ມາດຕະຖານການສອນສຳລັບຊັ້ນມັດທະຍົມຕອນປາຍໄດ້ຮັບການພັດທະນາ ແລະ ຮັບຮອງເອົາ. (ພາກທີ I ຜົນໄດ້ຮັບລະດັບສູງທີ 2, ຜົນຮັບລະດັບກາງທີ 2.3 )**

ກົມສ້າງຄູມີໜ້າທີ່ຮັບຜິດຊອບປັບປຸງຫຼັກສູດການຝຶກອົບຮົມຄູກ່ອນປະຈຳການ, ໂດຍສົມທົບກັບກົມສາມັນ. ບູລິມະສິດສຳລັບມັດທະຍົມຕອນປາຍປະກອບມີດັ່ງນີ້:

**<u>ຍຸດທະສາດທີ 1:</u>** ພັດທະນາມາດຕະຖານການສອນຊັ້ນມັດທະຍົມຕອນປາຍ ທີ່ເໝາະສົມກັບສະພາບການຂອງລາວ , ເຊິ່ງສາມາດນຳໃຊ້ເປັນພື້ນຖານໃນການປະເມີນຜົນການສອນຂອງຄູ, ລວມທັງຈັນຍາບັນຂອງຄູ.

**ຜົນໄດ້ຮັບລະດັບກາງທີ 3: ເຄື່ອງມືປະເມີນຜົນການສອນຂອງຄູມັດທະຍົມຕອນປາຍໄດ້ຮັບການປັບປຸງ ເພື່ອໃຫ້ເຊື່ອມໂຍງກັບມາດຕະຖານການສອນ ແລະ ນຳໃຊ້ເປັນບ່ອນອີງໃນການພັດທະນາດ້ານວິຊາຊີບທີ່ຄູມີຄວາມຕ້ອງການ. (ພາກທີ I ຜົນໄດ້ຮັບລະດັບສູງທີ 2, ຜົນຮັບລະດັບກາງທີ 2.3)**

ກົມສ້າງຄູມີໜ້າທີ່ຮັບຜິດຊອບປັບປຸງຫຼັກສູດການຝຶກອົບຮົມຄູກ່ອນປະຈຳການ, ໂດຍສົມທົບກັບກົມສາມັນສຶກສາ. ບູລິມະສິດສຳລັບມັດທະຍົມຕອນປາຍປະກອບມີດັ່ງນີ້:

**<u>ຍຸດທະສາດທີ 1:</u>** ດຳເນີນການປະເມີນຄູທີ່ສອນວິຊາຊັ້ນມັດທະຍົມຕອນປາຍຢ່າງເປັນປະຈຳ.

**ຜົນໄດ້ຮັບລະດັບກາງທີ 4: ແຜນງານການຝຶກອົບຮົມຄູປະຈໍາການ ໃຫ້ບູລິມະສິດແກ່ຄູວິທະຍາສາດທໍາມະຊາດ, ພາສາລາວ, ຄະນິດສາດ ແລະ ພາສາອັງກິດ (ພາກທີ I ຜົນໄດ້ຮັບລະດັບສູງທີ 2, ຜົນຮັບລະດັບກາງທີ 2.2)**

ກົມສ້າງຄູມີໜ້າທີ່ຮັບຜິດຊອບປັບປຸງຫຼັກສູດການຝຶກອົບຮົມຄູປະຈໍາການ, ໂດຍສົມທົບກັບກົມສາມັນ. ບູລິມະສິດສໍາລັບມັດທະຍົມຕອນປາຍປະກອບມີດັ່ງນີ້:

<u>**ຍຸດທະສາດທີ 1:**</u> ທົບທວນແຜນງານການຝຶກອົບຮົມຄູສອນມັດທະຍົມຕອນປາຍ ໂດຍນໍາໃຊ້ການປະເມີນຜົນການສອນຂອງຄູ ແລະ ຂອບມາດຕະຖານຂອງຄູ.

**ຜົນໄດ້ຮັບລະດັບກາງທີ 5: ຂີດຄວາມສາມາດຂອງຜູ້ອໍານວຍການໂຮງຮຽນມັດທະຍົມຕອນປາຍໃນການບໍລິຫານໂຮງຮຽນ ມີຄວາມເຂັ້ມແຂງ ໂດຍຕິດພັນກັບໜ້າທີ່ການຄຸ້ມຄອງຫຼັກ (7 ໜ້າວຽກ). (ພາກທີ I ຜົນໄດ້ຮັບລະດັບສູງທີ 2, ຜົນຮັບລະດັບກາງທີ 2.5)**

ສະຖາບັນພັດທະນາການບໍລິຫານການສຶກສາຮ່ວມກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຮັບຜິດຊອບໃນການສ້າງຂີດຄວາມສາມາດຂອງຜູ້ອໍານວຍການໂຮງຮຽນ. ບູລິມະສິດສໍາລັບມັດທະຍົມຕອນປາຍປະກອບມີດັ່ງນີ້:

<u>**ຍຸດທະສາດທີ 1:**</u> ພັດທະນາມາດຕະຖານສໍາລັບຜູ້ອໍານວຍການໂຮງຮຽນມັດທະຍົມຕອນປາຍ.

### 2.3.3. ໂຮງຮຽນທຸກແຫ່ງມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດພຽງພໍ ເພື່ອເຮັດວຽກຢ່າງມີປະສິດທິຜົນ, ຄຽງຄູ່ກັບຄວາມສາມາດໃນການບໍລິຫານໂຮງຮຽນເພື່ອປັບປຸງຜົນການຮຽນ. (ພາກທີ I, ຜົນໄດ້ຮັບລະດັບສູງທີ 3)

- **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ສໍາລັບເຫດຜົນລະອຽດ. ຜູ້ອໍານວຍການໂຮງຮຽນແມ່ນບຸກຄົນສໍາຄັນໃນການສະໜອງການສຶກສາທີ່ມີຄຸນນະພາບໃນໂຮງຮຽນມັດທະຍົມຕອນປາຍ. ດັ່ງນັ້ນ, ຜູ້ອໍານວຍການໂຮງຮຽນຈຶ່ງມີຄວາມຈໍາເປັນຕ້ອງໄດ້ຮັບການສ້າງຄວາມເຂັ້ມແຂງ ໃນການຕິດຕາມການສິດສອນເພື່ອຮັບປະກັນດ້ານຄຸນນະພາບ.

**ຜົນໄດ້ຮັບລະດັບກາງທີ 1: ເງິນບໍລິຫານໂຮງຮຽນ (ສູດຄິດໄລ່ ແລະ ລາຍການໃຊ້ຈ່າຍທີ່ເໝາະສົມ) ແມ່ນຕອບສະໜອງໄດ້ກັບຄວາມຕ້ອງການໃນລະດັບໂຮງຮຽນ ເພື່ອຫຼຸດຜ່ອນຄວາມແຕກໂຕນກັນ (ພາກທີ I ຜົນໄດ້ຮັບລະດັບສູງທີ 3, ຜົນຮັບລະດັບກາງ 3.3)**

ກົມການເງິນ ເປັນຜູ້ຮັບຄວາມຮັບຜິດຊອບຕໍ່ການຊ່ວຍເຫຼືອລ້າຂອງໂຮງຮຽນແມ່ນຢູ່ພາຍໃຕ້ກົມການເງິນ. ບູລິມະສິດ ສໍາລັບມັດທະຍົມຕອນປາຍລວມມີດັ່ງນີ້:

<u>**ຍຸດທະສາດທີ 1:**</u> ຕິດຕາມການໃຊ້ຈ່າຍຂອງເງິນບໍລິຫານໂຮງຮຽນ ເພື່ອຮັບປະກັນຄວາມສອດຄ່ອງກັບບັນດາບູລິມະສິດທີ່ກໍານົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025.

**ຜົນໄດ້ຮັບລະດັບກາງທີ 2: ການຈັດສັນຄູແມ່ນຕອບສະໜອງຕໍ່ຄວາມຕ້ອງການໃນລະດັບໂຮງ ຮຽນ ເພື່ອຫຼຸດຜ່ອນຄວາມແຕກໂຕນກັນ . (ພາກທີ I ຜົນໄດ້ຮັບລະດັບສູງທີ 3, ຜົນຮັບລະດັບກາງ 3.4)**

ການຈັດສັນຄູແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຄະນະກໍາມະການຈັດສັນຄູ ໂດຍມີການສະໜັບສະໜູນຈາກກົມຈັດຕັ້ງ ແລະ ພະນັກງານ, ສຶກສາແຂວງ ແລະ ສຶກສາເມືອງ. ບູລິມະສິດສໍາລັບຂະແໜງການຍ່ອຍມັດທະຍົມຕອນປາຍປະກອບມີດັ່ງນີ້:

**<u>ຍຸດທະສາດທີ 1:</u>** ຕິດຕາມການຈັດຕັ້ງປະຕິບັດຄູ່ມືໃນການຈັດສັນຄູສະບັບປັບປຸງໃໝ່ ເພື່ອປະເມີນເຖິງຄວາມສອດຄ່ອງ ໂດຍນໍາໃຊ້ຂໍ້ມູນທີ່ຖືກຕ້ອງ, ປະເມີນເຖິງຜົນກະທົບ ແລະ ປະສິດທິຜົນ.

### 2.3.4. ຄຸນນະພາບ ແລະ ຈໍານວນນັກຮຽນທີ່ຈົບຈາກການສຶກສາຂັ້ນພື້ນຖານ ແລະ ຜູ້ທີ່ຈົບການສຶກສາຫຼັງຂັ້ນພື້ນຖານທີ່ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ ສອດຄ່ອງກັບຄວາມຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX ແລະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (ພາກທີ I, ຜົນໄດ້ຮັບລະດັບສູງທີ 5)

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ສໍາລັບລາຍລະອຽດຂອງຫຼັກການ ແລະ ເຫດຜົນ. ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ IX ຮຽກຮ້ອງໃຫ້ນັກຮຽນຈົບວິຊາວິທະຍາສາດທໍາມະຊາດ ຈາກຊັ້ນມັດທະຍົມຕອນປາຍມີຄຸນນະພາບ. ການແຍກຫຼັກສູດຊັ້ນມັດທະຍົມຕອນປາຍອອກເປັນສອງສາຍ ຈະຊ່ວຍປັບປຸງຜົນການຮຽນຂອງນັກຮຽນໂດຍລວມ ເພາະວ່ານັກຮຽນຈະສາມາດສຸມໃສ່ໃນວິຊາທີ່ພວກເຮົາມີຄວາມຖະໜັດ. ເຖິງຢ່າງໃດກໍ່ຕາມ, ຄູສອນຈໍາເປັນຕ້ອງມີຄວາມຮູ້ດ້ານວິຊາການທີ່ເລິກເຊິ່ງ. ດ້ວຍເຫດນີ້, ຕ້ອງຮັບປະກັນວ່າຄູທີ່ໄດ້ຮັບການແຕ່ງຕັ້ງໃຫ້ສິດສອນວິຊາຕ່າງໆນັ້ນ ຕ້ອງແມ່ນວິຊາຫຼັກຂອງເຂົາເຈົ້າ.

**ຜົນໄດ້ຮັບລະດັບກາງທີ 1: ຄຸນນະພາບຂອງການຮຽນ-ການສອນ ໄດ້ຮັບການປັບປຸງເພື່ອສອດຄ່ອງຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ສອດຄ່ອງກັບມາດຖານການເຂົ້າຮຽນໃນສາຍການສຶກສາຊັ້ນສູງ. (ພາກທີ I , ຜົນໄດ້ຮັບລະດັບສູງທີ 5, ຜົນຮັບລະດັບກາງ 5.1)**

ກົມສ້າງຄູມີໜ້າທີ່ຮັບຜິດຊອບປັບປຸງຫຼັກສູດສ້າງຄູ ໂດຍສົມທົບກັບກົມສາມັນ. ບູລິມະສິດສໍາລັບມັດທະຍົມຕອນປາຍປະກອບມີ:

**<u>ຍຸດທະສາດທີ 1:</u>** ເຮັດການສຶກສາຄວາມເປັນໄປໄດ້ໃນການແຍກຫຼັກສູດມັດທະຍົມຕອນປາຍອອກເປັນສອງສາຍ: ສາຍວິທະຍາສາດທໍາມະຊາດ ແລະ ວິທະຍາສາດສັງຄົມ.

**<u>ຍຸດທະສາດທີ 2:</u>** ສົມທົບກັບກົມສ້າງຄູໃນການຍົກລະດັບຄູທີ່ບໍ່ໄດ້ມາດຖານ ແລະ ຄູປະຈໍາການທີ່ບໍ່ເຄີຍໄດ້ຮັບການຝຶກອົບຮົມ.

**<u>ຍຸດທະສາດທີ 3:</u>** ນໍາໃຊ້ໄອຊີທີ ເຂົ້າໃນການຮຽນ-ການສອນ.

**<u>ຍຸດທະສາດທີ 4</u>**: ສົມທົບກັບກົມສ້າງຄູສ້າງຄວາມເຂັ້ມແຂງດ້ານການນິເທດພາຍໃນ ແລະ ພາຍນອກ.

**ຜົນໄດ້ຮັບລະດັບກາງທີ 2: ມີໂຮງຮຽນມັດທະຍົມຕົວແບບໃນແຕ່ລະແຂວງ. (ພາກທີ I, ຜົນໄດ້ຮັບລະດັບສູງທີ 5, ຜົນຮັບລະດັບກາງ 5.1)**

**<u>ຍຸດທະສາດທີ 1:</u>** ສ້າງຄວາມເຂັ້ມແຂງໃຫ້ແກ່ໂຮງຮຽນມັດທະຍົມສົມບູນ ເພື່ອສ້າງເງື່ອນໄຂໃຫ້ກາຍເປັນໂຮງ ຮຽນຕົວແບບ.

ຢາກມີຜົນສໍາເລັດອັນຢ່າງເຕັມສ່ວນໃນການຈັດຕັ້ງປະຕິບັດຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ / ຫຼື ງົບປະມານ ODA ຕ້ອງສຸມໃສ່ຍຸດທະສາດດັ່ງກ່າວນີ້.

**<u>ວຽກຈຸດສຸມ:</u>**

- ສ້າງມາດຕະຖານ ໃນການສ້າງໂຮງຮຽນຕົວແບບ;

- ສຳຫຼວດຄວາມພ້ອມຂອງໂຮງຮຽນເປົ້າໝາຍ ທີ່ຈະສ້າງເປັນໂຮງຮຽນຕົວແບບ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ໂຮງຮຽນຕົວແບບ ໃນດ້ານທີ່ຍັງບໍ່ມີຄວາມພ້ອມ;
- ປັບປຸງ ແລະ ສ້າງນິຕິກຳທີ່ກ່ຽວຂ້ອງ ເພື່ອໃຫ້ສູນໄອຊີທີຂອງແຂວງ ສາມາດລວມຕົວກັນເຂົ້າກັບໂຮງຮຽນມັດທະຍົມສົມບູນ ທີ່ສູນດັ່ງກ່າວຕັ້ງຢູ່ ເພື່ອສ້າງເປັນໂຮງຮຽນຕົວແບບຂອງແຂວງ;
- ສະໜອງພື້ນຖານໂຄງລ່າງ ແລະ ອຸປະກອນທີ່ຈຳເປັນໃຫ້ແກ່ໂຮງຮຽນຕົວແບບ;

# V. ຂະແໜງການຍ່ອຍການສຶກສານອກໂຮງຮຽນ

## 1. ພາກສະເໜີ

### 1.1. ຜົນສຳເລັດ

ພາກທີ I ຂອງແຜນ 2021-2025 (ຂໍ້ທີ 2 ແລະ 3) ໄດ້ໃຫ້ລາຍລະອຽດກ່ຽວກັບຜົນສຳເລັດຂອງການສຶກສານອກໂຮງຮຽນ. ຜົນສຳເລັດທີ່ສຳຄັນປະກອບມີດັ່ງນີ້:

- ເພີ່ມອັດຕາການຮູ້ໜັງສືຂອງປະຊາກອນໃນເກນອາຍຸເຂົ້າຮຽນ 6-14 ປີ ແລະ 15-40 ປີ ທີ່ພາດໂອກາດທາງການສຶກສາໃນທຸກຮູບແບບ ເພື່ອເຮັດໃຫ້ກຸ່ມເປົ້າໝາຍໄດ້ເຂົ້າເຖິງການສຶກສາທີ່ມີຄຸນນະພາບ ແລະ ເທົ່າທຽມກັນ. ໂດຍໄດ້ຈັດການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ໃຫ້ກຸ່ມເປົ້າໝາຍອາຍຸ 15-40 ປີ ໄດ້ຈຳນວນ 30.195 ຄົນ ທຽບໃສ່ແຜນການທີ່ວາງໄວ້ 30.000 ຄົນ ແລະ ຈັດການຮຽນ-ການສອນຈົບຊັ້ນປະຖົມບຳລຸງ ໃຫ້ກຸ່ມເປົ້າໝາຍອາຍຸ 15-40 ປີ ໄດ້ຈຳນວນ 43.414 ຄົນ ທຽບໃສ່ແຜນການທີ່ວາງໄວ້ 20.000 ຄົນ; ສ່ວນການບຳລຸງຍົກລະດັບການສຶກສາຈົບຊັ້ນປະຖົມບຳລຸງ ໃຫ້ກຸ່ມເປົ້າໝາຍອາຍຸ 6-14 ປີ ໄດ້ຈຳນວນ 11.397 ຄົນ ທຽບໃສ່ຄາດໝາຍທີ່ວາງໄວ້ 15.000 ຄົນ.
- ການບຳລຸງຍົກລະດັບຊັ້ນມັດທະຍົມສຶກສາຕອນຕົ້ນ ແລະ ຕອນປາຍ ແມ່ນຖືກຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງໃຫ້ກັບກຸ່ມເປົ້າໝາຍອາຍຸ 15-35 ປີ ດ້ວຍຮູບແບບຈັດການຮຽນ-ການສອນບຳລຸງ ຢູ່ຕາມກຸ່ມບ້ານ ຫຼື ເຂດຊຸມຊົນທີ່ມີເງື່ອນໄຂສະດວກ. ມີຜູ້ຮຽນທັງໝົດ 182.820 ຄົນ ທຽບໃສ່ແຜນການວາງໄວ້ບັນລຸໄດ້ 61%; ສຳລັບການບຳລຸງຍົກລະດັບການສຶກສາຈົບຊັ້ນມັດທະຍົມຕອນປາຍ ແມ່ນໄດ້ຈັດການຮຽນ-ການສອນ ໃຫ້ກຸ່ມເປົ້າໝາຍໄດ້ພຽງ 8.241 ຄົນ ທຽບໃສ່ແຜນການວາງໄວ້ 15.000 ຄົນ.
- ສ່ວນການສົ່ງເສີມວິຊາຊີບຂັ້ນພື້ນຖານ ແມ່ນໄດ້ຈັດຝຶກອົບຮົມວິຊາຊີບ ແລະ ສ້າງທັກສະອາຊີບ ໃຫ້ກັບຊາວໜຸ່ມ ແລະ ຜູ້ໃຫຍ່ທີ່ມີຄວາມສົນໃຈຢາກຮຽນຮູ້ດ້ານວິຊາຊີບ ຢູ່ໃນທົ່ວປະເທດ ແລະ ໂດຍສະເພາະປະຊາຊົນໃນບ້ານສາມສ້າງ ໄດ້ທັງໝົດ 14.682 ຄົນ ທຽບໃສ່ແຜນການວາງໄວ້ 20.000 ຄົນ; ເຊິ່ງໄດ້ຝຶກອົບຮົມຕາມລາຍສາຂາວິຊາຊີບ ທີ່ຕິດພັນກັບວິຖີການດຳລົງຊີວິດຂອງປະຊາຊົນ ແຕ່ລະທ້ອງຖິ່ນ. ພ້ອມກັນນັ້ນ, ກໍໄດ້ສະໜອງອຸປະກອນທີ່ຈຳເປັນ ແລະ ຈັດຝຶກທັກສະວິຊາຊີບໃຫ້ກັບຄູຝຶກ ໃນສາຂາວິຊາປູກຝັງ, ລ້ຽງສັດ, ວິຊາຊີບຊ່າງໄມ້, ການບໍລິການ ແລະ ການໂຮງແຮມ ເຫຼົ່ານີ້ເປັນຕົ້ນ;
- ຄຽງຄູ່ກັບການຂະຫຍາຍໂອກາດທາງການສຶກສາ ກໍຍັງໄດ້ປັບປຸງຄຸນນະພາບການສຶກສານອກໂຮງຮຽນ ໂດຍໄດ້ສ້າງມາດຕະຖານການສຶກສານອກໂຮງຮຽນ; ເຊິ່ງປະກອບມີ 7 ມາດຕະຖານ ແລະ 28 ຕົວຊີ້ບອກຫຼັກທີ່ໃຊ້ເປັນເຄື່ອງມືໃນການວັດ ແລະ ປະເມີນຜົນ ທາງດ້ານຄຸນນະພາບ ສຳລັບການສຶກສານອກໂຮງຮຽນ.

**ຕາຕະລາງ 18: ຄວາມຄືບໜ້າຂອງຕົວຊີ້ບອກຕ່າງໆໃນການສຶກສານອກໂຮງຮຽນແຕ່ປີ 2016 ຫາ 2020**

| ຕົວຊີ້ບອກ | 2015-16 | 2016-17 | 2017-18 | 2018-19 | 2019-20 |
|---|---|---|---|---|---|
| ຈຳນວນສູນການສຶກສານອກໂຮງຮຽນຂັ້ນແຂວງ | 16 | 17 | 17 | 17 | 17 |
| ຈຳນວນສູນການສຶກສານອກໂຮງຮຽນຂັ້ນເມືອງ | 20 | 27 | 31 | 36 | 36 |
| ຈຳນວນສູນການຮຽນຮູ້ຊຸມຊົນ | 317 | 335 | 342 | 342 | 342 |
| ຈຳນວນຄູສອນ ແລະ ພະນັກງານ | 506 | 521 | 597 | 528 | |
| ຈຳນວນຄູອາສາສະໝັກ | 8.762 | 10.619 | 11.006 | 11.161 | |

| | | | | | |
|---|---|---|---|---|---|
| ຈຳນວນນັກຮຽນຈົບໃນຫຼັກສູດການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື (15-40 ປີ) | 9.157 | 9.201 | 11.828 | | |
| ຈຳນວນນັກຮຽນຈົບໃນຫຼັກສູດບຳລຸງຈົບຊັ້ນປະຖົມ (15-40 ປີ) | 11.097 | 10.630 | 15.763 | 5.924 | |
| ຈຳນວນນັກຮຽນຈົບໃນຫຼັກສູດບຳລຸງຈົບຊັ້ນປະຖົມ (6-14 ປີ) | 1.986 | 3.873 | 3.773 | 1.765 | |
| ຈຳນວນນັກຮຽນຈົບໃນຫຼັກສູດບຳລຸງຍົກລະດັບການສຶກສາຊັ້ນ ມ.ຕົ້ນ | 65.618 | 67.712 | 19.425 | 30.065 | |
| ຈຳນວນນັກຮຽນຈົບໃນຫຼັກສູດບຳລຸງຍົກລະດັບການສຶກສາຊັ້ນ ມ.ປາຍ | 2.486 | 1.864 | 1.747 | 2.144 | |
| ຈຳນວນຜູ້ຈົບຝຶກອົບຮົມວິຊາຊີບຂັ້ນພື້ນຖານ | 3.250 | 4.201 | 2.926 | 4.305 | 5.138 |

**ແຫຼ່ງຂໍ້ມູນ: ກົມການສຶກສານອກໂຮງຮຽນ**

## 1.2. ສິ່ງທ້າທາຍ

ພາກທີ I ຂອງແຜນ 2021-2025 (ຂໍ້ທີ 2 ແລະ 3) ໄດ້ໃຫ້ລາຍລະອຽດກ່ຽວກັບສິ່ງທ້າທາຍຂອງການສຶກສານອກໂຮງຮຽນ. ສິ່ງທ້າທາຍທີ່ສຳຄັນປະກອບມີດັ່ງນີ້:

- ການເຂົ້າເຖິງການສຶກສາ ແລະ ການສົ່ງເສີມດ້ານທັກສະວິຊາຊີບ ໃຫ້ກຸ່ມເປົ້າໝາຍຜູ້ດ້ອຍໂອກາດຍັງຈຳກັດ ແລະ ຍັງບໍ່ທົ່ວເຖິງ;
- ຄວາມຮັບຮູ້, ຄວາມເຂົ້າໃຈ ແລະ ການມີສ່ວນຮ່ວມຂອງອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນ ຕໍ່ກັບການສຶກສານອກໂຮງຮຽນ ຍັງບໍ່ສູງ;
- ລະບຽບການຄຸ້ມຄອງສຳຫຼັບການສຶກສານອກໂຮງຮຽນ ຍັງບໍ່ທັນສອດຄ່ອງ, ຮັດກຸມ ແລະ ບໍ່ມີກົນໄກການຈັດຕັ້ງປະຕິບັດ, ຕິດຕາມ ແລະ ກວດກາ ຢ່າງຕໍ່ເນື່ອງ.
- ຄວາມເຂົ້າໃຈກ່ຽວກັບວິທີການສິດສອນ ແລະ ທັກສະການສິດສອນ ໃຫ້ກັບຜູ້ໃຫຍ່ຍັງບໍ່ທັນສູງ ແລະ ເລິກເຊິ່ງ ຈຶ່ງເຮັດໃຫ້ການສິດສອນໃຫ້ກຸ່ມເປົ້າໝາຍ ບໍ່ໄດ້ມີປະສິດພາບ ແລະ ປະສິດທິຜົນ ເທົ່າທີ່ຄວນ;
- ລະບຽບການຄຸ້ມຄອງສຳລັບສູນການສຶກສານອກໂຮງຮຽນ ແລະ ສູນການຮຽນຮູ້ຊຸມຊົນ ຍັງຊັດເຈນ, ງົບປະມານເງິນບໍລິຫານສູນຍັງບໍ່ມີ ແລະ ສິ່ງອຳນວຍສະດວກກໍບໍ່ພຽງພໍ;
- ລະບົບສະຖິຕິຂໍ້ມູນສະຖິຕິການສຶກສານອກໂຮງຮຽນຍັງບໍ່ທັນຊັດເຈນ, ຂາດການວິເຄາະຢ່າງລະອຽດ ແລະ ຍັງບໍ່ທັນໄດ້ເຊື່ອມເຂົ້າກັບລະບົບສະຖິຕິສຶກສາ ແລະ ກິລາ

# 2. ບູລິມະສິດ ສຳລັບແຕ່ປີ 2021-2025

ໃນໄລຍະແຕ່ປີ 2021-2025, ບັນດາເມືອງທີ່ດ້ອຍໂອກາດແມ່ນຖືເອົາບັນດາເມືອງທີ່ບັນຈຸໃນບັນຊີລາຍຊື່ 40 ເມືອງ ທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດ.

## 2.1. ຈຸດປະສົງ

1) ການຂະຫຍາຍການສຶກສາຊັ້ນມັດທະຍົມຕອນຕົ້ນບຳລຸງ ໃຫ້ລົງທຶນໃສ່ຢ່າງເໝາະສົມ ແລະ ປະຢັດ ແຕ່ຕ້ອງໃຫ້ມີຄຸນນະພາບ ແລະ ສອດຄ່ອງກັບຄວາມເປັນຈິງ, ໂດຍຜູ້ຮຽນຈົບຊັ້ນປະຖົມສຶກສາບຳລຸງ ຈະຕ້ອງມີທັກສະການຮູ້ໜັງສື ແລະ ການຄິດໄລ່ເລກທີ່ດີຂຶ້ນ ເພື່ອສືບຕໍ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນບຳລຸງ.

- ການເພີ່ມອັດຕາການຮູ້ໜັງສື ແລະ ສືບຕໍ່ຮຽນຈົບຊັ້ນມັດທະຍົມບໍາລຸງ ຮອດປີ 2030 ສໍາລັບກຸ່ມເປົ້າໝາຍການສຶກສານອກໂຮງຮຽນ;
- ສົ່ງເສີມໂອກາດໃນການເຂົ້າເຖິງການສຶກສາຢ່າງທົ່ວເຖິງ, ເທົ່າທຽມ, ມີຄຸນນະພາບ ແລະ ການສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ສໍາລັບທຸກຄົນ.

2) ສ້າງຂີດຄວາມສາມາດໃຫ້ແກ່ພະນັກງານຂອງກະຊວງສຶກສາທິການ ແລະ ກິລາ ເພື່ອໃຫ້ສາມາດຕອບສະໜອງ ໄດ້ຕາມຄວາມຕ້ອງການຂອງລະບົບໃນປະຈຸບັນ ແລະ ການປ່ຽນແປງໃນອານາຄົດ.
   - ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນການສຶກສານອກໂຮງຮຽນ ໂດຍການພັດທະນາຂີດຄວາມສາມາດ ແລະ ທັກສະດ້ານການບໍລິຫານ-ຄຸ້ມຄອງ ແລະ ວາງແຜນການໃນຕໍ່ໜ້າໄດ້ຢ່າງມີປະສິດທິພາບສູງ;

3) ສ້າງຄວາມເຂັ້ມແຂງໃຫ້ແກ່ສຶກສາແຂວງ, ສຶກສາເມືອງ, ກຸ່ມໂຮງຮຽນ ແລະ ໂຮງຮຽນ ເພື່ອຍົກສູງປະສິດທິພາບ, ປະສິດທິຜົນ ແລະ ຄວາມຮັບຜິດຊອບຂອງຕົນ ໂດຍຜ່ານການກໍານົດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ; ກໍານົດໜ້າວຽກ ແລະ ວິຊາສະເພາະຢ່າງຈະແຈ້ງ; ສ້າງຕັ້ງລະບົບເພື່ອສະໜອງຊັບພະຍາກອນມະນຸດ ແລະ ຊັບພະຍາກອນດ້ານການເງິນຕາມຄວາມຕ້ອງການ.
   - ປັບປຸງພາລະບົດບາດການເຄື່ອນໄຫວຂອງສູນການສຶກສານອກໂຮງຮຽນ ໃຫ້ແທດເໝາະ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງການພັດທະນາການສຶກສານອກໂຮງຮຽນ ລວມທັງການສ້າງຄວາມເຂັ້ມແຂງໃຫ້ກັບຄູສອນ ແລະ ຄູຝຶກວິຊາຊີບ ຢ່າງເໝາະສົມ;
   - ເພື່ອສົ່ງເສີມ ແລະ ພັດທະນາສູນການສຶກສານອກໂຮງຮຽນ ໃຫ້ກາຍເປັນສູນແຫ່ງການຮຽນຮູ້;
   - ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນການສຶກສານອກໂຮງຮຽນ ຂັ້ນແຂວງ, ຂັ້ນເມືອງ ແລະ ສູນການສຶກສານອກໂຮງຮຽນຂັ້ນຕ່າງໆ ເພື່ອໃຫ້ເຂົ້າໃຈ ແລະ ຈັດຕັ້ງປະຕິບັດ ດໍາລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດຢ່າງມີປະສິດທິຜົນ;

4) ເພື່ອຫຼຸດຜ່ອນຄວາມແຕກໂຕນດ້ານຜົນການຮຽນຂອງຜູ້ຮຽນການສຶກສານອກໂຮງຮຽນໃນຕົວເມືອງ ແລະ ຊົນນະບົດ ໂດຍຜ່ານການບໍລິຫານຊັບພະຍາກອນທີ່ມີປະສິດທິພາບ ແລະ ມີປະສິດທິຜົນຫຼາຍຂຶ້ນ ໂດຍມີເປົ້າໝາຍປັບປຸງການສຶກສາໃຫ້ດີຂຶ້ນໃນທົ່ວຂະແໜງການ ແລະ ໂດຍສະເພາະໃນ 40 ເມືອງ ທີ່ດ້ອຍໂອກາດທີ່ກະຊວງສຶກສາທິການ ແລະ ກິລາ ກໍານົດ.
   - ເພື່ອສົ່ງເສີມການຮຽນຮູ້ແບບອັດທະຍາໄສ ແລະ ການຝຶກທັກສະອາຊີບດ້ານຕ່າງໆ ໂດຍການຮຽນຮູ້ຜ່ານສື່ອອນໄລນ໌ຕ່າງໆ ແລະ ການສ້າງໂອກາດແກ່ກຸ່ມເປົ້າໝາຍໄດ້ເຂົ້າເຖິງແຫຼ່ງຂໍ້ມູນດ້ານຕ່າງໆ ຢ່າງທົ່ວເຖິງ;

5) ເພື່ອສະໜອງການສຶກສາຫຼັງການສຶກສາຂັ້ນພື້ນຖານທີ່ດີຂຶ້ນ ເພື່ອປະກອບສ່ວນເຂົ້າ ແລະ ສະໜັບສະໜູນບູລິມະສິດຂອງແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ IX.
   - ສົ່ງເສີມການຝຶກອົບຮົມວິຊາຊີບທີ່ຫຼາກຫຼາຍຮູບແບບ ແລະ ການສ້າງທັກສະອາຊີບ ທີ່ກວມເອົາທັກສະສີມືແຮງງານ ແລະ ທັກສະຊີວິດ ໂດຍພັດທະນາໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.

## 2.2. ຄາດໝາຍ

ຂໍ້ມູນປີຖານ ແລະ ຄາດໝາຍ ສໍາລັບຕົວຊີ້ບອກທີ່ສໍາຄັນໄດ້ສະໜອງໄວ້ໃນພາກ I, ຂໍ້ 8.5 (ຕາຕະລາງຕິດຕາມ ແລະ ປະເມີນຜົນ). ຕົວຊີ້ບອກຫຼັກ ແລະ ຄາດໝາຍ 2025 ສໍາລັບຂະແໜງຍ່ອຍນີ້ ແມ່ນ:

1) ຄະນະກໍາມະການ ການຮຽນຮູ້ຕະຫຼອດຊີວິດ ໄດ້ຮັບການສ້າງຕັ້ງຂຶ້ນ;
2) ອັດຕາການຮູ້ໜັງສື:
   - ປະຊາກອນອາຍຸແຕ່ 15-24 ປີ

- ຍິງ 94%;
- ຊາຍ 88%.

3) ຈຳນວນຜູ້ທີ່ຮຽນຈົບຈາກ ການສຶກສານອກໂຮງຮຽນ: 226.000 ຄົນ;

## 2.3. ຜົນໄດ້ຮັບລະດັບສູງ

<u>**ໝາຍເຫດ**</u>: ສຳລັບແຕ່ລະຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ, ຈະມີການອ້າງອີງເປັນອົງເລັບ ຫຼັງຈາກສຳນວນທີ່ກ່າວເຖິງພາກທີ I ຂອງແຜນ 2021-2025. ສິ່ງນີ້ໄດ້ສະໜອງໃຫ້ຜູ້ອ່ານສາມາດນຳໃຊ້ແຜນຂອງຂະແໜງການຍ່ອຍເປັນແຜນສະເພາະ ແຕ່ສາມາດອ້າງອີງເຖິງນະໂຍບາຍທີ່ກ່ຽວຂ້ອງ ດັ່ງທີ່ໄດ້ລະບຸໄວ້ໃນພາກທີ I.ແຜນຂອງຂະແໜງການຍ່ອຍ ບໍ່ຈຳເປັນຕ້ອງແກ້ໄຂທຸກໆຜົນໄດ້ຮັບລະດັບກາງຂອງຜົນໄດ້ຮັບລະດັບສູງ. ບາງຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ ໄດ້ຖືກດັດແກ້ເພື່ອສະແດງໃຫ້ເຫັນຈຸດສຸມຂອງຂະແໜງຍ່ອຍ

### 2.3.1. ຈຳນວນນັກຮຽນທີ່ຈົບຈາກແຜນງານການສຶກສານອກໂຮງຮຽນເພີ່ມຂຶ້ນ, ໂດຍມີຜົນການຮຽນຮູ້ທີ່ດີຂຶ້ນ, ໂດຍສະເພາະແມ່ນທັກສະການຮູ້ໜັງສື ແລະ ທັກສະການຄິດໄລ່ເລກ ໂດຍມີຈຸດສຸມພິເສດກ່ຽວກັບຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ (ພາກທີ I, ຜົນໄດ້ຮັບລະດັບສູງທີ 1)

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ຂອງແຜນ 5 ປີ ຄັ້ງທີ IX (2021-2025) ສຳລັບລາຍລະອຽດຂອງເຫດຜົນຕ່າງໆ. ຂະແໜງການສຶກສານອກໂຮງຮຽນໄດ້ສຸມໃສ່ການສົ່ງເສີມ ແລະ ສະໜອງການສຶກສາທີ່ມີຄຸນນະພາບໃຫ້ແກ່ປະຊາຊົນທີ່ດ້ອຍໂອກາດທາງການສຶກສາ ທີ່ຖືວ່າເປັນວຽກບູລິມະສິດຫຼັກຂອງຂະແໜງການສຶກສາ ແລະ ກິລາ. ນອກຈາກນີ້ຈຳ-ນວນປະຊາກອນທີ່ລຶບລ້າງຄວາມບໍ່ຮູ້ໜັງສືແລ້ວ ແຕ່ກັບມາກືກໜັງສື ແລະ ກືກທັກສະການຄິດໄລ່ເລກຄືນ ຍັງມີຈຳນວນຫຼາຍ ເຊິ່ງຄາດວ່າຈະກວມເອົາເຖິງໜຶ່ງສ່ວນສາມຂອງກຸ່ມເປົ້າໝາຍທີ່ດ້ອຍໂອກາດ.

**ຜົນໄດ້ຮັບລະດັບກາງທີ 1: ອັດຕາເຂົ້າຮຽນໃໝ່ ແລະ ອັດຕາເລື່ອນຊັ້ນເພີ່ມຂຶ້ນ ໃນແຕ່ລະຊັ້ນສຳລັບການສຶກສານອກໂຮງຮຽນ (ພາກທີ I, ຜົນໄດ້ຮັບລະດັບສູງທີ 1, ຜົນຮັບລະດັບກາງ 1.3)**

<u>**ຍຸດທະສາດທີ 1**</u>: ຂະຫຍາຍການສຶກສານອກໂຮງຮຽນໄປສູ່ເຂດຫ່າງໄກສອກຫຼີກ, ສ້າງເງື່ອນໄຂໃຫ້ແກ່ກຸ່ມເປົ້າໝາຍຜູ້ທີ່ດ້ອຍໂອກາດ ເພື່ອໃຫ້ໄດ້ຮັບການສຶກສາທີ່ມີຄວາມສະເໝີພາບ ແລະ ເທົ່າທຽມ.

<u>**ວຽກຈຸດສຸມ:**</u>

- ປັບປຸງສູນການຮຽນຮູ້ຊຸມຊົນ, ສູນການສຶກສານອກໂຮງຮຽນ ລວມທັງສະຖານທີ່ຈັດການຮຽນ-ການສອນໃຫ້ກັບກຸ່ມເປົ້າໝາຍ ໄດ້ເຂົ້າເຖິງການສຶກສາທີ່ເທົ່າທຽມ ແລະ ມີຄຸນນະພາບ;
- ສະໜອງການສຶກສາແກ່ເດັກນ້ອຍກຸ່ມເປົ້າໝາຍ ໃນເກນອາຍຸ 6-14 ປີ ທີ່ບໍ່ສາມາດເຂົ້າເຖິງການສຶກສາ ໃຫ້ສາມາດເຊື່ອມຕໍ່ເຂົ້າໃນການສຶກສາໃນໂຮງຮຽນ;
- ສະໜອງການສຶກສາໃຫ້ປະຊາກອນໃນເກນອາຍຸ 15-40 ປີ ທີ່ບໍ່ສາມາດເຂົ້າເຖິງການສຶກສາ ໃຫ້ໄດ້ຮັບການບຳລຸງຍົກລະດັບການສຶກສາ ຢ່າງທົ່ວເຖິງ, ເທົ່າທຽມ ແລະ ມີຄຸນນະພາບ;
- ຂະຫຍາຍໂອກາດໃຫ້ແມ່ຍິງ ຊົນເຜົ່າ ແລະ ຜູ້ພິການ ໄດ້ເຂົ້າເຖິງການສຶກສານອກໂຮງຮຽນ ຫຼາຍຂຶ້ນ;
- ສະໜອງການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ຄຽງຄູ່ກັບການຮຽນ-ການສອນຕາມຫຼັກສູດການຮູ້ໜັງສືສຳລັບຜູ້ໃຫຍ່ ແລະ ໄວໜຸ່ມ ໂດຍສະເພາະແມ່ນເຂດຫ່າງໄກສອກຫຼີກ;

- ຊຸກຍູ້ ແລະ ສົ່ງເສີມ ໃຫ້ຊຸມຊົນ, ອົງການຈັດຕັ້ງທາງສັງຄົມ, ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນໆ ເປັນເຈົ້າການໃນການພັດທະນາວຽກງານການສຶກສານອກໂຮງຮຽນ ຢ່າງກວ້າງຂວາງ ແລະ ທົ່ວເຖິງ;
- ສົ່ງເສີມການຮຽນຮູ້ໂດຍຜ່ານສື່ອີເລັກໂທນິກຕ່າງໆ ທີ່ມີຄວາມຫຼາກຫຼາຍ ແລະ ກວ້າງຂວາງ, ຕາມຍຸກສະໄໝ ເໝາະສົມຕາມສະພາບຂອງທ້ອງຖິ່ນ ແລະ ເງື່ອນໄຂຂອງຜູ້ຮຽນ.

**<u>ຍຸດທະສາດທີ 2</u> :** ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ສຳລັບໝົດທຸກຄົນ.

**<u>ວຽກຈຸດສຸມ</u>**

- ຊຸກຍູ້ ແລະ ສົ່ງເສີມ ໃຫ້ມີການຈັດຕັ້ງປະຕິບັດວຽກງານການຮຽນຮູ້ຕະຫຼອດຊີວິດ ທົ່ວສັງຄົມ;
- ຊຸກຍູ້ ແລະ ສົ່ງເສີມ ໃຫ້ປະຊາຊົນບັນດາເຜົ່າໄດ້ຮັບການສຶກສາຕໍ່ເນື່ອງ ແລະ ການຮຽນຮູ້ຕະຫຼອດຊີວິດ ໂດຍຜ່ານຮູບແບບການຮຽນທີ່ມີຫຼາຍທາງເລືອກ ເຊັ່ນ: ການຮຽນຮູ້ທີ່ປັບປ່ຽນໄດ້, ການຮຽນຮູ້ຕາມອັດທະຍາໄສ, ການສຶກສາທາງໄກ ແລະ ການສຶກສາຮູບແບບອື່ນໆ;
- ພັດທະນາມາດຕະຖານຄຸນນະພາບ, ຕົວຊີ້ບອກ ແລະ ເຄື່ອງມື ເພື່ອທຽບໂອນ ແລະ ປະເມີນຄຸນນະພາບການຮຽນຮູ້ຕະຫຼອດຊີວິດ.

**<u>ຍຸດທະສາດທີ 3:</u>** ພັດທະນາຫຼັກສູດການຝຶກອົບຮົມໄລຍະສັ້ນ ແລະ ປັບປ່ຽນໄດ້ ທີ່ມີເນື້ອໃນເນັ້ນໃສ່ການຮູ້ໜັງສື ແລະ ການສ້າງທັກສະອາຊີບ ສຳລັບທ້ອງຖິ່ນ ໂດຍນຳໃຊ້ການສື່ການຮຽນຮູບແບບຕ່າງໆ.

ຢາກມີຜົນສຳເລັດອັນເຕັມສ່ວນໃນການຈັດຕັ້ງປະຕິບັດຍຸດທະສາດນີ້ ຈະຕ້ອງມີການສະໜອງງົບປະມານຕາມສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ / ຫຼື ງົບປະມານ ODA ສຸມໃສ່ຍຸດທະສາດນີ້ໂດຍສະເພາະ.

**<u>ວຽກຈຸດສຸມ</u>**

- ສ້າງ ແລະ ພັດທະນາຫຼັກສູດການຝຶກອົບຮົມໄລຍະສັ້ນ ທີ່ມີເນື້ອໃນກ່ຽວກັບການຮຽນຮູ້ໜັງສື ແລະ ວິຊາຊີບຂັ້ນພື້ນຖານໃນສາຂາຕ່າງໆ ໂດຍຮູບແບບອອນໄລນ໌ ໂດຍອີງໃສ່ສະພາບເງື່ອນໄຂຂອງທ້ອງຖິ່ນ ແລະ ສະພາບຄວາມຕ້ອງການຂອງຕະຫຼາດແຮງງານ;
- ພັດທະນາສື່ການຮຽນ-ການສອນ ກ່ຽວກັບການຮຽນຮູ້ໜັງສື, ບຳລຸງຍົກລະດັບການສຶກສາ, ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ທັກສະອາຊີບ ໃຫ້ແທດເໝາະກັບທ້ອງຖິ່ນ (ພັດທະນາຫຼັກສູດທ້ອງຖິ່ນ);
- ໂຄສະນາ ແລະ ເຜີຍແຜ່ ຫຼັກສູດການຮຽນຮູ້ໜັງສື, ບຳລຸງຍົກລະດັບການສຶກສາ, ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ທັກສະອາຊີບ ຜ່ານສື່ຕ່າງໆທັງແບບອອນໄລນ໌ (Online) ແລະ ແບບສື່ສິ່ງພິມ (Offline) ໃນຮູບແບບທີ່ເໝາະສົມກັບກຸ່ມເປົ້າໝາຍ ແລະ ເງື່ອນໄຂຂອງທ້ອງຖິ່ນ.
- ພັດທະນາເຄື່ອງມືຮັບໃຊ້ການຮຽນ-ການສອນ ໂດຍນຳໃຊ້ ແອັບອອນລາຍ (online application) ເພື່ອໃຫ້ເຂົ້າເຖິງກຸ່ມເປົ້າໝາຍຫຼາຍຂຶ້ນ;
- ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນກ່ຽວກັບການນຳໃຊ້, ວິທີການສິດສອນ ແລະ ແລະ ການຄຸ້ມຄອງການຮຽນ-ການສອນ ຜ່ານສື່ຕ່າງໆ ທັງແບບອອນໄລນ໌ (Online) ແລະ ແບບສື່ສິ່ງພິມ (Offline).

### 2.3.2. ອັດຕາການຮູ້ໜັງສືໃນກຸ່ມຜູ້ໃຫຍ່ ແລະ ໄວໜຸ່ມເພີ່ມຂຶ້ນ ພ້ອມທັງຫຼຸດຜ່ອນຄວາມແຕກໂຕນກັນລະຫວ່າງເພດ, ເຜົ່າ, ຖານະດ້ານເສດຖະກິດ ແລະ ທີ່ຕັ້ງພູມສັນຖານ (ພາກທີ I, ຜົນໄດ້ຮັບລະດັບສູງທີ 4)

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ຂອງແຜນ 5 ປີ ຄັ້ງທີ IX (2021-2025) ສຳລັບເຫດຜົນລະອຽດຕ່າງໆ. ມີຄວາມຈຳເປັນຕ້ອງໄດ້ມີການຕິດຕາມອັດຕາການຮູ້ໜັງສືໃນກຸ່ມຜູ້ໃຫຍ່ ແລະ ໄວໜຸ່ມ ເນື່ອງຈາກຈຳນວນນັກຮຽນທີ່ອອກຈາກໂຮງ

ຮຽນປະຖົມ ແລະ ມັດທະຍົມຕອນຕົ້ນ ທີ່ມີຜົນການຮຽນຕ່ຳຍັງມີຈຳນວນຫຼາຍ. ແຜນງານການສົ່ງເສີມການຮູ້ໜັງສື ກໍຍັງບໍ່ໄດ້ລວມເອົາວິທີການໃນການຮຽນຮູ້ຕະຫຼອດຊີວິດເຂົ້ານຳ. ດັ່ງນັ້ນ, ຂະແໜງການສຶກສານອກໂຮງຮຽນຈະຕ້ອງໄດ້ເອົາໃຈໃສ່ປັບປຸງ, ແກ້ໄຂ ແລະ ສະໜອງການສຶກສາໃຫ້ກັບກຸ່ມເປົ້າໝາຍດັ່ງກ່າວ ຢ່າງທົ່ວເຖິງ ພ້ອມທັງສ້າງທຸກເງື່ອນໄຂເພື່ອສົ່ງເສີມການຮຽນຮູ້ໜັງສື ແລະ ພ້ອມທັງຮັບປະກັນໃຫ້ເກີດມີຄວາມເທົ່າທຽມກັນທາງດ້ານການສຶກສາ ໃນທຸກດ້ານ ແລະ ທຸກຮູບແບບ.

**ຜົນໄດ້ຮັບລະກາງທີ 1: ອັດຕາການຮູ້ໜັງສື ສຳລັບໄວໜຸ່ມ ແລະ ຜູ້ໃຫຍ່ 24-40 ປີ ເພີ່ມຂຶ້ນ ແລະຫຼຸດຜ່ອນຄວາມແຕກໂຕນໃນການຮູ້ໜັງສື ສຳລັບ ເພດ, ເຜົ່າ, ຖານະດ້ານເສດຖະກິດ ແລະ ທີ່ຕັ້ງພູມສັນຖານ (ພາກທີ I ຜົນໄດ້ຮັບລະດັບສູງທີ 4, ຜົນຮັບລະດັບກາງທີ 4.1)**

<u>**ຍຸດທະສາດທີ 1:**</u> ຊຸກຍູ້ ແລະ ສົ່ງເສີມການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ສຳລັບປະຊາກອນໃນເກນອາຍຸ 15-40 ປີ ໃຫ້ຫຼາຍຂຶ້ນ.

<u>**ວຽກຈຸດສຸມ:**</u>

- ຊຸກຍູ້ ແລະ ສົ່ງເສີມໃຫ້ຊຸມຊົນ, ອົງການຈັດຕັ້ງທາງສັງຄົມ, ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນໆ ເປັນເຈົ້າການໃນການຈັດການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື;
- ຊຸກຍູ້ ແລະ ສົ່ງເສີມ ໃຫ້ກຸ່ມເປົ້າໝາຍ ໄດ້ຮັບການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ໂດຍແຍກຕາມເພດ, ເຜົ່າ, ຖານະດ້ານເສດຖະກິດ ແລະ ທີ່ຕັ້ງພູມສັນຖານ ໃຫ້ເທົ່າທຽມກັນ;
- ວາງແຜນປະຕິບັດງານສຳລັບວຽກງານລຶບລ້າງຄວາມບໍ່ຮູ້ໜັງສື ຂອງກຸ່ມເປົ້າໝາຍໄວໜຸ່ມ 15-40 ປີ.

**ຜົນໄດ້ຮັບລະດັບກາງ 2: ໄດ້ມີການຕິດຕາມຫຼັກສູດການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ຂອງການສຶກສານອກໂຮງຮຽນ ໂດຍການສຸ່ມເອົາກຸ່ມຕົວຢ່າງ ເພື່ອປະເມີນຜົນກະທົບກ່ຽວກັບການຮູ້ໜັງສືຂອງໄວໜຸ່ມ. (ພາກທີ I ຜົນໄດ້ຮັບລະດັບສູງທີ 4, ຜົນໄດ້ຮັບລະດັບກາງ 4.2)**

<u>**ຍຸດທະສາດ 1:**</u> ພັດທະນາກົນໄກການປະເມີນ ສຳລັບການຮຽນຮູ້ໜັງສື ແລະ ການບຳລຸງຍົກລະດັບການສຶກສາ.

ຢາກມີຜົນສຳເລັດຢ່າງເຕັມສ່ວນໃນການຈັດຕັ້ງປະຕິບັດຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ / ຫຼື ງົບປະມານ ODA ຕ້ອງສຸມໃສ່ຍຸດທະສາດດັ່ງກ່າວນີ້.

<u>**ວຽກຈຸດສຸມ:**</u>

- ພັດທະນາລະບົບຖານຂໍ້ມູນ ແລະ ເຄື່ອງມືຕິດຕາມ-ປະເມີນ ອັດຕາຜູ້ເຂົ້າຮຽນ ແລະ ຜູ້ທີ່ຮຽນຈົບການສຶກສານອກໂຮງຮຽນ ແຍກຕາມ ເຜົ່າ, ເພດ, ຖານະດ້ານເສດຖະກິດ ແລະ ທີ່ຕັ້ງພູມສັນຖານ;
- ເກັບກຳສະຖິຕິການເຂົ້າຮຽນ ແລະ ຜູ້ທີ່ຮຽນຈົບແຕ່ລະປີໂດຍນຳໃຊ້ເຄື່ອງມື ແລະ ກົນໄກການກວດກາ, ຕິດຕາມ ແລະ ປະເມີນ ຂອງການສຶກສານອກໂຮງຮຽນ;
- ພັດທະນາ ແລະ ນຳໃຊ້ ເຄື່ອງມື, ກົນໄກ ການຕິດຕາມ ແລະ ປະເມີນຜົນ ເພື່ອວັດ ແລະ ປະເມີນຜົນ ກ່ຽວກັບອັດຕາການຮູ້ໜັງສື ແລະ ອັດຕາການຮຽນຈົບບຳລຸງຍົກລະດັບຊັ້ນປະຖົມ ຂອງໄວໜຸ່ມ;
- ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນ ໃນການນຳໃຊ້ເຄື່ອງມືຕິດຕາມ.

**ຜົນໄດ້ຮັບລະດັບກາງທີ 3: ໂຄງປະກອບຂອງສູນການສຶກສານອກໂຮງຮຽນ ແລະ ການພັດທະນາສູນການສຶກສານອກໂຮງຮຽນ ແລະ ສູນການຮຽນຮູ້ຊຸມຊົນ ໄດ້ຮັບການປັບປຸງ ເພື່ອຊ່ວຍເຮັດໃຫ້ອັດຕາການຮູ້ໜັງສື ຂອງໄວໜຸ່ມ ແລະ ຜູ້ໃຫຍ່ ເພີ່ມຂຶ້ນ. (ພາກທີ I, ຜົນໄດ້ຮັບລະດັບສູງທີ 4, ຜົນຮັບລະດັບກາງ 4.3)**

**<u>ຍຸດທະສາດ 1:</u>** ປັບປຸງໂຄງສ້າງຂອງການສູນການສຶກສານອກໂຮງຮຽນ ແລະ ສູນການຮຽນຮູ້ຊຸມຊົນ ໃຫ້ມີຄຸນນະພາບ ແລະ ເໝາະສົມກັບສະພາບຕົວຈິງຂອງທ້ອງຖິ່ນ.

**<u>ວຽກຈຸດສຸມ:</u>**

- ປັບປຸງໂຄງສ້າງຂອງສູນພັດທະນາການສຶກສານອກໂຮງຮຽນ ໃຫ້ກາຍເປັນສະຖາບັນການສຶກສານອກໂຮງຮຽນ;
- ປັບປຸງລະບຽບການບໍລິຫານຄຸ້ມຄອງ ແລະ ການບໍລິການ ຂອງສູນການສຶກສານອກໂຮງຮຽນຂັ້ນຕ່າງໆ ເພື່ອໃຫ້ຊຸມຊົນ ແລະ ສັງຄົມ ສາມາດເຂົ້າເຖິງໄດ້ງ່າຍ;
- ສ້າງຄວາມເຂັ້ມແຂງ ໃນດ້ານການບໍລິຫານ-ຄຸ້ມຄອງ ແລະ ການບໍລິການ ໃຫ້ບຸກຄະລາກອນ ການສຶກສານອກໂຮງຮຽນ;

**<u>ຍຸດທະສາດ 2:</u>** ພັດທະນາສູນການສຶກສານອກໂຮງຮຽນໃຫ້ມີຄຸນນະພາບ ແລະ ກາຍເປັນສູນແຫ່ງການຮຽນຮູ້ ເພື່ອທຸກຄົນ.

**<u>ວຽກຈຸດສຸມ:</u>**

- ສ້າງນະໂຍບາຍ, ລະບຽບການ ແລະ ມາດຕະຖານ ໃນການຫັນສູນການສຶກສານອກໂຮງຮຽນ ໃຫ້ເປັນສູນແຫ່ງການຮຽນຮູ້;
- ສ້າງ ແລະ ປັບປຸງສະຖານການສຶກສານອກໂຮງຮຽນ ໃຫ້ເປັນແຫຼ່ງບໍລິການ ແລະ ສະໜອງຂໍ້ມູນຂ່າວສານການຮຽນຮູ້ ໃຫ້ຊຸມຊົນ ແລະ ສັງຄົມ;
- ພັດທະນາລະບຽບການ ແລະ ກົນໄກ ກ່ຽວກັບການຈັດການຮຽນ-ການສອນ ລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາ ໂດຍຜ່ານສູນການຮຽນຮູ້ຊຸມຊົນຂອງການສຶກສານອກໂຮງຮຽນ;
- ພັດທະນາລະບຽບການ ແລະ ກົນໄກ ກ່ຽວກັບການສ້າງສູນ ເປັນແຫຼ່ງຝຶກອົບຮົມທັກສະວິຊາຊີບ ແລະ ສະໜອງສີມືແຮງງານທີ່ມີປະສິດທິພາບ ໃຫ້ກັບຕະຫຼາດແຮງງານ;
- ສ້າງສິ່ງອຳນວຍຄວາມສະດວກ ແລະ ສະໜອງອຸປະກອນຮັບໃຊ້ ໃນການຈັດການຮຽນ-ການສອນ, ການຝຶກອົບຮົມວິຊາຊີບ ແລະ ລວມທັງປັບປຸງສະພາບແວດລ້ອມຂອງສູນການສຶກສານອກໂຮງຮຽນ.

### 2.3.3. ຄຸນນະພາບ ແລະ ຈຳນວນນັກຮຽນທີ່ອອກຈາກລະບົບກ່ອນຈົບການສຶກສາຂັ້ນພື້ນຖານ ແລະ ຜູ້ທີ່ຈົບການສຶກສາຫຼັງຂັ້ນພື້ນຖານທີ່ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ ສອດຄ່ອງກັບຄວາມຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX ເພື່ອຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (ພາກທີ I, ຜົນໄດ້ຮັບລະດັບສູງທີ 5)

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ຂອງແຜນ 5 ປີ ຄັ້ງທີ IX (2021-2025) ນີ້ສຳລັບເຫດຜົນລະອຽດຕ່າງໆ. ການວິເຄາະກຳລັງແຮງງານທີ່ດຳເນີນໃນປີ 2017 ໄດ້ສະແດງໃຫ້ເຫັນວ່າ ຍັງມີແຮງງານຈຳນວນຫຼາຍທີ່ເຮັດວຽກຢູ່ໃນທຸລະກິດແບບສ່ວນຕົວ ແລະ ຄອບຄົວ. ສະນັ້ນ, ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແມ່ນຍັງມີຄວາມຈຳເປັນຫຼາຍ ນອກເໜືອຈາກການສະໜອງການຝຶກອົບຮົມ ລະດັບ C.1 ແລະ C.2 ຂອງອາຊີວະສຶກສາທີ່ມີຢູ່ໃນປັດຈຸບັນ.

**ຜົນໄດ້ຮັບລະດັບກາງທີ 1: ຂອບວຸດທິການສຶກສາແຫ່ງຊາດ ໄດ້ກວມເອົາການເຊື່ອມໂຍງກັນລະ ຫວ່າງການສຶກສານອກໂຮງຮຽນ ແລະ ສາຍອາຊີວະສຶກສາ ເພື່ອໃຫ້ສອດຄ່ອງກັບຂອບວຸດທິການສຶກສາຂອງອາຊຽນ (ພາກທີ I, ຜົນໄດ້ຮັບລະດັບສູງທີ 5, ຜົນໄດ້ຮັບລະດັບກາງທີ 5.9)**

**<u>ຍຸດທະສາດ 1:</u>** ພັດທະນາກົນໄກ ແລະ ລະບຽບການຕ່າງໆຂອງການສຶກສານອກໂຮງຮຽນ ເຂົ້າໃນຂອບວຸດທິການສຶກສາແຫ່ງຊາດ.

**<u>ວຽກຈຸດສຸມ:</u>**

- ສ້າງ ແລະ ພັດທະນາ ຫຼັກສູດວິຊາຊີບການສຶກສານອກໂຮງຮຽນ ໃນການທຽບເທົ່າ, ທຽບໂອນ ທັກສະອາຊີບ ແລະ ສີມືແຮງງານ ເພື່ອໃຫ້ເຊື່ອມໂຍງກັບຂອບວຸດທິການສຶກສາແຫ່ງຊາດ;
- ສ້າງລະບຽບການເພື່ອປະສົມປະສານການສຶກສານອກໂຮງຮຽນ ໃຫ້ສອດຄ່ອງກັບຂອບວຸດທິການສຶກສາແຫ່ງຊາດ;
- ພັດທະນາການປະກັນຄຸນນະພາບວິຊາຊີບຂັ້ນພື້ນຖານ ໂດຍສົມທົບກັບສູນປະກັນຄຸນນະພາບການສຶກສາ ແລະ ພາກສ່ວນກ່ຽວຂ້ອງ;
- ສ້າງຄວາມເຂັ້ມແຂງທາງດ້ານວິຊາສະເພາະໃຫ້ແກ່ຄູຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ທັກສະດ້ານວິຊາຊີບ ໃນສາຂາຕ່າງໆ ເພື່ອແນ່ໃສ່ໃຫ້ສາມາດຈັດຝຶກອົບຮົມ ໃຫ້ໄປຕາມມາດຕະຖານຂອດວຸດທິການສຶກສາແຫ່ງຊາດ;

**<u>ຍຸດທະສາດ 2:</u>** ທົບທວນຄືນ ແລະ ປັບປຸງ ນະໂຍບາຍ, ລະບຽບການ, ມາດຕະຖານ ວິຊາຊີບ ແລະ ທັກສະອາຊີບ ຕາມສະພາບເງື່ອນໄຂ ເພື່ອຮັບປະກັນວ່າຂອບວຸດທິການສຶກສາແຫ່ງຊາດ ສອດຄ່ອງກັບຂອບວຸດທິການສຶກສາຂອງອາຊຽນ.

**<u>ວຽກຈຸດສຸມ:</u>**

- ພັດທະນາມາດຕະຖານທັກສະອາຊີບ ການສຶກສານອກໂຮງຮຽນ ແລະ ການຮຽນຮູ້ຕາມອັດທະຍາໄສ ຕາມຂອບວຸດທິການສຶກສາແຫ່ງຊາດ ເພື່ອໃຫ້ສາມາດທຽບເທົ່າ, ທຽບໂອນ, ຮັບຮູ້ ແລະ ເຊື່ອມໂຍງ ເຂົ້າກັບຂອບວຸດທິການສຶກສາຂອງອາຊຽນ;
- ສ້າງແຜນປະຕິບັດງານ ໃນການສົ່ງເສີມການສຶກສາ ແລະ ຝຶກອົບຮົມວິຊາຊີບຂັ້ນພື້ນຖານ ເພື່ອການຈ້າງງານໃຫ້ສອດຄ່ອງກັບສະພາບຕະຫຼາດແຮງງານ ໃນຍຸກການປະຕິຮູບອຸດສະຫະກໍາທັນສະໄໝ ຄັ້ງທີ 4 (IR 4.0) ສໍາລັບກຸ່ມເປົ້າໝາຍການສຶກສານອກໂຮງຮຽນ;
- ພັດທະນາກໍາລັງແຮງງານໃຫ້ມີຄວາມຊໍານິຊໍານານ ໂດຍນໍາໃຊ້ຂອບການຮັບຮູ້, ການຢັ້ງຢືນ ແລະ ການຮັບ-ຮອງທີ່ມີ ເພື່ອສ້າງຄວາມເຂັ້ມແຂງດ້ານການເຕີບໂຕທາງດ້ານເສດຖະກິດ-ສັງຄົມຂອງຊາດ ແລະ ການເຊື່ອມໂຍງກັບພາກພື້ນ;

**<u>ຍຸດທະສາດ 3:</u>** ສ້າງໂຄງການ ແລະ ພັດທະນາຮູບແບບ ເພື່ອການສົ່ງເສີມວິຊາຊີບຂັ້ນພື້ນຖານ.

**<u>ວຽກຈຸດສຸມ:</u>**

- ສ້າງໂຄງການ ແລະ ພັດທະນາຮູບແບບການສົ່ງເສີມວິຊາຊີບຂັ້ນພື້ນຖານທີ່ຕິດພັນກັບການພັດທະນາຊົນນະບົດ ເພື່ອຍົກລະດັບຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ;
- ພັດທະນາ ແລະ ສົ່ງເສີມການຝຶກອົບຮົມວິຊາຊີບ ໃຫ້ມີຄວາມຫຼາກຫຼາຍທາງດ້ານສາຂາວິຊາຊີບ ແລະ ມີວິທີການຝຶກອົບຮົມຫຼາຍຮູບ ຫຼາຍແບບ ໂດຍສາມາດປັບປ່ຽນໄດ້ຕາມຄວາມຕ້ອງການຂອງກຸ່ມເປົ້າໝາຍ ແລະ ສະພາບເງື່ອນໄຂຂອງສັງຄົມ;
- ສະໜອງອຸປະກອນຮັບໃຊ້ ໃນການຈັດຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ຝຶກທັກສະອາຊີບແບບຊໍານິຊໍານານ.

**2.3.4. ຂະແໜງການສຶກສາໄດ້ມີການຈັດຕັ້ງ, ຄຸ້ມຄອງ, ຈັດສັນຊັບພະຍາກອນ, ຕິດຕາມ ແລະ ປະເມີນຜົນຢູ່ແຕ່ລະຂັ້ນຢ່າງເໝາະສົມ ເພື່ອປັບປຸງການປະຕິບັດໜ້າທີ່ຂອງຂະແໜງການໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ (ພາກທີ I, ຜົນໄດ້ຮັບລະດັບສູງທີ 6)**

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ຂອງແຜນ 5 ປີ ຄັ້ງທີ IX (2021-2025) ນີ້ ສຳລັບເຫດຜົນລະອຽດຕ່າງໆ.

**ຜົນໄດ້ຮັບລະດັບກາງ 1: ສ້າງຄວາມເຂັ້ມແຂງໃຫ້ຄະນະກຳມະການປະຕິບັດງານ (ຄະນະກຳມະການຈັດສັນຄູ ແລະ ຄະນະກຳມະການແຜນການ ແລະ ການເງິນ) ທັງຂັ້ນສູນກາງ ແລະ ລະດັບທ້ອງຖິ່ນ ໃນການນຳໃຊ້ຂໍ້ມູນອ້າງອີງຈາກແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ, ຜົນການປະເມີນຜົນການຮຽນ ແລະ ສະຖິຕິຂໍ້ມູນຂ່າວສານດ້ານການສຶກສາ (EMIS) ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ຍຸດທະສາດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ (ພາກທີ I, ຜົນໄດ້ຮັບລະດັບສູງທີ 6, ຜົນໄດ້ຮັບລະດັບກາງ 6.3)**

**<u>ຍຸດທະສາດ 1:</u>** ພັດທະນາລະບົບສະຖິຕິຂໍ້ມູນຂ່າວສານການສຶກສານອກໂຮງຮຽນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ຢາກມີຜົນສຳເລັດຢ່າງເຕັມສ່ວນໃນການຈັດຕັ້ງປະຕິບັດຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ / ຫຼື ງົບປະມານ ODA ຕ້ອງສຸມໃສ່ຍຸດທະສາດດັ່ງກ່າວນີ້.

**<u>ວຽກຈຸດສຸມ:</u>**

- ດຳເນີນການລົງສຳຫຼວດຂໍ້ມູນກຸ່ມເປົ້າໝາຍທີ່ກືກໜັງສືຄືນ ແລະ ຜູ້ທີ່ປະລະການສຶກສາຈາກສາມັນສຶກສາ (ເພື່ອໃຊ້ເປັນຂໍ້ມູນປີຖານ);
- ສ້າງແຜນປະຕິບັດງານ ໃນການພັດທະນາວິທີເກັບກຳຂໍ້ມູນແບບທັນສະໄໝ ແລະ ການຄິດໄລ່ອັດຕາການຮູ້ໜັງສືສຳລັບໄວໜຸ່ມ ແລະ ຜູ້ໃຫຍ່ ທີ່ຮຽນໃນຫຼັກສູດການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາຊັ້ນປະຖົມ;
- ພັດທະນາລະບົບການຄຸ້ມຄອງສະຖິຕິຂໍ້ມູນຂ່າວສານ ການສຶກສານອກໂຮງຮຽນ ແບບອອນໄລ ເພື່ອເຊື່ອມໂຍງກັບລະບົບຖານຂໍ້ມູນຂອງກະຊວງສຶກສາທິການ ແລະ ກິລາ ໂດຍການປະສານສົມທົບກັບສູນສະຖິຕິສຶກສາ ແລະ ກິລາ.

**<u>ຍຸດທະສາດ 2:</u>** ສ້າງຄວາມເຂັ້ມແຂງໃຫ້ກັບບຸກຄະລາກອນ ໃນການນຳໃຊ້ຂໍ້ມູນສະຖິຕິ ເພື່ອເປັນບ່ອນອີງໃຫ້ແກ່ການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຍຸດທະສາດ.

**<u>ວຽກຈຸດສຸມ:</u>**

- ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນທີ່ຮັບຜິດຊອບວຽກງານກວດກາ, ຕິດຕາມ ແລະ ປະເມີນຜົນ ສຳລັບວຽກງານການສຶກສານອກໂຮງຮຽນ ຂັ້ນສູນກາງ ແລະ ທ້ອງຖິ່ນ;
- ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນ ທາງດ້ານການນຳໃຊ້ເຄື່ອງມື ICT ແບບໃໝ່ ເພື່ອເກັບກຳ ແລະ ຄຸ້ມຄອງ ຂໍ້ມູນສະຖິຕິຕ່າງໆ ສຳລັບການສຶກສານອກໂຮງຮຽນ;

**<u>ຍຸດທະສາດ 3:</u>** ເຊື່ອມໂຍງລະບົບການຕິດຕາມ-ປະເມີນຜົນ ວຽກງານການສຶກສານອກໂຮງຮຽນ ເຂົ້າໃນລະບົບການລາຍງານສະຖິຕິຂໍ້ມູນຂ່າວສານແບບອີເລັກໂຕນິກ ປະຈຳປີ (EMIS).

**<u>ວຽກຈຸດສຸມ:</u>**

- ສ້າງ ແລະ ພັດທະນາລະບົບການເກັບກຳຂໍ້ມູນໂດຍນຳໃຊ້ໄອຊີທີ ໃຫ້ສາມາດເຊື່ອມໂຍງກັບລະບົບການກວດກາ, ການຕິດຕາມ-ປະເມີນຜົນ ເພື່ອຕີລາຄາຜົນໄດ້ຮັບການຈັດຕັ້ງປະຕິບັດກິດຈະກຳການສຶກສານອກໂຮງຮຽນ ໃຫ້ເຂົ້າກັບລະບົບການລາຍງານສະຖິຕິຂໍ້ມູນຂ່າວສານການສຶກສາປະຈຳປີ (EMIS);
- ສ້າງແຜນພັດທະນາການ ເຊື່ອມໂຍງລະບົບຖານຂໍ້ມູນເຂົ້າກັບລະບົບການລາຍງານສະຖິຕິການສຶກສາ ປະຈຳປີ (EMIS);
- ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນທີ່ຮັບຜິດຊອບວຽກງານສະຖິຕິການສຶກສານອກໂຮງຮຽນ ກ່ຽວກັບການເກັບກຳຂໍ້ມູນ, ການປ້ອນຂໍ້ມູນ, ການນຳໃຊ້ ແລະ ການບຳລຸງຮັກສາລະບົບຖານຂໍ້ມູນ;
- ຕີລາຄາຜົນຂອງການລາຍງານຕິດຕາມ ແລະ ປະເມີນຜົນ ການນຳໃຊ້ລະບົບຖານຂໍ້ມູນໃນການເຊື່ອມໂຍງກັບລະບົບຂອງສູນສະຖິຕິ ກະຊວງສຶກສາທິການ ແລະ ກິລາ.

# VI. ຂະແໜງການຍ່ອຍການສຶກສາຄູ

## 1. ພາກສະເໜີ

### 1.1. ຜົນສຳເລັດ

ໃນພາກທີ I (ຂໍ້ທີ 2 ແລະ 3) ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ຈະໃຫ້ລາຍລະອຽດເພີ່ມເຕີມກ່ຽວກັບຜົນສຳເລັດ. ໃນພາກນີ້ຈະເນັ້ນຜົນສຳເລັດຫຼັກ ເຊິ່ງລວມມີ:

ຜົນສຳເລັດທີ່ພົ້ນເດັ່ນໃນຂະແໜງການສຶກສາຄູ ແມ່ນເຫັນໄດ້ຈາກການປັບປຸງ, ຍົກລະດັບຄຸນນະພາບວິຊາການ-ວິຊາສະເພາະຂອງຄູສອນ ໃນບັນດາສະຖານການສຶກສາຄູ. ຄູມີຄຸນວຸດທິຕາມມາດຕະຖານທີ່ກຳນົດໄວ້, ມີການຝຶກອົບຮົມວິຊາສະເພາະ, ໄດ້ຮັບຕຳແໜ່ງວິຊາການຄູ ແລະ ໄດ້ຮັບການສະໜັບສະໜູນໃນການພັດທະນາວິຊາຊີບຄູຢ່າງຕໍ່ເນື່ອງ. ສະຖານການສຶກສາຄູຫຼາຍແຫ່ງ ໄດ້ຮັບການຢັ້ງຢືນສະຖານະພາບເປັນສູນແຫ່ງການພັດທະນາ ສຳລັບສາຍວິຊາຮຽນໃດໜຶ່ງໃນຫຼັກສູດສ້າງຄູ. ການປັບປຸງຄຸນນະພາບຂອງລະບົບ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໄດ້ເອົາໃຈໃສ່ໃນການສ້າງຂີດຄວາມສາມາດໃຫ້ແກ່ຄູສອນ ແລະ ພະນັກງານໃນສະຖານການສຶກສາຄູ ໃນການຝຶກອົບຮົມຄູປະຈຳການໃນທຸກຊັ້ນ, ທຸກສາຍ ແລະ ທຸກລະດັບ.

ຜົນສຳເລັດດ້ານຕົວຊີ້ບອກ ທີ່ຜ່ານມາ ແມ່ນສາມາດສັງລວມໄດ້ ດັ່ງໃນຕາຕະລາງ 19 ແລະ 20 ລຸ່ມນີ້:

**ຕາຕະລາງ 19: ການປຽບທຽບຕົວຊີ້ວັດຂອງການສ້າງຄູ ແຕ່ປີ** 2016-2020

| ຕົວຊີ້ວັດ | 2015-16 | 2016-17 | 2017-18 | 2018-19 | 2019-20 |
|---|---|---|---|---|---|
| ນັກສຶກສາຄູອະນຸບານ | 1.803 | 1.601 | 624 | 527 | 441 |
| ນັກສຶກສາຄູປະຖົມສຶກສາ | 1.607 | 5.52 | 336 | 429 | 388 |
| ນັກສຶກສາຄູມັດທະຍົມສຶກສາ | 1.960 | 1.904 | 1.861 | 1.707 | 575 |
| ນັກສຶກສາຄູພາລະສຶກສາ | 218 | 236 | 166 | 131 | 156 |
| ນັກສຶກສາຄູສິລະປະສຶກສາ | 154 | 137 | 172 | 151 | 154 |

ແຫຼ່ງຂໍ້ມູນ: ກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາ

**ຕາຕະລາງ 20: ນັກສຶກສາທີ່ຈົບຈາກສະຖາບັນສ້າງຄູ ແຕ່ປີ 2016-2020**

| ຕົວຊີ້ວັດ | 2015-16 | 2016-17 | 2017-18 | 2018-19 | 2019-20 |
|---|---|---|---|---|---|
| ນັກສຶກສາຄູກຽມປະຖົມ | 1.720 | 1.413 | 1.245 | 439 | 660 |
| ນັກສຶກສາຄູປະຖົມສຶກສາ | 1.655 | 619 | 480 | 117 | 501 |
| ນັກສຶກສາຄູມັດທະຍົມສຶກສາ | 3.721 | 3.546 | 1.278 | 1.294 | 767 |
| ນັກສຶກສາຄູພາລະສຶກສາ | 263 | 155 | 144 | 130 | 139 |
| ນັກສຶກສາຄູສິລະປະສຶກສາ | 162 | 154 | 159 | 155 | 133 |

ແຫຼ່ງຂໍ້ມູນ: ກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາ

### 1.2. ສິ່ງທ້າທາຍ

ໃນພາກທີ I (ຂໍ້ທີ 2 ແລະ 3) ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ຈະໃຫ້ລາຍລະອຽດເພີ່ມເຕີມກ່ຽວກັບສິ່ງທ້າທາຍ. ໃນພາກນີ້ຈະເນັ້ນສິ່ງທ້າທາຍຫຼັກເຊິ່ງລວມມີ:

ຜົນການຮຽນໃນຊັ້ນປະຖົມສຶກສາ ຍັງເປັນບັນຫາເລັ່ງດ່ວນ ທີ່ຕ້ອງຖືເປັນບູລິມະສິດໃນແຜນພັດທະນາການສຶກສາ ແລະ ກິລາ, ໂດຍສະເພາະຄວາມສາມາດໃນການອ່ານ-ຂຽນ ແລະ ການຄິດໄລ່ເລກຂັ້ນພື້ນຖານ. ສາຍເຫດທີ່ພາໃຫ້ຜົນການຮຽນຕໍ່າປະກອບມີ: ຈັນຍາບັນ ແລະ ຄວາມຮັບຜິດຊອບຕໍ່ໜ້າທີ່ຂອງຄູຈໍານວນໜຶ່ງຍັງບໍ່ສູງ; ຄວາມຮູ້ດ້ານວິຊາສະເພາະ ແລະ ທັກສະການສິດສອນຂອງຄູຍັງບໍ່ສູງ, ລວມທັງຂາດທັກສະໃນການສອນຫ້ອງຄວບ; ຄູສອນ ແລະ ອໍານວຍການໂຮງຮຽນຍັງບໍ່ເຂົ້າໃຈກ່ຽວກັບນະໂຍບາຍໃນການເລື່ອນຂັ້ນແບບຕໍ່ເນື່ອງ; ລະບົບຕິດຕາມປະເມີນການສອນຂອງຄູຍັງບໍ່ມີປະສິດທິພາບ; ການປະເມີນການຮຽນຂອງນັກຮຽນໃນຫ້ອງຮຽນບໍ່ເປັນປົກກະຕິ; ລະບົບການປະເມີນ ແລະ ການຄຸ້ມຄອງຄູຍັງບໍ່ໄດ້ດີ; ຫຼັກສູດການກໍ່ສ້າງຄູ ແລະ ຫຼັກສູດສາຍສາມັນຍັງບໍ່ສອດຄ່ອງກັນ; ຄຸນນະພາບຂອງການຝຶກຫັດວິຊາຊີບຄູຍັງບໍ່ສູງ; ການຝຶກອົບຮົມຄູປະຈໍາການຍັງບໍ່ມີປະສິດທິ ພາບເທົ່າທີ່ຄວນ ແລະ ບໍ່ທົ່ວເຖິງ; ການໃຫ້ການຊ່ວຍເຫຼືອຂອງຄູນິເທດຍັງບໍ່ທົ່ວເຖິງ ຍ້ອນມີຂໍ້ຈໍາກັດທາງດ້ານງົບ ປະມານ; ຍັງບໍ່ມີລະບົບການພັດທະນາວິຊາຊີບຂອງຄູນິເທດ ແລະ ຍັງບໍ່ມີລະບົບການສະໜັບສະໜູນດ້ານການພັດ ທະນາວິຊາຊີບຄູພາຍໃນໂຮງຮຽນ ຫຼື ກຸ່ມໂຮງຮຽນ. ສິ່ງທ້າທາຍອີກຈໍານວນໜຶ່ງ ປະກອບມີ: ຄວາມສອດຄ່ອງກັນລະຫວ່າງການວາງແຜນການສ້າງຄູ ແລະ ຕົວເລກການບັນຈຸຄູ ເພື່ອສະໜອງຄູໃຫ້ແກ່ບາງວິຊາທີ່ຂາດຄູ; ການພັດທະນາລະບົບການຝຶກອົບຮົມຄູປະຈໍາການພາຍໃນໂຮງຮຽນ; ການພັດທະນາຄູ ແລະ ເຄືອຂ່າຍວິຊາຊີບຄູ ເພື່ອຮ່ວມມືກັນໃນການພັດທະນາຄຸນນະພາບການຮຽນການສອນ ໂດຍສະເພາະການແລກປ່ຽນບົດຮຽນລະຫວ່າງຄູດ້ວຍກັນ; ການພັດທະນາລະບົບປະກັນຄຸນນະພາບ ແລະ ການພັດທະນາບຸກຄະລາກອນໃນສະຖານການສຶກສາຄູ. ເຖິງແມ່ນວ່າມາດຖານຄູ ໄດ້ຖືກຮັບຮອງແລ້ວໃນປີ 2015, ແຕ່ຍັງບໍ່ທັນສອດຄ່ອງກັບຂອບສະມັດຖະພາບຄູອາຊຽນ ຊຶ່ງມີຄວາມຈໍາເປັນຕ້ອງໄດ້ມີການປັບປຸງຕື່ມ.

## 2. ບູລິມະສິດສໍາລັບປີ 2021-2025

ສໍາລັບປີ 2021-2025, ເມືອງທີ່ດ້ອຍໂອກາດແມ່ນບັນດາເມືອງທີ່ຖືກບັນຈຸຢ່າງເປັນທາງການເຂົ້າໃນບັນຊີ 40 ເມືອງຂອງກະຊວງສຶກສາ ແລະ ກິລາ

### 2.1. ຈຸດປະສົງ

1) ສືບຕໍ່ສຸມໃສ່ການສຶກສາຊັ້ນປະຖົມ ເພື່ອຍົກລະດັບຄວາມຮູ້ ແລະ ທັກສະດ້ານເນື້ອໃນຫຼັກສູດ ແລະ ການສອນຂອງຄູໃຫ້ມີຄຸນນະພາບ. ການສຸມໃສ່ການສຶກສາຊັ້ນປະຖົມນີ້ ຈໍາເປັນຕ້ອງໄດ້ອາໃສງົບປະມານຢ່າງຫຼວງຫຼາຍຈາກລັດຖະບານ ແລະ ບັນດາຄູ່ຮ່ວມພັດທະນາ. ສະຖານການສຶກສາຄູ ຕ້ອງເປັນສູນກາງໃຫ້ບໍລິການວຽກງານພັດທະນາວິຊາຊີບຄູ ລວມທັງການສ້າງຄູ ແລະ ການຝຶກອົບຮົມຄູປະຈໍາການ. ມາດຕະຖານການສອນທີ່ເໝາະສົມໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບ ແລະ ນໍາໃຊ້ເປັນພື້ນຖານໃນການປະເມີນຜົນການຈັດຮຽນການສອນຂອງຄູປະຖົມ.
2) ການຂະຫຍາຍມັດທະຍົມຕອນຕົ້ນຕ້ອງເປັນໄປຕາມຄວາມອາດສາມາດ ແລະ ສອດຄ່ອງກັບຕົວຈິງ. ຄູສອນຈະຕ້ອງໄດ້ຮັບການຝຶກອົບຮົມເພື່ອໃຫ້ກາຍເປັນຜູ້ຊ່ຽວຊານໃນຫຼາຍວິຊາ. ເພື່ອໃຫ້ບັນລຸໄດ້ຈຸດປະສົງດັ່ງກ່າວ, ສະຖານການສຶກສາຄູຕ້ອງໄດ້ຮັບການຍົກລະດັບ ເພື່ອຮອງຮັບພາລະບົດບາດໃນການຝຶກອົບຮົມຄູສອນຊັ້ນມັດທະຍົມຕອນຕົ້ນໃຫ້ສອນໄດ້ຫຼາຍວິຊາ.
3) ສືບຕໍ່ຈັດຕັ້ງປະຕິບັດແຜນພັດທະນາຄູ ແລະ ບຸກຄະລາກອນຂອງຂອງກະຊວງສຶກສາທິການ ແລະ ກິລາ ທີ່ໄດ້ປັບປຸງແລ້ວ ເພື່ອໃຫ້ຄວາມສາມາດຂອງພະນັກງານສຶກສາທິການ ແລະ ກິລາ ຕອບສະໜອງຄວາມຕ້ອງ ການໃນປະຈຸບັນ ແລະ ອະນາຄົດຢ່າງມີປະສິດທິຜົນ. ກົມສ້າງຄູມີບົດບາດສໍາຄັນໃນການປະສານສົມທົບກັບ ກົມສາມັນສຶກສາ, ສວສ, ສະຖານການສຶກສາຄູ ແລະ ພາກສ່ວນທີ່ກ່ຽວຂ້ອງ ສໍາລັບການສ້າງ ແລະ ພັດທະ ນາບັນດາວຽກງານດັ່ງຕໍ່ໄປນີ້:

- ພັດທະນາຫຼັກສູດສ້າງຄູ ແລະ ການຝຶກອົບຮົມຄູປະຈຳການໃຫ້ມີຄຸນນະພາບ ແລະ ສອດຄ່ອງໃນຫຼາຍແຜນງານ ໂດຍສຸມໃສ່ການເພີ່ມທະວີການຝຶກອົບຮົມພາຍໃນໂຮງຮຽນ ແລະ ກຸ່ມໂຮງຮຽນ;
- ການສະໜັບສະໜູນ-ຊ່ວຍເຫຼືອ ທາງດ້ານຂີດຄວາມສາມາດ ໃຫ້ແກ່ຄູສອນຫ້ອງຄວບ;
- ທົບທວນແຜນງານການຝຶກອົບຮົມຄູປະຈຳການຊັ້ນມັດທະຍົມ ໂດຍອີງໃສ່ມາດຕະຖານຂອງຄູ ແລະ ຜົນຂອງການປະເມີນຄູ.

ຄຽງຄູ່ກັນນັ້ນ, ມາດຖານການສຶກສາກ່ອນໄວຮຽນ, ການສຶກສາຊັ້ນປະຖົມ ແລະ ມັດທະຍົມ ຈະຕ້ອງໄດ້ຮັບການທົບທວນ ແລະ ພັດທະນາໃຫ້ສອດຄ່ອງກັບສະພາບການປະຈຸບັນເພື່ອເປັນເອກະສານພື້ນຖານໃນການປະເມີນການສອນ.

4) ຍົກລະດັບຜົນການຮຽນໃຫ້ສູງຂຶ້ນ ແລະ ຫຼຸດຜ່ອນຄວາມແຕກໂຕນ ໂດຍສະເພາະໃນ 40 ເມືອງ ທີ່ດ້ອຍໂອກາດ, ໜ້າທີ່ຫຼັກຂອງການສ້າງຄູ ແມ່ນສ້າງຄວາມເຂັ້ມແຂງຄວາມຮູ້ດ້ານວິຊາສະເພາະ, ວິຊາຄູ ແລະ ທັກສະອື່ນໆ ໃຫ້ແກ່ຄູ. ຄຽງຄູ່ກັນນັ້ນ ຕ້ອງມີການຕິດຕາມ ແລະ ປະເມີນຄວາມຕ້ອງການ ແລະ ການສະໜອງຄູໃນທຸກລະດັບ ເພື່ອຮັບປະກັນໃຫ້ການບັນຈຸ ແລະ ນຳໃຊ້ຄູມີຄວາມຖືກຕ້ອງສອດຄ່ອງ ແລະ ມີປະສິດທິພາບ.
5) ສະຖາບັນການສຶກສາຄູ ມີໜ້າທີ່ໃນການສະໜັບສະໜູນ ແລະ ບໍລິການສັງຄົມທາງດ້ານວິຊາການ, ການຄົ້ນຄວ້າ, ການວິເຄາະ ແລະ ການກະກຽມຄູທີ່ມີຄວາມຮູ້ຄວາມສາມາດ ແລະ ທັກສະພື້ນຖານຕ່າງໆ ໂດຍສະເພາະ ທັກສະດ້ານ ວິຊາວິທະຍາສາດ, ເທັກໂນໂລຢີ, ວິສະວະກຳສາດ ແລະ ຄະນິດສາດ STEM ແລະ ຄວາມຮູ້ດ້ານເພດສຶກສາ.

## 2.2. ຄາດໝາຍ

ຂໍ້ມູນປີຖານ ແລະ ຄາດໝາຍ ສຳລັບຕົວຊີ້ບອກທີ່ສຳຄັນໄດ້ສະໜອງໄວ້ໃນພາກ I, ຂໍ້ 8.5 (ຕາຕະລາງຕິດຕາມ ແລະ ປະເມີນຜົນ). ຕົວຊີ້ບອກຫຼັກ ແລະ ຄາດໝາຍ 2025 ສຳລັບຂະແໜງຍ່ອຍນີ້ ແມ່ນ:

1) ຫຼັກສູດຝຶກອົບຮົມຄູກຽມປະຈຳການ ແລະ ຄູປະຈຳການ ທຸກລະດັບ ແລະ ທຸກສາຍແມ່ນໄດ້ຮັບການທົບທວນ ແລະ ປັບປຸງ;
2) ຫຼັກສູດຝຶກອົບຮົມຄູກຽມປະຈຳການ ແລະ ຄູປະຈຳການ ທຸກລະດັບ ແລະ ທຸກສາຍແມ່ນໄດ້ຮັບການທົບທວນ ແລະ ປັບປຸງ
3) ເປີເຊັນຂອງຄູປະຈຳການທີ່ໄດ້ຮັບການຝຶກອົບຮົມ ສະເລ່ຍ 20% ໃນແຕ່ລະຊັ້ນການສຶກສາ;
4) ມາດຖານການສອນໄດ້ຖືກອະນຸມັດໃຫ້ຈັດຕັ້ງປະຕິບັດ ໃນທຸກສາຍ ແລະ ທຸກລະດັບ;
5) ຢ່າງໜ້ອຍ 70% ຂອງຄູໃນສະຖາບັນສ້າງຄູ ໂດຍສະເພາະຄູສາຍວິທະຍາສາດທຳມະຊາດໄດ້ຮັບການປະເມີນ ແລະ ຮັບຮອງໃນລະດັບມາດຕະຖານ.
6) ວິທະຍາໄລຄູ ຢ່າງໜ້ອຍ 3 ແຫ່ງໄດ້ຖືກຮັບຮອງຍົກເປັນສະຖາບັນການສຶກສາຄູ.

## 2.3. ຜົນໄດ້ຮັບລະດັບສູງ

<u>**ໝາຍເຫດ**</u>: ສຳລັບແຕ່ລະຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ ຈະມີການອ້າງອີງທີ່ຂຽນໄວ້ໃນວົງ ເລັບຫຼັງຈາກສຳນວນທີ່ກ່າວເຖິງ ໃນພາກທີ I ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025. ທັງນີ້ກໍເພື່ອເຮັດໃຫ້ຜູ້ອ່ານສາມາດນຳໃຊ້ແຜນຂະແໜງການຍ່ອຍສ້າງຄູໄດ້ໂດຍກົງ ແຕ່ສາມາດອີງເຖິງນະໂຍບາຍທີ່ກ່ຽວຂ້ອງ ດັ່ງທີ່ໄດ້ລະບຸໄວ້ໃນພາກ I. ແຜນຂະແໜງການຍ່ອຍນີ້ ບໍ່ຈຳເປັນຕ້ອງໃຫ້ສາມາດບັນລຸໄດ້ທຸກໆຜົນໄດ້ຮັບລະດັບກາງ ຂອງແຕ່ລະຜົນໄດ້ຮັບລະດັບສູງ. ບາງຜົນໄດ້ຮັບລະດັຍສູງ ແລະ ຜົນໄດ້ຮັບລະດັບກາງ ໄດ້ຖືກດັດແກ້ເພື່ອປັບໃຫ້ເຂົ້າກັບເປົ້າໝາຍຂອງຂະແໜງການຍ່ອຍ.

ແຜນການຂະແໜງການຍ່ອຍການສ້າງຄູມີຈຸດປະສົງຢາກບັນລຸ 3 ຜົນໄດ້ຮັບລະດັບສູງທີ່ໄດ້ລະບຸໄວ້ໃນພາກທີ I. ຜົນໄດ້ຮັບລະດັບກາງໄດ້ຖືກຈັດປະເພດຕາມຍຸດທະສາດອອກເປັນ 2 ໂຄງເຂດບູລິມະສິດ ດັ່ງຕໍ່ໄປນີ້:

1) ເສີມສ້າງຂີດຄວາມສາມາດທີ່ກ່ຽວຂ້ອງ ເພື່ອຮັບປະກັນຄຸນນະພາບຂອງຄູສອນໃນທຸກລະດັບ.
2) ປັບປຸງນະໂຍບາຍ, ນິຕິກຳ ແລະ ມາດຕະຖານສຳລັບແຜນງານການພັດທະນາຄູທີ່ມີຄຸນນະພາບ.

### 2.3.1. ຈຳນວນນັກຮຽນທີ່ຈົບຈາກການສຶກສາກ່ອນໄວຮຽນ ຈົນຮອດມັດທະຍົມຕອນປາຍ ລວມທັງການສຶກສານອກໂຮງຮຽນເພີ່ມຂຶ້ນ ພ້ອມດ້ວຍຜົນການຮຽນຮູ້ທີ່ດີຂຶ້ນ ໂດຍສະເພາະແມ່ນທັກສະການອ່ານ, ການຂຽນ ແລະ ການຄິດໄລ່ ລວມທັງທັກສະອື່ນໆໃນສັດຕະວັດທີ 21 ໂດຍເນັ້ນໃສ່ຜູ້ທີ່ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ (ພາກທີ I, ຜົນໄດ້ຮັບລະດັບສູງທີ 1).

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ຂອງແຜນ 5 ປີ ສຳລັບລາຍລະອຽດຂອງຫຼັກການ ແລະ ເຫດຜົນ. ດັ່ງທີ່ໄດ້ກ່າວມາຂ້າງເທິງ ຜົນການຮຽນ ໂດຍສະເພາະການອ່ານອອກ, ຂຽນເປັນ ແລະ ການຄິດໄລ່ເລກເປັນ ແມ່ນຖືວ່າຢູ່ໃນຈຸດວິກິດ ເຊິ່ງເຫັນວ່າຜົນການຮຽນຂອງນັກຮຽນຊັ້ນປະຖົມຍັງຕໍ່າຫຼາຍ ແລະ ເປັນຜົນກະທົບອັນບໍ່ດີຕໍ່ກັບຜົນການຮຽນໃນຊັ້ນຕໍ່ໆໄປ.

**<u>ໂຄງເຂດບູລິມະສິດທີ 1: ປັບປຸງຄຸນນະພາບການສິດສອນ.</u>**

**ຜົນໄດ້ຮັບລະດັບກາງທີ 1: ຜົນການຮຽນຂອງນັກຮຽນ ປ.3, ປ.5, ມ.4 ແລະ ມ.6 ໄດ້ຮັບການປັບປຸງດີຂຶ້ນ (ພາກທີ I ຜົນໄດ້ຮັບລະດັບສູງທີ 1, ຜົນໄດ້ຮັບລະດັບກາງ 1.2)**

**<u>ຍຸດທະສາດທີ 1</u>**: ພັດທະນາ ແລະ ປະຕິບັດ ແຜນງານການຝຶກອົບຮົມຄູປະຈຳການໃນການນຳໃຊ້ຫຼັກສູດໃໝ່ໃນທົ່ວປະເທດ.

**<u>ວຽກຈຸດສຸມ:</u>**

- ຈັດຝຶກອົບຮົມການນຳໃຊ້ປຶ້ມແບບຮຽນໃໝ່ທີ່ສອດຄ່ອງກັບຫຼັກສູດໃໝ່ສຳລັບຄູສອນສາຍສາມັນສຶກສາ;
- ຈັດຝຶກອົບຮົມການສອນພາສາລາວໃຫ້ແກ່ຄູສອນເດັກຊົນເຜົ່າ;
- ຈັດຝຶກອົບຮົມການສຶກສາຮຽນຮ່ວມ ລວມທັງຄວາມສະເໝີພາບລະຫວ່າງຍິງ-ຊາຍໃຫ້ແກ່ຄູສອນໃນທຸກສາຍ;
- ຈັດຝຶກອົບຮົມກ່ຽວກັບການປະເມີນຜົນສຳເລັດທາງດ້ານການຮຽນສຳລັບຄູສອນທຸກໆສາຍ;

**<u>ຍຸດທະສາດທີ 2</u>**: ປັບປຸງລະບົບການສະໜັບສະໜູນ ແລະ ຊ່ວຍເຫຼືອຄູສອນຫ້ອງຄວບ

ຢາກມີຜົນສຳເລັດຢ່າງແທ້ຈິງຂອງຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ /ຫຼື ງົບປະມານການຊ່ວຍເຫຼືອທາງການເພື່ອການພັດທະນາຕ້ອງສຸມໃສ່ຍຸດທສາດນີ້.

**<u>ວຽກຈຸດສຸມ:</u>**

- ຈັດການຝຶກອົບຮົມການສອນຫ້ອງຄວບໃຫ້ແກ່ຄູປະຖົມ;
- ຕິດຕາມ ແລະ ປະເມີນຜົນການຮຽນ-ການສອນຫ້ອງຄວບໃນໂຮງຮຽນປະຖົມ;
- ທົບທວນນິຕິກຳກ່ຽວກັບຄູສອນຫ້ອງຄວບ;

### 2.3.2. ຈຳນວນຄູສອນ ແລະ ຜູ້ອຳນວຍການໂຮງຮຽນທີ່ມີຄວາມຮູ້ຄວາມສາມາດເພີ່ມຂຶ້ນ ເພື່ອຕອບສະໜອງ ໄດ້ກັບມາດຕະຖານການສິດສອນ ພ້ອມທັງຖືກນຳໃຊ້ເພື່ອເປັນບ່ອນອີງໃນການພັດທະນາວິຊາຊີບຂອງພວກເຂົາ ພ້ອມດ້ວຍມີການປະເມີນຜົນຢ່າງເປັນປົກກະຕິ. (ພາກທີ I, ຜົນໄດ້ຮັບທີ 2)

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ສຳລັບລາຍລະອຽດເພີ່ມເຕີມ. ວິທະຍາໄລຄູຈະໄດ້ຮັບການສະໜັບສະໜູນ ເພື່ອໃຫ້ກາຍເປັນສູນແຫ່ງພັດທະນາວິຊາຊີບສຳລັບການຝຶກອົບຮົມຄູກ່ອນປະຈຳການ ແລະ ຄູປະຈຳການ ລວມທັງຄູນິເທດ ໂດຍການນຳໃຊ້ຮູບແບບຕ່າງໆ ລວມທັງການເນັ້ນໃສ່ການສືບຕໍ່ພັດທະນາດ້ານວິຊາຊີບຂອງຄູ ແລະ ຜູ້ອຳນວຍການຢູ່ໂຮງຮຽນ ແລະ ທ້ອງຖິ່ນຢ່າງຕໍ່ເນື່ອງ.

<u>ໂຄງເຂດບູລິມະສິດທີ 1: ປັບປຸງຄຸນນະພາບການສິດສອນ.</u>

**ຜົນໄດ້ຮັບລະດັບກາງທີ 1: ຫຼັກສູດຝຶກອົບຮົມຄູກ່ອນປະຈາການ ແລະ ຄູປະຈຳການຫ້ອງກຽມປະ ຖົມ, ປະຖົມສຶກສາ, ມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍໄດ້ຮັບການປັບປຸງ ແລະ ຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບຫຼັກສູດການຮຽນ-ການສອນໃໝ່ ແລະ ສອດຄ່ອງກັບມາດຖານການສອນ. (ພາກທີ I ຜົນໄດ້ຮັບລະດັບສູງທີ 2, ຜົນໄດ້ຮັບລະດັບກາງ 2.2)**

<u>**ຍຸດທະສາດທີ 1:**</u> ທົບທວນ ແລະ ປັບປຸງຫຼັກສູດຝຶກອົບຮົມຄູກ່ອນປະຈຳການ ແລະ ຄູປະຈຳການ

<u>**ວຽກຈຸດສຸມ:**</u>

- ປັບປຸງກົນໄກການປະສານງານແຕ່ສູນກາງຮອດທ້ອງຖິ່ນທີ່ມີສ່ວນຮ່ວມໃນການຝຶກອົບຮົມຄູປະຈຳການ;
- ທົບທວນຜົນການປະເມີນຜົນການເຮັດວຽກຂອງຄູ ແລະ ນຳໃຊ້ຜົນການປະເມີນດັ່ງກ່າວ ເຂົ້າໃນການພັດທະນາຫຼັກສູດການຝຶກອົບຮົມຄູປະຈຳການ;
- ປັບປຸງຫຼັກສູດຝຶກອົບຮົມຄູກ່ອນປະຈຳການ ແລະ ຄູປະຈຳການໃຫ້ສອດຄ່ອງກັບຫຼັກສູດໃໝ່ ຊັ້ນອະນຸບານ, ຫ້ອງກຽມປະຖົມ, ຊັ້ນປະຖົມສຶກສາ ແລະ ມັດທະຍົມສຶກສາ;
- ສ້າງຄູ່ມື ແລະ ຈັດຕັ້ງການຝຶກອົບຮົມໃນການປະຕິບັດຫຼັກສູດໃໝ່ໃຫ້ແກ່ຄູ ແລະ ພະນັກງານທີ່ຮັບຜິດຊອບວຽກງານດັ່ງກ່າວ.

**ຜົນໄດ້ຮັບລະດັບກາງ 2: ລະບົບການສະໜັບສະໜູນ-ຊ່ວຍເຫຼືອທາງດ້ານການສອນໃຫ້ແກ່ຄູປະ ຈຳການ ມີຄວາມເຂັ້ມແຂງຂຶ້ນ ເພື່ອໃຫ້ເປັນລະບົບ ແລະ ມີປະສິດທິຜົນ (ພາກທີ I ຜົນໄດ້ຮັບລະ ດັບສູງທີ 2, ຜົນໄດ້ຮັບລະດັບກາງ 2.1 ແລະ 2.4)**

<u>**ຍຸດທະສາດທີ 1:**</u> ທົບທວນ ແລະ ປັບປຸງໂຄງສ້າງການສະໜັບສະໜູນການນິເທດຈາກກຸ່ມໂຮງຮຽນ ແລະ ສຶກສາເມືອງ ທັງນິເທດພາຍໃນ ແລະ ພາຍນອກ.

<u>**ວຽກຈຸດສຸມ:**</u>

- ສ້າງຮູບແບບທີ່ສາມາດນຳໃຊ້ ແລະ ມີຄວາມຍືນຍົງ ເພື່ອໃຫ້ການສະໜັບສະໜູນ, ໃຫ້ຄຳປຶກສາກ່ຽວກັບວິທີການສິດສອນຮ່ວມກັນລະຫວ່າງສະຖານການສຶກສາຄູ, ສະມາຄົມຄູ-ພໍ່ແມ່ຜູ້ປົກຄອງ, ສຶກສາເມືອງ, ກຸ່ມໂຮງຮຽນ, ໂຮງຮຽນ ແລະ ຜູ້ອຳນວຍການໂຮງຮຽນ ໂດຍມີການກຳນົດພາລະບົດບາດຂອງແຕ່ລະພາກສ່ວນ;
- ສ້າງຄວາມເຂັ້ມແຂງໃນການສະໜັບສະໜູນການພັດທະນາວິຊາຊີບຢ່າງຕໍ່ເນື່ອງຂອງຄູສຶກສານິເທດ;

- ສ້າງຄວາມເຂັ້ມແຂງ ແລະ ສ້າງຂີດຄວາມອາດສາມາດໃຫ້ແກ່ວຽກງານນິເທດພາຍໃນໂຮງຮຽນ ແລະ ກຸ່ມໂຮງຮຽນ.

**ຜົນໄດ້ຮັບລະດັບກາງທີ 3: ການສ້າງຄູກ່ອນປະຈຳການ ແລະ ການຝຶກອົບຮົມຄູປະຈຳການຊັ້ນອະ ນຸບານ, ປະຖົມ ແລະ ມັດທະຍົມ ໄດ້ຮັບການປັບປຸງ ແລະ ຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ (ພາກທີ I ຜົນໄດ້ຮັບລະດັບສູງທີ 2, ຜົນໄດ້ຮັບລະດັບກາງທີ 2.1 ແລະ 2.2)**

**<u>ຍຸດທະສາດທີ 1</u>**: ທົບທວນ ແລະ ປັບປຸງແຜນງານການຝຶກອົບຮົມຄູປະຈຳການຊັ້ນອະນຸບານ, ປະຖົມ ແລະ ມັດທະຍົມໃນການນຳໃຊ້ຫຼັກສູດການຝຶກອົບຮົມໃໝ່

**<u>ວຽກຈຸດສຸມ:</u>**

- ທົບທວນ ແລະ ປັບປຸງໂຄງການຝຶກອົບຮົມຄູໃນໄລຍະສັ້ນໃຫ້ແກ່ຄູປະຈຳການສຳລັບຊັ້ນກຽມປະຖົມ, ປະຖົມ ແລະ ມັດທະຍົມ ເພື່ອຮັບປະກັນໃຫ້ສອດຄ່ອງກັບຫຼັກສູດໃໝ່;
- ທົດລອງແຜນງານການຝຶກອົບຮົມຄູໃນໄລຍະສັ້ນໃຫ້ແກ່ຄູປະຈຳການ ຊັ້ນກຽມປະຖົມ, ປະຖົມ ແລະ ມັດທະຍົມ;
- ສຳເລັດແຜນງານທົດລອງການຝຶກອົບຮົມຄູປະຈຳການ ແລະ ດຳເນີນການຝຶກອົບຮົມໃນຂອບເຂດທົ່ວປະເທດ;

**<u>ຍຸດທະສາດທີ 2</u>**: ທົບທວນ ແລະ ປັບປຸງຫຼັກສູດສ້າງຄູກ່ອນປະຈຳການ ສຳລັບຊັ້ນກຽມປະຖົມ, ປະຖົມ ແລະ ມັດທະຍົມ ເພື່ອໃຫຫ້ສອດຄ່ອງກັບຫຼັກສູດໃໝ່

**<u>ວຽກຈຸດສຸມ:</u>**

- ປັບປຸງຫຼັກສູດສ້າງຄູກ່ອນປະຈຳການ ສຳລັບຊັ້ນກຽມປະຖົມ, ປະຖົມ ແລະ ມັດທະຍົມ ເພື່ອຮັບປະກັນໃຫ້ສອດຄ່ອງກັບຫຼັກສູດໃໝ່ຂອງໂຮງຮຽນ;
- ທົດລອງຈັດຕັ້ງປະຕິບັດຫຼັກສູດສ້າງຄູສຳລັບຫ້ອງກຽມປະຖົມ, ປະຖົມ ແລະ ມັດທະຍົມ;
- ສຳເລັດການສ້າງຫຼັກສູດສ້າງຄູກ່ອນປະຈຳການ ແລະ ດຳເນີນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ;

**<u>ຍຸດທະສາດທີ 3</u>**: ສ້າງຄວາມເຂັ້ມແຂງໃຫ້ແກ່ສູນພັດທະນາຄູຂັ້ນແຂວງ ເພື່ອສະໜອງການຝຶກອົບຮົມໃຫ້ແກ່ຄູປະຈຳການ.

ຢາກມີຜົນສຳເລັດຢ່າງແທ້ຈິງຂອງຍຸດທະສາດນີ້ ຈະຕ້ອງມີການສະໜອງງົບປະມານໃຫ້ສອດຄ່ອງກັບສົມມຸດຖານດ້ານົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອທາງການເພື່ອການພັດທະນາ ຕ້ອງສຸມໃສ່ຍຸດທະສາດນີ້.

**<u>ວຽກຈຸດສຸມ:</u>**

- ປັບປຸງພາລະບົດບາດຂອງສູນພັດທະນາຄູຂັ້ນແຂວງ ທີ່ບໍ່ມີສະຖານການສຶກສາຄູຕັ້ງຢູ່;
- ຈັດຝຶກອົບຮົມຫົວຂໍ້ທີ່ຈຳເປັນໃຫ້ແກ່ພະນັກງານຂອງສູນພັດທະນາຄູແຂວງ ເພື່ອຍົກສູງຄວາມສາມາດດ້ານວິຊາການ ແລະ ວິຊາສະເພາະ;
- ປັບປຸງລະບົບຖານຂໍ້ມູນການຝຶກອົບຮົມຄູ;

**ຜົນໄດ້ຮັບລະດັບກາງທີ 4: ສະຖານການສຶກສາຄູ ຖືກຍົກຖານະເປັນສູນແຫ່ງການພັດທະນາວິຊາຊີບຄູ (ພາກທີ I ຜົນໄດ້ຮັບລະດັບສູງ 2, ຜົນໄດ້ຮັບລະດັບກາງ 2.4)**

**<u>ຍຸດທະສາດທີ 1:</u>** ພັດທະນາ ແລະ ນຳໃຊ້ມາດຕະຖານການສິດສອນຢ່າງເປັນປົກະຕິ ໃນການປະເມີນຜົນການປະຕິບັດໜ້າທີ່ຂອງຄູສອນຢູ່ສະຖາບັນສ້າງຄູ

**<u>ວຽກຈຸດສຸມ</u>**

- ພັດທະນາເຄື່ອງມືການປະເມີນຜົນການປະຕິບັດໜ້າທີ່ຂອງຄູສອນຢູ່ສະຖາບັນສ້າງຄູ ທີ່ຕິດພັນກັບມາດຕະຖານດ້ານວິຊາຊີບຂອງຄູ;
- ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ໃນການນຳໃຊ້ເຄື່ອງມືປະເມີນຜົນເຫຼົ່ານີ້ເຂົ້າໃນການປະເມີນຄູໃນສະຖາບັນສ້າງຄູ;
- ປັບປຸງ ແລະ ຮັບປະກັນລະບົບການພັດທະນາອາຊີບການສອນທີ່ມີຄວາມກ້າວໜ້າ ສຳລັບຄູສອນຢູ່ສະຖາບັນສ້າງຄູ.

**<u>ຍຸດທະສາດທີ 2:</u>** ອອກແບບ ແລະ ຈັດຕັ້ງປະຕິບັດແຜນງານການຝຶກອົບຮົມຢ່າງເປັນລະບົບໃຫ້ແກ່ຄູອາຈານສອນໃນສະຖາບັນສ້າງຄູ

**<u>ວຽກຈຸດສຸມ</u>**

- ອອກແບບແຜນງານການຝຶກອົບຮົມໃຫ້ຄູສອນໃນສະຖາບັນສ້າງຄູ ໂດຍອີງໃສ່ຜົນໄດ້ຮັບຈາກການປະເມີນຜົນການປະຕິບັດໜ້າທີ່ຂອງເຂົາເຈົ້າ;
- ດຳເນີນການຝຶກອົບຮົມເພື່ອຍົກລະດັບຄວາມຮູ້ຄວາມສາມາດຂອງຄູສອນໃນສະຖາບັນສ້າງຄູ.

**<u>ຍຸດທະສາດທີ 3:</u>** ສ້າງຄວາມເຂັ້ມແຂງໃນການເຊື່ອມໂຍງກັນລະຫວ່າງສະຖາບັນສ້າງຄູ ແລະ ຄະນະສຶກສາສາດຂອງມະຫາວິທະຍາໄລ ທີ່ຕັ້ງຢູ່ແຂວງດຽວກັນ ເພື່ອສ້າງໃຫ້ເປັນສະຖາບັນພັດທະນາຄູ ແລະ ເພື່ອປັບປຸງການຮ່ວມມືກັນ.

**<u>ວຽກຈຸດສຸມ</u>**

- ສ້າງຂໍ້ສະເໜີກ່ຽວກັບວິທີການສ້າງຕັ້ງສະຖາບັນພັດທະນາຄູ ທີ່ມີປະສິດທິພາບ ແລະ ປະສິດທິຜົນ;
- ຮ່າງນິຕິກຳ ແລະ ລະບຽບການຕ່າງໆ ເພື່ອສະໜັບສະໜູນການສ້າງຕັ້ງສະຖາບັນພັດທະນາຄູ;

**<u>ໂຂງເຂດຍຸດທະສາດທີ 2: ປັບປຸງນະໂຍບາຍ, ນິຕິກຳ ແລະ ມາດຕະຖານສຳລັບແຜນງານການພັດທະນາຄູທີ່ມີຄຸນນະພາບ.</u>**

**ຜົນໄດ້ຮັບລະດັບກາງ 5: ມາດຖານການສອນສຳລັບຄູກຽມປະຖົມ, ປະຖົມ ແລະ ມັດທະຍົມ ໄດ້ຮັບການພັດທະນາ, ອະນຸມັດ ແລະ ຈັດຕັ້ງປະຕິບັດ (ພາກທີ I ຜົນໄດ້ຮັບ]ລະດັບສູງທີ 2, ຜົນໄດ້ຮັບລະດັບກາງ 2.3).**

**<u>ຍຸດທະສາດທີ 1</u>**: ພັດທະນາຂີດຄວາມສາມາດດ້ານວິຊາການ ແລະ ດ້ານການຄຸ້ມຄອງ ເພື່ອຈັດຕັ້ງປະຕິບັດ ແລະ ຕິດຕາມມາດຕະຖານການສິດສອນ, ພ້ອມທັງພິຈາລະນາເຖິງບັນຫາທີ່ເນັ້ນໃສ່ການແຕ່ງບົດສອນຫຼາຍເກີນໄປ ແທນທີ່ຈະເນັ້ນໃສ່ຜົນການຮຽນຂອງນັກຮຽນ.

**<u>ວຽກຈຸດສຸມ:</u>**

- ທົບທວນວິທີການປະເມີນມາດຖານການສອນທີ່ມີໃນປັດຈຸບັນ ແລະ ສ້າງ/ທົບທວນມາດຕະຖານການສອນສຳລັບ ຄູອະນຸບານ, ປະຖົມ ແລະ ມັດທະຍົມ;
- ສ້າງຄູ່ມືທີ່ເໝາະສົມໃນການຈັດຕັ້ງປະຕິບັດມາດຕະຖານການສອນຂອງຄູ;

- ຈັດຝຶກອົບຮົມໃຫ້ແກ່ຄູ ແລະ ບຸກຄະລາກອນການສຶກສາ ທີ່ມີຄວາມຮັບຜິດຊອບຕໍ່ການພັດທະນາ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມມາດຖານການສອນ;
- ປັບປຸງ ແລະ ຈັດຕັ້ງປະຕິບັດນິຕິກຳກ່ຽວກັບການອອກໃບຢັ້ງຢືນການສອນ ແລະ ການອອກໃບອະນຸຍາດການສອນ.

**ຜົນໄດ້ຮັບລະດັບກາງທີ 6: ສາເລັດການສ້າງເຄື່ອງມືການປະເມີນຜົນການປະຕິບັດໜ້າທີ່ຂອງຄູອະ ນຸບານ, ປະຖົມ ແລະ ມັດທະຍົມ ໂດຍອີງໃສ່ມາດຕະຖານການສອນ (ພາກທີ I ຜົນໄດ້ຮັບລະດັບສູງທີ 2, ຜົນໄດ້ຮັບລະດັບກາງ 2.3)**

**<u>ຍຸດທະສາດທີ 1:</u>** ສ້າງເຄື່ອງມືການປະເມີນຜົນການປະຕິບັດໜ້າທີ່ຂອງຄູອະນຸບານ, ປະຖົມ ແລະ ມັດທະຍົມ ໂດຍເນັ້ນໃສ່ຜົນການຮຽນຂອງນັກຮຽນເປັນຫຼັກ.

**<u>ວຽກຈຸດສຸມ:</u>**

- ຮ່າງເຄື່ອງມືເພື່ອປະເມີນຜົນການເຮັດວຽກຂອງຄູ;
- ທົດລອງນຳໃຊ້ເຄື່ອງມືເພື່ອປະເມີນຜົນການເຮັດວຽກຂອງຄູ;
- ພັດທະນາເຄື່ອງມືໃຫ້ສົມບູນ ແລະ ອະນຸມັດນຳໃຊ້.

**<u>ຍຸດທະສາດທີ 2:</u>** ເຮັດການປະເມີນຜົນການເຮັດວຽກຂອງຄູຢ່າງເປັນລະບົບໂດຍນຳໃຊ້ເຄື່ອງມືທີ່ໄດ້ພັດທະນາໃໝ່

ຢາກມີຜົນສຳເລັດຢ່າງແທ້ຈິງຂອງຍຸດທະສາດນີ້ ຈະຕ້ອງມີການສະໜອງງົບປະມານໃຫ້ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ /ຫຼື ງົບປະມານການຊ່ວຍເຫຼືອທາງການເພື່ອການພັດທະນາ ຕ້ອງສຸມໃສ່ຍຸດທະສາດນີ້.

**<u>ວຽກຈຸດສຸມ:</u>**

- ດຳເນີນການຝຶກອົບຮົມການນຳໃຊ້ເຄື່ອງມືເພື່ອປະເມີນຜົນການເຮັດວຽກຂອງຄູ;
- ນຳໃຊ້ເຄື່ອງມືເພື່ອປະເມີນຜົນການເຮັດວຽກຂອງຄູ;
- ວິເຄາະຜົນການປະເມີນຂອງການເຮັດວຽກຂອງຄູ ແລະ ນຳໃຊ້ເຂົ້າໃນການພັດທະນາແຜນງານການຝຶກອົບຮົມຄູປະຈຳການ;

**ຜົນໄດ້ຮັບລະດັບກາງທີ 7: ສະຖານການສຶກສາຄູເປັນສູນແຫ່ງການພັດທະນາວິຊາຊີບຄູໃນທຸກລະດັບ ລວມທັງການກໍ່ສ້າງຄູ, ຝຶກອົບຮົມຄູປະຈຳການ ແລະ ການອົບຮົມຄູສຶກສານິເທດ (ພາກທີ I ຜົນໄດ້ຮັບລະດັບສູງທີ 2, ຜົນໄດ້ຮັບລະດັບກາງ 2.4)**

**<u>ຍຸດທະສາດທີ 1:</u>** ພັດທະນາ ແລະ ປະຕິບັດນະໂຍບາຍການສ້າງຄູ ແລະ ການພັດທະນາຄູ[32] ທີ່ສົມບູນແບບ ເພື່ອປັບປຸງການບັນຈຸ, ຄຸ້ມຄອງ, ການນຳໃຊ້, ການຝຶກອົບຮົມ, ການສະໜອງຄ່າຕອບແທນ, ການພັດທະນາດ້ານວິຊາຊີບຢ່າງຕໍ່ເນື່ອງ ແລະ ເງື່ອນໄຂການເຮັດວຽກຂອງຄູ.

**<u>ວຽກຈຸດສຸມ:</u>**

- ດຳເນີນການສ້າງແຜນທີ່ ແລະ ການວິເຄາະຂອບນິຕິກຳຕ່າງໆ, ນະໂຍບາຍ ແລະ ຍຸດທະສາດທີ່ກ່ຽວຂ້ອງກັບຄູສອນ;
- ສ້າງນະໂຍບາຍກ່ຽວກັບຄູແບບຄົບຊຸດ ໂດຍອີງໃສ່ຜົນໄດ້ຮັບຂອງການເຮັດແຜນທີ່ ແລະ ການວິເຄາະນະໂຍບາຍທີ່ກ່ຽວກັບຄູ ແລະ ຜົນຈາກການປຶກສາຫາລືລະດັບຊາດທີ່ນຳໃຊ້ວິທີການແບບມີສ່ວນຮ່ວມ;

---

[32] ລວມມີ ສະຖານການສຶກສາຄູ, ສູນພັດທະນາຄູຂອງແຂວງ,ສຶກສາແຂວງ,ສຶກສາເມືອງ ແລະ ຄູສຶກສານິເທດ

- ດຳເນີນຂັ້ນຕອນການອະນຸມັດ ແລະ ຮັບຮອງເອົານະໂຍບາຍ;
- ພັດທະນາຂີດຄວາມສາມາດຂອງອົງກອນ ເພື່ອຈັດຕັ້ງປະຕິບັດນະໂຍບາຍຄູແຫ່ງຊາດທີ່ໄດ້ຮັບການອະນຸມັດ.

**<u>ຍຸດທະສາດທີ 2</u>**: ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖານການສຶກສາຄູ ເພື່ອເປັນສູນແຫ່ງການພັດທະນາວິຊາຊີບຄູ ແລະ ສູນແຫ່ງຄວາມເປັນເລີດໃນສາຂາວິຊາໃດໜຶ່ງ.

**<u>ວຽກຈຸດສຸມ:</u>**

- ພັດທະນາຂອບລະບຽບການ, ນະໂຍບາຍ, ຍຸດທະສາດ ທີ່ກ່ຽວຂ້ອງກັບການສອນຂອງຄູ;
- ສ້າງແຜນຍຸດທະສາດຂອງສະຖານການສຶກສາຄູ ໃນການເປັນສູນແຫ່ງການພັດທະນາວິຊາຊີບຄູ;
- ດຳເນີນການປະເມີນຜົນພາຍໃນສະຖານການສຶກສາຄູ ໂດຍນຳໃຊ້ຂອບລະບຽບການ, ນະໂຍບາຍ, ຍຸດທະສາດ ທີ່ກ່ຽວຂ້ອງກັບການສອນຂອງຄູ;
- ພັດທະນາ ແລະ ຮັບຮອງນິຕິກຳທີ່ຈຳເປັນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດພາລະບົດບາດຂອງສະຖານການສຶກສາຄູໃຫ້ສູງຂຶ້ນ.
- ປັບປຸງເຄື່ອງມືປະເມີນສະຖານການສຶກສາຄູ ໃນການເປັນສູນແຫ່ງຄວາມເປັນເລີດໃນສາຂາວິຊາໃດໜຶ່ງ;
- ປັບປຸງລະບົບການຄຸ້ມຄອງສະຖານການສຶກສາຄູ ແລະ ການກໍ່ສ້າງຄູ ໃນສະຖາບັນການສຶກສາຄູແຫ່ງຊາດທີ່ສ້າງຂຶ້ນໃໝ່.

**<u>ຍຸດທະສາດທີ 3:</u>** ສະໜອງຊັບພະຍາກອນທີ່ຈຳເປັນ ແລະ ຈັດຝຶກອົບຮົມໃຫ້ແກ່ຄູອາຈານ ແລະ ບຸກຄະລາກອນການສຶກສາຄູ ເພື່ອຮອງຮັບພາລະບົດບາດຂອງສະຖານການສຶກສາຄູໃນການເປັນສູນແຫ່ງການພັດທະນາວິຊາຊີບຄູ.

**<u>ວຽກຈຸດສຸມ:</u>**

- ດຳເນີນການຝຶກອົບຮົມໃນຫົວຂໍ້ທີ່ກ່ຽວຂ້ອງໃຫ້ແກ່ຄູອາຈານ ແລະ ບຸກຄະລາກອນການສຶກສາຄູໃນສະຖານການສຶກສາຄູ;
- ສະໜອງຊັບພະຍາກອນຕ່າງໆທີ່ຈຳເປັນ (ຊັບພະຍາກອນມະນຸດ, ສິ່ງອຳນວຍຄວາມສະດວກຕ່າງໆ ແລະ ງົບປະມານ) ໃຫ້ແກ່ສະຖາບັນສ້າງຄູ ເພື່ອປັບປຸງລະບົບການບໍລິຫານ ແລະ ຄຸ້ມຄອງການກໍ່ສ້າງຄູ ແລະ ການຮຽນ-ການສອນ;
- ດຳເນີນການປະເມີນສະຖານການສຶກສາຄູ ເພື່ອສັງເກດຕີລາຄາຜົນງານຂອງສະຖານການສຶກສາຄູໃນການເປັນສູນແຫ່ງການພັດທະນາວິຊາຊີບຄູ.

**<u>ຍຸດທະສາດທີ 4</u>**: ສ້າງຄວາມເຂັ້ມແຂງໃຫ້ແກ່ໂຮງຮຽນສາທິດໃນສະຖານການສຶກສາຄູ ເພື່ອເປີດໂອກາດການຝຶກການສອນ ແລະ ຖອດຖອນບົດຮຽນພາຍໃນຫ້ອງຮຽນສຳລັບນັກສຶກສາພາຍໃນສະຖານການສຶກສາຄູ, ຄູອາຈານ, ຄູຝຶກ ແລະ ຄູນິເທດ.

**<u>ວຽກຈຸດສຸມ:</u>**

- ກໍ່ສ້າງອາຄານຮຽນ ແລະ ຫ້ອງຮຽນໂຮງຮຽນສາທິດ;
- ສະໜອງສິ່ງອຳນວຍຄວາມສະດວກ, ອຸປະກອນ ແລະ ສື່ການຮຽນ-ການສອນ;
- ສ້າງແຜນພັດທະນາໂຮງຮຽນສາທິດລວມທັງແຜນການຈັດສັນບຸກຄະລາກອນ ແລະ ງົບປະມານ;
- ພັດທະນາຂີດຄວາມສາມາດຂອງຄູສອນ ແລະ ຜູ້ອຳນວຍການໃນໂຮງຮຽນສາທິດ.

**ຜົນໄດ້ຮັບລະດັບກາງທີ 8: ຜູ້ອານວຍການໂຮງຮຽນ ໄດ້ຮັບການຍົກລະດັບຄວາມສາມາດໃນການປັບປຸງການຮຽນ-ການສອນໃນໂຮງຮຽນ ສູງຂຶ້ນກວ່າເກົ່າ (ພາກທີ I ຜົນໄດ້ຮັບລະດັບສູງທີ 2, ຜົນໄດ້ຮັບລະດັບກາງ 2.5)**

ສະຖາບັນພັດທະນາການບໍລິຫານການສຶກສາ ຈະຮັບຜິດຊອບໃນການສ້າງຂີດຄວາມສາມາດຂອງຜູ້ອໍານວຍການໂຮງຮຽນ ເພື່ອຈັດຕັ້ງປະຕິບັດ 7 ໜ້າວຽກຫຼັກຂອງການເປັນຜູ້ນໍາໃນໂຮງຮຽນ. ເຖິງຢ່າງໃດກໍ່ຕາມ, ກົມສ້າງຄູ ແລະ ສະຖານການສຶກສາຄູຈະເປັນເຈົ້າການໃນການຝຶກອົບຮົມຜູ້ອໍານວຍການໂຮງຮຽນ ເພື່ອຮັບປະກັນຄຸນນະພາບການສິດສອນພາຍໃນໂຮງຮຽນ ແລະ ການນໍາພາດ້ານວິຊາການ. ບັນດາກິດຈະກໍາດ້ານຍຸດທະສາດ ແລະ ຄາດໝາຍ ທີ່ກົມສ້າງຄູຈະຕ້ອງປະຕິບັດເພື່ອໃຫ້ສໍາເລັດຜົນໄດ້ຮັບລະດັບກາງທີ່ກ່າວມາຂ້າງເທິງນັ້ນ ມີດັ່ງນີ້:

<u>**ຍຸດທະສາດທີ 1:**</u> ພັດທະນາທັກສະຄວາມເປັນຜູ້ນໍາດ້ານວິຊາການຂອງຜູ້ອໍານວຍການໂຮງຮຽນ.

<u>**ວຽກຈຸດສຸມ:**</u>

- ສ້າງມາດຕະຖານການເປັນຜູ້ນໍາດ້ານວິຊາການສໍາລັບຜູ້ອໍານວຍການໂຮງຮຽນ ແລະ ພັດທະນາຄູ່ມືທີ່ເໝາະສົມ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ;
- ສ້າງຄູ່ມືຜູ້ອໍານວຍການ ກ່ຽວກັບການປະກັນຄຸນນະພາບການສອນພາຍໃນໂຮງຮຽນ;
- ດໍາເນີນກອງປະຊຸມກ່ຽວກັບການພັດທະນາຄວາມສາມາດສໍາລັບຜູ້ອໍານວຍການ ກ່ຽວກັບຄວາມເປັນຜູ້ນໍາໃນການສອນ ແລະ ການບໍລິຫານວິຊາການ;
- ດໍາເນີນການຝຶກອົບຮົມໃຫ້ແກ່ບຸກຄະລາກອນການສຶກສາຂອງພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແລະ ເມືອງ/ນະຄອນ ໃນການປະເມີນການປະຕິບັດໜ້າທີ່ຂອງຜູ້ອໍານວຍການກ່ຽວກັບການປະກັນຄຸນນະພາບໃນໂຮງຮຽນ.

### 2.3.3. ຄຸນນະພາບ ແລະ ຈໍານວນນັກຮຽນທີ່ຈົບຈາກການສຶກສາຂັ້ນພື້ນຖານ ແລະ ການສຶກສາຫຼັງຂັ້ນພື້ນຖານເຂົ້າສູ່ຕະຫຼາດແຮງງານ ທັງພາຍໃນ ແລະ ຕ່າງປະເທດສອດຄ່ອງກັບຄວາມຕ້ອງ ການຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ແລະ ຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ (ພາກທີ I ຜົນໄດ້ຮັບລະດັບສູງທີ 5).

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ຂອງແຜນ ສໍາລັບລາຍລະອຽດຂອງຫຼັກການ ແລະ ເຫດຜົນ. ການສົ່ງເສີມວິຊາວິທະຍາສາດທໍາມະຊາດໃນການສຶກສາຊັ້ນສູງ ແລະ ຂະແໜງການຍ່ອຍສາຍສ້າງຄູ ແມ່ນປັດໄຈສໍາຄັນສໍາລັບຜົນຜະລິດທາງດ້ານຊັບພະຍາກອນມະນຸດທີ່ມີຄຸນນະພາບ. ການເພີ່ມຈໍານວນ ແລະ ການສ້າງຄວາມເຂັ້ມແຂງທາງດ້ານຄຸນນະພາບຂອງຄູສອນສາຍວິທະຍາສາດທໍາມະຊາດ ຈະສອດຄ່ອງກັບຈຸດປະສົງຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX.

<u>**ໂຂງເຂດຍຸດທະສາດທີ 1: ປັບປຸງຄຸນນະພາບການຮຽນ-ການສອນ**</u>

**ຜົນໄດ້ຮັບລະດັບກາງທີ 1: ຈໍານວນ ແລະ ຄຸນນະພາບຂອງນັກສຶກສາຄູທີ່ຮຽນຈົບວິທະຍາສາດທໍາມະຊາດ ທີ່ວິທະຍາໄລຄູເພີ່ມຂຶ້ນ ເພື່ອເຮັດໃຫ້ການຮຽນ-ການສອນ ວິຊາວິທະຍາສາດທໍາມະຊາດໄດ້ຮັບການປັບປຸງທີ່ດີຂຶ້ນໃນລະດັບມັດທະຍົມ. (ພາກທີ I ຜົນໄດ້ຮັບລະດັບສູງທີ 5, ຜົນໄດ້ຮັບລະດັບກາງ 5.2 ແລະ 5.3)**

<u>**ຍຸດທະສາດທີ 1:**</u> ສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດຫຼັກສູດສ້າງຄູວິທະຍາສາດທໍາມະຊາດ

<u>**ວຽກຈຸດສຸມ:**</u>

- ທົບທວນ ແລະ ຖອດຖອນບົດຮຽນການປະຕິບັດຫຼັກສູດສາຍວິທະຍາສາດທໍາມະຊາດ ແລະ ນໍາໃຊ້ຜົນການປະເມີນເພື່ອປັບປຸງຫຼັກສູດດັ່ງກ່າວ;

- ດຳເນີນການສຶກສາເພື່ອຄາດນະເນຄວາມຕ້ອງການຄູ ເພື່ອຄາດຄະເນການສະໜອງຂອງຄູໃນສາຍສາມັນສຶກສາ ທັງພາກລັດ ແລະ ເອກະຊົນ;
- ພັດທະນາ ແລະ ປັບປຸງເນື້ອໃນຫຼັກສູດລາຍວິຊາຕ່າງໆ ໃນສາຍສ້າງຄູວິທະຍາສາດທຳມະຊາດ;

**<u>ຍຸດທະສາດທີ 2:</u>** ເພີ່ມ ແລະ ຈັດບູລິມະສິດການເຂົ້າຮັບການຝຶກອົບຮົມຄູໃນສະຖາບັນສ້າງຄູ ໂດຍສະເພາະສາຍວິທະຍາສາດທຳມະຊາດ, ໃຫ້ມີທັງຍິງ ແລະ ຊາຍ ເພື່ອໃຫ້ການສະໜອງກວມເອົາທັງພາກລັດ ແລະ ເອກະຊົນ.

**<u>ວຽກຈຸດສຸມ:</u>**

- ສ້າງນະໂຍບາຍທີ່ກຳນົດ ແລະ ຈັດບູລິມະສິດຈຳນວນຄູທີ່ຈະຮັບເຂົ້າຮຽນໃນສາຍວິທະຍາສາດທຳມະຊາດທີ່ສະຖານການສຶກສາຄູຕ່າງໆ;
- ທົບທວນ ແລະ ປັບປຸງເງື່ອນໄຂໃນການຮັບການເຂົ້າຮຽນໃນສາຍວິທະຍາສາດທຳມະຊາດ;
- ເພີ່ມ/ຂະຫຍາຍຫຼັກສູດສາຍວິທະຍາສາດທຳມະຊາດ ແລະ ຫົວຂໍ້ການຝຶກອົບຮົມທີ່ກ່ຽວຂ້ອງກັບ ການສຶກສາ STEM.

**<u>ຍຸດທະສາດທີ 3:</u>** ໃຫ້ບູລິມະສິດໃນການຈັດສັນງົບປະມານສຳລັບການສ້າງສິ່ງອຳນວຍຄວາມສະດວກ ແລະ ການສະໜອງອຸປະກອນໃນສາຍວິທະຍາສາດທຳມະຊາດ .

**<u>ວຽກຈຸດສຸມ:</u>**

- ປະສານສົມທົບກັບຄູ່ຮ່ວມພັດທະນາກ່ຽວກັບການຈັດສັນງົບປະມານເພື່ອປັບປຸງສິ່ງອຳນວຍຄວາມສະດວກ ແລະ ອຸປະກອນວິທະຍາສາດທຳມະຊາດ;
- ກຳນົດ ແລະ ຈັດຊື້ສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງ ແລະ ອຸປະກອນການຮຽນ-ການສອນທີ່ຈຳເປັນ;
- ຈັດບູລິມະສິດສິ່ງອຳນວຍຄວາມສະດວກ, ອຸປະກອນການຮຽນ-ການສອນທີ່ຈຳເປັນ ແລະ ຮັບປະກັນແຫຼ່ງທຶນທີ່ຈຳເປັນຈາກແຫຼ່ງອື່ນໆ;

**<u>ຍຸດທະສາດທີ 4</u>:** ໂຄສະນາ ແລະ ເຜີຍແຜ່ ເພື່ອສົ່ງເສີມການເຂົ້າຮຽນໃນສາຍວິທະຍາສາດທຳມະຊາດ

**<u>ວຽກຈຸດສຸມ:</u>**

- ສົມທົບກັບກົມສາມັນສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການຊຸກຍູ້ສົ່ງເສີມການເລືອກຮຽນສາຍວິທະຍາສາດທຳມະຊາດ ໃນຊັ້ນມັດທະຍົມສຶກສາຕອນປາຍ;
- ສົມທົບກັບກົມສາມັນສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຄູປະຈຳການໃນການຈັດການຮຽນການສອນ ກ່ຽວກັບ ການສຶກສາ STEM ໃນຫຼັກສູດສາຍສາມັນສຶກສາ.

**<u>ຍຸດທະສາດທີ 5:</u>** ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນສ້າງຄູ ແລະ ຄະນະສຶກສາສາດເພື່ອຍົກລະດັບສະຖາບັນສ້າງຄູ.

**<u>ວຽກຈຸດສຸມ</u>**

- ພິຈາລະນາການຍົກຖານະຂອງວິທະຍາໄລຄູເປັນສະຖາບັນສ້າງຄູ;
- ພິຈາລະນາການລວມເອົາສະຖາບັນສ້າງຄູ ເຂົ້າກັນກັບຄະນະສຶກສາສາດຂອງມະຫາວິທະຍາໄລແຫ່ງຊາດ, ມະຫາວິທະຍາໄລຈຳປາສັກ, ມະຫາວິທະຍາໄລສຸພານຸວົງ ແລະ ມະຫາວິທະຍາໄລສະຫວັນນະເຂດ.

# VII. ຂະແໜງການຍ່ອຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ

**ໝາຍເຫດ:** ກົມອາຊີວະສຶກສາ ແລະ ອົມຮົມວິຊາຊີບ, ໂດຍຜ່ານການປຶກສາຫາລືກັບຄູ່ຮ່ວມພັດທະນາ ໄດ້ສ້າງແຜນພັດທະນາອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບທີ່ຄົບຊຸດ ສໍາລັບປີ 2021-2025. ແຜນພັດທະນາຂະແໜງ ການຍ່ອຍອາຊີວະສຶກສາ ຊຶ່ງເປັນສ່ວນໜຶ່ງຂອງແຜນ 5 ປີ ຂອງຂະແໜງການສຶກສາ ແລະ ກິລານີ້ ແມ່ນໄດ້ສັງລວມຈາກແຜນພັດທະນາອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ. (ຕ້ອງການລາຍລະອຽດຂອງແຜນພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ສາມາດຕິດຕໍ່ໄດ້ນໍາກົມອາຊີວະສຶກສາ).

## 1. ພາກສະເໜີ

### 1.1. ຜົນສໍາເລັດ

ພາກ I ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 (ຂໍ້ທີ 2 ແລະ 3) ໄດ້ໃຫ້ລາຍລະອຽດກ່ຽວກັບຜົນສໍາເລັດຂອງອາຊີວະສຶກສາ.

ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໂດຍລວມ ແລະ ໂດຍສະເພາະ ແຜນພັດທະນາອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ແມ່ນການຈັດຕັ້ງຜັນຂະຫຍາຍມະຕິຄັ້ງທີ X ຂອງພັກ ພ້ອມທັງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ຂອງລັດຖະບານ ແລະ ແຜນຍຸດທະສາດເພື່ອຫຼຸດຜ່ອນຄວາມທຸກຍາກ ເພື່ອໃຫ້ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2020 ແລະ ທິດທາງກ້າວໄປສູ່ການຫັນເປັນອຸດສາຫະກໍາ ແລະ ທັນສະໄໝເທື່ອລະກ້າວ.

ການພັດທະນາອາຊີວະສຶກສາຢູ່ ສປປ ລາວ ມີປັດໄຈຫຼາຍຢ່າງສະໜັບສະໜູນ ເຊັ່ນ: ປະເທດມີຄວາມສະຫງົບສຸກ, ການຂະຫຍາຍຕົວຂອງເສດຖະກິດແມ່ນເພີ່ມຂຶ້ນຢ່າງຕໍ່ເນື່ອງດ້ວຍອັດຕາຫຼາຍກ່ວາ 6%, ໂຄງການພັດທະນາອຸດສາຫະກໍາຂະໜາດໃຫຍ່ ເຊັ່ນ: ພະລັງງານໄຟຟ້າ, ບໍ່ແຮ່, ລົດໄຟຄວາມໄວສູງ, ທາງດ່ວນ, ເຂດພັດທະນາເສດຖະກິດພິເສດ ແລະ ອື່ນໆ ແມ່ນໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ມີຄວາມຄືບໜ້າຢ່າງຕໍ່ເນື່ອງ. ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໄດ້ຮັບການເພີ່ມທະວີຂຶ້ນ, ການພັດທະນາຊັບພະຍາກອນມະນຸດ, ການນໍາໃຊ້ ແລະ ການພັດທະນາເຕັກໂນໂລຢີ ໄດ້ຮັບການປະຕິບັດຢ່າງກວ້າງຂວາງ ແລະ ພື້ນຖານໂຄງລ່າງໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງທັງດ້ານປະລິມານ ແລະ ຄຸນນະພາບ. ປັດໄຈສໍາຄັນແມ່ນ ພັກ ແລະ ລັດຖະບານ ມີນະໂຍບາຍທີ່ຖືກຕ້ອງເພື່ອຕອບສະໜອງຄວາມຕ້ອງການ ແລະ ກໍາລັງແຮງຂອງທ້ອງຖິ່ນ ແລະ ໃຫ້ຄວາມສໍາຄັນຕໍ່ການພັດທະນາວຽກງານອາຊີວະສຶກສາຢູ່ສະເໝີ.

ປະຈຸບັນປະມານ 4% ຂອງຜູ້ທີ່ຮຽນຈົບການສຶກສາຂັ້ນພື້ນຖານ (ຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນ) ເຂົ້າຮຽນຫຼັກສູດອາຊີວະສຶກສາຂອງກະຊວງສຶກສາທິການ ແລະ ກິລາ ໃນລະດັບ 1, 2 ແລະ 3 (C.1, C.2, C.3) ແລະ ໃນຈໍານວນດັ່ງກ່າວນີ້ ປະມານ 30% ແມ່ນເພດຍິງ. ໂດຍສອດຄ່ອງກັບແຜນພັດທະນາຂອງລັດຖະບານ, ວຽກງານອາຊີວະສຶກສາ ໄດ້ມີການຂະຫຍາຍການບໍລິການຢ່າງກວ້າງຂວາງ ໃນໄລຍະແຜນ 5 ປີ 2016-2020 ໂດຍຜ່ານການສ້າງຕັ້ງສູນອົບຮົມວິຊາຊີບໃນເມືອງໃຫຍ່. ປັດຈຸບັນກໍາລັງດໍາເນີນການສໍາຫຼວດ ເພື່ອກໍານົດຄວາມຕ້ອງການຂອງສູນອົບຮົມວິຊາຊີບໃນເມືອງນ້ອຍ ແລະ ເມືອງທີ່ຢູ່ຫ່າງໄກສອກຫຼີກ ເພື່ອເພີ່ມການເຂົ້າເຖິງສໍາລັບຜູ້ທີ່ມາຈາກກຸ່ມດ້ອຍໂອກາດ. ຄາດວ່າການມີຜູ້ເຂົ້າຮຽນໃນສາຍອາຊີວະສຶກສາລວມທັງພາກລັດ, ເອກະຊົນ ແລະ ໂຮງຮຽນທີ່ຂຶ້ນກັບກະຊວງອື່ນໆ ຈະກວມເຖິງປະມານ 60% ຂອງນັກຮຽນຈົບຊັ້ນມັດທະຍົມຕອນປາຍໃນປີ 2020 ໂດຍຄາດວ່າ ນັກຮຽນຍິງ ຈະເພີ່ມຂຶ້ນເປັນ 43%. ໂຮງຮຽນ ແລະ ວິທະຍາໄລອາຊີວະສຶກສາ ສະໜອງການຝຶກອົບຮົມທີ່ມີລະດັບປະກາສະນີຍະບັດທີ່ແຕກຕ່າງກັນ ເພື່ອດຶງດູດຊາວໜຸ່ມຈາກເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ໃຫ້ສາມາດຮຽນຮູ້ ແລະ ສາມາດຫາວຽກເຮັດງານທໍາໃນເມືອງ ຫຼື ຊຸມຊົນຂອງພວກເຂົາໄດ້ ຫລື ເພື່ອຍົກ

ລະດັບຄວາມຮູ້ ແລະ ທັກສະ ເພື່ອສະໜັບສະໜູນຄອບຄົວຂອງຕົນ. ເພື່ອຊຸກຍູ້ໃຫ້ນັກຮຽນທີ່ມາຈາກເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກໄດ້ເຂົ້າຮຽນຫຼາຍຂຶ້ນ, ກົມອາຊີວະສຶກສາ ໄດ້ສະໜອງຫຼັກສູດການລ້ຽງສັດ, ການຜະລິດພືດພັນ ແລະ ວິຊາຊີບອື່ນໆ ໄປພ້ອມໆກັບການຈັດຕັ້ງປະຕິບັດຫຼັກສູດປະກາສະນີຍະບັດວິຊາຊີບ ລະດັບ 1, 2 ແລະ 3.

ເພື່ອຂະຫຍາຍການເຂົ້າເຖິງອາຊີວະສຶກສາ, ແຜນງານການສະໜັບສະໜູນບັດທຶນ ແລະ ເບ້ຍລ້ຽງ ກໍ່ໄດ້ຖືກຈັດຕັ້ງປະຕິບັດໂດຍຜ່ານໂຄງການຕ່າງໆ. ນອກຈາກນັ້ນ, ການສະໜອງຫໍພັກ ກໍເປັນອີກປັດໄຈໜຶ່ງທີ່ເຮັດໃຫ້ມີການເຂົ້າຮຽນເພີ່ມຂຶ້ນ, ໂດຍສະເພາະນັກຮຽນຍິງຈາກຊົນນະບົດ ແລະ ຊົນເຜົ່າ. ສິ່ງອໍານວຍຄວາມສະດວກຂອງສະຖານອາຊີວະສຶກສາໄດ້ຮັບການປັບປຸງ, ຍົກລະດັບ ແລະ ໂຄງການຕ່າງໆກໍໄດ້ສະໜອງອຸປະກອນເພີ່ມເຕີມ. ດ້ວຍການສະໜັບສະໜູນດັ່ງກ່າວ, ການເຂົ້າໂຮງຮຽນໃນສາຍອາຊີວະສຶກສາໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍຈາກນັກຮຽນ 15.222 ຄົນ ໃນສົກຮຽນ 2015-2016 ມາເປັນ 18.355 ຄົນໃນສົກຮຽນ 2017-2018, ແຕ່ວ່າມັນໄດ້ຫຼຸດລົງເລັກໜ້ອຍເປັນ 15.707 ຄົນ ໃນສົກຮຽນ 2019-2020 ເຊິ່ງມາຈາກຫຼາຍສາເຫດ.

### ຕາຕະລາງ 21: ສະພາບການເຂົ້າຮຽນ ໃນສາຍອາຊີວະສຶກສາ 2016-2020

| ຕົວຊີ້ວັດ | 2015-16 | 2016-17 | 2017-18 | 2018-19 | 2019-20 |
|---|---|---|---|---|---|
| ຈໍານວນຄູ ແລະ ພະນັກງານທັງໝົດ | 2.145 | 2.191 | 2.158 | 2.178 | 2.179 |
| ປະລິນຍາຕີຕໍ່ເນື່ອງ[33] | | 64 | 59 | 86 | 124 |
| ຊັ້ນສູງ ລວມທັງຊັ້ນສູງຕໍ່ເນື່ອງ (ຫຼັກສູດ 12+3 ແລະ 12+2+1,5) | | 4.771 | 6.156 | 5.436 | 5.510 |
| ຊັ້ນກາງ (12+2) | 6.396 | 8.406 | 8.976 | 7.331 | 6.446 |
| ຊັ້ນກາງ (9+3) | 8.463 | 1.783 | 1.817 | 1.735 | 1.781 |
| ວິຊາຊີບລະດັບ 3 (ຫຼື 9+2) | | | 622 | 285 | 130 |
| ວິຊາຊີບລະດັບ 2 | | | 206 | 279 | 415 |
| ວິຊາຊີບລະດັບ 1 | 343 | 457 | 499 | 634 | 1.390 |
| ຫຼັກສູດໄລຍະສັ້ນ | 20 | 138 | 20 | 46 | 110 |
| ລວມທັງໝົດ | 15.222 | 15.619 | 18.355 | 15.828 | 15.707 |

ແຫຼ່ງຂໍ້ມູນ: ກົມອາຊີວະສຶກສາ, ສສກ (ສະເພາະຜູ້ຮຽນອາຊີວະສຶກສາ ພາຍໃຕ້ກະຊວງສຶກສາທິການ ແລະ ກິລາ ເທົ່ານັ້ນ)

### ຕາຕະລາງ 22: ຜູ້ທີ່ຮຽນຈົບຈາກສະຖານອາຊີວະສຶກສາ ແຕ່ປີ 2016-2019

| ຕົວຊີ້ວັດ | 2015-2016 | | 2016-2017 | | 2017-2018 | | 2018-2019 | | 2019-2020 | |
|---|---|---|---|---|---|---|---|---|---|---|
| | ລວມ | ຍິງ | ລວມ | ຍິງ | ລວມ | ຍິງ | ລວມ | ຍິງ | ລວມ | ຍິງ |
| ປະລິນຍາຕີ[34] | 212 | 22 | 0 | 0 | 64 | 15 | 60 | 23 | ຍັງບໍ່ທັນມີຂໍ້ມູນ | |
| ຊັ້ນສູງ | 4.901 | 2.128 | 5.200 | 2.345 | 6.856 | 2.899 | 6.698 | 3.204 | | |
| ຊັ້ນກາງ (12+2) | 5.870 | 2.589 | 6.723 | 3.001 | 6.375 | 2.531 | 6.723 | 2.623 | | |
| ຊັ້ນກາງ (9+3) | 2.068 | 812 | 1139 | 434 | 853 | 253 | 1.028 | 311 | | |
| ຊັ້ນຕົ້ນC1, C2,C3 | 184 | 59 | 851 | 390 | 1.318 | 700 | 912 | 391 | | |
| ໄລຍະສັ້ນ | 32 | 28 | 30 | 22 | 0 | 0 | 204 | 134 | | |
| ລວມທັງໝົດ | 13.267 | 5.638 | 13.943 | 6.192 | 15.466 | 6.398 | 15.625 | 6.686 | | |

---

[33] ສະເພາະຄູອາຊີວະສຶກສາ ທີ່ສຶກສາຢູ່ ສູນພັດທະນາອາຊີວະສຶກສາ

[34]ສະເພາະ ຄູອາຊີວະສຶກສາ ທີ່ ສຶກສາຢູ່ ສູນພັດທະນາອາຊີວະສຶກສາ

ແຫຼ່ງຂໍ້ມູນ: ກົມອາຊີວະສຶກສາ, ສສກ (ສະເພາະສະຖານອາຊີວະສຶກສາ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ເທົ່ານັ້ນ)

### 1.2. ສິ່ງທ້າທາຍ

ພາກ I ຂອງແຜນ 5 ປີ (ຂໍ້ທີ 2 ແລະ 3) ໃຫ້ລາຍລະອຽດເພີ່ມເຕີມກ່ຽວກັບສິ່ງທ້າທາຍ. ສິ່ງທ້າທາຍທີ່ສໍາຄັນຂອງຂະແໜງການຍ່ອຍອາຊີວະສຶກສາປະກອບມີດັ່ງນີ້:

ການພັດທະນາວຽກງານອາຊີວະສຶກສາ ຍັງປະສົບກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍຢ່າງ ເຊັ່ນ: ຄຸນນະພາບຂອງນັກສຶກສາທີ່ຈົບການສຶກສາອາຊີວະສຶກສາ ບໍ່ສາມາດຕອບສະໜອງໄດ້ຢ່າງເຕັມສ່ວນກັບຄວາມຕ້ອງການຂອງຜູ້ໃຊ້ແຮງງານ, ຄູອາຈານຂອງສະຖານອາຊີວະສຶກສາຍັງຂາດປະສົບການ ບໍ່ໄດ້ຮັບການຝຶກອົບຮົມຢ່າງເຕັມສ່ວນໃນການສິ່ງຄວາມຮູ້ດ້ານວິຊາການຕາມເນື້ອໃນຫຼັກສູດໃໝ່ ແລະ ຄວາມເຂົ້າໃຈຕໍ່ວິທີການນໍາໃຊ້ອຸປະກອນ ແລະ ຊັບພະຍາກອນດ້ານວິຊາຊີບໃໝ່. ນອກຈາກນັ້ນ, ການປ່ຽນແປງຢ່າງໄວວາຂອງເຕັກໂນໂລຢີ ແລະ ໂຄງປະ ກອບເສດຖະກິດຂອງປະເທດ ແລະ ພາກພື້ນ ກໍ່ຈະມີຜົນກະທົບຕໍ່ການຈັດຕັ້ງປະຕິບັດແຜນພັດທະນາອາຊີວະສຶກສາ. ກົມອາຊີວະສຶກສາ ຈະຕ້ອງມີທ່າກຽມພ້ອມໃນການຄຸ້ມຄອງການຝຶກອົບຮົມ ແລະ ຍົກລະດັບ ເພື່ອຮັບປະກັນວ່າຄຸນນະພາບຂອງການສິດສອນ ສອດຄ່ອງກັບມາດຕະຖານຂອງດັບຊາດ, ພາກພື້ນ ແລະ ຂອງສາກົນ, ໂດຍໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມມືສາກົນ.

ສິ່ງທ້າທາຍອີກອັນໜຶ່ງ ແມ່ນການວິເຄາະ ແລະ ສັງເຄາະຄວາມສາມາດໃນການເຮັດວຽກຂອງຜູ້ທີ່ຮຽນຈົບພ້ອມທັງຄວາມເພິ່ງພໍໃຈຂອງຜູ້ໃຊ້ແຮງງານ ແລະ ນໍາໃຊ້ຜົນໄດ້ຮັບດັ່ງກ່າວ ໃຫ້ເປັນພື້ນຖານໃນການສ້າງນະໂຍບາຍ. ສະນັ້ນ, ມັນຈໍາເປັນຕ້ອງມີການພັດທະນາຄໍາແນະນໍາສໍາລັບສະຖາບັນອາຊີວະສຶກສາ ກ່ຽວກັບວິທີການດໍາເນີນການສຶກ ສາຕິດຕາມນັກຮຽນທີ່ຮຽນຈົບໄປຢ່າງມີປະສິດຕິຜົນ ແລະ ນໍາໃຊ້ຜົນໄດ້ຮັບຂອງການຕິດຕາມ ເປັນພື້ນຖານໃນການພິຈາລະນາການສ້າງນະໂຍບາຍ. ເຖິງຢ່າງໃດກໍ່ຕາມ, ການຊອກຫາສະຖານທີ່ຝຶກງານທີ່ເໝາະສົມສໍາລັບນັກ ຮຽນທີ່ຈະໄດ້ຮັບປະສົບການຕົວຈິງ ແມ່ນເປັນສິ່ງທ້າທາຍສ່ວນໜຶ່ງຂອງການສຶກສາຂອງພວກເຂົາ. ສະນັ້ນ, ສະຖານອາຊີວະສຶກສາຄວນຮັກສາເຄືອຂ່າຍທີ່ແໜ້ນແຟ້ນກັບຜູ້ໃຊ້ແຮງງານພາຍໃນທ້ອງຖິ່ນ ເພື່ອສະໜັບສະໜູນການຝຶກປະຕິບັດວຽກຕົວຈິງ.

## 2. ບູລິມະສິດສໍາລັບ 2021-2025

### 2.1. ຈຸດປະສົງ

1. ສະໜອງການສຶກສາຫຼັງການສຶກສາຂັ້ນພື້ນຖານໃຫ້ເຂັ້ມແຂງ ປະກອບສ່ວນເຂົ້າໃນການສະໜັບສະໜູນບັນດາບູລິມະສິດຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ໂດຍແນໃສ່:
    1) ເພື່ອພັດທະນາລະບົບອາຊີວະສຶກສາ ໃນການສ້າງກໍາລັງແຮງງານໃຫ້ມີຄວາມຮູ້ຄວາມສາມາດ, ມີຄຸນສົມບັດ ສິນທໍາປະຕິວັດ ແລະ ມີຄ່ານິຍົມທີ່ຖືກຕ້ອງ, ມີນໍ້າໃຈຮັກປະເທດຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈທີ່ດີ, ມີຄວາມຮັກຕໍ່ການຮຽນຮູ້ຕະຫຼອດຊີວິດ, ມີຄ່ານິຍົມຕໍ່ຮີດຄອງປະເພນີອັນດີງາມຂອງຊາດ, ຮັກຄວາມກ້າວໜ້າ ແລະ ມີວິທະຍາສາດເພື່ອໃຫ້ກາຍເປັນກໍາລັງແຮງງານທີ່ມີຄຸນນະພາບ, ສອດຄ່ອງ ແລະ ສາມາດຕອບສະໜອງໄດ້ກັບຄວາມຕ້ອງການຂອງຕະຫຼາດແຮງງານ ກໍ່ຄືຄວາມຮຽກຮ້ອງຕ້ອງການຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດ, ມີຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ;
    2) ເພື່ອພັດທະນາ ແລະ ປັບປຸງຫຼັກສູດອາຊີວະສຶກສາ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດ ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໂດຍສຸມໃສ່ຂະແໜງການທີ່ມີຄວາມຕ້ອງການສູງ ເຊັ່ນ: ການກໍ່ສ້າງ, ກະສິກໍາ, ການສ້ອມແປງເຄື່ອງຈັກ, ການທ່ອງ

ທ່ຽວ ແລະ ການຕ້ອນຮັບ, ໄຟຟ້າ, ເຟີນີເຈີ ແລະ ລົດຍົນ. ການສຶກສາກ່ຽວກັບເພດສຶກສາ ກໍຄວນຈະບັນຈຸເຂົ້າໃນຫຼັກສູດດັ່ງກ່າວ.

2. ການເສີມຂະຫຍາຍຜົນການຮຽນ ແລະ ຫຼຸດຜ່ອນຄວາມແຕກໂຕນກັນ ໂດຍຜ່ານການຄຸ້ມຄອງຊັບພະຍາກອນທີ່ມີຢູ່ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ .
   - ເພື່ອເພີ່ມການເຂົ້າຮຽນ ແລະ ດັດສົມສັດສ່ວນການເຂົ້າຮຽນໃນສາຍອາຊີວະສຶກສາໂດຍເອົາໃຈໃສ່ເພດຍິງ ແລະ ກຸ່ມຜູ້ທີ່ດ້ອຍໂອກາດ ຫຼາຍຂຶ້ນ.

## 2.2. ຄາດໝາຍ

ຂໍ້ມູນປີຖານ ແລະ ຄາດໝາຍຫຼັກ ແມ່ນໄດ້ສະໜອງໃຫ້ຢູ່ ພາກທີ I, ຂໍ້ 8.5 (ຕາຕະລາງຕິດຕາມ ແລະ ປະເມີນຜົນ). ຕົວຊີ້ບອກ ແລະ ຄາດໝາຍຫຼັກສໍາລັບຂະແໜງການຍ່ອຍນີ້ ມີດັ່ງນີ້:

1) ໃນໄລຍະ 5 ປີ ໃຫ້ມີນັກສຶກສາຫຼາຍກວ່າ 80.000 ຄົນ ທີ່ມີຜົນການຮຽນດີ ຕາມຫຼັກສູດຂະແໜງກະສິກໍາ ອຸດສາຫະກໍາ ແລະ ບໍລິການ ທີ່ຈົບຈາກ 25 ສະຖານອາຊີວະສຶກສາ ມີຄວາມເຊື່ອມໂຍງ ແລະ ແທດເໝາະກັບຄວາມຕ້ອງການ ແລະ ເປັນທີ່ຍອມຮັບຂອງຜູ້ໃຊ້ແຮງງານ;
2) ມີຫຼັກກາສູດລະດັບຕ່າງໆ ຢ່າງໜ້ອຍ 25 ຫຼັກສູດ ໄດ້ຮັບການສ້າງ ແລະ ປັບປຸງ; ຄູສອນອາຊີວະສຶກສາໄດ້ຮັບການພັດທະນາ ແລະ ຍົກລະດັບ ທັງວິຊາຄູ ແລະ ວິຊາສະເພາະ ຢ່າງໜ້ອຍ 1.500 ຄົນ;
3) ຄຸນນະພາບຂອງວຽກງານອາຊີວະສຶກສາ ມີຄວາມເຂັ້ມແຂງ ໂດຍຜ່ານການປະເມີນພາຍໃນ ສະຖານອາຊີວະສຶກສາ ຢ່າງໜ້ອຍ 15 ແຫ່ງ; ມີການຮ່ວມມືລະຫວ່າງສະຖານອາຊີວະສຶກສາ ແລະ ສະຖານປະກອບການຢ່າງໜ້ອຍ 150 ແຫ່ງ; ມີນິຕິກໍາລຸ່ມກົດໝາຍ ຈໍານວນ 10 ສະບັບ ໄດ້ຮັບການພັດທະນາ ແລະ ສະຖານອາຊີວະສຶກສາ ຢ່າງໜ້ອຍ 5 ແຫ່ງ ໄດ້ຮັບການພັດທະນາຂີດຄວາມສາມາດທາງດ້ານການເງິນ ແລະ ລາຍຮັບວິຊາການ.

## 2.3. ຜົນໄດ້ຮັບລະດັບສູງ

### 2.3.1. ຄຸນນະພາບ ແລະ ຈໍານວນນັກຮຽນທີ່ຈົບຈາກການສຶກສາຂັ້ນພື້ນຖານ ແລະ ຜູ້ທີ່ຈົບການສຶກສາຫຼັງຂັ້ນພື້ນຖານທີ່ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ ສອດຄ່ອງກັບຄວາມຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX ແລະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (ພາກທີ I, ຜົນໄດ້ຮັບລະດັບສູງທີ 5)

➢ **ຫຼັກການ ແລະ ເຫດຜົນ**

ເບິ່ງພາກທີ I ຂອງແຜນ 5 ປີ ສໍາລັບເຫດຜົນລະອຽດ. ແຜນພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ 2021-2025 ຕ້ອງອີງໃສ່ຜົນໄດ້ຮັບຂອງແຜນພັດທະນາຂອງຕົນທີ່ຜ່ານມາ, ຄາດໝາຍສູ້ຊົນສໍາລັບປີ 2021-2025 ແມ່ນປະຕິບັດຕາມບູລິມະສິດຂອງຕະຫຼາດແຮງງານ, ຄວາມສາມາດໃນປະຈຸບັນ ແລະ ສະພາບຄວາມເປັນຈິງຂອງສະຖາບັນອາຊີວະສຶກສາ, ແຜນການເງິນ ແລະ ແຜນການສະໜັບສະໜູນດ້ານວິຊາການໃນປັດຈຸບັນ ແລະ ອານາຄົດ.

ໃນລະດັບທ້ອງຖິ່ນ, ຄະນະທີ່ປຶກສາຂອງໂຮງຮຽນ ປະກອບດ້ວຍຜູ້ຕາງໜ້າຈາກຫົວໜ່ວຍທຸລະກິດ ສາມາດມີບົດບາດຕັດສິນໃນການສະໜັບສະໜູນການກະກຽມ ແລະ ຕິດຕາມແຜນພັດທະນາໂຮງຮຽນ ໂດຍສອດຄ່ອງກັບແຜນພັດທະນາອາຊີວະສຶກສາລະດັບຊາດ.

**ຜົນໄດ້ຮັບລະດັບກາງທີ 1: ຈຳນວນຜູ້ສຳເລັດການສຶກສາທີ່ຮຽນຈົບຕາມຫຼັກສູດຂະແໜງກະສິກຳອຸດສະຫະກຳ ແລະ ບໍລິການ ຈາກສະຖາບັນອາຊີວະສຶກສາ ທີ່ມີຂີດຄວາມສາມາດເໝາະສົມເພີ່ມຂຶ້ນ ພ້ອມດ້ວຍຜົນການຮຽນທີ່ດີຂຶ້ນ (ພາກທີ I, ຜົນໄດ້ຮັບລະດັບສູງທີ 5,ຜົນຮັບລະດັບກາງ 5.3)**

**ຍຸດທະສາດ ທີ 1:** ປັບປຸງການເຂົ້າເຖິງວຽກງານອາຊີວະສຶກສາ .

ຢາກມີຜົນສຳເລັດໃນການຈັດຕັ້ງປະຕິບັດຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບ ສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອທາງການໂດຍການພັດທະນາ ຕ້ອງສຸມໃສ່ຍຸດທະສາດນີ້.

**ວຽກຈຸດສຸມ:**

- ສ້າງຄວາມເຂັ້ມແຂງດ້ານສິ່ງອຳນວຍຄວາມສະດວກ ແລະ ສະພາບແວດລ້ອມໃຫ້ແກ່ສະຖາບັນອາຊີວະສຶກສາ/ສູນຝຶກອົບຮົມວິຊາຊີບທີ່ມີຢູ່ແລ້ວ ໂດຍອີງໃສ່ກຸ່ມເປົ້າໝາຍ ແລະ ຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານ;
- ຍົກຖານະຂອງໂຮງຮຽນເຕັກນິກ-ວິຊາຊີບ ຂຶ້ນເປັນວິທະຍາໄລເຕັກນິກ-ວິຊາຊີບ;
- ສ້າງຕັ້ງໂຮງຮຽນເຕັກນິກ-ວິຊາຊີບແຫ່ງໃໝ່ ຫຼື ສາຂາຂອງສະຖາບັນອາຊີວະສຶກສາຕ່າງໆທີ່ມີຢູ່ແລ້ວໃນແຂວງ ເມືອງ ແລະ ເຂດທີ່ມີທ່າແຮງ.

**ຍຸດທະສາດ ທີ 2:** ປັບປຸງຄວາມສອດຄ່ອງໃນການສະໜອງວຽກງານອາຊີວະສຶກສາ

**ວຽກຈຸດສຸມ:**

- ກຳນົດຄວາມຕ້ອງການສະໜອງວຽກງານອາຊີວະສຶກສາ ແລະ ທັກສະສີມື;
- ປັບປຸງຄວາມສອດຄ່ອງ ລະຫວ່າງອາຊີບ ແລະ ຕຳແໜ່ງງານທີ່ຕ້ອງການ;
- ສ້າງຄວາມເຂັ້ມແຂງ ແລະ ຂະຫຍາຍການຝຶກອົບຮົມວິຊາຊີບ ແບບຄວບຄູ່ (DCT);
- ສ້າງຄວາມເຂັ້ມແຂງ ແລະ ຂະຫຍາຍການຝຶກອົບຮົມວິຊາຊີບ ແບບເນັ້ນສະມັດຖະພາບ (CBT);
- ບັນຈຸການຮຽນວິຊາຊີບທີ່ສັງຄົມຕ້ອງການ ເຂົ້າໃນຊັ້ນມັດທະຍົມສຶກສາ;

**ຜົນໄດ້ຮັບລະດັບກາງທີ 2: ຄຸນນະພາບຂອງຄູສອນໃນທຸກລະດັບຫຼັກສູດໄດ້ຮັບການປັບປຸງ (ພາກທີ I, ຜົນໄດ້ຮັບລະດັບສູງທີ 5, ຜົນໄດ້ຮັບລະດັບກາງ 5.5)**

**ຍຸດທະສາດ ທີ 1:** ປັບປຸງຄຸນນະພາບ ຂອງການສະໜອງວຽກງານອາຊີວະສຶກສາ.

**ວຽກຈຸດສຸມ:**

- ສະໜັບສະໜູນການຈັດຕັ້ງປະຕິບັດຂອບວຸດທິການສຶກສາແຫ່ງຊາດ;
- ປັບປຸງ, ພັດທະນາ ແລະ ຮັບຮອງມາດຕະຖານອາຊີບ/ມາດຕະຖານສະມັດຖະພາບ;
- ປັບປຸງເນື້ອໃນ ແລະ ຮູບແບບການຮຽນ-ການສອນ ຂອງຫຼັກສູດຕ່າງໆ;
- ຈັດຕັ້ງປະຕິບັດຫຼັກສູດລະດັບຕ່າງໆ ໂດຍການນຳໃຊ້ຮູບແບບການຮຽນ-ການສອນ ແລະ ເນື້ອໃນທີ່ຫຼາກຫຼາຍ;
- ສະໜັບສະໜູນການແຂ່ງຂັນທັກສະວິຊາຊີບ;
- ຈັດຕັ້ງປະຕິບັດລະບົບປະກັນຄຸນນະພາບຂອງສະຖາບັນອາຊີວະສຶກສາ;

**ຍຸດທະສາດ ທີ 2:** ພັດທະນາຄູອາຊີວະສຶກສາ

**ວຽກຈຸດສຸມ:**

- ພັດທະນາແຜນ ແລະ ມາດຕະຖານສໍາລັບການພັດທະນາຄູອາຊີວະສຶກສາ;
- ຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນຫຼັກສູດການສ້າງຄູອາຊີວະສຶກສາ;
- ຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນການບໍາລຸງຄູອາຊີວະສຶກສາ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນພັດທະນາອາຊີວະສຶກສາ;

**ຜົນໄດ້ຮັບລະດັບກາງ 3: ຄຸນນະພາບຂອງການບໍລິຫານ ແລະ ຄຸ້ມຄອງວຽກງານອາຊີວະສຶກສາ ໄດ້ຮັບການປັບປຸງ ໂດຍຜ່ານການປັບປຸງລະບຽບຫຼັກການຕ່າງໆ, ເພີ່ມການການຕິດຕາມ-ປະເມີນຜົນ ແລະ ການຮ່ວມມື (ພາກທີ I, ຜົນໄດ້ຮັບທີ 5,ຜົນຮັບໄລຍະກາງ 5.7)**

**<u>ຍຸດທະສາດ ທີ 1:</u>** ສົ່ງເສີມການຮ່ວມມື ລະຫວ່າງສະຖານອາຊີວະສຶກສາ ແລະ ພາກທຸລະກິດທັງພາກລັດ, ເອກະຊົນທັງພາຍໃນ ແລະ ຕ່າງປະເທດ

**<u>ວຽກຈຸດສຸມ:</u>**

- ສົ່ງເສີມການຮ່ວມມືລະຫວ່າງສະຖານອາຊີວະສຶກສາ ແລະ ສະຖານປະກອບການ;
- ສະໜັບສະໜູນການຮ່ວມມືລະຫວ່າງສະຖານອາຊີວະສຶກສາພາຍໃນ ແລະ ຕ່າງປະເທດ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ສະພາ ທີ່ປຶກສາອາຊີວະສຶກສາ ແລະ ໜ່ວຍງານກຸ່ມອາຊີບ;
- ພັດທະນາແນວຄວາມຄິດການເປັນຜູ້ປະກອບກິດຈະການ;

**<u>ຍຸດທະສາດ ທີ 2:</u>** ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງວຽກງານອາຊີວະສຶກສາ.

**<u>ວຽກຈຸດສຸມ:</u>**

- ປັບປຸງເຄື່ອງມືການບໍລິຫານ-ຄຸ້ມຄອງວຽກງານອາຊີວະສຶກສາ;
- ປັບປຸງລະບົບການບໍລິຫານ-ຄຸ້ມຄອງວຽກງານອາຊີວະສຶກສາ;

**<u>ຍຸດທະສາດ ທີ 3:</u>** ພັດທະນາຂີດຄວາມສາມາດດ້ານການເງິນ ຂອງວຽກງານອາຊີວະສຶກສາ.

ຢາກມີຜົນສໍາເລັດຢ່າງແທ້ຈິງຂອງຍຸດທະສາດນີ້ ຈະຕ້ອງມີການສະໜອງງົບປະມານໃຫ້ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ /ຫຼື ງົບປະມານການຊ່ວຍເຫຼືອທາງການເພື່ອການພັດທະນາ ຕ້ອງສຸມໃສ່ຍຸດທະສາດນີ້.

**<u>ວຽກຈຸດສຸມ:</u>**

- ປັບປຸງລະບົບຄຸ້ມຄອງການເງິນອາຊີວະສຶກສາ;
- ສະໜັບສະໜູນການສ້າງກອງທຶນພັດທະນາອາຊີວະສຶກສາ;
- ສະໜັບສະໜູນ, ພັດທະນາກິດຈະກໍາການສ້າງລາຍຮັບ.

# VIII. ຂະແໜງການຍ່ອຍການສຶກສາຊັ້ນສູງ

## 1. ພາກສະເໜີ

### 1.1. ຜົນສຳເລັດ

ພາກ I ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 (ຂໍ້ທີ 2 ແລະ 3) ໄດ້ໃຫ້ລາຍລະອຽດກ່ຽວກັບຜົນສຳເລັດຂອງການສຶກສາຊັ້ນສູງ. ຊຶ່ງຜົນສຳເລັດທີ່ພົ້ນເດັ່ນປະກອບມີ: ການລົງທຶນໃສ່ພື້ນຖານໂຄງລ່າງຂອງມະຫາວິທະຍາໄລທັງ 4 ແຫ່ງ ລວມທັງນະໂຍບາຍສົ່ງເສີມຜູ້ໃຫ້ບໍລິການພາກລັດ ແລະ ເອກະຊົນເນື່ອງຈາກມີຄວາມຕ້ອງການສູງ. ພ້ອມດຽວກັນນີ້, ກໍ່ໄດ້ເອົາໃຈໃສ່ເຖິງການຍົກສູງຄຸນນະພາບການຮຽນ-ການສອນທັງໃນສະຖາບັນທັງພາກລັດ ແລະ ເອກະຊົນ, ໂດຍສະເພາະໃນຫຼັກສູດທີ່ກ່ຽວຂ້ອງກັບ STEM.

ນອກຈາກທັກສະດ້ານວິຊາການ ແລະ ຄວາມຮູ້, ນັກສຶກສາຍັງຕ້ອງການທັກສະ "ທາງສັງຄົມ" ຫຼື ທັກສະການຖ່າຍທອດຄວາມຮູ້ ຊຶ່ງນຳໄປສູ່ການຈ້າງງານທີ່ເພີ່ມຂຶ້ນ ຊຶ່ງລວມມີ: ຄວາມສາມາດໃນການແກ້ໄຂບັນຫາ, ຄວາມຄິດສ້າງສັນ, ທັກສະການພົວພັນສັງຄົມ ແລະ ຄວາມໜ້າເຊື່ອຖື. ໄດ້ພັດທະນາຫຼັກສູດໃໝ່ເພີ່ມເຕີມ ເພື່ອໃຫ້ມະຫາວິທະຍາໄລສາມາດສອນທັກສະດັ່ງກ່າວ, ຊຶ່ງຕາມແຜນແມ່ນໄດ້ນຳໃຊ້ ໃນປີ 2019. ພ້ອມດຽວກັນນັ້ນ ວຽກງານກິດຈະການນັກສຶກສາ ກໍ່ແມ່ນບູລິມະສິດໜຶ່ງຂອງວຽກງານການພັດທະນາຊັບພະຍາກອນມະນຸດ ຊຶ່ງມີພະນັກງານນັກສຶກສາໄປຮຽນຢູ່ຕ່າງປະເທດ ທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນຕ່າງໆ. ຊັບພະຍາກອນມະນຸດເຫຼົ່ານີ້ ໄດ້ຮັບການຍົກລະດັບຄວາມຮູ້, ຄວາມສາມາດ ແລະ ທັກສະ ດ້ານວິຊາສະເພາະ ເພື່ອນຳມາພັດທະນາເສດຖະກິດ-ສັງຄົມ ຂອງຊາດແຕ່ລະໄລຍະ. ເຖິງຢ່າງໃດກໍ່ຕາມ, ມັນຍັງມີຄວາມຕ້ອງການໃຫ້ນັກຮຽນໄດ້ມີປະສົບການເຮັດວຽກທີ່ດີ ເຊິ່ງເປັນສ່ວນໜຶ່ງຂອງການສຶກສາຂອງພວກເຂົາ. ການລິເລີ່ມລະບົບການຮັບປະກັນຄຸນນະພາບລະດັບແຜນງານເທື່ອລະກ້າວ ທີ່ສອດຄ່ອງກັບມາດຕະຖານອາຊຽນ, ຈະມີຜົນກະທົບທີ່ພື້ນຖານ ແລະ ດ້ານບວກຕໍ່ຄຸນນະພາບຂອງການສະໜອງການສຶກສາ ພ້ອມກັບໂຄງປະກອບຂອງການຮັບຮອງວຸດທິການສຶກສາທີ່ໂປ່ງໃສ.

**ຕາຕະລາງ 23: ສົມທຽບຕົວຊີ້ບອກຕ່າງໆ ໃນຂະແໜງການສຶກສາຊັ້ນສູງ (ມະຫາວິທະຍາໄລພາກລັດ 4 ແຫ່ງ) ແຕ່ປີ 2016 ຫາ 2020**

| ຕົວຊີ້ບອກ | 2015-16 | 2016-17 | 2017-18 | 2018-19 | 2019-20 |
|---|---|---|---|---|---|
| ຈຳນວນນັກສຶກສາໃນມະຫາວິທະຍາໄລແຫ່ງຊາດ | 29.138 | 20.542 | 22.310 | 23.144 | 23.376 |
| *ສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ ແລະ ວິສະວະກຳສາດ* | 6.625 | 6.324 | 6.914 | 7.269 | 6.508 |
| ຫຼັກສູດອື່ນໆ | 22.513 | 14.218 | 15.396 | 15.875 | 16.868 |
| ຈຳນວນນັກສຶກສາໃນມະຫາວິທະຍາໄລຈຳປາສັກ | 3.952 | 4.489 | 4.694 | 4.787 | 5.582 |
| *ສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ ແລະ ວິສະວະກຳສາດ* | 1.496 | 1.078 | 1.275 | 1.285 | 936 |
| ຫຼັກສູດອື່ນໆ | 2.456 | 3.411 | 3.419 | 3.502 | 4.646 |
| ຈຳນວນນັກສຶກສາໃນມະຫາວິທະຍາໄລສຸພານຸວົງ | 2.949 | 4.639 | 5.565 | 5.839 | 3.044 |
| *ສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ ແລະ ວິສະວະກຳສາດ* | 868 | 942 | 970 | 998 | 1.188 |
| ຫຼັກສູດອື່ນໆ | 2.081 | 3.697 | 4.595 | 4.841 | 1.856 |

| | | | | | |
|---|---|---|---|---|---|
| ຈຳນວນນັກສຶກສາໃນມະຫາວິທະຍາໄລສະຫວັນນະເຂດ | 3.951 | 3.937 | 3.893 | 3.499 | 3.956 |
| *ສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ ແລະ ວິສະວະກຳສາດ* | 897 | 873 | 939 | 939 | 1.232 |
| ຫຼັກສູດອື່ນໆ | 3.054 | 3.064 | 2.954 | 2.560 | 2.724 |
| **ລວມນັກສຶກສາທັງໝົດ** | **39.990** | **33.607** | **36.462** | **37.382** | **36.144** |
| *ສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ ແລະ ວິສະວະກຳສາດ* | 9.886 | 9.217 | 10.098 | 10.604 | 9.864 |
| ຫຼັກສູດອື່ນໆ | 30.104 | 24.390 | 26.364 | 26.778 | 26.280 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ, ປີ 2020

### ຕາຕະລາງ 24: ສົມທຽບຈຳນວນນັກສຶກສາທີ່ຮຽນຈົບໃນແຕ່ລະປີ (ສຳລັບ 4 ມະຫາວິທະຍາໄລ) ແຕ່ປີ 2016-2020

| ຕົວຊີ້ບອກ | 2015-16 | 2016-17 | 2017-18 | 2018-19 | 2019-20 |
|---|---|---|---|---|---|
| ຈຳນວນນັກສຶກສາໃນມະຫາວິທະຍາໄລແຫ່ງຊາດ | 6.134 | 6.495 | 6.573 | 6.273 | 5.871 |
| *ສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ ແລະ ວິສະວະກຳສາດ* | 1.656 | 1.581 | 1.729 | 1.817 | 1.627 |
| ຫຼັກສູດອື່ນໆ(Non-STEM) | 4.478 | 4.914 | 4.844 | 4.456 | 4.244 |
| ຈຳນວນນັກສຶກສາໃນມະຫາວິທະຍາໄລຈຳປາສັກ | 891 | 1.262 | 1.490 | 1.490 | 1.394 |
| *ສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ ແລະ ວິສະວະກຳສາດ* | 374 | 270 | 319 | 321 | 234 |
| ຫຼັກສູດອື່ນໆ | 517 | 992 | 1.171 | 1.169 | 1.160 |
| ຈຳນວນນັກສຶກສາໃນມະຫາວິທະຍາໄລສຸພານຸວົງ | 679 | 960 | 920 | 920 | 782 |
| *ສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ ແລະ ວິສະວະກຳສາດ* | 217 | 236 | 243 | 250 | 297 |
| ຫຼັກສູດອື່ນໆ | 462 | 724 | 677 | 670 | 485 |
| ຈຳນວນນັກສຶກສາໃນມະຫາວິທະຍາໄລສະຫວັນນະເຂດ | 829 | 1.076 | 992 | 972 | 989 |
| *ສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ ແລະ ວິສະວະກຳສາດ* | 224 | 218 | 235 | 263 | 308 |
| ຫຼັກສູດອື່ນໆ | 605 | 858 | 757 | 709 | 681 |
| ຈຳນວນນັກສຶກສາທັງໝົດ | 8.533 | 9.793 | 9.975 | 9.655 | 9.036 |
| *ສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ ແລະ ວິສະວະກຳສາດ* | 2.472 | 2.304 | 2.525 | 2.651 | 2.466 |
| ຫຼັກສູດອື່ນໆ | 6.061 | 7.489 | 7.450 | 7.004 | 6.570 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

ນອກຈາກຈຳນວນນັກສຶກສາທີ່ຮຽນຢູ່ພາຍໃນປະເທດແລ້ວ, ຍັງມີຈຳນວນັກສຶກສາຈຳນວນບໍ່ໜ້ອຍທີ່ໄປສຶກສາຢູ່ທີ່ຕ່າງປະເທດອີກດ້ວຍ (ເບິ່ງເອກະສານຊ້ອນທ້າຍທີ 7)

### 1.2. ສິ່ງທ້າທາຍຂອງວຽກງານການສຶກສາຊັ້ນສູງ

ພາກ I ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 (ຂໍ້ທີ 2 ແລະ3) ໄດ້ໃຫ້ລາຍລະອຽດກ່ຽວກັບສິ່ງທ້າທາຍສໍາລັບການສຶກສາຊັ້ນສູງ. ຕ້ອງການໃຫ້ນັກຮຽນທີ່ຈົບໃນສາຍ STEM ມີປະລະມານເພີ່ມຂຶ້ນ ແລະ ມີຄຸນນະພາບສູງ, ນັກຮຽນທີ່ຈົບຈາກໂຮງຮຽນມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ ຕ້ອງມີທັກສະພື້ນຖານທີ່ດີ, ຕ້ອງມີຄູສອນທີ່ມີທັກສະ ແລະ ມີແຫຼ່ງຮຽນຮູ້ທີ່ເໝາະສົມ. ຄຸນນະພາບ, ຄວາມສາ ມາດ ແລະ ຄວາມຮູ້ຂອງພະນັກງານໃນສະຖານການສຶກສາຊັ້ນສູງທີ່ຍັງມີຂີດຈໍາກັດກໍ່ແມ່ນສິ່ງທ້າທາຍອັນໜຶ່ງ. ການພັດທະນາລະບົບການປະກັນຄຸນນະພາບໃນລະດັບແຜນງານ ແລະ ລະດັບສະຖາບັນແມ່ນສິ່ງທ້າທາຍ. ເຖິງຢ່າງໃດກໍ່ຕາມ, ມັນແມ່ນອົງປະກອບທີ່ຈໍາເປັນສໍາລັບຂະແໜງຍ່ອຍນີ້ ເພື່ອກາຍເປັນສະມາຊິກທີ່ສາມາດແຂ່ງຂັນກັບເຄືອຂ່າຍມະຫາວິທະຍາໄລພາກພື້ນອາຊຽນ ແລະ ເປີດໂອກາດໃຫ້ແກ່ການແລກປ່ຽນນັກສຶກສາ.

ນອກຈາກນີ້ ວຽກງານກິດຈະການນັກສຶກສາ ກໍ່ຍັງມີຂໍ້ຄົງຄ້າງທີ່ຕ້ອງໄດ້ຮັບການແກ້ໄຂເຊັ່ນ: ການຄຸ້ມຄອງທຶນການສຶກສາ ສໍາລັບພະນັກງານ-ນັກສຶກສາໄປຮຽນຕ່າງປະເທດຍັງບໍ່ທັນລວມສູນ, ການສ້າງຊັບພະຍາກອນມະນຸດຢູ່ຕ່າງປະເທດຂອງບາງຂົງເຂດວິຊາສະເພາະ ບໍ່ທັນສອດຄ່ອງກັບແຜນການພັດທະນາເສດຖະກິດ-ສັງຄົມ ຂອງຊາດແຕ່ລະໄລຍະ.

## 2. ບູລິມະສິດ ສໍາລັບ 2021-2025

### 2.1. ຈຸດປະສົງ

1) ເພື່ອໃຫ້ການສຶກສາໃນສາຍຊັ້ນສູງມີການຂະຫຍາຍຕົວ ແລະ ມີຄຸນນະພາບ ສາມາດປະກອບສ່ວນ ແລະ ສະໜັບສະໜູນບັນດາບູລິມະສິດດ້ານເສດຖະກິດ ແລະ ສັງຄົມ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX.
2) ເພື່ອສົ່ງເສີມ ແລະ ພັດທະນາແຜນງານທີ່ກ່ຽວຂ້ອງກັບເທັກໂນໂລຊີ, ລວມທັງແຜນງານປັນຍາປະດິດ Artificial Intelligence (AI) ສໍາລັບນັກສຶກສາທີ່ຮຽນຢູ່ລະດັບມະຫາວິທະຍາໄລ, ໂດຍສະເພາະແມ່ນຜູ້ທີ່ເຂົ້າຮຽນໃນສາຍວິທະຍາສາດທໍາມະຊາດ ເພື່ອໃຫ້ມີຈໍານວນນັກສຶກສາໃນສາຍດັ່ງກ່າວເພີ່ມຂຶ້ນ;
3) ເພື່ອສ້າງຄວາມເຂັ້ມແຂງໃຫ້ສູນແຫ່ງຄວາມເປັນເລີດໃນມະຫາວິທະຍາໄລທັງພາກລັດ ແລະ ເອກະຊົນ;
4) ດໍາເນີນການສຶກສາຕິດຕາມນັກສຶກສາທີ່ຮຽນຈົບເປັນປົກະຕິ ເພື່ອສ້າງຄວາມສາມາດໃຫ້ແກ່ຜູ້ຮຽນຈົບໄດ້ເຂົ້າເຖິງຕະຫຼາດແຮງງານຫຼາຍຂຶ້ນ;
5) ສ້າງຄວາມເຂັ້ມແຂງໃຫ້ຄູ-ອາຈານ, ໂດຍສະເພາະຄູ-ອາຈານສອນໃນສາຍວິທະຍາສາດທໍາມະຊາດ;
6) ເພື່ອສ້າງຄູ່ມືສູດຄິດໄລ່ການໃຫ້ທຶນນັກສຶກສາຂອງມະຫາວິທະຍາໄລ ແລະ ສ້າງຂອບບູລິມະສິດໃຫ້ທຶນການສຶກສາແກ່ນັກສຶກສາເພື່ອໄປສຶກສາຕໍ່ໃນຕ່າງປະເທດ ທີ່ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມຂອງປະເທດ;
7) ເພື່ອສະໜອງ ແລະ ສົ່ງເສີມການຄົ້ນຄວ້າວິທະຍາສາດ, ການພັດທະນາເຕັກໂນໂລຢີ ແລະ ນະວັດຕະກໍາໃໝ່ເພື່ອຮັບໃຊ້ປະເທດຊາດ.

### 2.2. ຄາດໝາຍ

ຂໍ້ມູນປີຖານ ແລະ ຄາດໝາຍຫຼັກ ແມ່ນໄດ້ສະໜອງໃຫ້ຢູ່ ພາກທີ I, ຂໍ້ 8.5 (ຕາຕະລາງຕິດຕາມ ແລະ ປະເມີນຜົນ). ຕົວຊີ້ບອກ ແລະ ຄາດໝາຍຫຼັກສໍາລັບຂະແໜງການຍ່ອຍນີ້ ມີດັ່ງນີ້:

1) ຈໍານວນນັກຮຽນຈົບການສຶກສາກ່ຽວກັບວິຊາ STEM (ປະລິນຍາຕີ ຫຼື ສູງກວ່າ) ຈາກມະຫາວິທະຍາໄລຂອງລັດພາຍໃນປະເທດ ບັນລຸ 20.000 ຄົນ;

2) ດັດຊະນີຄວາມສະເໝີພາບຍິງ-ຊາຍສຳລັບຈຳນວນນັກຮຽນ ຮຽນຈົບຈາກມະຫາວິທະຍາໄລຂອງລັດພາຍໃນປະເທດ ບັນລຸສູງກວ່າ 0,90;
3) ໄດ້ມີການສຶກສາຄວາມເປັນໄປໄດ້ ໃນການສ້າງຕັ້ງສະຖາບັນເຕັກໂນໂລຢີ;
4) ນັກສຶກສາໃນສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ ແລະ ວິສະວະກຳ ເພີ່ມຂຶ້ນ 50% ທຽບໃສ່ນັກຮຽນສາຍອື່ນໆ ແລະ ຄຸນນະພາບການຮຽນ-ການສອນໄດ້ຮັບການປັບປຸງ;
5) ສູນແຫ່ງຄວາມເປັນເລີດທັງ 4 ແຫ່ງ ຢູ່ມະຫາວິທະຍາໄລ ໄດ້ຮັບການປະເມີນ;
6) ທີມງານຕິດຕາມການຈ້າງງານໃນແຕ່ລະຄະນະວິຊາ ຖືກສ້າງຕັ້ງຂຶ້ນ;
7) ການປະເມີນຄຸນນະພາບພາຍໃນດຳເນີນປີລະຄັ້ງ ແລະ ການປະເມີນຄຸນນະພາບພາຍນອກ ໄດ້ດຳເນີນທຸກໆ 5 ປີ (ສະຖາບັນແລະ ຕາມສາຂາວິຊາ);
8) ດຳເນີນການທົດລອງຄວາມເປັນເຈົ້າຕົນເອງທາງດ້ານການເງິນຂອງສະຖານການສຶກສາຊັ້ນສູງ ໂດຍລິເລີ່ມຢູ່ມະຫາວິທະຍາໄລແຫ່ງຊາດ.

## 2.3. ຜົນໄດ້ຮັບລະດັບສູງ

<u>**ໝາຍເຫດ:**</u> ສຳລັບແຕ່ລະຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ, ຈະມີການອ້າງອີງເປັນວົງເລັບ ຫຼັງຈາກເນື້ອໃນທີ່ກ່າວເຖິງໃນພາກທີ I ຂອງແຜນພັດທະນາຂະແໜງການສຶກສາ 2021-2025, ເພື່ອໃຫ້ແຕ່ລະພາກ ສ່ວນທີ່ກ່ຽວຂ້ອງ ນຳໃຊ້ແຜນຂອງຂະແໜງການຍ່ອຍເປັນແຜນການແຕ່ເປັນເອກະລາດ ແຕ່ສາມາດອ້າງອີງເຖິງບັນ ດານະໂຍບາຍທີ່ກ່ຽວຂ້ອງ, ດັ່ງທີ່ໄດ້ລະບຸໄວ້ໃນພາກ I. ແຜນຂະແໜງການຍ່ອຍນີ້ບໍ່ຈຳເປັນຕ້ອງແກ້ໄຂທຸກໆຜົນໄດ້ຮັບລະດັບກາງຂອງຜົນໄດ້ຮັບລະດັບສູງ. ບາງຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງໄດ້ຖືກດັດແກ້ເພື່ອສະທ້ອນໃຫ້ເຫັນຈຸດສຸມຂອງຂະແໜງຍ່ອຍ.

### 2.3.1. ຄຸນນະພາບ ແລະ ຈຳນວນນັກສຶກສາ ທີ່ສຳເລັດການສຶກສາໃນສາຍການສຶກສາຊັ້ນສູງ ທີ່ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຂົງເຂດພາກພື້ນ ໃຫ້ສອດຄ່ອງກັບຄວາມຕ້ອງ ການ ຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX ແລະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (ພາກທີ I, ຜົນໄດ້ຮັບລະດັບສູງທີ 5)

- **ຫຼັກການ ແລະ ເຫດຜົນ**

ລາຍລະອຽດຂອງເຫດຜົນຕ່າງໆ ແມ່ນໄດ້ກຳນົດຢູ່ໃນພາກທີ I ຂອງແຜນ 5 ປີ. ຄຽງຄູ່ກັບການປັບປຸງຄຸນນະພາບຂອງອາຈານ, ມາດຖານການຄັດເລືອກນັກສຶກສາເຂົ້າຮຽນທັງພາຍໃນ ແລະ ຕ່າງປະເທດ ທີ່ເຂັ້ມງວດກວ່າເກົ່າໄດ້ຖືກຮັບຮອງ. ການສ້າງຄວາມເຂັ້ມແຂງໃຫ້ແກ່ມາດຖານການຄັດເລືອກສຳລັບຜູ້ທີ່ເຂົ້າມາໃໝ່ ຈະເຮັດໃຫ້ນັກຮຽນທີ່ຈົບການສຶກສາ ມີທັກສະທີ່ຕອບສະໜອງໄດ້ຕາມຄວາມຕ້ອງການຂອງເສດຖະກິດທີ່ກຳລັງພັດທະນາຢ່າງເໝາະສົມກວ່າເກົ່າ.

ມາດຕະຖານການປະກັນຄຸນນະພາບ ທັງພາຍໃນ ແລະ ພາຍນອກ ໃນລະດັບສະຖາບັນກໍໄດ້ຖືກຮັບຮອງ. ທຸກໆມະຫາວິທະຍາໄລ ມີຄວາມຈຳເປັນຕ້ອງເຮັດບົດລາຍງານການປະເມີນຕົນເອງປະຈຳປີ ແລະ ສົ່ງໃຫ້ສູນປະກັນຄຸນນະພາບການສຶກສາ ແລະ ກົມການສຶກສາຊັ້ນສູງ ຂອງກະຊວງ.

**ຜົນໄດ້ຮັບລະດັບກາງ 1: ແຜນງານປັນຍາປະດິດ (AI) ໃນ ມະຫາວິທະຍາໄລແຫ່ງຊາດໃຫ້ມີຄວາມເຂັ້ມແຂງຂຶ້ນຄຽງຄູ່ກັບ ຈຳນວນນັກຮຽນທີ່ເຂົ້າຮຽນເພີ່ມຂຶ້ນ (ພາກທີ I, ຜົນໄດ້ຮັບລະດັບສູງທີ 5, ຜົນໄດ້ຮັບລະດັບກາງທີ 5 ແລະ 10)**

**<u>ຍຸດທະສາດທີ 1</u>**: ສ້າງຄວາມເຂັ້ມແຂງແຜນງານປັນຍາປະດິດ ຢູ່ ມະຫາວິທະຍາໄລແຫ່ງຊາດ ພ້ອມທັງສ້າງຂີດຄວາມສາມາດໃນການຈັດຕັ້ງປະຕິບັດ.

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຍຸດທະສາດນີ້ໄດ້ຢ່າງເຕັມສ່ວນ ແມ່ນມີຄວາມຕ້ອງການງົບປະມານທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອຈາກຕ່າງປະເທດ ຕ້ອງສຸມໃສ່ການຈັດຕັ້ງປະຕິບັດຍຸດທະສາດນີ້.

**<u>ວຽກຈຸດສຸມ:</u>**

- ຈັດກອງປະຊຸມປຶກສາຫາລື ໃນການສ້າງຕັ້ງຄະນະກຳມະການພັດທະນາແຜນງານປັນຍາປະດິດ ຢູ່ ມຊ;
- ຈັດກິດຈະກຳການແຂ່ງຂັນປັນຍາປະດິດປີລະຄັ້ງໃນມະຫາວິທະຍາໄລທີ່ມີຄວາມພ້ອມ ແລະ ເຂົ້າຮ່ວມການແຂ່ງຂັນໃນລະດັບພາກພື້ນ ແລະ ສາກົນ;
- ເຜີຍແຜ່ຜົນງານຂອງປັນຍາປະດິດ ພ້ອມປົກປ້ອງຊັບສິນທາງປັນຍາຂອງນັກສຶກສາ;
- ສ້າງສູນປັນຍາປະດິດ ພ້ອມທັງສົ່ງເສີມໃຫ້ຜູ້ປະກອບການໄດ້ມີສ່ວນຮ່ວມ ເພື່ອສ້າງນະວັດຕະກຳໃໝ່ໆ;
- ປັບປຸງພື້ນຖານໂຄງລ່າງລະບົບ ICT ແລະ ສິ່ງອຳນວຍຄວາມສະດວກຕ່າງໆທີ່ກ່ຽວຂ້ອງ;
- ສົ່ງເສີມ ແລະ ຄຸ້ມຄອງຊັບສິນທາງປັນຍາ.

**ຜົນໄດ້ຮັບລະດັບກາງ 2: ສິ່ງອຳນວຍຄວາມສະດວກ ແລະ ສື່ການຮຽນ-ການສອນ ສາຍວິທະຍາ ສາດທຳມະຊາດ, ເຕັກໂນໂລຊີ ແລະ ວິສະວະກຳສາດ ຢູ່ມະຫາວິທະຍາໄລ ໄດ້ຮັບການປັບປຸງໃຫ້ດີຂຶ້ນ (ພາກທີ I, ຜົນໄດ້ຮັບລະດັບສູງທີ 5, ຜົນໄດ້ຮັບລະດັບກາງທີ 10)**

**<u>ຍຸດທະສາດທີ 1</u>**: ສຶກສາຄວາມເປັນໄປໄດ້ໃນການສ້າງສະຖາບັນເຕັກໂນໂລຢີ.

**<u>ວຽກຈຸດສຸມ</u>**

- ສຶກສາຄວາມເປັນໄປໄດ້ໃນການສ້າງສະຖາບັນເຕັກໂນໂລຢີ ໂດຍຜ່ານການປະສານງານກັບຄູ່ຮ່ວມພັດທະນາ;
- ຮ່າງນິຕິກຳ ແລະ ລະບຽບການສຳລັບສະຖາບັນເຕັກໂນໂລຢີໃໝ່;
- ສ້າງແຜນການຈັດຕັ້ງປະຕິບັດທີ່ມີການກຳນົດຄ່າໃຊ້ຈ່າຍເພື່ອສ້າງສະຖາບັນເຕັກໂນໂລຢີ.

**<u>ຍຸດທະສາດທີ 2:</u>** ປັບປຸງພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຂອງຄະນະວິສາວະກຳສາດ ຂອງມະຫາວິທະຍາໄລແຫ່ງຊາດ.

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຍຸດທະສາດນີ້ໄດ້ຢ່າງເຕັມສ່ວນ, ແມ່ນມີຄວາມຕ້ອງການດ້ານງົບປະມານທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອຈາກຕ່າງປະເທດ ຕ້ອງສຸມໃສ່ການຈັດຕັ້ງປະຕິບັດຍຸດທະສາດນີ້,

**<u>ວຽກຈຸດສຸມ:</u>**

- ດຳເນີນການສຳຫຼວດ ເພື່ອກຳນົດການຍົກລະດັບພື້ນຖານໂຄງລ່າງ, ສິ່ງອຳນວຍຄວາມສະດວກ, ອຸປະກອນ ແລະ ການຍົກລະດັບພະນັກງານ;
- ສ້າງແຜນການປັງປຸງພື້ນຖານໂຄງລ່າງ ແລະ ຍົກລະດັບທາງດ້ານວິຊາການພະນັກງານຄູ-ອາຈານ ພາຍໃນຄະນະວິສະວະກຳສາດ;
- ຈັດຕັ້ງປະຕິບັດແຜນການປັງປຸງພື້ນຖານໂຄງລ່າງ ແລະ ຍົກລະດັບທາງດ້ານວິຊາການພະນັກງານຄູ-ອາຈານພາຍໃນຄະນະວິສະວະກຳສາດ;
- ປະກອບອຸປະກອນຫ້ອງທົດລອງຂອງສາຍວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ຄົບຖ້ວນ.

**<u>ຍຸດທະສາດທີ 3:</u>** ທົບທວນ ແລະ ວິເຄາະການສະໜອງຫຼັກສູດວິທະຍາສາດທຳມະຊາດໃນລະດັບມັດທະຍົມຕອນປາຍ, ໂດຍມີຂໍ້ສະເໜີແນະໃຫ້ນັກຮຽນເຂົ້າຮຽນໃນສາຍວິທະຍາສາດທຳມະຊາດຫຼາຍຂຶ້ນ, ໂດຍສະເພາະແມ່ນເພດຍິງ

<u>ວຽກຈຸດສຸມ</u>

- ສ້າງຕັ້ງທີມງານປະເມີນຄວາມຕ້ອງການໃນລະດັບກະຊວງ ເພື່ອປະເມີນຄວາມຕ້ອງການຕົວຈິງຂອງສິ່ງອຳນວຍຄວາມສະດວກ ແລະ ປຶ້ມຄູ່ມືການສອນສຳລັບວິທະຍາສາດທຳມະຊາດ;
- ຈັດຕັ້ງການສອບເສັງຄັດເລືອກລະດັບຊາດ ເພື່ອຄັດເລືອກເອົານັກຮຽນວິທະຍາສາດທຳມະຊາດທີ່ມີອັດຕາສ່ວນເພດຍິງສູງ ໂດຍອີງໃສ່ນະໂຍບາຍຄວາມສະເໝີພາບລະຫວ່າງຍິງ - ຊາຍ;
- ຈັດສັນງົບປະມານຂອງລັດ ລວມທັງງົບປະມານຈາກພາຍນອກໃຫ້ພຽງພໍ ຕາມການປະເມີນຄວາມຕ້ອງການຕົວຈິງ.

**ຜົນໄດ້ຮັບລະດັບກາງ 3: ຈຳນວນຜູ້ສຳເລັດການສຶກສາໃນສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ ແລະ ວິສະວະກຳສາດ ໃນມະຫາວິທະຍາໄລທັງພາຍໃນ ແລະ ຕ່າງປະເທດ ເພີ່ມຂຶ້ນ ພ້ອມທັງມີຜົນການຮຽນທີ່ດີຂຶ້ນ (ພາກທີ I, ຜົນໄດ້ຮັບທີ 5, ຜົນໄດ້ຮັບລະດັບກາງທີ 10)**

**<u>ຍຸດທະສາດທີ 1</u>**: ສູດຄິດໄລ່ໃນການສະໜອງທຶນໃຫ້ແກ່ການສຶກສາຊັ້ນສູງ ກວມເອົາທຶນເພີ່ມເຕີມສຳລັບນັກສຶກສາໃນສາຍວິທະຍາສາດທຳມະຊາດ.

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຍຸດທະສາດນີ້ໄດ້ຢ່າງເຕັມສ່ວນ, ແມ່ນມີຄວາມຕ້ອການງົບປະມານດັ່ງທີ່ກຳນົດຢູ່ໃນແຜນການເງິນຕາມຮູບແບບ "ປັບປຸງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອຈາກຕ່າງປະເທດ ຕ້ອງສຸມໃສ່ການຈັດຕັ້ງປະຕິບັດຍຸດທະສາດນີ້,

<u>ວຽກຈຸດສຸມ</u>

- ສ້າງຄູ່ມືສູດຄິດໄລ່ໃນການສະໜອງທຶນໃຫ້ແກ່ການສຶກສາໃນສາຍວິທະຍາສາດທຳມະຊາດ;
- ສ້າງຂໍ້ກຳນົດ ແລະ ລະບຽບການ ໃນການຄັດເລືອກເອົານັກສຶກສາເຂົ້າຮຽນໃນສາຍວິທະຍາສາດທຳມະຊາດ.

**ຜົນໄດ້ຮັບລະດັບກາງທີ 4 : ສູນແຫ່ງຄວາມເປັນເລີດໃນບັນດາມະຫາວິທະຍາໄລພາກລັດ ແລະ ສູນບໍລິການນັກສຶກສາໄປຮຽນຕ່າງປະເທດ ມີຄວາມເຂັ້ມແຂງຂຶ້ນ ເພື່ອຮັບປະກັນຄວາມສອດຄ່ອງກັບຄວາມຕ້ອງການຂອງ ແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX (ພາກທີ I, ຜົນໄດ້ຮັບທີ 5, ຜົນໄດ້ຮັບລະດັບກາງທີ 10 ແລະ 11)**

**<u>ຍຸດທະສາດທີ 1</u>**: ດຳເນີນການປະເມີນສູນແຫ່ງຄວາມເປັນເລີດທີ່ມີຢູ່ແລ້ວ ແລະ ສູນທີ່ມີທ່າແຮງຈະສ້າງໃໝ່ ໃຫ້ມີຄວາມຮັບປະກັນ ດ້ານປະສິດທິພາບ, ປະສິດທິຜົນ ແລະ ຄວາມສອດຄ່ອງກັບ ບູລິມະສິດທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX.

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຍຸດທະສາດນີ້ໄດ້ຢ່າງເຕັມສ່ວນ, ແມ່ນມີຄວາມຕ້ອງການດ້ານງົບປະມານທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອຈາກຕ່າງປະເທດ ຕ້ອງສຸມໃສ່ການຈັດຕັ້ງປະຕິບັດຍຸດທະສາດນີ້.

<u>ວຽກຈຸດສຸມ:</u>

- ສົ່ງເສີມການສ້າງສູນແຫ່ງຄວາມເປັນເລີດ ຢູ່ມະຫາວິທະຍາໄລ 4 ແຫ່ງ;
- ສ້າງສູນບໍລິການນັກສຶກສາໄປຮຽນຕ່າງປະເທດ;

- ຕິດຕາມການຈັດຕັ້ງປະຕິບັດສູນຄວາມເປັນເລີດ 4 ແຫ່ງ ແລະ ສູນບໍລິການນັກສຶກສາໄປຮຽນຕ່າງປະເທດ ໃຫ້ເກີດປະສິດທິພາບ, ປະສິດທິຜົນ ແລະ ຄວາມສອດຄ່ອງກັບບູລິມະສິດທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ IX;
- ສະໜອງອຸປະກອນ ແລະ ປະກອບສິ່ງອຳນວຍຄວາມສະດວກໃຫ້ແກ່ສູນຄວາມເປັນເລີດ ໃນ 4 ມະຫາວິທະຍາໄລ;
- ສ້າງເຄື່ອງມືການປະເມີນ ແລະ ດຳເນີນການປະເມີນສູນຄວາມເປັນເລີດ 4 ແຫ່ງ;
- ສົ່ງເສີມການຝຶກອົບຮົມຍົກລະດັບຄູ ແລະ ນັກສຶກສາ ວິຊາຜູ້ປະກອບການໃນສະຖານການສຶກສາຊັ້ນສູງ.

**ຜົນໄດ້ຮັບລະດັບກາງທີ 5: ດຳເນີນການຕິດຕາມຜູ້ສຳເລັດການສຶກສາຈາກມະຫາວິທະຍາໄລຢ່າງເປັນປົກກະຕິ ແລະ ມີປະສິດທິຜົນ ເພື່ອລະບຸຄວາມສາມາດໃນການຈ້າງງານ ແລະ ຄວາມເພິ່ງພໍໃຈຂອງຜູ້ຈ້າງງານ (ພາກທີ I, ຜົນໄດ້ຮັບທີ 5, ຜົນໄດ້ຮັບລະດັບກາງທີ 10 ແລະ 11)**

**<u>ຍຸດທະສາດທີ 1</u>**: ຄະນະປະສານງານດ້ານວິຊາການການສຶກສາຫຼັງຂັ້ນພື້ນຖານ ອອກຂໍ້ແນະນຳໃຫ້ບັນດາມະຫາວິທະຍາໄລ ດຳເນີນການຕິດຕາມຜູ້ສຳເລັດການສຶກສາຢ່າງມີປະສິດທິຜົນ ແລະ ນຳໃຊ້ຜົນການຕິດຕາມ ເພື່ອເປັນພື້ນຖານໃຫ້ແກ່ການພັດທະນາຫຼັກສູດ ແລະ ແຜນງານຕ່າງໆ.

**<u>ວຽກຈຸດສຸມ</u>**

- ສ້າງຖານຂໍ້ມູນ ແລະ ສ້າງເຄື່ອງມືຕິດຕາມ ຜູ້ສຳເລັດການສຶກສາແຕ່ລະລຸ້ນເພື່ອຕິດຕາມການມີວຽກເຮັດງານທຳ;
- ສົ່ງເສີມໃຫ້ສະຖານການສຶກສາຊັ້ນສູງ ຈັດກິດຈະກຳແລກປ່ຽນປະສົບປະການລະຫວ່າງຜູ້ສຳເລັດການສຶກສາ ແລະ ນັກສຶກສາປີສຸດທ້າຍ;
- ຈັດກອງປະຊຸມວິຊາການໃນການສ້າງ ແລະ ພັດທະນາຫລັກສູດ ເພື່ອແລກປ່ຽນປະສົບການກັບຜູ້ມີສ່ວນຮ່ວມຕ່າງໆ.

**<u>ຍຸດທະສາດ 2</u>**: ສຶກສາການຕິດຕາມຂໍ້ມູນຜູ້ສຳເລັດການສຶກສາປະຈຳປີທັງພາຍໃນ ແລະ ຕ່າງປະເທດ ແລະ ລາຍງານຜົນຕໍ່ກອງປະຊຸມສຶກສາປະຈຳປີ ແລະ ໜ່ວຍງານວິຊາການຂະແໜງການສຶກສາ.

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຍຸດທະສາດນີ້ໄດ້ຢ່າງເຕັມສ່ວນ, ແມ່ນມີຄວາມຕ້ອງການດ້ານງົບປະມານທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອຈາກຕ່າງປະເທດ ຕ້ອງສຸມໃສ່ການຈັດຕັ້ງປະຕິບັດຍຸດທະສາດນີ້,

**<u>ວຽກຈຸດສຸມ</u>**

- ກະກຽມບົດລາຍງານຂໍ້ມູນຜູ້ສຳເລັດການສຶກສາປະຈຳປີທັງພາຍໃນ ແລະ ຕ່າງປະເທດ ເພື່ອລາຍງານຜົນຕໍ່ກອງປະຊຸມສຶກສາປະຈຳປີ ແລະ ໜ່ວຍງານວິຊາການຂະແໜງການສຶກສາ;
- ຖອດຖອນບົດຮຽນກ່ຽວກັບການຕິດຕາມຜູ້ສຳເລັດການສຶກສາ ໃນ 4 ມະຫາວິທະຍາໄລ.

**ຜົນໄດ້ຮັບລະດັບກາງທີ 6: ໜ່ວຍງານປະກັນຄຸນນະພາບຂອງມະຫາວິທະຍາໄລ ໄດ້ມີການປະເມີນສະຖາບັນຂອງຕົນເອງທຸກປີ ແລະ ມີການປະເມີນຈາກພາຍນອກທຸກໆ 5 ປີ (ພາກທີ I, ຜົນໄດ້ຮັບທີ 5, ຜົນໄດ້ຮັບລະດັບກາງທີ 11)**

**<u>ຍຸດທະສາດທີ 1</u>**: ໜ່ວຍງານປະກັນຄຸນນະພາບ ແຕ່ລະສະຖານການສຶກສາຊັ້ນສູງ ຈັດຕັ້ງປະຕິບັດການປະເມີນຕົນເອງຢ່າງມີປະສິດທິພາບ.

**<u>ວຽກຈຸດສຸມ:</u>**

- ຈັດຕັ້ງທີມງານປະກັນຄຸນນະພາບພາຍໃນຢູ່ມະຫາວິທະຍາໄລແຫ່ງຊາດ ເພື່ອດຳເນີນການປະເມີນຄຸນນະພາບການສຶກສາ ຢູ່ແຕ່ລະສະຖານການສຶກສາຊັ້ນສູງ;
- ກົມການສຶກສາຊັ້ນສູງຮ່ວມກັບສູນປະກັນຄຸນນະພາບການສຶກສາ ຝຶກອົບຮົມໃຫ້ໜ່ວຍງານການປະກັນຄຸນນະພາບຂອງແຕ່ລະສະຖານການສຶກສາຊັ້ນສູງໃຫ້ມີຄວາມເຂັ້ມແຂງ;
- ພັດທະນາຖານຂໍ້ມູນຄຸ້ມຄອງການບໍລິການວິຊາການ ເພື່ອການຄຸ້ມຄອງວຽກງານວິຊາການໃນສະຖາບັນການສຶກສາຊັ້ນສູງ ມີປະສິດທິພາບ ແລະ ປະສິດທິຜົນ;
- ສ້າງ ແລະ ປັບປຸງຄູ່ມືການກວດສອບຄຸນນະພາບ;
- ສົ່ງເສີມໃຫ້ມະຫາວິທະຍາໄລ ມີການປະກັນຄຸນນະພາບຫຼັກສູດໃນລະດັບພາກພື້ນ ຫຼື ຮ່ວມກັບອົງ ການສາກົນ.

**<u>ຍຸດທະສາດທີ 2:</u>** ສ້າງຄວາມເຂັ້ມແຂງລະບົບປະກັນຄຸນນະພາບຂອງການສຶກສາຊັ້ນສູງ

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຍຸດທະສາດນີ້ໄດ້ຢ່າງເຕັມສ່ວນ, ແມ່ນມີຄວາມຕ້ອງການດ້ານງົບປະມານທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອຈາກຕ່າງປະເທດ ຕ້ອງສຸມໃສ່ການຈັດຕັ້ງປະຕິບັດຍຸດທະສາດນີ້.

**<u>ວຽກຈຸດສຸມ</u>**

- ສ້າງຄູ່ມືການປະກັນຄຸນນະພາບລະດັບຫຼັກສູດຂອງສະຖານການສຶກສາຊັ້ນສູງ;
- ດຳເນີນການປະເມີນພາຍນອກຂອງສະຖາບັນການສຶກສາຊັ້ນສູງ ແລະ ຮັບຮອງຄຸນນະພາບ;
- ພັດທະນາມາດຕະຖານຂັ້ນພື້ນຖານຂອງຫຼັກສູດ ໃນສະຖາບັນການສຶກສາຊັ້ນສູງ;
- ດຳເນີນການສ້າງຂີດຄວາມສາມາດໃນການພັດທະນາຄຸນນະພາບຫຼັກສູດສຳລັບສະຖາບັນການສຶກສາຊັ້ນສູງ;
- ດຳເນີນການປະເມີນຄຸນນະພາບຂອງຫຼັກສູດ ແລະ ຮັບຮອງຄຸນນະພາບ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ການປະກັນຄຸນນະພາບພາຍໃນ ແລະ ພາຍນອກ, ການຮ່ວມມືກັບສາກົນ.

**ຜົນໄດ້ຮັບບະດັບກາງທີ 7: ຄຸນນະພາບຂອງຄູສອນໃນສະຖານການສຶກສາຊັ້ນສູງ ມີຄວາມເຂັ້ມແຂງຂຶ້ນ ໂດຍຜ່ານການປະເມີນການປະຕິບັດງານ ຂອງພະນັກງານຢ່າງເປັນປົກກະຕິ, ໂດຍສະເພາະແມ່ນ ໃນບັນດາວິຊາໃນສາຍວິຊາວິທະຍາສາດທຳມະຊາດ ແລະ ເຕັກໂນໂລຊີ (ພາກທີ I, ຜົນໄດ້ຮັບທີ 5, ຜົນໄດ້ຮັບລະດັບກາງທີ 11)**

**<u>ຍຸດທະສາດທີ 1</u>**: ພັດທະນາ ແລະ ຈັດຕັ້ງປະຕິບັດມາດຕະຖານການສອນຂອງຄູສອນໃນສະຖານການສຶກສາຊັ້ນສູງ.

**<u>ວຽກຈຸດສຸມ:</u>**

- ສ້າງມາດຕະຖານ ແລະ ເງື່ອນໄຂສຳລັບອາຈານສອນໃນມະຫາວິທະຍາໄລ;
- ຍົກລະດັບວິຊາສະເພາະຄູສອນ ແລະ ແລກປ່ຽນບົດຮຽນດ້ານວິຊາການຮ່ວມກັບມະຫາວິທະຍາໄລຕ່າງໆ ຂອງຕ່າງປະເທດ;
- ຈັດຝຶກອົບຮົມວິຊາຄູໃຫ້ແກ່ພະນັກງານ, ຄູ-ອາຈານ ສະເພາະຜູ້ທີ່ບໍ່ໄດ້ຜ່ານຫຼັກວິຊາຄູ;
- ສ້າງ ແລະ ປັບປຸງຄູ່ມືຄວາມຕ້ອງການຄູ ແລະ ດຳລັດລັດຖະກອນຄູໃຫ້ສອດຄ່ອງກັບການສຶກສາຊັ້ນສູງ;
- ປັບປຸງ, ສ້າງ ແລະ ພັດທະນາກົນໄກຄຸ້ມຄອງບໍລິຫານ, ການບໍລິການທີ່ດີ ແລະ ສ້າງມະຫາວິທະຍາໄລໃຫ້ທັນສະໄໝ.

**<u>ຍຸດທະສາດທີ 2</u>**: ພັດທະນາເຄື່ອງມື ແລະ ວິທີການໃນການປະເມີນຜົນການປະຕິບັດໜ້າທີ່ຂອງອາຈານສອນໃນມະຫາວິທະຍາໄລ ພ້ອມທັງນຳໄປຈັດຕັ້ງປະຕິບັດ.

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຍຸດທະສາດນີ້ໄດ້ຢ່າງເຕັມສ່ວນ, ແມ່ນມີຄວາມຕ້ອງການດ້ານງົບປະມານທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອຈາກຕ່າງປະເທດ ຕ້ອງສຸມໃສ່ການຈັດຕັ້ງປະຕິບັດຍຸດທະສາດນີ້,

**<u>ວຽກຈຸດສຸມ</u>**

- ສ້າງຄູ່ມືໃນການປະເມີນອາຈານສອນ ສາຍວິທະຍາສາດທຳມະຊາດ ໃນສະຖານການສຶກສາຊັ້ນສູງ;
- ຝຶກອົບຮົມວິຊາຊີບຄູໃຫ້ກັບອາຈານສອນວິຊາວິທະຍາສາດທຳມະຊາດ 4 ມະຫາວິທະຍາໄລຂອງລັດ;
- ຕິດຕາມ ແລະ ປະເມີນຜົນການເຮັດວຽກ ຂອງຄູສອນໃນສະຖານການສຶກສາຊັ້ນສູງ;
- ສ້າງ ແລະ ປັບປຸງວິທີການປະເມີນຜົນ ເພື່ອສຳຫຼວດລັດຖະກອນຄູ ແລະ ບໍລິຫານ ໃນແຕ່ລະສາຂາວິຊາ;
- ພັດທະນາລະບົບຕິດຕາມ ແລະ ຄຸ້ມຄອງຄູອາຈານສອນຕາມລາຍວິຊາ ພາຍໃຕ້ໂຄງສ້າງຂອງ Laos University Management System (LUMS).

**ຜົນໄດ້ຮັບລະດັບກາງທີ 8: ການຂະຫຍາຍການສຶກສາລະດັບມະຫາວິທະຍາໄລ ໃຫ້ມີຄວາມຄຸ້ມຄ່າຫຼາຍຂຶ້ນ (ພາກທີ 1, ຜົນໄດ້ຮັບທີ 5, ຜົນໄດ້ຮັບລະດັບກາງທີ 12)**

**<u>ຍຸດທະສາດທີ 1</u>**: ສຶກສາຄວາມເປັນໄປໄດ້ໃນການສ້າງຄວາມເປັນເຈົ້າຕົນເອງທາງດ້ານການເງິນຢູ່ມະຫາວິທະຍາໄລ.

**<u>ວຽກຈຸດສຸມ:</u>**

- ທົດລອງຈັດຕັ້ງປະຕິບັດນະໂຍບາຍການເປັນເຈົ້າຕົນເອງທາງດ້ານການເງິນ ຢູ່ ມະຫາວິທະຍາໄລແຫ່ງຊາດ;
- ຍົກລະດັບຄວາມສາມາດດ້ານການສ້າງແຜນການ, ແຜນງົບປະມານການເງິນໃຫ້ເຂັ້ມແຂງ;
- ສ້າງຄວາມເຂັ້ມແຂງທາງດ້ານການເງິນໃຫ້ ບັນດາມະຫາວິທະຍາໄລ.

**<u>ຍຸດທະສາດທີ 2:</u>** ພັດທະນານິຕິກຳກ່ຽວກັບການສະໜອງການສຶກສາແບບປະສົມປະສານ (ການຮຽນທາງໄກ ແລະ ຮຽນກັບທີ່) ແລະ ການຮຽນອອນລາຍ (ຜ່ານໄຊເບີ ຂອງມະຫາວິທະຍາໄລໄຊເບີ ອາຊຽນ) ເພື່ອສະໜອງຫຼັກ ສູດໃນລະດັບມະຫາວິທະຍາໄລ.

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຍຸດທະສາດນີ້ໄດ້ຢ່າງເຕັມສ່ວນ, ແມ່ນມີຄວາມຕ້ອງການດ້ານງົບປະມານທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອຈາກຕ່າງປະເທດ ຕ້ອງສຸມໃສ່ການຈັດຕັ້ງປະຕິບັດຍຸດທະສາດນີ້,

**<u>ວຽກຈຸດສຸມ:</u>**

- ສຶກສາຄວາມເປັນໄປໄດ້ໃນການສະໜອງການສຶກສາແບບປະສົມ (ການຮຽນທາງໄກ ແລະ ຮຽນກັບທີ່) ແລະ ການຮຽນທາງອອນລາຍ ເພື່ອສະໜອງຫຼັກສູດໃນລະດັບມະຫາວິທະຍາໄລ;
- ສ້າງຫຼັກສູດການຮຽນ-ການສອນແບບປະສົມ (ການຮຽນທາງໄກ ແລະ ຮຽນກັບທີ່);
- ຈັດທົດລອງການສອນຫຼັກສູດແບບການຮຽນ-ການສອນແບບປະສົມ (ການຮຽນທາງໄກ ແລະ ຮຽນກັບທີ່)
- ສ້າງ ແລະ ກຳນົດລະບຽບການ, ມາດຕະຖານຫຼັກສູດການຮຽນທາງໄກ ແລະ ບໍລິຫານຄຸ້ມຄອງໃນການສຶກສາຊັ້ນສູງ;
- ສ້າງ ແລະ ພັດທະນາລະບຽບໃນການຮຽນຫຼັກສູດທີ່ຜ່ານສື່ເອເລັກໂຕຼນິກ ຂອງສະຖານການສຶກສາຊັ້ນສູງ.
- ພັດທະນາລະບົບການຮຽນ-ການສອນທາງໄກ, ການຝຶກອົບຮົມ ແລະ ການສ້າງເຄືອຂ່າຍຄອມພິວເຕີ;
- ສ້າງຄັງລາຍວິຊາ ແລະ ລະບົບຂໍ້ມູນລາຍວິຊາ OER/MOOCS.

**ຜົນໄດ້ຮັບລະດັບກາງທີ 9: ມີນິຕິກຳກ່ຽວກັບການນຳໃຊ້ສູດຄິດໄລ່ການສະໜອງທຶນອີງໃສ່ຜົນການປະຕິບັດງານ ສຳລັບມະຫາວິທະຍາໄລທີ່ຕັ້ງຢູ່ຕ່າງແຂວງ (ອັດຕາຄົງທີ່, ຕໍ່ຫົວນັກຮຽນ, ຕໍ່ສາຍວິທະຍາສາດທຳມະຊາດ ແລະ ບົນພື້ນຖານຄວາມແຕກໂຕນ) (ພາກທີ 1, ຜົນໄດ້ຮັບທີ 5, ຜົນໄດ້ຮັບລະດັບກາງທີ 12)**

**<u>ຍຸດທະສາດທີ 1</u>:** ພັດທະນາ ແລະ ຈຳລອງແບບການນຳໃຊ້ສູດຄິດໄລ່ການສະໜອງທຶນ ໂດຍອີງໃສ່ຜົນການຮຽນສຳລັບນັກສຶກສາທີ່ຮຽນຢູ່ມະຫາວິທະຍາໄລທີ່ຕັ້ງຢູ່ຕ່າງແຂວງ (ອັດຕາຄົງທີ່, ຕໍ່ຫົວນັກຮຽນ, ຕໍ່ສາຍວິທະຍາສາດທຳມະຊາດ ແລະ ບົນພື້ນຖານຄວາມແຕກໂຕນ).

**<u>ວຽກຈຸດສຸມ:</u>**

- ສ້າງນິຕິກຳກ່ຽວກັບການສະໜອງທຶນໃຫ້ແກ່ການສຶກສາຊັ້ນສູງໃນສາຍວິຊາວິທະຍາສາດທຳມະຊາດ;
- ຈັດກອງປະຊຸມປຶກສາຫາລືກ່ຽວກັບຄິດໄລ່ອັດຕາເບ້ຍລ້ຽງ ລະຫວ່າງນັກສຶກສາສາຍວິຊາວິທະຍາສາດທຳມະຊາດ ແລະ ສາຍອື່ນໆ;
- ສ້າງຂໍ້ກຳນົດ/ລະບຽບການໃນການສອບເສັງຄັດເລືອກລະດັບຊາດ ເອົານັກສຶກສາໃນສາຍວິທະຍາສາດທຳມະຊາດ.

**ຜົນໄດ້ຮັບລະດັບກາງທີ 10: ທຶນການສຶກສາໄປຮຽນຕ່າງປະເທດແມ່ນໃຫ້ບູລິມະສິດໃນສາຍວິຊາທີ່ສອດຄ່ອງກັບຄວາມຕ້ອງການທາງດ້ານການພັດທະນາເສດຖະກິດ-ສັງຄົມ ຄັ້ງທີ IX ຂອງຊາດ (ພາກທີ 1, ຜົນໄດ້ຮັບທີ 5, ຜົນໄດ້ຮັບລະດັບກາງທີ 10)**

**<u>ຍຸດທະສາດທີ 1</u>:** ຄົ້ນຄວ້າການສະໜອງທຶນໃຫ້ນັກສຶກສາໄປຮຽນຕ່າງປະເທດໃນຂະແໜງວິທະຍາສາດ ແລະ ເທັກໂນໂລຊີ.

**<u>ວຽກຈຸດສຸມ:</u>**

- ຈັດກອງປະຊຸມ ເພື່ອພັດທະນານິຕິກຳການຄຸ້ມຄອງນັກສຶກສາລາວ ແລະ ສະໜອງທຶນການສຶກສາໃຫ້ແກ່ນັກສຶກສາລາວໄປຮຽນຕ່າງປະເທດ (ເຊັ່ນ: ດຳລັດວ່າດ້ວຍການຄຸ້ມຄອງທຶນການສຶກສາ ແລະ ການສົ່ງນັກສຶກສາໄປຮຽນຕ່າງປະເທດ) ແລະ ນັກສຶກສາຕ່າງປະເທດ ມາຮຽນຢູ່ ສປປ ລາວ;
- ຈັດກອງປະຊຸມ ເພື່ອພິຈາລະນາ ແລະ ປຶກສາຫາລື ກ່ຽວກັບການສະໜອງທຶນໃຫ້ນັກສຶກສາໄປຮຽນຕ່າງປະເທດໃນຂະແໜງວິທະຍາສາດ ແລະ ເທັກໂນໂລຊີ;
- ສ້າງຕັ້ງກອງທຶນເພື່ອສົ່ງເສີມນັກສຶກສາຜູ້ດ້ອຍໂອກາດ, ທຸກຍາກ, ເຂດຫ່າງໄກສອກຫຼີກ ແລະ ເພດຍິງ.

**ຜົນໄດ້ຮັບລະດັບກາງທີ 11: ການຄົ້ນຄວ້າວິທະຍາສາດ ໃນສະຖານການສຶກສາຊັ້ນສູງໄດ້ຮັບການສົ່ງເສີມ (ພາກທີ 1, ຜົນໄດ້ຮັບທີ 5, ຜົນໄດ້ຮັບລະດັບກາງທີ 10)**

**<u>ຍຸດທະສາດທີ 1</u>:** ພັດທະນາເວັບໄຊ ເພື່ອຄຸ້ມຄອງ, ສົ່ງເສີມ ແລະ ເຜີຍແຜ່ ວຽກງານຄົ້ນຄວ້າວິທະຍາສາດ ຂອງຄູ-ອາຈານສອນ ແລະ ນັກຄົ້ນຄວ້າ ຂອງສະຖາບັນການສຶກສາຊັ້ນສູງ ແລະ ພັດທະນາເວັບໄຊ ເພື່ອເຜີຍແຜ່ຂໍ້ມູນວຽກງານກິດຈະການນັກສຶກສາລາວໄປຮຽນຕ່າງປະເທດ ແລະ ນັກສຶກສາຕ່າງປະເທດມາຮຽນຢູ່ ສປປ ລາວ.

**<u>ວຽກຈຸດສຸມ:</u>**

- ຝຶກອົບຮົມເພື່ອຍົກລະດັບ ຂີດຄວາມສາມາດໃນການຄຸ້ມຄອງບໍລິຫານ ການຄົ້ນຄວ້າວິທະຍາສາດ ໃຫ້ແກ່ໜ່ວຍງານຄຸ້ມຄອງການຄົ້ນຄວ້າວິທະຍາສາດຂັ້ນກະຊວງ ແລະ ຂັ້ນສະຖານການສຶກສາຊັ້ນສູງ;
- ຈັດຝຶກອົບຮົມການສ້າງຂີດຄວາມສາມາດໃຫ້ກັບນັກຄົ້ນຄວ້າວິທະຍາສາດໃນສະຖານການສຶກສາຊັ້ນສູງ
- ສ້າງຖານຂໍ້ມູນການຄຸ້ມຄອງ ວຽກງານການຄົ້ນຄວ້າວິທະຍາສາດຂອງສະຖານການສຶກສາຊັ້ນສູງ;

- ສ້າງຖານຂໍ້ມູນນັກສຶກສາລາວໄປຮຽນຕ່າງປະເທດ ແລະ ນັກສຶກສາຕ່າງປະເທດມາຮຽນຢູ່ ສປປ ລາວ.
- ສ້າງຄວາມເຂັ້ມແຂງທາງດ້ານການຄົ້ນຄວ້າວິທະຍາສາດຜ່ານການຮ່ວມມືກັບອົງກອນ ທັງພາກລັດ ແລະ ເອກກະຊົນທັງພາຍໃນ ແລະ ສາກົນ;
- ສ້າງເຄືອຂ່າຍການຄົ້ນຄວ້າວິທະຍາສາດທັງພາຍໃນ ແລະ ຕ່າງປະເທດ (LERNET/Inter-REN);
- ສ້າງສູນກາງການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ.

<u>**ຍຸດທະສາດທີ 2**:</u> ສ້າງສູນດັດຊະນີວາລະສານລາວ (LCI) Lao Citation Index ໃຫ້ໄດ້ມາດຕະຖານສາກົນ.

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຍຸດທະສາດນີ້ໄດ້ຢ່າງເຕັມສ່ວນ, ແມ່ນມີຄວາມຕ້ອງການດ້ານງົບປະມານທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານການຊ່ວຍເຫຼືອຈາກຕ່າງປະເທດ ຕ້ອງສຸມໃສ່ການຈັດຕັ້ງປະຕິບັດຍຸດທະສາດນີ້,

<u>**ວຽກຈຸດສຸມ:**</u>

- ສ້າງຕັ້ງຄະນະກຳມະການຮັບຜິດຊອບການຄຸ້ມຄອງສູນດັດຊະນີວາລະສານລາວ (LCI) Lao Citation Index;
- ສຶກສາຄວາມເປັນໄປໄດ້ໃນການສ້າງສູນດັດຊະນີວາລະສານລາວ (LCI) Lao Citation Index;
- ຈັດຝຶກອົບຮົມການຂຽນວາລະສານໃນຮູບແບບທີ່ ສາກົນຍອມຮັບ;
- ສ້າງຖານຂໍ້ມູນໃນການຄຸ້ມຄອງວາລະສານລາວ.

### ຜົນໄດ້ຮັບລະດັບກາງທີ 12: ການສົ່ງເສີມຕຳແໜ່ງວິຊາການຄູໃນສະຖານການສຶກສາຊັ້ນສູງ (ພາກທີ 1, ຜົນໄດ້ຮັບທີ 5, ຜົນໄດ້ຮັບລະດັບກາງທີ 11)

<u>**ຍຸດທະສາດທີ 1:**</u> ສ້າງນິຕິກຳກ່ຽວກັບການສົ່ງເສີມຕຳແໜງວິຊາການອາຈານສອນໃນສະຖານການສຶກສາຊັ້ນສູງ

<u>**ວຽກຈຸດສຸມ:**</u>

- ເຜີຍແຜ່ດຳລັດວ່າດ້ວຍຕຳແໜ່ງວິຊາການຄູໃນສະຖານການສຶກສາຊັ້ນສູງ;
- ສະເໜີສ້າງແຜນງົບປະມານໃຫ້ແກ່ອາຈານສອນທີ່ໄດ້ຮັບຕຳແໜ່ງວິຊາການຄູຢູ່ມະຫາວິທະຍາໄລ.

# IX. ຂະແໜງການຍ່ອຍກິລາ-ກາຍຍະກຳ

## 1. ກິລາມວນຊົນ, ພະລະ ແລະ ສິລະປະສຶກສາ

### 1.1. ຜົນສຳເລັດ

ກິລາ-ກາຍຍະກຳມວນຊົນ, ພະລະ ແລະ ສິລະປະສຶກສາ ແມ່ນວຽກງານໜຶ່ງທີ່ໄດ້ກຳນົດຢູ່ໃນຍຸດທະສາດການພັດທະນາຊັບພະຍາກອນມະນຸດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທີ່ລັດຖະບານກຳນົດໃນແຕ່ລະປີ "ສົ່ງເສີມໃຫ້ມວນຊົນ ທຸກເພດທຸກໄວ ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ, ການຫຼິ້ນກິລາ ແລະ ເຂົ້າຮ່ວມການສ້າງຂະບວນການເຄື່ອນໄຫວ ຈັດກິດຈະກຳ ການແຂ່ງຂັນກິລາ-ກາຍຍະກຳມວນຊົນປະຈຳປີ, ແຂ່ງຂັນກິລາວັນບຸນປະເພນີ ແລະ ແຂ່ງຂັນກິລາ-ກາຍຍະກຳມວນຊົນ ສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງຊາດ-ສາກົນ ແລະ ປະຕິບັດຫຼັກສູດການສຶກສາແນໃສ່ເຮັດໃຫ້ຜູ້ຮຽນມີຄວາມຮູ້, ຄວາມສາມາດພື້ນຖານກ່ຽວກັບກິລາ-ກາຍະກຳ ແລະ ສິລະປະສຶກສາ ໂດຍຜ່ານບົດຮຽນ, ການເຄື່ອນໄຫວກິດຈະກຳ, ການແຂ່ງຂັນກິລາ-ສິລະປະວັນນະຄະດີ ແລະ ຂະບວນການຕ້ານສິ່ງເສບຕິດໃນໂຮງຮຽນ "ເພື່ອເຮັດໃຫ້ພົນລະເມືອງລາວ ມີສຸຂະພາບເຂັ້ມແຂງ ທາງດ້ານຮ່າງກາຍ ແລະ ຈິດໃຈ, ອາລົມ, ສັງຄົມ, ມີນ້ຳໃຈນັກກິລາທີ່ຜ່ອງໃສ, ສ້າງສະຕິຊາດ, ຮັກສາມູນເຊື້ອສິລະປະວັດທະນະທຳອັນດີງາມຂອງທ້ອງຖິ່ນ-ຂອງຊາດ ສາມາດປະກອບສ່ວນ ເຂົ້າໃນການພັດທະນາຊັບພະຍາກອນມະນຸດ, ຍົກສູງຖານະບົດບາດຂອງຊາດ ແນ່ໃສ່ເພີ່ມທະວີຄວາມສາມັກຄີ, ສັນຕິພາບ, ການຮ່ວມມືກັບບັນດາປະເທດໃນພາກພື້ນ ແລະ ສາກົນ ເພື່ອຮັບໃຊ້ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### 1.2. ສິ່ງທ້າທາຍ

ວຽກງານກິລາ-ກາຍຍະກຳມວນຊົນໄດ້ມີການຂະຫຍາຍຕົວຢ່າງກວ້າງຂວາງ, ແຕ່ການຂະຫຍາຍຕົວດັ່ງກ່າວຍັງບໍ່ທັນເຂົ້າເຖິງໃນຊຸມຊົນ ແລະ ທ້ອງຖິ່ນ, ກົງຈັກການຈັດຕັ້ງໃນຂະແໜງກິລາ-ກາຍຍະກຳມວນຊົນ ຍັງບໍ່ທັນເຂັ້ມແຂງ; ມາດຕະຖານການພັດທະນາກິລາ-ກາຍຍະກຳມວນຊົນຍັງບໍ່ທັນສົມບູນ, ບຸກຄະລາກອນຍັງຈຳກັດ, ຄຸນນະພາບບໍ່ສູງ, ການນຳໃຊ້ພື້ນຖານໂຄງລ່າງ, ອຸປະກອນກິລາ-ກາຍຍະກຳມວນຊົນ ຍັງຈຳກັດບໍ່ທັນຕອບສະໜອງໄດ້ກັບການສ້າງຂະບວນການເຄື່ອນໄຫວຈັດກິດຈະກຳກິລາ-ກາຍຍະກຳມວນຊົນ ໄດ້ເທົ່າທີ່ຄວນ, ການລົງທຶນໃສ່ໃນການພັດທະນາ ກິລາ-ກາຍຍະກຳມວນຊົນ ແຕ່ສູນລົງຮອດທ້ອງຖິ່ນ ຍັງມີຈຳກັດ, ບໍ່ຕໍ່ເນື່ອງ ແລະ ຍັງຂາດການຈັດສັນ, ແບ່ງງົບປະມານ ໃຫ້ວຽກງານການພັດທະນາກິລາ-ກາຍຍະກຳມວນຊົນ ຢູ່ທ້ອງຖິ່ນ.

ວຽກງານພະລະ ແລະ ສິລະປະສຶກສາ ເຖິງຈະມີຂະບວນການພົ້ນເດັ່ນ ແຕ່ກໍຍັງບໍ່ທັນເປັນຂະບວນໃຫຍ່ ແລະ ກວ້າງຂວາງ ເນື່ອງມາຈາກງົບປະມານຮັບໃຊ້ບໍ່ພຽງພໍ, ເຖິງວ່າການສ້າງຄູຈະມີປະລິມານເພີ່ມຂຶ້ນ ແຕ່ດ້ານການບັນຈຸສັບຊ້ອນ ຄູ 2 ວິຊາດັ່ງກ່າວ ຍັງບໍ່ທັນໄດ້ຖືກປະຕິບັດຢ່າງທົ່ວເຖິງ ບໍ່ສາມາດປະຕິບັດຕົວເລກຄາດໝາຍ ໃນແຜນ 5 ປີ (2016-2020) ໃນການບັນຈຸຄູພະລະສຶກສາ ແລະ ຄູສິລະປະສຶກສາ ເຂົ້າໃນຊັ້ນປະຖົມ. ສຳລັບຊັ້ນມັດທະຍົມ ເຖິງຈະບັນຈຸຄູເພີ່ມຂຶ້ນໃນທຸກປີ ແຕ່ກໍ່ຍັງບໍ່ທັນພຽງພໍຕາມຄາດໝາຍທີ່ວາງໄວ້ ໂດຍສະເພາະ ຄູສິລະປະດົນຕີ ແລະ ຄູສິລະປະກຳ ຍັງມີຄວາມຕ້ອງການຫຼາຍ.

### 1.3. ບູລິມະສິດ ແຕ່ປີ 2021-2025

#### 1.3.1. ຈຸດປະສົງ

1) ສົ່ງເສີມມວນຊົນ ທຸກເພດທຸກໄວ ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ, ການຫຼິ້ນກິລາ ແລະ ຊຸກຍູ້ສົ່ງເສີມວຽກງານພະລະ ແລະ ສິລະປະສຶກສາ;

2) ປັບປຸງ, ພັດທະນາວຽກງານກິລາ-ກາຍຍະກຳມວນຊົນ, ວຽກງານພະລະ ແລະ ສິລະປະສຶກສາ ຢູ່ພາຍໃນປະເທດ ໃຫ້ມີຄວາມເຂັ້ມແຂງທາງດ້ານປະລິມານ ແລະ ຄຸນນະພາບ;
3) ສົ່ງເສີມການສ້າງຂະບວນການແຂ່ງຂັນກິລາ-ກາຍຍະກຳມວນຊົນ, ສິລະປະທັງພາຍໃນ ແລະ ນອກໂຮງຮຽນປະຈຳປີ, ກິລາປະເພນີ ແລະ ສະເຫຼີມສະຫຼອງ ວັນສຳຄັນຕ່າງໆຂອງຊາດ-ສາກົນ;
4) ສົ່ງເສີມຂະບວນຈັດການແຂ່ງຂັນກິລານັກຮຽນ, ກິລາ-ກາຍຍະກຳຄົນພິການ ຢູ່ພາຍໃນປະເທດ ແລະ ເຂົ້າຮ່ວມການແຂ່ງຂັນກິລາຢູ່ຕ່າງປະເທດ;
5) ຍົກລະດັບຜູ້ບໍລິຫານ, ວິຊາການ, ກຳມະການຕັດສິນ, ຄູຝຶກ, ຄູສອນ ແລະ ນັກກິລາທີ່ມີພອນສະຫວັນ ໄດ້ຮັບການພັດທະນາຄວາມຮູ້ ຄວາມສາມາດ ແລະ ສ້າງມາດຕະຖານໃຫ້ນັກກິລາ ສາມາດເຂົ້າຮ່ວມງານແຂ່ງຂັນກິລາ ໃນລະດັບສາກົນ;
6) ຊຸກຍູ້, ສົ່ງເສີມໃຫ້ນັກຮຽນ-ນັກສຶກສາ ມີຄວາມຮູ້ພື້ນຖານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານຕ້ານ ແລະ ສະກັດກັ້ນສິ່ງເສບຕິດໃນໂຮງຮຽນ.

### 1.3.2. ຄາດໝາຍ

1) ມວນຊົນ ທຸກເພດ, ທຸກໄວເຂົ້າຮ່ວມຫັດກາຍຍະບໍລິຫານ, ອອກກຳລັງກາຍ ແລະ ຫຼິ້ນກິລາ ໃຫ້ເປັນປົກກະຕິໃຫ້ບັນລຸ 50%;
2) ຍົກລະດັບຜູ້ບໍລິຫານ-ຄຸ້ມຄອງ, ກຳມະການຕັດສິນ, ຄູຝຶກ ກິລາ-ກາຍຍະກຳມວນຊົນ ຂັ້ນແຂວງ/ນະຄອນຫຼວງ ໃຫ້ບັນລຸ 4.410 ຄົນ ໃນຈຳນວນ 22 ປະເພດກິລາ ແລະ ໃນລະດັບສາກົນ ບັນລຸໄດ້ 50 ຄົນ ໃນຈຳນວນ 10 ປະເພດກິລາ;
3) ສົ່ງເສີມຄົນພິການລາວອອກກຳລັງກາຍ, ຫຼິ້ນກິລາ ແລະ ເຂົ້າຮ່ວມການແຂ່ງຂັນ ກິລາ-ກາຍຍະກຳ ຄົນພິການໃນຂອບເຂດທົ່ວປະເທດ ແລະ ລະດັບພາກພື້ນ-ສາກົນ ໃຫ້ບັນລຸ 5% ຂອງຈຳນວນຄົນພິການ ໃນທົ່ວປະເທດ;
4) ສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍວ່າດ້ວຍກິລາ-ກາຍຍະກຳ ຈຳນວນ 8 ສະບັບ ແລະ ປັບປຸງ ປຶ້ມຄູ່ມືກິລາ-ກາຍຍະກຳມວນຊົນ ຈຳນວນ 18 ປະເພດກິລາ;
5) ການຈັດຕັ້ງການຮຽນການສອນ ວິຊາພະລະສຶກສາ ແລະ ສິລະປະສຶກສາ ໃຫ້ໄດ້ 93 % ຂອງໂຮງຮຽນສາມັນສຶກສາທົ່ວປະເທດ;
6) ຈັດຕັ້ງການຮຽນ-ການສອນ ສຶກສາວິຊາພື້ນຖານປ້ອງກັນຕົວ ໃນໂຮງຮຽນມັດທະຍົມສຶກສາຕອນປາຍ ແລະ ວິຊາສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ທັງພາກລັດ ໃຫ້ໄດ້ 93% ແລະ ເອກະຊົນ ໃຫ້ໄດ້ 35% ຂຶ້ນໄປ.
7) ປະກາດ ແລະ ຮັບຮອງໂຮງຮຽນມັດທະຍົມສຶກສາປອດຢາເສບຕິດໃຫ້ໄດ້ 93%, ຊັ້ນປະຖົມສຶກສາ ໃຫ້ໄດ້ 96%, ວິທະຍາໄລຄູ ໃຫ້ໄດ້ 90% ແລະ ໂຮງຮຽນເຕັກນິກວິຊາຊີບໃຫ້ໄດ້ 5%.
8) ຈຳນວນສ່ວນຮ້ອຍ ຂອງນັກຮຽນຊັ້ນຕ່າງໆ ໄດ້ເຄື່ອນໄຫວ ແລະ ຫຼິ້ນກິລາ-ກາຍຍະກຳ:
   - ນັກຮຽນຊັ້ນປະຖົມໃຫ້ໄດ້ 75%;
   - ນັກຮຽນຊັ້ນມັດທະຍົມສຶກສາ 85%;
   - ນັກສຶກສາໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ໃຫ້ໄດ້ 58%.
9) ຈັດການແຂ່ງຂັນກິລານັກຮຽນມັດທະຍົມສຶກສາທົ່ວປະເທດ ຄັ້ງທີ 7 ປີ 2022 ແລະ ຄັ້ງທີ 8 ປີ 2025;
10) ເຂົ້າຮ່ວມການແຂ່ງຂັນກິລານັກຮຽນ ແລະ ກິລາຄົນພິການໃນລະດັບພາກພື້ນ ແລະ ສາກົນ:
   - ສຳລັບກິລານັກຮຽນອາຊຽນ ເຂົ້າຮ່ວມທຸກປີທີ່ມີການຈັດການແຂ່ງຂັນ ແລະ ເປັນເຈົ້າພາບໃນການຈັດການແຂ່ງຂັນກິລາມັດທະຍົມອາຊຽນ ຄັ້ງທີ 16 ໃນປີ 2024;

- ສໍາລັບກິລາຄົນພິການ ເຂົ້າຮ່ວມໃນລະດັດອາຊຽນ ໃຫ້ບັນລຸ 10 ປະເພດກິລາ; ໃນລະດັບອາຊີໃຫ້ບັນ 6 ຄັ້ງ ແລະ ໃນລະດັບ (IPC) ພາຣາແລມປິກເກມ ;

### 1.3.3. ຜົນໄດ້ຮັບລະດັບສູງ

**ພົນລະເມືອງລາວມີສຸຂະພາບແຂງແຮງດ້ານຮ່າງກາຍ ແລະ ຈິດໃຈ, ບຸກຄະລາກອນການກິລາ, ນັກກິລາສະໝັກຫຼິ້ນ ແລະ ນັກກິລາອາຊີບ ໄດ້ມາດຕະຖານຄຸນນະພາບດ້ານກິລາ-ກາຍຍະກໍາ ປະກອບສ່ວນເຂົ້າໃນການເຊີດຊູຖານະບົດບາດຂອງຊາດຢູ່ໃນເວທີສາກົນ ສ້າງຄວາມພາກພູມໃຈໃຫ້ປະຊາຊົນລາວ.**

➢ **ຫຼັກການ ແລະ ເຫດຜົນ**

ຍົກສູງຄຸນນະພາບທາງດ້ານວຽກງານກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ໃຫ້ມີຂະບວນການເຄື່ອນໄຫວຝຶກແອບ, ແຂ່ງຂັນ ຖືກຕ້ອງຕາມລະບຽບຫຼັກການ, ເຮັດໃຫ້ເຍົາວະຊົນ, ຊາວໜຸ່ມ ມີຄວາມມັກໃນການອອກກໍາລັງກາຍ, ຫຼິ້ນກິລາ, ມີສຸຂະພາບສົມບູນແຂງແຮງ, ມີຄວາມສີວິໄລທາງດ້ານຈິດໃຈ, ສະຫງວນຄວາມງາມ, ຮັກສາມູນເຊື້ອສີລະປະວັດທະນະທໍາອັນດີງາມຂອງທ້ອງຖິ່ນ-ຂອງຊາດ ເປັນການພັດທະນາຊັບພະຍາກອນມະນຸດ ຕາມ 3 ລັກສະນະ ແລະ 5 ຫຼັກມູນ ຂອງການສຶກສາແຫ່ງຊາດ.

➢ **ພາກສ່ວນຮັບຜິດຊອບ**

ຜົນສໍາເລັດຂອງ ຜົນໄດ້ຮັບນີ້ ແມ່ນໄດ້ຈາກການມີສ່ວນຮ່ວມເຊິ່ງກັນ ແລະ ກັນລະຫວ່າງກົມກິລາມວນຊົນ, ພະລະ ແລະ ສີລະປະສຶກສາ, ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ, ບັນດາອົງການຈັດຕັ້ງພາກລັດ, ສັງຄົມ ແລະ ຄູ່ຮ່ວມພັດທະນາ.

**ຜົນໄດ້ຮັບລະດັບກາງທີ 1: ໜ່ວຍສະໂມສອນກິລາ-ກາຍຍະກໍາ ຂັ້ນບ້ານ, ຂັ້ນເມືອງ ແລະ ຂັ້ນແຂວງ/ນະຄອນຫຼວງ, ສໍານັກງານອົງການ, ບໍລິສັດ, ໂຮງຈັກ-ໂຮງງານ ແລະ ການຈັດຕັ້ງຕ່າງໆ ທັງພາກລັດ-ເອກະຊົນ ເພີ່ມຂຶ້ນ ແລະ ການພັດທະນາກິລາຄົນພິການໃຫ້ມີປະລິມານ ແລະ ຄຸນນະພາບ ດີຂຶ້ນ ທຽບເທົ່າກັບສາກົນ.**

**<u>ຍຸດທະສາດທີ 1:</u>** ຂະຫຍາຍການສ້າງສະໂມສອນ, ສວນສາທາລະນະ ກິລາ-ກາຍຍະກໍາມວນຊົນ:

**<u>ວຽກຈຸດສຸມ</u>**

- ສ້າງຕັ້ງສະໂມສອນກິລາ-ກາຍຍະກໍາປະເພດຕ່າງໆໃນຂັ້ນບ້ານ, ເມືອງ, ແຂວງ/ນະຄອນຫຼວງ, ບັນດາສໍານັກງານ-ອົງການ, ບໍລິສັດ, ໂຮງຈັກ-ໂຮງງານ ແລະ ອົງການຈັດຕັ້ງຂັ້ນຕ່າງໆ ທັງພາກລັດ-ເອກະຊົນ;
- ຊຸກຍູ້ການສ້າງສະຖານທີ່ ແລະ ສວນສາທາລະນະສໍາລັບອອກກໍາລັງກາຍເພື່ອສຸຂະພາບໃນຂັ້ນບ້ານ, ເມືອງ, ແຂວງ, ນະຄອນຫຼວງ.

**<u>ຍຸດທະສາດທີ 2:</u>** ວຽກງານກິລາ-ກາຍຍະກໍາມວນຊົນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງກ້ວາງຂວາງ ແຕ່ສູນກາງ ລົງຮອດທ້ອງຖິ່ນ.

**<u>ວຽກຈຸດສຸມ</u>**

- ຊຸກຍູ້, ສົ່ງເສີມ ບັນດາແຂວງ, ນະຄອນຫຼວງ, ເມືອງ, ບ້ານ , ບັນດາສໍານັກງານ-ອົງການ, ບໍລິສັດ, ໂຮງຈັກໂຮງງານ ແລະ ອົງການຈັດຕັ້ງຂັ້ນຕ່າງໆ ທັງພາກລັດ-ເອກະຊົນ ຈັດການແຂ່ງຂັນກິລາປະຈໍາປີ, ແຂ່ງຂັນ ກິລາປະເພນີ, ການແຂ່ງຂັນກິລາສະເຫຼີມສະຫຼອງວັນສໍາຄັນຕ່າງໆ ຂອງຊາດ ແລະ ສາກົນ;

- ສົ່ງເສີມບັນດາເມືອງ, ແຂວງ ນະຄອນຫຼວງ, ບັນດາກະຊວງ, ອົງການ ເຂົ້າຮ່ວມການແຂ່ງຂັນກິລາ ມິດຕະພາບ ກັບບັນດາແຂວງ, ເມືອງ ຂອງບັນດາປະເທດ ທີ່ມີຊາຍແດນຕິດຈອດກັນ;
- ສົ່ງເສີມຄົນພິການລາວ ອອກກຳລັງກາຍ, ຫຼິ້ນກິລາ ແລະ ເຂົ້າຮ່ວມການແຂ່ງຂັນ ກິລາ-ກາຍຍະກຳຄົນພິການ ສາກົນ, ການແຂ່ງຂັນກິລາ ເພື່ອສະເຫຼີມສະຫຼອງ ວັນສຳຄັນຕ່າງໆຂອງຊາດ ແລະ ປະຈຳປີ.

**<u>ຍຸດທະສາດທີ 3:</u>** ການບໍລິຫານ-ຄຸ້ມຄອງວຽກງານກິລາ-ກາຍຍະກຳມວນຊົນໃຫ້ມີຄວາມເຂັ້ມແຂງ ແຕ່ສູນກາງ ລົງຮອດທ້ອງຖິ່ນ.

**<u>ວຽກຈຸດສຸມ</u>**

- ສ້າງຂໍ້ຕົກລົງວ່າດ້ວຍມາດຕະຖານກິລາ-ກາຍຍະກຳມວນຊົນ;
- ສ້າງຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງຫົວໜ່ວຍທຸລະກິດກິລາ-ກາຍຍະກຳ ຢູ່ພາຍໃນປະເທດ;
- ປັບປຸງ ຂໍ້ຕົກລົງວ່າດ້ວຍການການຄຸ້ມຄອງກິດຈະກຳກິລາ-ກາຍຍະກຳມວນຊົນ;
- ປັບປຸງນິຕິກຳໃຕ້ກົດໝາຍ ຄື ຄູ່ມືກົດລະບຽບ, ກະຕິກາ ກິລາ-ກາຍຍະກຳມວນຊົນ;
- ຕິດຕາມ, ປະເມີນຜົນ ແລະ ເກັບກຳຂໍ້ມູນສະຖິຕິວຽກງານກິລາ-ກາຍຍະກຳມວນຊົນ;
- ພັດທະນາບຸກຄະລາກອນ, ກຳມະການຕັດສິນ, ຄູຝຶກ, ວິທະຍາສາດການກິລາ, ການແພດ ຮັບໃຊ້ວຽກງານ ກິລາ-ກາຍຍະກຳມວນຊົນ ແລະ ວຽກງານກິລາ-ກາຍຍະກຳຄົນພິການ ຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ມີຄຸນນະພາບ;
- ຍາດແຍ່ງການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ, ສັງຄົມເພື່ອພັດທະນາວຽກງານກິລາ-ກາຍຍະກຳມວນຊົນ;
- ຊຸກຍູ້, ສົ່ງເສີມ ຄະນະກຳມະການພາຣາແລມປິກແຫ່ງຊາດລາວ ແລະ ບັນດາສະຫະພັນກິລາຄົນພິການລາວ ໄດ້ມີການເຄື່ອນໄຫວ ຢ່າງເປັນປົກກະຕິ.

**<u>ຍຸດທະສາດທີ 4</u>:** ຈັດການແຂ່ງຂັນ ແລະ ເຂົ້າຮ່ວມການແຂ່ງຂັນກິລາ-ກາຍຍະກຳຄົນພິການ

**<u>ວຽກຈຸດສຸມ</u>**

- ຈັດງານແຂ່ງຂັນກິລາຄົນພິການທົ່ວປະເທດ ຄັ້ງທີ III ປີ 2021 ແລະ ຄັ້ງທີ IV ປີ 2025;
- ເຂົ້າຮ່ວມງານແຂ່ງຂັນກິລາຄົນພິການ ASEAN Para Games ຄັ້ງທີ X ປີ 2021 ທີ່ນະຄອນຫຼວງ ຮາໂນຍ ປະເທດຫວຽດນາມ, ASEAN Para Games ຄັ້ງທີ XI ປີ 2023 ທີ່ນະຄອນຫຼວງພະນົມເປັນ ປະເທດກຳປູເຈຍ ແລະ ASEAN Para Games ຄັ້ງທີ XII ປີ 2025 ທີ່ຊົນບູລີ ປະເທດໄທ;
- ເຂົ້າຮ່ວມງານແຂ່ງຂັນກິລາຄົນພິການ Asian Para Games ຄັ້ງທີ XIII ປີ 2022 ທີ່ Hangzhou ປະເທດຈີນ ແລະ Asian Para Games ຄັ້ງທີ XIV ປີ 2025 ທີ່ Nagoya ປະເທດຍີ່ປຸ່ນ;
- ເຂົ້າຮ່ວມງານແຂ່ງຂັນກິລາຄົນພິການ Paralympic Games ຄັ້ງທີ XVI ປີ 2021 ທີ່ປະເທດຍີ່ປຸ່ນ ແລະ Paralympic Games ຄັ້ງທີ XVII ປີ 2025 ທີ່ປະເທດຝຣັ່ງ;
- ເຂົ້າຮ່ວມການແຂ່ງຂັນກິລາຄົນພິການໃນລະດັບຊິງແຊມທະວີບ, ຊິງແຊມໂລກ ແລະ ການແຂ່ງຂັນລາຍເກັບຄະແນນຕ່າງໆ (Qualification Event) ຕາມຂໍ້ກຳນົດຂອງ ຄະນະກຳມະການພາຣາແລມປິກສາກົນ (IPC).

**ຜົນໄດ້ຮັບລະດັບກາງທີ 2: ການຮຽນ-ການສອນພະລະ ແລະ ສິລະປະສຶກສາ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງກວ້າງຂວາງຂຶ້ນ, ຈຳນວນບຸກຄະລາກອນນັກວິຊາການດ້ານພະລະສຶກສາ ແລະ ສິລະປະສຶກສາເພີ່ມຂຶ້ນ, ມີຈຳນວນນັກຮຽນ ທີ່ເຂົ້າຮ່ວມການແຂ່ງຂັນກິລາ, ສິລະປະພາຍໃນປະເທດ, ພາກພື້ນ ແລະ ສາກົນຫຼາຍຂຶ້ນ.**

**<u>ຍຸດທະສາດທີ 1:</u>** ພັດທະນາບຸກຄະລາກອນດ້ານວິຊາການພະລະສຶກສາ-ກິລາໃນສະຖານການສຶກສາ

**<u>ວຽກຈຸດສຸມ</u>**

- ສືບຕໍ່ສ້າງ, ຍົກລະດັບ, ຝຶກທັກສະໃຫ້ບຸກຄະລາກອນ ແລະ ນັກກິລານັກຮຽນຢ່າງຕໍ່ເນື່ອງ;
- ຈັດຝຶກອົບຮົມການເປັນຄູຝຶກກິລາແລ່ນ-ລານ, ກິລາບານເຕະ, ກິລາກະຕໍ້, ກິລາລອຍນໍ້າ, ກິລາດອກປີກໄກ່, ປັນຈັກສີລັດ ຮອງຮັບໃຫ້ແກ່ການສົ່ງນັກກິລາເຂົ້າຮ່ວມແຂ່ງຂັນກິລານັກຮຽນອາຊຽນ;
- ຝຶກອົບຮົມດ້ານການເປັນກຳມະການຕັດສິນກິລາປະເພດຕ່າງໆ ໃຫ້ຄູພະລະສຶກສາ;
- ສົ່ງເສີມນັກຮຽນ, ນັກສຶກສາຜູ້ມີພອນສະຫວັນທາງດ້ານກິລາ-ກາຍະກຳ ໃຫ້ເຂົ້າຮ່ວມຝຶກແອບ, ແຂ່ງຂັນ ແລະ ແລກປ່ຽນບົດຮຽນປະສົບປະການທັງພາຍໃນ ແລະ ຕ່າງປະເທດ.

**<u>ຍຸດທະສາດທີ 2:</u>** ພັດທະນາພື້ນຖານໂຄງລ່າງ, ສະຖານທີ່ຝຶກແອບ ແລະ ອຸປະກອນໃນແຂ່ງຂັນກິລາ-ກາຍະກຳໃນສະຖານການສຶກສາ.

**<u>ວຽກຈຸດສຸມ</u>**

- ສົມທົບກັບພາກສ່ວນກ່ຽວຂ້ອງໃນການຂຶ້ນແຜນປຸກສ້າງ, ປັບປຸງພື້ນຖານໂຄງ ແລະ ສະຖານທີ່ຝຶກແອບພະລະສຶກສາ-ກິລາກາຍະກຳໃນສະຖານການສຶກສາ;
- ຊຸກຍູ້ສົ່ງເສີມໃຫ້ສະຖານການສຶກສາ, ສ້າງ ແລະ ຜະລິດອຸປະກອນການຮຽນ-ການສອນ ຂັ້ນພື້ນຖານຕາມຫຼັກສູດ;
- ສ້າງແຜນຈັດຊື້ອຸປະກອນຮັບໃຊ້ການຮຽນ-ການສອນ ແລະ ຝຶກແອບພະລະສຶກສາ-ກິລາກາຍະກຳໃນສະຖານການສຶກສາ.

**<u>ຍຸດທະສາດທີ 3:</u>** ຊຸກຍູ້ສົ່ງເສີມຈັດຕັ້ງສະໂມສອນກິລາ-ກາຍະກຳໃນສະຖານການສຶກສາ.

**<u>ວຽກຈຸດສຸມ</u>**

- ຈັດງານແຂ່ງຂັນກິລາຢ່າງເປັນປົກກະຕິ ລະຫວ່າງໂຮງຮຽນ, ເມືອງ ແລະ ແຂວງ;
- ສົ່ງເສີມການສ້າງສະໂມສອນກິລາ-ກາຍະກຳໃນສະຖານການສຶກສາ;
- ຝຶກອົບຮົມແນະນຳວິທີການວາງແຜນ ແລະ ຈັດການແຂ່ງຂັນກິລານັກຮຽນສາມັນສຶກສາໃນຂັ້ນຕ່າງໆ;
- ສ້າງປຶ້ມຄູ່ມືແນະນຳວິທີການເປີດ-ປິດ ການແຂ່ງຂັນກິລານັກຮຽນສາມັນສຶກສາແຕ່ລະຂັ້ນໃຫ້ເປັນເອກະພາບ.

**<u>ຍຸດທະສາດທີ 4:</u>** ຈັດງານມະຫາກຳກິລານັກຮຽນມັດທະຍົມສຶກສາທົ່ວປະເທດ, ເຂົ້າຮ່ວມການແຂ່ງຂັນ ແລະ ເປັນເຈົ້າພາບຈັດງານແຂ່ງຂັນກິລານັກຮຽນອາຊຽນ.

**<u>ວຽກຈຸດສຸມ</u>**

- ຈັດງານມະຫາກຳກິລານັກຮຽນມັດທະຍົມສຶກສາທົ່ວປະເທດ ຄັ້ງທີ VII ປີ 2022 ຢູ່ແຂວງສາລະວັນ;
- ເຂົ້າຮ່ວມການແຂ່ງຂັນກິລານັກຮຽນອາຊຽນ ຕາມທຳມະນູນຂອງສະພາກິລານັກຮຽນອາຊຽນປີລະ 1 ຄັ້ງ.
- ຈັດງານແຂ່ງຂັນກິລານັກຮຽນອາຊຽນ ຄັ້ງທີ 16 ທີ່ ສປປ ລາວ ເປັນເຈົ້າພາບ ໃນປີ 2024;

**<u>ຍຸດທະສາດທີ 5:</u>** ປັບປຸງ ແລະ ຍົກລະດັບການສ້າງຄູພະລະສຶກສາ ແລະ ສິລະປະສຶກສາ.

**<u>ວຽກຈຸດສຸມ</u>**

- ພັດທະນາຫຼັກສູດ ແລະ ເອກະສານຮັບໃຊ້ການຮຽນ-ການສອນ ໃນວິທະຍາໄລພະລະສຶກສາ ແລະ ວິທະຍາໄລສິລະປະສຶກສາ;
- ສ້າງເງື່ອນໄຂໃຫ້ແກ່ການຍົກຖານະວິທະຍາໄລພະລະສຶກສາ ແລະ ວິທະຍາໄລສິລະປະສຶກສາ ເປັນສະຖາບັນ;
- ຍົກລະດັບວິຊາສະເພາະໃຫ້ແກ່ຄູອາຈານສອນຢູ່ພາຍໃນ ແລະ ຕ່າງປະເທດ;

- ປັບປຸງປະສິດທິພາບໃນການກໍ່ສ້າງ ແລະ ຝຶກຫັດຄູ;
- ປະເມີນຄຸນນະພາບການກໍ່ສ້າງຄູຂອງວິທະຍາໄລພະລະສຶກສາ ແລະ ວິທະຍາໄລສິລະປະສຶກສາ;
- ຕິດຕາມ ແລະ ປະເມີນຜົນການນຳໃຊ້ຄູພະລະສຶກສາ ແລະ ຄູສິລະປະສຶກສາໃນໂຮງຮຽນ ສາມັນສຶກສາ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງທັງພາກລັດ ແລະ ເອກະຊົນ.

**<u>ຍຸດທະສາດທີ 6:</u>** ຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນພະລະສຶກສາ ແລະ ສິລະປະສຶກສາ ໃນສະຖານການສຶກສາໃຫ້ທົ່ວເຖິງ.

**<u>ວຽກຈຸດສຸມ</u>**

- ຈັດການຮຽນ-ການສອນວິຊາພະລະສຶກສາ, ວິຊາສິລະປະດົນຕີ ແລະ ວິຊາສິລະປະກຳ ໃນສະຖານການສຶກສາໃຫ້ທົ່ວເຖິງ;
- ສ້າງສື່ການຮຽນ-ການສອນ, ຄູ່ມືເສີມວິຊາສິລະປະດົນຕີ ແລະ ວິຊາສິລະປະກຳ ຕາມຫຼັກສູດ ສາມັນສຶກສາ;
- ຊຸກຍູ້ສົ່ງເສີມ, ສ້າງຄວາມເຂັ້ມແຂງໃຫ້ຄູສອນພະລະສຶກສາ ແລະ ສິລະປະສຶກສາ ໃນວິທະຍາໄລຄູ 8 ແຫ່ງທົ່ວປະເທດ;
- ສ້າງນິຕິກຳເພື່ອຄຸ້ມຄອງການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນພະລະສຶກສາ ແລະ ສິລະປະສຶກສາ;
- ຊຸກຍູ້, ສົ່ງເສີມ ການປະຕິບັດຫຼັກສູດທ້ອງຖິ່ນໃນຊັ້ນປະຖົມສຶກສາ ກ່ຽວກັບ ວຽກງານພະລະ ແລະ ສິລະປະສຶກສາ;
- ຊຸກຍູ້, ກວດກາ, ຕິດຕາມ, ປະເມີນຜົນ ແລະ ຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດ ຫຼັກສູດພະລະສຶກສາ ແລະ ສິລະປະສຶກສາ.

**<u>ຍຸດທະສາດທີ 7:</u>** ຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ສຶກສາວິຊາພື້ນຖານປ້ອງກັນຕົວໃນຊັ້ນມັດທະຍົມຕອນປາຍ ແລະ ວິຊາສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ.

**<u>ວຽກຈຸດສຸມ</u>**

- ປັບປຸງ ແລະ ພັດທະນາຫຼັກສູດ, ປຶ້ມຄູ່ມືຄູ, ອຸປະກອນການຮຽນ-ການສອນ ສຶກສາວິຊາ ພື້ນຖານປ້ອງກັນຕົວ ແລະ ວິຊາສຶກສາ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
- ເປີດນຳໃຊ້ສູນຝຶກ ສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອຮັບໃຊ້ການຈັດການຮຽນ-ການສອນໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ພາຍໃນນະຄອນຫຼວງວຽງຈັນ;
- ຜັນຂະຫຍາຍມະຕິຄຳສັ່ງ ແລະ ສ້າງນິຕິກຳຕ່າງໆກ່ຽວກັບວຽກງານສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບຮອດທ້ອງຖິ່ນ;
- ຝຶກອົບຮົມຜູ້ຮັບຜິດຊອບວຽກງານສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ;
- ຊຸກຍູ້, ກວດກາ, ຕິດຕາມ, ປະເມີນຜົນ ແລະ ຖອດຖອນບົດຮຽນການຈັດຕັ້ງປະຕິບັດ ຫຼັກສູດການຮຽນການສອນ ສຶກສາວິຊາພື້ນຖານປ້ອງກັນຕົວ ແລະ ວິຊາສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**<u>ຍຸດທະສາດທີ 8</u>**: ຕ້ານ ແລະ ສະກັດກັ້ນຢາເສບຕິດ ແລະ ປະກົດການຫຍໍ້ທໍ້ ໃນສະຖານການສຶກສາ.

**<u>ວຽກຈຸດສຸມ</u>**

- ສົ່ງເສີມສະຖານການສຶກສາສ້າງໂຮງຮຽນຕົວແບບປອດຢາເສບຕິດ;
- ຜັນຂະຫຍາຍມະຕິຄຳສັ່ງ ແລະ ນິຕິກຳຕ່າງໆ ກ່ຽວກັບວຽກງານຕ້ານຢາເສບຕິດໃນໂຮງຮຽນ ຮອດທ້ອງຖິ່ນ;

- ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຮັບຜິດຊອບຂັ້ນແຂວງ, ເມືອງ ແລະ ໂຮງຮຽນ ໃນການສ້າງ ໂຮງຮຽນປອດຢາເສບຕິດ;
- ຊຸກຍູ້, ສົ່ງເສີມ, ກວດກາ, ຕິດຕາມ ແລະ ປະເມີນຜົນ ການສ້າງສະຖານການສຶກສາປອດຢາເສບຕິດ.

**<u>ຍຸດທະສາດທີ 9</u>**: ປັບປຸງການບໍລິຫານ, ການຄຸ້ມຄອງວຽກງານພະລະ ແລະ ສິລະປະສຶກສາ ແລະ ພົວພັນຮ່ວມມືພາຍໃນ ແລະ ຕ່າງປະເທດ.

**<u>ວຽກຈຸດສຸມ</u>**

- ຜັນຂະຫຍາຍມະຕິຄຳສັ່ງ ແລະ ນິຕິກຳຕ່າງໆ ກ່ຽວກັບວຽກພະລະສຶກສາ, ສິລະປະສຶກສາ, ສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານຕ້ານຢາເສບຕິດໃນໂຮງຮຽນ ຮອດ ທ້ອງຖິ່ນ;
- ສ້າງນະໂຍບາຍ ແລະ ເຄື່ອງມືຄຸ້ມຄອງມະຫາພາກໃນການພັດທະນາວຽກງານພະລະ ແລະ ສິລະປະສຶກສາ;
- ສ້າງລະບົບຂໍ້ມູນຂ່າວສານວຽກງານພະລະ ແລະ ສິລະປະສຶກສາ, ຈັດວາງຮູບແບບຖານຂໍ້ມູນ ເພື່ອສາມາດເຊື່ອມໂຍງເຂົ້າກັບຂໍ້ມູນຂ່າວສານຂອງກະຊວງ;
- ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນພະລະສຶກສາ ແລະ ສິລະປະສຶກສາ ແຕ່ຂັ້ນສູນກາງ ຮອດທ້ອງຖິ່ນ;
- ພົວພັນຮ່ວມມືກັບ ບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນເພື່ອຍາດແຍ່ງເອົາ ການຊ່ວຍເຫຼືອທາງດ້ານບົດຮຽນ ແລະ ທຶນມາຮັບໃຊ້ການພັດທະນາວຽກງານພະລະ ແລະ ສິລະປະສຶກສາ.

## 2. ກິລາລະດັບສູງ

### 2.1. ຜົນສຳເລັດ

ພັກ-ລັດຖະບານໄດ້ຖືເອົາວຽກງານກິລາລະດັບສູງ ເປັນວຽກງານໜຶ່ງທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດທາງດ້ານສຸຂະພາບ ທັງຮ່າງກາຍ ແລະ ຈິດໃຈ ກ້າວສູ່ການນຳກຽດ ແລະ ຊື່ສຽງມາສູ່ປະເທດຊາດ, ຍົກຖານະບົດບາດຂອງຊາດ ແນໃສ່ເພີ່ມທະວີຄວາມສາມັກຄີ, ມິດຕະພາບ, ການຮ່ວມມືກັບບັນດາປະເທດຢູ່ພາກພື້ນ ແລະ ສາກົນ, ຮັບໃຊ້ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ການຈັດຕັ້ງປະຕິບັດວຽກງານກິລາລະດັບສູງໄລຍະຜ່ານມາເຫັນວ່າ ມີຜົນສຳເລັດຫຼາຍດ້ານເປັນຕົ້ນແມ່ນການກໍ່ສ້າງ ແລະ ພັດທະນາບຸກຄະລາກອນດ້ານການກິລາ ເຄິ່ງສະໄໝໄດ້ ຈຳນວນທັງໝົດ 1.729 ຄົນ; ໄດ້ສຳເລັດການສ້າງຫຼັກສູດພັດທະນາບຸກຄະລາກອນກິລາລະດັບຊາດ (ຄູຝຶກ ແລະ ກຳມະການຕັດສິນ) ຈຳນວນ 7 ປະເພດກິລາປາຍແຫຼມ ແລະ ໄດ້ສຳເລັດການຈັດຝຶກອົບຮົມຄູຝຶກ ຈຳນວນ 5 ຄັ້ງ ແລະ ກຳມະການຕັດສິນ ຈຳນວນ 3 ຄັ້ງ; ສຳເລັດການສ້າງຫຼັກສູດການຮຽນ-ການສອນປະເພດກິລາທີ່ເປັນປາຍແຫຼມຈາກ 8 ປະເພດກິລາ ເປັນ 12 ປະເພດກິລາ ຢູ່ໂຮງຮຽນພອນສະຫວັນກິລາ-ກາຍຍະກຳ, ມີນັກກິລາໂຮງຮຽນພອນສະຫວັນກິລາ-ກາຍຍະກຳ ໄດ້ສຳເລັດການສຶກສາຈຳນວນ 163 ຄົນ, ຍິງ 51 ຄົນ ຊຶ່ງໄດ້ໄປສຶກສາຕໍ່ຢູ່ຄະນະວິທະຍາສາດການກິລາ ແລະ ຢູ່ຕ່າງປະເທດຕາມວິຊາສະເພາະກິລາ ຕິດທີມຊາດ ຈຳນວນ 97 ຄົນ ເປັນຍິງ 26 ຄົນ ສາມາດຍາດໄດ້ຫຼຽນຢູ່ຕ່າງປະເທດຈຳນວນ 34 ຫຼຽນ .

ໄດ້ເປັນເຈົ້າການກະກຽມ ແລະ ສຳເລັດການສ້າງຕັ້ງໂຮງຮຽນພອນສະຫວັນກິລາ-ກາຍຍະກຳ, ສະຖາບັນກິລາກາຍຍະກຳ, ໄດ້ສົມທົບກັບກົມການສຶກສາຊັ້ນສູງ, ມະຫາວິທະຍາໄລແຫ່ງຊາດ ສ້າງຕັ້ງຄະນະວິທະຍາສາດການກິລາ (ມະຫາວິທະຍາໄລແຫ່ງຊາດ); ສ້າງ ແລະ ປັບປຸງສະຫະພັນກິລາແຫ່ງຊາດ ປັດຈຸບັນສະຫະພັນກິລາແຫ່ງຊາດລາວ ມີຈຳນວນ 43 ສະຫະພັນກິລາ; ໄດ້ຊຸກຍູ້ ແລະ ສົ່ງເສີມ ໃຫ້ສະຫະພັນກິລາແຫ່ງຊາດທີ່ມີເປົ້າໝາຍ ສ້າງໃຫ້ເປັນນັກກິລາອາຊີບ; ສຳເລັດການປັບປຸງກົດໝາຍກິລາ-ກາຍຍະກຳ ສະບັບປັບປຸງ ໄດ້ປະກາດນຳໃຊ້ໃນປີ 2019; ໄດ້ສ້າງນິຕິກຳຈຳນວນ 4 ສະບັບ; ຍາດແຍ່ງເອົາການຊ່ວຍເຫຼືອທຶນຈາກອົງການກິລາສາກົນ ແລະ ບັນດາປະເທດໃກ້ຄຽງ ເຊັ່ນ:

ໄດ້ຮັບທຶນການສຶກສາໄລຍະຍາວຈາກ ສສ.ຫວຽດນາມ ແລະ ປະເທດໄທຈຳນວນ 21 ທຶນ, ປະລິນຍາເອກ 4 ທຶນ, ປະລິນຍາໂທ 7 ທຶນ ແລະ ປະລິນຍາຕີ 12 ທຶນ. ຄະນະກຳມະການໂອແລມປິກສາກົນໄດ້ໃຫ້ການສະໜັບສະໜູນການກະກຽມນັກກິລາເຂົ້າຮ່ວມການແຂ່ງຂັນກິລາເອຊຽນເກມ ຄັ້ງທີ 18 ແລະ ໂອແລມປິກເກມປີ 2020 ຈຳນວນ 8 ຄົນ, ຝຶກອົບຮົມຄູຝຶກ ແລະ ກຳມະການຕັດສິນ ຈຳນວນ 15 ທຶນ, ຈ້າງຄູຝຶກໄລຍະຍາວປີລະ 5 ທຶນ ແລະ ຈັດຝຶກອົບຮົມຜູ້ບໍລິຫານການກິລາ ຈຳນວນ 15 ຄັ້ງ.

ການຮ່ວມມືກັບສາກົນເພື່ອການພັດທະນາ ໂດຍໄດ້ສົມທົບກັບຄະນະກຳມະການໂອແລມປິກແຫ່ງຊາດ ແລະ ສະຫະພັນກິລາແຫ່ງຊາດ ສົ່ງນັກກິລາທີມຊາດຕາງໜ້າເຂົ້າຮ່ວມການແຂ່ງຂັນກິລາຊີເກມ, ເອຊຽນເກມ, ໂອແລັມປິກເກມ ແລະ ລະດັບນາໆຊາດ ຈຳນວນ 957 ເທື່ອຄົນ. ການເຂົ້າຮ່ວມແຂ່ງຂັນງານມະຫາກຳກິລາຊີເກມ ຄັ້ງທີ 29 ແລະ ຄັ້ງທີ 30 ສາມາດຍາດໄດ້ 3 ຫຼຽນຄຳ, 8 ຫຼຽນເງິນ ແລະ 50 ຫຼຽນທອງ; ເຂົ້າຮ່ວມງານມະຫາກຳກິລາເອຊຽນເກມ ຄັ້ງທີ 18 ທີ່ປະເທດອິນໂດເນເຊຍ ເປັນເຈົ້າພາບສາມາດຍາດໄດ້ ທັງໝົດ 2 ຫຼຽນເງິນ ແລະ 3 ຫຼຽນທອງ ຈັດຢູ່ໃນອັນດັບທີ 31 ໃນ 45 ປະເທດເຂົ້າຮ່ວມ.

ໄດ້ສະເໜີ ຂໍອະນຸມັດຈາກລັດຖະບານປະຕິບັດນະໂຍບາຍປະດັບຫຼຽນໄຊ ແລະ ການຍ້ອງຍໍຕໍ່ອົງການຈັດຕັ້ງພາກລັດ, ບໍລິສັດ, ຫ້າງຮ້ານ, ບຸກຄົນ ແລະ ນິຕິບຸກຄົນ ຜູ້ມີຜົນງານສ້າງຄຸນງາມຄວາມດີ ປະກອບສ່ວນເຂົ້າໃນການສ້າງກຽດຊື່ສຽງໃຫ້ແກ່ປະເທດຊາດ ປະກອບມີ: ຫຼຽນໄຊພັດທະນາຊັ້ນ 1 ຈຳນວນ 1 ໜ່ວຍ, ຫຼຽນກາພັດທະນາ ຈຳນວນ 1 ໜ່ວຍ, ຫຼຽນໄຊແຮງງານຊັ້ນ 2 ຈຳນວນ 13 ໜ່ວຍ, ຫຼຽນໄຊແຮງງານຊັ້ນ 3 ຈຳນວນ 34 ໜ່ວຍ, ຫຼຽນກາແຮງງານ ຈຳນວນ 62 ໜ່ວຍ, ໃບຍ້ອງຍໍລັດຖະບານ ຈຳນວນ 2 ໜ່ວຍ ແລະ ໃບຍ້ອງຍໍຂັ້ນກະຊວງສຶກສາທິການ ແລະ ກິລາ ຈຳນວນ 256 ໃບ;

## 2.2. ສິ່ງທ້າທາຍ:

ການຈັດຕັ້ງປະຕິບັດວຽກງານກິລາລະດັບສູງຕາມວຽກງານຈຸດສຸມທີ່ເປັນບູລິມະສິດ ທີ່ໄດ້ກຳນົດໄວ້ໃນວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ 8 (2016-2020), ຕີລາຄາຜົນສຳເລັດ ໂດຍລວມແລ້ວ ແຜນການ 5 ປີແມ່ນໄດ້ຖືກຈັດຕັ້ງປະຕິບັດເປັນສ່ວນໃຫຍ່ ແລະ ມີຜົນສຳເລັດຫຼາຍດ້ານ ໃນການຈັດຕັ້ງປະຕິບັດແຜນການ 5 ປີ (2016-2020) ແຕ່ກໍພົບອຸປະສັກ ແລະ ສິ່ງທ້າທາຍຕໍ່ການພັດທະນາວຽກງານກິລາລະດັບສູງ ຊຶ່ງສາມາດສະຫຼຸບໄດ້ ດັ່ງລຸ່ມນີ້ :

1. ຍັງມີນິຕິກຳຫຼາຍອັນທີ່ຈະຕ້ອງໄດ້ສ້າງ ແລະ ປັບປຸງ ເພື່ອເປັນເຄື່ອງມືໃຊ້ຄຸ້ມຄອງ ແລະ ສົ່ງເສີມການພັດທະນາກິລາລະດັບສູງໃຫ້ສາມາດຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ແລະ ມີຄວາມແທດເໝາະກັບສະພາບການພັດທະນາກິລາລະດັບສູງໃນປັດຈຸບັນ ແລະ ອານາຄົດ;
2. ການພັດທະນາບຸກຄະລາກອນການກິລາ ແລະ ນັກກິລາ ຢູ່ໃນປະເທດເຮົາຍັງບໍ່ທັນເປັນລະບົບຕໍ່ເນື່ອງ;
3. ການສົ່ງນັກກິລາເຂົ້າຮ່ວມແຂ່ງຂັນກິລາໃນລະດັບສາກົນຂອງສະຫະພັນກິລາແຫ່ງຊາດ ໂດຍສະເພາະປະເພດກິລາປາຍແຫຼມ ຕ້ອງໄດ້ນຳໃຊ້ງົບປະມານຫຼາຍ, ມີຄວາມຈຳເປັນຈະຕ້ອງໄດ້ຕອບສະໜອງງົບປະມານຢ່າງເໝາະສົມ;
4. ການນຳໃຊ້ສະໜາມກິລາລະດັບຊາດຍັງບໍ່ສົມຄູ່ກັບການລົງທຶນ ຍ້ອນວ່າບໍ່ມີໜ່ວຍງານຮັບຜິດຊອບສະເພາະ ແລະ ຂາດເຂີນດ້ານງົບປະມານໃນການບູລະນະສ້ອມແປງໃຫ້ຢູ່ໃນສະພາບສົມບູນສາມາດນຳໃຊ້ໄດ້;
5. ການຕອບສະໜອງດ້ານງົບປະມານ ໃສ່ແຜນຍຸດທະສາດພັດທະນາກິລາ ຍັງມີຈຳກັດ ແລະ ບໍ່ພຽງພຽງຕໍ່ຄວາມຕ້ອງການ.

## 2.3. ບູລິມະສິດ ສຳລັບປີ 2021-2025

### 2.3.1. ຈຸດປະສົງ

1) ປັບປຸງ, ພັດທະນາຄຸນນະພາບວຽກງານກິລາກິລາລະດັບສູງ ໃຫ້ມີຄວາມເຂັ້ມແຂງ ສາມາດຍາດໄດ້ຫຼຽນລາງວັນໃນການແຂ່ງຂັນກິລາ ໃນລະດັບສາກົນ ນໍາກຽດ ແລະ ຊື່ສຽງມາໃຫ້ປະເທດຊາດ;
2) ຍົກລະດັບຄວາມຮູ້ຄວາມສາມາດຂອງ ຜູ້ບໍລິຫານ, ນັກວິຊາການ, ກໍາມະການຕັດສິນ, ຄູຝຶກ, ນັກວິທະຍາສາດການກິລາ ແລະ ນັກກິລາທີ່ມີພອນສະຫວັນ ໄດ້ຮັບການພັດທະນາຄວາມຮູ້ສະເພາະດ້ານ ກ້າວສູ່ມືອາຊີບຕາມມາດຕະຖານລະດັບສາກົນ;
3) ພັດທະນາລະບົບບໍລິການ-ຄຸ້ມຄອງວຽກງານກິລາລະດັບສູງ ໃຫ້ມີຄວາມເຂັ້ມແຂງໃນຂອບເຂດທົ່ວປະເທດ;
4) ຊຸກຍູ້, ສົ່ງເສີມການກໍ່ສ້າງ, ປັບປຸງພັດທະນາພື້ນຖານໂຄງລ່າງ, ສະໜອງອຸປະກອນກິລາ ແລະ ອຸປະກອນການຮຽນ-ການສອນກິລາ;
5) ຊຸກຍູ້, ສົ່ງເສີມ ອົງການຈັດຕັ້ງພາກລັດ, ເອກະຊົນ ແລະ ປະຊາຊົນ ໄດ້ປະກອບສ່ວນໃນການພັດທະນາກິລາລະດັບສູງ.

**2.3.2. ຄາດໝາຍ**

1) ບຸກຄະລາກອນການກິລາ ເປັນຕົ້ນແມ່ນ ຜູ້ບໍລິຫານ, ຄູຝຶກ ແລະ ກໍາມະການຕັດສິນ ຈະໄດ້ຖືກຍົກລະດັບຄວາມຮູ້ຄວາມສາມາດ ໄດ້ຮັບໃບຢັ້ງຢືນ ຕາມມາດຕະຖານລະດັບຊາດ ແລະ ສາກົນ ດັ່ງນີ້:
   1.1. ການຢັ້ງຢືນໃນລະດັບຊາດ:
      - ຜູ້ບໍລິຫານກິລາ ຈໍານວນ 300 ຄົນ;
      - ຄູຝຶກກິລາ ຈໍານວນ 1.600 ຄົນ;
      - ກໍາມະການຕັດສິນກິລາ ຈໍານວນ 1.600 ຄົນ;
      - ນັກວິທະຍາສາດການກິລາ ຈໍານວນ 250 ຄົນ.
   1.2. ການຢັ້ງຢືນໃນລະດັບສາກົນ:
      - ຄູຝຶກກິລາ ຈໍານວນ 200 ຄົນ;
      - ກໍາມະການຕັດສິນກິລາ ຈໍານວນ 30 ຄົນ;
2) ນັກກິລາພອນສະຫວັນ ແລະ ນັກກິລາທີມຊາດ ໄດ້ຮັບການພັດທະນາຢ່າງເປັນລະບົບ ແລະ ຕໍ່ເນື່ອງ ມີຂີດຄວາມສາມາດທຽບເທົ່າມາດຕະຖານສາກົນ:
      - ນັກກິລາພອນສະຫວັນ ຈໍານວນ 500 ຄົນ;
      - ນັກກິລາທີມຊາດ ຈໍານວນ 400 ຄົນ.
3) ສປປ ລາວ ຈະຖືກຈັດອັນດັບ ແລະ ຍາດໄດ້ຫຼຽນ ໃນການເຂົ້າຮ່ວມແຂ່ງຂັນກິລາໃນລະດັບສາກົນ:
      - ກິລາຊີເກມ ຈັດຢູ່ໃນອັນດັບທີ 8-9 ໃນ 11 ປະເທດເຂົ້າຮ່ວມ, ສູ້ຊົນໃຫ້ຍາດໄດ້ 5 ຫຼຽນຄໍາ ຂຶ້ນໄປ;
      - ກິລາເອຊຽນເກມ ຈັດຢູ່ໃນອັນດັບທີ 31 ໃນ 45 ປະເທດ ເຂົ້າຮ່ວມ, ສູ້ຊົນໃຫ້ຍາດໄດ້ 1 ຫຼຽນຄໍາປະຫວັດສາດ;
      - ນັກກິລາລາວ ສາມາດຜ່ານການຄັດເລືອກເຂົ້າຮ່ວມການແຂ່ງຂັນກິລາໂອແລມປິກ 3 ປະເພດກິລາຂຶ້ນໄປ.
4) ສ້າງບັນດານິຕິກໍາລຸ່ມກົດໝາຍວ່າດ້ວຍກິລາ-ກາຍຍະກໍາ ໃຫ້ສໍາເລັດ ຈໍານວນ 8 ສະບັບ;
5) ສະຫະພັນກິລາແຫ່ງຊາດ 10 ສະຫະພັນ ມີລະບົບການບໍລິຫານ ທີ່ໄດ້ມາດຕະຖານ ແລະ ສະໂມສອນກິລາໃນລະດັບຕ່າງໆ ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຕາມມາດຕະຖານທີ່ໄດ້ກໍານົດໄວ້ໃນລະບຽບການ.

2.3.3. ຜົນໄດ້ຮັບລະດັບສູງ

**ພົນລະເມືອງລາວມີສຸຂະພາບແຂງແຮງດ້ານຮ່າງກາຍ ແລະ ຈິດໃຈ, ບຸກຄະລາກອນການກິລາ, ນັກກິລາສະໝັກຫຼິ້ນ ແລະ ນັກກິລາອາຊີບ ໄດ້ມາດຕະຖານຄຸນນະພາບດ້ານກິລາ-ກາຍຍະກຳ ປະກອບສ່ວນເຂົ້າໃນການເຊີດຊູຖານະ ບົດບາດຂອງຊາດຢູ່ໃນເວທີສາກົນ ສ້າງຄວາມພາກພູມໃຈໃຫ້ປະຊາຊົນລາວ.**

➢ **ຫຼັກການ ແລະ ເຫດຜົນ**

ແຜນພັດທະນາກິລາລະດັບສູງ 5 ປີ (2021-2025) ນີ້ ສ້າງຂຶ້ນບົນພື້ນຖານແນວທາງນະໂຍບາຍຂອງກະຊວງສຶກສາທິການ ແລະ ກິລາ ກໍ່ຄືລັດຖະບານ ເປັນໄປຕາມແຜນວິໄສທັດຮອດປີ 2030 ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII ແຕ່ປີ (2016-2020) ຊຶ່ງຖືເອົາການພັດທະນາບຸກຄະລາກອນດ້ານການກິລາເປັນບູລິມະສິດອັນດັບໜຶ່ງ ໂດຍສະເພາະການພັດທະນານັກກິລາ ແລະ ບຸກຄະລາກອນການກິລາ (ຜູ້ບໍລິຫານ, ຄູຝຶກ, ກຳມະການຕັດສິນ ແລະ ນັກວິທະຍາສາດການກິລາ) ກ້າວສູ່ການເຂົ້າຮ່ວມການແຂ່ງຂັນໃນເວທີສາກົນ ເພື່ອຍາດແຍ່ງຫຼຽນ ນຳກຽດ ແລະ ຊື່ສຽງມາສູ່ປະເທດຊາດ.

➢ **ພາກສ່ວນຮັບຜິດຊອບ**

ຜົນສຳເລັດຂອງ ຜົນໄດ້ຮັບນີ້ ແມ່ນໄດ້ຈາກການມີສ່ວນຮ່ວມເຊິ່ງກັນ ແລະ ກັນ ດັ່ງນີ້:

1. ອົງການຈັດຕັ້ງພາກລັດ ຄື ກົມກິລາລະດັບສູງ, ກົມກິລາມວນຊົນ ແລະ ພະລະ ແລະ ສິລະປະສຶກສາ, ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ;
2. ອົງການຈັດຕັ້ງກິລາທາງສັງຄົມ ຄື ຄະນະກຳມະການໂອແລມປິກແຫ່ງຊາດລາວ, ສະຫະພັນກິລາແຫ່ງຊາດ/ແຂວງ ສະມາຄົມກິລາແຂວງ, ນະຄອນຫຼວງ ແລະ ສະຫະພັນກິລາແຂວງ, ນະຄອນຫຼວງ ແລະ ບັນດາສະ ໂມສອນກິລາທີ່ຂຶ້ນກັບສະຫະພັນກິລາຕ່າງ ໆ.

**ຜົນໄດ້ຮັບລະດັບກາງທີ 3: ນັກກິລາທີ່ມີພອນສະຫວັນ, ນັກກິລາທີມຊາດ ແລະ ນັກກິລາອາຊີບ ມີສັກກາຍະພາບທຽບເທົ່າລະດັບມາດຕະຖານຂອງອານຸພາກພື້ນ, ພາກພື້ນ ແລະ ສາກົນ.**

**<u>ຍຸດທະສາດທີ 1:</u>** ການພັດທະນານັກກິລາ

**<u>ວຽກຈຸດສຸມ</u>**

- ສ້າງແຜນຍຸດທະສາດການພັດທະນານັກກິລາແບບຍືນຍົງ (Sustainable Athletes Development Strategic Plan: SADSP);
- ຄັດເລືອກ ແລະ ພັດທະນານັກກິລາພອນສະຫວັນ (Talent Identification and Development);
- ຈ້າງຄູຝຶກປະຈຳໃຫ້ກັບປະເພດກິລາຫຼັກ ແລະ ກິລາປາຍແຫຼມທີ່ເປັນເປົ້າໝາຍ;
- ຈັດຕັ້ງປະຕິບັດໂຄງການ Sport Hero "Medalist Athletes from SEA Games road to 19th Asian Games";
- ຈັດຕັ້ງປະຕິບັດໂຄງການ Road to Olympic Games 2024.

**<u>ຍຸດທະສາດທີ 2:</u>** ການຈັດການແຂ່ງຂັນ ແລະ ການເຂົ້າຮ່ວມການແຂ່ງຂັນ:

**<u>ວຽກຈຸດສຸມ</u>**

- ຈັດການແຂ່ງຂັນກິລາພາຍໃນ ແລະ ເປັນເຈົ້າພາບຈັດການແຂ່ງຂັນກິລາລະດັບອານຸພາກພື້ນ, ພາກພື້ນ ແລະ ສາກົນ;
- ເຂົ້າຮ່ວມການແຂ່ງຂັນກິລາພາຍໃນ ແລະ ເຂົ້າຮ່ວມການແຂ່ງຂັນກິລາໃນລະດັບອານຸພາກພື້ນ, ພາກພື້ນ ແລະ ສາກົນ ດັ່ງນີ້:
    - ເຂົ້າຮ່ວມການແຂ່ງຂັນກິລາລະດັບສາກົນໃນນາມຂອງປະເທດ SEA Games ຄັ້ງທີ XXXI ປີ 2021 ທີ່ນະຄອນຮາໂນຍ ປະເທດຫວຽດນາມ, ຊີເກມຄັ້ງທີ XXXII ປີ 2023 ທີ່ນະຄອນພະນົມເປັນ ປະເທດກຳປູເຈຍ ແລະ ຊີເກມ ຄັ້ງທີ່ XXXIII ປີ 2025 ທີ່ ແຂວງຊົນບູລີ ປະເທດໄທ;
    - ເຂົ້າຮ່ວມແຂ່ງຂັນກິລາ Asian Games ຄັ້ງທີ XIX ປີ 2022 ທີ່ເມືອງ ກວາງໂຈວ ປະເທດ ຈີນ ເປັນເຈົ້າພາບ;
    - ເຂົ້າຮ່ວມແຂ່ງຂັນກິລາ Olympic Games ຄັ້ງທີ່ XXXIII ປີ ທີ່ປະເທດຝຣັ່ງ ປີ 2024.

**ຜົນໄດ້ຮັບລະດັບກາງທີ 4: ຜູ້ບໍລິຫານ, ຄູຝຶກ ກຳມະການຕັດສິນ ແລະ ນັກວິທະຍາສາດການກິລາ ມີຄວາມຮູ້ຄວາມສາມາດ ທຽບເທົ່າມາດຕະຖານສາກົນ, ປົກປັກ, ບູລະນະຮັກສາ ແລະ ນຳໃຊ້ພື້ນ ຖານໂຄງລ່າງການກິລາໃຫ້ເກີດປະໂຫຍດສູງສຸດ.**

<u>**ຍຸດທະສາດທີ 1:**</u> ພັດທະນາບຸກຄະລາກອນການກິລາ

<u>**ວຽກຈຸດສຸມ**</u>

- ສ້າງແຜນຍຸດທະສາດການພັດທະນາບຸກຄະລາກອນກິລາແບບຍືນຍົງ (Sustainable Sport Human Recourse Development Strategic Plan: SHDSP);
- ສ້າງໂຄງການຝຶກອົບຮົມບຸກຄະລາກອນການກິລາໄລຍະສັ້ນ ແລະ ໄລຍະຍາວ ຢູ່ທັງພາຍໃນ ແລະ ຕ່າງປະເທດ;
- ສະໜອງທຶນການສຶກສາລະດັບປະລິນຍາໄລຍະຍາວຢູ່ຕ່າງປະເທດ.

<u>**ຍຸດທະສາດທີ 2:**</u> ພັດທະນາພື້ນຖານໂຄງລ່າງກາຍຍະສຶກສາ ແລະ ອຸປະກອນການກິລາ:

<u>**ວຽກຈຸດສຸມ**</u>

- ສ້າງພື້ນຖານໂຄງລ່າງ ແລະ ປະກອບສື່ການຮຽນການສອນ ໃຫ້ກັບສະຖາບັນກິລາ-ກາຍຍະກຳ;
- ປັບປຸງສະໜາມກິລາທີ່ມີແລ້ວໃຫ້ເປັນສູນຝຶກຊ້ອມທີ່ໄດ້ມາດຕະຖານ;
- ປະກອບອຸປະກອນການຝຶກຊ້ອມ ແລະ ແຂ່ງຂັນຕາມມາດຕະຖານຂອງສະຫະພັນ ຫຼື ສະມາຄົມກິລາຂອງສາກົນກຳນົດ;
- ບູລະນະ, ປົກປັກຮັກສາ ແລະ ນຳໃຊ້ສະໜາມກິລາທີ່ມີແລ້ວໃຫ້ເກີດປະໂຫຍດສູງສຸດ;
- ສ້າງຫໍມູນເຊື້ອກິລາລາວໃນສູນກາງ ແລະ ທ້ອງຖິ່ນ.

<u>**ຍຸດທະສາດທີ 3:**</u> ພັດທະນາວິທະຍາສາດ ແລະ ເຕັກໂນໂລຊີການກິລາ

<u>**ວຽກຈຸດສຸມ**</u>

- ສ້າງງານວິໄຈກ່ຽວກັບວິທະຍາສາດການກິລາໃນສາຂາຕ່າງໆ;
- ປະກອບອຸປະກອນເຄື່ອງທົດສອບ ແລະ ວິເຄາະການຝຶກຊ້ອມ ແລະ ການແຂ່ງຂັນກິລາຂອງນັກກິລາ;

**ຜົນໄດ້ຮັບລະດັບກາງທີ 5: ການບໍລິຫານ-ຄຸ້ມຄອງວຽກງານກິລາລະດັບສູງໃນທົ່ວປະເທດມີຄວາມເຂັ້ມແຂງ**

**<u>ຍຸດທະສາດທີ 1</u>**: ການບໍລິຫານ-ຄຸ້ມຄອງວຽກງານກິລາລະດັບສູງ:

**<u>ວຽກຈຸດສຸມ</u>**

- ສ້າງດຳລັດວ່າດ້ວຍກິລາອາຊີບ;
- ສ້າງນິຕິກຳວ່າດ້ວຍການຄຸ້ມຄອງການຈັດການແຂ່ງຂັນ;
- ສ້າງລະບຽບວ່າດ້ວຍການນຳໃຊ້ເງິນກອງທຶນກິລາ-ກາຍຍະກຳ;
- ສ້າງນິຕິກຳວ່າດ້ວຍເຄື່ອງແບບກິລາ-ກາຍຍະກຳທີມຊາດ;
- ປັບປຸງກົດລະບຽບສະຫະພັນກິລາແຫ່ງຊາດ ແລະ ສະໂມສອນກິລາ;
- ປັບປຸງຂໍ້ກຳນົດວ່າດ້ວຍການຈັດງານມະຫາກຳກິລາແຫ່ງຊາດ;
- ປະຕິບັດນະໂຍບາຍໃຫ້ກັບຜູ້ທີ່ສ້າງຜົນງານໃນການສ້າງກຽດຊື່ສຽງໃຫ້ປະເທດຊາດ.

**<u>ຍຸດທະສາດທີ່ 2:</u>** ພັດທະນາລະບົບບໍລິຫານຂອງອົງການຮັບຜິດຊອບວຽກງານກິລາລະດັບສູງ:

**<u>ວຽກຈຸດສຸມ</u>**

- ສ້າງຮູບແບບການບໍລິຫານໃຫ້ກັບອົງການຄຸ້ມຄອງ ແລະ ອົງການຈັດຕັ້ງປະຕິບັດວຽກງານກິລາລະດັບສູງ (Administrative Model for Elite Sport Organizations: AMESO);
- ໂຄງການສ້າງລະບົບຖານຂໍ້ມູນກິລາລະດັບສູງ (Elite Sport Database System: ESDS);
- ປະກອບບຸກຄະລາກອນປະຕິບັດງານປະຈຳໃນສະຫະພັນກິລາທີ່ເປັນປະເພດກິລາຫຼັກ ແລະ ກິລາປາຍແຫຼມ;
- ສະໜັບສະໜູນງົບປະມານບໍລິຫານໃຫ້ກັບສະຫະພັນກິລາແຫ່ງຊາດທີ່ເປັນປະເພດກິລາປາຍແຫຼມ.

# X. ຂະແໜງການຍ່ອຍການບໍລິຫານ ແລະ ຄຸ້ມຄອງ

## 1. ພາກສະເໜີ

### 1.1. ຜົນສຳເລັດ

ພາກ I ຂອງ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 (ຂໍ້ 2 ແລະ 3) ໃຫ້ລາຍລະອຽດກ່ຽວກັບຜົນສຳເລັດຂອງວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາໃນໄລຍະຜ່ານມາ. ຜົນສຳເລັດທີ່ພົ້ນເດັ່ນປະກອບມີ: ຄະນະກຳມະການແຜນການ ແລະ ການເງິນ ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2017 ເພື່ອສ້າງຄວາມເຂັ້ມແຂງໃນການເຊື່ອມໂຍງລະຫວ່າງການວາງແຜນ ແລະ ງົບປະມານ, ໂດຍໄດ້ນຳໃຊ້ແຜນປະຈຳປີທີ່ມີການຄິດໄລ່ມູນຄ່າໃຊ້ຈ່າຍ (ACSEPs) ເພື່ອຂຶ້ນແຜນງົບປະມານປະຈຳປີ ແລະ ໄດ້ສ້າງຖານຂໍ້ມູນ ODA ໃຫ້ມີເຂັ້ມແຂງຂຶ້ນ. ຄະນະກຳມະການຈັດສັນຄູ ກໍ່ໄດ້ຖືກສ້າງຕັ້ງຂຶ້ນໃນປີ 2018 ເພື່ອຍົກສູງປະສິດທິພາບຂອງການບັນຈຸ ແລະ ສັບຊ້ອນຄູ. ນອກນັ້ນ , ກໍໄດ້ປັບປຸງໂຄງຮ່າງການຈັດຕັ້ງ ລວມທັງການປັບປຸງພາລະບົດບາດຂອງບັນດາຫ້ອງການ, ສູນ, ສະຖາບັນ ແລະ ກົມຂອງກະຊວງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ. ກະຊວງສຶກສາທິການ ແລະ ກິລາ ໄດ້ພັດທະນາຄູ່ມືໃນການຝຶກອົບຮົມວຽກງານການສ້າງແຜນພັດທະນາການສຶກສາ ພ້ອມທັງໄດ້ຝຶກອົບຮົມໃຫ້ແກ່ຜູ້ບໍລິຫານການສຶກສາ ແລະ ກິລາ ຂັ້ນກະຊວງ ແລະ ຂັ້ນແຂວງ ແລະ ໃນຕໍ່ໜ້າຈະຝຶກອົບຮົມໃຫ້ແກ່ຜູ້ບໍລິຫານ ແລະ ພະນັກງານແຜນການຢູ່ຂັ້ນເມືອງ. ຄຽງຄູ່ກັນນັ້ນ ກໍໄດ້ຝຶກອົບຮົມໃຫ້ຜູ້ອຳນວຍການໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດວຽກງານການບໍລິຫານຄຸ້ມຄອງທີ່ເນັ້ນໃສ່ໂຮງຮຽນເປັນຫຼັກ.

### 1.2. ສິ່ງທ້າທາຍ

ພາກ I ຂອງ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 (ພາກ 2 ແລະ3) ໃຫ້ລາຍລະອຽດກ່ຽວກັບສິ່ງທ້າທາຍ. ບັນດາສິ່ງທ້າທາຍຫຼັກປະກອບມີ: ຂໍ້ຈຳກັດທາງດ້ານການເງິນຍັງເປັນບັນຫາຕໍ່ເນື່ອງຈົນເຖິງປີ 2020 ແລະ ປີຕໍ່ໆໄປອີກ. ສະນັ້ນ, ຂະແໜງການສຶກສາ ຈຳເປັນຕ້ອງໄດ້ມີການກຳນົດວິທີການນຳໃຊ້ບຸກຄະລາກອນ ແລະ ງົບປະມານທີ່ມີຈຳກັດຢ່າງມີປະສິດທິພາບຫຼາຍຂຶ້ນກວ່າເກົ່າ. ເຖິງຢ່າງໃດກໍ່ຕາມ ສ່ວນແບ່ງງົບປະມານທີ່ບໍ່ແມ່ນເງິນເດືອນຂອງລັດຖະບານໃຫ້ແກ່ຂະແໜງການສຶກສາ ແລະ ກິລາ ທີ່ມີຈຳກັດ ແມ່ນເປັນສິ່ງທ້າທາຍໃນການວາງແຜນເພື່ອປັບປຸງຄຸນນະພາບການສຶກສາ ແລະ ມີຄວາມຈຳເປັນຕ້ອງໄດ້ປັບປຸງຄຸນນະພາບ ແລະ ປະສິດທິພາບໃນການໃຊ້ຈ່າຍງົບປະ ມານພາຍໃນຂະແໜງການສຶກສາ ແລະ ກິລາ.

ການແຜ່ລະບາດຂອງໄວຣັດ Covid-19 ໃນທ້າຍປີ 2019 ແມ່ນເປັນສິ່ງທ້າທາຍເພີ່ມເຕີມໃຫ້ແກ່ຂະແໜງການສຶກສາ ແລະ ກິລາ. ຍິ່ງໄປກວ່ານັ້ນ ເຮັດໃຫ້ການຄາດຄະເນການເຕີບໂຕຂອງຍອດຜະລິດຕະພັນພາຍໃນ (GDP) ຫຼຸດລົງ, ລາຍໄດ້ຈາກການເກັບພາສີຫຼຸດລົງ ແລະ ດັ່ງນັ້ນງົບປະມານສຳລັບຂະແໜງການບໍລິການສາທາລະນະ, ລວມທັງຂະແໜງການສຶກສາກໍຈະຫຼຸດລົງເຊັ່ນດຽວກັນ, ພ້ອມດຽວກັນນັ້ນກໍສົ່ງຜົນກະທົບໃນລະດັບຄອບຄົວ ຊຶ່ງສິ່ງຜົນເຮັດໃຫ້ລະດັບຄວາມທຸກຍາກເພີ່ມຂຶ້ນ ແລະ ເປັນອຸປະສັກດ້ານຄ່າໃຊ້ຈ່າຍທີ່ຍິ່ງໃຫຍ່ຕໍ່ການເຂົ້າຮຽນຂອງນັກຮຽນ.

## 2. ບູລິມະສິດສຳລັບປີ 2021-2025

### 2.1. ຈຸດປະສົງລວມ

1) ເພື່ອຮັບປະກັນການເກັບກຳຂໍ້ມູນ ແລະ ການຄຸ້ມຄອງຂໍ້ມູນຂອງໂຮງຮຽນ ແລະ ການນຳໃຊ້ຂໍ້ມູນໃຫ້ມີປະສິດທິພາບໃນການວາງແຜນ, ການຂຶ້ນແຜນງົບປະມານ ແລະ ການຕິດຕາມກວດກາຢ່າງເປັນລະບົບ;

2) ເພື່ອສົ່ງເສີມການສຶກສາຮຽນຮ່ວມ, ລວມທັງການສະໜັບສະໜູນນັກຮຽນພິການ;
3) ຮັບປະກັນໃຫ້ກົງຈັກການຈັດຕັ້ງແຕ່ສູນກາງລົງຮອດທ້ອງຖິ່ນ ມີຄວາມສອດຄ່ອງກັບພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການຍ່ອຍ;
4) ເພື່ອປະສານສົມທົບກັບແຫຼ່ງເງິນຊ່ວຍເຫຼືອຈາກພາຍນອກ ແລະ ຮັບປະກັນຄວາມສອດຄ່ອງຂອງການຊ່ວຍເຫຼືອທາງດ້ານການເງິນຈາກພາຍນອກ ກັບບັນດາຂົງເຂດບູລິມະສິດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025;
5) ເພື່ອພັດທະນາ ແລະ ສະໜອງກົນໄກການຮັບປະກັນຄຸນນະພາບທີ່ມີປະສິດທິພາບ ແລະ ເໝາະສົມ ໃນທຸກລະດັບ;
6) ເພື່ອຮັບປະກັນໃຫ້ຂະແໜງການສຶກສາ ແລະ ກິລາ ມີຫຼັກຖານອ້າງອີງທີ່ຊັດເຈນໃນການກຳນົດນະໂຍບາຍ;
7) ເພື່ອປັບປຸງ ແລະ ພັດທະນາຄວາມຮູ້, ຄວາມສາມາດ ແລະ ປະສົບການກ່ຽວກັບການຄຸ້ມຄອງການສຶກສາໃຫ້ມີຄຸນນະພາບ ສຳລັບຜູ້ບໍລິຫານການສຶກສາທຸກຄົນ.

➢ **ຈຸດປະສົງສະເພາະ**

1) ເພື່ອສ້າງຄວາມກົມກ່ຽວຄືນໃໝ່ລະຫວ່າງທັກສະ ແລະ ຄວາມສາມາດຂອງພະນັກງານກະຊວງສຶກສາທິການ ແລະ ກິລາ ເພື່ອໃຫ້ໄດ້ຕາມຄວາມຕ້ອງການຂອງວຽກງານໃນປັດຈຸບັນ ແລະ ອານາຄົດ;
2) ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ກຸ່ມໂຮງຮຽນ ແລະ ໂຮງຮຽນ ເພື່ອເສີມຂະຫຍາຍປະສິດທິພາບ, ປະສິດທິຜົນ ແລະ ດ້ວຍຄວາມຮັບຜິດຊອບໃນໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ;
3) ເພື່ອປັບປຸງຜົນການຮຽນຂອງນັກຮຽນ ແລະ ຫຼຸດຜ່ອນຄວາມແຕກໂຕນ ໂດຍຜ່ານການຄຸ້ມຄອງຊັບພະຍາກອນທີ່ມີປະສິດທິພາບ ແລະ ປະສິດທິຜົນ ໂດຍເລັ່ງໃສ່ການປັບປຸງໃຫ້ວຽກງານການສຶກສາໄດ້ຮັບການພັດທະນາດີຂຶ້ນ.

### 2.2. ຄາດໝາຍ

1. ຢ່າງໜ້ອຍໜຶ່ງກຸ່ມໂຮງຮຽນໄດ້ຖືກສ້າງຕັ້ງຂຶ້ນໃນແຕ່ລະ 40 ເມືອງທີ່ດ້ອຍໂອກາດ;
2. ນະໂຍບາຍດ້ານການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ ທີ່ໄດ້ກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບໃນລະດັບໂຮງຮຽນ, ກຸ່ມໂຮງຮຽນ, ສຶກສາເມືອງ ແລະ ສຶກສາແຂວງໄດ້ຮັບການຮັບຮອງ;
3. ສູດການຄິດໄລ່ການສະໜອງເງິນບໍລິຫານໂຮງຮຽນ ທີ່ປັບປຸງໃໝ່ ແລະ ຄຳແນະນຳກ່ຽວກັບເງື່ອນໄຂການໃຊ້ຈ່າຍ ໄດ້ຖືກອະນຸມັດ;
4. ແຜນຈັດຕັ້ງປະຕິບັດການຈັດສັນຄູທີ່ເປັນບູລິມະສິດ 10 ປີ ໄດ້ຖືກຮັບອະນຸມັດ;
5. ໄດ້ມີການແຕ່ງຕັ້ງໜ່ວຍງານທີ່ຮັບຜິດຊອບໃນການຕິດຕາມກວດກາແຜນງານນໍ້າ ແລະ ສຸຂະອະນາໄມ.
6. ລະບົບ EMIS, TEMIS, TVETMIS ແລະ LUMS ແມ່ນເຊື່ອມຕໍ່ ແລະ ເຊື່ອມໂຍງເຂົ້າກັນ.
7. 20% ຂອງ ຜູ້ບໍລິຫານການສຶກສາທຸກຂັ້ນໄດ້ຮັບການຝຶກອົບຮົມໃນຫົວຂໍ້ຕ່າງໆ ທີ່ກ່ຽວຂ້ອງກັບການບໍລິຫານ ແລະ ຄຸ້ມຄອງການສຶກສາ.

## 2.3. ຜົນໄດ້ຮັບລະດັບສູງ

<u>**ໝາຍເຫດ**</u>: ສຳລັບແຕ່ລະຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ, ຈະມີການອ້າງອີງເປັນວົງເລັບ ຫຼັງຈາກສຳນວນທີ່ກ່າວເຖິງພາກທີ I ຂອງ ແຜນພັດທະນາການສຶກສາ ແລະ ກິລາ 2021-2025, ຊຶ່ງຈະເຮັດໃຫ້ຜູ້ອ່ານສາມາດ ນຳໃຊ້ແຜນຂອງ ຂະແໜງການຍ່ອຍເປັນແຜນສະເພາະ ແຕ່ສາມາດອ້າງອີງເຖິງນະໂຍບາຍທີ່ກ່ຽວຂ້ອງ ດັ່ງທີ່

ໄດ້ລະບຸໄວ້ໃນພາກທີ I ຂອງແຜນ. ແຜນພັດທະນາຂອງຂະແໜງການຍ່ອຍ ບໍ່ຈຳເປັນຕ້ອງແກ້ໄຂທຸກໆຜົນໄດ້ຮັບລະດັບກາງຂອງຜົນໄດ້ຮັບລະດັບສູງ. ບາງຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ ໄດ້ຖືກດັດແກ້ເພື່ອສະແດງໃຫ້ເຫັນຈຸດສຸມຂອງຂະແໜງຍ່ອຍ

### 2.3.1. ຈຳນວນນັກຮຽນທີ່ຈົບຈາກອະນຸບານຈົນຮອດມັດທະຍົມຕອນປາຍ ລວມທັງການສຶກສານອກໂຮງຮຽນເພີ່ມຂຶ້ນ ພ້ອມທັງມີຜົນໄດ້ຮັບດ້ານການຮຽນຮູ້ທີ່ດີຂຶ້ນ, ໂດຍສະເພາະແມ່ນການຮູ້ໜັງສື ແລະ ທັກສະການຄິດໄລ່ເລກ, ທັກສະ ສັດຕະວັດທີ 21 ໂດຍສຸມໃສ່ເປັນພິ ເສດຕໍ່ຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ

- **ຫຼັກການ ແລະ ເຫດຜົນ**

ພາກທີ I ໄດ້ລະບຸເຖິງລາຍລະອຽດຂອງຫຼັກການ ແລະ ເຫດຜົນ. ການປະເມີນຜົນການຮຽນຂອງນັກຮຽນວ່າງມໍ່ໆນີ້ຢູ່ຊັ້ນປະຖົມ 3 ແລະ ມັດທະຍົມຕອນຕົ້ນ (ມ.4) ໄດ້ສະແດງໃຫ້ເຫັນວ່າລະດັບຄວາມສາມາດ ໃນການຮູ້ໜັງສື ແລະ ການຄິດໄລ່ເລກ ໃນປະຈຸບັນບໍ່ພຽງພໍທີ່ຈະສະໜັບສະໜູນການຮຽນຮູ້ທີ່ມີຄຸນນະພາບໃນລະດັບສູງ.

- **ພາກສ່ວນຮັບຜິດຊອບ**

ຄະນະກຳມະການແຜນການ ແລະ ການເງິນ, ຄະນະກຳມະການຈັດສັນຄູ, ກົມການສຶກສາກ່ອນໄວຮຽນ, ກົມສາມັນ, ແລະ ສູນການສຶກສາຮຽນຮ່ວມ.

**ຜົນໄດ້ຮັບລະດັບກາງທີ 1: ອັດຕາການເຂົ້າຮຽນ ແລະ ອັດຕາການເລື່ອນຊັ້ນເພີ່ມຂຶ້ນໃນທຸກລະດັບ ເຮັດໃຫ້ອັດຕາການຈົບຊັ້ນເພີ່ມຂຶ້ນ (ພາກທີ I ຜົນໄດ້ຮັບລະດັບສູງທີ 1, ຜົນໄດ້ຮັບລະດັບກາງທີ 1.3)**

**ຍຸດທະສາດທີ 1:** ສ້າງກົງຈັກການຄຸ້ມຄອງຂຶ້ນ ເພື່ອເຮັດໜ້າທີ່ໃນການຈັດບູລິມະສິດ ແລະ ຂະຫຍາຍເປົ້າໝາຍຂອງການສຶກສາຫ້ອງກຽມປະຖົມ 1 ປີ ເພື່ອເຮັດໃຫ້ການເຂົ້າເຖິງການສຶກສາກ່ອນໄວຮຽນຫຼາຍຂຶ້ນ ໂດຍສະເພາະໃນເຂດທີ່ດ້ອຍໂອກາດ.

ຢາກມີຜົນສຳເລັດອັນເຕັມສ່ວນຂອງຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ / ຫຼື ງົບປະມານ ODA ສຸມໃສ່ສະເພາະຍຸດທະສາດນີ້.

**ວຽກຈຸດສຸມ:**

- ຄະນະກຳມະການແຜນການ ແລະ ການເງິນ ໂດຍໄດ້ຮັບການສະໜັບສະໜູນທາງດ້ານວິຊາການຈາກ ກົມການສຶກສາກ່ອນໄວຮຽນ ແລະ ຄະນະກຳມະການຈັດສັນຄູ ຮັບຜິດຊອບໃນການຈັດບັນດາບູລິມະສິດສຳລັບການຂະຫຍາຍການສຶກສາຫ້ອງກຽມປະຖົມ 1 ປີ (ຫຼື ການສະໜອງການສຶກສາກ່ອນໄວຮຽນໃນຮູບແບບອື່ນໆ);
- ອອກນິຕິກຳທີ່ມອບໜ້າທີ່ໃຫ້ຄະນະກຳມະການແຜນການ ແລະ ການເງິນ ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ໃນການຄົ້ນຄວ້າ ແລະ ກຳນົດການຂະຫຍາຍການສຶກສາຫ້ອງກຽມປະຖົມ;
- ຄະນະກຳມະການແຜນການ ແລະ ການເງິນ ໂດຍໄດ້ຮັບການສະໜັບສະໜູນ ທາງດ້ານວິຊາການຈາກກົມການສຶກສາກ່ອນໄວຮຽນ ໃຫ້ຄຳແນະນຳກ່ຽວກັບວິທີການຈັດລຳດັບຄວາມສຳຄັນ ໃນການຂະຫຍາຍຫ້ອງກຽມປະຖົມ ໃນ 40 ເມືອງທີ່ດ້ອຍໂອກາດ.

**ຍຸດທະສາດທີ 2:** ດຳເນີນການທົບທວນນະໂຍບາຍ ການຂະຫຍາຍການເຂົ້າເຖິງການສຶກສາຊັ້ນມັດທະຍົມຕົ້ນລວມທັງໂຄງສ້າງການສຶກສາສາຍສາມັນ 5+4+3 ທີ່ມີໃນປະຈຸບັນ.

**ວຽກຈຸດສຸມ**

- ສ້າງຕັ້ງຄະນະສະເພາະກິດຂັ້ນກົມ ໂດຍການເປັນປະທານຂອງທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເພື່ອຈັດຕັ້ງ ແລະ ປະເມີນໂຄງປະກອບລະບົບການສຶກສາສາຍສາມັນ 5+4+3 ໃນປະຈຸບັນ;
- ກຳນົດວິທີການທີ່ມີປະສິດທິພາບ ແລະ ມີປະສິດທິຜົນສູງສຸດ ເພື່ອເຮັດໃຫ້ການຂະຫຍາຍການສຶກສາຊັ້ນມັດທະຍົມຕອນຕົ້ນມີຄວາມຍືນຍົງທາງດ້ານການເງິນ.

**ຍຸດທະສາດທີ 3:** ທົບທວນ ແລະ ອະນຸມັດ ແຜນຍຸດທະສາດ ແລະ ແຜນການຈັດຕັ້ງປະຕິບັດ ການສະໜອງອາຫານໃຫ້ໂຮງຮຽນອະນຸບານ ແລະ ປະຖົມສຶກສາສຶກສາ ທີ່ມີຄວາມຍືນຍົງ (ແຜນຊັບພະນາກອນມະນຸດ ແລະ ແຜນການເງິນ).

**ວຽກຈຸດສຸມ:**

- ສ້າງຕັ້ງໜ່ວຍງານທົບທວນແຜນຍຸດທະສາດການສະໜອງອາຫານ ທີ່ປະກອບດ້ວຍ ຄະນະກຳມະການແຜນການ ແລະ ການເງິນ, ສູນການສຶກສາຮຽນຮ່ວມ ແລະ ກົມສາມັນສຶກສາ ເພື່ອຈັດຕັ້ງ ແລະ ປະເມີນແຜນຍຸດທະສາດດ້ານອາຫານໃນໂຮງຮຽນ ແລະ ແຜນປະຕິບັດງານ ເພື່ອກຳນົດວິທີການທີ່ຍືນຍົງ.

**ຍຸດທະສາດທີ 4:** ທົບທວນ ແລະ ຮັບຮອງເອົາແຜນການແກ້ໄຂໄພພິບັດໃນຂະແໜງການສຶກສາ ໂດຍຄຳນຶງເຖິງການປ່ຽນແປງຂອງດິນຟ້າອາກາດ.

**ວຽກຈຸດສຸມ**

- ຫ້ອງການກະຊວງຈະແຕ່ງຕັ້ງຄະນະຮັບຜິດຊອບ ເຊິ່ງປະກອບມີກົມວິຊາການທີ່ກ່ຽວຂ້ອງ ເພື່ອວິເຄາະເຖິງການກະກຽມຕອບໂຕ້ກັບໄພພິບັດພາຍໃນຂະແໜງການ ແລະ ພັດທະນາແຜນການຕອບໂຕ້ຂອງຂະແໜງການ ເພື່ອທົບທວນ ແລະ ຮັບຮອງ.
- ຈັດຝຶກອົບຮົມໃຫ້ຂະແໜງການສຶກສາ ແລະ ກິລາ ໃນຂອບເຂດທົ່ວປະເທດໃນການສຳຫຼວດ, ລາຍງານສະພາບການເຝົ້າລະວັງສະພາບໄພພິບັດ.
- ສ້າງຖານຂໍ້ມູນໃນການຕິດຕາມສະພາບໄພພິບັດໃນຂອບເຂດທົ່ວປະເທດໂດຍການນຳໃຊ້ຂໍ້ມູນທາງດ້ານພູມສັນຖານ (GIS).

**ຍຸດທະສາດທີ 5:** ທົບທວນ ແລະ ອະນຸມັດນະໂຍບາຍການຖືພາຂອງນັກຮຽນ.

**ວຽກຈຸດສຸມ**

- ພັດທະນານະໂຍບາຍກ່ຽວກັບການອະນຸຍາດໃຫ້ນັກຮຽນທີ່ຖືພາ ແລະ ຫຼັງການເກີດລູກ ໄດ້ສາມາດສືບຕໍ່ຮຽນຢ່າງເປັນທາງການ

**ຜົນໄດ້ຮັບລະດັບກາງທີ 2 : ຫຼຸດຜ່ອນຊ່ອງຫວ່າງໃນການພັດທະນາການສຶກສາ ລະຫວ່າງເຂດທີ່ດ້ອຍໂອກາດ ແລະ ບໍ່ດ້ອຍໂອກາດ ໂດຍຜ່ານການສ້າງກຸ່ມໂຮງຮຽນ. (ພາກທີ I ຜົນໄດ້ຮັບລະດັບສູງທີ 1, ຜົນຮັບລະດັບກາງ 1.5)**

**ຍຸດທະສາດທີ 1:** ກຳນົດພາລະບົດບາດ ແລະ ສ້າງນິຕິກຳ ສຳລັບການບໍລິຫານກຸ່ມໂຮງຮຽນ

**ວຽກຈຸດສຸມ**

- ກົມສາມັນ ແລະ ກົມສ້າງຄູກຳນົດວິທີການທີ່ມີປະສິດທິຜົນທາງຄ່າໃຊ້ຈ່າຍ (ຊັບພະຍາກອນມະນຸດ ແລະ ການເງິນ ແລະ ການນຳໃຊ້ ICT) ໃນການສ້າງຕັ້ງ ແລະ ນຳໃຊ້ກຸ່ມໂຮງຮຽນເພື່ອຫຼຸດຜ່ອນຄວາມແຕກໂຕນກັນ;

- ກໍານົດຄວາມສໍາພັນ (ໃໝ່ ແລະ ປ່ຽນແປງ) ພາລະບົດບາດ ແລະ ຄວາມຮັບຜິດຊອບ ລະຫວ່າງການບໍລິຫານໃນກຸ່ມໂຮງຮຽນ ແລະ ສຶກສາເມືອງ ລວມທັງນິຕິກໍາທີ່ຈໍາເປັນອື່ນໆ;
- ສ້າງ ແລະ ການຮັບຮອງເອົາການກໍານົດໜ້າວຽກ, ການຈັດສັນຕໍາແໜ່ງງານບໍລິຫານ ຂອງກຸ່ມໂຮງຮຽນ
- ທົບທວນລະບົບການສະໜັບສະໜູນຄູໃນປະຈຸບັນ ສໍາລັບກຸ່ມໂຮງຮຽນ.

<u>**ຍຸດທະສາດທີ 2:**</u> ສ້າງຕັ້ງລະບົບການບໍລິຫານກຸ່ມໂຮງຮຽນພາຍໃນ 40 ເມືອງ ພ້ອມທັງໃຫ້ບູລິມະສິດໃນການຈັດສັນຊັບພະຍາກອນໃຫ້ແກ່ບັນດາເມືອງເຫຼົ່ານີ້.

ຢາກມີຜົນສໍາເລັດອັນເຕັມສ່ວນຂອງຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ / ຫຼື ງົບປະມານ ODA ສຸມໃສ່ສະເພາະຍຸດທະສາດນີ້.

<u>**ວຽກຈຸດສຸມ**</u>

- ກໍານົດການຈັດສັນງົບປະມານ ເພື່ອສະໜັບສະໜູນການສ້າງຕັ້ງກຸ່ມໂຮງຮຽນໃນເມືອງບູລິມະສິດ;
- ຄະນະກໍາມະການຈັດສັນຄູ ສ້າງແຜນການເພື່ອຮັບປະກັນໃຫ້ ເມືອງດັ່ງກ່າວໄດ້ຮັບບູລິມະສິດໃນການຈັດສັນຕໍາແໜ່ງລັດຖະກອນໃໝ່ ແລະ ຄະນະກໍາມະການແຜນການ ແລະ ການເງິນ ຮັບປະກັນໃຫ້ງົບປະມານບໍລິຫານ ໃຫ້ບູລິມະສິດແກ່ບັນດາເມືອງດຽວກັນນີ້;
- ທົບທວນສູດສໍາລັບງົບປະມານບໍລິຫານສໍາລັບເມືອງ ແລະ ເງິນບໍລິຫານໂຮງຮຽນ ເພື່ອໃຫ້ເມືອງທີ່ດ້ອຍໂອກາດນີ້ ໄດ້ຮັບສ່ວນແບ່ງງົບປະມານຫຼາຍຂຶ້ນ.

### 2.3.2. ທຸກໂຮງຮຽນມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດ ເພື່ອເຮັດວຽກຢ່າງມີປະສິດທິຜົນ, ຄຽງຄູ່ກັບຄວາມສາມາດໃນການຄຸ້ມຄອງໂຮງຮຽນ ເພື່ອເຮັດໃຫ້ຜົນໄດ້ຮັບການຮຽນຂອງນັກຮຽນດີຂຶ້ນ. (ພາກທີ I ຜົນໄດ້ຮັບລະດັບສູງທີ 3)

#### ➢ ຫຼັກການ ແລະ ເຫດຜົນ

ພາກທີ I ໄດ້ລາຍງານລະອຽດກ່ຽວກັບຫຼັກການ ແລະ ມີເຫດຜົນຕ່າງໆ. ມີຄວາມຈໍາເປັນຕ້ອງມີລະບົບການວາງແຜນ, ການຈັດສັນຊັບພະຍາກອນ, ການຕິດຕາມ ແລະ ການປະເມີນຜົນທີ່ດີ ເພື່ອຮັບປະກັນວ່າໂຮງຮຽນທຸກແຫ່ງມີຊັບພະຍາກອນຂັ້ນພື້ນຖານ ແລະ ຄວາມສາມາດທີ່ຈໍາເປັນ ເພື່ອສະໜອງການບໍລິການດ້ານການສຶກສາທີ່ມີຄຸນນະພາບ. ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ຕ້ອງເຊື່ອມໂຍງເຂົ້າໃນລະບົບການບໍລິຫານ ແລະ ຄຸ້ມຄອງລະດັບຊາດ ແລະ ລະດັບທ້ອງຖິ່ນ ທີ່ນໍາໃຊ້ເພື່ອເປັນທິດທາງໃນການຈັດສັນຊັບພະຍາກອນ. ການສະໜັບສະໜູນຢ່າງຕໍ່ເນື່ອງ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ ຈະຊ່ວຍໃນການເສີມສ້າງຄວາມສາມາດໃນການວາງແຜນ ແລະ ການລາຍງານ ແລະ ລະບົບຄວາມຮັບຜິດຊອບໃນລະດັບໂຮງຮຽນ.

#### ➢ ພາກສ່ວນຮັບຜິດຊອບປະກອບມີ:

ກົມແຜນການ, ກົມການເງິນ, ກົມຈັດຕັ້ງ ແລະ ພະນັກງານ, ກົມການສຶກສາກ່ອນໄວຮຽນ, ກົມສາມັນສຶກສາ ກົມສ້າງຄູ, ສະຖາບັນຄົ້ນຄວ້າວິທຍາສາດການສຶກສາ, ສູນປະກັນຄຸນນະພາບ, ສະຖາບັນພັດທະນາການບໍລິຫານການສຶກສາ ແລະ ກົມກວດກາ.

ການພັດທະນາມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ, ຄູ່ມືແນະນໍາການນໍາໃຊ້, ການທົດລອງ ແລະ ການນໍາໃຊ້ ແມ່ນມີລາຍລະອຽດໃນແຜນການຂອງຂະແໜງການຍ່ອຍຕ່າງໆ ຄື: ການສຶກສາກ່ອນໄວຮຽນ, ປະຖົມ

ແລະ ມັດທະຍົມສຶກສາ. ສູນປະກັນຄຸນນະພາບການສຶກສາ ມີຄວາມຮັບຜິດຊອບໃນການເຮັດວຽກກັບບັນດາກົມຕ່າງໆ ເພື່ອພັດທະນາມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ. ບູລິມະສິດມີດັ່ງນີ້:

**<u>ຍຸດທະສາດທີ 1:</u>** ພັດທະນາ ແລະ ຈັດຕັ້ງປະຕິບັດ ລະບົບມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ສໍາລັບການສຶກສາກ່ອນໄວຮຽນ ແລະ ມັດທະຍົມສຶກສາ.

**ຜົນໄດ້ຮັບລະດັບກາງທີ 2 : ຂະບວນການປະເມີນຕົນເອງ ແລະ ການວາງແຜນພັດທະນາໂຮງຮຽນແບບຍືນຍົງ (ໂດຍນໍາໃຊ້ FQS) ໄດ້ຖືກພັດທະນາຂຶ້ນ ເພື່ອເປັນບ່ອນອີງແກ່ການວາງແຜນຂັ້ນເມືອງ ແລະ ການກໍານົດເປົ້າໝາຍການສະໜັບສະໜູນ, ລວມທັງການຈັດສັນຄູ ແລະ ອຸປະກອນຮັບໃຊ້ການຮຽນ (ພາກທີ I, ຜົນໄດ້ຮັບລະດັບສູງທີ 3, ຜົນຮັບລະດັບກາງທີ 3.2).**

**<u>ຍຸດທະສາດທີ 1:</u>** ລະບົບກົງຈັກການຈັດຕັ້ງທັງລະດັບສູນກາງ ແລະ ລະດັບທ້ອງຖິ່ນມີຄວາມສອດຄ່ອງກັນ ເພື່ອສະໜັບສະໜູນການຈັດລໍາດັບຄວາມສໍາຄັນ ເພື່ອບັນລຸມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ ໃນສະຖານການສຶກສາກ່ອນໄວຮຽນ, ປະຖົມ ແລະ ມັດທະຍົມສຶກສາ.

**<u>ວຽກຈຸດສຸມ:</u>**

- ປັບປຸງ ສິດ ແລະ ໜ້າທີ່ ຂອງພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ແລະ ຂອງພະນັກງານ ເພື່ອໃຫ້ກວມເອົາການເຮັດໜ້າທີ່ໃນການລາຍງານຜົນການຈັດຕັ້ງປະຕິບັດ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ແລະ ລະບົບການຈັດບູລິມະສິດໃນການຈັດສັນຊັບພະຍາກອນ;
- ພາຍໃຕ້ການຊີ້ນໍາ ຂອງຄະນະກໍາມະການແຜນການ ແລະ ການເງິນ, ພັດທະນາ ແລະ ເຜີຍແຜ່ ຂັ້ນຕອນ ແລະ ຂໍ້ແນະນໍາໃນການສະໜັບສະໜູນບັນກາກົມ/ຫ້ອງການຂັ້ນກະຊວງ, ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ໃນການຈັດສັນຊັບພະຍາກອນໃຫ້ແກ່ໂຮງຮຽນ ທີ່ບໍ່ສາມາດບັນລຸມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ໄດ້ຢ່າງມີປະສິດຕິພາບຫຼາຍຂຶ້ນ.
- ພັດທະນາເຄື່ອງມືການປະເມີນຜົນ ແລະ ການຢັ້ງຢືນມາດຕະຖານຂອງມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ສໍາລັບພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ;
- ສ້າງຄວາມເຂັ້ມແຂງໃຫ້ ຖານຂໍ້ມູນ LESMIS ເພື່ອໃຫ້ສາມາດລາຍງານຜົນການຈັດຕັ້ງປະຕິບັດ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ;
- ເກັບກໍາຂໍ້ມູນປີຖານ ແລະ ພັດທະນາຕົວຊີ້ວັດ ແລະ ຄາດໝາຍ ເພື່ອສະແດງໃຫ້ເຫັນເຖິງຊັບພະຍາກອນທີ່ມີໃນລະດັບໂຮງຮຽນ ເພື່ອໃຫ້ເປັນຂໍ້ມູນເພີ່ມເຕີມ ສໍາລັບຄາດໝາຍລະດັບຊາດ ໃນການບັນລຸມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ.

**ຜົນໄດ້ຮັບລະດັບກາງທີ 3: ເງິນບໍລິຫານໂຮງຮຽນ (ສູດຄິດໄລ່ ແລະ ລາຍການໃຊ້ຈ່າຍທີ່ເໝາະສົມ) ແມ່ນຕອບສະໜອງຕໍ່ຄວາມຕ້ອງການໃນລະດັບໂຮງຮຽນ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ຕິດພັນກັບ FQS. (ພາກທີ I, ຜົນໄດ້ຮັບລະດັບສູງທີ 3, ຜົນຮັບລະດັບກາງທີ 3.3)**

**<u>ຍຸດທະສາດທີ 1:</u>** ທົບທວນ ແລະ ປັບປຸງ ນະໂຍບາຍ, ສູດການຄິດໄລ່ ແລະ ລາຍການໃຊ້ຈ່າຍ ຂອງເງິນບໍລິຫານໂຮງຮຽນ ເພື່ອໃຫ້ສອດຄ່ອງກັບນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025.

ຢາກມີຜົນສຳເລັດອັນເຕັມສ່ວນຂອງຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ / ຫຼື ງົບປະມານ ODA ສຸມໃສ່ສະເພາະຍຸດທະສາດນີ້.

**<u>ວຽກຈຸດສຸມ:</u>**

- ຄະນະກຳມະການແຜນການ ແລະ ການເງິນຈະທົບທວນນະໂຍບາຍ, ສູດຄິດໄລ່ ແລະ ລາຍການຈ່າຍທີ່ເໝາະສົມຂອງເງິນບໍລິຫານໂຮງຮຽນ ເພື່ອໃຫ້ສອດຄ່ອງກັບບູລິມະສິດດ້ານນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025;
- ຄະນະກຳມະການແຜນການ ແລະ ການເງິນຈະທົບທວນ ແລະ ໃຫ້ຄຳແນະນຳສຳລັບການທົບທວນສູດຄິດໄລ່ ແລະ ລາຍການໃຊ້ຈ່າຍທີ່ເໝາະສົມ ເພື່ອໃຫ້ຕອບສະໜອງກັບຄວາມຕ້ອງການຂອງໂຮງຮຽນຢ່າງມີປະສິດທິຜົນສູງ;
- ພັດທະນາຄຳແນະນຳ ແລະ ລະບຽບການໃຊ້ຈ່າຍເງິນບໍລິຫານໂຮງຮຽນ ສຳລັບໂຮງຮຽນ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ເພື່ອໃຫ້ສອດຄ່ອງກັບ ນະໂນຍາຍການໃຊ້ຈ່າຍເງິນບໍລິຫານໂຮງຮຽນສະບັບປັບປຸງໃໝ່;
- ຮັບຮອງ ແລະ ຈັດຕັ້ງປະຕິບັດນະໂນຍາຍການໃຊ້ຈ່າຍເງິນບໍລິຫານໂຮງຮຽນສະບັບປັບປຸງໃໝ່;

**<u>ຍຸດທະສາດທີ 2:</u>** ທົບທວນລະບົບການຈ່າຍເງິນບໍລິຫານໂຮງຮຽນທີ່ນຳໃຊ້ໃນປະຈຸບັນ ເພື່ອເຮັດໃຫ້ການຈ່າຍເງິນທັນເວລາ, ປັບປຸງວິທີການຍັ້ງຢືນການຈັດສົ່ງເງິນ ແລະ ປະສິດທິພາບໃນການມາຮັບເອົາເງິນ ສຳລັບໂຮງຮຽນນ້ອຍ ແລະ ໂຮງຮຽນທີ່ຢູ່ເຂດຫ່າງໄກສອກຫຼີກ.

**<u>ວຽກຈຸດສຸມ</u>**

- ທົບທວນນະໂຍບາຍການເບີກຈ່າຍເງິນບໍລິຫານໂຮງຮຽນທີ່ນຳໃຊ້ຢູ່ປັດຈຸບັນນີ້ ລວມທັງການໂອນເງິນສອງຄັ້ງຕໍ່ປີ ສຳລັບໂຮງຮຽນນ້ອຍ ແລະ ຢູ່ຫ່າງໄກສອກຫຼີກ;
- ສະເໜີນະໂຍບາຍການເບີກຈ່າຍທີ່ມີປະສິດທິພາບຫຼາຍຂຶ້ນ, ລວມທັງການຕິດຕາມກວດກາ, ເພື່ອຂໍອະນຸມັດຈາກກະຊວງສຶກສາທິການ ແລະ ກິລາ ແລະ ກະຊວງການເງິນ;
- ຄະນະກຳມະການແຜນການ ແລະ ການເງິນ ກວດກາລາຍລະອຽດບັນຊີທະນາຄານຂອງຜູ້ທີ່ໄດ້ຮັບເງິນບໍຫານໂຮງຮຽນ;
- ກະຊວງສຶກສາທິການ ແລະ ກິລາ ແລະ ກະຊວງການເງິນ ຈະພົບປະກັນເພື່ອປຶກສາຫາລືກ່ຽວກັບວິທີການເພື່ອປັບປຸງຄວາມໄວຂອງການຈັດສົ່ງເງິນບໍລິຫານໂຮງຮຽນ ແລະ ປະສິດທິພາບຂອງການມຮຖອນເອົາເງິນບໍລິຫານດັ່ງກ່າວ ສຳລັບໂຮງຮຽນຂະໜາດນ້ອຍ ແລະ / ຫຼື ໂຮງຮຽນຢູ່ເຂດຫ່າງໄກສອກຫຼີກ.

**ຜົນໄດ້ຮັບລະດັບກາງທີ 4: ການຈັດສັນຄູສອນແມ່ນຕອບສະໜອງຕໍ່ຄວາມຕ້ອງການຂອງດັບໂຮງຮຽນ ເພື່ອຫຼຸດ-ຜ່ອນຄວາມແຕກໂຕນ ແລະ ສອດຄ່ອງ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ. (ພາກທີ I, ຜົນໄດ້ຮັບລະດັບສູງທີ 3, ຜົນໄດ້ຮັບລະດັບກາງທີ 3.4)**

**<u>ຍຸດທະສາດທີ 1:</u>** ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການບໍລິຫານ ແລະ ກົງຈັກການຈັດຕັ້ງທີ່ເຮັດໜ້າທີ່ໃນການຈັດສັນ ແລະ ສັບຊ້ອນຄູ ເພື່ອເຮັດໃຫ້ການຈັດສັນຄູມີຄວາມຍຸດຕິທຳ ແລະ ເທົ່າທຽມກັນ.

**<u>ວຽກຈຸດສຸມ</u>**

- ຄະນະກຳມະການຈັດສັນຄູ ພັດທະນາຂອບນິຕິກຳ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດຄູ່ມືການຈັດສັນຄູປະຖົມສະບັບປັບປຸງໃໝ່;

- ດຳເນີນວິເຄາະວິທີການຈັດສັນຄູໃນທຸກລະດັບ ແລະ ໃຫ້ຂໍ້ສະເໜີແນະ ໂດຍອີງໃສ່ຕົວເລກພະນັກງານທີ່ຄາດວ່າຈະໄດ້ຮັບ ໃຫ້ແກ່ຄະນະກຳມະການຈັດສັນຄູ ເພື່ອທົບທວນ ແລະ ອະນຸມັດ;
- ຄະນະກຳມະການຈັດສັນຄູ ຈະພິຈາລະນາຄວາມເປັນໄປໄດ້ໃນການສະໜອງເງິນອຸດໜູນໃຫ່ແກ່ຄູທີ່ຍ້າຍຖິ່ນຖານ ເພື່ອໄປສິດສອນ;
- ຄະນະກຳມະການແຜນການ ແລະ ການເງິນ ຈະຊີ້ນຳ ແລະ ຕິດຕາມການພັດທະນາແຜນບູລິມະສິດການຈັດສັນຄູ 10 ປີ ເພື່ອຫຼຸດຜ່ອນຄວາມແຕກໂຕນ.
- ໃນການທົບທວນໃນໄລຍະກາງ, ຄະນະກຳມະການຈັດສັນຄູ ຈະທົບທວນຄືນສູດການຈັດສັນຄູ ແລະ ບົດແນະນຳ ເພື່ອປະເມີນຄວາມສອດຄ່ອງໃນການຈັດຕັ້ງປະຕິບັດຕົວຈິງ.

<u>**ຍຸດທະສາດທີ 2:**</u> ສ້າງຄວາມເຂັ້ມແຂງແກ່ລະບົບຖານຂໍ້ມູນຄຸ້ມຄອງການຈັດສັນຄູ ແລະ ສັບຊ້ອນຄູຄືນໃໝ່ ເພື່ອສະໜັບສະໜູນການສະໜອງຄູໃຫ້ມີຄວາມເທົ່າທຽມກັນ.

<u>**ວຽກຈຸດສຸມ**</u>

- ພັດທະນາຖານຂໍ້ມູນ PMIS ເພື່ອໃຫ້ເຊື່ອມຈອດກັບລະບົບອື່ນ ແລະ ສາມາດຕິດຕາມການຈັດສັນຄູ;
- ພັດທະນາ ແລະ ອະນຸມັດນຳໃຊ້ຄຳແນະນຳ ແລະ ປື້ມຄູ່ມື ເພື່ອໃຫ້ຄຳແນະນຳແກ່ສຶກສາເມືອງໃນການຈັດຕັ້ງປະຕິບັດແຜນການແບ່ງປັນຄູໃຫ້ເທົ່າທຽມກັນ, ຮັບປະກັນໃຫ້ໂຮງຮຽນທຸກແຫ່ງມີຈຳນວນຄູກວມ 80% ຂຶ້ນໄປ ທຽບໃສ່ມາດຕະຖານໃນການບັນຈຸຄູ (ອີງຕາມຄູ່ມືແນະນຳໃນການຈັດສັນຄູສະບັບປັບປຸງໃໝ່);
- ພັດທະນາ ແລະ ອະນຸມັດນຳໃຊ້ລະບົບການປະເມີນຄວາມສອດຄ່ອງໃນການຈັດສັນຄູ ໂດຍອີງໃສ່ຄູ່ມືແນະນຳໃນການຈັດສັນຄູສະບັບປັບປຸງໃໝ່.
- ທົບທວນ ແລະ ທົດລອງຍຸດທະສາດການຈັດສັນຄູຄືນໃໝ່ ແລະ ການສະໜອງສິ່ງຈູງໃຈ ເພື່ອໃຫ້ສາມາດປະເມີນຄວາມເປັນໄປໄດ້ ໃນເວລາມີການທົບທວນໃນໄລຍະກາງ.

<u>**ຍຸດທະສາດທີ 3:**</u> ກຳນົດເສັ້ນທາງວິຊາຊີບຄູ ລວມທັງຄູສຶກສານິເທດ ເພື່ອກະຕຸ້ນ ແລະ ສ້າງສິ່ງຈູງໃຈໃຫ້ພວກດັ່ງກ່າວນີ້.

<u>**ວຽກຈຸດສຸມ**</u>

- ຄະນະກຳມະການຈັດສັນຄູ ຈະພິຈາລະນາຄວາມເປັນໄປໄດ້ໃນການກຳນົດເສັ້ນທາງວິຊາຊີບຄູ ແລະ ຂອບພັດທະນາວິຊາຊີບ ສຳລັບອາຊີບການສອນ.

**ຜົນໄດ້ຮັບລະດັບກາງທີ 5: ປື້ມແບບຮຽນ ແລະ ປື້ມຄູ່ມືຄູ ແມ່ນຕອບສະໜອງກັບຄວາມຕ້ອງການໃນລະດັບໂຮງຮຽນເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ສອດຄ່ອງກັບກັບມາດຕະຖານຂັ້ນພື້ນ ຖານຂອງຄຸນນະພາບການສຶກສາ (ພາກທີ I, ຜົນໄດ້ຮັບລະດັບສູງທີ 3, ຜົນຮັບລະດັບກາງ 3.5).**

<u>**ຍຸດທະສາດທີ 1:**</u> ທົບທວນ ແລະ ປັບປຸງແຜນງົບປະມານສຳລັບການພິມປື້ມແບບຮຽນທົດແທນ ເພື່ອຮັບປະກັນການສະໜອງທີ່ຍືນຍົງ.

ຢາກບັນລຸໄດ້ຜົນສຳເລັດອັນເຕັມສ່ວນຂອງຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານການເງິນ "ຍົກສູງຄຸນນະພາບການສຶກສາ" ແລະ/ຫຼື ງົບປະມານ ODA ຈະຕ້ອງສຸມໃສ່ເປົ້າໝາຍຜົນໄດ້ຮັບໄລຍະກາງນີ້.

<u>**ວຽກຈຸດສຸມ**</u>

- ວິເຄາະອັດຕາການສູນເສຍປື້ມຕຳລາຮຽນໃນປະຈຸບັນໃນທຸກວິຊາ ແລະ ທຸກລະດັບ;
- ທົບທວນນະໂຍບາຍການພິມປື້ມທົດແທນຄືນໃນປະຈຸບັນ ເພື່ອຮັບປະກັນໃຫ້ພຽງພໍໃນທຸກວິຊາ;

- ກຳນົດງົບປະມານທີ່ຈຳເປັນເພື່ອຮັກສາການສະໜອງປຶ້ມຕຳລາຮຽນ ຕາມນະໂຍບາຍການສະໜອງປຶ້ມຕຳລາຮຽນທີ່ມີ.
- ແຈກຢາຍປຶ້ມແບບຮຽນໃຫ້ສຳເລັດກ່ອນເປີດສົກຮຽນ.

**ຍຸດທະສາດທີ 2:** ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງ ແລະ ການແຈກຢາຍປຶ້ມທັງໃນຂັ້ນສູນກາງ ແລະ ຂັ້ນເມືອງ ເພື່ອປັບປຸງປະສິດທິພາບ ແລະ ຫຼຸດຜ່ອນຄວາມແຕກໂຕນກັນ, ລວມທັງພັດທະນາຖານຂໍ້ມູນຄຸ້ມຄອງປຶ້ມ.

**ວຽກຈຸດສຸມ:**

- ທົບທວນລະບົບການແຈກຢາຍປຶ້ມ, ລະບົບບັນຊີສາງ ແລະ ລະບົບການເກັບມ້ຽນ ເພື່ອປັບປຸງລະບົບການຈັດສົ່ງປຶ້ມແບບຮຽນຈາກສາງສູນກາງໄປຫາໂຮງຮຽນ;
- ພັດທະນາ ແລະ ເຜີຍແຜ່ວິທີການຈັດບູລິມະສິດ ແລະ ຂະບວນການໃນການແຈກຢາຍປຶ້ມ ສຳລັບຂັ້ນສູນກາງ ແລະ ຂັ້ນເມືອງ ລວມທັງເຄືອຂ່າຍການແຈກຢາຍປຶ້ມ ເພື່ອຮັບປະກັນໃຫ້ໂຮງຮຽນທຸກແຫ່ງບັນລຸການສະໜອງປຶ້ມໃຫ້ນັກຮຽນຢ່າງໜ້ອຍ 80% ຂອງນະໂຍບາຍການຈັດສັນປຶ້ມຕຳລາຮຽນໃຫ້ແກນັກຮຽນ;
- ສ້າງ ແລະ ເຜີຍແຜ່ ຄຳແນະນຳສຳລັບ ຫ້ອງການສຶກສາທິການ ແລະ ກິລາເມືອງ ກ່ຽວກັບວິທີການເກັບຮັກສາປຶ້ມຕຳລາທີ່ປອດໄພ, ການຄຸ້ມຄອງບັນຊີສາງ ແລະ ການແຈກຢາຍປຶ້ມແບບຮຽນທີ່ມີຄວາມເທົ່າທຽມ ແລະ ມີປະສິດທິພາບ;
- ສ້າງ ແລະ ຈັດຕັ້ງປະຕິບັດແຜນບູລິມະສິດ ໃນການສະໜອງສາງເກັບມ້ຽນ ແລະ ຕູ້ໃສ່ປຶ້ມສຳລັບເມືອງ ແລະ ໂຮງຮຽນ;
- ຈັດກອງປະຊຸມສ້າງຂີດຄວາມສາມາດໃຫ້ແກ່ຜູ້ອຳນວຍການໂຮງຮຽນ ແລະ ຄູ ກ່ຽວກັບການຄຸ້ມຄອງແລະການນຳໃຊ້ປຶ້ມຕຳລາຮຽນ, ລວມທັງການເກັບມ້ຽນເອກະສານທີ່ປອດໄພໃນລະດັບໂຮງຮຽນ ແລະ ເມືອງ ເພື່ອຫຼຸດຜ່ອນຄວາມສ່ຽງຈາກຜົນເສຍຫາຍ, ແລະ ການເບິ່ງແຍງປຶ້ມແບບຮຽນໂດຍນັກຮຽນ.

**ຍຸດທະສາດທີ 3:** ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບຂໍ້ມູນທີ່ນຳໃຊ້ໃນປະຈຸບັນ ເພື່ອສະໜັບສະໜູນການສັ່ງປຶ້ມແບບຮຽນ, ການຈັດລຳດັບຄວາມສຳຄັນ ແລະ ການແຈກຢາຍ.

**ວຽກຈຸດສຸມ**

- ດຳເນີນການທົບທວນປຽບທຽບກ່ຽວກັບປະສິດທິພາບຂອງ ຖານຂໍ້ມູນຄຸ້ມຄອງປຶ້ມ (TMIS) ແລະ ປະສິດທິພາບຂອງການນຳໃຊ້ຖານຂໍ້ມູນ EMIS ເພື່ອເປັນພື້ນຖານໃນການປະເມີນຄວາມຕ້ອງການປຶ້ມເພີ່ມເຕີມໃນລະດັບໂຮງຮຽນ ແລະ ເມືອງ;
- ກຳນົດພາລະບົດບາດໃນການຄຸ້ມຄອງຂໍ້ມູນປຶ້ມໃນລະດັບເມືອງໃຫ້ມີຄວາມຈະແຈ້ງ;
- ຝຶກອົບຮົມໃນການວິເຄາະພື້ນຖານຂອງຂໍ້ມູນປຶ້ມຈາກຖານຂໍ້ມູນ EMIS;
- ໃຫ້ບູລິມະສິດໃນການປ້ອນຂໍ້ມູນການເຂົ້າຮຽນຈາກການເກັບກຳຂໍ້ມູນປະຈຳປີ ໃຫ້ຖືກຕ້ອງຊັດເຈນ ເພື່ອເປັນບ່ອນອີງໃນການສະໜອງປຶ້ມຕຳລາຮຽນທົດແທນໃນແຕ່ລະປີ;
- ການຈັດສັນປຶ້ມຕຳລາຮຽນໃຫ້ໂຮງຮຽນ ແລະ ເມືອງ ເພື່ອທົດແທນອັນເສຍຫາຍ ຕ້ອງລວມເອົາການຄາດຄະເນການສູນເສຍໄວ້ລ່ວງໜ້າ ເນື່ອງຈາກວ່າການສະໜອງຂໍ້ມູນດັ່ງກ່າວອາດຊັກຊ້າ ແລະ ການແຈກຢາຍຊັກຊ້າ.

**ຜົນໄດ້ຮັບລະດັບກາງທີ 6: ໂຮງຮຽນທຸກແຫ່ງແມ່ນໄດ້ຮັບການສະໜັບສະໜູນ ເພື່ອໃຫ້ບັນລຸໄດ້ມາດຖານຕ່ຳສຸດສຳລັບສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ. (ພາກທີ I, ຜົນໄດ້ຮັບລະ ດັບສູງທີ 3, ຜົນຮັບລະດັບກາງທີ 3.6).**

**<u>ຍຸດທະສາດທີ 1:</u>** ສ້າງຕັ້ງອົງກອນ ແລະ ລະບົບການຄຸ້ມຄອງທີ່ຈໍາເປັນ ເພື່ອຕິດຕາມກວດກາການສະໜອງນໍ້າ ແລະ ສຸຂະອນາໄມ ໃນທົ່ວປະເທດແຕ່ຊັ້ນອະນຸບານຈົນຮອດຊັ້ນມັດທະຍົມສຶກສາ

ຢາກບັນລຸໄດ້ຜົນສໍາເລັດອັນເຕັມສ່ວນຂອງຍຸດທະສາດນີ້ ຈະຕ້ອງມີການສະໜອງທຶນທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ “ຍົກສູງຄຸນນະພາບການສຶກສາ” ແລະ / ຫຼື ງົບປະມານ ODA ຈະຕ້ອງສຸມໃສ່ເປົ້າໝາຍຜົນໄດ້ຮັບລະດັບກາງນີ້.

**<u>ວຽກຈຸດສຸມ</u>**

- ກະຊວງສຶກສາທິການ ແລະ ກິລາ ຈະທົບທວນຄືນຄວາມເປັນໄປໄດ້ໃນການນໍາໃຊ້ວິທີການ ຂອງແຜນງານນໍ້າ ແລະ ສຸຂະອະນາໄມໃນຂອບເຂດທົ່ວປະເທດ ເພື່ອແນໃສ່ຮັບປະກັນວ່າໂຮງຮຽນທຸກແຫ່ງບັນລຸໄດ້ຢ່າງໜ້ອຍມາດຕະຖານລະດັບ 1 ດາວ;
- ອອກຂໍ້ຕົກລົງຂອງຂອງລັດຖະມົນຕີ ເພື່ອແຕ່ງຕັ້ງອົງກອນທີ່ຮັບຜິດຊອບໃນການຕິດຕາມກວດກາແຜນງານນໍ້າ ແລະ ສຸຂະອະນາໄມ ພ້ອມດຽວກັນນັ້ນ ພາລະບົດບາດຂອງພາກສ່ວນດັ່ງກ່າວ ຕ້ອງໄດ້ຮັບການປັບປຸງໃຫ້ສອດຄ່ອງກັບວຽກທີ່ໄດ້ມອບໝາຍ.
- ພັດທະນາ ແລະ ເຜີຍແຜ່ ຂັ້ນຕອນ ແລະ ແນວທາງໃນການສະໜັບສະໜູນບັນດາກົມຂັ້ນສູນກາງ, ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ໂຮງຮຽນ ໃນການຈັດສັນຊັບພະຍາກອນໃຫ້ແກ່ໂຮງຮຽນທີ່ມີປະສິດທິຜົນສູງຂຶ້ນ ເພື່ອໃຫ້ພວກເຂົາສາມາດສະໜອງຫ້ອງນໍ້າ, ອ່າງລ້າງມື ແລະ ອື່ນໆ ສອດຄ່ອງກັບມັດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ.

### 2.3.3. ຄຸນນະພາບ ແລະ ຈໍານວນນັກຮຽນທີ່ຮຽນຈົບ ທີ່ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ ສອດຄ່ອງກັບຄວາມຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX ແລະ ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (ພາກທີ I, ຜົນໄດ້ຮັບລະດັບສູງທີ 5)

➢ **ຫຼັກການ ແລະ ເຫດຜົນ**

ພາກທີ I ໄດ້ໃຫ້ລາຍລະອຽດກ່ຽວກັບຫຼັກການ ແລະ ເຫດຜົນຕ່າງໆ. ເພື່ອປັບປຸງຄວາມສອດຄ່ອງກັບຄວາມຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ IX, ມັນຈໍາເປັນຕ້ອງປັບປຸງຄວາມຮູ້ ແລະ ທັກສະພື້ນຖານຂອງເດັກນ້ອຍຈາກການສຶກສາກ່ອນໄວຮຽນຂຶ້ນໄປ ແລະ ຍັງກໍານົດການສະໜັບສະໜູນທີ່ຈໍາເປັນສໍາລັບຄົນພິການ.

**ຜົນຮັບລະດັບກາງທີ 1: ຈໍານວນນັກຮຽນ ແລະ ຄຸນນະນະພາບຂອງຜູ້ທີ່ຮຽນຈົບໃນຫຼັກສູດ ທີ່ກ່ຽວຂ້ອງກັບກະສິກໍາ ແລະ ອຸດສາຫະກໍາ ໃນສະຖານອາຊີວະສຶກສາ ເພີ່ມຂຶ້ນ ໂດຍຜ່ານການປັບປຸງ ສິ່ງອໍານວຍຄວາມສະດວກ, ຄູສອນ ແລະ ສື່ການຮຽນ-ການສອນຕ່າງໆ (ພາກທີ I, ຜົນໄດ້ຮັບລະດັບສູງທີ 5, ຜົນຮັບໄລຍະກາງ 5.3)**

**<u>ຍຸດທະສາດທີ 1:</u>** ຊຸກຍູ້ການສະໜອງຫຼັກສູດອາຊີວະສຶກສາ ແລະ ຊຸກຍູ້ໃຫ້ນັກຮຽນເຂົ້າຮຽນໃນຂະແໜງເສດຖະກິດທີ່ເປັນບູລິມະສິດ

**<u>ວຽກຈຸດສຸມ</u>**

- ທົບທວນ ແລະ ປັບປຸງສູດການສະໜອງທຶນການສຶກສາໃຫ້ແກ່ນັກຮຽນທີ່ເຂົ້າຮຽນສາຍກະສິກໍາ ແລະ ອຸດສາຫະກໍາ.

**ຜົນໄດ້ຮັບລະດັບກາງ 2: ນິຕິກໍາກ່ຽວກັບການສະໜອງທຶນການສຶກສາແກ່ນັກຮຽນ ໂດຍອີງໃສ່ຜົນການຮຽນຂອງນັກຮຽນທີ່ຮຽນຢູ່ມະຫາວິທະຍາໄລທີ່ຕັ້ງຢູ່ຕ່າງແຂວງ ໄດ້ຖືກເຜີຍແຜ່ (ອັດຕາເອ ກະພາບ, ຕໍ່ນັກຮຽນ, ສໍາລັບສຶກ**

**ສາສາຍວິທະຍາສາດທຳມະຊາດ, ອີງໃສ່ຄວາມດ້ອຍໂອກາດ). (ພາກທີ I ຜົນໄດ້ຮັບລະດັບສູງທີ 5, ຜົນຮັບລະດັບກາງທີ 5.12)**

**<u>ຍຸດທະສາດທີ 1:</u>** ຊຸກຍູ້ການສະໜອງຫຼັກສູດມະຫາວິທະຍາໄລ ແລະ ຊຸກຍູ້ໃຫ້ນັກຮຽນເຂົ້າຮຽນໃນຂະແໜງເສດຖະກິດທີ່ເປັນບູລິມະສິດ ແລະ ນັກສຶກສາຈາກເຂດຫ່າງໄກສອກຫຼີກ.

**<u>ວຽກຈຸດສຸມ</u>**

- ທົບທວນຄືນທາງເລືອກໃນການໃຫ້ທຶນການສຶກສາແກ່ນັກສຶກສາທີ່ຮຽນຢູ່ມະຫາວິທະຍາໄລຂອງທີ່ຕັ້ງຢູ່ຕ່າງແຂວງ ເພື່ອສອດຄ່ອງກັບນະໂຍບາຍທີ່ສຳຄັນຂອງຂະແໜງການ, ລວມທັງທຶນເພີ່ມເຕີມສຳລັບນັກສຶກສາທີ່ຮຽນສາຍກະສິກຳ ແລະ ອຸດສາຫະກຳ, ແລະ ນັກສຶກສາຈາດເຂດທີ່ດ້ອຍໂອກາດ;
- ໃຫ້ຂໍ້ສະເໜີແນະ ແລະ ກຳນົດຄ່າໃຊ້ຈ່າຍທີ່ເໝາະສົມ ເພື່ອໃຫ້ການນຳພິຈາລະນາ.

### 2.3.4. ຂະແໜງການສຶກສາ ແລະ ໄດ້ຮັບການຈັດຕັ້ງ, ຄຸ້ມຄອງ, ການກວດກາ ແລະ ປະເມີນຜົນໃນທຸກລະດັບຢ່າງເໝາະສົມ ເພື່ອຍົກສູງປະສິດທິພາບຂອງຂະແໜງການ (ພາກທີ I, ຜົນໄດ້ຮັບທີ 6)

➢ **ຫຼັກການ ແລະ ເຫດຜົນ**

ພາກທີ I ໄດ້ໃຫ້ລາຍລະອຽດສຳລັບເຫດຜົນຕ່າງໆ. ຂະແໜງການສຶກສາ ແລະ ກິລາ ຕ້ອງໄດ້ນຳໃຊ້ຊັບພະຍາກອນມະນຸດ ແລະ ການເງິນທີ່ຈຳກັດຂອງຕົນຢ່າງມີປະສິດທິພາບຫຼາຍຂຶ້ນ ໂດຍຜ່ານການປັບປຸງປະສິດທິພາບໃນການຈັດສັນງົບປະມານພາຍໃນຂະແໜງການສຶກສາ ແລະ ກິລາ, ໂດຍຜ່ານການພັດທະນາຂອບບູລິມະສິດການຈັດສັນງົບປະມານ. ການປະສານສົມທົບຢ່າງໃກ້ຊິດກັບຄູ່ຮ່ວມພັດທະນາໃນໄລຍະການອອກແບບໂຄງການໃໝ່ ແມ່ນມີຄວາມຈຳເປັນເພື່ອຮັບປະກັນວ່າການເງິນຈາກພາຍນອກແມ່ນເໝາະສົມ ແລະ ບໍ່ນຳໄປສູ່ການໃຊ້ຈ່າຍເງິນບໍລິຫານທີ່ບໍ່ຍືນຍົງ.

➢ **ພາກສ່ວນຮັບຜິດຊອບ**

ກົມແຜນການ, ກົມການເງິນ, ກົມຈັດຕັ້ງ ແລະ ພະນັກງານ ແລະ ການກວດກາ,

**ຜົນໄດ້ຮັບລະດັບກາງທີ 1: ໂຄງປະກອບການຈັດຕັ້ງຂັ້ນກະຊວງ, ຂັ້ນແຂວງ ແລະ ຂັ້ນເມືອງ ມີຄວາມເຂັ້ມແຂງ ເພື່ອອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ຍຸດທະສາດຂອງແຜນພັດທະນາການສຶກສາ ແລະ ກິລາ ໃຫ້ມີປະສິດຕິພາບ, ລວມທັງການຈັດຕັ້ງນະໂຍບາຍການບໍລິຫານທີ່ອີງໃສ່ໂຮງຮຽນເປັນຫຼັກ ແລະ ບົດບາດຂອງ ຄພສບ ຕ້ອງມີຄວາມເຂັ້ມແຂງ (ພາກທີ I ຜົນໄດ້ຮັບທີ 6, ຜົນຮັບລະດັບກາງ 6.1)**

**<u>ຍຸດທະສາດທີ 1:</u>** ທົບທວນຄືນພາລະບົດບາດຂອງບັນດາກົມຂັ້ນສູນກາງ, ຂອງແຂວງ, ເມືອງ ແລະ ກຸ່ມໂຮງຮຽນ (ເບິ່ງແຜນຍຸດທະສາດ 3 ຂ້າງລຸ່ມນີ້) ເພື່ອຮັບປະກັນປະສິດທິພາບ, ຄວາມສົມບູນ ແລະ ຄົບຖ້ວນ, ລວມທັງຄວາມຮັບຜິດຊອບວຽກງານການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ.

**<u>ວຽກຈຸດສຸມ</u>**

- ທົບທວນ, ປັບປຸງ ແລະ ຮັບຮອງເອົາສິດ ແລະ ໜ້າທີ່ຮັບຜິດຊອບ ລວມທັງການປະຕິຮູບດ້ານການຄຸ້ມຄອງວຽກງານການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ ແລະ ການຄຸ້ມຄອງແຜນພັດທະນາການສຶກສາ ແລະ ກິລາ ສຳລັບແຕ່ລະພາກສ່ວນຢູ່ຂັ້ນສູນກາງ, ຂັ້ນທ້ອງຖິ່ນ, ຂັ້ນກຸ່ມໂຮງຮຽນ ແລະ ໂຮງຮຽນ ໃນການຈັດຕັ້ງປະຕິບັດວຽກງານຂະແໜງການຍ່ອຍທີ່ກ່ຽວຂ້ອງຕົນ;

- ພັດທະນາ ແລະ ອະນຸມັດແຜນການດໍາເນີນງານທີ່ເປັນບູລິມະສິດເປັນແຕ່ລະໄລຍະ ແລະ ແຜນງົບປະມານສໍາລັບການສ້າງຕັ້ງລະບົບກຸ່ມໂຮງຮຽນ;
- ເຜີຍແຜ່ບັນດາຂໍ້ກໍານົດ ແລະ ຄວາມຮັບຜິດຊອບທີ່ໄດ້ຮັບການອະນຸມັດໃໝ່ ສໍາລັບບັນດາກົມຂັ້ນສູນກາງ, ຂັ້ນທ້ອງຖິ່ນ, ກຸ່ມໂຮງຮຽນ ແລະ ໂຮງຮຽນ.

**<u>ຍຸດທະສາດທີ 2:</u>** ທົບທວນຄືນພາລະບົດບາດຂອງພະນັກງານ ແລະ ການຈັດສັນພະນັກງານໃຫ້ບັນດາກົມຂັ້ນສູນກາງ, ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ໂຮງຮຽນຕາມພາລະບົດບາດທີ່ໄດ້ມີການປັບປຸງ;

**<u>ວຽກຈຸດສຸມ</u>**

- ພັດທະນາ ແລະ ຮັບຮອງຕໍາແໜ່ງງານ ແລະ ມາດຕະຖານຂອງແຕ່ລະຕໍາແໜ່ງງານໃນທຸກລະດັບ, ສໍາລັບແຕ່ລະຂະແໜງການຍ່ອຍ, ລວມທັງຜູ້ອໍານວຍການໂຮງຮຽນ ເພື່ອໃຫ້ສອດຄ່ອງກັບພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ;
- ດໍາເນີນການວິເຄາະສະພາບຂອງການສະໜອງພະນັກງານໃຫ້ພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ທີ່ມີໃນປະຈຸບັນ ໃນທົ່ວປະເທດ;
- ກວດກາ, ປັບປຸງຄືນ ການຈັດສັນພະນັກງານໃຫ້ບັນດາກົມຕ່າງໆ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ໃຫ້ສອດຄ່ອງກັບພາລະໜ້າທີ່ ແລະ ຄວາມຮັບຜິດຊອບທີ່ແຕກຕ່າງ, ສະທ້ອນໃຫ້ເຫັນເຖິງຄວາມແຕກຕ່າງຂອງບໍລິມາດຂອງວຽກ, ປະຊາກອນພາຍໃນແຂວງ/ເມືອງ ແລະ ຈໍານວນໂຮງຮຽນທີ່ມີໃນແຕ່ລະແຂວງ, ແຕ່ລະເມືອງ;
- ດໍາເນີນການເຜີຍແຜ່ຕໍາແໜ່ງງານ ແລະ ມາດຕະຖານຂອງແຕ່ລະຕໍາແໜ່ງງານ ສໍາລັບບັນດາກົມຂັ້ນສູນກາງ, ຂັ້ນທ້ອງຖິ່ນ, ກຸ່ມໂຮງຮຽນ ແລະ ໂຮງຮຽນ

**<u>ຍຸດທະສາດທີ 3:</u>** ສ້າງຕັ້ງອົງກອນທີ່ຮັບຜິດຊອບວຽກງານການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກຢູ່ທຸກລະດັບ

**<u>ວຽກຈຸດສຸມ</u>**

- ສ້າງ ແລະ ອອກ ດໍາລັດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ ໂດຍກໍານົດພາລະບົດບາດ ແລະ ຄວາມຮັບຜິດຊອບໃນທຸກລະດັບເຊັ່ນ: ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ຄພສບ ລວມທັງການນໍາໃຊ້ມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ ເພື່ອເປັນບ່ອນອີງໃຫ້ແກ່ການວາງແຜນ ແລະ ການຈັດລໍາດັບຄວາມສໍາຄັນໃນຂັ້ນເມືອງ;
- ພັດທະນາ, ຮັບຮອງ ແລະ ປະກາດໃຊ້ນິຕິກໍາທີ່ຮັບຮູ້ກ່ຽວກັບ ການບັນຈຸ ຄພສບ ເຂົ້າເປັນໜ່ວຍງານບໍລິຫານໜຶ່ງຂອງຂະແໜງການສຶກສາ;
- ຮ່າງ ແລະ ຮັບຮອງເອົານິຕິກໍາທີ່ຮັບຮູ້ກ່ຽວກັບລັກສະນະທີ່ກ່ຽວພັນກັບຫຼາຍພາກສ່ວນຂອງການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ, ໂດຍສະເພາະໃນຂັ້ນເມືອງ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ດໍາລັດດັ່ງກ່າວຂ້າງເທິງ.

**<u>ຍຸດທະສາດທີ 4:</u>** ປັບປຸງການມີສ່ວນຮ່ວມຂອງຊຸມຊົນໃນຂັ້ນຕອນການຄຸ້ມຄອງໂຮງຮຽນ

**<u>ວຽກຈຸດສຸມ:</u>**

- ປັບປຸງໜ້າວຽກຂອງ ຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອໃຫ້ປະກອບມີໜ້າວຽກການສະໜັບສະໜູນອໍານວຍການໂຮງຮຽນໃນການພັດທະນາ ແລະ ການຈັດຕັ້ງປະຕິບັດແຜນພັດທະນາໂຮງຮຽນ ໂດຍອີງໃສ່ຜົນການປະເມີນມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ.

**<u>ຍຸດທະສາດທີ 5:</u>** ທົບທວນຄືນການສະໜອງງົບປະມານ ແລະ ການຈັດສັນຊັບພະຍາກອນໃຫ້ແກ່ສຶກສາແຂວງ ແລະ ສຶກສາເມືອງໃຫ້ມີປະສິດທິພາບ ແລະ ຄວາມຍຸດຕິທຳຫຼາຍຂຶ້ນ ເພື່ອໃຫ້ຕອບສະໜອງກັບໜ້າວຽກຕົວຈິງ, ການບໍລິການ ແລະ ການສະໜັບສະໜູນໃຫ້ແກ່ບັນດາໂຮງຮຽນເພື່ອໃຫ້ບັນລຸມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ.

**<u>ວຽກຈຸດສຸມ</u>**

- ດຳເນີນການວິເຄາະສະພາບຂອງການຈັດສັນງົບປະມານໃຫ້ພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ໃນປະຈຸບັນ ແລະ ຄວາມຕ້ອງການງົບປະມານບໍລິຫານ, ໂດຍສະເພາະ ກ່ຽວກັບບົດບາດຂອງພວກເຂົາໃນການສະໜັບສະໜູນໂຮງຮຽນ ເພື່ອໃຫ້ບັນລຸມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ;
- ພັດທະນາທາງເລືອກສຳລັບສູດການຄິດໄລ່ການສະໜອງເງິນໃຫ້ແກ່ ພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ເພື່ອນຳສະເໜີ ແລະ ພິຈາລະນາ ໃນເວລາມີການທົບທວນໄລຍະກາງຂອງແຜນພັດທະນາການສຶກສາ ແລະ ກິລາ.

**ຜົນໄດ້ຮັບລະດັບກາງທີ 2: ແຜນຍຸດທະສາດການພັດທະນາຄູ ແລະ ບຸກຄະລາກອນຂອງຂະແໜງການສຶກສາ ແລະ ກິລາ ໄດ້ຖືກຈັດຕັ້ງປະຕິບັດ, ລວມທັງພະນັກງານຂອງສຶກສາແຂວງ ແລະ ສຶກສາເມືອງ ໄດ້ຮັບການຈັດສັນຕາມຄວາມຕ້ອງການ ແລະ ໄດ້ຮັບການສະໜອງການສ້າງຄວາມສາມາດທີ່ເໝາະສົມ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງພວກເຂົາຢ່າງພຽງພໍ, ຕາມທີ່ໄດ້ກຳນົດໂດຍລາຍລະອຽດຂອງວຽກ ແລະ ວຽກວິຊາສະເພາະ. (ພາກທີ I ຜົນໄດ້ຮັບທີ 6, ຜົນຮັບລະດັບກາງ 6.2)**

**<u>ຍຸດທະສາດທີ 1:</u>** ແຜນຍຸດທະສາດການພັດທະນາຄູ ແລະ ບຸກຄະລາກອນຂອງຂະແໜງການສຶກສາ ແລະ ກິລາ ໄດ້ຖືກຮັບຮອງ, ເຜີຍແຜ່ ແລະ ນຳໃຊ້ ເພື່ອເປັນບ່ອນອີງໃຫ້ຄະນະກຳມະການຈັດສັນຄູ ແລະ ເປັນບ່ອນອີງໃນການຂີດຄວາມສາມາດໃຫ້ແກ່ທົ່ວຂະແໜງການສຶກສາ ແລະ ກິລາ.

ຢາກບັນລຸໄດ້ຜົນສຳເລັດອັນເຕັມສ່ວນຂອງຍຸດທະສາດນີ້ຈະຕ້ອງມີການສະໜອງງົບປະມານທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ / ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບລະດັບກາງນີ້.

**<u>ວຽກຈຸດສຸມ</u>**

- ຮ່າງຂອບນິຕິກຳສຳລັບ ແຜນຍຸດທະສາດການພັດທະນາຄູ ແລະ ບຸກຄະລາກອນຂອງຂະແໜງການສຶກສາ ແລະ ກິລາ ເພື່ອນຳໃຊ້ເປັນພື້ນຖານໃນການສ້າງຂີດຄວາມສາມາດຂອງພະນັກງານທຸກຄົນ;
- ສະຖາບັນພັດທະນາການບໍລິຫານການສຶກສາ (ສພບ) ໂດຍການປຶກສາຫາລືກັບພາກສ່ວນກ່ຽວຂ້ອງຕ່າງໆ ສ້າງແຜນການສ້າງຂີດຄວາມສາມາດໃຫ້ແກ່ພະນັກງານ ແລະ ຜູ້ບໍລິຫານການສຶກສາ ແລະ ກິລາ ໃນທົ່ວຂະແໜງການ;
- ຫ້ອງການພັດທະນາຊັບພະຍາກອນມະນຸດ ເຮັດການສຶກສາ ແລະ ທົບທວນການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດທີ່ມີໃນປັດຈຸບັນ ແລະ ສ້າງແຜນປະຕິບັດງານການພັດທະນາຊັບພະ ຍາກອນມະນຸດ (2021-2025) ພ້ອມທັງເຜີຍແຜ່ ແລະ ສ້າງຂີດຄວາມສາມາດໃຫ້ແກ່ພາກສ່ວນຕ່າງໆ ໃນການສ້າງແຜນພັດທະນາຊັບພະຍາກອນມະນຸດ.

**<u>ຍຸດທະສາດທີ 2:</u>** ພັດທະນາ ແລະ ນຳໃຊ້ຄຳແນະນຳ ສຳລັບການຈັດສັນພະນັກງານໃຫ້ແກ່ສຶກສາແຂວງ ແລະ ສຶກສາເມືອງ ໂດຍອີງໃສ່ປະລິມານຂອງວຽກຕົວຈິງ.

**ວຽກຈຸດສຸມ**

- ວິເຄາະສະພາບການສະໜອງພະນັກງານໃຫ້ແກ່ສຶກສາແຂວງ ແລະ ສຶກສາເມືອງໃນປັດຈຸບັນ;
- ຮ່າງບົດແນະນໍາໃນການຈັດສັນພະນັກງານ ໃຫ້ແກ່ສຶກສາແຂວງ ແລະ ສຶກສາເມືອງ ຢ່າງມີຄວາມຍຸດຕິທໍາ;
- ຮ່າງ ແລະ ຈັດຕັ້ງປະຕິບັດຍຸດທະສາດທີ່ເປັນບູລິມະສິດ ໃນການຈັດສັນພະນັກງານເປັນແຕ່ລະໄລຍະຕາມຄວາມຈໍາເປັນ.

**ຍຸດທະສາດທີ 3**: ຮັບປະກັນໃຫ້ພະນັກງານທີ່ມີຢູ່ແລ້ວ ແລະ ພະນັກງານທີ່ມີການຈັດສັນຄືນໃໝ່ ມີຄວາມສາມາດທີ່ຈໍາເປັນໃນການປະຕິບັດໜ້າທີ່ຂອງພວກເຂົາ.

**ວຽກຈຸດສຸມ**

- ພັດທະນາຂອບການປະເມີນຄວາມຕ້ອງການດ້ານການຝຶກອົບຮົມທີ່ມີບູລິມະສິດ ສໍາລັບພະນັກງານ ແລະ ຜູ້ບໍລິຫານການສຶກສາ ທຸກລະດັບ;
- ດໍາເນີນການປະເມີນຄວາມຕ້ອງການດ້ານການຝຶກອົບຮົມທີ່ມີບູລິມະສິດ ສໍາລັບພະນັກງານທຸກຄົນ, ໂດຍອີງໃສ່ຍຸດທະສາດການພັດທະນາຊັບພະຍາກອນມະນຸດ;
- ອອກຄໍາແນະນໍາຂອງລັດຖະມົນຕີ ເພື່ອໃຫ້ມີການຈັດສັນເວລາໃນກອງປະຊຸມປະຈໍາເດືອນ ລະຫວ່າງຜູ້ອໍານວຍການໂຮງຮຽນ ແລະ ສຶກສາເມືອງ ເພື່ອໃຫ້ມີວາລະໃນການສ້າງຂີດຄວາມອາດສາມາດໃຫ້ແກ່ຜູ້ອໍານວຍການ;
- ສະຖາບັນພັດທະນາການບໍລິຫານການສຶກສາ ພັດທະນາຄູ່ມືການຮຽນດ້ວຍຕົນເອງ ແລະ ແບບຝຶກອົບຮົມທີ່ສາມາດນໍາໃຊ້ໂດຍພະນັກງານຫ້ອງ ການສຶກສາທິການ ແລະ ກິລາ ເມືອງ ເຊິ່ງເປັນສ່ວນໜຶ່ງຂອງການປະຊຸມປະຈໍາເດືອນຂອງພວກເຂົາກັບຜູ້ອໍາ ນວຍການໂຮງຮຽນ.

**ຜົນໄດ້ຮັບລະດັບກາງທີ 3: ຄະນະກໍາມະການປະຕິບັດງານຂອງກະຊວງສຶກສາທິການ ແລະ ກິລາ (ຄະນະກໍາມະການຈັດສັນຄູ ແລະ ກະນະກໍາມະການແຜນການ ແລະ ການເງິນ) ໃນລະດັບສູນກາງ ແລະ ລະດັບທ້ອງຖິ່ນ ມີຄວາມເຂັ້ມແຂງຂຶ້ນ ໃນການນາໃຊ້ຫຼັກຖານຈາກແຜນປະຈໍາປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ ACSEPs, ຜົນການປະເມີນຜົນການຮຽນ ແລະ ຖານຂໍ້ມູນ EMIS ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດທຸກນະ ໂຍບາຍ ແລະ ຍຸດທະສາດຂອງ ແຜນ 5 ປີ. (ພາກທີ 1 ຜົນໄດ້ຮັບທີ 6, ຜົນຮັບລະດັບກາງ 6.3)**

**ຍຸດທະສາດທີ 1 :** ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດສັນ ແລະ ການນໍາໃຊ້ຄູ

**ວຽກຈຸດສຸມ**

- ທົບທວນ ແລະ ປັບປຸງ ສິດ ແລະ ໜ້າທີ່ຂອງຄະນະກໍາມະການຈັດສັນຄູ ເພື່ອໃຫ້ມີໜ້າທີ່ໃນການກໍານົດນະໂຍບາຍ ເພື່ອປັບປຸງປະສິດທິພາບ ແລະ ປະສິດທິຜົນຂອງການຈັດສັນຄູ;
- ຄະນະກໍາມະການຈັດສັນຄູ ໃຫ້ຄໍາແນະນໍາໃນການສ້າງຕັ້ງ ຄະນະກໍາມະການຈັດສັນຄູ ຂັ້ນທ້ອງຖິ່ນ ເພື່ອຂໍອະນຸມັດຈາກລັດຖະມົນຕີ.

**ຍຸດທະສາດທີ 2:** ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານແຜນການ ແລະ ການເງິນ

**ວຽກຈຸດສຸມ**

- ທົບທວນ ແລະ ປັບປຸງໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ຄະນະກໍາມະການແຜນການ ແລະ ການເງິນ ໃຫ້ມີຄວາມເຂັ້ມແຂງ ແລະ ສອດຄ່ອງກັນ ເພື່ອຮັບປະກັນໃຫ້ມີການປະສານງານທີ່ດີ;
- ຄະນະກໍາມະການແຜນການ ແລະ ການເງິນ ພັດທະນາ ແລະ ທົບທວນ ຂໍ້ແນະນໍາໃນການສ້າງຕັ້ງຄະນະກໍາມະການແຜນການ ແລະ ການເງິນຂັ້ນທ້ອງຖິ່ນ ເພື່ອຂໍອະນຸມັດຈາກລັດຖະມົນຕີ;

- ອອກດຳລັດ ເພື່ອໃຫ້ ຄະນະກຳມະການແຜນການ ແລະ ການເງິນ ມີອຳນາດໃນການກວດກາບົດລາຍງານການຈັດສັນງົບປະມານປະຈຳປີ ຂັ້ນເມືອງ ທຸກໆເມືອງ ເພື່ອແຈ້ງໃຫ້ລັດຖະມົນຕີຊາບກ່ຽວກັບການປະຕິບັດຕາມຄູ່ມືການຈັດສັນງົບປະມານໃຫ້ເມືອງ ທີ່ສູນກາງໄດ້ພັດທະນາຂຶ້ນ
- ນຳໃຊ້ຖານຂໍ້ມູນ PBMIS ເພື່ອສ້າງແຜນງົບປະມານໃຫ້ທັນເວລາ ແລະ ສ້າງບົດລາຍງານການປະຕິບັດງົບປະມານໃຫ້ທັນເວລາ ເພື່ອໃຫ້ຄະນະກຳມະການແຜນການ ແລະ ການເງິນ ທົບທວນ ແລະ ປຶກສາຫາລືກ່ຽວກັບບູລິມະສິດດ້ານງົບປະມານ;
- ສ້າງຄູ່ມື ແລະ ຄຳແນະນຳ ເພື່ອຮັບປະກັນວ່າແຜນງົບປະມານຂອງແຕ່ລະພາກສ່ວນ ສອດຄ່ອງກັບຄຳແນະນຳ ຂອງຄະນະກຳມະການແຜນການ ແລະ ການເງິນ.

**<u>ຍຸດທະສາດທີ 3:</u>** ລະບົບຂໍ້ມູນຂ່າວສານ ມີຄວາມສອດຄ່ອງ ແລະ ກົມກຽວກັນ ເພື່ອສະໜັບສະໜູນເຮັດໃຫ້ວຽກງານການຕິດຕາມການປະຕິບັດງານຂອງຂະແໜງການທີ່ມີປະສິດທິພາບຫຼາຍຂຶ້ນ

**<u>ວຽກຈຸດສຸມ</u>**

- ຈັດຕັ້ງປະຕິບັດແຜນຍຸດທະສາດການພັດທະນາລະບົບຄຸ້ມຄອງຂໍ້ມູນຂ່າວສານການສຶກສາ ແລະ ກິລາ ຂອງ ສປປ ລາວ (LESMIS) ໂດຍເລີ່ມຈາກການປັບປຸງລະບົບທີ່ມີຢູ່ແລ້ວ (ລະບົບ EMIS ແລະ ລະບົບອື່ນໆ);
- ສູນສະຖິຕິການສຶກສາ ແລະ ກິລາ ແຍກການລາຍງານຂໍ້ມູນການສຶກສາໃນເມືອງທີ່ດ້ອຍໂອກາດ (40 ເມືອງ) ແລະ ເມືອງທີ່ບໍ່ດ້ອຍໂອກາດໃນແຕ່ລະປີ ແລະ ລາຍງານແນວໂນ້ມໃນການຫຼຸດຜ່ອນຄວາມແຕກໂຕນກັນ;
- ສູນສະຖິຕິ ສ້າງຮ່າງບົດລາຍງານສະຖິຕິ ໃຫ້ແກ່ພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ເພື່ອໃຫ້ພາກສ່ວນດັ່ງກ່າວ ສາມາດລາຍງານກ່ຽວກັບການຫຼຸດຜ່ອນຄວາມແຕກໂຕນກັນ ໃນການຈັດຕັ້ງປະຕິບັດຕົວຊີ້ບອກຕ່າງໆ;

**<u>ຍຸດທະສາດທີ 4:</u>** ພັດທະນາ ແລະ ຄຸ້ມຄອງ ຄັງຜົນການປະເມີນຜົນການຮຽນ ແລະ ຄັງຂໍ້ສອບທີ່ເປັນມາດຕະຖານ.

**<u>ວຽກຈຸດສຸມ</u>**

- ສ້າງຄັງຂໍ້ສອບສຳລັບສາມັນສຶກສາ ພ້ອມທັງມີການບໍລິຫານທີ່ດີ ເພື່ອສະໜັບສະໜູນການປະເມີນຜົນການຮຽນຂອງນັກຮຽນໃຫ້ມີປະສິດທິພາບ ແລະ ມີມາດຕະຖານຫຼາຍຂຶ້ນ;
- ພັດທະນາກົນໄກການຄຸ້ມຄອງຄັງຂໍ້ສອບ ເພື່ອຮັບໃຊ້ຜົນການຮຽນຂອງນັກຮຽນສາມັນສຶກສາ.

**<u>ຍຸດທະສາດທີ 5:</u>** ສ້າງເຄືອຂ່າຍການປະເມີນຜົນການສຶກສາ ແລະ ການຄົ້ນຄວ້າວິໄຈ

ຢາກບັນລຸໄດ້ຜົນສຳເລັດອັນເຕັມສ່ວນຂອງຍຸດທະສາດນີ້ ຈະຕ້ອງມີການສະໜອງງົບປະມານທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ / ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບລະດັບການນີ້.

**<u>ວຽກຈຸດສຸມ</u>**

- ສ້າງຕັ້ງຄະນະກຳມະການວິຊາການ ການຄົ້ນຄວ້າ ແລະ ວິໄຈ ລວມທັງມີການກຳນົດພາລະບົດບາດ ແລະ ສ້າງຂອບນິຕິກຳຕ່າງໆທີ່ກ່ຽວຂ້ອງ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການຄົ້ນຄວ້າ, ວິໄຈ ແລະ ການປະເມີນຜົນການສຶກສາ;
- ສ້າງແຜນການຄົ້ນຄວ້າປະຈຳປີ ໂດຍໃຫ້ສອດຄ່ອງກັບການພັດທະນານະໂຍບາຍຕິດພັນກັບ ແຜນພັດທະນາການສຶກສາ ແລະ ກິລາ 2021-2025;
- ດຳເນີນການຄົ້ນຄ້ວາ ແລະ ວິໄຈ ໃນຫົວຂໍ້ທີ່ເປັນບູລິມະສິດ ໂດຍການຮ່ວມມືກັບສະຖາບັນການສຶກສາຕ່າງໆ ແລະ ຄູ່ຮ່ວມພັດທະນາ;

- ສ້າງແຜນປະຕິບັດງານທີ່ມີຄ່າໃຊ້ຈ່າຍ ເພື່ອສ້າງຄວາມສາມາດຂອງພະນັກງານຂອງສູນຄົ້ນຄວ້າ ແລະ ປະເມີນການສຶກສາ ແລະ ເພື່ອສ້າງເຄືອຂ່າຍການຄົ້ນຄວ້າ ແລະ ປະເມີນຜົນການສຶກສາ;
- ຝຶກອົບຮົມໃຫ້ແກ່ພະນັກງານຂອງສູນຄົ້ນຄວ້າ ແລະ ປະເມີນຜົນການສຶກສາ ກ່ຽວກັບວິທີການສຶກສາຄົ້ນຄວ້າ, ການວິເຄາະຂໍ້ມູນດ້ານຄຸນນະພາບ ແລະ ປະລິມານ ໂດຍໃຊ້ໂປແກຼມຄອມພິວເຕີ.

**ຜົນໄດ້ຮັບລະດັບກາງທີ 4: ຂອບການຕິດຕາມ ແລະ ປະເມີນຜົນສໍາລັບແຜນພັດທະນາການສຶກສາ ແລະ ກິລາ 2021-2025 ຖືກຈັດຕັ້ງປະຕິບັດເປັນແຕ່ລະປີ. (ພາກທີ I ຜົນໄດ້ຮັບທີ 6, ຜົນຮັບລະດັບກາງ 6.4)**

**<u>ຍຸດທະສາດທີ 1:</u>** ສ້າງລະບົບການຕິດຕາມ ແລະ ປະເມີນຜົນ ແລະ ຂະບວນການລາຍງານທີ່ເໝາະສົມ ແລະ ເປັນໄປໄດ້ ໂດຍແນໃສ່ຈຸດປະສົງດ້ານນະໂຍບາຍຂອງ ແຜນພັດທະນາການສຶກສາ ແລະ ກິລາ ໃນທຸກລະດັບ.

**<u>ວຽກຈຸດສຸມ</u>**

- ນໍາສະເໜີບົດລາຍງານຄວາມຄືບໜ້າຜົນການຈັດຕັ້ງປະຕິບັດ ແຜນພັດທະນາການສຶກສາ ແລະ ກິລາ 2021-2025 ຕໍ່ກອງປະຊຸມໜ່ວຍງານວິຊາການຂະແໜງການສຶກສາ ແລະ ກອງປະຊຸມປະຈໍາປີຂອງກະຊວງສຶກສາທິການ ແລະ ກິລາ, ໂດຍອີງໃສ່ຂອບຕິດຕາມ ແລະ ປະເມີນຜົນຂອງແຜນພັດທະນາການສຶກສາ ແລະ ກິລາ;
- ເຊື່ອມສານຕົວຊີ້ບອກຈາກ ລະບົບ LESMIS ແລະ PBMIS ເຂົ້າໃນໂຄງສ້າງຂອງການລາຍງານການຕິດຕາມ ແລະ ປະເມີນຜົນ;
- ຂອບການຕິດຕາມ ແລະ ປະເມີນຜົນ ແລະ ບົດລາຍງານການຕິດຕາມ ຈະຖືກປັບປຸງຕື່ມໃນໄລຍະການປະເມີນກາງສະໄໝ.

**<u>ຍຸດທະສາດທີ 2:</u>** ສ້າງຄວາມເຂັ້ມແຂງໃນການເຊື່ອມໂຍງລະຫວ່າງການປະເມີນຜົນການປະຕິບັດຂອງຕິດຕາມ ແລະ ປະເມີນຜົນ ແລະ ການວາງແຜນ ແລະ ການຈັດລຽງບູລິມະສິດໃນທຸກກິດຈະກໍາທີ່ສໍາຄັນ:

- ເຜີຍແຜ່ແຜນພັດທະນາຂະແໜງການສຶກສາ 2021-2025 ໃຫ້ທຸກລະດັບຂອງຂະແໜງການສຶກສາ ແລະ ກິລາຍົກໃຫ້ເຫັນເນື້ອໃນທີ່ເປັນບູລິມະສິດ ແລະ ເປົ້າໝາຍທີ່ຈະແຈ້ງເພື່ອໃຫ້ທ້ອງຖິ່ນນໍາໄປສ້າງເປັນແຜນຈັດຕັ້ງປະຕິບັດ;
- ກໍານົດໂຄງສ້າງ ແລະ ຂັ້ນຕອນ ເພື່ອຮັບປະກັນຜົນໄດ້ຮັບຂອງການຕິດຕາມກວດກາ ແລະ ປະເມີນຜົນໄດ້ຖືກນໍາໃຊ້ເຂົ້າໃນການວາງແຜນ ແລະ ຈັດລຽງບູລິມະສິດກິດຈະກໍາໃນແຕ່ລະຂັ້ນຄຸ້ມຄອງ.

**<u>ຍຸດທະສາດທີ 3</u>**: ສ້າງຄວາມເຂັ້ມແຂງໃຫ້ແກ່ການຕິດຕາມ ແລະ ປະເມີນຜົນ, ການກວດກາ ແລະ ການກວດສອບພາຍໃນ.

ຍາກບັນລຸໄດ້ຜົນສໍາເລັດອັນເຕັມສ່ວນຂອງຍຸດທະສາດນີ້ຈະຕ້ອງມີການສະໜອງງົບປະມານທີ່ສອດຄ່ອງກັບສົມມຸດຖານດ້ານງົບປະມານ "ຍົກສູງຄຸນນະພາບການສຶກສາ" ແລະ / ຫຼື ງົບປະມານ ODA ຕ້ອງສຸມໃສ່ຜົນໄດ້ຮັບລະດັບກາງນີ້.

**<u>ວຽກຈຸດສຸມ</u>**

- ທົບທວນ ແລະ ພັດທະນາການຕິດຕາມ, ການກວດກາ, ການປະເມີນຜົນ ແລະ ການກວດສອບພາຍໃນທີ່ມີຄຸນນະພາບ ຢ່າງເປັນລະບົບ ແລະ ຄົບຖ້ວນ ແລະ ທຸກຂັ້ນການຄຸ້ມຄອງຕ້ອງໄດ້ດໍາເນີນການຢ່າງເປັນປົກກະຕິ ແລະ ມີປະສິດທິຜົນ;
- ສະໜອງຊັບພະຍາກອນທີ່ພຽງພໍລວມທັງ ICT ແລະ ເຄື່ອງມືສື່ສານທີ່ທັນສະໄໝ ໃນການຄຸ້ມຄອງ, ກວດກາປະເມີນຜົນ ແລະ ກວດສອບພາຍໃນ;

- ການຍົກສູງຄວາມຮັບຮູ້ກ່ຽວກັບວຽກງານຕິດຕາມ, ປະເມີນຜົນ, ການກວດກາ ແລະ ການກວດສອບພາຍໃນ ໃຫ້ທຸກພາກສ່ວນ ໂດຍສະເພາະຊຸມຊົນ ແລະ ອົງການຈັດຕັ້ງສັງຄົມ;
- ສ້າງຂີດຄວາມສາມາດ ໃຫ້ແກ່ພະນັກງານທີ່ເຮັດວຽກກ່ຽວກັບການຕິດຕາມ, ກວດກາ ແລະ ປະເມີນຜົນ ໃນທຸກລະດັບ;
- ສ້າງຂີດຄວາມອາດສາມາດໃຫ້ແກ່ພະນັກງານຂອງກະຊວງສຶກສາທິການ ແລະ ກິລາ ກ່ຽວກັບການຄຸ້ມຄອງທີ່ອີງໃສ່ຜົນໄດ້ຮັບ ແລະ ການວາງແຜນທີ່ອີງໃສ່ຫຼັກຖານ ລວມທັງການນໍາໃຊ້ຜົນຂອງການຕິດຕາມ ແລະ ປະເມີນຜົນ, ຂໍ້ມູນຈາກ LEMIS ແລະ ແຫຼ່ງຂໍ້ມູນອື່ນໆ;
- ກໍານົດ ແລະ ຈັດຫາສິ່ງອໍານວຍຄວາມສະດວກທີ່ຈໍາເປັນໃນການຕິດຕາມ, ກວດກາ, ປະເມີນຜົນ ແລະ ກວດສອບພາຍ ໃນທຸກລະດັບ.

__ຍຸດທະສາດທີ 4:__ ທົບທວນຄືນວິທີການນໍາໃຊ້ຂໍ້ມູນປະຊາກອນຈາກຖານຂໍ້ມູນ EMIS ກັບຂໍ້ມູນການຄາດຄະເນປະຊາກອນຂອງສູນສະຖິຕິແຫ່ງຊາດ ແລະ ການສໍາຫຼວດອື່ນໆ ເຊັ່ນ LSIS.

__ວຽກຈຸດສຸມ__

- ສ້າງຕັ້ງຄະນະກໍາມະການເພື່ອເຮັດວຽກຮ່ວມກັບສູນສະຖິຕິແຫ່ງຊາດ ເພື່ອທົບທວນຄວາມແຕກຕ່າງຂອງວິທີການໃນການເກັບກໍາຂໍ້ມູນປະຊາກອນ ແລະ ກວດກາ ວ່າເປັນຫຍັງຈຶ່ງໄດ້ຮັບຜົນຕ່າງກັນ.
- ສະເໜີໃຫ້ລັດຖະມົນຕີພິຈາລະນາເຖິງການຫັນປ່ຽນໄປນໍາໃຊ້ຂໍ້ມູນປະຊາກອນ ຈາກສູນສະຖິຕິແຫ່ງຊາດ ແລະ ວິທີການຄຸ້ມຄອງຜົນກະທົບຂອງການປ່ຽນແປງຂອງຕົວຊີ້ບອກຫຼັກທີ່ຕິດພັນກັບຂໍ້ມູນປະຊາກອນ, ທັງໃນປີທີ່ຜ່ານມາ ແລະ ໃນອານາຄົດ.

**ຜົນໄດ້ຮັບລະດັບກາງທີ 5: ການກະກຽມຕອບໂຕ້ສຸກເສີນ ແລະ ການຕ້ານທານກັບໄພພິບັດຂອງລະບົບການສຶກສາມີຄວາມເຂັ້ມແຂງ (ພາກທີ I)**

__ຍຸດທະສາດທີ 1:__ ທົບທວນ ແລະ ປັບປຸງແຜນການແກ້ໄຂເຫດການສຸກເສີນຂອງຂະແໜງການສຶກສາ.

__ວຽກຈຸດສຸມ__

- ທົບທວນຄືນແຜນການແກ້ໄຂເຫດການສຸກເສີນຂອງຂະແໜງການສຶກສາ ໂດຍອີງໃສ່ບົດຮຽນທີ່ຖອດຖອນໄດ້ຈາກການຄຸ້ມຄອງໄພພິບັດ (Covid-19) ແລະ ໄພນໍ້າຖ້ວມປີ 2018 ແລະ 2019;

__ຍຸດທະສາດທີ 2:__ ປະສານງານກັນຢ່າງໃກ້ຊິດໃນການກະກຽມຕອບໂຕ້ຕໍ່ເຫດສຸກເສີນລະຫວ່າງກະຊວງ, ແຂວງ, ເມືອງ ແລະ ໂຮງຮຽນ.

__ວຽກຈຸດສຸມ__

- ຝຶກອົບຮົມພະນັກງານຂັ້ນແຂວງ, ເມືອງ ແລະ ສູນກາງກ່ຽວກັບ ການກະກຽມຕອບໂຕ້ຕໍ່ເຫດສຸກເສີນ;
- ຝຶກອົບຮົມຄູ ແລະ ສຶກສານິເທດ ກ່ຽວກັບການກະກຽມຕອບໂຕ້ຕໍ່ເຫດສຸກເສີນ ໂດຍຮ່ວມມືກັບກຸ່ມໂຮງຮຽນ.

__ຍຸດທະສາດທີ 3:__ ນໍາໃຊ້ເຄື່ອງມືຕິດຕາມກວດກາອອນລາຍ (online) ສໍາລັບການຕອບໂຕ້ສຸກເສີນ ໂດຍບັນຈຸເຂົ້າໃນຖານ LESMIS.

__ວຽກຈຸດສຸມ__

- ພັດທະນາເຄື່ອງມືຕິດຕາມກວດກາ;
- ເຊື່ອມໂຍງເຄື່ອງມືຕິດຕາມກວດກາ ກັບ LESMIS.

### 2.3.5. ຄວາມແຕກໂຕນກັນຫຼຸດລົງ ໂດຍຜ່ານແຜນການເງິນຂອງແຜນພັດທະນາການສຶກສາ ແລະ ກິລາ ທີ່ຕອບສະໜອງໂດຍກົງຕໍ່ເປົ້າໝາຍຜົນໄດ້ຮັບ, ພ້ອມທັງພິຈາລະນາສະພາບການຂອງຂໍ້ຈຳກັດດ້ານຊັບພະຍາກອນ ແລະ ຄວາມອາດສາມາດ. (ພາກທີ I, ຜົນໄດ້ຮັບທີ 7)

➢ **ຫຼັກການ ແລະ ເຫດຜົນ**

ພາກທີ I ໄດ້ໃຫ້ລາຍລະອຽດກ່ຽວກັບຫຼັກການ ແລະ ເຫດຜົນຕ່າງໆ. ງົບປະມານຂອງຂະແໜງການສຶກສາ ແລະ ກິລາ ສ່ວນໃຫຍ່ແມ່ນເປັນເງິນເດືອນ ແລະ ເງິນອຸດໜູນ. ຖ້າຢາກໃຫ້ແຜນງານການຍົກສູງຄຸນນະພາບການສຶກສາ ໄດ້ຖືກຈັດຕັ້ງປະຕິບັດ, ການເພີ່ມງົບປະມານໃຫ້ແກ່ຂະແໜງການສຶກສາ ແລະ ກິລາ ແມ່ນສິ່ງທີ່ຈຳເປັນ. ເຖິງຢ່າງໃດກໍ່ຕາມ, ສິ່ງທ້າທາຍໃນການຫຼຸດຜ່ອນຄວາມແຕກໂຕນກັນໃນການພັດທະນາການສຶກສາ ກໍຄືສ່ວນແບ່ງງົບປະ ມານບໍລິຫານທີ່ບໍ່ແມ່ນເງິນເດືອນ ທຽບໃສ່ງົບປະມານທັງໝົດຂອງຂະແໜງການສຶກສາ ແລະ ກິລາ ແມ່ນມີໜ້ອຍ, ໂດຍສະເພາະໃນລະດັບເມືອງ. ການເພີ່ມການຈັດສັນງົບປະມານບໍລິຫານໃຫ້ແກ່ບັນດາເມືອງ ແມ່ນເປັນບູລິມະສິດ ຖ້າຢາກແກ້ໄຂບັນຫາຄວາມແຕກໂຕນກັນ. ດັ່ງນັ້ນ, ມີຄວາມຈຳເປັນຕ້ອງມີການເພີ່ມງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ໃຫ້ແກ່ຂະແໜງການສຶກສາ ແລະ ກິລາ.

➢ **ພາກສ່ວນຮັບຜິດຊອບ**

ກົມແຜນການ ແລະ ກົມການເງິນ ໂດຍສະເພາະຄະນະກຳມະການແຜນການ ແລະ ການເງິນ.

**ຜົນໄດ້ຮັບລະດັບກາງທີ 1: ແຜນການການເງິນຂອງ ແຜນພັດທະນາການສຶກສາ ແລະ ກິລາ ປະ ກອບມີນະໂຍບາຍການໃຊ້ຈ່າຍຢ່າງຊັດເຈນ ເພື່ອເປັນທິດທາງໃຫ້ແກ່ຂະບວນການພັດທະນາ ແລະ ປັບປຸງງົບປະມານປະຈຳປີຂອງສູນກາງ ແລະ ທ້ອງຖິ່ນ ແລະ ສະທ້ອນໃຫ້ເຫັນເຖິງຄວາມຈຳເປັນໃນການແກ້ໄຂຄວາມແຕກໂຕນກັນ ແລະ ການປັບປຸງຜົນການຮຽນ (ພາກທີ I, ຜົນໄດ້ຮັບທີ 7, ຜົນຮັບລະດັບກາງ 7.1)**

**<u>ຍຸດທະສາດທີ 1:</u>** ພັດທະນາຍຸດທະສາດດ້ານການເງິນທີ່ມີເປົ້າໝາຍ ເພື່ອຫຼຸດຜ່ອນຄວາມແຕກໂຕນກັນທາງດ້ານຜົນໄດ້ຮັບດ້ານການສຶກສາ.

**<u>ວຽກຈຸດສຸມ</u>**

- ດຳເນີນການປະເມີນຍຸດທະສາດດ້ານການເງິນທີ່ມີເປົ້າໝາຍ, ບັນດານິຕິກຳທີ່ມີຢູ່ແລ້ວ ແລະ ກົນໄກການເບີກຈ່າຍເງິນ ແລະ ການລາຍງານ ແລະ ການໃຊ້ຈ່າຍທີ່ເໝາະສົມ ທີ່ອາດຈະຫຼຸດຜ່ອນຄວາມແຕກໂຕນກັນຂອງການສຶກສາ;
- ຄະນະກຳມະການແຜນການ ແລະ ການເງິນ ທົບທວນການປະເມີນ ແລະ ໃຫ້ຂໍ້ແນະນຳ ໃນເວລາດຳເນີນການປະເມີນກາງສະໄໝ ເພື່ອປັບປຸງນະໂຍບາຍດ້ານການໃຊ້ຈ່າຍຂອງ ແຜນພັດທະນາການສຶກສາ ແລະ ກິລາ ເພື່ອຮັບປະກັນວ່າບູລິມະສິດດ້ານການໃຊ້ຈ່າຍ ສາມາດແກ້ໄຂຄວາມແຕກໂຕນກັນໄດ້ເທື່ອລະກ້າວ;
- ແຜນງົບປະມານປະຈຳປີຂອງຂະແໜງການຍ່ອຍ ຕ້ອງສຸມໃສ່ກິດຈະກຳທີ່ເປັນບູລິມະສິດ ແລະ ມີປະສິດທິຜົນສູງ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາການສຶກສາ ແລະ ກິລາ ແລະ ແຜນປະຈໍາປີທີ່ມີການຄິດໄລ່ມູນຄ່າ;
- ຄະນະກຳມະການແຜນການ ແລະ ການເງິນ ກວດກາເບິ່ງແຜນງົບປະມານປະຈຳປີຂອງຂະແໜງຍ່ອຍ ເພື່ອຮັບປະກັນຄວາມສອດຄ່ອງກັບບູລິມະສິດຂອງ ແຜນພັດທະນາການສຶກສາ ແລະ ກິລາ ແລະ ໃຫ້ຄຳຄິດເຫັນຕໍ່ຂະແໜງການຍ່ອຍ ແລະ ການນຳຂອງກະຊວງ;

- ຄະນະປະສານງານດ້ານການບໍລິຫານ ແລະ ຄຸ້ມຄອງ (FG 4) ສະເໜີຕໍ່ໜ່ວຍງານວິຊາການຂະແໜງການສຶກສາ ກ່ຽວກັບວິທີການທີ່ເໝາະສົມ ກ່ຽວກັບກິດຈະກໍາ/ແຜນງານທີ່ເປັນບູລິມະສິດ ແລະ ມີປະສິດທິຜົນສູງ ສໍາລັບເມືອງທີ່ດ້ອຍໂອກາດ.

**<u>ຍຸດທະສາດທີ 2:</u>** ແຜນການການເງິນຂອງ ແຜນພັດທະນາການສຶກສາ ແລະ ກິລາ ແລະ ແຜນປະຈໍາປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ (ACSEP) ແມ່ນສອດຄ່ອງກັບບູລິມະສິດຂອງແຜນພັດທະນາການສຶກສາ ແລະ ກິລາ.

**<u>ວຽກຈຸດສຸມ</u>**

- ຄະນະກໍາມະການແຜນການ ແລະ ການເງິນ ໃຫ້ຄໍາແນະນໍາກ່ຽວກັບຍຸດທະສາດໃນການພັດທະນາແຜນການການເງິນ ແຜນພັດທະນາການສຶກສາ ແລະ ກິລາ, ແຜນປະຈໍາປີທີ່ມີການຄິດໄລ່ມູນຄ່າ ແລະ ແຜນງົບປະມານປະຈໍາປີ;
- ກົມແຜນການ ແລະ ກົມການເງິນ ພັດທະນາແຜນງົບປະມານປະຈໍາປີ ໂດຍອີງໃສ່ແຜນການເງິນຂອງແຜນພັດທະນາການສຶກສາ ແລະ ກິລາ;
- ແຜນປະຈໍາປີທີ່ມີການຄິດໄລ່ມູນຄ່າ ທີ່ສັງລວມແຜນເອົາແຜນຂອງສູນກາງ ແລະ ທ້ອງຖິ່ນ ຕ້ອງໄດ້ນໍາສະເໜີຕໍ່ຄະນະກໍາມະການແຜນການ ແລະ ການເງິນ ເພື່ອຮັບຮອງຢ່າງເປັນທາງການ, ກ່ອນການເລີ່ມຕົ້ນການສ້າງແຜນງົບປະມານປະຈໍາປີ;

**ຜົນໄດ້ຮັບລະດັບກາງທີ 2: ແຜນການການເງິນຂອງ ແຜນພັດທະນາການສຶກສາ ແລະ ກິລາ ທີ່ໄດ້ຮັບການປັບປຸງກາງສະໄໝ ຕ້ອງໄດ້ຮັບການທົບທວນ ແລະ ຮັບຮອງຈາກໜ່ວຍງານວິຊາການຂະ ແໜງການສຶກສາ (ພາກທີ I ຜົນໄດ້ຮັບລະດັບສູງທີ 7, ຜົນຮັບລະດັບກາງ 7.2)**

**<u>ຍຸດທະສາດ 1:</u>** ແຜນການການເງິນຂອງແຜນພັດທະນາການສຶກສາ ແລະ ກິລາ ຕ້ອງໄດ້ຮັບການປັບປຸງຄືນໃນການທົບທວນກາງສະໄໝຂອງແຜນ.

**<u>ວຽກຈຸດສຸມ</u>**

- ສ້າງແຜນປະຕິບັດງານຂອງໜ່ວຍງານວິຊາການຂະແໜງການສຶກສາ ໂດຍໃຫ້ປະກອບມີການທົບທວນ ແລະ ຮັບຮອງເອົາຄວາມສອດຄ່ອງຂອງແຜນງົບປະມານປະຈໍາປີກັບແຜນການການເງິນ ຂອງແຜນພັດທະນາການສຶກສາ ແລະ ກິລາ ແລະ ໃຫ້ຄໍາແນະນໍາໃນການປັບປຸງແຜນການເງິນໄລຍະກາງ;
- ກອງເລຂາຂອງໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ ຮຽກປະຊຸມພ້ອມກໍານົດວາລະປະຊຸມເພື່ອໃຫ້ຄະນະກໍາມະການແຜນການ ແລະ ການເງິນ ໄດ້ລາຍງານແຜນການເງິນຂອງແຜນພັດທະນາການສຶກສາ ແລະ ກິລາ ທີ່ໄດ້ຈັດຕັ້ງປະຕິບັດຕົວຈິງໃນແຕ່ລະປີ;
- ຜົນການການທົບທວນການຈັດຕັ້ງປະຕິບັດແຜນການການເງິນ ຂອງແຜນພັດທະນາການສຶກສາ ແລະ ກິລາປະຈໍາປີ ຕ້ອງນໍາສະເໜີປີລະຄັ້ງ ທີ່ກອງປະຊຸມໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ ເພື່ອການຮັບຮອງ.

**ຜົນໄດ້ຮັບລະດັບກາງທີ 3: ບັນດາຄູ່ຮ່ວມພັດທະນາໃຫ້ການສະໜັບສະໜູນດ້ານການເງິນທີ່ເໝາະສົມກັບເປົ້າໝາຍບູລິມະສິດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແລະ ການສະເໜີແຜນງານໃໝ່ ຕ້ອງຮັບປະກັນຄວາມຍືນຍົງ ເຊິ່ງຄາດວ່າກະຊວງສຶກສາທິການ ແລະ ກິລາ ຈະສາມາດຮັບມືໄດ້ຫຼັງຈາກໂຄງການສໍາເລັດ. (ພາກທີ I, ຜົນໄດ້ຮັບລະດັບສູງ 7, ຜົນຮັບລະດັບກາງ 7.3)**

**<u>ຍຸດທະສາດທີ 1:</u>** ພະແນກຄຸ້ມຄອງໂຄງການຂອງກົມແຜນການເກັບກໍາ ແລະ ປັບປຸງຂໍ້ມູນ ODA ໃຫ້ຄົບຖ້ວນ

**<u>ວຽກຈຸດສຸມ</u>**

- ປັບປຸງລະບົບຖານຂໍ້ມູນ ODA ແລະ ສ້າງຄູ່ມືການນໍາໃຊ້ ພ້ອມສ້າງຄວາມເຂັ້ມແຂງໃຫ້ແກ່ພາກສ່ວນຕ່າງໆ ໃນການນໍາໃຊ້ຖານຂໍ້ມູນດັ່ງກ່າວ;
- ສັງລວມບັນດາໂຄງການ ແລະ ແຜນງານຂອງຄູ່ຮ່ວມພັດທະນາເຂົ້າໃນບົດລາຍງານປະຈໍາປີ ແລະ ບົດລາຍງານກາງສະໄໝ.

**<u>ຍຸດທະສາດທີ 2:</u>** ແຜນງານຂອງບັນດາຄູ່ຮ່ວມພັດທະນາ ຕ້ອງຄໍານຶງເຖິງງົບປະມານບໍລິຫານທີ່ຕິດພັນກັບໂຄງການລົງທຶນທີ່ຈະເກີດຂຶ້ນ ແລະ ແຜນງານດັ່ງກ່າວຕ້ອງໃຫ້ສອດຄ່ອງກັບບູລິມະສິດລະດັບຊາດ ທີ່ໄດ້ກໍານົດຢູ່ໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຫຼື ສະໜັບສະໜູນເມືອງດ້ອຍໂອກາດຂອງ ກະຊວງສຶກສາທິການ ແລະ ກິລາ.

**<u>ວຽກຈຸດສຸມ</u>**

- ກະຊວງສຶກສາທິການ ແລະ ກິລາ ແລະ ຄູ່ຮ່ວມພັດທະນາຮັບປະກັນວ່າງົບປະມານບໍລິຫານທີ່ຈະເກີດຂຶ້ນຈາກການລົງທຶນໃນອະນາຄົດ ໄດ້ຖືກກໍານົດ ແລະ ນໍາມາສົນທະນາ ຊຶ່ງເປັນສ່ວນໜຶ່ງຂອງຂະບວນການປະເມີນໂຄງການການລົງທຶນ;
- ກະຊວງສຶກສາທິການ ແລະ ກິລາ ແຈ້ງບັນຊີລາຍຊື່ເມືອງທີ່ດ້ອຍໂອກາດໂອກາດ (ຖ້າມີການປ່ຽນແປງ) ໃຫ້ແກ່ຄູ່ຮ່ວມພັດທະນາ, ເພື່ອເປັນບ່ອນອີງໃນການຂຽນແຜນງານການຊ່ວຍເຫຼືອ.

**ຜົນໄດ້ຮັບລະດັບກາງທີ 4: ໄດ້ມີການລະດົມຊັບພະຍາກອນຢ່າງກວ້າງຂວາງ ໂດຍຜ່ານການຮ່ວມມືຈາກສາກົນລວມທັງຈາກອົງການ ການກຸສົນອື່ນໆ**

**<u>ຍຸດທະສາດທີ 1:</u>** ກົມພົວພັນການຕ່າງປະເທດ ເຮັດໜ້າທີ່ນການພົວພັນກັບບັນດາຜູ້ໃຫ້ທຶນຕ່າງໆ ລວມທັງອົງ ການການກຸສົນຕ່າງໆ.

**<u>ວຽກຈຸດສຸມ</u>**

- ຊອກຫາລາຍຊື່ຂອງອົງກອນໃໝ່ທີ່ຄາດວ່າຈະໃຫ້ການສະໜັບສະໜູນທາງດ້ານການເງິນ;
- ປະສານງານ ແລະ ພົວພັນກັບແຫຼ່ງທຶນໃໝ່ ທີ່ມີທ່າແຮງ.

# ເອກະສານຊ້ອນທ້າຍທີ 1: ຕ່ອງໂສ້ຂອງຜົນໄດ້ຮັບ

| ຍຸດທະສາດ (ເບິ່ງໜ້າອື່ນ) | ຜົນໄດ້ຮັບລະດັບກາງ | ຜົນໄດ້ຮັບລະດັບສູງ ດ້ານການສຶກສາ | ເປົ້າໝາຍລວມ |
|---|---|---|---|
| 6 ຍຸດທະສາດ | 1.1 ຫຼັກສູດສະບັບປັບປຸງໄດ້ຮັບການຈັດຕັ້ງປະຕິບັດໃນທຸກຊັ້ນຮຽນ | ຜົນໄດ້ຮັບລະດັບສູງ 1: ຈຳນວນນັກຮຽນທີ່ຈົບຈາກອະນຸບານຈົນຮອດ ມັດທະຍົມຕອນປາຍ ລວມທັງການສຶກສານອກໂຮງຮຽນເພີ່ມຂຶ້ນ ພ້ອມທັງມີຜົນໄດ້ຮັບດ້ານການຮຽນຮູ້ທີ່ດີຂຶ້ນ, ໂດຍສະເພາະແມ່ນການຮູ້ໜັງສື ແລະ ທັກສະການຄິດໄລ່ເລກ, ທັກສະສັດຕະວັດທີ 21 ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ | ພາຍໃນປີ 2025 ຂະແໜງການສຶກສາ ແລະ ກິລາ ຢູ່ ສປປລາວ ມີໂຄງສ້າງ ແລະ ມີຊັບພະຍາກອນທີ່ເໝາະສົມເພື່ອເຮັດໃຫ້ພົນລະເມືອງລາວທຸກຄົນ ເຂົ້າເຖິງການສຶກສາ ແລະ ກິລາ-ກາຍຍະກຳ ທີ່ມີຄຸນນະພາບ ເພື່ອໃຫ້ປະເທດຊາດໄດ້ຮັບຜົນປະໂຫຍດຈາກການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ແລະ ຊຸກຍູ້ເພື່ອບັນລຸການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ທີ 4 |
| 7 ຍຸດທະສາດ | 1.2 ການວັດຜົນການຮຽນຂອງນັກຮຽນ ປ3, ປ5, ມ4 ແລະ ມ6 ໄດ້ຮັບການປັບປຸງ | | |
| 21 ຍຸດທະສາດ | 1.3: ອັດຕາການເຂົ້າຮຽນໃໝ່ ແລະ ອັດຕາການເລື່ອນຊັ້ນໃນທຸກລະດັບເພີ່ມຂຶ້ນ ແນໃສ່ເຮັດໃຫ້ອັດຕາການຈົບຊັ້ນເພີ່ມຂຶ້ນ | | |
| 2 ຍຸດທະສາດ | 1.4: ສົ່ງເສີມການຂະຫຍາຍຫ້ອງຝຶກອົບຮົມອາຊີວະເພື່ອພັດທະນາທັກສະໃຫ້ແກ່ນັກຮຽນເພື່ອຈົບຊັ້ນ ມ.ປາຍ | | |
| 9 ຍຸດທະສາດ | 1.5: ຫຼຸດຜ່ອນຄວາມແຕກໂຕນ ທາງດ້ານຊັບພະຍາກອນ ລະຫວ່າງ ເຂດທີ່ດ້ອຍໂອກາດ ແລະ ເຂດທີ່ມີໂອກາດດີກວ່າໂດຍຜ່ານການສ້າງຕັ້ງກຸ່ມໂຮງຮຽນ | | |
| 4 ຍຸດທະສາດ | 2.1: ຄູສອນມີຄວາມເຂັ້ມແຂງຂຶ້ນ ໂດຍຜ່ານການຊ່ວຍເຫຼືອຈາກວິຊາການກຸ່ມໂຮງຮຽນ ແລະ ຄູສຶກສານິເທດ. | ຜົນໄດ້ຮັບລະດັບສູງ 2: ຈຳນວນຄູ ແລະ ຜູ້ອຳນວຍການໂຮງຮຽນ ທີ່ມີຄວາມຮູ້ຄວາມສາມາດ ສອດຄ່ອງກັບມາດຕະຖານການສິດສອນໂດຍມີການປະເມີນການປະຕິບັດວຽກງານຢ່າງເປັນປົກກະຕິ | |
| 7 ຍຸດທະສາດ | 2.2: ຫຼັກສູດສ້າງຄູ ແລະ ຫຼັກສູດຝຶກອົບຮົມຄູໃນແຕ່ລະຊັ້ນ ໄດ້ຮັບການປັບປຸງ ແລະ ຈັດຕັ້ງປະຕິບັດ ເພື່ອໃຫ້ສອດຄ່ອງກັບຫຼັກສູດການຮຽນ-ການສອນໃໝ່ ແລະ ມາດຖານການສິດສອນ. | | |
| 5 ຍຸດທະສາດ | 2.3: ລະບົບການປະເມີນຜົນການປະຕິບັດໜ້າທີ່ຂອງຄູ ພ້ອມດ້ວຍເຄື່ອງມືການປະເມີນຜົນໄດ້ຮັບການປັບປຸງ, ໂດຍຕິດພັນກັບມາດຕະຖານການສິດສອນ, ພ້ອມທັງໄດ້ຮັບການຈັດຕັ້ງປະຕິບັດເພື່ອກຳນົດຄວາມຕ້ອງການທີ່ເປັນບູລິມະສິດ. | | |
| 8 ຍຸດທະສາດ | 2.4: ສະຖາບັນສ້າງຄູ ໄດ້ຖືກຍົກລະດັບໃຫ້ເປັນສູນກາງໃນການພັດທະນາວິຊາຊີບຄູສອນທັງກ່ອນ ແລະ ຫຼັງປະຈຳການ (ແຕ່ອະນຸບານຮອດຊັ້ນມັດທະຍົມສຶກສາ) ພ້ອມທັງເປັນສູນກາງໃນການຝຶກອົບຮົມຄູສຶກສານິເທດ. | | |
| 4 ຍຸດທະສາດ | 2.5: ຂີດຄວາມສາມາດຂອງຜູ້ອຳນວຍການໂຮງຮຽນ ມີຄວາມເຂັ້ມແຂງຂຶ້ນ ເພື່ອໃຫ້ສາມາດປັບປຸງການຈັດຕັ້ງການຮຽນ-ການສອນໃນໂຮງຮຽນຂອງເຂົາເຈົ້າ. | | |
| 4 ຍຸດທະສາດ | 3.1: ມາດຕະຖານຄຸນະພາບຂັ້ນພື້ນຖານ ສຳລັບການສຶກສາກ່ອນໄວຮຽນ ເປັນພື້ນຖານໃຫ້ແກ່ການປະເມີນຕົນເອງ ແລະ ການວາງແຜນພັດທະນາໂຮງຮຽນ. | ຜົນໄດ້ຮັບລະດັບສູງ 3: ໂຮງຮຽນທຸກແຫ່ງ ມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດພຽງພໍ ເພື່ອໃຫ້ສາມາດເຮັດວຽກໄດ້ຢ່າງມີປະສິດທິຜົນ, ພ້ອມທັງຂີດຄວາມສາມາດໃນການຄຸ້ມຄອງ ເພື່ອຊ່ວຍປັບປຸງໃຫ້ຜົນການຮຽນຂອງນັກຮຽນດີຂຶ້ນ | |
| 10 ຍຸດທະສາດ | 3.2: ມີຂະບວນການປະເມີນຕົນເອງ ແລະ ການວາງແຜນພັດທະນາໂຮງຮຽນແບບຍືນຍົງ (ທີ່ນຳໃຊ້ FQS) ເພື່ອເປັນບ່ອນອີງໃນການວາງແຜນຂັ້ນເມືອງ ແລະ ການກຳນົດເປົ້າໝາຍການສະໜັບສະໜູນ. | | |
| 3 ຍຸດທະສາດ | 3.3 ເງິນບໍລິຫານໂຮງຮຽນ ສອດຄ່ອງກັບຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ | | |
| 6 ຍຸດທະສາດ | 3.4 ການຈັດສັນຄູ ສອດຄ່ອງຕາມຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ | | |
| 6 ຍຸດທະສາດ | 3.5 ການສະໜອງປຶ້ມແບບຮຽນ ສອດຄ່ອງຕາມຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ. | | |
| 2 ຍຸດທະສາດ | 3.6 ທຸກໂຮງຮຽນຕ້ອງໄດ້ຮັບການສະໜັບສະໜູນເພື່ອໃຫ້ມີສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມໃນລະດັບພື້ນຖານ. | | |
| 1 ຍຸດທະສາດ | 4.1: ອັດຕາການຮູ້ໜັງສື ສຳລັບໄວໜຸ່ມ ແລະ ຜູ້ໃຫຍ່ ເພີ່ມຂຶ້ນ (15-40 ປີ) ແລະ ຫຼຸດຜ່ອນຄວາມແຕກໂຕນໃນການຮູ້ໜັງສື ສຳລັບ ເພດ, ເຜົ່າ, ຖານະດ້ານເສດຖະກິດ ແລະ ທີ່ຕັ້ງພູມສັນຖານ | ຜົນໄດ້ຮັບລະດັບສູງ 4: ອັດຕາການຮູ້ໜັງສືໃນກຸ່ມຜູ້ໃຫຍ່ ແລະ ໄວໜຸ່ມ ເພີ່ມຂຶ້ນ ພ້ອມທັງຫຼຸດຜ່ອນຄວາມແຕກໂຕນກັນລະຫວ່າງເພດ, ເຜົ່າ, ຖານະດ້ານເສດຖະກິດ ແລະ ທີ່ຕັ້ງພູມສັນຖານ | |
| 1 ຍຸດທະສາດ | 4.2: ໄດ້ມີການຕິດຕາມຫຼັກສູດການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ຂອງການສຶກສານອກໂຮງຮຽນໂດຍການສຸ່ມເອົາກຸ່ມຕົວຢ່າງ ເພື່ອປະເມີນຜົນກະທົບກ່ຽວກັບການຮູ້ໜັງສືຂອງໄວໜຸ່ມ. | | |
| 2 ຍຸດທະສາດ | 4.3: ໂຄງປະກອບຂອງສູນການສຶກສານອກໂຮງຮຽນ ແລະ ການພັດທະນາສູນການສຶກສານອກໂຮງຮຽນ ແລະ ສູນການຮຽນຮູ້ຊຸມຊົນ ຈະຊ່ວຍເຮັດໃຫ້ອັດຕາການຮູ້ໜັງສື ຂອງໄວໜຸ່ມ ແລະ ຜູ້ໃຫຍ່ ເພີ່ມຂຶ້ນ. | | |
| 5 ຍຸດທະສາດ | 5.1: ຄຸນນະພາບຂອງການຮຽນ-ການສອນ ໃນຊັ້ນມັດທະຍົມສຶກສາຕອນປາຍ ໄດ້ຮັບການປັບປຸງ ເພື່ອສອດຄ່ອງກັບຄວາມຕ້ອງການຂອງຕະຫລາດແຮງງານ ແລະ ການສຶກສາຊັ້ນສູງ | ຜົນໄດ້ຮັບລະດັບສູງ 5: ຄຸນນະພາບ ແລະ ຈຳນວນນັກຮຽນທີ່ອອກຈາກການສຶກສາຂັ້ນພື້ນຖານ (ທັງຜູ້ຈົບຊັ້ນ ແລະ ບໍ່ຈົບຊັ້ນ) ແລະ ຜູ້ທີ່ຈົບການສຶກສາຫຼັງຂັ້ນພື້ນຖານທີ່ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ ສອດຄ່ອງກັບຄວາມຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX | |
| 4 ຍຸດທະສາດ | 5.2: ນັກຮຽນທີ່ຈົບຈາກສະຖາບັນສ້າງຄູ ແລະ ຄະນະສຶກສາສາດ ສາຍວິຊາວິທະຍາສາດທຳມະຊາດ ເພີ່ມຂຶ້ນທັງທາງດ້ານຈຳນວນ ແລະ ຄຸນນະພາບ ແນໃສ່ເພື່ອປັບປຸງການຮຽນ-ການສອນວິທະຍາສາດທຳມະຊາດໃນຊັ້ນມັດທະຍົມ. | | |
| 2 ຍຸດທະສາດ | 5.3: ນັກຮຽນທີ່ຮຽນຈົບຫຼັກສູດກະສິກຳ ແລະ ອຸດສະຫະກຳ ຢູ່ສາຍອາຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບ ເພີ່ມຂຶ້ນ ທາງດ້ານຈຳນວນ ແລະ ຄຸນນະພາບ | | |
| 1 ຍຸດທະສາດ | 5.4: ຫຼັກສູດການຮຽນໃນສາຍອາຊີວະສຶກສາ ໄດ້ຮັບການປັບປຸງເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການທີ່ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 | | |
| 1 ຍຸດທະສາດ | 5.5: ຄຸນນະພາບຂອງຫຼັກສູດອາຊີວະສຶກສາໄດ້ຮັບການປັບປຸງ. | | |
| 1 ຍຸດທະສາດ | 5.6: ຄຸນນະພາບຂອງຄູສອນໃນສະຖາບັນອາຊີວະສຶກສາໄດ້ຮັບການປັບປຸງດີຂຶ້ນ. | | |
| 1 ຍຸດທະສາດ | 5.7: ການຮ່ວມມື ລະຫວ່າງ ອົງການຈັດຕັ້ງຂອງລັດ, ເອກະຊົນ ແລະ ອົງການຈັດຕັ້ງສາກົນ ສຳລັບວຽກງານອາຊີວະສຶກສາ ມີຄວາມເຂັ້ມແຂງຂຶ້ນ | | |
| 1 ຍຸດທະສາດ | 5.8: ລະບົບການບໍລິຫານ ແລະ ຄຸ້ມຄອງອາຊີວະສຶກສາ ມີຄວາມເຂັ້ມແຂງ. | | |
| 3 ຍຸດທະສາດ | 5.9: ຂອບວຸດທິການສຶກສາແຫ່ງຊາດ ໄດ້ກວມເອົາວຸດທິການສຶກສາໃນການສຶກສານອກໂຮງຮຽນ ແລະ ອາຊີວະສຶກສາ ພ້ອມທັງສອດຄ່ອງກັບຂອບວຸດທິຂອງ ອາຊຽນ. | | |
| 8 ຍຸດທະສາດ | 5.10: ການຮຽນ-ການສອນຢູ່ລະດັບມະຫາວິທະຍາໄລ ແລະ ການຄົ້ນຄວ້າວິທະຍາສາດໃນຂົງເຂດບູລິມະສິດຂອງແຜນ 9, ລວມທັງ ສາຍວິທະຍາສາດທຳມະຊາດ, ວິສາວະກຳ ແລະ ເທັກໂນໂລຊີ ໄດ້ຮັບການປັບປຸງໃຫ້ເຂັ້ມແຂງຂຶ້ນ. | | |
| 7 ຍຸດທະສາດ | 5.11: ມະຫາວິທະຍາໄລ ແລະ ໜ່ວຍງານປະກັນຄຸນະພາບ ຕ້ອງໄດ້ມີການປະເມີນຕົນເອງປະຈຳປີ | | |
| 4 ຍຸດທະສາດ | 5.12: ມີນິຕິກຳກ່ຽວກັບວິທີການຄິດໄລ່ການສະໜອງທຶນ ໃຫ້ແກ່ນັກສຶກສາ ຢູ່ມະຫາວິທະຍາໄລຂອງແຂວງໂດຍອີງໃສ່ຜົນການຮຽນ | | |
| 6 ຍຸດທະສາດ | 6.1: ໂຄງຮ່າງການຈັດຕັ້ງຂອງກະຊວງສຶກສາທິການ ແລະ ກິລາ ໃນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ຮັບການປັບປຸງໃຫ້ດີຂຶ້ນ ລວມທັງການບັນຈຸ ວຽກງານການບໍລິຫານທີ່ອີງໃສ່ໂຮງຮຽນເປັນຫຼັກເຂົ້າໃນໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດຂອງ ຄພສບ | ຜົນໄດ້ຮັບລະດັບສູງ 6: ຂະແໜງການສຶກສາໄດ້ມີການຈັດຕັ້ງ, ການຄຸ້ມຄອງ, ການຈັດສັນຊັບພະຍາກອນ, ການຕິດຕາມ ແລະ ການປະເມີນຜົນ ຢູ່ແຕ່ລະຂັ້ນຢ່າງເໝາະສົມ ເພື່ອປັບປຸງການປະຕິບັດໜ້າທີ່ຂອງຂະແໜງການຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ | |
| 3 ຍຸດທະສາດ | 6.2: ຍຸດທະສາດການພັດທະນາຊັບພະຍາກອນມະນຸດຂອງຂະແໜງການສຶກສາ ໄດ້ຮັບການຈັດຕັ້ງປະຕິບັດ, ລວມທັງການຈັດສັນບຸກຄະລາກອນຂອງຫ້ອງການສຶກສາ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ ແມ່ນອີງຕາມຄວາມຕ້ອງການ ແລະ ສ້າງຄວາມເຂັ້ມແຂງທີ່ເໝາະສົມ ແລະ ພຽງພໍໃນການປະຕິບັດພາລະບົດບາດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນໜ້າວຽກ ແລະ ຕຳແໜ່ງງານ | | |
| 5 ຍຸດທະສາດ | 6.3: ຄະນະກຳມະການຈັດສັນຄູ ແລະ ຄະນະກຳມະການແຜນການ ແລະ ການເງິນ ມີຄວາມເຂັ້ມແຂງໂດຍນຳໃຊ້ຂໍ້ມູນອ້າງອີງຈາກ ແຜນງົບປະມານທີ່ມີການຄິດໄລ່ມູນຄ່າປະຈຳປີ (ASCEP) ແລະ LESMIS. | | |
| 3 ຍຸດທະສາດ | 6.4: ຂອບຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ 2021-2025 ໄດ້ຮັບການຈັດຕັ້ງປະຕິບັດໃນແຕ່ລະປີ | | |
| 3 ຍຸດທະສາດ | 6.5: ການກະກຽມການຕອບໂຕ້ສຸກເສີນ ແລະ ການຮັບມືກັບໄພພິບັດ ຂອງລະບົບການສຶກສາ ມີຄວາມເຂັ້ມແຂງ | | |
| 2 ຍຸດທະສາດ | 7.1: ແຜນການການເງິນຂອງ ແຜນພັດທະນາການສຶກສາ ແລະ ກິລາ ປະກອບມີນະໂຍບາຍການໃຊ້ຈ່າຍຢ່າງຊັດເຈນ ເພື່ອເປັນທິດທາງໃຫ້ແກ່ຂະບວນການພັດທະນາ ແລະ ປັບປຸງງົບປະມານປະຈຳປີຂອງສູນກາງ ແລະ ທ້ອງຖິ່ນ ແລະ ສະທ້ອນໃຫ້ເຫັນເຖິງຄວາມຈຳເປັນໃນການແກ້ໄຂຄວາມແຕກໂຕນກັນ ແລະ ການປັບປຸງຜົນການຮຽນ | ຜົນໄດ້ຮັບລະດັບສູງ 7: ຄວາມແຕກໂຕນຫຼຸດລົງເນື່ອງຈາກມີແຜນການເງິນ ທີ່ສະໜັບສະໜູນບັນດາຄາດໝາຍຜົນໄດ້ຮັບທີ່ກຳນົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ | |
| 1 ຍຸດທະສາດ | 7.2: ໜ່ວຍງານວິຊາການຂະແໜງການ ແລະ ກິລາ ສຶກສາທົບທວນ ແລະ ຮັບຮອງແຜນງົບປະມານກາງສະໄໝຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ. | | |
| 2 ຍຸດທະສາດ | 7.3: ການຄາດຄະເນການສະໜັບສະໜູນດ້ານການເງິນຂອງຄູ່ຮ່ວມພັດທະນາສອດຄ່ອງກັບເປົ້າໝາຍບູລິມະສິດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແລະ ແຜນການຊ່ວຍເຫຼືອໃໝ່ ຕ້ອງຮັບປະກັນວ່າກະຊວງສຶກສາຈະສາມາດສືບຕໍ່ຈັດຕັ້ງປະຕິບັດໄດ້ ເພື່ອຄວາມຍືນຍົງ | | |
| 1 ຍຸດທະສາດ | 7.4: ໄດ້ມີການລະດົມຊັບພະຍາກອນຢ່າງກວ້າງຂວາງ ໂດຍຜ່ານການຮ່ວມມືຈາກສາກົນ ລວມທັງຈາກອົງການການກຸສົນອື່ນໆ | | |
| 4 ຍຸດທະສາດ | 8.1: ໜ່ວຍສະໂມສອນກິລາ-ກາຍຍະກຳ ຂັ້ນບ້ານ, ສະໂມສອນກິລາ-ກາຍຍະກຳຂັ້ນເມືອງ, ສະໂມສອນກິລາ-ກາຍຍະກຳ ຂັ້ນແຂວງ-ນະຄອນຫຼວງ, ການມີສ່ວນຮ່ວມຂອງມວນຊົນ, ສັງຄົມໃນຂະບວນການເຄື່ອນໄຫວກິລາ-ກາຍຍະກຳ ເພີ່ມຂຶ້ນ ໃນຂັ້ນແຂວງ-ນະຄອນຫຼວງ, ເມືອງ, ບ້ານ ແລະ ສຳນັກງານ ອົງການ ບໍລິສັດ, ໂຮງຈັກ-ໂຮງງານ ແລະ ການຈັດຕັ້ງຕ່າງໆ ທັງພາກລັດ-ເອກະຊົນ ແລະ ການພັດທະນາກິລາຄົນພິການໃຫ້ມີປະລິມານເພີ່ມຂຶ້ນ, ມີຄຸນນະພາບ ທຽບເທົ່າກັບສາກົນ. | ຜົນໄດ້ຮັບລະດັບສູງ 8: ພົນລະເມືອງລາວມີສຸຂະພາບແຂງແຮງດ້ານຮ່າງກາຍ ແລະ ຈິດໃຈ, ບຸກຄະລາກອນການກິລາ, ນັກກິລາສະໝັກຫຼິ້ນ ແລະ ນັກກິລາອາຊີບໄດ້ມາດຕະຖານຄຸນນະພາບດ້ານກິລາ-ກາຍຍະກຳປະກອບສ່ວນເຂົ້າໃນການເຊີດຊູຖານະບົດບາດຂອງຊາດຢູ່ໃນເວທີສາກົນ ສ້າງຄວາມພາກພູມໃຈໃຫ້ປະຊາຊົນລາວ | |
| 9 ຍຸດທະສາດ | 8.2: ການຮຽນ-ການສອນ ພະລະສຶກສາ ແລະ ສິລະປະສຶກສາ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງກວ້າງຂວາງຂຶ້ນ, ຈຳນວນບຸກຄະລາກອນນັກວິຊາການດ້ານພະລະສຶກສາ ແລະ ສິລະປະສຶກສາເພີ່ມຂຶ້ນ, ມີຈຳນວນນັກຮຽນ ທີ່ເຂົ້າຮ່ວມການແຂ່ງຂັນກິລາ, ສິລະປະພາຍໃນປະເທດ, ພາກພື້ນ ແລະ ສາກົນຫຼາຍຂຶ້ນ. | | |
| 2 ຍຸດທະສາດ | 8.3: ນັກກິລາທີ່ມີພອນສະຫວັນ, ນັກກິລາທີມຊາດ ແລະ ນັກກິລາອາຊີບ ມີສັກກາຍະພາບທຽບເທົ່າລະດັບມາດຕະຖານຂອງອານຸພາກພື້ນ, ພາກພື້ນ ແລະ ສາກົນ | | |
| 3 ຍຸດທະສາດ | 8.4: ຜູ້ບໍລິຫານ, ຄູຝຶກ ກຳມະການຕັດສິນ ແລະ ນັກວິທະຍາສາດການກິລາ ມີຄວາມຮູ້ຄວາມສາມາດ ທຽບເທົ່າມາດຕະຖານສາກົນ | | |
| 2 ຍຸດທະສາດ | 8.5: ການບໍລິຫານ-ຄຸ້ມຄອງວຽກງານກິລາລະດັບສູງໃນທົ່ວປະເທດມີຄວາມເຂັ້ມແຂງ | | |

| | ຍຸດທະສາດ | ຜົນໄດ້ຮັບລະດັບກາງ | ຜົນໄດ້ຮັບລະດັບສູງ ດ້ານການສຶກສາ |
|---|---|---|---|
| 1.1.1 | ທົບທວນຄືນຈຳນວນວິຊາຮຽນ ແລະ ຊົ່ວໂມງຮຽນ ໃນຂັ້ນ ປ1 ແລະ ປ2 ໃນ ຊັ້ນປະຖົມສຶກສາ. | 1.1: ຫຼັກສູດສະບັບປັບປຸງໄດ້ຮັບການຈັດຕັ້ງປະຕິບັດໃນທຸກຊັ້ນຮຽນ | ຜົນໄດ້ຮັບລະດັບສູງ 1: ຈຳນວນນັກຮຽນທີ່ຈົບຈາກ ອະນຸບານຈົນຮອດ ມັດທະຍົມຕອນປາຍ ລວມທັງການສຶກສານອກໂຮງຮຽນ ເພີ່ມຂຶ້ນ ພ້ອມທັງມີຜົນໄດ້ຮັບດ້ານການຮຽນຮູ້ທີ່ດີຂຶ້ນ, ໂດຍສະເພາະແມ່ນການຮູ້ໜັງສື ແລະ ທັກສະການຄິດໄລ່ເລກ, ທັກສະຕະວັດທີ 21 ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ |
| 1.1.2 | ປັບປຸງ ແລະ ທົບທວນຫຼັກສູດປະຖົມສຶກສາ ເພື່ອຮັບປະກັນໃຫ້ເນື້ອໃນແທດເໝາະກັບການຮຽນຮ່ວມ ແລະ ສະພາບຂອງປະເທດ (ປະຖົມ ແລະ ມ.ຕົ້ນ) | | |
| 1.1.3 | ປັບປຸງໄລຍະເວລາໃນການຮຽນພາຍໃນຫ້ອງຮຽນ ຂອງນັກຮຽນ (ປະຖົມ) | | |
| 1.1.4 | ນຳໃຊ້ຫຼັກສູດໃໝ່ໃນຂອບເຂດທົ່ວປະເທດ (ມ.ຕົ້ນ) | | |
| 1.1.5 | ຮັບປະກັນຄວາມຕໍ່ເນື່ອງກັນລະຫວ່າງຫຼັກສູດການຮຽນຂອງ ປ.5 ແລະ ມ.1 (ມ.ຕົ້ນ) | | |
| 1.1.6 | ເນັ້ນໃສ່ການປະເມີນຜົນການຮຽນຢ່າງຕໍ່ເນື່ອງໃນຫ້ອງຮຽນຢູ່ໃນຊັ້ນປະຖົມ ແລະ ນຳສະເໜີຢູ່ໃນໂຮງຮຽນມັດທະຍົມຕອນຕົ້ນໃນ ທົ່ວປະເທດ | | |
| 1.2.1 | ສ້າງຄວາມເຂັ້ມແຂງ ໃຫ້ແກ່ລະບົບການສອບເສັງຊັ້ນປະຖົມ ຂັ້ນ ປ5 ແລະ ມ4 ເພື່ອໃຫ້ຂະບວນການສອບເສັງໄດ້ມາດຕະຖານ ແລະ ສາມາດສົມທຽບໄດ້ | 1.2 ການວັດຜົນການຮຽນຂອງນັກຮຽນ ປ3, ປ5, ມ4 ແລະ ມ6 ໄດ້ຮັບການປັບປຸງ | |
| 1.2.2 | ສ້າງມາດຕະຖານການປະເມີນການຮຽນຮູ້ຂອງນັກຮຽນ ປ3, ປ5 ແລະ ມ4 | | |
| 1.2.3 | ສ້າງຄວາມເຂັ້ມແຂງໃຫ້ແກ່ຄູໃຫ້ມີຄວາມສາມາດໃນການປະເມີນຜົນການຮຽນຂອງນັກຮຽນ ໂດຍນຳໃຊ້ຮູບແບບການປະເມີນປະຈຳໃນຫ້ອງຮຽນ ແລະ ໃນຕອນທ້າຍຂອງການຮຽນ (ປະຖົມ) | | |
| 1.2.4 | ສະໜອງປຶ້ມຄູ່ມືຄູ ແນໃສ່ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການປະເມີນຜົນການຮຽນ (ມ.ຕົ້ນ) | | |
| 1.2.5 | ສ້າງແຜນເພື່ອຕິດຕາມຜົນການຮຽນຂອງນັກຮຽນ ມ6 | | |
| 1.2.6 | ພັດທະນາ ແລະ ຈັດຕັ້ງປະຕິບັດ ແຜນການປະສານງານສຳລັບການຝຶກອົບຮົມຄູປະຈຳການໃນລະດັບຊາດ ສຳລັບການຈັດຕັ້ງປະຕິບັດຫຼັກສູດໃໝ່ | | |
| 1.2.7 | ປັບປຸງລະບົບການສະໜັບສະໜູນ ແລະ ຊ່ວຍເຫຼືອ ຄູສອນຫ້ອງຄວບ ເພື່ອຍົກລະດັບການຮຽນ-ການສອນໃນຫ້ອງຄວບໃຫ້ດີຂຶ້ນ | | |
| 1.3.1 | ກຳນົດເປົ້າໝາຍຂະຫຍາຍການກຽມຄວາມພ້ອມກ່ອນເຂົ້າຮຽນ ຊັ້ນປະຖົມ ຢ່າງໜ້ອຍ 1 ປີ ເພື່ອການປັບປຸງຄຸນນະພາບໃຫ້ດີຂຶ້ນ ໃນເຂດຫ່າງໄກສອກຫຼີກ | 1.3: ອັດຕາການເຂົ້າຮຽນໃໝ່ ແລະ ອັດຕາການເລື່ອນຂັ້ນໃນທຸກລະດັບເພີ່ມຂຶ້ນ ແນໃສ່ເຮັດໃຫ້ອັດຕາການຈົບຊັ້ນເພີ່ມຂຶ້ນ | |
| 1.3.2 | ຂະຫຍາຍຂອບເຂດການທົດລອງນຳໃຊ້ວິທີການສອນໃໝ່ໆ (ອາດຈຳເປັນຕ້ອງໄດ້ມີການວິໄຈເພີ່ມເຕີມ) ສຳລັບເດັກ 3-5 ປີ ເຊັ່ນການສອນຄວບອາຍຸ | | |
| 1.3.3 | ສົ່ງເສີມບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການພັດທະນາວຽກງານການສຶກສາກ່ອນໄວຮຽນ | | |
| 1.3.4 | ສ້າງຍຸດທະສາດ ແລະ ແຜນດຳເນີນງານ ການສົ່ງເສີມອາຫານໃນໂຮງຮຽນ ໃນຊັ້ນການສຶກສາກ່ອນໄວຮຽນ ທີ່ເປັນກຸ່ມເປົ້າໝາຍໃຫ້ມີຄວາມຍືນຍົງ | | |
| 1.3.5 | ຂະຫຍາຍແຜນງານ ແລະ ສະໜອງສິ່ງອຳນວຍຄວາມສະດວກທາງດ້ານສຸຂະອະນາໄມ ໃນທຸກຊັ້ນການສຶກສາ | | |
| 1.3.6 | ຂະຫຍາຍແຜນງານ ບົດບາດຍິງຊາຍ, ເພດສຶກສາ, ທັກສະຊີວິດ, ໂພຊະນາການ, ການປ້ອງກັນໄພພິບັດ, ຄວາມສ່ຽງກ່ຽວກັບລະເບີດບໍ່ທັນແຕກໃຫ້ແກ່ໂຮງຮຽນປະຖົມ. | | |
| 1.3.7 | ປັບປຸງສະພາບແວດລ້ອມຂອງໂຮງຮຽນໃຫ້ສອດຄ່ອງກັບມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ | | |
| 1.3.8 | ຈັດຕັ້ງປະຕິບັດນະໂຍບາຍການເລື່ອນຂັ້ນແບບຕໍ່ເນື່ອງໃຫ້ມີຄຸນະພາບ ລວມໄປເຖິງການບຳລຸງນັກຮຽນອ່ອນຢ່າງເໝາະສົມ ແລະ ການປະເມີນຜົນການຮຽນຂອງນັກຮຽນຢ່າງເປັນປົກກະຕິໃນລະຫວ່າງການຮຽນ | | |
| 1.3.9 | ສົ່ງເສີມການອ່ານ ໂດຍໃຫ້ມີການສະໜອງປຶ້ມອ່ານທີ່ແທດເໝາະກັບອາຍຸຂອງເດັກ ແລະ ໃຫ້ມີການໂຄສະນາ | | |
| 1.3.10 | ທົບທວນວິທີການການຂະຫຍາຍການເຂົ້າເຖິງຊັ້ນມັດທະຍົມຕອນຕົ້ນ, ລວມທັງໂຄງປະກອບ 5 + 4 + 3 ທີ່ມີໃນປະຈຸບັນ | | |
| 1.3.11 | ປັບປຸງການບໍລິການການສຶກສາຊັ້ນມັດທະຍົມຕອນຕົ້ນ ໃນປະຈຸບັນຢູ່ໃນທຸກໆໂຮງຮຽນ | | |
| 1.3.12 | ສ້າງແຜນປະຕິບັດງານ ເພື່ອໃຫ້ການຂະຫຍາຍການສຶກສາຊັ້ນມັດທະຍົມຕອນປາຍທີ່ມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ (ມ.ປາຍ) | | |
| 1.3.13 | ສະໜອງເບ້ຍລ້ຽງໃຫ້ນັກຮຽນທຸກຍາກ ໃນໂຮງຮຽນຫ່າງໄກສອກຫຼີກ ເພື່ອປັບປຸງອັດຕາເຂົ້າຮຽນ (ມ.ຕົ້ນ) | | |
| 1.3.14 | ສົ່ງເສີມໃຫ້ນັກຮຽນຈົບຊັ້ນ ມ.ຕົ້ນ ທີ່ມີຜົນການຮຽນດີ ສືບຕໍ່ຮຽນໃນຊັ້ນມັດທະຍົມປາຍ (ມ.ປາຍ) | | |
| 1.3.15 | ປະຕິບັດນະໂຍບາຍຕ່າງໆ ເພື່ອຫຼຸດອັດຕາການປະລະການຮຽນໃນຊັ້ນມັດທະຍົມຕອນປາຍ (ມ.ປາຍ) | | |
| 1.3.16 | ສ້າງຂອບຄຸນວຸດທິ ທີ່ເຊື່ອມໂຍງກັບຄຸນວຸດທິການສຶກສາໃນໂຮງຮຽນ ແລະ ນອກໂຮງຮຽນ (ມ.ຕົ້ນ) | | |
| 1.3.17 | ຂະຫຍາຍການສຶກສານອກໂຮງຮຽນໄປສູ່ເຂດຫ່າງໄກສອກຫຼີກ | | |
| 1.3.18 | ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ສຳລັບໝົດທຸກຄົນ. | | |
| 1.3.19 | ພັດທະນາຫຼັກສູດການຝຶກອົບຮົມໄລຍະສັ້ນ ແລະ ປັບປ່ຽນໄດ້ ທີ່ມີເນື້ອໃນເນັ້ນໃສ່ການຮູ້ໜັງສື ແລະ ການສ້າງທັກສະອາຊີບ ສຳລັບທ້ອງຖິ່ນ | | |
| 1.3.20 | ທົບທວນ, ຮັບຮອງ ແລະ ຈັດຕັ້ງປະຕິບັດແຜນການແກ້ໄຂໄພພິບັດໃນຂະແໜງການສຶກສາ. | | |
| 1.3.21 | ທົບທວນ ແລະ ອະນຸມັດນະໂຍບາຍການແຕ່ງານໄວ ຫຼື ການຖືພາຂອງນັກຮຽນ ເພື່ອໃຫ້ກັບເຂົ້າຮຽນຄືນ | | |
| 1.4.1 | ສະໜອງການຝຶກອົບຮົມສາມັນວິຊາຊີບ ຢູ່ໂຮງຮຽນກິນນອນຊົນເຜົ່າ ໂດຍນຳໃຊ້ສິ່ງອຳນວຍຄວາມສະດວກຂອງອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບທີ່ມີຢູ່ | 1.4: ສົ່ງເສີມການຂະຫຍາຍຫ້ອງຝຶກອົບຮົມອາຊີວະເພື່ອພັດທະນາທັກສະໃຫ້ແກ່ນັກຮຽນເພື່ອຈົບຊັ້ນ ມ.ປາຍ | |
| 1.4.2 | ຂະຫຍາຍໂຮງຮຽນຫຼັກສູດສາມັນວິຊາຊີບ ໄປສູ່ໂຮງຮຽນມັດທະຍົມສົມບູນ | | |
| 1.5.1 | ສຶກສາຄວາມເປັນໄປໄດ້ໃນການສ້າງຕັ້ງ ແລະ ສະໜອງຊັບພະຍາກອນ ຢ່າງຕໍ່ເນື່ອງ ໃຫ້ກຸ່ມໂຮງຮຽນປະຖົມ ແລະ ມັດທະຍົມ ໂດຍໃຫ້ບູລິມະສິດແກ່ 40 ເມືອງບູລິມະສິດ | 1.5: ຫຼຸດຜ່ອນຄວາມແຕກໂຕນ ທາງດ້ານຊັບພະຍາກອນ ລະຫວ່າງ ເຂດທີ່ດ້ອຍໂອກາດ ແລະ ເຂດທີ່ມີໂອກາດດີກວ່າໂດຍຜ່ານການສ້າງຕັ້ງກຸ່ມໂຮງຮຽນ | |
| 1.5.2 | ສະໜອງຄູ ແລະ ສິ່ງຈູງໃຈທີ່ຈຳເປັນຕ່າງໆໃຫ້ແກ່ນັກຮຽນ ແລະ ຄູສອນໃນໂຮງຮຽນປະຖົມທີ່ຢູ່ຊົນນະບົດ ແລະ ຫ່າງໄກສອກຫຼີກ | | |
| 1.5.3 | ຈັດລຳດັບຄວາມສຳຄັນໃນການປັບປຸງການບໍລິການການສຶກສາຊັ້ນມັດທະຍົມຕອນຕົ້ນໃນເຂດທີ່ດ້ອຍໂອກາດ | | |
| 1.5.4 | ສ້າງນິຕິກຳ ກ່ຽວກັບການຈັດຕັ້ງປະຕິບັດກຸ່ມໂຮງຮຽນ ລວມທັງ ຕົກຳສຳລັບການບໍລິຫານກຸ່ມໂຮງຮຽນ ປະຖົມ ແລະ ມັດທະຍົມ | | |
| 1.5.5 | ສ້າງຕັ້ງລະບົບການບໍລິຫານກຸ່ມໂຮງຮຽນພາຍໃນ 40 ເມືອງ ພ້ອມທັງໃຫ້ບູລິມະສິດໃນການຈັດສັນຊັບພະຍາກອນໃຫ້ແກ່ບັນດາເມືອງເຫຼົ່ານີ້ | | |
| 1.5.6 | ສະໜອງທຶນການສຶກສາໃຫ້ນັກຮຽນມັດທະຍົມປາຍທີ່ມາຈາກເຂດຫ່າງໄກສອກຫຼີກ ພ້ອມທັງສະໜອງສິ່ງອຳນວຍຄວາມສະດວກທີ່ຈຳເປັນໃຫ້ແກ່ໂຮງຮຽນຢູ່ເຂດຫ່າງໄກສອກຫຼີກ ໂດຍສະເພາະ ຢູ່ 40 ເມືອງບູລິມະສິດ | | |
| 1.5.7 | ສ້າງຄວາມເຂັ້ມແຂງວຽກງານນິເທດ | | |
| 1.5.8 | ສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດ ໃນການຫຼຸດຜ່ອນຄວາມແຕກໂຕນໃນການສະໜອງຄູໃນເຂດຫ່າງໄກສອກຫຼີກ | | |
| 1.5.9 | ພັດທະນາ ແລະ ຈັດຕັ້ງປະຕິບັດ ແຜນງານ "ປັບປຸງຄຸນະພາບ" ຄະນິດສາດ ແລະ ການຮູ້ໜັງສື ໃນ 40 ເມືອງບູລິມະສິດ | | |

| | ຍຸດທະສາດ | ຜົນໄດ້ຮັບລະດັບກາງ | ຜົນໄດ້ຮັບລະດັບສູງ ດ້ານການສຶກສາ |
|---|---|---|---|
| 2.1.1<br>2.1.2<br>2.1.3<br>2.1.4 | ສ້າງກຸ່ມໂຮງຮຽນເພື່ອໃຫ້ເປັນສູນກາງໃນການພັດທະນາຄູອາຊີບຢ່າງຕໍ່ເນື່ອງ ແລະ ແລກປ່ຽນບົດຮຽນ<br>ສ້າງແຜນງານຝຶກອົບຮົມຄູຢ່າງມີເປົ້າໝາຍ<br>ທົບທວນ ແລະ ປັບປຸງຫຼັກສູດຝຶກອົບຮົມຄູກ່ອນປະຈຳການ ແລະ ຄູປະຈຳການ ໂດຍການນຳໃຊ້ຫຼັກສູດໃໝ່<br>ສ້າງຄວາມເຂັ້ມແຂງໃຫ້ແກ່ສູນພັດທະນາຄູຂັ້ນແຂວງ ເພື່ອສະໜອງການຝຶກອົບຮົມໃຫ້ແກ່ຄູປະຈຳການ | 2.1: ຄູສອນມີຄວາມເຂັ້ມແຂງຂຶ້ນ ໂດຍຜ່ານການຊ່ວຍເຫຼືອຈາກວິຊາການ ກຸ່ມໂຮງຮຽນ ແລະ ຄູສຶກສານິເທດ. | ຜົນໄດ້ຮັບລະດັບສູງ 2: ຈຳນວນຄູ ແລະ ຜູ້ອຳນວຍການໂຮງຮຽນ ທີ່ມີຄວາມຮູ້ ຄວາມສາມາດ ສອດຄ່ອງກັບ ມາດຕະຖານການສິດສອນໂດຍມີການ ປະເມີນການປະຕິບັດວຽກງານຢ່າງເປັນ ປົກກະຕິ |
| 2.2.1<br>2.2.2<br>2.2.3<br>2.2.4<br>2.2.5<br>2.2.6<br>2.2.7 | ປະສານສົມທົບຢ່າງມີປະສິດທິພາບ ໃນການພັດທະນາຫຼັກສູດສ້າງຄູ ແລະ ຝຶກອົບຮົມຄູປະຈຳການໃນທຸກຊັ້ນຮຽນ ເພື່ອຮັບປະກັນຄວາມສອດຄ່ອງກັບຫຼັກສູດການຮຽນ-ການສອນ ແລະ ມາດຕະຖານການສອນ.<br>ກຳນົດວິທີການໃດໜຶ່ງຢ່າງເປັນລະບົບ ທີ່ກ່ຽວກັບການພັດທະນາວິຊາຊີບຄູ<br>ຄູສຶກສານິເທດສະໜອງການຝຶກອົບຮົມ ເພື່ອຫຼຸດຜ່ອນຄວາມ ແຕກໂຕນ ທາງດ້ານຜົນການຮຽນໃນທຸກຊັ້ນຮຽນ<br>ເສີມຂະຫຍາຍການຝຶກອົບຮົມຄູໃນລະດັບຊາດ ເພື່ອການຈັດຕັ້ງປະຕິບັດຫຼັກສູດປະຖົມສຶກສາໃໝ່<br>ປັບປຸງການສິດສອນ ແລະ ການຮຽນໃນຫ້ອງຄວບ ຜ່ານການປັບປຸງທັກສະການສອນຂອງຄູ<br>ສຶກສາຄວາມເປັນໄປໄດ້ ໃນການແຍກ ການສຶກສາຊັ້ນມ.ປາຍ ອອກເປັນສອງສາຍ: ວິທະຍາສາດທຳມະຊາດ ແລະ ວິທະຍາສາດສັງຄົມ (ມ.ປາຍ)<br>ປັບປຸງຄຸນະພາບການຮຽນ-ການສອນ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານແລະ ການສຶກສາຊັ້ນສູງ (ມ.ປາຍ) | 2.2: ຫຼັກສູດສ້າງຄູ ແລະ ຫຼັກສູດຝຶກອົບຮົມຄູໃນແຕ່ລະຊັ້ນ ໄດ້ຮັບການປັບປຸງ ແລະ ຈັດຕັ້ງປະຕິບັດ ເພື່ອໃຫ້ສອດຄ່ອງກັບຫຼັກສູດການຮຽນ-ການສອນໃໝ່ ແລະ ມາດຖານການສິດສອນ. | |
| 2.3.1<br>2.3.2<br>2.3.3<br>2.3.4<br>2.3.5 | ພັດທະນາມາດຕະຖານການສອນຊັ້ນມັດທະຍົມຕອນປາຍ ທີ່ເໝາະສົມກັບສະພາບການຂອງລາວ, ເຊິ່ງສາມາດນຳໃຊ້ເປັນພື້ນຖານໃນການປະເມີນຜົນການສອນຂອງຄູ, ລວມທັງຈັນຍາບັນຂອງຄູ<br>ກຳນົດໂຄງສ້າງ ແລະ ຂັ້ນຕອນການຈັດຕັ້ງປະຕິບັດໃນລະດັບອົງກອນ ເພື່ອດຳເນີນການປະເມີນຜົນການປະຕິບັດໜ້າທີ່ຂອງຄູ ແລະ ຜູ້ອຳນວຍການໃຫ້ເປັນລະບົບ, ໂດຍການຫຼຸດຜ່ອນການເນັ້ນໃສ່ແຕ່ການແຕ່ງບົດສອນ ແຕ່ໃຫ້ເນັ້ນໜັກໃສ່ຜົນການຮຽນຂອງນັກຮຽນຫຼາຍຂຶ້ນ.<br>ສ້າງຂີດຄວາມສາມາດໃຫ້ແກ່ຜູ້ອຳນວຍການໂຮງຮຽນກ່ຽວກັບການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ /ມາດຕະຖານຂັ້ນພື້ນຖານຂອງຄຸນະພາບ ເພື່ອປັບປຸງຜົນການຮຽນ - ການສອນ<br>ພັດທະນາ ແລະ ຈັດຕັ້ງປະຕິບັດລະບົບການປະເມີນຄູ ແລະ ຜູ້ອຳນວຍການໂຮງຮຽນ ໃນທົ່ວປະເທດ, ໂດຍເນັ້ນໃສ່ 7 ໜ້າວຽກຂອງຜູ້ບໍລິຫານ<br>ສ້າງຄວາມເຂັ້ມແຂງໃຫ້ແກ່ສຶກສາເມືອງ ໃນການສະໜັບສະໜູນ ໃຫ້ຜູ້ອຳນວຍການໂຮງຮຽນໃນແຕ່ລະກຸ່ມ ມາສົນທະນາແລກປ່ຽນບົດຮຽນໃນກອງປະຊຸມປະຈຳເດືອນທີ່ຫ້ອງການສຶກສາ ແລະ ກິລາເມືອງ | 2.3: ລະບົບການປະເມີນຜົນການປະຕິບັດໜ້າທີ່ຂອງຄູ ພ້ອມດ້ວຍເຄື່ອງມືການປະເມີນຜົນໄດ້ຮັບການປັບປຸງ, ໂດຍຕິດພັນກັບມາດຕະຖານການສິດສອນ, ພ້ອມທັງໄດ້ຮັບການຈັດຕັ້ງປະຕິບັດເພື່ອກຳນົດຄວາມຕ້ອງການທີ່ເປັນບູລິມະສິດ. | |
| 2.4.1<br>2.4.2<br>2.4.3<br>2.4.4<br>2.4.5<br>2.4.6<br>2.4.7<br>2.4.8 | ທົບທວນ ແລະ ປັບປຸງໂຄງສ້າງການສະໜັບສະໜູນດ້ານການນິເທດຈາກກຸ່ມໂຮງຮຽນ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ, ທັງພາຍໃນ ແລະ ພາຍນອກ<br>ພັດທະນາ ແລະ ນຳໃຊ້ມາດຖານການປະເມີນການສອນຢ່າງເປັນປົກກະຕິສຳລັບຄູໃນສະຖາບັນສ້າງຄູ<br>ສ້າງຄວາມເຂັ້ມແຂງໃນການເຊື່ອມໂຍງລະຫວ່າງ ວິທະຍາໄລຄູ ແລະ ຄະນະສຶກສາສາດຂອງມະຫາວິທະຍາໄລ ທີ່ຕັ້ງຢູ່ໃນເຂດສະບານແຂວງດຽວກັນ ເພື່ອໃຫ້ກາຍເປັນສະຖາບັນພັດທະນາຄູ ແລະ ເພື່ອປັບປຸງການເຮັດວຽກຮ່ວມກັນ.<br>ອອກແບບ ແລະ ຈັດຕັ້ງປະຕິບັດໂຄງການຝຶກອົບຮົມຢ່າງເປັນລະບົບໃຫ້ແກ່ຄູສອນ<br>ພັດທະນາ ແລະ ປະຕິບັດນະໂຍບາຍການສ້າງຄູ ແລະ ການພັດທະນາວິຊາຊີບ<br>ກຳນົດ, ຮັບຮອງ ແລະ ໃຫ້ການສະໜັບສະໜູນດ້ານຊັບພະຍາກອນ ເອົາວິທະຍາໄລຄູເປັນສູນແຫ່ງການພັດທະນາວິຊາຊີບ<br>ສະໜອງຊັບພະຍາກອນທີ່ຈຳເປັນ ແລະ ຈັດຝຶກອົບຮົມໃຫ້ແກ່ຄູອາຈານ ແລະ ບຸກຄະລາກອນການສຶກສາຄູ ເພື່ອຮອງຮັບພາລະບົດບາດຂອງສະຖານການສຶກສາຄູໃນການເປັນສູນແຫ່ງການພັດທະນາວິຊາຊີບຄູ<br>ສ້າງຄວາມເຂັ້ມແຂງໃຫ້ແກ່ໂຮງຮຽນສາທິດໃນວິທະຍາໄລຄູ ເພື່ອເປີດໂອກາດການຝຶກການສອນ ແລະ ຖອດຖອນບົດຮຽນພາຍໃນຫ້ອງຮຽນ ສຳລັບນັກສຶກສາພາຍໃນວິທະຍາໄລຄູ, ຄູສອນ, ຄູຝຶກ ແລະ ຄູນິເທດ | 2.4: ສະຖາບັນສ້າງຄູ ໄດ້ຖືກຍົກລະດັບໃຫ້ເປັນສູນກາງໃນການພັດທະນາວິຊາຊີບຄູສອນທັງກ່ອນ ແລະ ຫຼັງປະຈຳການ (ແຕ່ອະນຸບານຮອດຊັ້ນມັດທະຍົມສຶກສາ) ພ້ອມທັງເປັນສູນກາງໃນການຝຶກອົບຮົມຄູສຶກສານິເທດ. | |
| 2.5.1<br>2.5.2<br>2.5.3<br>2.5.4 | ພັດທະນາມາດຕະຖານສຳລັບຜູ້ອຳນວຍການ<br>ພັດທະນາ ແລະ ປະຕິບັດທັກສະຄວາມເປັນຜູ້ນຳດ້ານວິຊາການຂອງຜູ້ອຳນວຍການ<br>ສ້າຄວາມເຂັ້ມແຂງໃຫ້ແກ່ ຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງ ຜູ້ອຳນວຍການໂຮງຮຽນ ໃຫ້ມີຄວາມສາມາດໃນການຄຸ້ມຄອງໂຮງຮຽນ.<br>ສຶກສາຄົ້ນຄວ້າ ແລະ ຕິດຕາມ ຢ່າງເປັນປະຈຳ ກ່ຽວກັບການພັດທະນາຄວາມສາມາດຂອງຄູ ແລະ ຜູ້ອຳນວຍການ, ການປະຕິບັດຕົວຈິງ ແລະ ສະພາບແວດລ້ອມໃນການເຮັດວຽກຂອງພວກເຂົາ ເພື່ອສົນທະນານະໂຍບາຍ ແລະ ວາງແຜນ. | 2.5: ຂີດຄວາມສາມາດຂອງຜູ້ອຳນວຍການໂຮງຮຽນ ມີຄວາມເຂັ້ມແຂງຂຶ້ນ ເພື່ອໃຫ້ສາມາດປັບປຸງການຈັດຕັ້ງການຮຽນ-ການສອນໃນໂຮງຮຽນຂອງເຂົາເຈົ້າ. | |

| ລະຫັດ | ຍຸດທະສາດ | ຜົນໄດ້ຮັບລະດັບກາງ | ຜົນໄດ້ຮັບລະດັບສູງ ດ້ານການສຶກສາ |
|---|---|---|---|
| 3.1.1 | ພັດທະນາ ແລະ ເຜີຍແຜ່ມາດຕະຖານຄຸນນະພາບຂັ້ນພື້ນຖານສໍາລັບໂຮງຮຽນ ເພື່ອສ້າງໃຫ້ເປັນລະບົບໃນການປະເມີນຂັ້ນໂຮງຮຽນແບບຍືນຍົງ | 3.1: ມາດຕະຖານຄຸນະພາບຂັ້ນພື້ນຖານ ສໍາລັບການສຶກສາກ່ອນໄວຮຽນ ແລະ ມັດທະຍົມສຶກສາ ໄດ້ຮັບການພັດທະນາ, ທົດລອງ ແລະ ຈັດຕັ້ງປະຕິບັດພາຍໃຕ້ຂອບທີ່ກໍານົດມາດຕະຖານຂັ້ນພື້ນຖານຂອງທຸກຊັ້ນການສຶກສາຢູ່ໃນລະດັບໂຮງຮຽນ ແລະ ເປັນພື້ນຖານໃຫ້ແກ່ການປະເມີນຕົນເອງແລະ ການວາງແຜນພັດທະນາໂຮງຮຽນ | ຜົນໄດ້ຮັບລະດັບສູງ 3: ໂຮງຮຽນທຸກແຫ່ງ ມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດພຽງພໍ ເພື່ອໃຫ້ສາມາດເຮັດວຽກໄດ້ຢ່າງມີປະສິດທິຜົນ, ພ້ອມທັງຂີດຄວາມສາມາດໃນການຄຸ້ມຄອງ ເພື່ອຊ່ວຍປັບປຸງໃຫ້ຜົນການຮຽນຂອງນັກຮຽນດີຂຶ້ນ |
| 3.1.2 | ສ້າງແຜນປະຕິບັດງານ ການນໍາໃຊ້ມາດຕະຖານຄຸນນະພາບຂັ້ນພື້ນຖານ ເພື່ອການວາງແຜນຢູ່ໃນຂັ້ນເມືອງ | | |
| 3.1.3 | ສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍງານປະກັນຄຸນນະພາບ, ກວດກາ ແລະ ຕິດຕາມ-ປະ ເມີນຜົນ ຢູ່ໃນຂັ້ນເມືອງ; | | |
| 3.1.4 | ປະເມີນມາດຕະຖານຄຸນນະພາບຂັ້ນພື້ນຖານສໍາລັບການສຶກສາກ່ອນໄວຮຽນເພື່ອໃຫ້ການພັດທະນາການສຶກສາຂັ້ນເມືອງເຮັດໜ້າທີ່ຫຼຸດຜ່ອນຄວາມແຕກໂຕນພາຍໃນເມືອງ. | | |
| 3.2.1 | ພັດທະນາຂອບມາດຕະຖານຂັ້ນພື້ນຖານດ້ານຄຸນນະພາບການສຶກສາສໍາລັບການສຶກສາກ່ອນໄວຮຽນ | 3.2: ມີຂະບວນການປະເມີນຕົນເອງ ແລະ ການວາງແຜນພັດທະນາໂຮງຮຽນແບບຍືນຍົງ (ທີ່ນໍາໃຊ້ FQS) ເພື່ອເປັນບ່ອນອີງໃນການວາງແຜນຂັ້ນເມືອງ ແລະ ການກໍານົດເປົ້າໝາຍການສະໜັບສະໜູນ. | |
| 3.2.2 | ຈັດຕັ້ງປະຕິບັດ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ສໍາລັບການສຶກສາຊັ້ນປະຖົມ | | |
| 3.2.3 | ຮັບຮອງ ແລະ ນໍາໃຊ້ ແຜນປະຕິບັດງານ ເພື່ອສະໜັບສະໜູນບຸລິມະສິດ ແລະ ຂະບວນການວາງແຜນຂອງເມືອງ ເພື່ອຫຼຸດຜ່ອນຄວາມແຕກຕ່າງ | | |
| 3.2.4 | ສະໜັບສະໜູນການຈັດຕັ້ງປະຕິບັດນະໂຍບາຍການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ | | |
| 3.2.5 | ພັດທະນາ ແລະ ຈັດຕັ້ງປະຕິບັດ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ສໍາລັບການສຶກສາຊັ້ນມັດທະຍົມ | | |
| 3.2.6 | ພັດທະນາແຜນປະຕິບັດງານສໍາລັບການນໍາໃຊ້ຂໍ້ມູນຈາກ ມາດຕະຖານຂັ້ນພື້ນຖານຄຸນະພາບການສຶກສາ ຂອງມັດທະຍົມໃນລະດັບເມືອງ | | |
| 3.2.7 | ສະໜັບສະໜູນຂະບວນການສ້າງແຜນການ ແລະ ກໍານົດບູລິມະສິດຂອງເມືອງ ແນໃສ່ເພື່ອປັບປຸງຄວາມແຕກໂຕນກັນ | | |
| 3.2.8 | ສະໜັບສະໜູນການຈັດຕັ້ງປະຕິບັດນະໂຍບາຍການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ | | |
| 3.2.9 | ພັດທະນາ ແລະ ຈັດຕັ້ງປະຕິບັດລະບົບການປະເມີນລະດັບໂຮງຮຽນແບບຍືນຍົງ ແລະ ງ່າຍດາຍ ສໍາລັບ ມາດຕະຖານຂັ້ນພື້ນຖານຄຸນະພາບການສຶກສາ ຊັ້ນມັດທະຍົມຕອນຕົ້ນ ທີ່ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນ ແລະ ເປັນບ່ອນອີງໃຫ້ແກ່ຂັ້ນຕອນການກໍານົດບຸລິມະສິດ ແລະ ການສ້າງແຜນການຂອງເມືອງ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ລວມທັງກົນໄກການຮັບປະກັນຄຸນນະພາບ | | |
| 3.2.10 | ລະບົບກົງຈັກການຈັດຕັ້ງ ທັງລະດັບຊາດ ແລະ ລະດັບທ້ອງຖິ່ນມີຄວາມສອດຄ່ອງກັນ ເພື່ອສະໜັບ ສະໜູນການຈັດລໍາດັບຄວາມສໍາຄັນເພື່ອບັນລຸມາດຕະຖານຂັ້ນພື້ນຖານຂອງຄຸນະພາບການສຶກສາ ໃນຊັ້ນການສຶກສາກ່ອນໄວຮຽນ, ປະຖົມ ແລະ ມັດທະຍົມສຶກສາ. | | |
| 3.3.1 | ຮັບປະກັນໃຫ້ເງິນບໍລິຫານໂຮງຮຽນຕອບສະໜອງກັບຄວາມຕ້ອງການຂອງແຕ່ລະໂຮງຮຽນ | 3.3: ເງິນບໍລິຫານໂຮງຮຽນ ສອດຄ່ອງກັບຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ | |
| 3.3.2 | ທົບທວນ ແລະ ປັບປຸງ ນະໂຍບາຍ, ສູດການຄິດໄລ່ ແລະ ລາຍການໃຊ້ຈ່າຍ ຂອງເງິນບໍລິຫານໂຮງຮຽນ ເພື່ອໃຫ້ສອດຄ່ອງກັບນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-25 | | |
| 3.3.3 | ທົບທວນລະບົບການຈ່າຍເງິນບໍລິຫານໂຮງຮຽນທີ່ນໍາໃຊ້ໃນປະຈຸບັນ ເພື່ອເຮັດໃຫ້ການຈ່າຍເງິນທັນເວລາ, ປັບປຸງວິທີການຢັ້ງຢືນການຈັດສົ່ງເງິນ ແລະ ປະສິດທິພາບໃນການມາຮັບເອົາເງິນ ສາ ລັບໂຮງຮຽນນ້ອຍ ແລະໂຮງຮຽນທີ່ຢູ່ເຂດຫ່າງໄກສອກຫຼີກ. | | |
| 3.4.1 | ຫຼຸດຜ່ອນຄວາມແຕກໂຕນໃນການສະໜອງຄູສອນໃຫ້ແຕ່ລະໂຮງຮຽນ | 3.4: ການຈັດສັນຄູ ສອດຄ່ອງຕາມຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ | |
| 3.4.2 | ທົບທວນຄືນທີ່ຕັ້ງຂອງໂຮງຮຽນພາກລັດ, ໂດຍສະເພາະແມ່ນໂຮງຮຽນປະຖົມ ເພື່ອສຶກສາປະສິດທິຜົນໃນການຈັດສັນຄູ ຖ້າມີການໂຮມໂຮງຮຽນຂະໜາດນ້ອຍທີ່ຢູ່ໃກ້ຄຽງກັນເຂົ້າກັນ | | |
| 3.4.3 | ຈັດຕັ້ງປຕິບັດຄູ່ມືໃນການຈັດສັນຄູໃໝ່ ເພື່ອຮັບປະກັນໃຫ້ແຕ່ລະໂຮງຮຽນມີຄູກວມ 80% ຂອງມາດຕະຖານການຈັດສັນຄູໃນຂັ້ນເມືອງ | | |
| 3.4.4 | ຫຼຸດຜ່ອນການຂາດສູນຂອງຄູ | | |
| 3.4.5 | ສ້າງຄູສອນອາຊີບ ລວມໄປເຖິງ ຄູສຶກສານິເທດ | | |
| 3.4.6 | ສ້າງຄວາມເຂັ້ມແຂງແກ່ລະບົບຂໍ້ມູນຂ່າວສານ ແລະ ການປະຕິບັດງານ ທີ່ຄຸ້ມຄອງການຈັດສັນຄູແລະ ສັບຊ້ອນຄູຄືນໃໝ່ ເພື່ອສະໜັບສະໜູນການສະໜອງຄູໃຫ້ມີຄວາມເທົ່າທຽມກັນ | | |
| 3.5.1 | ຫຼຸດຜ່ອນຄວາມແຕກໂຕນໃນການສະໜອງ ແລະ ຈັດສັນປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູ ໃຫ້ແກ່ໂຮງຮຽນປະຖົມຕ່າງໆ | 3.5: ການສະໜອງປຶ້ມແບບຮຽນ ສອດຄ່ອງຕາມຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ. | |
| 3.5.2 | ພັດທະນາ ແລະຈັດຕັ້ງປະຕິບັດຍຸດທະສາດບຸລິມະສິດເພື່ອຮັບປະກັນໃຫ້ທຸກໆໂຮງຮຽນບັນລຸໄດ້ຢ່າງໜ້ອຍ 80% ຂອງນະໂຍບາຍການແຈກຢາຍປຶ້ມຕໍາລາຮຽນ ແລະ ປຶ້ມຄູ່ມືຄູ | | |
| 3.5.3 | ກໍານົດວິທີການທີ່ມີປະສິດທິພາບທີ່ສຸດ ໃນການຕິດຕາມກວດກາປຶ້ມແບບຮຽນທີ່ມີ (ໃນລະບົບTMIS ຫຼື ພັດທະນາລະບົບ EMIS) | | |
| 3.5.4 | ທົບທວນ ແລະ ປັບປຸງແຜນງົບປະມານສໍາລັບການພິມປຶ້ມແບບຮຽນເພີ່ມເຕີມ ເພື່ອຮັບປະກັນການສະໜອງທີ່ຍືນຍົງ | | |
| 3.5.5 | ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງ ແລະ ການແຈກຢາຍປຶ້ມທັງໃນຂັ້ນສູນກາງ ແລະ ຂັ້ນເມືອງ ເພື່ອປັບປຸງປະສິດທິພາບ ແລະ ຫຼຸດຜ່ອນຄວາມແຕກໂຕນກັນ, ລວມທັງພັດທະນາຖານຂໍ້ມູນຄຸ້ມຄອງປຶ້ມ. | | |
| 3.5.6 | ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບຂໍ້ມູນທີ່ນໍາໃຊ້ໃນປະຈຸບັນ ເພື່ອສະໜັບສະໜູນການສັ່ງປຶ້ມແບບຮຽນ, ການຈັດລໍາດັບຄວາມສໍາຄັນ ແລະ ການແຈກຢາຍ. | | |
| 3.6.1 | ສືບຕໍ່ສະໜອງ ແລະ ຂະຫຍາຍແຜນງານສຸຂະອະນາໄມໃນໂຮງຮຽນ | 3.6: ທຸກໂຮງຮຽນຕ້ອງໄດ້ຮັບການສະໜັບສະໜູນເພື່ອໃຫ້ມີສິ່ງອໍານວຍຄວາມສະດວກດ້ານສຸຂະອະນາໄມໃນລະດັບພື້ນຖານ. | |
| 3.6.2 | ສ້າງຄວາມເຂັ້ມແຂງ ໃຫ້ແກ່ ລະບົບອົງກອນ ແລະ ການຄຸ້ມຄອງທີ່ຈໍາເປັນ ເພື່ອຕິດຕາມກວດກາການສະໜອງນໍ້າ ແລະ ສຸຂະອນາໄມ ໃນທົ່ວປະເທດແຕ່ຊັ້ນອະນຸບານຈົນຮອດຊັ້ນມັດທະຍົມສຶກສາ | | |

| ຍຸດທະສາດ | ຜົນໄດ້ຮັບລະດັບກາງ | ຜົນໄດ້ຮັບລະດັບສູງ ດ້ານການສຶກສາ |
| --- | --- | --- |
| 4.1.1 ຊຸກຍູ້ ແລະ ສົ່ງເສີມການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ສໍາລັບ ປະຊາກອນ ໃນເກນອາຍຸ 15-40 ປີ ໃຫ້ຫຼາຍຂຶ້ນ. | 4.1: ອັດຕາການຮູ້ໜັງສື ສໍາລັບ ໄວໜຸ່ມ ແລະ ຜູ້ໃຫຍ່ ເພີ່ມຂຶ້ນ (15-40 ປີ) ແລະ ຫຼຸດຜ່ອນ ຄວາມແຕກໂຕນໃນການຮູ້ໜັງສື ສໍາລັບ ເພດ, ເຜົ່າ, ຖານະດ້ານ ເສດຖະກິດ ແລະ ທີ່ຕັ້ງພູມສັນຖານ | ຜົນໄດ້ຮັບລະດັບສູງ 4: ອັດຕາການ ຮູ້ໜັງສືໃນກຸ່ມຜູ້ໃຫຍ່ ແລະ ໄວໜຸ່ມ ເພີ່ມຂຶ້ນພ້ອມທັງຫຼຸດຜ່ອນຄວາມ ແຕກໂຕນກັນ ລະຫວ່າງເພດ, ເຜົ່າ, ຖານະດ້ານເສດຖະກິດ ແລະ ທີ່ຕັ້ງ ພູມສັນຖານ. |
| 4.2.1 ພັດທະນາກົນໄກການປະເມີນ ສໍາລັບການຮຽນຮູ້ໜັງສື ແລະ ການບໍາລຸງຍົກລະດັບ ການສຶກສາ | 4.2: ໄດ້ມີການຕິດຕາມຫຼັກສູດ ການຮຽນ-ການສອນລຶບລ້າງ ຄວາມບໍ່ຮູ້ໜັງສື ຂອງການສຶກສາ ນອກໂຮງຮຽນໂດຍການສຸ່ມເອົາ ກຸ່ມຕົວຢ່າງ ເພື່ອປະເມີນຜົນ ກະທົບກ່ຽວກັບການຮູ້ໜັງສືຂອງ ໄວໜຸ່ມ. | |
| 4.3.1 ປັບປຸງໂຄງສ້າງຂອງການສູນການສຶກສານອກໂຮງຮຽນ ແລະ ສູນການຮຽນຮູ້ຊຸມຊົນ ໃຫ້ມີຄຸນນະພາບ ແລະ ເໝາະສົມກັບສະພາບຕົວຈິງຂອງທ້ອງຖິ່ນ. | 4.3: ໂຄງປະກອບຂອງສູນການ ສຶກສານອກໂຮງຮຽນ ແລະ ການ ພັດທະນາສູນການສຶກສານອກ ໂຮງຮຽນ ແລະ ສູນການຮຽນຮູ້ ຊຸມຊົນ ໄດ້ຮັບການປັບປຸງ ເພື່ອ ຊ່ວຍເຮັດໃຫ້ອັດຕາການຮູ້ໜັງສື ຂອງໄວໜຸ່ມ ແລະ ຜູ້ໃຫຍ່ ເພີ່ມ ຂຶ້ນ. | |
| 4.3.2 ພັດທະນາສູນການສຶກສານອກໂຮງຮຽນໃຫ້ມີຄຸນນະພາບ ແລະ ກາຍເປັນສູນແຫ່ງ ການຮຽນຮູ້ ເພື່ອທຸກຄົນ. | | |

| ຍຸດທະສາດ | ຜົນໄດ້ຮັບລະດັບກາງ | ຜົນໄດ້ຮັບລະດັບສູງ ດ້ານການສຶກສາ |
|---|---|---|
| 5.1.1 ຍົກລະດັບຄູ ທີ່ບໍ່ໄດ້ມາດຖານ ແລະ ຄູປະຈໍາການ ທີ່ບໍ່ເຄີຍໄດ້ຮັບການຝຶກອົບຮົມ.<br>5.1.2 ນໍາໃຊ້ໄອຊີທີ ເຂົ້າໃນການຮຽນ-ການສອນ.<br>5.1.3 ສ້າງຄວາມເຂັ້ມແຂງດ້ານການ ນິເທດພາຍໃນ ແລະ ພາຍນອກ.<br>5.1.4 ສຶກສາຄວາມເປັນໄປໄດ້ໃນການພັດທະນາໂຮງຮຽນມັດທະຍົມຕອນປາຍອອກເປັນສອງສາຍ: ວິທະຍາສາດທໍາມະຊາດ ແລະ ວິທະຍາສາດສັງຄົມ, ໂດຍໃຫ້ເລີ່ມຈາການສຶກສາຄວາມເປັນໄປໄດ້ໃນບາງເມືອງກ່ອນ<br>5.1.5 ສ້າງຄວາມເຂັ້ມແຂງໃຫ້ແກ່ໂຮງຮຽນມັດທະຍົມສົມບູນ ເພື່ອສ້າງເງື່ອນໄຂໃຫ້ກາຍເປັນໂຮງຮຽນຕົວແບບ. | 5.1:ຄຸນນະພາບຂອງການຮຽນ-ການສອນ ໃນຊັ້ນມັດທະຍົມສຶກສາຕອນປາຍ ໄດ້ຮັບການປັບປຸງ ເພື່ອສອດຄ່ອງກັບຄວາມຕ້ອງການຂອງຕະຫລາດແຮງງານ ແລະ ການສຶກສາຊັ້ນສູງ ລວມທັງໂຮງຮຽນຕົວແບບ | ຜົນໄດ້ຮັບລະດັບສູງ 5: ຄຸນນະພາບ ແລະ ຈໍານວນນັກຮຽນທີ່ຈົບຈາກການສຶກສາຂັ້ນພື້ນຖານ ແລະ ຜູ້ທີ່ຈົບການສຶກສາຫຼັງຂັ້ນພື້ນຖານທີ່ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ ສອດຄ່ອງກັບຄວາມຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX ແລະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ |
| 5.2.1 ສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດຫຼັກສູດວິທະຍາສາດທໍາມະຊາດໃນການສ້າງຄູກ່ອນປະຈໍາການ<br>5.2.2 ຂະຫຍາຍ ແລະ ຈັດບູລິມະສິດການເຂົ້າຮັບການຝຶກອົບຮົມຄູໃນສະຖາບັນສ້າງຄູ ໂດຍສະເພາະສາຍວິທະຍາສາດທໍາມະຊາດ<br>5.2.3 ໃຫ້ບູລິມະສິດໃນການຈັດສັນງົບປະມານໃຫ້ແກ່ບັນດາໂຄງການສ້າງສິ່ງອໍານວຍຄວາມສະດວກໃນສາຍວິທະຍາສາດທໍາມະຊາດ ແລະ ການສະໜອງອຸປະກອນ<br>5.2.4 ໂຄສະນາເຜີຍແຜ່ເພື່ອສົ່ງເສີມສາຍວິທະຍາສາດທໍາມະຊາດ ແລະ ວິຊາຄະນິດສາດ | 5.2: ຈໍານວນ ແລະ ຄຸນນະພາບຂອງນັກຮຽນທີ່ຈົບຈາກສະຖາບັນສ້າງຄູ ແລະ ຄະນະສຶກສາສາດ ສາຍວິຊາວິທະຍາສາດທໍາມະຊາດ ໄດ້ຮັບການປັບປຸງດີຂຶ້ນ ແນໃສ່ເພື່ອປັບປຸງການຮຽນ-ການສອນວິທະຍາສາດທໍມະຊາດໃນຊັ້ນມັດທະຍົມ | |
| 5.3.1 ປັບປຸງການເຂົ້າເຖິງວຽກງານອາຊີວະສຶກສາ<br>5.3.2 ຊຸກຍູ້ການສະໜອງຫຼັກສູດອາຊີວະສຶກສາ ແລະ ຊຸກຍູ້ໃຫ້ນັກຮຽນເຂົ້າຮຽນໃນຂະແໜງ ເສດຖະກິດທີ່ເປັນບຸລິມະສິດ | 5.3: ຈໍານວນນັກຮຽນທີ່ຮຽນຈົບຫຼັກສູດກະສິກໍາ, ການບໍລິການ ແລະ ອຸດສະຫະກໍາ ຢູ່ສາຍອາຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບ ເພີ່ມຂຶ້ນ ໂດຍ ຜ່ານການປັບປຸງສິ່ງອໍານວຍຄວາມສະດວກ, ຄູສອນ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ | |
| 5.4.1 ປັບປຸງຄວາມສອດຄ່ອງໃນການສະໜອງ ວຽກງານອາຊີວະສຶກສາ ໂດຍໃຫ້ສົມທົບກັບພາກເອກະຊົນ | 5.4: ຫຼັກສູດການຮຽນໃນສາຍອາຊີວະສຶກສາ ໄດ້ຮັບການປັບປຸງເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການທີ່ກໍານົດໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 | |
| 5.5.1 ປັບປຸງຄຸນນະພາບ ຂອງການສະໜອງ ວຽກງານອາຊີວະສຶກສາ | 5.5: ຄຸນະພາບຂອງຫຼັກສູດອາຊີວະສຶກສາໄດ້ຮັບການປັບປຸງ | |
| 5.6.1 ພັດທະນາຄູອາຊີວະສຶກສາ | 5.6: ຄຸນະພາບຂອງຄູສອນໃນສະຖາບັນອາຊີວະສຶກສາ ໄດ້ຮັບການປັບປຸງດີຂຶ້ນ | |
| 5.7.1 ສົ່ງເສີມການຮ່ວມມື ລະຫວ່າງສະຖານອາຊີວະສຶກສາ ແລະ ພາກທຸລະກິດ ທັງພາກລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສົ່ງເສີມໂອກາດໃນການເຮັດວຽກໃຫ້ຫຼາຍຂຶ້ນ | 5.7: ສ້າງຄວາມເຂັ້ມແຂງດ້ານການຮ່ວມມືສໍາລັບວຽກງານອາຊີວະສຶກສາ ໃນລະດັບຊາດ ແລະ ລະດັບທ້ອງຖິ່ນກັບອົງການຈັດຕັ້ງຂອງລັດ, ເອກະຊົນ ແລະ ອົງການຈັດຕັ້ງສາກົນ. | |
| 5.8.1 ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງວຽກງານອາຊີວະສຶກສາ, ລວມໄປເຖິງຂີດຄວາມສາມາດດ້ານການເງິນຂອງຂະແໜງການຍ່ອຍ | 5.8: ລະບົບການບໍລິຫານ ແລະ ຄຸ້ມຄອງອາຊີວະສຶກສາ ມີຄວາມເຂັ້ມແຂງ | |
| 5.9.1 ພັດທະນາກົນໄກ ແລະ ລະບຽບການຕ່າງໆຂອງການສຶກສານອກໂຮງຮຽນ ເຂົ້າໃນຂອບວຸດທິການສຶກສາແຫ່ງຊາດ.<br>5.9.2 ສ້າງໂຄງການ ແລະ ພັດທະນາຮູບແບບ ເພື່ອການສົ່ງເສີມວິຊາຊີບຂັ້ນພື້ນຖານ<br>5.9.3 ທົບທວນຄືນ ແລະ ປັບປຸງ ນະໂຍບາຍ, ລະບຽບການ, ມາດຕະຖານ ວິຊາຊີບ ແລະ ທັກສະອາຊີບ ຕາມສະພາບເງື່ອນໄຂ ເພື່ອຮັບປະກັນວ່າຂອບວຸດທິການສຶກສາແຫ່ງຊາດ ສອດຄ່ອງກັບ ຂອບວຸດທິການສຶກສາຂອງອາຊຽນ. | 5.9: ຂອບວຸດທິການສຶກສາແຫ່ງຊາດ ໄດ້ກວມເອົາວຸດທິການສຶກສາໃນການສຶກສານອກໂຮງຮຽນ ແລະ ອາຊີວະສຶກສາ ພ້ອມທັງສອດຄ່ອງກັບຂອບວຸດທິຂອງອາຊຽນ. | |
| 5.10.1 ສຶກສາຄວາມເປັນໄປໄດ້ໃນການສ້າງສະຖາບັນເຕັກໂນໂລຊີ<br>5.10.2 ສ້າງຄວາມເຂັ້ມແຂງແຜນງານປັນຍາປະດິດ ຢູ່ ມຊ ພ້ອມທັງສ້າງຂີດຄວາມສາມາດໃນການຈັດຕັ້ງປະຕິບັດ<br>5.10.3 ປັບປຸງພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກຂອງ ຄວສ, ມະຫາວິທະຍາໄລແຫ່ງຊາດ<br>5.10.4 ທົບທວນ ແລະ ວິເຄາະການສະໜອງຫຼັກວິທະຍາສາດທໍາມະຊາດໃນລະດັບມັດທະຍົມຕອນປາຍ, ໂດຍມີຂໍ້ສະເໜີແນະໃຫ້ນັກຮຽນເຂົ້າຮຽນໃນສາຍວິທະຍາສາດທໍາມະຊາດຫຼາຍຂຶ້ນ, ໂດຍສະເພາະໃນເພດຍິງ<br>5.10.5 ໃຫ້ມີສູດຄິດ-ໄລ່ໃນການສະ-ໜອງທຶນໃຫ້ແກ່ການສຶກສາຊັ້ນສູງ ກວມເອົາ ທຶນເພີ່ມເຕີມສໍາລັບນັກສຶກສາໃນ*ສາຍວິທະຍາສາດທໍາມະຊາດ, ເຕັກໂນໂລຊີ ແລະ ວິສະວະກໍາສາດ*<br>5.10.6 ດໍາເນີນການປະເມີນສູນແຫ່ງຄວາມເປັນເລີດທີ່ມີຢູ່ແລ້ວ ແລະ ສູນທີ່ມີທ່າແຮງຈະສ້າງໃໝ່ ໃຫ້ມີຄວາມຮັບປະກັນດ້ານປະສິດທິພາບ, ປະສິດທິຜົນ ແລະ ຄວາມສອດຄ່ອງກັບ ບູລິມະສິດທີ່ໄດ້ກໍານົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX<br>5.10.7 ຄົ້ນຄວ້າການສະໜອງທຶນໃຫ້ນັກສຶກສາໄປຮຽນຕ່າງປະເທດໃນຂະແໜງວິທະຍາສາດ ແລະ ເທັກໂນໂລຊີ<br>5.10.8 ພັດທະນາເວັບໄຊ ເພື່ອສົ່ງເສີມວຽກງານຄົ້ນຄວ້າວິທະຍາສາດ ຂອງອາຈານສອນ ແລະ ນັກຄົ້ນຄວ້າ ຂອງສະຖາບັນການສຶກສາຊັ້ນສູງ | 5.10: ການຮຽນ-ການສອນຢູ່ລະດັບມະຫາວິທະຍາໄລ ແລະ ການຄົ້ນຄວ້າວິທະຍາສາດໃນໂຂງເຂດບູລິມະສິດຂອງແຜນ 9, ລວມທັງ ສາຍວິທະຍາສາດທໍາມະຊາດ, ວິສາວະກໍາ ແລະ ເທັກໂນໂລຊີ ໄດ້ຮັບການປັບປຸງໃຫ້ເຂັ້ມແຂງຂຶ້ນ. | |
| 5.11.1 ສ້າງຄວາມເຂັ້ມແຂງລະບົບປະກັນຄະນພາບຂອງການສຶກສາຊັ້ນສູງ<br>5.11.2 ດໍາເນີນການຕິດຕາມຜູ້ສໍາເລັດການສຶກສາຢ່າງມີປະສິດທິຜົນ ແລະ ນໍາໃຊ້ຜົນການຕິດຕາມ ເພື່ອເປັນພື້ນຖານໃຫ້ແກ່ການພັດທະນາຫຼັກສູດ ແລະ ແຜນງານຕ່າງໆ<br>5.11.3 ຈັດຕັ້ງສຶກສາການຕິດຕາມຂໍ້ມູນຜູ້ສໍາເລັດການສຶກສາປະຈໍາປີ ແລະ ລາຍງານຜົນຕໍ່ກອງປະຊຸມສຶກສາປະຈໍາປີ ແລະ ໜ່ວຍງານວິຊາການຂະແໜງການສຶກສາ<br>5.11.4 ໜ່ວຍງານປະກັນຄຸນນະພາບ ແຕ່ລະສະຖານການສຶກສາຊັ້ນສູງ ຈັດຕັ້ງປະຕິບັດການປະເມີນຕົນເອງຢ່າງມີປະສິດທິພາບ.<br>5.11.5 ພັດທະນາ ແລະ ຈັດຕັ້ງປະຕິບັດມາດຕະຖານການສອນຂອງຄູສອນໃນສະຖານການສຶກສາຊັ້ນສູງ<br>5.11.6 ພັດທະນາເຄື່ອງມື ແລະ ວິທີການ ໃນການປະເມີນຜົນການປະຕິບັດໜ້າທີ່ຂອງອາຈານສອນໃນມະຫາວິທະຍາໄລ ພ້ອມທັງນໍາໄປຈັດຕັ້ງປະຕິບັດ<br>5.11.7 ສ້າງນິຕິດໍາກ່ຽວກັບການສົ່ງເສີມຕໍາແໜງວິຊາການອາຈານສອນໃນສະຖານການສຶກສາຊັ້ນສູງ | 5.11: ມະຫາວິທະຍາໄລ ແລະ ໜ່ວຍງານປະກັນຄຸນະພາບ ຕ້ອງໄດ້ມີການປະເມີນຕົນເອງປະຈໍາປີ ພ້ອມທັງມີການປະເມີນພາຍນອກ ທຸກ ໆ 5 ປີ. | |
| 5.12.1 ສຶກສາຄວາມເປັນໄປໄດ້ໃນການສ້າງຄວາມເປັນເຈົ້າຕົນເອງທາງດ້ານການເງິນຢູ່ມະຫາວິທະຍາໄລ<br>5.12.2 ພັດທະນານິຕິການກ່ຽວກັບການສະໜອງການສຶກສາແບບປະສົມ (ການຮຽນທາງໄກ ແລະ ຮຽນກັບທີ່) ແລະ ການຮຽນອອນລາຍ<br>5.12.3 ພັດທະນາ ແລະ ຈໍາລອງແບບການນໍາໃຊ້ສູດຄິດໄລ່ການສະໜອງທຶນ ໂດຍອີງໃສ່ຜົນການຮຽນສໍາລັບນັກສຶກສາໃນມະຫາວິທະຍາໄລແຂວງ<br>5.12.4 ຊຸກຍູ້ການສະໜອງຫຼັກສູດມະຫາວິທະຍາໄລ ແລະ ຊຸກຍູ້ໃຫ້ນັກຮຽນເຂົ້າຮຽນໃນຂະແໜງ ເສດຖະກິດທີ່ເປັນບຸລິມະສິດ ແລະ ນັກສຶກສາຈາກເຂດຫ່າງໄກສອກຫຼີກ. | 5.12: ມີນິຕິກໍາກ່ຽວກັບວິທີການຄິດໄລ່ການສະໜອງທຶນ ໃຫ້ແກ່ນັກສຶກສາ ຢູ່ມະຫາວິທະຍາໄລຂອງແຂວງ ໂດຍອີງໃສ່ຜົນການຮຽນ. | |

| | ຍຸດທະສາດ | ຜົນໄດ້ຮັບລະດັບກາງ | ຜົນໄດ້ຮັບລະດັບສູງ ດ້ານການສຶກສ |
|---|---|---|---|
| 6.1.1 | ທົບທວນຄືນພາລະບົດບາດຂອງບັນດາກົມຂັ້ນສູນກາງ, ຂອງແຂວງ, ເມືອງ ແລະ ກຸ່ມໂຮງຮຽນ ເພື່ອຮັບປະກັນປະສິດທິພາບ, ຄວາມສົມບູນ ແລະ ຄົບຖ້ວນ, ລວມທັງຄວາມຮັບຜິດຊອບວຽກງານການຄຸ້ມຄອງທີ່ອງໃສໂຮງຮຽນເປັນຫຼັກ | 6.1: ໂຄງປະກອບການຈັດຕັ້ງຂັ້ນກະຊວງ, ຂັ້ນແຂວງ ແລະ ຂັ້ນເມືອງ ມີຄວາມເຂັ້ມແຂງ ເພື່ອອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ຍຸດທະສາດຂອງແຜນພັດທະນາການສຶກສາ ແລະ ກິລາ ໃຫ້ມີປະສິດຕິພາບ, ລວມທັງການຈັດຕັ້ງນະໂຍບາຍການບໍລິຫານທີ່ອີງໃສ່ໂຮງຮຽນເປັນຫຼັກ ແລະ ບົດບາດຂອງ ຄພສບ ໃນຂັ້ນໂຮງຮຽນ ຕ້ອງມີຄວາມເຂັ້ມແຂງ | ຜົນໄດ້ຮັບລະດັບສູງ 6: ຂະແໜງການສຶກສາ ໄດ້ຮັບການຈັດຕັ້ງ, ຄຸ້ມຄອງ, ການກວດກາ ແລະ ປະເມີນຜົນໃນທຸກລະດັບຢ່າງ ເໝາະສົມ ເພື່ອຍົກສູງປະສິດທິພາບຂອງຂະແໜງການ |
| 6.1.2 | ທົບທວນຄືນພາລະບົດບາດຂອງພະນັກງານ ແລະ ການຈັດສັນພະນັກງານໃຫ້ບັນດາກົມຂັ້ນສູນກາງ, ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ໂຮງຮຽນຕາມພາລະບົດບາດທີ່ໄດ້ມີການປັບປຸງ | | |
| 6.1.3 | ສ້າງຕັ້ງອົງກອນທີ່ຮັບຜິດຊອບວຽກງານການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກຢູ່ທຸກຂັ້ນ | | |
| 6.1.4 | ປັບປຸງການມີສ່ວນຮ່ວມຂອງຊຸມຊົນໃນຂັ້ນຕອນການຄຸ້ມຄອງໂຮງຮຽນ | | |
| 6.1.5 | ທົບທວນຄືນການສະໜອງງົບປະມານ ແລະ ການຈັດສັນຊັບພະຍາກອນ ໃຫ້ແກ່ສຶກສາແຂວງ ແລະ ສຶກສາເມືອງ ໃຫ້ມີປະສິດທິພາບ ເພື່ອສະໜັບສະໜູນໃຫ້ແກ່ການບັນລຸມາດຕະຖານຄຸນນະພາບຂັ້ນພື້ນຖານ | | |
| 6.1.6 | ພັດທະນາລະບົບສະຖິຕິຂໍ້ມູນຂ່າວສານການສຶກສານອກໂຮງຮຽນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ | | |
| 6.1.7 | ສ້າງຄວາມເຂັ້ມແຂງໃຫ້ກັບບຸກຄະລາກອນ ໃນການນຳໃຊ້ຂໍ້ມູນສະຖິຕິ ເພື່ອເປັນບ່ອນອີງໃຫ້ແກ່ ການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຍຸດທະສາດ. | | |
| 6.1.8 | ເຊື່ອມໂຍງລະບົບການຕິດຕາມ-ປະເມີນຜົນ ວຽກງານການສຶກສານອກໂຮງຮຽນ ເຂົ້າໃນລະບົບການລາຍງານສະຖິຕິຂໍ້ມູນຂ່າວສານແບບອິເລັກໂຕນິກ ປະຈຳປີ (EMIS) | | |
| 6.2.1 | ຍຸດທະສາດການພັດທະນາຊັບພະຍາກອນມະນຸດ ໄດ້ຖືກຮັບອະນຸມັດ, ເຜີຍແຜ່ ແລະ ນຳໃຊ້ ເພື່ອເປັນບ່ອນອີງໃຫ້ຄະນະກຳມະການຈັດສັນຄູ ແລະ ເປັນບ່ອນອີງໃນການຂີດຄວາມສາມາດໃຫ້ແກ່ທົ່ວຂະແໜງການສຶກສາ. | 6.2: ຍຸດທະສາດການພັດທະນາຊັບພະຍາກອນມະນຸດ ຂອງຂະແໜງການສຶກສາໄດ້ຖືກຈັດຕັ້ງປະຕິບັດ, ລວມທັງພະນັກງານຂອງສຶກສາແຂວງ ແລະ ສຶກສາເມືອງໄດ້ຮັບການຈັດສັນ ຕາມຄວາມຕ້ອງການ ແລະ ໄດ້ຮັບການສະໜອງການສ້າງຄວາມສາມາດທີ່ເໝາະສົມ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງພວກເຂົາຢ່າງພຽງພໍ, ຕາມທີ່ໄດ້ກຳນົດໂດຍລາຍລະອຽດຂອງວຽກ ແລະ ວຽກວິຊາສະເພາະ | |
| 6.2.2 | ພັດທະນາ ແລະ ນຳໃຊ້ຄຳແນະນຳ ສຳລັບການຈັດສັນພະນັກງານໃຫ້ແກ່ສຶກສາແຂວງ ແລະ ສຶກສາເມືອງ ໂດຍອີງໃສ່ປະລິມານຂອງວຽກຕົວຈິງ. | | |
| 6.2.3 | ຮັບປະກັນໃຫ້ພະນັກງານທີ່ມີຢູ່ແລ້ວ ແລະ ພະນັກງານທີ່ມີການຈັດສັນຄືນໃໝ່ ມີຄວາມສາມາດທີ່ຈຳເປັນໃນການປະຕິບັດໜ້າທີ່ຂອງພວກເຂົາ | | |
| 6.3.1 | ສ້າງຄວາມເຂັ້ມແຂງໃຫ້ແກ່ອົງກອນໃນການຈັດສັນ ແລະ ການນຳໃຊ້ຄູ | 6.3: ຄະນະກຳມະການປະຕິບັດງານຂອງ ສສກ (ຄະນະກຳມະການຈັດສັນຄູ ແລະ ກະນະກຳມະການແຜນການ ແລະ ການເງິນ) ໃນລະດັບສູນກາງ ແລະ ລະດັບທ້ອງຖິ່ນ ມີຄວາມເຂັ້ມແຂງຂຶ້ນໃນການນຳໃຊ້ຫຼັກຖານຈາກ ASCEPs ແລະ LESMIS (ລວມທັງ PMIS, FMIS ແລະ EMIS). ການປະເມີນຜົນການຮຽນແລະ ຖານຂໍ້ມູນ EMIS ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດທຸກນະໂຍບາຍ ແລະ ຍຸດທະສາດຂອງ ແຜນ 5 ປີ | |
| 6.3.2 | ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານແຜນການ ແລະ ການເງິນ ໃນລະດັບປະຕິບັດ ແລະ ລະດັບອົງກອນ | | |
| 6.3.3 | ລະບົບຂໍ້ມູນຂ່າວສານ ແລະ ຜົນການວິໄຈມີຄວາມສອດຄ່ອງ ແລະ ກົມກຽວກັນ ເພື່ອສະໜັບສະໜູນເຮັດໃຫ້ວຽກງານການຕິດຕາມການປະຕິບັດງານຂອງຂະແໜງການທີ່ມີປະສິດຕິພາບຫຼາຍຂຶ້ນ | | |
| 6.3.4 | ພັດທະນາ ແລະ ຄຸ້ມຄອງ ທະນາຄານຜົນການປະເມີນຜົນການຮຽນ ແລະ ທະນາຄານຂໍ້ສອບທີ່ເປັນມາດຕະຖານ | | |
| 6.3.5 | ສ້າງເຄືອຂ່າຍການປະເມີນຜົນການສຶກສາ ແລະ ການຄົ້ນຄວ້າວິໄຈ ແລະ ຈັດຕັ້ງຄະນະກຳມະການການຄົ້ນຄວ້າວິໄຈກ່ຽວກັບຈັນຍາບັນ | | |
| 6.4.1 | ສ້າງລະບົບ M&E ຂະແໜງການທີ່ເໝາະສົມ ແລະ ເປັນໄປໄດ້ ແລະ ການລາຍງານແຕ່ລະຄັ້ງແມ່ນແນໃສ່ຈຸດປະສົງດ້ານນະໂຍບາຍຂອງ ແຜນພັດທະນາການສຶກສາ ແລະ ກິລາ ໃນທຸກລະດັບ | 6.4: ຂອບການຕິດຕາມ ແລະ ປະເມີນຜົນສຳລັບແຜນພັດທະນາການສຶກສາ ແລະ ກິລາ 2021-25 ຖືກຈັດຕັ້ງປະຕິບັດເປັນແຕ່ລະປີ | |
| 6.4.2 | ສ້າງຄວາມເຂັ້ມແຂງໃນການເຊື່ອມໂຍງລະຫວ່າງການປະເມີນຜົນການປະຕິບັດ M&E ແລະການວາງແຜນ ແລະ ການຈັດລຽງບູລິມະສິດໃນທຸກລະດັບ | | |
| 6.4.3 | ທົບທວນຄືນວິທີການນຳໃຊ້ຂໍ້ມູນປະຊາກອນຈາກຖານຂໍ້ມູນ EMIS ກັບຂໍ້ມູນການຄາດຄະເນປະຊາກອນຂອງສູນສະຖິຕິແຫ່ງຊາດ ແລະ ການສຳຫຼວດອື່ນໆ ເຊັ່ນ LSIS | | |
| 6.4.4 | ສ້າງຄວາມເຂັ້ມແຂງໃຫ້ແກ່ການຕິດຕາມ ແລະ ປະເມີນຜົນ, ການກວດກາ ແລະ ການກວດສອບພາຍໃນ | | |
| 6.5.1 | ທົບທວນ ແລະ ປັບປຸງແຜນງານຕອບໂຕ້ແກ້ໄຂເຫດການສຸກເສີນໃນຂະແໜງການສຶກສາ, ໂດຍຄຳນຶງເຖິງການປ່ຽນແປງຂອງດິນຟ້າອາກາດ | 6.5: ການກະກຽມສຸກເສີນຂອງລະບົບການສຶກສາຕໍ່ໄພພິບັດມີຄວາມເຂັ້ມແຂງຂຶ້ນ | |
| 6.5.2 | ບັນຈຸແຜນງານການຕອບໂຕ້ແກ້ໄຂເຫດການສຸກເສີນໃນຂະແໜງການສຶກສາການເຂົ້າໃນແຜນຂອງ ກະຊວງ, ແຂວງ, ເມືອງ ແລະ ໂຮງຮຽນ | | |
| 6.5.3 | ພັດທະນາເຄື່ອງມືຕິດຕາມກວດກາ online ສຳລັບການຕອບໂຕ້ສຸກເສີນໃນລະບົບ LESMIS | | |

| | ຍຸດທະສາດ | ຜົນໄດ້ຮັບລະດັບກາງ | ຜົນໄດ້ຮັບລະດັບສູງ ດ້ານການສຶກສ |
|---|---|---|---|
| 7.1.1 | ພັດທະນາຍຸດທະສາດດ້ານການເງິນທີ່ມີເປົ້າໝາຍ ເພື່ອຫຼຸດຜ່ອນຄວາມແຕກໂຕນກັນທາງດ້ານຜົນໄດ້ຮັບດ້ານການສຶກສາ | 7.1: ແຜນການການເງິນຂອງ ແຜນພັດທະນາການສຶກສາ ແລະ ກິລາ ປະກອບມີນະໂຍບາຍການໃຊ້ຈ່າຍຢ່າງຊັດເຈນ ເພື່ອເປັນທິດທາງໃຫ້ແກ່ຂະບວນການພັດທະນາ ແລະ ປັບປຸງງົບປະມານປະຈຳປີຂອງສູນກາງ ແລະ ທ້ອງຖິ່ນ ແລະສະທ້ອນໃຫ້ເຫັນເຖິງຄວາມຈຳເປັນໃນການແກ້ໄຂຄວາມແຕກໂຕນກັນ ແລະ ການປັບປຸງຜົນການຮຽນ | ຜົນໄດ້ຮັບລະດັບສູງ 7: ຄວາມແຕກໂຕນກັນຫຼຸດລົງໂດຍຜ່ານແຜນການເງິນຂອງແຜນພັດທະນາການສຶກສາ ແລະ ກິລາ |
| 7.1.2 | ແຜນການການເງິນຂອງ ແຜນພັດທະນາການສຶກສາ ແລະ ກິລາ ແລະ ແຜນປະຈໍປີທີ່ມີການຄິດໄລ່ມູນຄ່າ (ACSEP) ແມ່ນສອດຄ່ອງກັບບູລິມະສິດຂອງ ແຜນພັດທະນາການສຶກສາ ແລະ ກິລາ. | | |
| 7.2.1 | ປັບປຸງຄືນ ແຜນການເງິນຂອງ ແຜນພັດທະນາການສຶກສາ ແລະ ກິລາ ໃນການທົບທວນກາງສະໄໝຂອງແຜນ. | 7.2: ແຜນການການເງິນຂອງ ແຜນພັດທະນາການສຶກສາ ແລະ ກິລາ ທີ່ໄດ້ຮັບການປັບປຸງກາງສະໄໝ ຕ້ອງໄດ້ຮັບການທົບທວນ ແລະ ຮັບຮອງຈາກໜ່ວຍງານວິຊາການຂະແໜງການສຶກສາ | |
| 7.3.1 | ເກັບກຳຂໍ້ມູນ ODA ໃຫ້ຄົບຖ້ວນ ແລະ ປັບປຸງຢ່າງເປັນປະຈຳ | 7.3: ບັນດາຄູ່ຮ່ວມພັດທະນາໃຫ້ການສະໜັບສະໜູນດ້ານການເງິນທີ່ເໝາະສົມກັບເປົ້າ ໝາຍ ບູລິມະສິດຂອງແຜນ ESSDP ແລະ ການສະເໜີແຜນງານໃໝ່ ຕ້ອງຮັບປະກັນຄວາມຍືນຍົງ ເຊິ່ງຄາດວ່າກະຊວງສຶກສາທິການ ແລະ ກິລາ ຈະສາມາດຮັບມືໄດ້ຫຼັງຈາກໂຄງການສາ ເລັດ | |
| 7.3.2 | ແຜນງານຂອງບັນດາຄູ່ຮ່ວມພັດທະນາ ຕ້ອງຄຳນຶງເຖິງງົບປະມານບໍລິຫານທີ່ຕິດພັນກັບໂຄງການລົງທຶນ ທີ່ຈະເກີດຂຶ້ນ ແລະ ແຜນງານດັ່ງກ່າວຕ້ອງໃຫ້ສອດຄ່ອງກັບບຸລິມະສິດລະດັບຊາດ | | |
| 7.4.1 | ກົມພົວພັນຕ່າງປະເທດເຮັດໜ້າທີ່ໃນການລະດົມທຶນຈາກອົງການຈັດຕັ້ງສາກົນຕ່າງໆ ນອກເໜືອຈາກບັນດາຄູ່ຮ່ວມພັດທະນາທີ່ມີຢູ່ແລ້ວ. | 7.4:ໄດ້ມີການລະດົມທຶນຈາກອົງການຈັດຕັ້ງສາກົນຕ່າງໆ ລວມທັງ ລວມທັງອົງການ ການກຸສົນອື່ນ | |

| ຍຸດທະສາດ | ຜົນໄດ້ຮັບລະດັບກາງ | ຜົນໄດ້ຮັບລະດັບສູງ ດ້ານການສຶກສາ |
|---|---|---|
| 8.1.1 ຂະຫຍາຍການສ້າງສະໂມສອນ, ສວນສາທາລະນະ ກິລາ-ກາຍຍະກຳມວນຊົນ<br>8.1.2 ວຽກງານກິລາ-ກາຍຍະກຳມວນຊົນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງກ້ວາງຂວາງ ແຕ່ສູນກາງ ລົງຮອດທ້ອງຖິ່ນ<br>8.1.3 ການບໍລິຫານ-ຄຸ້ມຄອງວຽກງານກິລາ-ກາຍຍະກຳມວນຊົນໃຫ້ມີຄວາມເຂັ້ມແຂງ ແຕ່ສູນກາງ ລົງຮອດທ້ອງຖິ່ນ<br>8.1.4 ຈັດການແຂ່ງຂັນ ແລະ ເຂົ້າຮ່ວມການແຂ່ງຂັນກິລາ-ກາຍຍະກຳຄົນພິການ | 8.1: ໜ່ວຍສະໂມສອນກິລາ-ກາຍຍະກຳ ຂັ້ນບ້ານ, ສະໂມສອນກິລາ-ກາຍຍະກຳຂັ້ນເມືອງ, ສະໂມສອນກິລາ-ກາຍຍະກຳ ຂັ້ນແຂວງ-ນະຄອນຫຼວງ, ການມີສ່ວນຮ່ວມຂອງມວນຊົນ, ສັງຄົມໃນຂະບວນການເຄື່ອນໄຫວກິລາ-ກາຍຍະກຳ ເພີ່ມຂຶ້ນ ໃນຂັ້ນແຂວງ-ນະຄອນຫຼວງ, ເມືອງ, ບ້ານ ແລະ ສຳນັກງານ ອົງການ ບໍລິສັດ, ໂຮງຈັກ-ໂຮງງານ ແລະ ການຈັດຕັ້ງຕ່າງໆ ທັງພາກລັດ-ເອກະຊົນ ແລະ ການພັດທະນາກິລາຄົນພິການໃຫ້ມີປະລິມານເພີ່ມຂຶ້ນ, ມີຄຸນນະພາບ ທຽບເທົ່າກັບສາກົນ. | ຜົນໄດ້ຮັບລະດັບສູງ 8: ພົນລະເມືອງລາວມີສຸຂະພາບແຂງແຮງດ້ານຮ່າງກາຍ ແລະ ຈິດໃຈ, ບຸກຄະລາກອນການກິລາ, ນັກກິລາສະໝັກຫຼິ້ນ ແລະ ນັກກິລາອາຊີບ ໄດ້ມາດຕະຖານຄຸນນະພາບດ້ານກິລາ-ກາຍຍະກຳ ປະກອບສ່ວນເຂົ້າໃນການເຊີດຊູຖານະບົດບາດຂອງຊາດຢູ່ໃນເວທີສາກົນ ສ້າງຄວາມພາກພູມໃຈໃຫ້ປະຊາຊົນລາວ |
| 8.2.1 ພັດທະນາບຸກຄະລາກອນດ້ານວິຊາການພະລະສຶກສາ-ກິລາໃນສະຖານການສຶກສາ<br>8.2.2 ພັດທະນາພື້ນຖານໂຄງລ່າງ, ສະຖານທີ່ຝຶກແອບ ແລະ ອຸປະກອນໃນແຂ່ງຂັນກິລາ-ກາຍຍະກຳໃນສະຖານການສຶກສາ<br>8.2.3 ຊຸກຍູ້ສົ່ງເສີມຈັດຕັ້ງສະໂມສອນກິລາ-ກາຍຍະກຳ ໃນສະຖານການສຶກສາ<br>8.2.4 ຈັດງານມະຫາກຳກິລານັກຮຽນມັດທະຍົມສຶກສາທົ່ວປະເທດ, ເຂົ້າຮ່ວມການແຂ່ງຂັນ ແລະ ເປັນເຈົ້າພາບຈັດງານແຂ່ງຂັນກິລານັກຮຽນອາຊຽນ<br>8.2.5 ປັບປຸງ ແລະ ຍົກລະດັບການສ້າງຄູພະລະສຶກສາ ແລະ ສິລະປະສຶກສາ<br>8.2.6 ຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນພະລະສຶກສາ ແລະ ສິລະປະສຶກສາ ໃນສະຖານການສຶກສາໃຫ້ທົ່ວເຖິງ<br>8.2.7 ຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ສຶກສາວິຊາພື້ນຖານປ້ອງກັນຕົວໃນຊັ້ນມັດທະຍົມຕອນປາຍ ແລະ ວິຊາສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ<br>8.2.8 ຕ້ານ ແລະ ສະກັດກັ້ນຢາເສບຕິດ ແລະ ປະກົດການຫຍໍ້ທໍ້ ໃນສະຖານການສຶກສາ.<br>8.2.9 ປັບປຸງການບໍລິຫານ, ການຄຸ້ມຄອງວຽກງານພະລະ ແລະ ສິລະປະສຶກສາ ແລະ ພົວພັນຮ່ວມມືພາຍໃນ ແລະ ຕ່າງປະເທດ. | 8.2: ການຮຽນ-ການສອນ ພະລະສຶກສາ ແລະ ສິລະປະສຶກສາ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງກວ້າງຂວາງຂຶ້ນ, ຈຳນວນບຸກຄະລາກອນນັກວິຊາການດ້ານພະລະສຶກສາ ແລະ ສິລະປະສຶກສາເພີ່ມຂຶ້ນ, ມີຈຳນວນນັກຮຽນ ທີ່ເຂົ້າຮ່ວມການແຂ່ງຂັນກິລາ, ສິລະປະພາຍໃນປະເທດ, ພາກພື້ນ ແລະ ສາກົນຫຼາຍຂຶ້ນ. | |
| 8.3.1 ການພັດທະນານັກກິລາ<br>8.3.2 ການຈັດການແຂ່ງຂັນ ແລະ ການເຂົ້າຮ່ວມການແຂ່ງຂັນ: | 8.3: ນັກກິລາທີ່ມີພອນສະຫວັນ, ນັກກິລາທີມຊາດ ແລະ ນັກກິລາອາຊີບ ມີສັກກາຍະພາບທຽບເທົ່າລະດັບມາດຕະຖານຂອງອະນຸພາກພື້ນ, ພາກພື້ນ ແລະ ສາກົນ | |
| 8.4.1 ພັດທະນາບຸກຄະລາກອນການກິລາ<br>8.4.2 ພັດທະນາພື້ນຖານໂຄງລ່າງກາຍະສຶກສາ ແລະ ອຸປະກອນການກິລາ<br>8.4.3 ພັດທະນາວິທະຍາສາດ ແລະ ເຕັກໂນໂລຊີການກິລາ | 8.4: ຜູ້ບໍລິຫານ, ຄູຝຶກ ກຳມະການຕັດສິນ ແລະ ນັກວິທະຍາສາດການກິລາ ມີຄວາມຮູ້ຄວາມສາມາດ ທຽບເທົ່າມາດຕະຖານສາກົນ | |
| 8.5.1 ການບໍລິຫານ-ຄຸ້ມຄອງວຽກງານກິລາລະດັບສູງ<br>8.5.2 ພັດທະນາລະບົບບໍລິຫານຂອງອົງການຮັບຜິດຊອບວຽກງານກິລາລະດັບສູງ | 8.5: ການບໍລິຫານ-ຄຸ້ມຄອງວຽກງານກິລາລະດັບສູງໃນທົ່ວປະເທດມີຄວາມເຂັ້ມແຂງ | |

**ເອກະສານຊ້ອນທ້າຍທີ 2: ຂະບວນການປຶກສາຫາລືໃນການສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025.**

| ຜູ້ເຂົ້າຮ່ວມ | ວັນເວລາ | ຈຸດປະສົງ |
|---|---|---|
| ບັນດາກົມຕ່າງໆໃນກະຊວງສຶກສາທິການ ແລະ ກິລາ | 23/08/2019 | ສົນທະນາກ່ຽວກັບ ໂຄງຮ່າງ ແລະ ພົບໄດ້ຮັບລະດັບສູງຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025) ຮ່ວມກັບຄະນະກົມຈາກບັນດາກົມຕ່າງໆ ໃນກະຊວງສຶກສາທິການ ແລະ ກິລາ. |
| ກອງປະຊຸມ ກຸ່ມຄູ່ຮ່ວມພັດທະນາຂະແໜງການສຶກສາ | 30/08/2019 | ສົນທະນາກ່ຽວກັບ ໂຄງຮ່າງ ແລະ ພົບໄດ້ຮັບລະດັບສູງຂອງແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX ຮ່ວມກັບຄູ່ຮ່ວມພັດທະນາ. |
| ບັນດາກົມຕ່າງໆໃນກະຊວງ ສສກ | 23/09/2019 | ສົນທະນາກ່ຽວກັບ ໂຄງສ້າງ ໃນພາກທີ II: ແຜນພັດທະນາຂອງຂະແໜງການຍ່ອຍ 2021-2025 |
| ກົມການສຶກສາກ່ອນໄວຮຽນ, ກົມສາມັນສຶກສາ, ກົມອາຊີວະສຶກສາ, ກົມການສຶກສານອກໂຮງຮຽນ, ກົມການສຶກສາຊັ້ນສູງ, ກົມສ້າງຄູ ແລະ ສະພາອາຊີວະສຶກສາ. | ກັນຍາ-ພະຈິກ 2019 | ສົນທະນາກັບແຕ່ລະພາກສ່ວນ ກ່ຽວກັບ ຮ່າງແຜນຂອງຂະແໜງການຍ່ອຍ |
| ກະຊວງສຶກສາທິການ ແລະ ກິລາ ແລະ ຄູ່ຮ່ວມພັດທະນາ | 05/11/2019 | ສົນທະນາກ່ຽວກັບ ແຜນຂະແໜງການຍ່ອຍ ຂອງບັນດາກົມທີ່ກ່ຽວຂ້ອງກັບການສຶກສາຫຼັງຂັ້ນພື້ນຖານ |
| 6 ແຂວງ (ສກຂ), 12 ເມືອງ (ສກມ) ແລະ ຜູ້ອຳນວຍການໂຮງຮຽນປະຖົມ ແລະ ມັດທະຍົມ 24 ທ່ານ ພ້ອມທັງນັກຮຽນ 20 ຄົນ | 7-8/11/2019 | ປຶກສາຫາລືໃນຂັ້ນທ້ອງຖິ່ນກັບ 6 ແຂວງ ທີ່ແຂວງຫຼວງພະບາງ |
| 4 ແຂວງ (ສກຂ), 8 ເມືອງ (ສກມ), ແລະ ຜູ້ອຳນວຍການໂຮງຮຽນປະຖົມ ແລະ ມັດທະຍົມ 16 ທ່ານ | 11-12/11/2019 | ປຶກສາຫາລືໃນຂັ້ນທ້ອງຖິ່ນກັບ 4 ແຂວງພາກໃຕ້ ທີ່ແຂວງຈຳປາສັກ |
| ບັນດາພາກສ່ວນຕ່າງໆ ໃນຂະແໜງການຍ່ອຍ ບໍລິຫານ-ຄຸ້ມຄອງ ແລະ ຄູ່ຮ່ວມພັດທະນາ | 19/11/2019 | ປຶກສາຫາລື ກັບແຕ່ລະພາກສ່ວນ ໃນກຸ່ມບໍລິຫານ-ຄຸ້ມຄອງ ເພື່ອສົນທະນາກ່ຽວກັບ ຮ່າງແຜນຂະແໜງການຍ່ອຍ ບໍລິຫານ-ຄຸ້ມຄອງ |
| ກົມສາມັນສຶກສາ | 20/11/2019 | ສົນທະນາກ່ຽວກັບ ແຜນຂອງຂະແໜງການຍ່ອຍການສຶກສາຊັ້ນປະຖົມ, ມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ |
| ກອງປະຊຸມລະດັບຜູ້ບໍລິຫານ ຂອງໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ | 21/11/2019 | ປຶກສາຫາລື ກ່ຽວກັບ ນະໂຍບາຍທີ່ເປັນບູລິມະສິດ ສຳລັບ ແຜນ 5 ປີ ຄັ້ງທີ 9 |
| ຜູ້ຮັບຜິດຊອບວຽກແຜນການ ແລະ ວຽກການເງິນ ຈາກພະແນກສຶກສາທິການ ແລະ ກິລາແຂວງ ແລະ ພະນັກງານຈາກກົມແຜນການ | 22-24/01/2020 | ການກະກຽມສ້າງແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ (ແຜນຄາດຄະເນ ACSEP) ສຳລັບ ແຜນ 5 ປີ ຄັ້ງທີ 9 |
| ຜູ້ຕາງໜ້າຈາກອົງການ ອຸຍແບັສໂກບາງກອກ, ຄະນະສຶກສາສາດ (ມຊ), JICA, BEQUAL, ກົມສ້າງຄູ, ກົມແຜນການ | 11/02/2020 | ສົນທະນາກ່ຽວກັບ ແຜນຂອງຂະແໜງການຍ່ອຍການສຶກສາຄູ |

| | | |
|---|---|---|
| ໜ່ວຍງານວິຊາການຂະແໜງການຍ່ອຍ ທີ 1 | 15/03/2020 | ສົນທະນາກ່ຽວກັບ ແຜນພັດທະນາຂະແໜງການສຶກສາ 5 ປີ 2021-2025 ແລະ ແຜນຂອງຂະແໜງການຍ່ອຍການສຶກສາກ່ອນໄວຮຽນ |
| ຄະນະຮັບຜິດຊອບເນື້ອໃນແຜນ 5 ປີ ຄັ້ງທີ 9 2021-2025 | 19/05/2020 | ສົນທະນາກ່ຽວກັບ ແຜນຂອງທຸກຂະແໜງການຍ່ອຍ ສະບັບຮ່າງ |
| ໜ່ວຍງານວິຊາການຂະແໜງການຍ່ອຍ ທີ 4 (FG4) ລົງເລິກວຽກການສຶກສາຮຽນຮ່ວມ | 24/06/2020 | ສົນທະນາກ່ຽວກັບ ໜ້າວຽກທີ່ຕິດພັນກັບການສຶກສາຮຽນຮ່ວມ ໃນແຜນ 5 ປີ ຄັ້ງທີ 9 2021-2025 |
| ໜ່ວຍງານວິຊາການຂະແໜງການຍ່ອຍ ທີ 4 | 26/06/2020 | ສົນທະນາກ່ຽວກັບ ແຜນຂອງຂະແໜງການຍ່ອຍ ບໍລິຫານ-ຄຸ້ມຄອງ, ງົບປະມານ ແລະ ຂອບຕິດຕາມ-ປະເມີນຜົນ ຂອງແຜນ 5 ປີ ຄັ້ງທີ 9 2021-2025 |
| ບັນດາກົມຕ່າງໆໃນກະຊວງ ສສກ | 15-16/07/2020 | ສົນທະນາກ່ຽວກັບ ແຜນຂອງຂະແໜງການຍ່ອຍ ແລະ ພາກທີ I ຂອງ ແຜນ 5 ປີ ຄັ້ງທີ 9 2021-2025 |
| 4 ແຂວງ (ສກຂ), 8 ເມືອງ (ສກມ) ແລະ ຜູ້ອຳນວຍການໂຮງຮຽນປະຖົມ ແລະ ມັດທະຍົມ 16 ທ່ານ | 3-4/08/2020 | ປຶກສາຫາລືໃນຂັ້ນທ້ອງຖິ່ນກັບ 4 ແຂວງ ທີ່ແຂວງອຸດົມໄຊ |
| ຜູ້ຕາງໜ້າຈາກບັນດາພາກສ່ວນຕ່າງໆ ໃນ ສສກ | 06/08/2020 | ປຶກສາຫາລືກັບທຸກພາກສ່ວນ ໃນ ສສກ |
| ກອງປະຊຸມກຸ່ມ ຄູ່ຮ່ວມພັດທະນາຂະແໜງການສຶກສາ | 07/08/2020 | ປຶກສາຫາລື ໃນກຸ່ມຄູ່ຮ່ວມພັດທະນາ |
| ຄະນະໜ່ວຍງານລະດັບວິຊາການ ຂອງຂະແໜງການສຶກສາ ແລະ ກິລາ | 11/08/2020 | ປຶກສາຫາລື ກ່ຽວກັບ ພາກທີ I ແລະ ພາກທີ II ຂອງແຜນ 5 ປີ ຄັ້ງທີ IX 2021-2025 ສະບັບຮ່າງ ລວມທັງຄຳຕອບຕໍ່ບົດລາຍງານການປະເມີນເອກະລາດ ຮ່ວມກັບ ຄະນະໜ່ວຍງານລະດັບວິຊາການ ຂອງຂະແໜງການສຶກສາ ແລະ ກິລາ |
| 4 ແຂວງ (ສກຂ), 8 ເມືອງ (ສກມ) ແລະ ຜູ້ອຳນວຍການໂຮງຮຽນປະຖົມ ແລະ ມັດທະຍົມ 16 ທ່ານ | 13-14/08/2020 | ປຶກສາຫາລືໃນຂັ້ນທ້ອງຖິ່ນກັບ 4 ແຂວງ ທີ່ແຂວງສະຫວັນນະເຂດ |
| ກອງປະຊຸມລະດັບຜູ້ລິຫານ ຂອງໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ | 18/08/2020 | ຮັບຮອງ ແຜນພັດທະນາຂະແໜງການສຶກສາ 5 ປີ ຄັ້ງທີ 9 (2021-2025) ລວມທັງ ຄຳຕອບຕໍ່ບົດລາຍງານການປະເມີນເອກະລາດ ໂດຍຄະນະໜ່ວຍງານລະດັບວິຊາການຂອງຂະແໜງການສຶກສາ ແລະ ກິລາ |
| ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈຳສົກຮຽນ 2019-20 | 27-28/08/2020 | ຮັບຮອງ ແຜນພັດທະນາຂະແໜງການສຶກສາ 5 ປີ ຄັ້ງທີ 9 (2021-2025) ສະບັບສຸດທ້າຍ ລວມທັງ ຄຳຕອບຕໍ່ບົດລາຍງານການປະເມີນເອກະລາດ ໂດຍຜູ້ເຂົ້າຮ່ວມຈາກກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈຳສົກຮຽນ 2019-20 |

**ເອກະສານຊ້ອນທ້າຍທີ 3: ລາຍຊື່ 40 ເມືອງບູລິມະສິດ**

| ລຳດັບ | ແຂວງ | ເມືອງ |
|---|---|---|
| 1 | ນະຄອນຫຼວງວຽງຈັນ | 1. ເມືອງ ສັງທອງ |
| 2 | ຜົ້ງສາລີ | 2. ເມືອງ Samphan |
| 3 | ຫຼວງນ້ຳທາ | 3. ເມືອງ ລອງ |
| 4 | ບໍ່ແກ້ວ | 4. ເມືອງ ເມິງ |
| 5 | ອຸດົມໄຊ | 5. ເມືອງ ງາ |
| | | 6. ເມືອງ ຮຸນ |
| | | 7. ເມືອງ ປາກແບ່ງ |
| 6 | ຫຼວງພະບາງ | 8. ເມືອງ ໂພນທອງ |
| | | 9. ເມືອງ ປາກອູ |
| 7 | ໄຊຍະບູລີ | 10. ເມືອງ ໄຊສະຖານ |
| 8 | ຊຽງຂວາງ | 11. ເມືອງ ໜອງແຮດ |
| 9 | ຫົວພັນ | 12. ເມືອງ ກວັນ |
| | | 13. ເມືອງ ຫົວເມືອງ |
| | | 14. ເມືອງ ຊຳໃຕ້ |
| 10 | ແຂວງວຽງຈັນ | 15. ເມືອງ ເຟືອງ |
| 11 | ບໍລິຄຳໄຊ | 16. ເມືອງ ໄຊຈຳພອນ |
| 12 | ຄຳມ່ວນ | 17. ເມືອງ ນາກາຍ |
| | | 18. ເມືອງ ບົວລະພາ |
| | | 19. ເມືອງ ມະຫາໄຊ |
| | | 20. ເມືອງ ຍົມມະລາດ |
| | | 21. ເມືອງ ໄຊບົວທອງ |
| 13 | ສະຫວັນນະເຂດ | 22. ເມືອງ ເຊໂປນ |
| | | 23. ເມືອງ ພິນ |
| | | 24. ເມືອງ ຊົນບູລີ |
| | | 25. ເມືອງ ພະລານໄຊ |
| | | 26. ເມືອງ ນອງ |
| 14 | ຈຳປາສັກ | 27. ເມືອງ ບາຈຽງຈະເລີນສຸກ |
| | | 28. ເມືອງໂຂງ |
| | | 29. ເມືອງ ສຸຂຸມາ |
| | | 30. ເມືອງ ມູນລະປະໂມກ |
| 15 | ສາລະວັນ | 31. ເມືອງ ເລົ່າງາມ |
| | | 32. ເມືອງ ຕະໂອ້ຍ |
| | | 33. ເມືອງ ລະຄອນເພັງ |
| 16 | ເຊກອງ | 34. ເມືອງ ດາກຈຶງ |

| | | |
|---|---|---|
| | | 35. ເມືອງ ລະມາມ |
| | | 36. ເມືອງ ກະລຶມ |
| 17 | ອັດຕະປື | 37. ເມືອງ ພູວົງ |
| | | 38. ເມືອງ ສານໄຊ |
| | | 39. ເມືອງ ໄຊເຊດຖາ |
| 18 | ໄຊສົມບູນ | 40. ເມືອງ ລ້ອງແຈ້ງ |

## ເອກະສານຊ້ອນທ້າຍທີ 4: ຮູບສະແດງການສົມທຽບບາງຕົວຊີ້ບອກຂອງ 40 ເມືອງ ປະຖົມສຶກສາ



ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

## ມັດທະຍົມສຶກສາ



ແຫຼ່ງຂໍ້ມູນ: ສູນະຖິຕິການສຶກສາ ແລະ ກິລາ

## ເອກະສານຊ້ອນທ້າຍທີ 5: ການບໍລິຫານຄວາມສ່ຽງ

| ຄວາມສ່ຽງ / ສະພາບການ | ຄວາມເປັນໄປໄດ້ | ຜົນກະທົບ | ການຫຼຸດຜ່ອນຄວາມສ່ຽງ |
|---|---|---|---|
| **ດ້ານການເງິນ** | | | |
| ຂາດການສະໜອງງົບປະມານບໍລິຫານ ແລະ ງົບປະມານລົງທຶນຂອງລັດຖະບານ ຢ່າງພຽງພໍໃນການຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ, ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໄດ້ຍົກໃຫ້ເຫັນຄວາມຈຳເປັນໃນການສືບຕໍ່ສະໜັບສະໜູນ ງົບປະມານບໍລິຫານ ແລະ ງົບປະມານລົງທຶນຢ່າງພຽງພໍຈາກຄູ່ຮ່ວມພັດທະນາ ແລະ ພາກສ່ວນທີ່ກ່ຽວຂ້ອງກັບຂະແໜງການສຶກສາ ແລະ ກິລາ ເພື່ອຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ແລະ ສອດຄ່ອງກັບຄຳໝັ້ນສັນຍາຂອງລັດຖະບານ ໃນການສະ ໜອງ 17% ຂອງລາຍຈ່າຍຂອງລັດຖະບານ ເຂົ້າໃນຂະແໜງການດັ່ງກ່າວ ທີ່ກຳລັງເພີ່ມຂຶ້ນເທື່ອລະກ້າວ | ສູງຫຼາຍ | ສູງ | ນະໂຍບາຍການໃຊ້ຈ່າຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໄດ້ຖືກປັບປຸງ ເພື່ອເປັນເຄື່ອງມືໃນການສະໜັບສະໜູນ ໃຫ້ແກ່ກະຊວງສຶກສາທິການ ແລະ ກິລາ ໃນການຮັບປະກັນການຈັດສັນງົບປະມານຂອງລັດ ສຳລັບຂະແໜງການສຶກສາໂດຍໃຫ້ສອດ ຄ່ອງກັບບູລິມະສິດ ແຜນພັດທະນາເສດ ຖະກິດ-ສັງຄົມແຫ່ງຊາດ ພາຍໃຕ້ຂໍ້ຈຳກັດດ້ານງົບ ປະມານ, ເຊິ່ງທັງໝົດກໍແມ່ນເພື່ອຮັບປະກັນຄວາມຍືນຍົງຂອງການພັດທະນາລະບົບການສຶກສາ |
| ຂາດການສະໜອງງົບປະມານບໍລິຫານ ແລະ ງົບປະມານລົງທຶນ ໃນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຢ່າງພຽງພໍ ແມ່ນແຕ່ໃນກໍລະນີ “steady state” (ການຈຳລອງສະຖານະການດ້ານງົບປະມານ ໃນກໍລະນີ ທີ່ບໍ່ມີການປ່ຽນແປງຈາກສະພາບການສຶກສາໃນປະຈຸບັນ) ກໍລະນີ “steady state” ສະ ແດງໃຫ້ເຫັນ ຄວາມຕ້ອງການທາງດ້ານງົບປະ ມານທີ່ຈຳເປັນ ເພື່ອຮັກສາລະບົບການສຶກສາໃຫ້ຢູ່ໃນສະພາບທີ່ເປັນຢູ່ຄືປະຈຸບັນ ໂດຍບໍ່ມີການປັບປຸງ ຫຼື ປ່ຽນແປງໃດໆ. ດັ່ງນັ້ນ ຈຸດປະສົງຂອງການຈຳລອງແມ່ນເພື່ອສະໜອງເຄື່ອງມື ໃນການກຳນົດຄວາມຕ້ອງການດ້ານການເງິນຂັ້ນຕ່ຳ ເພື່ອການຈັດຕັ້ງປະຕິບັດແຜນ. | ສູງ | ສູງຫຼາຍ | ໃນສະພາບທີ່ມີການສະເໜີ ໃຫ້ມີການຫຼຸດການຈັດສັນງົບປະມານໃຫ້ຕ່ຳກວ່າລະດັບນີ້, ນະໂຍບາຍການໃຊ້ຈ່າຍ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຈະເປັນພື້ນຖານໃນການກຳນົດວ່າການບໍລິການຂອງຂະແໜງການສຶກສາໃດ ທີ່ຈະຕ້ອງໄດ້ຮັບ ”ການປົກປ້ອງ” ແລະ ການບໍລິການຂອງຂະແໜງການສຶກສາໃດທີ່ຈະຕ້ອງຖືກຕັດ. ການນຳສະເໜີຢ່າງຈະແຈ້ງ ວ່າໜ້າວຽກໃດທີ່ຈຳເປັນຈະຕ້ອງຖືກຕັດ ຫຼື ຖືກຫຼຸດງົບປະມານລົງ ຈະເປັນເຄື່ອງມືສະໜັບສະໜູນຂັ້ນສຸດທ້າຍທີ່ສຳຄັນ ເພື່ອນຳສະເໜີຕໍ່ຂັ້ນເທິງ. |
| ງົບປະມານຂະແໜງການຂອງລັດ ບໍ່ໄດ້ຖືກຈັດສັນ ໃຫ້ສອດຄ່ອງ ກັບບູລິມະສິດ ຂອງແຜນຂະແໜງການສຶກສາ ແລະ ກິລາ ແລະ ບູລິມະສິດດ້ານນະໂຍບາຍຕໍ່ການສຶກສາຊັ້ນປະຖົມ ອາດຈະບໍ່ເປັນໄປຕາມແຜນໃນລະດັບທ້ອງຖິ່ນ. ຂະແໜງການສຶກສາ ບໍ່ສາມາດຕັດສິນຊີ້ຂາດກ່ຽວກັບການຈັດສັນງົບປະມານຂອງຕົນ. ບ້ວງເງິນ ເດືອນ ແລະ ເງິນອຸດໜູນຂອງພະນັກງານລັດຖະ ກອນ ແມ່ນຖືກກຳນົດຈາກພາກນອກ. ການຮັບເອົາພະນັກງານລັດຖະກອນ ແມ່ນໄດ້ຖືກຈຳກັດ | ສູງ | ສູງ | ຄະນະກຳມະການແຜນການ-ການເງິນ ແລະ ຄະນະກຳມະການຈັດສັນຄູ ໄດ້ຮັບການຍົກສູງພາລະບົດບາດ. ນະໂຍບາຍການໃຊ້ຈ່າຍຂອງແຜນຂະແໜງການສຶກສາ ແລະ ກິລາ ໄດ້ຮັບການປັບປຸງ ເພື່ອຊີ້ນຳ ແລະ ໃຫ້ບູລິມະສິດແກ່ດ້ານທີ່ຈຳເປັນສຳລັບງົບປະມານທີ່ມີຢູ່ ໃຫ້ແກ່ກະຊວງສຶກສາທິການ ແລະ ກິລາ. ນະໂຍບາຍການໃຊ້ຈ່າຍໄດ້ຖືກພັດທະນາ ແລະ ນຳສະເໜີ ເປັນລຳດັບຂັ້ນບູລິມະສິດ ເພື່ອສະໜັບສະໜູນການເພີ່ມງົບປະມານ ຂອງບູລິມະສິດຂອງແຜນ |

| | | | |
|---|---|---|---|
| ແລະ ການຫຼຸດພະນັກງານທີ່ມີຢູ່ແລ້ວ ແມ່ນເປັນໄປໄດ້ຍາກ. ການຈັດສັນງົບປະມານບ້ວງອື່ນໆ (ເຊັ່ນເງິນບໍລິຫານຂອງໂຮງຮຽນ) ແມ່ນຖືກຮັດກຸມດ້ວຍລະບຽບ, ມາດຕະການ ແລະ ລະບຽບການໃຊ້ທຶນ ເຊິ່ງຖ້າບໍ່ປະຕິບັດຕາມຫຼັກການເຫຼົ່ານີ້ ມັນອາດສົ່ງຜົນກະທົບທາງລົບໃນຕໍ່ໜ້າໂດຍການຫຼຸດຊັບພະຍາກອນຕ່າງໆລົງ. | | | ຂະແໜງການ ໂດຍອີງໃສ່ງົບປະມານຕາມຂອບງົບປະມານຕາມທີ່ໄດ້ອາງໄວ້.<br>ພາຍໃຕ້ເງື່ອນໄຂທີ່ມີຄວາມເປັນໄປໄດ້ທີ່ງົບປະມານຂອງຂະແໜງການຈະຕໍ່າກວ່າການຈໍາລອງສະຖານະການດ້ານງົບປະມານ ໃນກໍລະນີທີ່ບໍ່ມີການປ່ຽນແປງຈາກສະພາບການສຶກສາໃນປະຈຸບັນ (Steady state scenario), ນະໂຍບາຍການໃຊ້ຈ່າຍດຽວກັນຈະຖືກນໍາໃຊ້ ເພື່ອຈັດລໍາດັບບູລິມະສິດ ແລະ ກໍານົດວ່າບ່ອນທີ່ມີຄວາມຈໍາເປັນຕ້ອງຕັດງົບປະ ມານ. ໃນລະດັບການຄິດໄລ່ງົບປະມານ, ພາຍໃຕ້ແຜນຂະແໜງການສຶກສາ ແລະ ກິລາ 2021-2025 ຈະສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບ ACSEP ແລະ PBMIS ແລະ ປະສົບການກ່ຽວກັບຂະບວນການທາງດ້ານງົບປະມານທີ່ຜ່ານມາຈະຊ່ວຍໃນການຮັບປະກັນການຈັດສັນງົບປະມານ ໃນບ້ວງຕ່າງໆ ແລະ ການປັບປຸງງົບປະມານໃຫ້ມີຄວາມຊັດເຈນສອດຄ່ອງກັບບູລິມະສິດໃນຂັ້ນສູນກາງ ແລະ ສະພາບເງື່ອນໄຂສະເພາະຂອງທ້ອງຖິ່ນ. |
| ແຜນງານການສະໜັບສະໜູນຈາກພາຍນອກ ບໍ່ສອດຄ່ອງກັບບູລິມະສິດ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ. ຜ່ານກອງປະຊຸມ ESWG, ບັນດາຄູ່ຮ່ວມພັດທະນາໄດ້ສະແດງໃຫ້ເຫັນຄວາມຕັ້ງໃຈ ທີ່ຈະວາງແນວທາງສະໜັບສະໜູນ ໃຫ້ສອດຄ່ອງກັບບູລິມະສິດ ແລະ ຍຸດທະສາດຂອງຂະແໜງການ. ໝາຍຄວາມວ່າບັນດາຄູ່ຮ່ວມພັດທະນາ ຕ້ອງໄດ້ຮັບຜິດຊອບຮ່ວມກັບພາກສ່ວນ ຫຼື ອີງກອນທີ່ຕົນເຮັດວຽກຮ່ວມ ແລະ ຕ້ອງໄດ້ສະໜັບສະໜູນຕາມບູລິມະສິດແຫ່ງຊາດ ເພື່ອໃຫ້ສອດຄ່ອງຕາມບູລິມະສິດ ແລະ ແຜນຂອງອີງກອນຂອງຕົນ. ເຖິງຢ່າງໃດກໍຕາມ ກໍ່ມີຄວາມເປັນໄປໄດ້ທີ່ບູລິມະສິດຂອງຂະແໜງ ການອາດຈະຖືກປັບປ່ຽນໄປ. | ຕໍ່າ | ປານກາງ | ແຜນຂະແໜງການສຶກສາ ແລະ ກິລາໄດ້ຖືກພັດທະນາໂດຍຜ່ານຂະບວນການທີ່ຍາວນານ ແລະ ເລິກເຊິ່ງຜ່ານການປຶກສາຫາລື ກັບບັນດາຄູ່ຮ່ວມພັດທະນາເຊິ່ງສະທ້ອນ ແລະ ລວບລວມເອົາຂໍ້ຈໍາກັດຕ່າງໆ ໃນການຈັດຕັ້ງປະຕິບັດໃນຂອບວຽກ. ກອງປະຊຸມລະດັບບໍລິຫານ ESWG ໃນເດືອນພະຈິກ 2019 ໄດ້ຮັບຄວາມເປັນເອກະພາບກ່ຽວກັບບູລິມະສິດ ຂອງຂະແໜງການໃນໄລຍະ 2021-2025. ນອກຈາກນັ້ນ, ການສືບຕໍ່ແຜນຂະແໜງການສຶກສາ ແລະ ກິລາ ສະແດງ ໃຫ້ເຫັນເຖິງຄວາມຈໍາເປັນຂອງຄູ່ຮ່ວມພັດທະນາ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອສະໜັບສະໜູນດ້ານການເງິນ ໃຫ້ສອດຄ່ອງກັບບັນດາບູລິມະສິດຂອງແຜນຂະແໜງການສຶກສາ ແລະ ກິລາ ທີ່ໄດ້ລະບຸໄວ້ໃນນະໂຍບາຍການໃຊ້ຈ່າຍ ເຊິ່ງກະຊວງສຶກສາທິການ ແລະ ກິລາ ຈະຊ່ວຍມີຄໍາເຫັນວ່າຄວນວາງບູລິມະສິດເຂົ້າໃນເມືອງດ້ອຍໂອກາດ ຫຼື ຄວນຈັດຕັ້ງປະຕິບັດໃນທົ່ວປະເທດ. |
| ງົບປະມານບໍລິຫານຕົ້ນຕໍທີ່ສູງ ຈາກການຊ່ວຍເຫຼືອພາຍນອກ ສາມາດຊ່ວຍໃນການຈັດຕັ້ງປະຕິບັດແຜນງານ ທີ່ເປັນບູລິມະສິດໃນປະຈຸບັນ ແລະ ອະນາຄົດພາຍໃນຂະແໜງການ. ດັ່ງທີ່ໄດ້ຮັບຮູ້ ແລະ ປະເມີນການແລ້ວວ່າ ການສະໜັບສະໜູນດ້ານການເງິນ ແລະ ແຜນງານຕ່າງໆ ຂອງຄູ່ຮ່ວມພັດທະນາ ແມ່ນມີຄວາມຈໍາເປັນຢ່າງຍິ່ງໃນການຈັດຕັ້ງປະຕິບັດ ແຜນຂະແໜງການສຶກສາ ແລະ ກິລາ. ເຖິງຢ່າງໃດກໍຕາມ, ເນື່ອງຈາກຂະ ແໜງການມີຂໍ້ຈໍາກັດຫຼາຍ ທາງດ້ານການເງິນ | ປານກາງ | ສູງ | ເພື່ອຫຼຸດຜ່ອນຄວາມສ່ຽງບັນຫາດັ່ງກ່າວ, ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ຕ້ອງຮັບປະກັນວ່າ ພາລະບົດບາດ ຂອງ ESWG ໄດ້ຮັບການປັບປຸງຄືນໃໝ່ ເພື່ອໃຫ້ຮັບປະກັນວ່າທຸກໆໂຄງການ ຂອງຄູ່ຮ່ວມພັດທະນາໃໝ່ ມີການພິຈາລະນາ ແລະ ລະບຸຄວາມຮັບຜິດຊອບຢ່າງຈະແຈ້ງກ່ຽວກັບ ງົບປະມານ ທັງຜ່ານແຜນງານລົງທຶນ ແລະ ການພັດທະນາອື່ນໆ ກ່ອນທີ່ຈະລົງນາມໃນບົດບັນທຶກຄວາມເຂົ້າໃຈ. |

| | | | |
|---|---|---|---|
| ແມ່ນແຕ່ບັນດາໂຄງການທີ່ມີປະໂຫຍດ ກໍ່ອາດຈະເກີນຂອບເຂດ ຂອງງົບປະມານຂອງຂະແໜງການ. ດ້ວຍເຫດນີ້, ກະຊວງສຶກສາທິການ ແລະ ກິລາ ອາດຈະຈຳເປັນຕ້ອງໄດ້ເລືອກທີ່ຈະຢຸດບາງແຜນງານທີ່ປະສົບຜົນສຳເລັດໃນໄລຍະຜ່ານມາ ຫຼື ອາດສະໜອງງົບປະມານພຽງແຕ່ໃຫ້ຮັກສາລະດັບທີ່ເຮັດໃຫ້ມີປະສິດທິພາບເທົ່າເດີມ ແລະ/ຫຼື ດຶງເອົາຊັບພະຍາກອນຈາກແຜນງານທີ່ໄດ້ຮັບບູລິມະສິດຫຼາຍກວ່າມາໃສ່. | | | |
| **ການປະເມີນຜົນການຈັດຕັ້ງປະຕິບັດ** | | | |
| ການປະເມີນຜົນຂອງຂະແໜງການ ແລະ ການຈັດຕັ້ງປະຕິບັດແຜນງານບໍ່ໄດ້ຖືກແຈ້ງໃຫ້ຮູ້ຢ່າງເຕັມສ່ວນ ຕາມການຈັດສັນຊັບພະຍາກອນທີ່ສະໜອງໃຫ້.<br>ແຜນພັດທະນາຂະແໜງການສຶກສາ ແລະ ກິ ລາກ່ອນໜ້ານີ້ ໄດ້ລວມເອົາຂອບການເງິນໂດຍ ລວມ ທີ່ສະໜອງບັນດາແຜນງານບູລິມະສິດຕ່າງ ໆ ແລະ ບັນດາຄາດໝາຍສຳຄັນທີ່ຈະຕ້ອງບັນລຸ ພາຍໃຕ້ການສົມມຸດຖານທີ່ວ່າ ໄດ້ມີການສະໜອງຊັບພະຍາກອນທີ່ຄົບຖ້ວນ ເຊິ່ງມັນເປັນການກະທົບການປະເມີນຜົນການເຮັດວຽກຢ່າງມີປະສິດທິຜົນ. | ປານກາງ | ປານກາງ | ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ໄດ້ປະກອບມີ ຂອບການເງິນໂດຍລວມ, ແຜນງານບູລິມະສິດ ແລະ ຄາດໝາຍຕ່າງໆທີ່ກ່ຽວຂ້ອງ, ນອກນັ້ນ ແມ່ນໄດ້ມີການເພີ່ມເຕີມ ຂໍ້ມູນຄວາມຕ້ອງການດ້ານງົບປະມານ 'ງົບປະມານຢູ່ໃນລະດັບເທົ່າເດີມ' (Steady state budget) ທີ່ມີຈຸດປະສົງ ເພື່ອສະແດງໃຫ້ເຫັນງົບປະມານພື້ນຖານທີ່ຕ້ອງການ ເພື່ອຮັກສາລະດັບການຈັດຕັ້ງປະຕິບັດຂອງຂະແໜງການໃນລະດັບປັດຈຸບັນ ແລະ ແຜນດັ່ງກ່າວຍັງສະໜອງຂໍ້ມູນ 'ປີຖານ' ເພື່ອຈະໃຫ້ຮູ້ປະເມີນລະດັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນທີ່ສອດຄ່ອງຕາມລະດັບການສະໜອງທຶນ.<br>ການທົບທວນຜົນໄດ້ຮັບລະດັບກາງ ຈະຖືກນໍາໃຊ້ເພື່ອສະແດງເຖິງຄວາມຄືບໜ້າ ແລະ ຄາດໝາຍໂດຍອີງໃສ່ງົບປະມານປະຈຳປີ ແລະ ການສະໜັບສະໜູນຈາກພາຍນອກ. |
| ໃນຂໍ້ມູນປີຖານ ຂອງແບບຈຳລອງດ້ານງົບປະມານ "ງົບປະມານຢູ່ໃນລະດັບເທົ່າເດີມ" (Steady state) ບໍ່ໄດ້ສະທ້ອນໃຫ້ເຫັນເຖິງການຈຳລອງເຫດການ ທີ່ບໍ່ມີການປ່ຽນແປງໄດ້ຢ່າງຖືກຕ້ອງ.<br>ໂດຍລວມແລ້ວ, ໃນການປ່ຽນແປງຜົນການຈັດຕັ້ງປະຕິບັດໃນຂະແໜງການສຶກສາ ແມ່ນໃຊ້ເວລາດົນກວ່າຈະປະກົດຜົນໃຫ້ເຫັນ ຜ່ານຕົວຊີ້ບອກຜົນສຳເລັດຕ່າງໆ. ຄຸນນະພາບຂອງການບໍລິການການສຶກສາ ທີ່ຫຼຸດລົງຈະຄົງຢູ່ເປັນເວລາຫຼາຍປີ ກ່ອນຈະສົ່ງໃຫ້ນັກຮຽນເລີ່ມມີການປະລະການຮຽນ ຫຼື ຜົນການສອບເສັງເລີ່ມອ່ອນລົງຢ່າງເປັນທີ່ສັງເກດ.<br>ໃນຕົວຂະແໜງການເອງ ຈະບໍ່ຢູ່ໃນສະພາບຄົງທີ່ຕາມສະພາບການເງິນທີ່ບໍ່ປ່ຽນແປງ. ອັດຕາການເລື່ອນຂັ້ນຂອງນັກຮຽນ ແລະ ການປ່ຽນແປງດ້ານປະຊາກອນໃນປະຈຸບັນ ສະແດງໃຫ້ເຫັນວ່າ ເຖິງແມ່ນວ່າທຸກຢ່າງຈະຍັງຄົງຢູ່ຄືເກົ່າ | ສູງ | ສູງ | ເພື່ອຮັກສາລະດັບໃຫ້ດີທີ່ສຸດ ເທົ່າທີ່ຈະເປັນໄປໄດ້, ງົບປະມານຂອງລັດ "ທີ່ບໍ່ໄດ້ມີການປ່ຽນແປງ" ນັ້ນ ຖືກພັດທະນາຂຶ້ນມາບົນພື້ນຖານພຽງແຕ່ຮັກສາສະຖານະພາບໃນປະຈຸບັນເທົ່ານັ້ນ. ບັນດາອາຄານຕ່າງໆໄດ້ຮັບການບຳລຸງຮັກສາ, ປຶ້ມແບບຮຽນຖືກຈັດພິມທົດແທນຕາມອາຍຸການໃຊ້ງານສະເລ່ຍ ແລະ ອື່ນໆ. ສະນັ້ນ ສົມມຸດຖານກ່ຽວກັບອັດຕາການຊໍາລະເງິນຈຶ່ງຕ້ອງໄດ້ຄິດໄລ່.<br>ດັ່ງນັ້ນ, ການຈຳລອງຄວາມຕ້ອງການດ້ານງົບປະມານໂດຍອີງໃສ່ຈຳນວນນັກຮຽນ (ຕົວຢ່າງ: ສໍາລັບການຈັດສັນຄູ, ເງິນບໍລິຫານໂຮງຮຽນ ແລະ ປຶ້ມແບບຮຽນ) ແມ່ນໄດ້ຖືກນໍາໃຊ້. ເຖິງຢ່າງໃດກໍ່ຕາມ, ມັນຍັງບໍ່ທັນສາມາດຕອບສະໜອງ ການປ່ຽນແປງພາຍໃນລະບົບ - ໂຮງຮຽນທີ່ມີຕົວເລກຫຼຸດລົງອາດຈະຕ້ອງປ່ຽນໄປຮຽນຫ້ອງຄວບ ເຊິ່ງໃນຕົວຈິງຍັງຂາດການຝຶກອົບຮົມໃຫ້ຄູທີ່ສອນຫ້ອງຄວບ (ເຊິ່ງເປັນກໍລະນີພາຍໃຕ້ສະຖານະການງົບປະມານຂອງລັດ ທີ່ບໍ່ໄດ້ມີການປ່ຽນແປງ) ຈະເຮັດໃຫ້ມີທ່າອ່ຽງຫຼຸດລົງທາງດ້ານຄຸນນະພາບ. ເນື່ອງຈາກວ່ານີ້ແມ່ນຄັ້ງທຳອິດ |

| | | | |
|---|---|---|---|
| ຈຳນວນນັກຮຽນ ໃນແຕ່ລະຂະແໜງການຍ່ອຍ ອາດຈະມີການປ່ຽນແປງ.<br>ຄວາມຈິງແລ້ວ ແມ່ນຍັງບໍ່ມີຄວາມແນ່ນອນ ວ່າ ລະດັບການສະໜອງຊັບພະຍາກອນໃນປະຈຸບັນ (ຈຳນວນອາຄານ, ຈຳນວນຄູ ແລະອື່ນໆ) ຕາມງົບປະມານຂອງລັດທີ່ບໍ່ໄດ້ມີການປ່ຽນແປງ ຈະມີພຽງພໍ ເພື່ອຮັກສາລະດັບການຈັດຕັ້ງປະຕິບັດໃນປະຈຸບັນ. ສິ່ງທ້າທາຍຫຼັກທີ່ຄົງຄ້າງເປັນເວລາດົນນານ ແມ່ນການສະໜອງທຶນທີ່ບໍ່ທັນພຽງພໍຕໍ່ຂະແໜງການ ເພື່ອກະຕຸ້ນການຈັດຕັ້ງປະຕິບັດ. ຜົນໄດ້ຮັບຈາກງົບປະມານຂອງລັດ ທີ່ບໍ່ໄດ້ມີການປ່ຽນແປງ ອາດມີພຽງພໍແຕ່ສຳລັບການຮັບປະກັນການຫຼຸດລົງຢ່າງຕໍ່ເນື່ອງ ໃນການຈັດຕັ້ງປະຕິບັດ. | | | ທີ່ວິທີການນີ້ໄດ້ຖືກພັດທະນາ ແລະ ນຳໃຊ້ ສະນັ້ນ ການຫຼຸດຜ່ອນຕົ້ນຕໍ ແມ່ນຈະເຫັນຜ່ານປະສົບການ ແລະ ການທົບທວນໃນການປະເມີນກາງສະໄໝ.<br>ໄດ້ມີການປຶກສາຫາລື ທາງດ້ານວິຊາການຫຼາຍຄັ້ງ ເພື່ອເປັນບ່ອນອີງໃນການຈຳລອງທາງດ້ານງົບປະມານຂອງລັດທີ່ບໍ່ມີການປ່ຽນແປງ ໃຫ້ມີຄວາມຊັດເຈນຂຶ້ນ ຕາມນະໂຍບາຍ ແລະ ຂະບວນການຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020, ເປັນຕົ້ນແມ່ນ ຈຳນວນມື້ລົງຕິດຕາມຂອງຄູສຶກສານິເທດໃຫ້ຫຼາຍຂຶ້ນຈາກປະຈຸບັນ ຫຼື ອົງປະກອບຂອງມາດຖານຄຸນນະພາບຂັ້ນພື້ນຖານ ເຊິ່ງຖືເປັນພື້ນຖານທີ່ຈຳເປັນເພື່ອໃຫ້ໂຮງຮຽນໄດ້ດຳເນີນໄປຢ່າງມີປະສິດທິພາບ. ເຖິງຢ່າງໃດກໍຕາມ, ພາຍໃຕ້ສະພາບການທີ່ເປັນຢູ່ໃນປະຈຸບັນ ແມ່ນແຕ່ຄວາມຕ້ອງການຂັ້ນພື້ນຖານ ຕາມແບບຈຳລອງທາງດ້ານງົບປະມານຂອງລັດທີ່ບໍ່ມີການປ່ຽນແປງ ກໍຍັງເປັນໄປໄດ້ຍາກທີ່ຈະບັນລຸ. ດັ່ງນັ້ນ, ການຈຳລອງທາງດ້ານງົບປະມານຂອງລັດທີ່ບໍ່ມີການປ່ຽນແປງ ແມ່ນໄດ້ອີງໃສ່ງົບປະມານທີ່ຈຳເປັນຕ້ອງມີ ເພື່ອໃຫ້ຢ່າງໜ້ອຍທຸກໂຮງຮຽນ ສາມາດດຳເນີນໄປໄດ້ໃນລະດັບພື້ນຖານທີ່ສຸດ.<br>ໃນປະຈຸບັນ ຖືວ່າ ການຫຼຸດຜ່ອນຄວາມສ່ຽງຂ້ອນຂ້າງຈຳກັດ, ແຕ່ກໍອາດມີໂອກາດໃນການແກ້ໄຂເຊິ່ງຂຶ້ນກັບຜົນທີ່ຈະເກີດຂຶ້ນ ໃນຊ່ວງປະເມີນກາງສະໄໝ. ທາງທີ່ດີທີ່ສຸດໃນຂະນະນີ້ ແມ່ນ ນຳສະເໜີແບບຈຳລອງທາງດ້ານງົບປະມານຂອງລັດ ທີ່ບໍ່ມີການປ່ຽນແປງ ສຳລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ນີ້ກ່ອນເພື່ອເປັນການສ້າງພື້ນຖານ ຈາກນັ້ນ ຈຶ່ງປັບປຸງໃຫ້ດີຂຶ້ນເທື່ອລະກ້າວໃນອະນາຄົດ. ນອກຈາກນັ້ນ, ມັນຍັງປະກອບໄປດ້ວຍບູລິມະສິດຫຼາຍໆຂໍ້ ທີ່ອາດຊ່ວຍໃຫ້ເຫັນມຸມມອງທີ່ຈະແຈ້ງຂຶ້ນ ທີ່ກ່ຽວກັບແບບຈຳລອງທາງດ້ານງົບປະມານຂອງລັດທີ່ບໍ່ມີການປ່ຽນແປງ.<br>ຕົວຢ່າງ: ການຮັບປະກັນວ່າ ທຸກໂຮງຮຽນໄດ້ຮັບການສະໜອງດ້ານຕ່າງໆໃນຂັ້ນພື້ນຖານ ເພື່ອໃຫ້ສາມາດເຮັດໜ້າທີ່ ແລະ ມີຄວາມຮັບຜິດຊອບໃນການດຳເນີນງານ ຜ່ານການຈັດຕັ້ງປະຕິບັດມາດຖານຄຸນນະພາບຂັ້ນພື້ນຖານ ເພື່ອການວາງແຜນທີ່ສຳຄັນ , ການຈັດສັນຊັບພະຍາກອນຕ່າງໆ ແລະ ເພື່ອເປັນເຄື່ອງມືໃນການຕິດຕາມ ສຳລັບການໃຫ້ບໍລິການ. ໃນອະນາຄົດ ມັນອາດເປັນພື້ນຖານທີ່ດີໃນການປະເມີນຄວາມຕ້ອງການທາງດ້ານຊັບພະຍາກອນຕ່າງໆຂັ້ນຕ່ຳສຸດ ເພື່ອຮັບປະກັນ ບໍ່ໃຫ້ປະສິດທິພາບໃນການຈັດຕັ້ງປະຕິບັດຫຼຸດລົງ. |
| **ການມີສ່ວນຮ່ວມຂອງຂັ້ນທ້ອງຖິ່ນ** | | | |

| | | | |
|---|---|---|---|
| ບູລະມະສິດໃນການຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ຢູ່ໃນລະດັບຊາດ, ລະດັບທ້ອງຖິ່ນ ແລະ ຂະແໜງການຍ່ອຍ ແມ່ນມີຄວາມແຕກຕ່າງກັນ. ກົດໝາຍວ່າດ້ວຍງົບປະມານແຫ່ງ ສປປ ລາວ ແລະ ຫຼັກການການແບ່ງຂັ້ນຄຸ້ມຄອງ ໄດ້ຈຳກັດຂອບເຂດຂອງຂັ້ນສູນກາງ ໃນການແນະນຳໃຫ້ຂັ້ນທ້ອງຖິ່ນຕ້ອງຈັດສັນງົບປະມານ ໄປຕາມນະໂຍບາຍທີ່ເປັນບູລິມະສິດຂອງຂະແໜງການ. | ຕ່ຳ-ປານກາງ | ປານກາງ | ໃນໄລຍະຂອງການສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025, ໄດ້ມີການຈັດກອງປະຊຸມປຶກສາຫາລືກັນຫຼາຍຄັ້ງ ຢ່າງກວ້າງຂວາງຮ່ວມກັບ ຂັ້ນທ້ອງຖິ່ນ ແລະ ຜູ້ມີສ່ວນຮ່ວມອື່ນໆຈາກທຸກຂະແໜງການຍ່ອຍ. ນອກນັ້ນ ກໍຍັງໄດ້ມີການນຳສະເໜີ ແລະ ສົນທະນາໃນກອງປະຊຸມໂຕະມົນ ກ່ຽວກັບບູລິມະສິດ ແລະ ບັນດາຍຸດທະສາດທີ່ສຳຄັນຕ່າງໆ ພ້ອມທັງທິດທາງໃນການຈັດຕັ້ງປະຕິບັດ.<br>ໃນຂະບວນການຈັດຕັ້ງປະຕິບັດ, ພາຍໃຕ້ແຜນຂະແໜງການສຶກສາ ແລະ ກິລາ 2021-2025 ຈະສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບ ACSEP ແລະ PBMIS ແລະ ປະສົບການກ່ຽວກັບຂະບວນການທາງດ້ານງົບປະມານທີ່ຜ່ານມາ ຈະຊ່ວຍໃນການຮັບປະກັນການຈັດສັນງົບປະມານ ໃນບ້ອງຕ່າງໆ ແລະ ການປັບປຸງງົບປະມານໃຫ້ມີຄວາມຊັດເຈນສອດຄ່ອງກັບບູລິມະສິດໃນຂັ້ນສູນກາງ ແລະ ສະພາບເງື່ອນໄຂສະເພາະຂອງທ້ອງຖິ່ນ. ນອກນັ້ນ, ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ຍັງສຸມໃສ່ສະໜອງຂອບວຽກທີ່ຊັດເຈນ ເພື່ອຊ່ວຍເຫຼືອ ແລະ ຊີ້ນຳບັນດາຫ້ອງການໃນທ້ອງຖິ່ນ ແລະ ໂຮງຮຽນ ໃນການຈັດສັນຊັບພະຍາກອນຕ່າງໆ ຜ່ານການລິເລີ່ມການນຳໃຊ້ມາດຖານຄຸນນະ ພາບຂັ້ນພື້ນຖານ, ຫຼັກການຈັດສັນ-ຊັບຊ້ອນຄູ, ຫຼັກ ການຈັດສັນປຶ້ມແບບຮຽນ ແລະ ອື່ນໆ. ຂອບວຽກເຫຼົ່ານີ້ ແມ່ນຈະສະໜອງໃຫ້ມີຄວາມຊັດເຈນຂຶ້ນ ຄຽງຄູ່ກັນກັບວິທີການຈັດສັນງົບປະມານ ເພື່ອຫຼຸດຜ່ອນຄວາມແຕກໂຕນໃນຂັ້ນທ້ອງຖິ່ນ.<br>ໂດຍລວມແລ້ວ ບັນດາມາດຕະການເຫຼົ່ານີ້ຄວນຮັບປະກັນຄວາມສອດຄ່ອງຫຼາຍຂຶ້ນ ລະຫວ່າງນະ ໂຍບາຍ ແລະ ທິດຊີ້ນຳຢູ່ໃນຂັ້ນສູນກາງ ແລະ ຄວາມຕ້ອງການໃນຂັ້ນທ້ອງຖິ່ນ. |
| ການວາງບູລິມະສິດ ໃນການຈັດສັນຄູຢ່າງມີປະສິດທິພາບ ຢູ່ໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ແມ່ນມີຄວາມແຕກຕ່າງກັນ ແລະ ການຈັດສັນຄູຢ່າງເທົ່າທຽມໃນທົ່ວລະບົບ ກໍເປັນບູລິມະສິດທີ່ສຳຄັນ. ເຖິງຢ່າງໃດກໍຕາມ, ຄວາມກົດດັນສາມາດເກີດຂຶ້ນໄດ້ ລະຫວ່າງການຈັດວາງບູລິມະສິດໃນການສະໜອງຄູ ລະຫວ່າງສູນກາງ ແລະ ທ້ອງຖິ່ນ. ເມືອງທີ່ຈັດສັນຄູໄປຫາໂຮງຮຽນທີ່ຂາດຄູ ໃນເຂດຫ່າງໄກສອກຫຼີກ ອາດປະເຊີນກັບອຸປະສັກໃນການຮັກສາຄູໄວ້ ຫຼາຍກວ່າເມືອງທີ່ຈັດສັນຄູໄປເຂດຕົວເມືອງ ຫຼື ເຄິ່ງຕົວເມືອງ. ຄວາມກົດດັນທາງການເມືອງ ຫຼື ສັງຄົມ | ປານກາງ | ສູງ | ຄຳເຫັນຈາກກອງປະຊຸມປຶກສາຫາລືກັບຂັ້ນທ້ອງຖິ່ນໃນໄລຍະກະກຽມແຜນພັດທະນາຂະແໜງ ການສຶກສາ ແລະ ກິລາ 2021-2025 ນັ້ນ ສະແດງໃຫ້ເຫັນວ່າ ຂັ້ນທ້ອງຖິ່ນເອງ ຕ້ອງການໃຫ້ມີການພັດທະນາ ແລະ ນຳໃຊ້ນິຕິກຳ ແລະ ຫຼັກການຕ່າງໆທີ່ຈະແຈ້ງ ແລະ ເຄັ່ງຄັດ ໃນການຈັດສັນຄູ. ພ້ອມດຽວກັນ, ກໍຍັງຕ້ອງການໃຫ້ເລີ່ມປະຕິບັດຫຼັກການການຈັດສັນຄູຂັ້ນປະຖົມໃນທົ່ວປະເທດ, ພາລະບົດບາດຂອງຄະນະກຳມະການການຈັດສັນຄູທີ່ເຂັ້ມແຂງ ເພື່ອໃຫ້ສາມາດ ສ້າງຫຼັກການທີ່ຈະແຈ້ງ ແລະ ເຄັ່ງຄັດ ໃນການຈັດສັນຄູ, ນອກນັ້ນ ແມ່ນໃຫ້ວາງຄາດໝາຍລະດັບຊາດວ່າ ທຸກໂຮງຮຽນຈະໄດ້ຮັບການສະໜອງຄູ ຢ່າງໜ້ອຍ 80% ຂອງຈຳນວນຄູທີ່ຕ້ອງການໃນ |

| | | | |
|---|---|---|---|
| ໃນຂັ້ນທ້ອງຖິ່ນ ອາດບິດເບືອນຮູບແບບຂອງການກຳນົດການຈັດສັນຄູ. | | | ໂຮງຮຽນ. ຄາດໝາຍດັ່ງກ່າວນີ້ ຈະໄດ້ລະບຸໄວ້ ຢູ່ໃນຂອບບູລິມະສິດ ຂອງ ຄະນະກຳມະການການຈັດສັນຄູ ເພື່ອຮັບປະກັນວ່າ ບັນດາໂຮງຮຽນທີ່ຂາດຄູຫຼາຍ ແລະ ໂຮງຮຽນນ້ອຍ ຈະໄດ້ຮັບບູລິມະສິດ ຫຼາຍກວ່າ ໂຮງຮຽນທີ່ມີສັດສ່ວນຄູສູງກວ່າ. |
| ການຈັດສັນຄູ ທີ່ຂາດປະສິດທິຜົນໃນຊັ້ນປະຖົມສຶກສາ ເປັນເຫດໃຫ້ການຈັດສັນຄູໃນຊັ້ນປະຖົມຂາດຄວາມເປັນທຳ. ການສຶກສາໃນຊັ້ນປະຖົມໃນ ສປປ ລາວ ແມ່ນມີລັກສະນະປະກອບດ້ວຍໂຮງຮຽນຂະໜາດນ້ອຍເປັນສ່ວນໃຫຍ່ສ່ວນໜຶ່ງແມ່ນມາຈາກນະໂຍບາຍວ່າ ທຸກບ້ານຕ້ອງມີໂຮງຮຽນປະຖົມ 1 ແຫ່ງ ເຊິ່ງນັ້ນເປັນເຫດຜົນໜຶ່ງ ທີ່ເຮັດໃຫ້ຄວາມຕ້ອງການຄູສອນໃນຊັ້ນດັ່ງກ່າວມີສູງ. ການວິເຄາະ ການຈັດສັນຄູ ສະແດງໃຫ້ເຫັນວ່າ ເຖິງສ່ວນໃຫຍ່ແມ່ນນຳໃຊ້ການສິດສອນຫ້ອງຄວບ (ເຊິ່ງການຝຶກອົບຮົມຄູມີໜ້ອຍຫຼາຍ) ແລະ ອັດຕາສ່ວນນັກຮຽນຕໍ່ຫ້ອງຮຽນເທົ່າກັບ 50, ອັດຕາສ່ວນນັກຮຽນຕໍ່ຄູ ໃນລະດັບຊາດເທົ່າກັບ 25 ແມ່ນຖືວ່າ ພຽງພໍກັບຄວາມຕ້ອງການ. | ສູງ | ປານກາງ-ສູງ | ການໂຮມໂຮງຮຽນນ້ອຍທີ່ຢູ່ໃກ້ຄຽງກັນ ຈະຊ່ວຍໃຫ້ສາມາດຫຼຸດຜ່ອນການສອນຫ້ອງຄວບ, ປັບປຸງບັນຫາການຂາດຄູຂຶ້ນສອນ ແລະ ຊ່ວຍໃຫ້ການຈັດສັນຄູມີປະສິດທິພາບ ແລະ ເທົ່າທຽມກັນຂຶ້ນ. ເຖິງຢ່າງໃດກໍຕາມ, ການໂຮມບັນດາໂຮງຮຽນເຂົ້າກັນອາດມີຄວາມຫຍຸ້ງຍາກ ແລະ ການປະຕິບັດດັ່ງກ່າວອາດເກີດມີການຕໍ່ຕ້ານຈາກຊຸມຊົນ ຫຼື ຜູ້ມີສ່ວນຮ່ວມອື່ນໆ.<br>ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຮັບຮູ້ວ່າ ມັນມີຄວາມຈຳເປັນຕ້ອງໄດ້ມີການທົບທວນຄືນຈຸດດີໃນການໂຮມໂຮງຮຽນເຂົ້າກັນ ເຊິ່ງຫຼັກຖານຕ່າງໆ ແມ່ນຈະໄດ້ຈາກການວິເຄາະ ຄວາມສອດຄ່ອງທາງດ້ານບຸກຄະລາກອນໃນຂັ້ນໂຮງຮຽນ ແລະແຜນທີ່ GPS ແລະ ມັນຈະຊ່ວຍໃຫ້ການວິເຄາະ ແລະ ຂໍ້ສະເໜີຕ່າງໆ ໄດ້ຮັບການແຈ້ງໃຫ້ຮູ້ຈາກຂັ້ນທ້ອງຖິ່ນ. ໃນເມື່ອມີການແນະນຳ ໃຫ້ມີການໂຮມໂຮງຮຽນເຂົ້າກັນນັ້ນ ເຄື່ອງມືໃນການສະໜັບສະໜູນ ຈະຕ້ອງໄດ້ຮັບການພັດທະນາຂຶ້ນ ແລະ ເຜີຍແຜ່ເພື່ອໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ, ໂຮງຮຽນ ແລະ ຊຸມຊົນ ເຂົ້າໃຈຂະບວນການ ແລະ ຜົນໄດ້ຮັບ. ຄຽງຄູ່ກັນນັ້ນ, ວິທີການສະໜອງ ຄ່າຕອບແທນ ໃນຂະບວນການໂຮມໂຮງຮຽນ, ເປັນຕົ້ນແມ່ນ ເພີ່ມບູລິມະສິດໃຫ້ແກ່ຄູທີ່ຖືກຈັດສັນໄປໃໝ່ ຈະຕ້ອງໄດ້ຮັບການພິຈາລະນາ ແລະ ພັດທະນາຂຶ້ນ. ພ້ອມດຽວກັນ, ຄາດວ່າຫຼັກການສຳຄັນອັນໜຶ່ງ ເຊັ່ນ ການຮັກສາຄູໃຫ້ຢູ່ໃນເມືອງນັ້ນໆ ກໍຕ້ອງໄດ້ຄຳນຶງເຖິງເຊັ່ນກັນ. |
| **ການປ່ຽນແປງລະບົບໃຫ້ກວ້າງຂຶ້ນ** | | | |
| ການເຂົ້າເຖິງການສຶກສາ ຊັ້ນມັດທະຍົມຕອນຕົ້ນພາກບັງຄັບ ຍັງບໍ່ທັນມີຄວາມເທົ່າທຽມ.<br>ໂຄງສ້າງ ແລະ ວິທີການໃນປັດຈຸບັນ ທີ່ໃຊ້ໃນການສຶກສາຊັ້ນມັດທະຍົມຕອນຕົ້ນ ຖືກອອກແບບມາ ເພື່ອຮອງຮັບກຸ່ມປະຊາກອນຂະໜາດນ້ອຍ ແທນທີ່ຈະເປັນການໃຫ້ບໍລິການຢ່າງທົ່ວເຖິງ. ດັ່ງນັ້ນແລ້ວ ການຕັດສິນນະໂຍບາຍໃນການຂະຫຍາຍ ການເຂົ້າເຖິງການສຶກສາຊັ້ນມັດ ທະຍົມຕອນຕົ້ນຢ່າງທົ່ວເຖິງ ແລະ ເທົ່າທຽມ ແມ່ນເປັນທີ່ຕ້ອງການສູງ. ແຕ່ເຖິງຢ່າງໃດກໍຕາມ, ພາຍໃຕ້ສະພາບໃນປັດຈຸບັນ, ໂຄງສ້າງ ແລະ ວິທີການທີ່ມີຢູ່ ຈະບໍ່ສາມາດສະໜອງການ | ປານກາງ | ສູງຫຼາຍ | ຕ້ອງໄດ້ມີການທົບທວນຄືນໃຫ້ເຂົ້າໃຈຕໍ່ກັບຈຳນວນປີຮຽນ, ຈຳນວນວິຊາຮຽນ ແລະ ຮູບແບບການສະ ໜອງການສຶກສາ ຢູ່ໃນແຕ່ລະຊັ້ນຮຽນ ຈະຕ້ອງມີຄວາມສອດຄ່ອງກົມກຽວກັນໃນທຸກດ້ານ ເພື່ອສຶກສາ ແລະ ໃຫ້ຂໍ້ສະເໜີແນະ ໃນການທົບທວນຄືນໂຄງສ້າງລະບົບການສຶກສາ ທີ່ຈະຮັບປະກັນການຮຽນຊັ້ນມັດທະຍົມສຶກສາຕອນຕົ້ນ ຢ່າງທົ່ວເຖິງພາຍໃຕ້ເງື່ອນໄຂທາງດ້ານການເງິນ ທີ່ເປັນໄປໄດ້ ແລະ ມີຄວາມເທົ່າທຽມ.<br>ໃນການທົບທວນຄືນ ແລະ ປັບລະບົບຕ່າງໆທີ່ກ່າວມານັ້ນ ອາດເຮັດໃຫ້ເກີດມີການຕໍ່ຕ້ານຈຳນວນໜຶ່ງຢ່າງຫຼີກລ່ຽງບໍ່ໄດ້ ເຊິ່ງນັ້ນອາດເປັນເຫດໃຫ້ການ |

| | | | |
|---|---|---|---|
| ສຶກສາຊັ້ນມັດທະຍົມຕອນຕົ້ນໄດ້ຢ່າງທົ່ວເຖິງ ແລະ ເທົ່າທຽມ.<br>ຜົນການຮຽນຂອງນັກຮຽນ ໃນຊັ້ນປະຖົມ ໃນປັດຈຸບັນ ສະແດງໃຫ້ເຫັນວ່າ 5 ຂັ້ນຮຽນໃນຊັ້ນປະຖົມ ແມ່ນບໍ່ພຽງພໍໃນການປູພື້ນຖານ ແລະ ກຽມຄວາມພ້ອມເພື່ອເຂົ້າສູ່ຊັ້ນມັດທະຍົມຕອນຕົ້ນ. 4 ຂັ້ນຮຽນ ໃນຊັ້ນມັດທະຍົມຕອນຕົ້ນເອງກໍ່ຂ້ອນຂ້າງມີຄ່າໃຊ້ຈ່າຍທີ່ສູງ ເນື່ອງຈາກໄລຍະເວລາທີ່ຍາວ ແລະ ຄວາມຫຼາກຫຼາຍຂອງວິຊາຮຽນ. ໃນໄລຍະຜ່ານມາ ເຫັນໄດ້ວ່າ ການສູນເສຍນັກຮຽນໃນລະບົບທີ່ ບໍ່ມີພື້ນຖານໃນການຮຽນຮູ້ ແມ່ນມີເພີ່ມຂຶ້ນ ເຫັນໄດ້ຈາກການປະລະຂອງນັກຮຽນທີ່ສູງຂຶ້ນ.<br>ຜົນກະທົບທີ່ແນມເຫັນໄດ້ ຂອງການຮັກສາລະບົບທີ່ມີໃນປັດຈຸບັນ ຈະເຮັດໃຫ້ເກີດຢຸດການຂະຫຍາຍການສຶກສາຊັ້ນມັດທະຍົມຕອນຕົ້ນໄປສູ່ເຂດຊົນນະບົດ ຫຼື ເຂດຫ່າງໄກສອກຫຼີກ ເຊິ່ງນັ້ນຖືເປັນມາດຖານສໍາຄັນ ເມື່ອທຽບກັບເຂດໃນເມືອງ ຫຼື ຊານເມືອງ. ສະຫຼຸບແລ້ວ, ສິ່ງນີ້ຈະສົ່ງຜົນໃຫ້ລະບົບຖືກຈຳກັດ ຢູ່ໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ໂດຍອາດໄດ້ຮັບຄຸນນະພາບຂອງການບໍລິການທີ່ດ້ອຍກວ່າ ຫຼື ອາດບໍ່ມີເລີຍ. | | | ທົບທວນຄືນຢຸດສະງັກ ຫຼື ຂາດການຕໍ່ເນື່ອງ. ພ້ອມດຽວກັນ, ງົບປະມານທີ່ຈະຊ່ວຍສະໜັບສະໜູນການປ່ຽນແປງດັ່ງກ່າວກໍ່ອາດບໍ່ມີພຽງພໍ.<br>ເພື່ອເປັນການຫຼຸດຜ່ອນຄວາມສ່ຽງດັ່ງກ່າວ, ໃນຂະບວນການ ການສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ແມ່ນໄດ້ມີການປຶກສາຫາລືກັບບັນດາຄູ່ຮ່ວມພັດທະນາ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອເປັນການສະໜັບສະໜູນຂະແໜງການ ໃຫ້ສາມາດບັນລຸການສຶກສາຊັ້ນມັດທະຍົມຕອນຕົ້ນຢ່າງທົ່ວເຖິງ ແລະ ເທົ່າທຽມ.<br>ໃນກໍລະນີທີ່ ການປັບປຸງໂຄງຮ່າງຄືນບໍ່ສາມາດຈັດຕັ້ງປະຕິບັດໄດ້ ຕາມການສະເໜີນັ້ນ, ມັນມີຄວາມຈໍາເປັນ ຈະຕ້ອງໄດ້ຊອກຫາວິທີທາງອື່ນທີ່ເປັນໄປໄດ້ ໃນການສະໜອງການສຶກສາຊັ້ນມັດທະຍົມຕອນຕົ້ນ ຢ່າງທົ່ວເຖິງ ແລະ ເທົ່າທຽມ. |
| ຄວາມອາດສາມາດໃນການຮັບມື ຂອງກະຊວງສຶກສາທິການ ແລະ ກິລາ ຍັງບໍ່ທັນພຽງພໍ ໃນການຈັດຕັ້ງປະຕິບັດໂດຍພື້ນຖານວິທີການໃໝ່ນີ້[35]. | ສູງ | ສູງ | ແຜນງານຕ່າງໆທີ່ ໄດ້ຮັບການສະໜັບສະໜູນທາງການເງິນຈາກພາຍນອກ ໂດຍການນໍາໃຊ້ຮູບແບບວິທີການໃໝ່ ເຊັ່ນ: LESMIS, ໂປຣແກຣມ GIS ສໍາລັບການຕອບໂຕ້ໄພພິບັດ ແລະ ການຮຽນທາງໄກ, ລວມເຖິງການສະໜັບສະໜູນທີ່ພຽງພໍ ເພື່ອໃຫ້ພະນັກງານທີ່ກ່ຽວຂ້ອງ ພາຍໃນກະຊວງສຶກສາທິການ ແລະ ກິລາ ມີເວລາເພີ່ມຕື່ມໃນການທໍາຄວາມເຂົ້າໃຈ ແລະ ຈັດຕັ້ງປະຕິບັດວິທີການໃໝ່ນີ້ ພ້ອມທັງ ການຈ່າຍເງິນເດືອນໃຫ້ແກ່ພະນັກງານພາຍນອກ ໃນຂັ້ນທ້ອງຖິ່ນ ໃນໄລຍະສັ້ນ ຫຼື ໄລຍະກາງ. |
| **ພາຍນອກ** | | | |
| ຜົນກະທົບຈາກໄພພິບັດ ເປັນອຸປະສັກກີດຂວາງ ຕໍ່ຄວາມຄືບໜ້າຂອງຂະແໜງການ.<br>ຂະແໜງການສຶກສາ, ນັກຮຽນ ແລະ ຊຸມຊົນທີ່ໃຫ້ບໍລິການການສຶກສາ ແມ່ນ ມີຄວາມສ່ຽງຕໍ່ຜົນກະທົບຂອງໄພພິບັດ ໂດຍສະເພາະຜົນກະທົບຈາກໄພນໍ້າຖ້ວມທີ່ເກີດຂຶ້ນໃນແຕ່ລະປີ. ໄພນໍ້າຖ້ວມ ສາມາດທໍາລາຍຊັບພະຍາກອນຕ່າງໆພາຍໃນໂຮງຮຽນ ເປັນຕົ້ນແມ່ນ ປຶ້ມແບບຮຽນ | ປານກາງ | ສູງ (ບາງກໍລະນີ) | ໄພພິບັດຕ່າງໆທີ່ເກີດຂຶ້ນໂດຍບໍ່ຄາດຄິດ ໄດ້ການເປັນສິ່ງທ້າທາຍທີ່ໜັກໜ່ວງ ໃຫ້ແກ່ການພັດທະນາວິທີການ ແລະ ລະບົບຕ່າງໆໃນການຫຼຸດຜ່ອນຄວາມສ່ຽງ, ສະນັ້ນ ມັນຈໍາເປັນຕ້ອງໄດ້ມີການທົບທວນຄືນຢ່າງກວ້າງຂວາງ ເຖິງວິທີການທີ່ຈະຊ່ວຍຫຼຸດຜ່ອນຄວາມສ່ຽງດັ່ງກ່າວ. ໝາຍຄວາມວ່າ, ມັນມີຄວາມຈໍາເປັນ ຕ້ອງໄດ້ສ້າງພື້ນຖານສໍາຄັນຂອງລະບົບຕອບໂຕ້ກັບໄພພິບັດ ຜ່ານລະບົບຂໍ້ມູນຂ່າວສານ |

[35] ຕົວຢ່າງຜ່ານມາໃຫ້ເຫັນ ແມ່ນມີ ໂຄງການ BEQUAL ສະໜັບສະໜູນການສ້າງລະບົບ ອີເມວ ໃນ ສສກ ໂດຍນໍາໃຊ້ Microsoft Exchange ແລະ ການນໍາໃຊ້ ICT ໃນທົ່ວທຸກແຂວງ ໃນໂຄງການ ICT

| | | | |
|---|---|---|---|
| ເຟີນີເຈີ ລວມໄປເຖິງພື້ນຖານໂຄງລ່າງອື່ນໆ. ມັນມີຄວາມເປັນໄປໄດ້ ທີ່ການປ່ຽນແປງຂອງດິນຟ້າອາກາດ, ການຂະຫຍາຍເຂື່ອນໄຟຟ້າ ແລະ ການຕັດໄມ້ທຳລາຍປ່າ ໃນ ສປປ ລາວ ສິ່ງຜົນກະທົບໃຫ້ໄພນ້ຳຖ້ວມ ມີຄວາມຮຸນແຮງຂຶ້ນເລື້ອຍໆ. ພ້ອມດຽວກັນ, ຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານ ທີ່ເກີດຈາກສະພາບການປ່ຽນແປງຂອງດິນຟ້າອາກາດ ຫຼື ສະພາບແວດລ້ອມ ຍັງເປັນອຸປະສັກທີ່ຊັດເຈນຕໍ່ນັກຮຽນ ແລະ ຊຸມຊົນ.<br>ໃນຊ່ວງຜ່ານມານີ້ ຍັງເຫັນໄດ້ອີກວ່າ ໂລກລະບາດ ຫຼື ພະຍາດທີ່ເກີດຂຶ້ນ (ເຊັ່ນ Covid-19) ຍັງເປັນໄພຄຸກຄາມອັນໃຫຍ່ຫຼວງ ໃຫ້ແກ່ສັງຄົມ ແລະ ລະບົບເສດຖະກິດ ພາຍໃຕ້ການບໍລິການຂອງລັດ.<br>ນອກຈາກນີ້, ການລະບາດຂອງພະຍາດ Covid-19 ໄເຮັດໃຫ້ມີການເອົາໃຈໃສ່ຫຼາຍຂຶ້ນຕໍ່ກັບຄວາມຈຳເປັນໃນການຮັບປະກັນການສະໜອງສະພາບແວດລ້ອມທີ່ປອດໄພ ໃນທຸກໂຮງຮຽນ ເຊັ່ນ: ການສະໜອງຫ້ອງນ້ຳ, ອ່າງລ້າງມື ແລະ ນ້ຳດື່ມສະອາດໃນໂຮງຮຽນ. ຖ້າຫາກວ່າແຜນຮັບມືສຸກເສີນກັບໄພພິບັດ ສຳລັບຂະແໜງການສຶກສາ ແມ່ນການກວມເອົາມາດຕະການປ້ອງກັນໄພພິບັດ ເຊັ່ນດຽວກັບ ມາດຕະການຕອບໂຕ້ແບບຮີບດ່ວນນັ້ນ, ເຮົາກໍສາມາດຄາດການໄດ້ວ່າຈະມີຍຸດທະສາດທີ່ສຳຄັນນີ້ກວມລວມຢູ່ນຳ. | | | ທີ່ເຂັ້ມແຂງ ເພື່ອໃຫ້ສາມາດລະບຸທີ່ຕັ້ງ, ຄວາມຮ້າຍແຮງ ແລະ ຜົນກະທົບຂອງໄພພິບັດ, ພ້ອມທັງ ຖ້າເປັນໄປໄດ້ ໃຫ້ມີການເຕືອນໄພລ່ວງໜ້າ, ວິທີການປ້ອງກັນ ແລະ ມາດຕະການຕອບໂຕ້ ກັບໄພພິບັດນັ້ນໆ.<br>ກະຊວງສຶກສາທິການ ແລະ ກິລາ ໄດ້ໃຫ້ຄຳໝັ້ນສັນ ຍາ ໃນການກະກຽມງົບປະມານສຸກເສີນໃນການຮັບມືກັບໄພພິບັດຕໍ່ຂະແໜງການ ເຊິ່ງນີ້ໄດ້ລວມເອົາໂປຣແກຣມ GIS ສຳລັບການຕິດຕາມ ແລະ ວາງແຜນກຽມຄວາມພ້ອມ ເພື່ອຕອບໂຕ້ກັບໄພພິບັດ ໂດຍໃຫ້ເຊື່ອມໂຍງກັບລະບົບ LESMIS ໃໝ່.<br>ຄວາມຮູ້ໃນຂັ້ນທ້ອງຖິ່ນ ໃນການພັດທະນາຫຼັກການ ແລະ ຂະບວນການຕ່າງໆໃນການຕອບໂຕ້ກັບໄພພິບັດທີ່ເປັນໄປຕາມມາດຖານແຫ່ງຊາດ ແຕ່ໃນຂະນະດຽວກັນ ໃຫ້ສາມາດປັບປ່ຽນໄດ້ໄປຕາມສະພາບຂອງແຕ່ລະທ້ອງຖິ່ນ ແມ່ນເປັນສິ່ງສຳຄັນທີ່ຈະຕ້ອງໄດ້ພັດທະນາຂຶ້ນ ແລະ ນຳໃຊ້ໃນທົ່ວປະເທດ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ.<br>ບ້ວງງົບປະມານສຸກເສີນ ທີ່ສາມາດລະດົມເພື່ອຕອບໂຕ້ກັບໄພພິບັດ ແມ່ນເປັນສິ່ງທ້າທາຍສຳລັບຂະແໜງການສຶກສາ ເນື່ອງຈາກງົບປະມານໃນປະຈຸບັນແມ່ນມີຈຳກັດ ແລະ ມີທ່າອ່ຽງວ່າງົບປະມານທີ່ຕ້ອງການຈະຕ້ອງໄດ້ອີງໃສ່ຈາກພາຍນອກ. ແຜນຕອບໂຕ້ໄພພິບັດສຸກເສີນ ຈະຕ້ອງໄດ້ລະບຸຂົງເຂດທີ່ເປັນທ່າແຮງທັງໃນລະດັບຊາດ ແລະ ທ້ອງຖິ່ນ ເຖິງແຫຼ່ງຊັບພະຍາກອນ ແລະ ການສະໜັບສະໜູນຕ່າງໆ. ໃນບ່ອນທີ່ເປັນໄປໄດ້ ແມ່ນຈະຕ້ອງໄດ້ມີການທົບທວນຄືນ ຄວາມອາດສາມາດໃນການສ້າງລະບົບຄັງສິນຄ້າ (ທາງເລືອກໜຶ່ງແມ່ນຮັກສາປຶ້ມແບບຮຽນຢູ່ຂັ້ນເມືອງ ແລະ ວິທີນັ້ນ ແມ່ນສາມາດປະສານກັບ TAC ໃນການພັດທະນາຫຼັກການຕ່າງໆໃນການຈັດບູລິມະສິດ ໃນການສະໜອງປຶ້ມແບບຮຽນ) . |
| COVID-19 | ປານກາງ | ປານກາງ | ການລະບາດຂອງພະຍາດ Covid-19 ທີ່ມີໃນປະຈຸບັນ ໄດ້ເຮັດໃຫ້ມີການເອົາໃຈໃສ່ຫຼາຍຂຶ້ນຕໍ່ກັບຄວາມຈຳເປັນ ໃນການຮັບປະກັນການສະໜອງສະພາບແວດລ້ອມທີ່ປອດໄພ ໃນທຸກໂຮງຮຽນ ເຊັ່ນ: ການສະໜອງຫ້ອງນ້ຳ, ອ່າງລ້າງມື ແລະ ນ້ຳດື່ມສະອາດໃນໂຮງຮຽນ. ຖ້າຫາກວ່າແຜນຮັບມືສຸກເສີນກັບໄພພິບັດ ສຳລັບຂະແໜງການສຶກສາ ແມ່ນການກວມເອົາມາດຕະການປ້ອງກັນໄພພິບັດ ເຊັ່ນດຽວກັບ ມາດຕະການຕອບໂຕ້ແບບຮີບດ່ວນນັ້ນ, ເຮົາກໍ |

| | | | |
|---|---|---|---|
| | | | ສາມາດຄາດການໄດ້ວ່າ ຈະມີຍຸດທະສາດທີ່ສຳຄັນນີ້ ກອມລອມຢູ່ນຳ. |
| **ຂອບເຂດຂອງແຜນ** | | | |
| ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ແມ່ນເປັນແຜນທີ່ລັກສະນະສູງເກີນຄວາມເປັນຈິງ ໂດຍສະເພາະໃນແງ່ຂອງການປະຕິຮູບ ການບໍລິຫານ-ຄຸ້ມຄອງ.<br>ດັ່ງທີ່ຮັບຮູ້ກັນວ່າ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ໂດຍລວມ ແມ່ນມີລັກສະນະໄກຄວາມເປັນຈິງ, ແຜນດັ່ງກ່າວ ໄດ້ຖືກອອກແບບມາໃນທາງປະຕິບັດ. ໃນຂະນະທີ່ແຕ່ລະນະໂຍບາຍ ຫຼື ການຂະຫຍາຍການບໍລິການການສຶກສາ ອາດສາມາດຈັດຕັ້ງປະຕິບັດໄດ້ດ້ວຍຕົວຂອງມັນເອງ, ຮູບແບບນະໂຍບາຍລວມ ອາດຈະຍຶດແຫຼ່ງທຶນທີ່ສະໜອງໃຫ້ຂະແໜງການ ແລະ ຄວາມອາດສາມາດໃນການປະຕິຮູບຢູ່ພາຍໃນຂະແໜງການເອງ. ໃນແງ່ຂອງງົບປະມານ, ໃນແບບຈຳລອງທາງດ້ານງົບປະມານທີ່ເນັ້ນໃສ່ປັບປຸງຄຸນນະພາບການສຶກສານັ້ນ, ຄວາມຕ້ອງການດ້ານງົບປະມານ ແມ່ນມີສູງກວ່າທີ່ຂະແໜງການໄດ້ຮັບໃນປັດຈຸບັນ, ແຕ່ເມື່ອເບິ່ງສັດສ່ວນ ທຽບໃສ່ລາຍຈ່າຍຂອງລັດຖະບານແລ້ວ ແມ່ນບໍ່ຖືວ່າຕ້ອງການສູງເກີນໄປ ໂດຍສະເພາະຢ່າງຍິ່ງ ເມື່ອມີການສະໜັບສະໜູນເພີ່ມຕື່ມຈາກຄູ່ຮ່ວມພັດທະນາ. ຂົງເຂດດຽວທີ່ເປັນວ່າມີຄວາມສ່ຽງສູງ ແມ່ນກ່ຽວພັນກັບການບໍລິຫານ-ຄຸ້ມຄອງ ເຊິ່ງຖືວ່າຍັງຍາກທີ່ຈະບັນລຸໄດ້.<br>ເປັນເວລາຫຼາຍປີ ທີ່ຂະແໜງການໄດ້ຮັບງົບປະມານທີ່ຈຳກັດ ແລະ ກໍ່ມີທ່າອ່ຽງວ່າຈະຮ້າຍແຮງຂຶ້ນເນື່ອງຈາກຜົນກະທົບຂອງ Covid-19. ງົບປະມານບໍລິຫານປົກກະຕິ ບໍ່ມີທ່າອ່ຽງວ່າຈະເພີ່ມຂຶ້ນໄດ້ຕາມຄວາມຕ້ອງການ ເພື່ອຮັບໃຊ້ເຂົ້າໃນການປັບປຸງຄຸນນະພາບ, ພ້ອມດຽວກັນ ຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານ ແລະ ຄວາມທຸກຍາກ ພັດມີທ່າອ່ຽງເພີ່ມຂຶ້ນ ເຊິ່ງສົ່ງຜົນກະທົບທາງລົບ ໃນການສະໜອງການສຶກສາ ໂດຍສະເພາະໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ.<br>ທຸກການປະຕິຮູບ ລະບົບການບໍລິຫານ-ຄຸ້ມຄອງ ທີ່ລະບຸໄວ້ໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ຈະບໍ່ສາມາດບັນລຸໄດ້. ການປະຕິຮູບພາຍໃນລະບົບແມ່ນໂດຍລວມແລ້ວ ມີຄວາມທ້າທາຍສູງກວ່າການບັນລຸການຂະຫຍາຍການບໍລິການ ການສຶກ | ສູງຫຼາຍ | ສາມາດ ປຶກສາກັນໄດ້ຕື່ມ | ການຈັດສັນຊັບພະຍາກອນ ຢ່າງມີປະສິດທິພາບ ແລະ ເທົ່າທຽມນັ້ນ ຈຳເປັນຕ້ອງມີວິທີການ ແລະ ຫຼັກການຄຸ້ມຄອງທີ່ມີປະສິດທິພາບ ພາຍໃຕ້ລະບົບຂໍ້ມູນຂ່າວສານທີ່ເຊື່ອຖືໄດ້. ມີຫຼາຍຂົງເຂດທີ່ຂະແໜງ ການສຶກສາ ສາມາດປັບປຸງ ແລະ ສ້າງຄວາມເຂັ້ມ ແຂງໃນການບໍລິຫານ-ຄຸ້ມຄອງ ແລະ ແຜນພັດທະ ນາຂະແໜງການສຶກສາ ແລະ ກິລາ 2021-2025 ມີຂອບເຂດຈຳກັດ ໃນການສຸມໃສ່ບັນດາຂົງເຂດດັ່ງ ກ່າວ. ດັ່ງນັ້ນ ການປັບປຸງສ່ວນໃຫຍ່ອາດໃຫ້ເນັ້ນໃສ່ການປັບປຸງທາງດ້ານຄວາມເທົ່າທຽມ ແລະ ປະສິດ ທິພາບໃນການຈັດສັນຊັບພະຍາກອນຕ່າງໆ.<br>ບາງຄູ່ຮ່ວມງານພາຍນອກ, ອາດດ້ວຍບູລິມະສິດຂອງອົງການຈັດຕັ້ງຂອງຕົນ, ຕ້ອງການທີ່ຈະສະໜັບສະໜູນການປະຕິຮູບການບໍລິຫານ-ຄຸ້ມຄອງ ທີ່ງົບ ປະມານລັດອາດບໍ່ພຽງພໍໃນການຈັດຕັ້ງປະຕິບັດ.<br>ເວົ້າລວມແລ້ວ, ອາດແມ່ນຄວາມຈິງທີ່ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ໄດ້ລະບຸກ່ຽວກັບການປະຕິຮູບ ຫຼາຍເກີນໄປ. ຈາກປະສົບການຜ່ານມາ ສະແດງໃຫ້ເຫັນວ່າ ບາງການປະຕິຮູບອາດຖືກຍຸດຕິ ໃນຂະນະທີ່ບາງການປະ ຕິຮູບສາມາດດຳເນີນໄປໄດ້. ແຕ່ທີ່ສຳຄັນທີ່ສຸດໃນການນຳສະເໜີບັນດາການປະຕິຮູບທີ່ເປັນບູລິມະສິດເຫຼົ່ານີ້ ແມ່ນມັນມີຄວາມເປັນໄປໄດ້ທີ່ ບາງການປະຕິຮູບອາດດຳເນີນໄປຕໍ່ ແລະ ບາງການປະຕິຮູບອາດສະໜັບສະໜູນໃຫ້ມີການປັບປຸງ ໃຫ້ເກີດຄວາມເທົ່າທຽມ ແລະ ມີປະສິດທິພາບ ພາຍໃຕ້ຊັບພະຍາກອນທີ່ມີຢູ່. ສະຫຼຸບແລ້ວ, ຖ້າການກຳນົດການປະຕິຮູບໃດໜຶ່ງທີ່ໄກເກີນຈິງ ຊ່ວຍໃຫ້ເກີດມີການປະຕິຮູບອີກຢ່າງໜຶ່ງດຳເນີນໄປໄດ້ ມັນກໍ່ອາດຄຸ້ມຄ່າທີ່ຈະສ່ຽງ. |

| | | | |
|---|---|---|---|
| ສາ ຫຼື ການປັບປ່ຽນຫຼັກສູດການຮຽນ. ໃນການປະຕິຮູບລະບົບ, ມັນມີຄວາມຈຳເປັນຕ້ອງໄດ້ເຈລະຈາ ແລະ ຕົກລົງເປັນເອກະພາບກັບຫຼາຍໆກະຊວງ ແລະ ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ເຊິ່ງນັ້ນອາດເປັນອຸປະສັກອັນໃຫຍ່ຫຼວງໃນປະຕິບັດ. ການປະຕິຮູບບາງຂໍ້ ອາດຕ້ອງຢຸດໄປດ້ວຍເຫດຜົນບາງປະການ ແຕ່ໃນອີກດ້ານໜຶ່ງ ມັນອາດເປັນຈຸດເລີ່ມຕົ້ນທີ່ດີ ໃນການດຳເນີນການປະຕິຮູບຂໍ້ອື່ນໆ. ບາງການປະຕິຮູບ ອາດມີອຸປະສັກໜ້ອຍກວ່າຂໍ້ອື່ນໆ ແລະ ບາງຂໍ້ອາດສາມາດດຶງດູດການສະໜັບສະໜູນຈາກອົງການຈັດຕັ້ງອື່ນໆຂອງລັດຖະບານ ເຊິ່ງອາດເປັນເຫດຜົນໃຫ້ສາມາດລະດົມທຶນຢ່າງພຽງພໍໃນການຫັນປ່ຽນໄປສູ່ລະບົບໃໝ່ (ຕົວຢ່າງ: ການປະຕິຮູບກ່ຽວກັບການລາຍງານການໃຊ້ຈ່າຍທີ່ຊັດເຈນ ອາດໄດ້ຮັບການສະໜັບສະໜູນທີ່ດີ ຈາກອົງການກວດສອບແຫ່ງລັດ ເປັນຕົ້ນ) | | | |

## ເອກະສານຊ້ອນທ້າຍທີ 6: ການຄາດຄະເນຈຳນວນນັກຮຽນ ແລະ ງົບປະມານທີ່ຕ້ອງການ[36]

### 1. ແຜນຂະແໜງການຍ່ອຍ ການສຶກສາກ່ອນໄວຮຽນ

**ຕາຕະລາງ 1: ຄາດຄະເນຈຳນວນນັກຮຽນໃນຊັ້ນການສຶກສາກ່ອນໄວຮຽນ**

| | 2020-21 | 2021-22 | 2022-23 | 2023-24 | 2024-25 |
|---|---|---|---|---|---|
| ອັດຕາເຂົ້າຮຽນຂອງເດັກ 5 ປີ (%) | 83,3 | 84,0 | 84,7 | 85,3 | 86,0 |
| ຈຳນວນນັກຮຽນທັງໝົດ (3-5 ປີ) | 240.437 | 248.315 | 256.370 | 264.607 | 273.029 |
| ຈຳນວນຄູສອນ ແລະ ພະນັກງານ ທັງໝົດ (ສະເພາະພາກລັດ) | 8.273 | 8.513 | 8.757 | 9.005 | 9.257 |
| ຈຳນວນຄູສອນ ແລະ ພະນັກງານທີ່ຕ້ອງການ ບັນຈຸໃໝ່ (ສະເພາະພາກລັດ) | 437 | 447 | 457 | 467 | 252 |
| ຈຳນວນຫ້ອງຮຽນທັງໝົດ(ສະເພາະພາກລັດ) | 8.608 | 8.897 | 9.192 | 9.495 | 9.804 |
| ຈຳນວນຫ້ອງຮຽນທີ່ຕ້ອງການສ້າງໃໝ່ (ສະເພາະພາກລັດ) | 282 | 289 | 295 | 303 | 310 |
| ຈຳນວນຫ້ອງຮຽນທີ່ຕ້ອງການສ້າງທົດແທນ (ສະເພາະພາກລັດ) | 86 | 89 | 92 | 95 | 98 |

**ຕາຕະລາງ 2: ຄາດຄະເນງົບປະມານສຳລັບການສຶກສາກ່ອນໄວຮຽນ (ລ້ານກີບ)**

| ການສຶກສາກ່ອນໄວຮຽນ | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| **ງົບປະມານບໍລິຫານປົກກະຕິ** | 328.444 | 341.027 | 353.982 | 367.319 | 381.048 |
| ງົບປະມານເງິນເດືອນ | 300.800 | 312.617 | 324.793 | 337.337 | 350.259 |
| ງົບອຸດໜູນ ແລະ ນະໂຍບາຍຕ່າງໆ | 6.618 | 6.810 | 7.005 | 7.204 | 7.406 |
| ງົບອຸດໜູນນ້ຳມັນ | 6.013 | 6.187 | 6.364 | 6.545 | 6.728 |
| ງົບບໍລິຫານໂຮງຮຽນ | 9.629 | 9.910 | 10.197 | 10.488 | 10.785 |
| ງົບສຳລັບຝຶກອົບຮົມຄູ | 2.068 | 2.128 | 2.189 | 2.251 | 2.314 |
| ມູນຄ່າອາຫານໃນໂຮງຮຽນ (ງົບລັດ) | 1.595 | 1.595 | 1.595 | 1.595 | 1.595 |
| ງົບສຳລັບປຶ້ມແບບຮຽນ ແລະ ຄູ່ມືຄູ | 1.722 | 1.779 | 1.838 | 1.899 | 1.961 |
| **ງົບປະມານລົງທຶນ** | 71.101 | 72.658 | 74.249 | 75.876 | 77.538 |
| ມູນຄ່າກໍ່ສ້າງໃໝ່ | 42.290 | 43.297 | 44.325 | 45.375 | 46.448 |
| ມູນຄ່າການກໍ່ສ້າງທົດແທນ | 12.912 | 13.345 | 13.788 | 14.242 | 14.706 |
| ມູນຄ່າສ້ອມແປງ ແລະ ບຳລຸງຮັກສາ | 3.443 | 3.559 | 3.677 | 3.798 | 3.922 |
| ມູນຄ່າການສະໜອງສິ່ງອຳນວຍຄວາມ ສະດວກ ທາງດ້ານສຸຂະອານາໄມ | 42 | 42 | 42 | 42 | 42 |
| ມູນຄ່າການສ້າງທົດແທນສິ່ງອຳນວຍ ຄວາມສະດວກ ທາງດ້ານສຸຂະອານາໄມ | 1.841 | 1.842 | 1.844 | 1.845 | 1.847 |
| ມູນຄ່າອາຫານໃນໂຮງຮຽນ (ງົບພາຍ ນອກ) | 10.574 | 10.574 | 10.574 | 10.574 | 10.574 |

[36] ຕາມແບບຈຳລອງຄວາມຕ້ອງການດ້ານງົບປະມານໃນກໍລະນີ "ໄດ້ຮັບງົບປະມານໃນລະດັບເທົ່າເດີມ" (Steady state)

| ລວມທັງໝົດ | 399.546 | 413.685 | 428.231 | 443.195 | 458.586 |
|---|---|---|---|---|---|

ຕາຕະລາງ 3: ຄາດຄະເນງົບປະມານຈາກພາຍນອກ (ລ້ານກີບ)

| | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ການສຶກສາກ່ອນໄວຮຽນ | 50.638 | 48.855 | 48.969 | 43.036 | 43.036 |

## 2. ແຜນຂະແໜງການຍ່ອຍ ການສຶກສາຊັ້ນປະຖົມ

ຕາຕະລາງ 4: ຄາດຄະເນຈຳນວນນັກຮຽນໃນການສຶກສາຊັ້ນປະຖົມ

| | 2020-21 | 2021-22 | 2022-23 | 2023-24 | 2024-25 |
|---|---|---|---|---|---|
| ອັດຕາຄ້າງຫ້ອງ ປ.1 (%) | 5,8 | 5,2 | 4,6 | 4,0 | 3,4 |
| ອັດຕາຄ້າງຫ້ອງຊັ້ນປະຖົມ (%) | 2,8 | 2,5 | 2,2 | 1,8 | 1,5 |
| ອັດຕາປະລະ ປ.1 (%) | 5,7 | 5,1 | 4,5 | 3,8 | 3,2 |
| ອັດຕາປະລະຊັ້ນປະຖົມ (%) | 3,9 | 3,4 | 3,0 | 2,5 | 2,1 |
| ຈຳນວນນັກຮຽນທັງໝົດ (ລັດ ແລະ ເອກະຊົນ) | 758.971 | 763.251 | 771.376 | 79.595 | 790.765 |
| ຄູສອນ ແລະ ພະນັກງານທັງໝົດ (ພາກລັດ) | 29.813 | 30.013 | 30.365 | 30.722 | 31.195 |
| ຈຳນວນຫ້ອງຮຽນທັງໝົດ (ພາກລັດ) | 36.293 | 36.250 | 36.389 | 36.532 | 36.810 |
| ຈຳນວນຫ້ອງຮຽນທີ່ຕ້ອງການໃໝ່ (ພາກລັດ) | 0 | 0 | 139 | 142 | 278 |
| ຈຳນວນຫ້ອງຮຽນທີ່ຕ້ອງການສ້າງທົດແທນ (ພາກລັດ) | 363 | 362 | 364 | 365 | 368 |

ຕາຕະລາງ 5: ຄາດຄະເນງົບປະມານສຳລັບການສຶກສາຊັ້ນປະຖົມ (ລ້ານກີບ)

| ການສຶກສາຊັ້ນປະຖົມ | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| **ງົບປະມານບໍລິຫານປົກກະຕິ** | 845.531 | 864.192 | 887.874 | 916.112 | 945.385 |
| ງົບປະມານເງິນເດືອນ | 724.519 | 739.115 | 759.558 | 780.502 | 806.217 |
| ງົບອຸດໜູນ ແລະ ນະໂຍບາຍຕ່າງໆ | 15.941 | 16.101 | 16.383 | 16.668 | 17.046 |
| ງົບອຸດໜູນນ້ຳມັນ | 15.329 | 15.483 | 15.754 | 16.028 | 16.392 |
| ງົບເບ້ຍລ້ຽງ | 1.350 | 2.700 | 4.050 | 5.400 | 6.750 |
| ງົບບໍລິຫານໂຮງຮຽນ | 49.268 | 49.594 | 50.172 | 50.756 | 51.534 |
| ເງິນສອບເສັງ | 7.642 | 7.659 | 7.892 | 7.962 | 8.175 |
| ງົບສຳລັບຝຶກອົບຮົມຄູ | 7.453 | 7.503 | 7.591 | 7.680 | 7.799 |
| ເງິນຊື້ປຶ້ມທົດແທນ | 14.999 | 17.007 | 17.445 | 22.087 | 22.442 |
| ມູນຄ່າອາຫານໃນໂຮງຮຽນ (ງົບລັດ) | 9.030 | 9.030 | 9.030 | 9.030 | 9.030 |
| **ງົບປະມານລົງທຶນ** | 202.988 | 202.896 | 208.988 | 158.629 | 179.564 |
| ມູນຄ່າກໍ່ສ້າງໃໝ່ | 0 | 0 | 20.909 | 21.368 | 41.752 |
| ມູນຄ່າການກໍ່ສ້າງທົດແທນ | 54.439 | 54.375 | 54.584 | 54.798 | 55.215 |
| ມູນຄ່າສ້ອມແປງ ແລະ ບຳລຸງຮັກສາ | 14.517 | 14.500 | 14.556 | 14.613 | 14.724 |

| | | | | | |
|---|---|---|---|---|---|
| ມູນຄ່າການກໍ່ສ້າງໂຮງຮຽນສໍາລັບເດັກພິການ | 2.000 | 2.000 | 2.000 | 2.000 | 2.000 |
| ມູນຄ່າການສະໜອງສິ່ງອໍານວຍຄວາມສະດວກ ທາງດ້ານສຸຂະອານາໄມ | 662 | 662 | 662 | 662 | 662 |
| ມູນຄ່າການສ້າງທົດແທນສິ່ງອໍານວຍຄວາມສະດວກ ທາງດ້ານສຸຂະອານາໄມ | 5.273 | 5.295 | 5.317 | 5.339 | 5.361 |
| ງົບພິມປຶ້ມໃໝ່ (ຫຼັກສູດໃໝ່ ໂດຍ Bequal/Jica) | 14.073 | 13.691 | 13.153 | 0 | 0 |
| ງົບຝຶກອົບຮົມຄູ (ຫຼັກສູດໃໝ່) | 52.173 | 52.523 | 37.957 | 0 | 0 |
| ມູນຄ່າອາຫານໃນໂຮງຮຽນ (ງົບພາຍນອກ) | 59.850 | 59.850 | 59.850 | 59.850 | 59.850 |
| **ລວມທັງໝົດ** | **1.048.518** | **1.067.088** | **1.096.862** | **1.074.742** | **1.124.949** |

**ຕາຕະລາງ 6: ຄາດຄະເນງົບປະມານຈາກພາຍນອກ (ລ້ານກີບ)**

| | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ການສຶກສາຊັ້ນປະຖົມ | 84.669 | 164.527 | 171.606 | 171.901 | 171.901 |

## 3. ແຜນຂະແໜງການຍ່ອຍ ການສຶກສາຊັ້ນມັດທະຍົມຕອນຕົ້ນ

**ຕາຕະລາງ 7: ຄາດຄະເນຈໍານວນນັກຮຽນໃນການສຶກສາຊັ້ນມັດທະຍົມຕອນຕົ້ນ**

| | 2020-21 | 2021-22 | 2022-23 | 2023-24 | 2024-25 |
|---|---|---|---|---|---|
| ອັດຕາເລື່ອນຊັ້ນຂຶ້ນ ມ.1 ທຽບໃສ່ນັກຮຽນຈົບ ປ.5 (%) | 89,4 | 90,8 | 92,2 | 93,6 | 95 |
| ຈໍານວນນັກຮຽນທັງໝົດ (ພາກລັດ) | 403.506 | 396.959 | 396.727 | 405.683 | 418.126 |
| ຈໍານວນນັກຮຽນທັງໝົດ (ພາກລັດ ແລະ ເອກະຊົນ) | 420.644 | 414.171 | 414.281 | 423.994 | 437.371 |
| ຄູສອນ ແລະ ພະນັກງານທັງໝົດ (ພາກລັດ) | 20.670 | 20.340 | 20.334 | 20.799 | 21.442 |
| ຈໍານວນຫ້ອງຮຽນທັງໝົດ (ພາກລັດ) | 17.286 | 17.068 | 17.121 | 17.573 | 18.179 |
| ຈໍານວນຫ້ອງຮຽນທີ່ຕ້ອງການໃໝ່ (ພາກລັດ) | 0 | 0 | 53 | 452 | 606 |
| ຈໍານວນຫ້ອງຮຽນທີ່ຕ້ອງການສ້າງທົດແທນ (ພາກລັດ) | 176 | 173 | 171 | 171 | 176 |

**ຕາຕະລາງ 8: ຄາດຄະເນງົບປະມານສໍາລັບການສຶກສາຊັ້ນມ.ຕົ້ນ (ລ້ານກີບ).**

| **ການສຶກສາຊັ້ນມັດທະຍົມຕອນຕົ້ນ** | **2021** | **2022** | **2023** | **2024** | **2025** |
|---|---|---|---|---|---|
| **ງົບປະມານບໍລິຫານປົກກະຕິ** | 860.974 | 856.120 | 863.340 | 890.783 | 926.434 |

| | | | | | |
|---|---|---|---|---|---|
| ງົບປະມານເງິນເດືອນ | 772.435 | 767.711 | 775.149 | 800.794 | 833.838 |
| ງົບອຸດໜູນ ແລະ ນະໂຍບາຍຕ່າງໆ | 16.536 | 16.272 | 16.267 | 16.639 | 17.154 |
| ງົບອຸດໜູນນ້ຳມັນ | 14.425 | 14.159 | 14.154 | 14.528 | 15.047 |
| ງົບບໍລິຫານໂຮງຮຽນ | 28.245 | 27.787 | 27.771 | 28.398 | 29.269 |
| ງົບເບ້ຍລ້ຽງ | 4.050 | 5.400 | 5.400 | 5.400 | 5.400 |
| ງົບສອບເສັງ | 5.292 | 5.148 | 4.994 | 4.999 | 5.097 |
| ງົບສຳລັບຝຶກອົບຮົມຄູ | 5.167 | 5.085 | 5.083 | 5.200 | 5.361 |
| ງົບຊື້ປຶ້ມທົດແທນ | 14.823 | 14.557 | 14.522 | 14.826 | 15.270 |
| **ງົບປະມານລົງທຶນ** | 106.151 | 105.314 | 118.075 | 219.502 | 260.315 |
| ມູນຄ່າກໍ່ສ້າງໃໝ່ | 0 | 0 | 13.285 | 112.879 | 151.622 |
| ມູນຄ່າກໍ່ສ້າງຫໍພັກ | 27.000 | 27.000 | 27.000 | 27.000 | 27.000 |
| ມູນຄ່າການກໍ່ສ້າງທົດແທນ | 43.965 | 43.215 | 42.671 | 42.804 | 43.932 |
| ມູນຄ່າສ້ອມແປງ ແລະ ບຳລຸງຮັກສາ | 6.914 | 6.827 | 6.849 | 7.029 | 7.272 |
| ມູນຄ່າກໍ່ສ້າງຫ້ອງທົດລອງ | 27.000 | 27.000 | 27.000 | 27.000 | 27.000 |
| ມູນຄ່າການສະໜອງສິ່ງອຳນວຍຄວາມສະດວກ ທາງດ້ານສຸຂະອານາໄມ | 0 | 0 | 0 | 0 | 0 |
| ມູນຄ່າການສ້າງທົດແທນສິ່ງອຳນວຍຄວາມສະດວກ ທາງດ້ານສຸຂະອານາໄມ | 1.271 | 1.271 | 1.271 | 1.271 | 1.271 |
| ງົບພິມປຶ້ມໃໝ່ (ຫຼັກສູດໃໝ່) | 0 | 0 | 0 | 1.519 | 2.218 |
| **ລວມທັງໝົດ** | **967.124** | **961.434** | **981.415** | **1.110.284** | **1.186.749** |

**ຕາຕະລາງ 9: ຄາດຄະເນງົບປະມານຈາກພາຍນອກ (ລວມທັງ ມ.ຕົ້ນ ແລະ ມ.ປາຍ) (ລ້ານກີບ)**

| | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ຊັ້ນມັດທະຍົມ | 53.444 | 45.330 | 45.330 | 45.330 | 45.330 |

## 4. ແຜນຂະແໜງການຍ່ອຍ ການສຶກສາຊັ້ນມັດທະຍົມຕອນປາຍ

**ຕາຕະລາງທີ 10: ຄາດຄະເນຈຳນວນນັກຮຽນໃນການສຶກສາຊັ້ນມັດທະຍົມຕອນປາຍ**

| | 2020-21 | 2021-22 | 2022-23 | 2023-24 | 2024-25 |
|---|---|---|---|---|---|
| ອັດຕາເລື່ອນຊັ້ນຂຶ້ນ ມ.5 ທຽບໃສ່ນັກຮຽນຈົບ ມ.4 (%) | 87,7 | 88,3 | 88,8 | 89,4 | 90 |
| ຈຳນວນນັກຮຽນທັງໝົດ (ພາກລັດ) | 194.525 | 196.417 | 199.178 | 199.118 | 98.822 |
| ຈຳນວນນັກຮຽນທັງໝົດ (ພາກລັດ ແລະ ເອກະຊົນ) | 200.106 | 202.162 | 205.115 | 205.165 | 204.971 |
| ຄູສອນ ແລະ ພະນັກງານທັງໝົດ (ພາກລັດ) | 9.476 | 9.572 | 9.709 | 9.710 | 9.699 |
| ຈຳນວນຄູສອນທີ່ຕ້ອງການບັນຈຸໃໝ່ | 0 | 301 | 345 | 211 | 200 |
| ຈຳນວນຫ້ອງຮຽນທັງໝົດ (ພາກລັດ) | 11.818 | 11.324 | 10.926 | 10.417 | 9.941 |
| ຈຳນວນຫ້ອງຮຽນທີ່ຕ້ອງການສ້າງທົດແທນ (ພາກລັດ) | 128 | 118 | 113 | 109 | 104 |

**ຕາຕະລາງ 11: ຄາດຄະເນງົບປະມານສຳລັບການສຶກສາຊັ້ນ ມ.ປາຍ (ລ້ານກີບ)**

| ການສຶກສາຊັ້ນມັດທະຍົມຕອນປາຍ | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| **ງົບປະມານບໍລິຫານປົກກະຕິ** | 344.445 | 351.309 | 360.268 | 363.613 | 366.363 |
| ງົບປະມານເງິນເດືອນ | 306.663 | 313.330 | 321.718 | 324.951 | 327.767 |
| ງົບອຸດໜູນ ແລະ ນະໂຍບາຍຕ່າງໆ | 6.565 | 6.641 | 6.752 | 6.752 | 6.743 |
| ງົບອຸດໜູນນ້ຳມັນ | 6.608 | 6.684 | 6.795 | 6.796 | 6.787 |
| ງົບບໍລິຫານໂຮງຮຽນ | 13.617 | 13.749 | 13.942 | 13.938 | 13.918 |
| ງົບເບ້ຍລ້ຽງ | 0 | 0 | 0 | 0 | 0 |
| ງົບສອບເສັງ | 3.528 | 3.415 | 3.536 | 3.652 | 3.628 |
| ງົບສຳລັບຝຶກອົບຮົມຄູ | 2.052 | 2.075 | 2.110 | 2.110 | 2.107 |
| ງົບຊື້ປຶ້ມທົດແທນ | 5.414 | 5.414 | 5.414 | 5.414 | 5.414 |
| ງົບຊື້ຄອມພິວເຕີ | 0 | 0 | 0 | 0 | 0 |
| **ງົບປະມານລົງທຶນ** | 91.230 | 88.273 | 86.840 | 85.685 | 84.209 |
| ມູນຄ່າກໍ່ສ້າງໃໝ່ | 0 | 0 | 0 | 0 | 0 |
| ມູນຄ່າກໍ່ສ້າງຫໍພັກ | 27.000 | 27.000 | 27.000 | 27.000 | 27.000 |
| ມູນຄ່າການກໍ່ສ້າງທົດແທນ | 32.095 | 29.545 | 28.311 | 27.315 | 26.042 |
| ມູນຄ່າສ້ອມແປງ ແລະ ບຳລຸງຮັກສາ | 5.135 | 4.727 | 4.530 | 4.370 | 4.167 |
| ມູນຄ່າກໍ່ສ້າງຫ້ອງທົດລອງ | 27.000 | 27.000 | 27.000 | 27.000 | 27.000 |
| **ລວມທັງໝົດ** | **435.676** | **439.582** | **447.108** | **449.298** | **450.572** |

**ຕາຕະລາງ 12: ຄາດຄະເນງົບປະມານຈາກພາຍນອກ (ລວມທັງ ມ.ຕົ້ນ ແລະ ມ.ປາຍ) (ລ້ານກີບ)**

| | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ມັດທະຍົມສຶກສາ | 53.444 | 45.330 | 45.330 | 45.330 | 45.330 |

## 5. ແຜນຂະແໜງການຍ່ອຍ ການສຶກສານອກໂຮງຮຽນ

**ຕາຕະລາງ 13: ຄາດຄະເນຈຳນວນນັກຮຽນໃນການສຶກສານອກໂຮງຮຽນ**

| | 2020-21 | 2021-22 | 2022-23 | 2023-24 | 2024-25 |
|---|---|---|---|---|---|
| ຈຳນວນນັກຮຽນ ໃນຫຼັກສູດລຶບລ້າງຄວາມບໍ່ຮູ້ໜັງສື | 4.000 | 4.000 | 4.000 | 4.000 | 4.000 |
| ຈຳນວນນັກຮຽນ ໃນຫຼັກສູດຊັ້ນປະຖົມບຳລຸງ 6-14 ປີ | 5.000 | 5.000 | 5.000 | 5.000 | 5.000 |
| ຈຳນວນນັກຮຽນ ໃນຫຼັກສູດລະດັບປະຖົມສຶກສາບຳລຸງ 15-40 ປີ | 4.200 | 4.200 | 4.200 | 4.200 | 4.200 |
| ຈຳນວນນັກຮຽນ ໃນຫຼັກສູດບຳລຸງຍົກລະດັບຊັ້ນມັດທະຍົມຕອນຕົ້ນ | 28.000 | 28.000 | 28.000 | 28.000 | 28.000 |

| | | | | | |
|---|---|---|---|---|---|
| ຈຳນວນນັກຮຽນ ໃນຫຼັກສູດບຳລຸງຍົກລະດັບຊັ້ນມັດທະຍົມຕອນປາຍ | 8.000 | 8.000 | 8.000 | 8.000 | 8.000 |
| ຈຳນວນສູນການຮຽນຮູ້ຊຸມຊົນທີ່ຕ້ອງການໃໝ່ | 1 | 1 | 1 | 1 | 1 |

**ຕາຕະລາງ 14: ຄາດຄະເນງົບປະມານສຳລັບການສຶກສານອກໂຮງຮຽນ (ລ້ານກີບ)**

| ການສຶກສານອກໂຮງຮຽນ | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ງົບປະມານບໍລິຫານປົກກະຕິ | 32.002 | 32.973 | 33.964 | 34.973 | 36.002 |
| ງົບປະມານເງິນເດືອນ | 21.210 | 22.136 | 23.079 | 24.038 | 25.014 |
| ງົບອຸດໜູນຄູອາສາ | 6.000 | 6.000 | 6.000 | 6.000 | 6.000 |
| ງົບຝຶກອົບຮົມວິຊາຊີບ | 850 | 850 | 850 | 850 | 850 |
| ງົບຝຶກອົບຮົມຄູ | 0 | 0 | 0 | 0 | 0 |
| ງົບບໍລິຫານ | 2.000 | 2.000 | 2.000 | 2.000 | 2.000 |
| ງົບບໍລິຫານໂຮງຮຽນ (ສະເພາະບຳລຸງ ມ.ປາຍ) | 1.200 | 1.200 | 1.200 | 1.200 | 1.200 |
| ງົບພິມປຶ້ມໃໝ່ | 530 | 562 | 596 | 632 | 670 |
| ງົບຊື້ປຶ້ມທົດແທນ | 212 | 225 | 239 | 253 | 268 |
| ງົບປະມານລົງທຶນ | 1.904 | 1.912 | 1.920 | 1.928 | 1.936 |
| ມູນຄ່າກໍ່ສ້າງໃໝ່ | 300 | 300 | 300 | 300 | 300 |
| ມູນຄ່າສ້ອມແປງ ແລະ ບຳລຸງຮັກສາ | 1.604 | 1.612 | 1.620 | 1.628 | 1.636 |
| ລວມທັງໝົດ | **33.906** | **34.885** | **35.884** | **36.901** | **37.938** |

**ຕາຕະລາງ 15: ຄາດຄະເນງົບປະມານຈາກພາຍນອກ (ການສຶກສານອກໂຮງຮຽນ) (ລ້ານກີບ)**

| | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ການສຶກສານອກໂຮງຮຽນ | 1.404 | 1.404 | 1.404 | 1.404 | 1.404 |

## 6. ແຜນຂະແໜງການຍ່ອຍ ການສຶກສາສ້າງຄູ

**ຕາຕະລາງ 16: ຄາດຄະເນຈຳນວນນັກຮຽນໃນການສຶກສາສ້າງຄູ**

| | 2020-21 | 2021-22 | 2022-23 | 2023-24 | 2024-25 |
|---|---|---|---|---|---|
| ຈຳນວນນັກສຶກສາຄູໃໝ່ ທີ່ໄດ້ຮັບເບ້ຍລ້ຽງ (ຕາມໂຄຕ້າ) | 507 | 530 | 0 | 0 | 0 |
| ຈຳນວນນັກສຶກສາຄູໃໝ່ ທີ່ບໍ່ໄດ້ຮັບເບ້ຍລ້ຽງ (ບໍ່ໄດ້ໂຄຕ້າ) | 2.026 | 2.121 | 2.852 | 2.883 | 2.944 |
| **ຈຳນວນນັກສຶກສາຄູໃໝ່ທັງໝົດ** | **2.533** | **2.651** | **2.852** | **2.883** | **2.944** |
| ຈຳນວນນັກສຶກສາຄູອະນຸບານ | 534 | 606 | 647 | 687 | 728 |
| ຈຳນວນນັກສຶກສາຄູປະຖົມ | 563 | 664 | 753 | 797 | 841 |
| ຈຳນວນນັກສຶກສາຄູມັດທະຍົມ | 1.617 | 1.412 | 1.401 | 1.294 | 1.186 |
| ຈຳນວນນັກສຶກສາຄູພະລະ | 174 | 152 | 151 | 139 | 127 |
| ຈຳນວນນັກສຶກສາຄູສິລະປະ | 192 | 168 | 166 | 153 | 141 |

| ລວມນັກສຶກສາຄູທັງໝົດ | 5.651 | 5.683 | 5.970 | 5.953 | 5.967 |
|---|---|---|---|---|---|

ຕາຕະລາງ 17: ຄາດຄະເນງົບປະມານສຳລັບການສຶກສາສ້າງຄູ (ລ້ານກີບ)

| ການສຶກສາສ້າງຄູ | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ງົບປະມານບໍລິຫານປົກກະຕິ | 102.991 | 106.275 | 109.707 | 113.239 | 101.511 |
| ງົບປະມານເງິນເດືອນ | 66.096 | 68.580 | 70.308 | 72.288 | 59.904 |
| ງົບອຸດໜູນ ແລະ ນະໂຍບາຍຕ່າງໆ | 955 | 966 | 976 | 992 | 929 |
| ງົບອຸດໜູນອື່ນໆ | 4.776 | 4.830 | 4.881 | 4.962 | 4.992 |
| ງົບລົງຝຶກຫັດ | 2.993 | 3.075 | 3.216 | 3.276 | 3.399 |
| ງົບອຸດໜູນນ້ຳມັນ | 1.242 | 1.256 | 1.269 | 1.290 | 1.208 |
| ງົບຝຶກອົບຮົມຄູ | 459 | 476 | 488 | 502 | 512 |
| ງົບຝຶກອົບຮົມຄູປະຈຳການ (ຝຶກປົກກະຕິ) | 13.430 | 13.308 | 13.360 | 13.542 | 13.809 |
| ງົບບໍລິຫານ | 2.993 | 3.075 | 3.216 | 3.276 | 3.399 |
| ງົບເບ້ຍລ້ຽງ | 5.987 | 6.149 | 6.433 | 6.551 | 6.798 |
| ງົບວິໄຈ | 360 | 360 | 360 | 360 | 360 |
| ງົບຊື້ປຶ້ມເຂົ້າຫ້ອງສະໝຸດ | 1.200 | 1.200 | 1.200 | 1.200 | 1.200 |
| ງົບຊື້ອຸປະກອນການຮຽນ-ການສອນ | 2.500 | 3.000 | 4.000 | 5.000 | 5.000 |
| **ງົບປະມານລົງທຶນ** | 74.765 | 97.727 | 77.173 | 10.628 | 17.104 |
| ມູນຄ່າສ້ອມແປງ ແລະ ບຳລຸງຮັກສາ | 192 | 204 | 216 | 228 | 304 |
| ມູນຄ່າກໍ່ສ້າງຫ້ອງທົດລອງ | 8.000 | 2.000 | 2.000 | 2.000 | 2.000 |
| ມູນຄ່າກໍ່ສ້າງຫ້ອງປະຕິບັດຕົວຈິງ | 3.200 | 3.200 | 3.200 | 3.200 | 3.200 |
| ມູນຄ່າສ້າງຫໍພັກ | 3.200 | 28.800 | 28.800 | 3.200 | 9.600 |
| ງົບຝຶກອົບຮົມຄູປະຈຳການ (ຫຼັກສູດໃໝ່) | 52.173 | 52.523 | 37.957 | 0 | 0 |
| ມູນຄ່າກໍ່ສ້າງໂຄງການພິເສດ (ເຊັ່ນ: ໂຮງຮຽນ ເດັກພິການ) | 8.000 | 11.000 | 5.000 | 2.000 | 2.000 |
| **ລວມທັງໝົດ** | **177.757** | **204.003** | **186.880** | **123.867** | **118.615** |

ຕາຕະລາງ 18: ຄາດຄະເນງົບປະມານຈາກພາຍນອກ (ການສຶກສາຄູ) (ລ້ານກີບ)

| | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ການສຶກສາຄູ | 80.429 | 84.622 | 84.111 | 66.111 | 24.486 |

## 7. ແຜນຂະແໜງການຍ່ອຍ ອາຊີວະສຶກສາ

**ຕາຕະລາງ 19: ຄາດຄະເນຈຳນວນນັກຮຽນໃນ ອາຊີວະສຶກສາ**

| ຫຼັກສູດ | ລວມ | 2020-21 | 2021-22 | 2022-23 | 2023-24 | 2024-25 |
|---|---|---|---|---|---|---|
| ປະລິນຍາຕີ[37] | 500 | 90 | 90 | 100 | 100 | 120 |
| ຊັ້ນສູງ (12+2+1.5) | 15.700 | 3.100 | 3.130 | 3.150 | 3.150 | 3.170 |
| ຊັ້ນກາງ (9+3+2) | 4.300 | 800 | 820 | 850 | 900 | 930 |
| ຊັ້ນກາງ (12+3) | 18.800 | 3.680 | 3.700 | 3.750 | 3.800 | 3.870 |
| ຊັ້ນກາງ (12+2) | 40.000 | 7.850 | 7.950 | 8.000 | 8.050 | 8.150 |
| ຊັ້ນກາງ (9+3) | 16.780 | 3.100 | 3.250 | 3.350 | 3.450 | 3.630 |
| C3 (9+2)[38] | 1.600 | 280 | 300 | 320 | 340 | 360 |
| C3 | 1.000 | 150 | 180 | 200 | 220 | 250 |
| C2 | 1.300 | 210 | 250 | 270 | 280 | 290 |
| C1 | 3.550 | 690 | 700 | 710 | 720 | 730 |
| ລວມທັງໝົດ | 103.53 | 19.950 | 20.370 | 20.700 | 21.010 | 21.500 |

**ຕາຕະລາງ 20: ຄາດຄະເນງົບປະມານສຳລັບ ອາຊີວະສຶກສາ (ລ້ານກີບ)**

| **ອາຊີວະສຶກສາ** | **2021** | **2022** | **2023** | **2024** | **2025** |
|---|---|---|---|---|---|
| ງົບປະມານບໍລິຫານປົກກະຕິ | 219.503 | 220.296 | 221.096 | 221.905 | 227.473 |
| ງົບປະມານເງິນເດືອນ | 79.265 | 80.057 | 80.858 | 81.667 | 82.483 |
| ງົບອຸດໜູນ ແລະ ນະໂຍບາຍຕ່າງໆ | 1.308 | 1.308 | 1.308 | 1.308 | 1.200 |
| ງົບອຸດໜູນອື່ນໆ | 6.540 | 6.540 | 6.540 | 6.540 | 6.540 |
| ງົບອຸດໜູນນ້ຳມັນ | 1.700 | 1.700 | 1.700 | 1.700 | 1.560 |
| ງົບບໍລິຫານ | 48.000 | 48.000 | 48.000 | 48.000 | 48.000 |
| ງົບເບັ້ຍລ້ຽງ | 72.000 | 72.000 | 72.000 | 72.000 | 72.000 |
| ງົບລົງຝຶກຫັດ | 8.100 | 8.100 | 8.100 | 8.100 | 8.100 |
| ງົບຊື້ອຸປະກອນການຮຽນ-ການສອນ | 800 | 800 | 800 | 800 | 4.500 |
| ງົບຊື້ຄອມພິວເຕີ | 700 | 700 | 700 | 700 | 2.000 |
| ງົບຝຶກອົບຮົມຄູ | 1.090 | 1.090 | 1.090 | 1.090 | 1.090 |
| ງົບປະມານລົງທຶນ | 26.300 | 29.516 | 23.212 | 23.100 | 23.100 |
| ມູນຄ່າກໍ່ສ້າງໃໝ່ | 3.000 | 3.000 | 3.000 | 3.000 | 3.000 |
| ມູນຄ່າສ້ອມແປງ ແລະ ບຳລຸງຮັກສາ | 900 | 916 | 1.012 | 900 | 900 |
| ມູນຄ່າກໍ່ສ້າງຫ້ອງປະຕິບັດຕົວຈິງ | 12.800 | 12.800 | 9.600 | 9.600 | 9.600 |
| ມູນຄ່າກໍ່ສ້າງຫໍພັກ | 9.600 | 12.800 | 9.600 | 9.600 | 9.600 |
| **ລວມທັງໝົດ** | **245.803** | **249.812** | **244.308** | **245.005** | **250.573** |

[37] ສຳລັບສ້າງຄູອາຊີວະ ໃນສະຖາບັນພັດທະນາອາຊີວະສຶກສາ

[38] ລວມທັງຫຼັກສູດສາມັນວິຊາຊີບ ໃນ 11 ໂຮງຮຽນກິນນອນຊົນເຜົ່າ ທີ່ຈະເປີດເລີ່ມແຕ່ສົກຮຽນ 2020-2021 ເປັນຕົ້ນໄປ.

**ຕາຕະລາງ 21: ຄາດຄະເນງົບປະມານຈາກພາຍນອກ (ອາຊີວະສຶກສາ) (ລ້ານກີບ)**

| | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ອາຊີວະສຶກສາ | 63.396 | 78.264 | 71.460 | 71.460 | 71.460 |

## 8. ແຜນຂະແໜງການຍ່ອຍ ການສຶກສາຊັ້ນສູງ

**ຕາຕະລາງ 22: ຄາດຄະເນຈຳນວນນັກຮຽນເຂົ້າໃໝ່ ໃນ 4 ມະຫາວິທະຍາໄລ**

| | | ຄາດຄະເນຈຳນວນນັກຮຽນເຂົ້າໃໝ່ໃນ 4 ມະຫາວິທະຍາໄລ | | | | |
|---|---|---|---|---|---|---|
| | **ກຸ່ມວິຊາຮຽນຕາມການຈັດປະເພດ ຂອງ ອົງການອຸຍແນັສໂກ** | **2020-21** | **2021-22** | **2022-23** | **2023-24** | **2024-25** |
| I | ການສຶກສາ | 1.200 | 1.535 | 1.725 | 1.765 | 1.760 |
| II | ມະນຸດສາດ ແລະ ສິລະປະສາດ | 1.447 | 1.407 | 1.412 | 1.472 | 1.492 |
| III | ວິທະຍາສາດສັງຄົມ. ນັກຂ່າວ ແລະ ຂໍ້ມູນຂ່າວສານ | 740 | 768 | 746 | 758 | 750 |
| IV | ການບໍລິຫານທຸລະກິດ ແລະ ກົດໝາຍ | 2.980 | 3.070 | 3.255 | 3.325 | 3.360 |
| V | ວິທະຍາສາດທຳມະຊາດ. ຄະນິດສາດ ແລະ ສະຖິຕິ | 810 | 810 | 810 | 810 | 865 |
| VI | ຂໍ້ມູນຂ່າວສານ ແລະ ການສື່ສານ | 160 | 240 | 240 | 240 | 275 |
| VII | ວິສະວະກຳ. ການຜະລິດ ແລະ ການກໍ່ສ້າງ | 3.226 | 3.505 | 3.818 | 4.121 | 4.405 |
| VIII | ກະສິກຳ. ປ່າໄມ້. ການປະມົງ ແລະ ສັດຕະວະແພດ | 1.657 | 1.757 | 1.790 | 1.952 | 1.952 |
| IX | ສຸຂະພາບ ແລະ ສະຫວັດດີການ | - | - | - | - | - |
| X | ການບໍລິການ | 359 | 359 | 359 | 359 | 359 |
| | | **12.579** | **13.451** | **14.155** | **14.802** | **15.218** |

**ຕາຕະລາງ 23: ຄາດຄະເນງົບປະມານສຳລັບ ການສຶກສາຊັ້ນສູງ (ລ້ານກີບ)**

| ການສຶກສາຊັ້ນສູງ | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ງົບປະມານບໍລິຫານປົກກະຕິ | 151.542 | 152.549 | 157.111 | 160.577 | 163.590 |
| ງົບປະມານເງິນເດືອນ | 69.193 | 69.885 | 70.584 | 71.290 | 72.003 |
| ງົບອຸດໜູນ ແລະ ນະໂຍບາຍຕ່າງໆ | 1.151 | 1.151 | 1.151 | 1.151 | 1.151 |
| ງົບອຸດໜູນອື່ນໆ | 9.595 | 9.595 | 9.595 | 9.595 | 9.595 |
| ງົບອຸດໜູນນ້ຳມັນ | 4.375 | 4.375 | 4.414 | 4.414 | 4.414 |
| ງົບຝຶກອົບຮົມຄູ | 960 | 960 | 960 | 960 | 960 |
| ງົບບໍລິຫານ | 28.050 | 28.201 | 30.030 | 31.350 | 32.450 |
| ງົບເບັ້ຍລ້ຽງ | 30.600 | 30.764 | 32.760 | 34.200 | 35.400 |
| ງົບວິໄຈ | 3.000 | 3.000 | 3.000 | 3.000 | 3.000 |
| ງົບຊື້ອຸປະກອນ | 2.027 | 2.027 | 2.027 | 2.027 | 2.027 |

| | | | | | |
|---|---|---|---|---|---|
| ງົບຊື້ປຶ້ມເຂົ້າຫ້ອງສະໝຸດ | 1.000 | 1.000 | 1.000 | 1.000 | 1.000 |
| ງົບຊື້ອຸປະກອນການຮຽນ-ການສອນ ລວມທັງ ຄອມພິວເຕີ | 1.590 | 1.590 | 1.590 | 1.590 | 1.590 |
| ງົບປະມານລົງທຶນ | 15.062 | 83.512 | 83.512 | 83.512 | 86.712 |
| ມູນຄ່າກໍ່ສ້າງໃໝ່ | 6.750 | 40.000 | 40.000 | 40.000 | 40.000 |
| ມູນຄ່າສ້ອມແປງ ແລະ ບໍາລຸງຮັກສາ | 312 | 312 | 312 | 312 | 312 |
| ມູນຄ່າກໍ່ສ້າງຫ້ອງທົດລອງ | 0 | 3.200 | 3.200 | 3.200 | 6.400 |
| ໂຄງການລົງທຶນພິເສດ | 8.000 | 40.000 | 40.000 | 40.000 | 40.000 |
| **ລວມທັງໝົດ** | **166.604** | **236.061** | **240.623** | **244.089** | **250.302** |

**ຕາຕະລາງ 24: ຄາດຄະເນງົບປະມານຈາກພາຍນອກ (ການສຶກສາຊັ້ນສູງ) (ລ້ານກີບ)**

| | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ການສຶກສາຊັ້ນສູງ | 81.900 | 99.900 | 63.900 | 28.800 | 50.063 |

## 9. ແຜນຂະແໜງການຍ່ອຍ ກິລາ-ກາຍະກໍາ

**ຕາຕະລາງ 25: ຄາດຄະເນງົບປະມານສໍາລັບຂະແໜງການຍ່ອຍກິລາ-ກາຍະກໍາ (ລ້ານກີບ)**

| **ກິລາ-ກາຍະກໍາ** | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ງົບປະມານບໍລິຫານປົກກະຕິ | 60.800 | 76.400 | 47.300 | 123.400 | 76.000 |
| ງົບພັດທະນານັກກິລາ | 3.200 | 3.200 | 3.200 | 3.200 | 3.200 |
| ງົບພັດທະນາກໍາມະການ ແລະ ຄູຝຶກ | 2.500 | 2.500 | 2.500 | 2.500 | 2.500 |
| ງົບບໍລິຫານ | 5.000 | 5.000 | 5.000 | 5.000 | 5.000 |
| ງົບຈັດຊື້ອຸປະກອນ | 5.000 | 5.000 | 5.000 | 5.000 | 5.000 |
| ງົບການແຂ່ງຂັນກິລານັກຮຽນ | 3.000 | 29.200 | 4.400 | 88.000 | 28.000 |
| ງົບການແຂ່ງຂັນກິລາພິເສດອື່ນໆ | 42.100 | 31.500 | 27.200 | 19.700 | 32.300 |
| ງົບປະມານລົງທຶນ | 2.000 | 2.000 | 2.000 | 2.000 | 2.000 |
| ການກໍ່ສ້າງສູນກິລາຕ່າງໆ | 2.000 | 2.000 | 2.000 | 2.000 | 2.000 |
| ລວມທັງໝົດ | 62.800 | 78.400 | 49.300 | 125.400 | 78.000 |

## 10. ແຜນຂະແໜງການຍ່ອຍ ບໍລິຫານ-ຄຸ້ມຄອງ

**ຕາຕະລາງ 26: ຄາດຄະເນງົບປະມານສໍາລັບຂະແໜງການຍ່ອຍ ບໍລິຫານ-ຄຸ້ມຄອງ (ລ້ານກີບ)**

| **ບໍລິຫານ-ຄຸ້ມຄອງ** | **2021** | **2022** | **2023** | **2024** | **2025** |
|---|---|---|---|---|---|
| ງົບປະມານບໍລິຫານປົກກະຕິ | 639.102 | 646.014 | 653.930 | 662.686 | 668.611 |
| ງົບປະມານເງິນເດືອນ | 305.000 | 310.335 | 315.782 | 321.417 | 324.631 |
| ງົບອຸດໜູນ ແລະ ນະໂຍບາຍຕ່າງໆ | 5.281 | 5.373 | 5.468 | 5.565 | 5.621 |
| ງົບອຸດໜູນອື່ນໆ | 125.093 | 125.631 | 126.921 | 128.740 | 130.868 |
| ງົບອຸດໜູນນໍ້າມັນ | 6.271 | 6.317 | 6.364 | 6.414 | 6.414 |

| | | | | | |
|---|---|---|---|---|---|
| ງົບບໍລິຫານ | 86.280 | 86.920 | 87.570 | 88.250 | 88.250 |
| ງົບລົງເກັບກຳຂໍ້ມູນ EMIS | 4.000 | 4.000 | 4.000 | 4.000 | 4.000 |
| ງົບລົງຕິດຕາມຂອງຄູສຶກສານິເທດ | 13.149 | 13.149 | 13.149 | 13.149 | 13.149 |
| ງົບລົງຕິດຕາມຂອງພະນັກງານ | 830 | 830 | 830 | 830 | 830 |
| ງົບຊື້ໃໝ່ | 9.290 | 9.290 | 9.290 | 9.290 | 9.290 |
| ງົບຝຶກອົບຮົມຜູ້ບໍລິຫານ | 20.849 | 20.938 | 21.154 | 21.457 | 21.811 |
| ງົບໃນການສ້າງຄວາມເຂັ້ມແຂງແກ່ລະບົບ | 25.000 | 25.000 | 25.000 | 25.000 | 25.000 |
| ເບ້ຍລ້ຽງນັກຮຽນ | 27.435 | 27.606 | 27.777 | 27.949 | 28.123 |
| ມູນຄ່າອາຫານໃນໂຮງຮຽນ (ງົບລັດ) | 10.625 | 10.625 | 10.625 | 10.625 | 10.625 |
| ງົບປະມານລົງທຶນ | 212.667 | 194.754 | 193.924 | 193.924 | 193.924 |
| ງົບບຳລຸງຮັກສາ ແລະ ສ້ອມແປງຫ້ອງການ | 7.500 | 7.500 | 7.500 | 7.500 | 7.500 |
| ງົບສ້າງອາຄານໃນສຳນັກກະຊວງ | 0 | 0 | 0 | 0 | 0 |
| ງົບສ້າງ ສພບ | 0 | 0 | 0 | 0 | 0 |
| ງົບ ODA ແລະ ຊ່ວຍເຫຼືອ[39] | 134.744 | 116.831 | 116.000 | 116.000 | 116.000 |
| ມູນຄ່າອາຫານໃນໂຮງຮຽນ (ງົບ DPs) | 70.424 | 70.424 | 70.424 | 70.424 | 70.424 |
| ລວມທັງໝົດ | **851.769** | **840.768** | **847.854** | **856.609** | **862.535** |

**ຕາຕະລາງ 27: ຄາດຄະເນງົບປະມານຈາກພາຍນອກ (ບໍລິຫານ-ຄຸ້ມຄອງ) (ລ້ານກີບ)**

| | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ບໍລິຫານ-ຄຸ້ມຄອງ | 46.682 | 45.883 | 44.983 | 38.983 | 22.108 |
| ເບ້ຍລ້ຽງ | 10.983 | 10.473 | 10.473 | 10.473 | 10.473 |
| ອື່ນໆ | 171 | 4.896 | 4.896 | 4.896 | 4.896 |

[39] *ໝາຍເຫດ: ງົບ ODA ແລະ ຊ່ວຍເຫຼືອ ແມ່ນຕ້ອງໄດ້ນັບເຂົ້າໃນແຜນຄວາມຕ້ອງການງົບປະມານຂອງ ESSDP costs ເພື່ອໃຫ້ສາມາດຄິດໄລ່ຊ່ອງຫວ່າງດ້ານງົບປະມານ ເຊິ່ງໄດ້ຄາດຄະເນໄວ້ປະມານ 20% ຂອງ ແຜນ ODA ແລະ ນັບເຂົ້າໃນຄາດຄະເນງົບປະມານຂະແໜງ ການຍ່ອຍບໍລິຫານຄຸ້ມຄອງ*

ເອກະສານຊ້ອນທ້າຍທີ 7: ສະຖິຕິນັກສຶກສາ ໄປຮຽນຕໍ່ຕ່າງປະເທດ ໃນໄລຍະ **05** ປີ (**2016-2020**) ຕາມຂົງເຂດວິຊາຮຽນ.

| ຂົງເຂດວິຊາຮຽນ | 2016 | | 2017 | | 2018 | | 2019 | | 2020 | | ລວມ 5 ປີ | |
|---|---|---|---|---|---|---|---|---|---|---|---|---|
| | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ |
| BF00 ຄວາມຮູ້ທົ່ວໄປ (ກຽມພາສາເປັນສ່ວນໃຫຍ່) | 1.820 | 794 | 2.261 | 997 | 2.008 | 1.035 | 1.733 | 971 | 219 | 96 | 8.041 | 3.893 |
| BF01 ການສຶກສາ ແລະ ກິລາ | 157 | 61 | 304 | 108 | 277 | 116 | 306 | 129 | 18 | 9 | 1.062 | 423 |
| BF02 ສິລະປະ ແລະ ມະນຸດສາດ | 111 | 48 | 290 | 107 | 234 | 110 | 234 | 124 | 28 | 14 | 897 | 403 |
| BF03 ວິທະຍາສາດສັງຄົມ, ຂໍ້ມູນຂ່າວສານ ແລະ ໜັງສືພິມ | 378 | 115 | 357 | 116 | 325 | 108 | 371 | 120 | 25 | 9 | 1.456 | 468 |
| BF04 ບໍລິຫານທຸລະກິດ, ກົດໝາຍ ແລະ ພົວພັນຕ່າງປະເທດ | 1.185 | 494 | 1.047 | 416 | 1.174 | 589 | 1.127 | 562 | 148 | 60 | 4.681 | 2.121 |
| BF05 ວິທະຍາສາດທຳມະຊາດ, ຄະນິດສາດ ແລະ ສະຖິຕິ | 128 | 37 | 177 | 59 | 178 | 68 | 143 | 72 | 14 | 5 | 640 | 241 |
| BF06 ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ | 218 | 47 | 274 | 71 | 412 | 126 | 410 | 130 | 33 | 11 | 1.347 | 385 |
| BF07 ວິສະວະກຳ, ການຜະລິດ ແລະ ການກໍ່ສ້າງ | 584 | 178 | 481 | 111 | 1.170 | 367 | 509 | 109 | 39 | 7 | 2.783 | 772 |
| BF08 ກະສິກຳ, ປ່າໄມ້, ການປະມົງ ແລະ ສັດຕະວະແພດ | 97 | 23 | 85 | 18 | 131 | 58 | 129 | 38 | 5 | 0 | 447 | 137 |
| BF09 ສາທາລະນະສຸກ ແລະ ສະຫວັດດີການ | 330 | 177 | 798 | 360 | 1.074 | 696 | 1.049 | 729 | 100 | 69 | 3.351 | 2.031 |
| BF10 ການບໍລິການ | 34 | 18 | 89 | 38 | 145 | 80 | 248 | 132 | 75 | 37 | 591 | 305 |
| **ລວມທຸກຂົງເຂດ** | **5.042** | **1.992** | **6.163** | **2.401** | **7.128** | **3.353** | **6.259** | **3.116** | **704** | **317** | **25.296** | **11.179** |

**ໝາຍເຫດ: ຕົວເລກສະຖິຕິນັກສຶກສາທີ່ໄປຮຽນ ສະເພາະປີ 2020 ແມ່ນເປັນຈຳນວນຕົວເລກຈິງຂອງຜູ້ທີ່ມາປະກອບຟອມສະເໜີໄປຮຽນ ແລະ ຈົບກັບມາຈາກຕ່າງປະເທດ ໄລຍະ 05 ຕົ້ນປີ 2020 ( ວັນທີ 01 ມັງກອນ ເຖິງ 31 ພຶດສະພາ)**

ແຫຼ່ງຂໍ້ມູນ: ກົມກິດຈະການນັກສຶກສາ

## ສະຖິຕິນັກສຶກສາ ກັບມາຈາກຕ່າງປະເທດ (ຈົບ ແລະ ບໍ່ຈົບ) ໃນໄລຍະ 05 ປີ (2016-2020) ຕາມຂົງເຂດວິຊາຮຽນ

| ຂົງເຂດວິຊາຮຽນ | 2016 | | | 2017 | | | 2018 | | | 2019 | | | 2020 | | | ລວມ | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | ລວມ | ຈົບ | ບໍ່ຈົບ | ລວມ | ຈົບ | ບໍ່ຈົບ | ລວມ | ຈົບ | ບໍ່ຈົບ | ລວມ | ຈົບ | ບໍ່ຈົບ | ລວມ | ຈົບ | ບໍ່ຈົບ | ລວມ | ຈົບ | ບໍ່ຈົບ |
| BF01 ການສຶກສາ ແລະ ກິລາ | 209 | 208 | 1 | 228 | 223 | 5 | 133 | 131 | 2 | 248 | 245 | 3 | 34 | 34 | 0 | 852 | 841 | 11 |
| BF02 ສິລະປະ ແລະ ມະນຸດສາດ | 132 | 129 | 3 | 118 | 117 | 1 | 54 | 54 | 0 | 104 | 101 | 3 | 15 | 13 | 2 | 423 | 414 | 9 |
| BF03 ວິທະຍາສາດສັງຄົມ, ຂໍ້ມູນຂ່າວສານ ແລະ ໜັງສືພິມ | 363 | 360 | 3 | 414 | 410 | 4 | 1.746 | 174 | 2 | 224 | 223 | 1 | 55 | 54 | 1 | 1.232 | 1.221 | 11 |
| BF04 ບໍລິຫານທຸລະກິດ, ກົດໝາຍ ແລະ ພົວພັນຕ່າງປະເທດ | 690 | 687 | 3 | 557 | 554 | 3 | 493 | 493 | 0 | 1.070 | 1.062 | 8 | 255 | 252 | 3 | 3.065 | 3.048 | 17 |
| BF05 ວິທະຍາສາດທຳມະຊາດ, ຄະນິດສາດ ແລະ ສະຖິຕິ | 149 | 142 | 7 | 129 | 127 | 2 | 83 | 83 | 0 | 213 | 208 | 5 | 22 | 22 | 0 | 596 | 582 | 14 |
| BF06 ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ | 55 | 53 | 2 | 62 | 62 | 0 | 75 | 75 | 0 | 239 | 235 | 4 | 27 | 27 | 0 | 458 | 452 | 6 |
| BF07 ວິສະວະກຳ, ການຜະລິດ ແລະ ການກໍ່ສ້າງ | 143 | 136 | 7 | 155 | 150 | 5 | 117 | 113 | 4 | 292 | 287 | 5 | 49 | 47 | 2 | 756 | 733 | 23 |
| BF08 ກະສິກຳ, ປ່າໄມ້, ການປະມົງ ແລະ ສັດຕະວະແພດ | 56 | 54 | 2 | 65 | 61 | 4 | 37 | 37 | 0 | 114 | 111 | 3 | 14 | 13 | 1 | 286 | 276 | 10 |
| BF09 ສາທາລະນະສຸກ ແລະ ສະຫວັດດີການ | 209 | 207 | 2 | 296 | 296 | 0 | 238 | 238 | 0 | 392 | 390 | 2 | 61 | 61 | 0 | 1.196 | 1.192 | 4 |
| BF10 ການບໍລິການ | 15 | 15 | 0 | 22 | 21 | 1 | 23 | 21 | 2 | 25 | 25 | 0 | 15 | 1 | 0 | 86 | 83 | 3 |
| ລວມທຸກຂົງເຂດ | 2.021 | 1.991 | 30 | 2.046 | 2.021 | 25 | 1.429 | 1.419 | 10 | 2.921 | 2.887 | 34 | 547 | 524 | 9 | 8.950 | 8.842 | 108 |

ໝາຍເຫດ: ຕົວເລກສະຖິຕິນັກສຶກສາທີ່ ຈົບກັບມາ ສະເພາະປີ 2020 ແມ່ນເປັນຈຳນວນຕົວເລກຈິງຂອງຜູ້ທີ່ມາປະກອບຟອມສະເໜີໄປຮຽນ ແລະ ຈົບກັບມາຈາກຕ່າງປະເທດ ໄລຍະ 05 ຕົ້ນປີ 2020 ( ວັນທີ 01 ມັງກອນ ເຖິງ 31 ພຶດສະພາ)

ແຫຼ່ງຂໍ້ມູນ: ກົມກິດຈະການນັກສຶກສາ

ສະໜັບສະໜູນໂດຍ

ລັດຖະບານອົດສະຕຣາລີ, ສະຫະພາບເອີຣົບ ແລະ ອົງການ UNICEF

Australian Aid

EUROPEAN UNION

unicef
for every child